ໄກສອນ ພົມວິຫານ

ບາງບົດຮຽນຕົ້ນຕໍ ແລະ ບາງບັນຫາກ່ຽວກັບ ທິດທາງໃໝ່ ຂອງການ ປະຕິວັດລາວ

ສຳນັກພິມຈຳໜ່າຍ ສ.ປ.ປ.ລ.

1979

ອຸທິນ ບຸນຍາວົງ

ອຸທິນ ບຸບຜາວົງ

ໄກສອນ ພົມວິຫານ

ບາງບົດຮຽນຕົ້ນຕໍ ແລະ ບາງບັນຫາກ່ຽວກັບ ທິດທາງໃໝ່ ຂອງການ ປະຕິວັດລາວ

ສຳນັກພິມຈຳໜ່າຍ ສ. ປ. ປ. ລ.

1979

ຄຳນຳ

ໃນໂອກາດຄົບຮອບ ໓໕ ປີ ແຫ່ງການສ້າງຕັ້ງພັກ ປະຊາຊົນປະຕິວັດລາວທີ່ສະຫງ່າອົງອາດ, ພວກເຮົາໄດ້ພິມຈຳຫນ່າຍປື້ມ "ບາງບົດຮຽນຕົ້ນຕໍ ແລະ ບາງບັນຫາພື້ນຖານ ກ່ຽວກັບທິດທາງ ຫນ້າທີ່ໃຫມ່ຂອງການປະຕິວັດລາວ" ຂຽນໂດຍ ສະຫາຍ ໄກສອນ ພົມວິຫານ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ນາຍົກລັດຖະມົນຕີ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ປື້ມຫົວນີ້ເປັນເອກະສານສຳຄັນທີ່ສຸດ ເຊິ່ງຜູ້ຂຽນໄດ້ອີງໃສ່ມະຕິຄຳສັ່ງຕ່າງໆ ຂອງພັກ, ລວບລວມຈາກມູນເຊື້ອ ອັນອົງອາດກ້າແກ່ນບໍ່ອ່ອນຍອມຂອງຊາດເຮົາໃນເມື່ອກ່ອນກໍຄືການຕໍ່ສູ້ອັນດຸເດືອດຂຽວຂາດຕ້ານຈັກກະພັດຝະລັ່ງ ແລະ ອາເມລິກາໃນ ໖໐ ປີທີ່ຜ່ານມາ ຂອງປະຊາຊົນ ບັນດາຊົນຊາດລາວເຮົາ ສົມທົບກັບພຶດຕິກຳ ແລະ ບົດຮຽນຕໍ່ສູ້ອັນອຸດົມຮັ່ງມີຂອງຂະບວນການປະຕິວັດໂລກ, ຖອດຖອນເປັນຂໍ້ສະຫຼຸບທີ່ເປັນພື້ນຖານ, ເປັນລະບົບ ແລະ ຄົບຖ້ວນພໍຄວນ ກ່ຽວກັບແນວທາງຍຸດທະສາດ, ຍຸດໂທບາຍ ແລະ ວິທີປະຕິວັດ ຂອງພັກ ທັງໄດ້ຮັບການຢັ້ງຢືນຈາກທິດສະດີ ແລະ ພຶດຕິກຳຢ່າງພຽງພໍ.

ຈາກເນື້ອໃນອັນເລິກເຊິ່ງ ຫນັກແຫນ້ນ ແລະ ຈະແຈ້ງໃນ ໖ ພາກຂອງປື້ມຫົວນີ້, ສະຫາຍໄກສອນ ພົມວິຫານໄດ້ຍົກໃຫ້ເຫັນໂດຍສັງເຂບຂະບວນວິວັດແຫ່ງການຕໍ່ສູ້ອັນລ້ຳບາກຍາວນານ, ໄຊຊະນະອັນຍິ່ງໃຫຍ່ສະຫງ່າງາມ ແລະ ສາຍເຫດແຫ່ງໄຊຊະນະ ເຊິ່ງການປະຕິວັດເຮົາຍາດເອົາມາໄດ້ ໃນການປະຕິວັດຊາດ-ປະຊາທິປະໄຕ; ຈາກນັ້ນສະຫາຍ ໄດ້ສະຫຼຸບຖອດຖອນເປັນບົດຮຽນຕົ້ນຕໍ ໒ ປະການ ແລະ ໄດ້ໄຈແຍກຢ່າງເລິກເຊິ່ງບ່ອນອີງທາງດ້ານທິດສະດີ ແລະພຶດຕິກຳ, ການຫມູນໃຊ້ຢ່າງປະດິດສ້າງ ແລະຄວາມຫມາຍສຳຄັນຂອງບົດຮຽນເຫຼົ່ານັ້ນ

ຕໍ່ການປະຕິວັດລາວ. ເລີ່ມຈາກລັກສະນະ, ເນື້ອໃນຂອງຍຸກສະໄໝ, ຈາກຫຼັກມູນທົ່ວໄປ ຂອງລັດທິມາກ-ເລນິນກ່ຽວກັບການປະຕິວັດສັງຄົມນິຍົມ ແລະ ອີງໃສ່ ສະພາບການ, ຈຸດພິເສດຕົວຈິງ ຂອງປະເທດເຮົາ ສະຫາຍໄດ້ຢືນຢັນເສັ້ນທາງທີ່ຕ້ອງເປັນໄປແຫ່ງການກ້າວຂຶ້ນສັງຄົມນິຍົມ ຂອງການປະຕິວັດລາວ, ຍົກໃຫ້ເຫັນຈຸດເດັ່ນພື້ນຖານກ່ຽວກັບແນວທາງ, ໜ້າທີ່ການປະຕິວັດ ສັງຄົມນິຍົມ, ແນວທາງຂະຫຍາຍເສດຖະກິດ ໃນບາດກ້າວເດີນທຳອິດກໍ່ຄືບັນດາປັດໄຈເພື່ອສ້າງເປັນກຳລັງແຮງສັງລວມ ຍາດເອົາໄຊຊະນະອັນໃຫຍ່ຫຼວງກວ່າເກົ່າໃນໄລຍະໃໝ່ຂອງການປະຕິວັດ. ໃນຕອນທ້າຍ ສະຫາຍໄດ້ຍົກໃຫ້ເຫັນຢ່າງຈະແຈ້ງ ຄວາມໝາຍຕັດສິນ ຂອງການປະຕິວັດ ຄືຕ້ອງເພີ່ມທະວີ ແລະ ປັບປຸງພັກ ໃຫ້ເຂັ້ມແຂງໃນທຸກດ້ານ ເພື່ອເຮັດຫຼ້ອນໜ້າທີ່ປະຫວັດສາດຂອງຕົນ ໃນເງື່ອນໄຂທີ່ພັກກຳອຳນາດ ໃນທົ່ວປະເທດ.

ເນື້ອໃນຂອງປຶ້ມຫົວນີ້ຍັງໄດ້ຍົກໃຫ້ເຫັນຢ່າງເດັ່ນຈັດບັນຫາຕົ້ນຕໍ ແລະ ເປັນພື້ນຖານກວ່າໝູ່ ກ່ຽວກັບແນວທາງຍຸດທະສາດ, ຍຸດໂທບາຍ ແລະ ວິທີປະຕິວັດຂອງພັກເຮົາ. ບັນດາບົດຮຽນປະຫວັດສາດ ທີ່ສະຫາຍ ໄດ້ສະຫຼຸບຖອດຖອນມານັ້ນ ບໍ່ພຽງແຕ່ມີຄວາມໝາຍອັນໃຫຍ່ຫຼວງໃນການຊີ້ນຳນຳພາຕໍ່ສູ້ຍາດເອົາໄຊຊະນະໃນໄລຍະທີ່ຜ່ານມາເທົ່ານັ້ນ, ຫາກຍັງມີຄຸນປະໂຫຍດຢ່າງພຽງພໍ ແລະ ມີຄວາມໝາຍພຶດຕິກຳທີ່ມີຊີວິດຊີວາທີ່ສຸດໃນໄລຍະການຕໍ່ສູ້ປະຕິວັດໃນປະຈຸບັນ ແລະ ໃນຍາວນານອີກດ້ວຍ.

ປຶ້ມຫົວນີ້ເປັນເອກະສານອັນລ້ຳຄ່າ, ເປັນບ່ອນອີງ ທີ່ສຳຄັນທີ່ສຸດ ເພື່ອຊ່ວຍໃຫ້ພະນັກງານ, ສະມາຊິກພັກເຮົາ, ເປັນຕົ້ນແມ່ນພະນັກງານຂັ້ນສູງ ແລະຂັ້ນກາງ, ສຳນັກງານອົງການ, ໂຮງຮຽນ... ຄົ້ນ

ຄວ້າຮ່ຳຮຽນຍົກລະດັບຄວາມຮັບຮູ້ທາງດ້ານທິດສະດີໃຫ້ສູງຂຶ້ນ, ບຳລຸງຫຼັກຫມັ້ນ-ທັດສະນະ ແລະເພີ່ມທະວີຄວາມສາມາດໃນການນຳພາ ແລະປະຕິບັດຫນ້າທີ່ວຽກງານຂອງຕົນ, ປະກອບສ່ວນຢ່າງຕັ້ງຫນ້າເຂົ້າໃນພາລະກິດຕໍ່ສູ້ປົກປັກຮັກສາ ແລະ ສ້າງສາປະເທດຊາດ ເຮັດຫນ້າທີ່ສາກົນ ອັນສະຫງ່າງາມຂອງພວກເຮົາ.

ສຳນັກພິມຈຳຫນ່າຍ ສ.ປ.ປ.ລ

ມີ / ໑໙໗໙.

ບາງບົດຮຽນຕົ້ນຕໍ ແລະ ບາງບັນຫາ ພື້ນຖານ ກ່ຽວກັບທິດທາງ ໜ້າທີ່ໃໝ່ ຂອງການປະຕິວັດລາວ

ປະຊາຊົນບັນດາ ຊົນຊາດລາວເຮົາ ຜ່ານການຕໍ່ສູ້ ຢ່າງເນື່ອງນິດລຽນຕິດຕະຫຼອດ ເກືອບສັດຕະວັດໜຶ່ງຕ້ານ ຈັກກະພັດ ຜູ້ຮຸກຮານ, ເປັນຕົ້ນພາຍຫຼັງ ການຕໍ່ສູ້ ກູ້ຊາດ ຢ່າງຫຍຸ້ງຍາກລຳບາກ ແລະ ສະຫງ່າອົງອາດທີ່ສຸດ ເປັນ ເວລາ ໓໐ ປີ ພາຍໃຕ້ການນຳພາອັນຖືກຕ້ອງ ແລະປີຊາ ສາມາດຂອງພັກເຮົາ, ດ້ວຍການລຸກຮື້ຂຶ້ນ ປານພະຍຸລົມ ແຮງໃນທົ່ວປະເທດເດືອນພຶດສະພາ ໑໙໗໕ ປະຫວັດ ສາດ, ໄດ້ທັບມ້າງບັນດາກຳລັງການທະຫານ ແລະ ການ

bourgeois compradores, bureaucrates, militaristes

ເມືອງຂອງກຸ່ມນາຍທຶນ ຈຳໜ່າຍ, ອາດຍາສິດ ຂຸນເສິກ ແລະ ສັກດີນາປະຕິການ ທີ່ເປັນລູກແຫຼ້ງ ຕີນມືຂອງຈັກກະ ພັດອາເມລິກາ ໃຫ້ມຸ່ນທະລາຍລົງ, ຍາດເອົາ ອຳນາດ ການປົກຄອງ ໃນທົ່ວປະເທດ ມາມືຂອງຕົນ. ກອງປະຊຸມ ໃຫຍ່ ຜູ້ແທນປະຊາຊົນທົ່ວປະເທດ ໄດ້ປະກາດລົບລ້າງລະ ບອບລ່າເມືອງຂຶ້ນ - ສັກດີນາຢ່າງສິ້ນເຊີງ, ສ້າງຕັ້ງລະ

ບອບ ສາທາລະນະລັດປະຊາທິປະໄຕ ປະຊາຊົນຂຶ້ນໃນວັນ ທີ່ ໒ ທັນວາ ໑໙໗໕, ເຮັດໃຫ້ໄລຍະປະຕິວັດຊາດ-ປະຊາທິປະໄຕສິ້ນສຸດລົງຢ່າງມີໄຊສົມບູນ, ນຳເອົາປະເທດເຮົາກ້າວເຂົ້າສູ່ໄລຍະປະຕິວັດສັງຄົມນິຍົມ.

ນັ້ນ ເປັນໄຊຊະນະ ອັນຍິ່ງໃຫຍ່ ທີ່ບໍ່ເຄີຍມີມາຈັກເທື່ອໃນປະຫວັດສາດຂອງຊາດລາວເຮົາ, ມັນໄດ້ປິດແອກຄອບຄອງຂອງຈັກກະພັດ ແລະ ສັກດີນາທີ່ເຕັງຄໍປະຊາຊົນເຮົາມາເປັນເວລາ ຫຼາຍຮ້ອຍປີ ນັ້ນອອກຢ່າງ ຕະຫຼອດການ. ນັບຕັ້ງແຕ່ນີ້ຕໍ່ໄປ, ປະເທດຊາດ ຂອງພວກເຮົາແຕ່ຍອດອູຮູຂອງລົງເຖິງຫຼີ່ຜີສີພັນດອນ ໄດ້ປາສະຈາກເງົາຂອງສັດຕູຫມູ່ມານ ຜູ້ປຸ້ນບ້ານຊິງເມືອງ ແລະ ເປັນຄັ້ງທຳອິດ ທີ່ປະຊາຊົນບັນດາຊົນຊາດເຮົາໄດ້ ຫຼຸດພົ້ນຈາກຄວາມເປັນທາດ, ດຳລົງຊີວິດ ຢູ່ໃນຄວາມມືດມົນ ແລະ ຄວາມທຸກຍາກລຳບາກກາຍມາເປັນເຈົ້າປະເທດຊາດ, ເປັນເຈົ້າແຫ່ງຊີວິດ ແລະ ເປັນເຈົ້າອະນາຄົດຂອງຕົນຢ່າງແທ້ຈິງ. ໄຊຊະນະດັ່ງກ່າວນັ້ນ" ໄດ້ເຮັດໃຫ້ຊາຕາກຳ ຂອງ ຊາດ ແລະສັງຄົມໃນປະເທດເຮົາປ່ຽນແປງຢ່າງເລິກເຊິ່ງ, ອັນໄດ້ໄຂສັງກາດໃໝ່ ແຫ່ງການກໍ່ສ້າງປິຕຸພູມລາວທີ່ແສນຮັກ ແລະ ຫວງແຫນຂອງພວກເຮົາໃຫ້ກ້າວເດີນ ໄປຢ່າງວອງ

ໄວ ແລະ ເຂັ້ມແຂງ ໃນເສັ້ນທາງ ເອກະລາດ, ເປັນເຈົ້າຕົນເອງ, ເອກະພາບ ແລະ ວັດທະນາຖາວອນ , ຮັບປະກັນໃຫ້ປະຊາຊົນ ບັນດາຊົນຊາດລາວເຮົາໄດ້ດຳລົງຊີວິດຢູ່ຢ່າງອິ່ມໜຳສຳລານ, ມີອິດສະຫຼະພາບ ແລະ ມີຄວາມຜາສຸກ ຕະຫຼອດກາລະນານ" [1]

ໄຊຊະນະຂອງການປະຕິວັດເຮົາ ພ້ອມກັບ ໄຊຊະນະ ຂອງການປະຕິວັດຂອງປະຊາຊົນ ສອງປະເທດ ອ້າຍນ້ອງ ຫວຽດນາມ ແລະ ກຳປູເຈຍ ເປັນໄຊຊະນະ ທີ່ມີຄວາມໝາຍປະຫວັດສາດ ແລະ ຍຸກສະໄໝອັນເລິກເຊິ່ງທີ່ສຸດ. ໄຊຊະນະອັນຍິ່ງໃຫຍ່ດັ່ງກ່າວ ໄດ້ທັບມ້າງ ການຕ່າວຕີຄັ້ງໃຫຍ່ກວ່າໝູ່ຂອງຈັກກະພັດນິຍົມ ອັນມີຈັກກະພັດອາເມລິກາເປັນຫົວໂປເຂົ້າໃສ່ຂະບວນການປະຕິວັດ ໂລກນັບແຕ່ຫຼັງ ສົງຄາມໂລກຄັ້ງທີ ໒ ມານີ້; ມັນເປັນການຕີທີ່ຈັ້ງຂອງຈັກກະພັດນິຍົມໃຫ້ຖອຍໄປ, ເປີດກວ້າງທີ່ຈັ້ງສັງຄົມນິຍົມ, ຜ່ານມ້າງປ່ຽງໜຶ່ງທີ່ສຳຄັນໃນແນວຮົບຂອງ ຈັກກະພັດອາເມລິກາຢູ່ອາຊີອາຄະເນ ແລະ ເຮັດໃຫ້ຍຸດທະສາດກວມໂລກຝືນປະຕິວັດຂອງພວກເຂົາຕ່າວປົ້ນ. ໄຊຊະນະ

1. ຖະແຫຼງການຂອງກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ລົງວັນທີ 2 ທັນວາ 1975

ດັ່ງກ່າວນັ້ນ ໄດ້ມ້ຽນຄາບສິ່ງສະການ ລັດທິລ່າເມືອງຂຶ້ນ
ແບບໃໝ່ຂອງຈັກກະພັດອາເມລິກາຢູ່ ແຫຼມອິນດູຈີນ, ມັນ
ໄດ້ຢັ້ງຢືນຢ່າງຈະແຈ້ງການພັງທະລາຍທີ່ບໍ່ອາດ ຫຼີກລ້ຽງ
ໄດ້ຂອງລັດທິລ່າເມືອງຂຶ້ນແບບໃໝ່ ໃນຂອບເຂດທົ່ວໂລກ
ໃນຍຸກສະໄໝປັດຈຸບັນ. ໄຊຊະນະອັນຍິ່ງໃຫຍ່ດັ່ງກ່າວນັ້ນ
ໄດ້ປຸກລະດົມຂະບວນການຕໍ່ສູ້ຂອງປະຊາຊົນຜູ້ກ້າວໜ້າໃນ
ທົ່ວໂລກຢ່າງແຂງແຮງ, ປະກອບສ່ວນຢ່າງສຳຄັນເຂົ້າໃນ
ການເຮັດໃຫ້ການຊັ່ງຊາກຳລັງໃນໂລກມີການປ່ຽນແປງອັນ
ເປັນຜົນດີໃຫ້ແກ່ບັນດາກຳລັງສັນຕິພາບ, ເອກະລາດແຫ່ງ
ຊາດ, ປະຊາທິປະໄຕ ແລະ ສັງຄົມນິຍົມສືບຕໍ່ ຂະຫຍາຍ
ທ່າບຸກເຂົ້າໃສ່ລັດທິຈັກກະພັດນິຍົມ ແລະ ບັນດາ ອິດທິກຳ
ລັງປະຕິການ.

ໄຊຊະນະ ຂອງການປະຕິວັດເຮົາ ໄດ້ຢັ້ງຢືນຢ່າງ
ຄັບຖ້ວນອີກເທື່ອໜຶ່ງວ່າ ໃນຍຸກສະໄໝປັດຈຸບັນ, ປະຊາ
ຊາດໜຶ່ງ ໆ ເຖິງຈະອ່ອນນ້ອຍພຽງໃດກໍຕາມ ກໍມີຄວາມ
ອາດສາມາດຕີເອົາຊະນະຈັກກະພັດນິຍົມຜູ້ຮຸກຮານໄດ້ຢ່າງ
ສົມບູນ ທະແນນແຕ່ປະຊາຊາດນັ້ນ ໆ ມີກອງລະວັງ. ໜ້າ
ຂອງຊົນຊັ້ນກຳມະກອນທີ່ຮູ້ຈັກໝູນໃຊ້ລັດທິມາກ - ເລນິນ
ເຂົ້າໃສ່ສະພາບການ ຕົວຈິງຂອງປະເທດຕົນຢ່າງຖືກຕ້ອງ

ແລະ ປະດິດສ້າງ, ຮູ້ຈັກຈັດຕັ້ງ ແລະ ເສີມຂະຫຍາຍກຳລັງແຮງຂອງຫມົດທັງຊາດສົມທົບກັບກຳລັງແຮງຂອງຍຸກສະໄຫມ ໂດຍແມ່ນລະບົບສັງຄົມນິຍົມເປັນເສົາຄ້ຳ. ພວກເຮົາຄິດວ່າ ການຖອດຖອນບັນດາບົດຮຽນຕົ້ນຕໍຈາກການ ຫມູນໃຊ້ແນວທາງຍຸດທະສາດ, ຍຸດໂທບາຍຕໍ່ສູ້ ແລະ ວິທີປະຕິວັດຂອງພັກເຮົາ ໃນຂະບວນວິວັດແຫ່ງການຕໍ່ສູ້ອັນຍືດເຍືອຍາວນານຫຍຸ້ງຍາກສັບສົນຂອງການປະຕິວັດເຮົານັ້ນ ເປັນບັນຫາທີ່ມີຄວາມຫມາຍພຶດຕິກຳຕໍ່ການປະຕິວັດຂອງປະເທດເຮົາໃນໄລຍະໃຫມ່ - ໄລຍະແຫ່ງການປັບປຸງລະບອບປະຊາທິປະໄຕປະຊາຊົນກ້າວຂຶ້ນສັງຄົມນິຍົມ ແລະ ກໍ່ອາດຈະມີສ່ວນປະກອບເຂົ້າໃນສາງບົດຮຽນແຫ່ງການຫມູນໃຊ້ລັດທິມາກ-ເລນິນເຂົ້າໃສ່ການປະຕິວັດປົດປ່ອຍຊາດໃນປັດຈຸບັນ.

ພາກທີ່ໜຶ່ງ

ຕໍ່ສູ້ຍາວນານ, ມີໄຊຍິ່ງໃຫຍ່

ຊາດລາວເຮົາ ເປັນຊາດໜຶ່ງທີ່ມີປະຫວັດສາດອັນສະຫງ່າງາມ ແຫ່ງການກໍ່ຕັ້ງປະເທດ ແລະ ປົກປັກຮັກສາປະເທດເປັນພັນ ໆ ປີມາແລ້ວ. ນັບຕັ້ງແຕ່ປະເທດ ຊາດຂອງພວກເຮົາໄດ້ທ້ອນໂຮມເຂົ້າເປັນອານາຈັກລ້ານ ຊ້າງ (ປີ ໑໓໕໓) ພາຍໃຕ້ການນຳພາຂອງເຈົ້າຟ້າງຸ່ມ ວິລະບຸລຸດແຫ່ງຊາດເປັນຕົ້ນມາ, ປະຊາຊົນເຮົາໄດ້ດຳເນີນສົງຄາມປົກປັກຮັກສາປິຕຸພູມ ແລະ ລຸກຮືຂຶ້ນຕໍ່ສູ້ຍາດເອົາອະທິປະໄຕແຫ່ງຊາດ ຕ້ານການຮຸກຮານ ແລະ ການຄອບຄອງຂອງບັນດາກຸ່ມສັກດີນາສະຫຍາມ–ພະມ້າ ຕັ້ງຫຼາຍ ຄັ້ງຕໍ່ເນື່ອງກັນ. ອັນດີເດັ່ນແມ່ນໄຊຊະນະເມືອງລູກ (ປີ ໑໕໓໗) ພາຍໃຕ້ລັດຊະການຂອງໂພທິສະລາດ ທີ່ໄດ້ທັບມ້າງ ກົມຊຸ່ບາຍແຜ່ຂະຫຍາຍອຳນາດຂອງເຈົ້າຈັກກະພັດອະຍຸດທະຍາ (ສະຫຍາມ) ໃຫ້ມຸ່ນທະລາຍໄປ. ມັນແມ່ນການຕໍ່ຕ້ານທີ່ມີໄຊສົມບູນ ໔ ຄັ້ງ (ປີ ໑໕໗໓ ແລະ ປີ ໑໕໗໐) ພາຍໃຕ້ການບັງຄັບບັນຊາ ທີ່ເກັ່ງກ້າສາມາດ ຂອງໄຊຍະເສດຖາ. ວິລະບູລຸດກູ້ຊາດ ຕ້ານການຮຸກຮານຂອງ ສັກດີ

ນາພະມ້າ ທີ່ເປັນສັດຕູຜູ້ເຂັ້ມແຂງໃນຄາວນັ້ນ. ມັນແມ່ນການລຸກຮື້ນຕໍ່ສູ້ຢ່າງຕິດຕໍ່ ບໍ່ເນື່ອງກັນຂອງມະຫາຊົນ ຕະຫຼອດໃນ ໒໕ ປີ ຂອງທ້າຍສັດຕະວັດທີ່ ໑໖ ຕ້ານແອກອາລັກຂາຂອງສັກດິນາພະມ້າ, ໃນນັ້ນ ມີທັງການໂຄ່ນລົ້ມລາຊະບັນລັງຂອງເຈົ້າກະສັດທີ່ຂຶ້ນກັບພະມ້າ (ປີ໑໕໗໙). ນັບແຕ່ສັດຕະວັດທີ່ ໑໘ ເປັນຕົ້ນມາ ເຊິ່ງເປັນໄລຍະແຫ່ງການເສື່ອມໂຊມຂອງຊົນຊັ້ນສັກດິນາຜູ້ປົກຄອງ, ປະເທດຊາດຂອງພວກເຮົາ ໄດ້ຖືກຕັດແບ່ງແລວ ຖືກສັກດິນາສະຫຍາມມາຮຸກຮານ ຄອບຄອງ, ແຕ່ປະຊາຊົນເຮົາກໍ່ຍັງຄົງສາມັກຄີກັນລຸກຮື້ນຕໍ່ສູ້ຢ່າງເດັດດ່ຽວຂ່ຽວຂາດບໍ່ຢຸດບໍ່ຢັ້ງ, ໃນນັ້ນ ອັນເດັ່ນກວ່າໝູ່ແມ່ນການລຸກຮື້ນໃນຂະໜາດທົ່ວປະເທດ ໂດຍແມ່ນເຈົ້າອະນຸວົງ ວິລະຊົນແຫ່ງຊາດເປັນຜູ້ນຳພາ (ປີ ໑໘໒໗-໑໘໒໘). ເຖິງແມ່ນວ່າ ການລຸກຮື້ນນັ້ນ ບໍ່ສຳເລັດຜົນກໍ່ຕາມ, ແຕ່ມັນໄດ້ຂຽນໄວ້ໃນໜ້າປະຫວັດສາດອັນສະຫວ່າງສະໄຫວຂອງຊາດເຮົາໃນພາລະກິດປົກປັກຮັກສາປະເທດຊາດ ແລະ ໄດ້ເລົ່າລືກັນມາຢູ່ໃນໝູ່ປະຊາຊົນເຮົາຈົນຕະຫຼອດຮອດຊູມມື້.

ໃນທ້າຍສັດຕະວັດທີ່ ໑໙, ພວກລ່າເມືອງຂຶ້ນຝະລັ່ງໄດ້ເຂົ້າມາຮຸກຮານ ແລະ ວາງແອກຄອບຄອງເມືອງ ຂຶ້ນ

ໃສ່ທົ່ວປະເທດເຮົາ. ໂດຍບໍ່ເອົາຫົວຊາຕໍ່ການຍອມຈຳນົນຂອງພວກເຈົ້າຂຸນມູນນາຍ, ປະຊາຊົນບັນດາຊົນຊາດເຮົາໄດ້ລຸກຮືຂຶ້ນ ຕ້ານພວກລ່າເມືອງຂຶ້ນ ຝະລັ່ງຢ່າງເນື່ອງນິດລຽນຕິດ, ໃນນັ້ນການລຸກຮືຂຶ້ນບາງຂະບວນກໍ່ມີຂະໜາດອັນກວ້າງໃຫຍ່ພໍສົມຄວນເຊັ່ນ ຂະບວນການຕໍ່ສູ້ຂອງປະຊາຊົນຢູ່ພາກກາງ ພາຍໃຕ້ການນຳພາຂອງພໍ່ກະດວດ(ປີ ໑໙໐໑ - ໑໙໐໔), ການລຸກຮືຂຶ້ນດ້ວຍອາວຸດຂອງປະຊາຊົນພາກໃຕ້ທີ່ຍືດເຍື້ອເປັນເວລາ ໓໖ ປີ (ປີ ໑໙໐໑-໑໙໓໗) ພາຍໃຕ້ການນຳພາ ຂອງອົງແກ້ວ ແລະ ອົງກົມມະດຳ, ຂະບວນການຕໍ່ສູ້ ຂອງຊົນຊາດມົ້ງ ຢູ່ບັນດາ ແຂວງພາກເໜືອ ພາຍໃຕ້ການນຳພາຂອງເຈົ້າຟ້າປັດໄຈ(ປີ ໑໙໑໘ -໑໙໒໑), ຂະບວນການຂອງຊົນຊາດລື້ຢູ່ເມືອງສິງ (ປີ ໑໙໑໔-໑໙໑໘), ຂະບວນການຂອງຊົນຊາດໄທ ຢູ່ຊຳເໜືອ (ປີ ໑໙໑໖) ແລະ ການຕໍ່ສູ້ອື່ນໆ ຫຼາຍຂະບວນການຂອງປະຊາຊົນບັນດາຊົນຊາດໃນທ້ອງຖິ່ນຕ່າງໆ. ແຕ່ຍ້ອນສະພາບແວດລ້ອມປະຫວັດສາດ ຂອງປະເທດຊາດເຮົາກໍ່ຄືສະພາບການຂອງໂລກໃນຄາວນັ້ນ, ບັນດາ ການລຸກຮືຂຶ້ນອັນອົງອາດກ້າແກ່ນຂອງມະຫາຊົນດັ່ງກ່າວ ຈຶ່ງບໍ່ສາມາດບັນລຸຜົນສຳເລັດໄດ້. ແຕ່ຢ່າງໃດກໍ່ຕາມ, ມັນ ກໍ່

ເປັນການເສີມຂະຫຍາຍມູນເຊື້ອແຫ່ງຄວາມ ສາມັກຄີຕໍ່ສູ້, ເດັດຂາດ ບໍ່ອ່ອນຍອມຂອງຊາດເຮົາຂຶ້ນສູ່ບາດກ້າວ ໃຫມ່ທີ່ສຳຄັນທີ່ສຸດ.

ມາໃນປີ ໑໙໑໗, ມະຫາປະຕິວັດສັງຄົມນິຍົມເດືອນ ຕຸລາ ລັດເຊຍ ພາຍໃຕ້ການນຳພາອັນປີຊາສາມາດ ຂອງ ເລນິນ ອາຈານຂອງການປະຕິວັດໂລກ ໄດ້ມີໄຊ. ອັນນີ້ ເປັນບາດກ້າວຂະຫຍາຍຕົວຢ່າງກະໂດດຂັ້ນ ທີ່ຍິ່ງໃຫຍ່ ຂອງສັງຄົມມະນຸດ; ມັນເປີດສາກໃຫ້ແກ່ຍຸກໃຫມ່-ຍຸກຂ້າມຜ່ານແຕ່ລັດທິທຶນນິຍົມຂຶ້ນສູ່ລັດທິສັງຄົມນິຍົມ ໃນຂອບເຂດທົ່ວໂລກ. ການປະຕິວັດເດືອນ ຕຸລາ ລັດເຊຍສຳເລັດຜົນ ບໍ່ພຽງແຕ່ເປັນການຊີ້ບອກເສັ້ນທາງປົດປ່ອຍ ທີ່ຕ້ອງເປັນໄປໃຫ້ແກ່ຊົນຊັ້ນກຳມາຊີບຢູ່ໃນບັນດາປະເທດທຶນນິຍົມເທົ່ານັ້ນ, ຫາກຍັງເປັນການຊີ້ບອກເສັ້ນທາງປົດປ່ອຍ ເຊິ່ງເປັນທາງເສັ້ນດຽວໃຫ້ແກ່ທຸກ ໆ ປະຊາຊາດທີ່ຖືກກົດຂີ່ ໃນທົ່ວໂລກອີກດ້ວຍ. ມັນເປັນການສ່ອງແສງສະຫວ່າງເຂົ້າໃສ່ ຂະບວນການປົດປ່ອຍຊາດໃນບັນດາປະເທດເມືອງຂຶ້ນໃນຄາວນັ້ນທີ່ພວມປະສົບກັບຄວາມຫຍຸ້ງຍາກອັດຕະຄັດຕໍ່ຫນ້າຄວາມຂີ້ໂຫດສາມານ ແລະ ຄ່ວາມເລິກແລບແນບນຽນຂອງລັດທິຈັກກະພັດລ່າເມືອງຂຶ້ນ, ໃນນັ້ນ ກໍ່ມີຂະບວນການຕໍ່ສູ້ເພື່ອ

ເອກະລາດແຫ່ງຊາດຂອງປະຊາຊົນ ໓ ປະເທດໃນ ແຫຼມອິນດູຈີນດ້ວຍ.

ໂດຍຊອກເຫັນສັດຈະທຳອັນຍິ່ງໃຫຍ່ຈາກການປະຕິວັດເດືອນ ຕຸລາ ທີ່ວ່າ " ຢາກກູ້ຊາດ ແລະປົດປ່ອຍຊາດ ມັນບໍ່ມີເສັ້ນທາງໃດອື່ນ ນອກຈາກເສັ້ນທາງຂອງການປະຕິວັດກຳມາຊີບ ", ສະຫາຍ ໂຮ່ຈິມິນ, ນັກຮົບຜູ້ດີເລີດຂອງຂະບວນການກອມມູນິດສາກົນໄດ້ນຳເອົາສັດຈະທຳ ອັນຍິ່ງໃຫຍ່ດັ່ງກ່າວນັ້ນເຂົ້າມາ ໃນອິນດູຈີນ ໂດຍສົມທົບລັດທິຮັກຊາດອັນແທ້ຈິງກັບລັດທິມາກ-ເລນິນ, ເຮັດໃຫ້ຂະບວນການປະຕິວັດຂອງອິນດູຈີນ ຕິດພັນກັບຂະບວນການປະຕິວັດໂລກ. ປີ ໑໙໓໐, ພັກກອມມູນິດອິນດູຈີນໄດ້ກຳເນີດເກີດຂຶ້ນໂດຍແມ່ນສະຫາຍ ໂຮ່ຈິມິນ ເປັນຜູ້ສ້າງຕັ້ງ, ອັນນັ້ນ ເປັນຂີດໝາຍແຫ່ງບາດລ້ຽວປະຫວັດສາດຂອງການປະຕິວັດໃນ ໓ ປະເທດອິນດູຈີນ. ແຕ່ນັ້ນມາ, ພາຍໃຕ້ການນຳພາ ຂອງພັກມາກ-ເລນິນທີ່ແທ້ຈິງ ແລະ ດ້ວຍລັນທາງປະຕິວັດຊາດ-ປະຊາທິປະໄຕ, ການຕໍ່ສູ້ປະຕິວັດຂອງປະຊາຊົນບັນດາຊົນຊາດລາວເຮົາໄດ້ກ້າວເຂົ້າສູ່ໄລຍະໃໝ່ ດ້ວຍຄຸນນະພາບໃໝ່ອັນອອຍຕອຍ. ໂດຍບໍ່ເອົາຫົວຊາຕໍ່ລະບອບການຄອບຄອງອັນໂຫດຮ້າຍຂອງພວກລ່າເມືອງຂຶ້ນຝະລັ່ງຕໍ່ມາກໍ່ເປັນຂອງ

ພວກຟາຊິດຍີ່ປຸ່ນ, ບັນດານັກຣົບກອມມູນິດຜູ້ທຳອິດ ຂອງລາວເຮົາໄດ້ເອົາຕົວເຈືອຈານເຂົ້າໃນໝູ່ມະຫາຊົນ, ອົບຂວາຍມະຫາຊົນໂດຍທາງລັບດ້ວຍຄວາມໝັ້ນໝຽວ ທົນທານເສັຽສະລະ; ສະຫາຍເຫຼົ່ານັ້ນໄດ້ເຂົ້າໄປກໍ່ສ້າງຮາກຖານຂອງພັກຢູ່ໃນບໍ່ແຮ່, ໂຮງຈັກໂຮງງານ, ໃນຊົນນະບົດ, ໃນໂຮງຮຽນ, ຄ່າຍທະຫານ, ຕຳຫຼວດ... ຄອຍ ໆ ເຕົ້າໂຮມບັນດາທ່າອ່ຽງຮັກຊາດ, ກ້າວໜ້າ ໃນໝູ່ປະຊາຊົນ, ຊັ້ນຄົນຕ່າງໆ, ປຸກລຸກ ແລະ ຈັດຕັ້ງມະຫາຊົນລຸກຂຶ້ນຕໍ່ສູ້ ແຕ່ຕ່ຳຂຶ້ນຫາສູງ ດ້ວຍບັນດາຮູບການທີ່ເໝາະສົມແລະອຸດົມຮັ່ງມີ.

ປີ ໑໙໔໕, ກອງທັບແດງໂຊວຽດໄດ້ຜາບແພ້ພວກຟາຊິດເຢັຽລະມັນ, ອີຕາລີ ແລະ ຍີ່ປຸ່ນ, ບັງຄັບໃຫ້ ພວກເຂົາຕ້ອງຍອມຈຳນົນຢ່າງບໍ່ມີເງື່ອນໄຂ, ເຮັດໃຫ້ສົງຄາມໂລກຄັ້ງທີ່ ໒ ສິ້ນສຸດລົງ. ໄຊຊະນະອັນຍິ່ງໃຫຍ່ ຂອງສະຫະພາບໂຊວຽດ ແລະ ບັນດາກຳລັງປະຕິວັດ ແລະ ກ້າວໜ້າອື່ນ ໆ ໃນສົງຄາມໂລກຄັ້ງນີ້ ໄດ້ເຮັດໃຫ້ ລະບົບຈັກກະພັດ ນິຍົມພັງທະລາຍ ລົງເປັນປ່ຽງໃຫຍ່ ອັນເປັນຂີດໝາຍແຫ່ງໄລຍະຂະຫຍາຍຕົວໃໝ່ ກະໂດດຂັ້ນຂອງການປະຕິວັດໂລກ: ສັງຄົມນິຍົມໄດ້ອອກຈາກຂອບເຂດປະເທດ

ໜຶ່ງກາຍມາເປັນລະບົບແຫ່ງໂລກ; ຂະບວນການປົດປ່ອຍຊາດ ໃນບັນດາປະເທດເມືອງຂຶ້ນ ແລະ ເຄິ່ງເມືອງຂຶ້ນ ແລະ ຂະບວນການຕໍ່ສູ້ຂອງຊົນຊັ້ນກຳມະກອນໃນບັນດາປະເທດທຶນນິຍົມໄດ້ຟົດເຟືອນຂຶ້ນຢ່າງສະໜັ່ນຫວັ່ນໄຫວ. ໂດຍຍາດແຍ່ງເອົາກາລະໂອກາດປະຫວັດສາດທີ່ອຳນວຍຄວາມສະດວກທີ່ສຸດ ເຊິ່ງການປະຕິວັດໂລກໄດ້ສ້າງຂຶ້ນ ແລະໃນເວລາທີ່ສັດຕູຢູ່ພາຍໃນ ປະເທດພວມກະວົນກະວາຍ ແລະ ຕົກຢູ່ໃນສະພາບເປື່ອຍເຍື່ອຍຢູ່ນັ້ນ, ພັກເຮົາໄດ້ເຄື່ອນຮອນນຳພາທົ່ວປວງຊົນລຸກຮືຂຶ້ນຢ່າງທັນການ ໂດຍປະສານ ສົມທົບກັບການປະຕິວັດເດືອນ ສິງຫາ ຂອງປະຊາຊົນ ຫວຽດນາມ, ຍາດເອົາອຳນາດການປົກຄອງໃນທົ່ວປະເທດຈາກກຳມືຂອງພວກຟາຊິດຍີ່ປຸ່ນ ແລະ ພວກລ່າເມືອງຂຶ້ນຝະລັ່ງ, ປະກາດຄວາມເປັນເອກະລາດຂອງປະເທດລາວ ຕໍ່ໂລກເມື່ອວັນທີ່ ໑໒ ຕຸລາ ໑໙໔໕.

ຖັດຈາກນັ້ນມາ, ພວກລ່າເມືອງຂຶ້ນຝະລັ່ງ, ໂດຍໄດ້ຮັບການຊ່ວຍເຫຼືອ ຈາກຈັກກະພັດອາເມລິກາ ແລະອັງກິດ ໄດ້ກັບຕາວຄືນມາຮຸກຮານປະເທດເຮົາ ພ້ອມທັງ ປະເທດຫວຽດນາມ ແລະ ກຳປູເຈຍເປັນຄັ້ງທີ ໒. ການຕໍ່ຕ້ານຝະລັ່ງທົ່ວປວງຊົນ ແລະ ຮອບດ້ານພາຍໃຕ້ການ ນຳ

ພາຂອງພັກເຮົາ ໄດ້ເລີ່ມຕົ້ນນັບແຕ່ເວລານັ້ນໂລດ. ຈຸດພິເສດຂອງໄລຍະນີ້ແມ່ນ: ທາງຝ່າຍສັດຕູ, ພວກຈັກກະພັດຝະລັ່ງຍັງຄົງໃຊ້ນະໂຍບາຍລ່າເມືອງຂຶ້ນແບບເກົ່າ, ໃຊ້ກອງທະຫານສົ່ງນອກທີ່ເປັນອາຊີບແລະພວກລາວຂາຍຊາດລູກແຫຼ້ງ ເຕີມມືຂອງເຂົາບຸກຕີຍຶດເອົາຕົວເມືອງຕ່າງໆແລະກຳຣາບປາບປາມປະຊາຊົນເຮົາຢ່າງຮ້າຍກາດ, ຟື້ນຟູການປົກຄອງຂອງພວກເຂົາຄືນ ໂດຍມີການດັດແປງ ຮູບການແດ່ເລັກນ້ອຍດ້ວຍການສະແດງລະຄອນມອບ "ເອກະລາດ" ໃຫ້ພວກຫຸ່ນທີ່ເປັນລູກມືໃນ ປີ ໑໙໔໙ ແລະ ຈັດຕັ້ງກອງທະຫານຫຸ່ນຂຶ້ນ; ພວກເຂົາໄດ້ເອົາ ໓ ປະເທດ ລາວ , ຫວຽດນາມ ແລະ ກຳປູເຈຍ ເຂົ້າເປັນເອກະພົບອັນດຽວໃນອັນທີ່ເອີ້ນວ່າ " ເຄືອສະຫະພັນອິນດູຈີນ ຝະລັ່ງເສດ" ພາຍໃຕ້ການປົກຄອງຂອງລະບົບຜູ້ວ່າລາຊະການ ແລະຜູ້ບັນຊາການກອງທັບສະຫະພັນຝະລັ່ງ. ສ່ວນທາງ ຝ່າຍຂະບວນການຕໍ່ຕ້ານ ຂອງປະຊາຊົນເຮົາ, ພວກເຮົາໄດ້ເລີ່ມຕົ້ນໃນເງື່ອນໄຂທີ່ການປະຕິວັດຍັງອ່ອນນ້ອຍ, ຊ້ຳພັດຖືກສັດຕູປິດລ້ອມ, ຖັນແຖວພະນັກງານ, ສະມາຊິກພັກ ຍັງມີໜ້ອຍ, ບົດຮຽນຕໍ່ສູ້ດ້ວຍອາວຸດກໍ່ຍັງຈຳກັດ; ທຸກໆບັນຫາລ້ວນແຕ່ຕ້ອງໄດ້ສ້າງຂຶ້ນໄປແຕ່ຕົ້ນດ້ວຍການເພິ່ງ ຕົນເອງ

ກຸ້ມຕົນເອງ; ແຕ່ໃນດ້ານອື່ນ, ການຕໍ່ຕ້ານຂອງພວກເຮົາ
ພັດຢູ່ໃນວົງສາມັກຄີຮ່ວມສຳພັນສູ້ຣົບອັນແຫນ້ນແຟ້ນຂອງປະ
ຊາຊົນ ບັນດາປະເທດໃນອິນດູຈີນ ພາຍໃຕ້ການນຳພາອັນ
ເປັນເອກະພາບຂອງພັກດຽວ, ຕ້ານສັດຕູໂຕດຽວ ແລະ
ໃນສະພາບທີ່ການປະຕິວັດໂລກ ພວມມີທ່າຂະຫຍາຍ ຕົວ
ໃຫມ່. ສິ່ງເຫຼົ່ານັ້ນ ໄດ້ສ້າງເງື່ອນໄຂສະດວກໃຫ້ແກ່ປະ
ຊາຊົນເຮົາທັງຕໍ່ສູ້ ທັງກໍ່ສ້າງ, ຂະຫຍາຍກຳລັງຂອງຕົນ
ໃນທຸກດ້ານຢ່າງບໍ່ຢຸດຢັ້ງ, ຍິ່ງຕີ ຍິ່ງເຕີບໃຫຍ່ ເຂັ້ມແຂງ
ແລະ ມີໄຊ.

ດ້ວຍແນວທາງ " ຕໍ່ຕ້ານທົ່ວປວງຊົນ, ຮອບດ້ານ,
ຍາວນານ ", ພາຍຫຼັງ ທີ່ໄດ້ສູ້ຣົບຢູ່ໃນຕົວເມືອງຕ່າງ ໆ
ຊົ່ວໄລຍະຫນຶ່ງທີ່ຈຳເປັນແລ້ວ, ບັນດາກຳລັງຕໍ່ຕ້ານ ຂອງ
ພວກເຮົາເປັນສ່ວນໃຫຍ່ໄດ້ຫັນໄປສູ່ຊົນນະບົດ, ດຳເນີນການ
ຂົນຂວາຍປະຊາຊົນບັນດາຊົນຊາດຢ່າງກວ້າງຂວາງໃຫ້ສາ
ມັກຄີກັນລຸກຂຶ້ນຕໍ່ຕ້ານ, ເປີດສົງຄາມກອງຫຼອນ, ກໍ່ສ້າງ
ກຳລັງການເມືອງ ຂອງມະຫາຊົນ ແລະ ກຳລັງ ປະກອບ
ອາວຸດປະຊາຊົນ, ກໍ່ສ້າງຖານທີ່ຫມັ້ນຕໍ່ຕ້ານ ໂດຍຖືອັນນັ້ນ
ເປັນຫນ້າທີ່ໃຈກາງຂອງການປະຕິວັດໃນຄາວນັ້ນ. ບັນດາ
ກອງປະກອບອາວຸດ, ຖັນແຖວພະນັກງານ ແລະສະມາຊິກ

ພັກຂອງພວກເຮົາໄດ້ນຳໃຊ້ ແບບວິທີໂຄສະນາປະກອບອາວຸດ,ທັງຕີສັດຕູ ທັງຂົນຂວາຍກໍ່ສ້າງຮາກຖານມະຫາຊົນ, ຂະຫຍາຍກຳລັງປະຕິວັດໃນທຸກດ້ານ; ຖານທີ່ໝັ້ນ ໄດ້ຮັບການສ້າງຂຶ້ນຢູ່ຫຼາຍແຫ່ງ ໃນທົ່ວປະເທດ ເຊິ່ງຢູ່ໃນນັ້ນໄດ້ສ້າງຕັ້ງອຳນາດການປົກຄອງປະຕິວັດຂຶ້ນ, ຈັດຕັ້ງ ກຳລັງປະກອບອາວຸດປະຊາຊົນ ແລະ ບັນດາອົງການຈັດຕັ້ງ ມະຫາຊົນ, ດຳເນີນການລົບລ້າງບັນດາຮູບການຂູດຮີດ ຂອງລະບອບສັກດີນາ ແລະ ກ່ອນສັກດີນາເປັນກ້າວໆ ດ້ວຍວິທີ ແລະ ລະດັບອັນເໝາະສົມ; ຊີວິດການເປັນຢູ່ ທາງດ້ານວັດຖຸ ແລະ ຈິດໃຈຂອງມະຫາຊົນຊາວໄຮ່ນາຜູ້ອອກ ແຮງງານ ນັບມື້ນັບໄດ້ຮັບການປົວແປງໃຫ້ດີຂຶ້ນ, ຄວາມສາມັກຄີລະຫວ່າງປະຊາຊົນບັນດາຊົນຊາດໄດ້ເພີ່ມທະວີຂຶ້ນຢ່າງບໍ່ຢຸດຢັ້ງ. ຈາກບັນດາຖານທີ່ໝັ້ນ ແຫ່ງທຳອິດນັ້ນ,ຂະບວນການຕໍ່ສູ້ກໍ່ຄ່ອຍ ໆ ແຜ່ລາມກວ້າງອອກໄປ ໃນທົ່ວປະເທດ, ບັນດາກຳລັງປະຕິວັດນັບມື້ນັບຂະຫຍາຍຕົວເຕີບໃຫຍ່ ເຂັ້ມແຂງ. ວັນທີ່ ໒໐ ມັງກອນ ໑໙໔໙ ກອງທັບລາວອິດ ສະຫຼະ (ເຊິ່ງແມ່ນກອງທັບປົດປ່ອຍປະຊາຊົນລາວໃນປະຈຸບັນ) ໄດ້ສ້າງຕັ້ງຂຶ້ນເປັນທາງການ; ວັນທີ່ ໑໓ ສິງຫາ ໑໙໕໐, ກອງປະຊຸມໃຫຍ່ແນວລາວຕໍ່ຕ້ານທົ່ວປະເທດ ໄດ້

ຕົກລົງສ້າງຕັ້ງແນວລາວ ອິດສະຫຼະ, ໄດ້ວາງໂຄງການ ການເມືອງ ໑໘ ຂໍ້ ແລະ ສ້າງຕັ້ງລັດຖະບານລາວຕໍ່ຕ້ານຂຶ້ນ; ຈາກນັ້ນ, ການຕໍ່ຕ້ານຂອງປະຊາຊົນເຮົາ ໄດ້ກ້າວຂຶ້ນສູ່ບາດກ້າວໃໝ່.

ໃນທ້າຍປີ ໑໙໔໙, ໄຊຊະນະຂອງການປະຕິວັດ ຂອງປະຊາຊົນຈີນ ແລະ ການກຳເນີດຂອງ ສາທາລະນະລັດປະຊາຊົນຈີນ ໄດ້ປຸກລະດົມຢ່າງໃຫຍ່ຫຼວງ ແກ່ການຕໍ່ຕ້ານຂອງປະຊາຊົນ ໓ ຊາດໃນອິນດູຈີນ. ມາໃນປີ ໑໙໕໐ ບັ້ນຮົບ " ຊາຍແດນ " ຂອງກອງທັບ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ໄດ້ທັບມ້າງວົງປິດລ້ອມ ຂອງຈັກກະພັດຝະລັ່ງ-ອາເມລິກາ ໃຫ້ພັງທະລາຍລົງ, ສ້າງເງື່ອນໄຂໃຫ້ການປະຕິວັດຂອງສາມປະເທດອິນດູຈີນ ສາມາດຮັບເອົາການຊ່ວຍເຫຼືອໂດຍກົງ ຈາກຝ່າຍສັງຄົມນິຍົມ. ໃນສະພາບການໃໝ່ນັ້ນ, ເພື່ອຊຸກຍູ້ການຕໍ່ຕ້ານຝະລັ່ງ ໃຫ້ແຂງແຮງຂຶ້ນກ່ວາເກົ່າ, " ແນວພັນທະພາບລາວ-ຫວຽດນາມ-ຂະແມ "ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ ໑໑ ມີນາ ໑໙໕໑ ບົນ ຫຼັກການສະເໝີພາບ, ຊ່ວຍຊູຢູ້ໜູນກັນແລະ ເຄົາລົບອະທິປະໄຕຂອງກັນ; ອັນນັ້ນ ຍິ່ງເປັນການ ເພີ່ມທະວີຄວາມສາມັກຄີ ແລະ ການຮ່ວມສຳພັນສູ້ຮົບລະຫວ່າງ

ກອງທັບ ແລະ ປະຊາຊົນ ໓ ປະເທດ ໃນອິນດູຈີນ. ບົນພື້ນຖານດັ່ງກ່າວນັ້ນ, ປີ ໑໙໕໓, ບັນດາກຳລັງປະກອບອາວຸດຂອງພວກເຮົາ ໂດຍການປະສານສົມທົບ ຂອງກອງທະຫານອາສາສະໝັກຫວຽດນາມ ໄດ້ເປີດບັ້ນຮົບຕໍ່ເນື່ອງກັນຫຼາຍບັ້ນ, ປົດປ່ອຍບໍລິເວນອັນກວ້າງໃຫຍ່ຫຼາຍບ່ອນທັງຢູ່ພາກເຫນືອ, ພາກກາງ ແລະ ພາກໃຕ້ຂອງປະເທດເຮົາ: ຊຳເຫນືອ, ຊຽງຂວາງ, ຄຳມ່ວນ, ອັດຕະປື , ພູພຽງບໍລະເວນ ... ມາເຖິງຕົ້ນ ປີ ໑໙໕໔,ພວກເຮົາໄດ້ປົດປ່ອຍຜົ້ງສາລີ, ສ່ວນໃຫຍ່ຂອງແຂວງ ຫຼວງພະບາງອັນເປັນການຕີມ້າງແນວຮົບນ້ຳຂູ ຂອງສັດຕູ ແລະ ເປັນການປະສານສົມທົບໂດຍກົງກັບບັ້ນຮົບດຽນບຽນຟູ ປະຫວັດສາດຂອງກອງທັບ ແລະ ປະຊາຊົນຫວຽດນາມຜູ້ພິລະອາດຫານ. ຍອມປະລາໄຊຢ່າງຫນັກຫນ່ວງ ແລະ ຮອບດ້ານໃນທົ່ວທຸກສະຫນາມຮົບຂອງ ໓ ປະເທດ, ຈັກກະພັດ ຝະລັ່ງ ຈຳຕ້ອງໄດ້ຍອມເຊັນສັນຍາເຊີແນວ ປີ ໑໙໕໔,ຟື້ນຟູສັນຕິພາບຢູ່ອິນດູຈີນ, ຮັບຮູ້ຄວາມເປັນເອກະລາດ, ອະທິປະໄຕ, ເອກະພາບ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງລາວ, ຫວຽດນາມ, ກຳປູເຈຍ, ຮັບຮູ້ຖານະອັນຖືກຕ້ອງຕາມກົດໝາຍຂອງບັນດາກຳລັງປະຕິວັດລາວ ແລະ ຍອມ

ເອົາແຂວງຜົ້ງສາລີ, ຊຳເໜືອໃຫ້ເປັນເຂດເຕົ້າໂຮມຂອງ " ບັນດາກຳລັງຝ່າຍປະເທດລາວ " ເຊິ່ງກໍ່ໝາຍຄວາມວ່າ ເປັນເຂດຊຸມຄອງໂດຍກົງ ຂອງກຳລັງປະຕິວັດລາວ. ໄຊຊະນະແຫ່ງການຕໍ່ຕ້ານຝະລັ່ງນັ້ນ ເປັນໄຊຊະນະ ອັນໃຫຍ່ຫຼວງ ທີ່ສຸດຂອງການປະຕິວັດລາວ, ມັນໄດ້ເສີມ ຂະຫຍາຍຈິດໃຈຊາດຂອງປະຊາຊົນເຮົາ ໃນທົ່ວປະເທດຢ່າງແຂງແຮງແລະສ້າງເງື່ອນໄຂພື້ນຖານໃຫ້ພັກເຮົາກໍ່ສ້າງຮາກຖານໃນທຸກດ້ານໃຫ້ແກ່ໄລຍະໃໝ່ຂອງການຕໍ່ສູ້ປະຕິວັດ.

ສັນຍາເຊີແນວໄດ້ຮັບການເຊັນກັນບໍ່ດົນພໍເທົ່າໃດ, ຈັກກະພັດອາເມລິກາ ຜູ້ເຊິ່ງດຳເນີນການແຊກມືເຂົ້າ ສົງຄາມອິນດູຈີນນັບແຕ່ໄລຍະຕົ້ນ ກໍ່ໄດ້ໂດດເຂົ້າມາປັດເຂ່ຍຝະລັ່ງ ແລະ ຮຸກຮານປະເທດເຮົາ ໂດຍທັນທີ ດ້ວຍກົນອຸບາຍເຮັດໃຫ້ປະເທດເຮົາ ກາຍເປັນເມືອງຂຶ້ນ ແບບໃໝ່ ແລະ ຖານທັບຂອງພວກເຂົາ ເພື່ອປິດລ້ອມ ແລະບຸກໂຈມຕີບັນດາປະເທດສັງຄົມນິຍົມ, ກ່ອນອື່ນໝົດແມ່ນສາທາລະນະລັດປະຊາທິປະໄຕຫວຽດນາມ, ສາທາລະນະລັດປະຊາຊົນຈີນ ແລະ ຫວັງສະກັດກັ້ນບໍ່ໃຫ້ກະແສຟອງປະຕິວັດແຜ່ລາມໄປໃນອາຊີອາຄະເນ. ຕໍ່ໜ້າສະພາບການ ແລະ ຄວາມຮຽກຮ້ອງຕ້ອງການຂອງການຕໍ່ສູ້ໃນໄລຍະໃໝ່,

ພັກປະຊາຊົນລາວ (ໃນປະຈຸບັນນີ້ ແມ່ນພັກປະຊາຊົນປະຕິວັດລາວ) ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ່ ໒໒ ມີນາ ໑໙໕໕ ເພື່ອສືບທອດພາລະກິດອັນສະຫງ່າງາມ ຂອງພັກກອມມູນິດອິນດູຈີນ, ຫາບແບກພາລະໜ້າທີ່ ປະຫວັດສາດໃນການນຳພາທົ່ວປວງປະຊາຊົນລາວ ຕໍ່ສູ້ກູ້ຊາດຕ້ານ ອາເມລິກາເຊິ່ງແມ່ນໄລຍະຕໍ່ສູ້ທີ່ດຸເດືອດຂ້ຽວຂາດ, ສັບສົນແລະລ້ຳບາກກວ່າໝູ່ຂອງການປະຕິວັດ, ໃນປະເທດເຮົາ, ພ້ອມກັນນັ້ນ ກໍ່ເປັນໄລຍະຕໍ່ສູ້ທີ່ສະຫງ່າອົງອາດ ກວ່າໝູ່ແລະມີໄຊຍິ່ງໃຫຍ່ກວ່າໝູ່ໃນປະຫວັດສາດຂອງຊາດເຮົາ.

ໄລຍະແຕ່ປີ ໑໙໕໔ ເຖິງປີ ໑໙໕໙ ເປັນໄລຍະຕໍ່ສູ້ຕ້ານຍຸດທະສາດ ໒ ໜ້າຝືນປະຕິວັດ ດ້ວຍການຫຼອກລວງທາງການເມືອງ, ຫັນປ່ຽນໂດຍສັນຕິ ສົມທົບກັບການໃຊ້ກຳລັງຮຸນແຮງຝືນປະຕິວັດ ຂອງຈັກກະພັດ ອາເມລິກາແລະ ພວກປະຕິການລູກແຫຼ້ງຕີນມື ທີ່ຫວັງລົບລ້າງໝາກຜົນຂອງການປະຕິວັດລາວເຮົາ.

ໂດຍປະຕິບັດຕາມສັນຍາເຈນີແວປີ ໑໙໕໔ ກ່ຽວກັບອິນດູຈີນຢ່າງເຂັ້ມງວດ, ບັນດາກຳລັງປະຕິວັດ ຂອງພວກເຮົາໄດ້ໄປເຕົ້າໂຮມຢູ່ ໒ ແຂວງຊຳເໜືອ ແລະຜົ້ງສາລີ ໃນທ້າຍລະດູຝົນ ປີ ໑໙໕໔. ວັນເວລາເຕົ້າໂຮມ

ດັ່ງກ່າວນັ້ນ ໄດ້ກາຍເປັນມື້ "ບຸນມະໂຫລານ ຂອງຊາດ–ມື້ບຸນສາມັກຄີປະຊາຊົນບັນດາຊົນຊາດໃນທົ່ວປະເທດ ". ໔ ແຂວງເຕົ້າໂຮມ ໄດ້ກາຍເປັນດວງປະທີບ ອັນຮຸ່ງໃສ ແລະເປັນຄວາມຫວັງອັນໃຫຍ່ຍິ່ງຂອງປະຊາຊົນທົ່ວປະເທດ ໃນຄາວນັ້ນ.

ແຕ່ ໃນຂະນະດຽວກັນນັ້ນ, ຈັກກະພັດອາເມລິກາ ຊ້ຳພັດໄດ້ຂຸມຂຽວແຊກແຊງລາວ ແລະ ຣີບຮ້ອນກຽມ ຍຸດທະສາດສົງຄາມຮຸກຮານລ່າເມືອງຂຶ້ນແບບໃຫມ່ ຂອງພວກເຈົ້າຕໍ່ອິນດູຈີນ. ພວກເຂົາໄດ້ຈັດເອົາລາວ (ແລະ ຕະຫຼອດ ທັງພາກໃຕ້ຫວຽດນາມ ແລະ ກຳປູເຈຍ)ເຂົ້າໃນອານາເຂດ " ອາລັກຂາ " ຂອງກຸ່ມຮຸກຮານອາຊີອາຄະເນ (ຊີອາໂຕ) ເຊິ່ງພວກເຂົາໄດ້ສ້າງຂຶ້ນ ໃນເດືອນກັນຍາ ປີ ໑໙໕໔ ; ພວກເຂົາໄດ້ປັ້ນແຕ່ງລັດຖະບານປະຕິການຂວາຈັດ ຂອງກະຕາຍຂຶ້ນ, ປັບປຸງສັບຊ້ອນກອງທະຫານຫຸ່ນຄືນໃຫມ່, ເພີ່ມທະວີການຊ່ວຍເຫຼືອ ທາງການທະຫານ ແລະ ເສດຖະກິດໃຫ້ແກ່ພວກລູກມື, ປະຕິບັດ ລັດທິລ່າເມືອງຂຶ້ນແບບໃຫມ່ຢູ່ລາວ ຫວັງກົດຂີ່ປະຊາຊົນເຮົາ. ພາຍຫຼັງ ທີ່ຈຳເປັນ ຕ້ອງໄດ້ເປີດການເຈລະຈາ ກັບພວກເຮົາຊົ່ວໄລຍະໜຶ່ງ, ລັດຖະບານກະຕາຍຍັງໄດ້ດ້ານຍົກ

ເອົາຂໍ້ເລັ່ງທວງທີ່ບໍ່ສົມເຫດສົມຜົນອອກມາຮ້ອຍຢ່າງ ພັນແນວເພື່ອມາງເພທຳລາຍການເຈລະຈາປະສົມ ແລະຫາຂໍ້ອ້າງເພື່ອກໍ່ສົງຄາມ ກາງເມືອງຂຶ້ນ. ມາຮອດກາງ ປີ ໑໙໕໔, ໂດຍປະຕິບັດ ຕາມຄຳສັ່ງຂອງຈັກກະພັດອາເມລິກາ, ພວກເຂົາໄດ້ລະດົມ ກອງທະຫານຫຸ່ນ ເປັນຈຳນວນເຖິງ ໔/໕ ບຸກໂຈມຕີ ໔ ແຂວງເຕົ້າໂຮມ, ພ້ອມກັນນັ້ນກໍ່ດຳເນີນການກຳຣາບປາບປາມປະຊາຊົນ ແລະ ຊາວຕໍ່ຕ້ານເກົ່າຢູ່ໃນ ໑໐ ແຂວງຢ່າງປ່າເຖື່ອນ.

ຕໍ່ໜ້າສະພາບການດັ່ງກ່າວນັ້ນ, ບົນພື້ນຖານ ສັງເກດຕີລາຄາການປຽບທຽບກຳລັງຢູ່ພາຍໃນປະເທດ ແລະທ່າຂະຫຍາຍຕົວທົ່ວໄປຂອງສະພາບການຢູ່ໃນອາຊີ ອາຄະເນກໍ່ຄືຢູ່ໃນໂລກ ຢ່າງຖືກຕ້ອງ, ພັກເຮົາໄດ້ວາງແຜນນະໂຍບາຍ: "ປຸກລູກທົ່ວປວງຊົນສາມັກຄີກັນລຸກຂຶ້ນຕໍ່ສູ້ ພາບແພ້ອາເມລິກາ ຜູ້ແຊກແຊງ ແລະ ພວກລູກແຫຼ້ງ ຕີນມືຜູ້ຂາຍຊາດ, ເຮັດໃຫ້ປະເທດລາວເປັນປະເທດສັນຕິພາບ, ເປັນກາງ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ, ພາການປະຕິວັດ ລາວກ້າວຂຶ້ນ ເທື່ອລະກ້າວ ຢ່າງໜັກແໜ້ນ"[1] ໂດຍ ປະຕິບັດ

1. ເອກະສານຂອງກອງປະຊຸມສູນກາງຄັ້ງທີ 1 ສະໄໝທີ 1

ຕາມແຜນນະໂຍບາຍດັ່ງກ່າວນັ້ນ, ພັກເຮົາໄດ້ຍົກສູງຄັນທຸງ
ສັນຕິພາບ, ເປັນກາງ, ຄວາມຖືກຕ້ອງປອງດອງຊາດ,
ເປີດກວ້າງແນວໂຮມເອກະພາບແຫ່ງຊາດ, ສ້າງຕັ້ງແນວ
ລາວຮັກຊາດຂຶ້ນ (ໃນວັນທີ່ ໖ ມັງກອນ ໑໙໕໖), ເຕົ້າ
ໂຮມທຸກກຳລັງ, ທຸກທ່າອ່ຽງຮັກຊາດ ແລະ ກ້າວໜ້າ,
ພ້ອມກັນນັ້ນກໍ່ອອກແຮງປັບປຸງ ແລະ ຂະຫຍາຍກຳລັງ ປະ
ຕິວັດໃນທຸກດ້ານ, ຮີບຮ້ອນກໍ່ສ້າງ ແລະ ເພີ່ມທະວີກຳລັງ
ປະກອບອາວຸດ, ນຳພາກອງທັບ ແລະ ປະຊາຊົນ໔ແຂວງ
ເດັດດ່ຽວຕໍ່ສູ້ປ້ອງກັນຕົວ, ຜາບແພ້ການບຸກໂຈມຕີ ຂະ
ໜາດໃຫຍ່ທາງການທະຫານຂອງສັດຕູ, ສົມທົບກັບ ການ
ປຸກລຸກການຕໍ່ສູ້ທາງການເມືອງຢ່າງກວ້າງຂວາງ ຂອງມະ
ຫາຊົນ ຊັ້ນ ຄົນຕ່າງໆ ຢູ່ໃນ ໑໐ ແຂວງ ນັບທັງໃນນະຄອນ
ຫຼວງວຽງຈັນ. ດ້ວຍການປະສານສົມທົບຢ່າງແໜ້ນແຟ້ນ
ລະຫວ່າງການຕໍ່ສູ້ທາງການເມືອງ, ການທະຫານ ແລະ
ການເຈລະຈາປະສົມ, ພວກເຮົາໄດ້ເຮັດໃຫ້ສັດຕູຕົກເຂົ້າ
ໃນທ່າຮັບ, ກະວົນກະວາຍສຸດຂະໜາດ, ຕີຖອຍ ກົນອຸ
ບາຍອັນມືດມົນຂອງພວກເຂົາທີ່ຫວັງລົບລ້າງໝາກຜົນແຫ່ງ
ການຕໍ່ຕ້ານຂອງປະຊາຊົນເຮົາ, ບັງຄັບຈັກກະພັດ ອາເມ
ລິກາ ແລະ ລູກມືຕ້ອງຍອມເຊັນສັນຍາ ວຽງຈັນ ໃນວັນທີ່

໒໔ ຕຸລາ ໑໙໕໗, ຍອມສ້າງຕັ້ງ ລັດຖະບານປະສົມ ຊຸດ
ທຳອິດ ດ້ວຍການເຂົ້າຮ່ວມຢ່າງສົມກຽດຂອງແນວລາວຮັກ
ຊາດ.

ໃນຂະນະທີ່ຕ້ອງຍອມຮັບເອົາເງື່ອນໄຂດັ່ງກ່າວນັ້ນ, ຈັກກະພັດອາເມລິກາ ແລະ ລູກແຫຼ້ງຕົນມີພັດລຽງຄວາມໄຝ່ຝັນວ່າ ພວກເຂົາອາດຈະດຶງກຳລັງຂອງພວກເຮົາອອກໄປຈາກຖານທີ່ຫມັ້ນ, ເຮັດໃຫ້ພວກເຮົາຕົນຫວິດດິນ ເພື່ອດັບສູນກຳລັງປະຕິວັດດ້ວຍວິທີອື່ນ. ພວກເຂົາຫວັງໃຊ້ ໃບໄມ້ລັດຖະບານປະສົມເພື່ອພາພັກເຮົາເດີນເຂົ້າສູ່ເສັ້ນທາງຕໍ່ສູ້ທາງລັດຖະສະພາແຕ່ດ້ານດຽວ ແລ້ວເຮັດໃຫ້ແນວທາງປະຕິວັດຂອງພັກເຮົາຖືກປ່ຽນແປງໄປ; ພ້ອມກັນນັ້ນ, ພວກເຂົາກໍ່ໃຊ້ທຸກເລ່ຫລ່ຽມຂົ່ມຂູ່ແບ່ງແຍກ, ຊື້ຈ້າງເຮັດໃຫ້ເສື່ອມຊຸມ ທັງນີ້ກໍ່ເພື່ອເຮັດໃຫ້ກຳລັງປະຕິວັດແຕກທະລາຍ ແລະ ທຳລາຍອິດທິພົນຂອງການປະຕິວັດຢູ່ໃນຫມູ່ມະຫາຊົນ ກ້າວໄປເຖິງລ້ອມປ່ຽວ ແລະ ດັບສູນກຳລັງປະຕິວັດ ໃນທີ່ສຸດ. ແຕ່ສັດຕູໄດ້ຄິດໄລ່ຜິດ ! ພວກເຂົາບໍ່ອາດເຂົ້າໃຈ ແລະ ຕີລາຄາໄດ້ຫມົດກ່ຽວກັບທາດແທ້ປະຕິວັດອັນກ້າແກ່ນ ຂອງບັນດາພະນັກງານ, ນັກຮົບ ແລະປະຊາຊົນເຮົາ, ແລະພວກເຂົາກໍ່ບໍ່ຄິດສົງໄສເລີຍວ່າ ທຸກສິ່ງທຸກຢ່າງທີ່ພວກເຂົາ ໄດ້

ຄົ້ນຄິດຄາດຄະເນ ແລະມີຄວາມຫວັງໝັ້ນໄດ້ຖືກກຳລັງແຮງແຫ່ງຄວາມເປັນທຳ ຂອງການປະຕິວັດ ຕ່າວປົ້ນໄປໝົດ. ໂດຍຊູຄົນທຸງສັນຕິພາບ, ເປັນກາງ, ຄວາມຖືກຕ້ອງ ປອງດອງຊາດມາໂບກສະບັດຢູ່ກາງນະຄອນ ຫຼວງວຽງຈັນ ແລະໃນຕົວເມືອງໃຫຍ່ຈຳນວນໜຶ່ງດ້ວຍຈິດໃຈບຸກປະຕິວັດຢ່າງບໍ່ຢຸດຢັ້ງ, ພັກເຮົາບໍ່ພຽງແຕ່ປົກປັກຮັກສາກຳລັງປະຕິວັດໄວໄດ້ໃນເງື່ອນໄຂທີ່ພວກເຮົາຍັງອ່ອນກວ່າສັດຕູຫຼາຍ ແລະຍັງປະສົບກັບຄວາມຫຍຸ້ງຍາກນາໆ ປະການເທົ່ານັ້ນ, ຫາກຍັງເຮັດໃຫ້ພວກເຮົາສາມາດໃກ້ຊິດຕິດແທດໂດຍກົງກັບປະຊາຊົນທຸກຊັ້ນຄົນຢູ່ໃນເຂດກວດກາຂອງສັດຕູ ແລະ ຜັນຂະຫຍາຍກຳລັງອອກໄປໃນທົ່ວປະເທດອີກດ້ວຍ, ໄຂໄລຍະຕໍ່ສູ້ທີ່ເປີດເຜີຍ, ທີ່ຖືກກົດໝາຍ ແລະ ເຄິ່ງຖືກ ກົດໝາຍຢ່າງຟົດເດືອດເຊິ່ງບໍ່ເຄີຍມີມາແຕ່ກ່ອນ ຢູ່ໃນປະເທດເຮົາ. ດ້ວຍການໜູນຫຼັງ ຈາກຂະບວນການຕໍ່ສູ້ທາງ ການເມືອງຢ່າງແຂງແຮງຂອງມະຫາຊົນ, ພວກເຮົາໄດ້ຕໍ່ສູ້ຈຳໃຫ້ລັດຖະບານປະສົມຕ້ອງປະກາດໃຊ້ລັດຖະທຳມະນູນ (ປີ໑໙໕໗) ເຊິ່ງໃນນັ້ນມີລະບຽບການຈຳນວນໜຶ່ງທີ່ກ້າວໜ້າເຊັ່ນກົດໝາຍວ່າດ້ວຍສິດເສລີພາບປະຊາທິປະໄຕ, ສິດສະເໝີພາບລະຫວ່າງຍິງ-ຊາຍ, ລະຫວ່າງຊົນຊາດ, ກົດໝາຍວ່າ

ດ້ວຍການລົບລ້າງລະບອບ " ກວງ, ລ່າມ ", ກຳນົດຖານະຂອງຕົວໜັງສື ແລະ ພາສາລາວເປັນພາສາ ແລະ ອັກສອນທາງການຂອງຊາດ ແລະ ອື່ນໆ..., ສິ່ງເຫຼົ່ານັ້ນໄດ້ເປັນການສ້າງພື້ນຖານທາງດ້ານກົດໝາຍໃຫ້ແກ່ມະຫາຊົນສືບຕໍ່ການຕໍ່ສູ້ເພື່ອປົກປັກຮັກສາສັນຕິພາບ ແລະເພື່ອຄວາມກ້າວໜ້າທາງສັງຄົມ. ອິດທິພົນຂອງການປະຕິວັດໄດ້ນັບມື້ນັບຂະຫຍາຍຕົວຢ່າງກວ້າງເລິກໃນໝູ່ປະຊາ ຊົນຊັ້ນຄົນຕ່າງໆ; ບັນດາອິດທິກຳລັງປະຕິການຂວາຈັດຖືກໂດດດ່ຽວ ແລະ ພັນແຍກຂົ້ນຈຸກໄຈ້; ກຳລັງທີ່ສາມ ເຊິ່ງມີທ່າຂຽງສັນຕິພາບ, ເປັນກາງໄດ້ປະກົດຕົວຂຶ້ນ ແລະຮ່ວມສຳພັນກັບພວກເຮົາ, ພາໃຫ້ກຳລັງແນວລາວຮັກຊາດ ຍາດເອົາໄຊຊະນະອັນມີຄວາມໝາຍສຳຄັນໃນການເລືອກ ຕັ້ງສະພາແຫ່ງຊາດເພີ່ມເຕີມ ເມື່ອ ເດືອນ ພຶດສະພາ໑໙໕໘.

ໂດຍຢ້ານກົວຕໍ່ການຂະຫຍາຍຕົວເຕີບໃຫຍ່ ຂອງການປະຕິວັດ ແລະ ຍ້ອນໄດ້ຖືກ ແລະ ພວມຖືກປະລາໄຊໃນກົນອຸບາຍ "ຫຼອກເສືອ ອອກຈາກຖ້ຳ ", ກົນອຸບາຍ " ຫັນປຽນໂດຍສັນຕິ ",ຈັກກະພັດອາເມລິກາໄດ້ຫັນໄປໃຊ້ຄວາມຮຸນແຮງຝືນປະຕິວັດ ດ້ວຍກຳລັງອາວຸດໃນທັນທີ. ໃນວັນທີ່ ໑໘ ສິງຫາ ໑໙໕໘, ພວກເຂົາໄດ້ຈັດໃຫ້ກຸ່ມປະຕິ

ການຊະນະນິກອນ ໂຄ່ນລົ້ມລັດຖະບານປະສົມ, ຈີກສັນຍາ ວຽງຈັນ, ຈັບກຸມຂຸມຂັງ, ເຂັ່ນຂ້ານັກຮົບ ແລະປະຊາຊົນ ຜູ້ຮັກຊາດນັບເປັນພັນໆ ຄົນ, ປິດລ້ອມຫວັງດັບສູນກອງທະ ຫານຂອງພວກເຮົາ ໔ ກອງພັນທີ່ໄດ້ເຂົ້າລວມລາວ ແລະ ມາເຖິງເດືອນ ກໍລະກົດ ປີ ໑໙໕໙, ພວກເຂົາຊໍ້າພັດບັງ ອາດຈັບກຸມຜູ້ນຳທີ່ສຳຄັນຈຳນວນຫນຶ່ງ ຂອງການປະຕິ ວັດ ເຊິ່ງຍັງຍຶດຫມັ້ນຕໍ່ສູ້ຢູ່ນະຄອນ ຫຼວງ ວຽງຈັນເພື່ອປົກປັກຮັກ ສາຄວາມເປັນທຳ ແລະ ທ່າຖືກົດຫມາຍ ຂອງການປະຕິ ວັດໄວ້ຈົນເຖິງນາທີສຸດທ້າຍ.

ຕໍ່ຫນ້າສະພາບການອັນທຸລະກັນດານ ແລະ ສັບສົນ ທີ່ສຸດນັ້ນ, ພັກເຮົາໄດ້ຕົກລົງຫັນທິດຕໍ່ສູ້ຢ່າງໄວວາດ້ວຍທິດ ນຳ ສົມທົບການຕໍ່ສູ້ທາງການເມືອງກັບການຕໍ່ສູ້ດ້ວຍອາວຸດ, ດ້ານຫນຶ່ງແມ່ນສືບຕໍ່ຍົກສູງຄັນທຸງແຫ່ງຄວາມເປັນທຳ, ປົກ ປັກ ຮັກສາສັນຕິພາບ, ເປັນກາງ, ຄວາມຖືກຕ້ອງປອງດອງ ຊາດ ເພື່ອຍາດແຍ່ງຫາງສຽງຢູ່ພາຍໃນ ແລະ ນອກ ປະ ເທດ, ຜັນແຍກຖັນແຖວຂອງຝ່າຍກົງກັນຂ້າມ, ຊຸກຍູ້ ຂະ ບວນການຕໍ່ສູ້ທາງການເມືອງ ຢູ່ໃນທົ່ວປະເທດ ຢ່າງແຂງ ແຮງ; ອີກດ້ານຫນຶ່ງແມ່ນເດັດດ່ຽວປຸກລຸກມະຫາຊົນລຸກຂຶ້ນ ຕໍ່ສູ້ດ້ວຍອາວຸດ ເພື່ອຊ່ວຍຊຸກຍູ້ຫນູນໃຫ້ການຕໍ່ສູ້ທາງ ການ

ເມືອງ.

ໂດຍປະຕິບັດຕາມແຜນນະໂຍບາຍຂອງພັກ, ກອງພັນທີ່ ໔ ຂອງພວກເຮົາ ໄດ້ໃຊ້ຄວາມສະຫລາດຫລັກແຫລມ ຜ່ານກາງວົງປິດລ້ອມອັນຫນາແຫນ້ນຂອງສັດຕູກັບຄືນ ເມືອສູ່ຖານທີ່ຫມັ້ນ ຢ່າງອົງອາດກ້າຫານ, ໃຊ້ສຽງປືນ ຂອງຕົນປ່າວປະກາດ ຄຳສັ່ງສູ້ຮົບໃຫມ່ຂອງພັກໃຫ້ປະຊາຊົນທົ່ວປະເທດຮູ້. ພາຍໃຕ້ການນຳພາ ຂອງຄະນະພັກທຸກຂັ້ນ, ມະຫາຊົນບັນດາຊົນຊາດ ໂດຍມີພະນັກງານ ນັກຮົບຈຳນວນຫນຶ່ງທີ່ໄດ້ຈັດແບ່ງລົງໄປໃນສະໄຫມລວມລາວ ເປັນຫລັກແຫລ່ງ ໄດ້ລຸກຮື້ຂຶ້ນພ້ອມກັນພາບດຽວໃນຫລາຍທ້ອງຖິ່ນ ຕັ້ງແຕ່ເຫນືອ ຕະຫລອດໃຕ້, ຍາດເອົາສິດເປັນເຈົ້າ ຢູ່ຮາກຖານ, ເປັນແຕ່ລະທ້ອງຖິ່ນອັນກວ້າງໃຫຍ່ໃນທົ່ວຊົນນະບົດແລະແຖບພູດອຍ. ໂດຍຕອບສະຫນອງຄຳຮຽກຮ້ອງ ຂອງພັກ, ມະຫາຊົນຢູ່ຕາມບໍລິເວນທົ່ງພຽງ ແລະ ຕົວເມືອງກໍ່ໄດ້ລຸກຂຶ້ນເປັນຂະບວນໃຫຍ່ ຕໍ່ສູ້ຕ້ານການທໍລະຍົດຕໍ່ສັນຍາ, ຕ້ານການກຳຣາບປາບປາມ ຢ່າງບັງອາດເປີດແປນ ແລະຕ້ານນະໂຍບາຍກໍ່ສົງຄາມ ກາງເມືອງ ຂອງຈັກກະພັດອາເມລິກາ ແລະ ພວກລູກແຫລ້ງຕີນມື. ຂະບວນການມະຫາຊົນນີ້ ຍັງໄດ້ດູດດຶງຕະຫລອດຮອດນາຍ ແລະ ພົນທະຫານ,

ນາຍ ແລະ ພົນຕຳຫຼວດ, ຂ້າລາຊະການ ຈຳນວນໜຶ່ງ ຂອງຝ່າຍກົງກັນຂ້າມໃຫ້ເຂົ້າຮ່ວມໃນການຕໍ່ສູ້. ເຫດການອັນມະຫັດສະຈັນທີ່ບັນດາຜູ້ນຳຂອງການປະຕິວັດ ເຊິ່ງຖືກຄຸມຂັງຢ່າງຜິດກົດໝາຍໂຕນອອກຈາກຄຸກ (ເດືອນ ພຶດສະພາ ປີ ໑໙໖໐) ແລ້ວກັບຄືນເມືອຖານທີ່ໝັ້ນ ຢ່າງປອດໄພນັ້ນ ໄດ້ເປັນການກະທົບທາງການເມືອງທີ່ໃຫຍ່ ທີ່ສຸດທັງພາຍໃນ ແລະ ນອກປະເທດ; ມັນເປັນການປຸກລະດົມຢ່າງແຂງແຮງ ໃຫ້ແກ່ຂະບວນການຕໍ່ສູ້ ຂອງມະຫາຊົນໃນທົ່ວປະເທດ ແລະເຮັດໃຫ້ຖັນແຖວຂອງສັດຕູຕົກສະທ້ານສັ່ນສາຍ, ຫວັ່ນໄຫວຄອນແຄນທີ່ສຸດ. ຕໍ່ໜ້າສະພາບການເຫຼົ່ານັ້ນ, ຈັກກະພັດອາເມລິກາຜູ້ກະຫາຍເລືອດ ໄດ້ໃຊ້ກຸ່ມຂວາຈັດ ພູມີ ໜໍ່ສະຫວັນ ດ້ວຍການປັ້ນແຕ່ງອັນທີ່ເອີ້ນວ່າ " ຄະນະກຳມະການປ້ອງກັນຜົນປະໂຫຍດຂອງຊາດ" ເພື່ອທະວີການ ກວາດລ້າງ, ກຳຣາບປາບປາມປະຊາຊົນຢ່າງປ່າເຖື່ອນ ແລະ ບຸກຕີການປະຕິວັດຢ່າງປ່ວງບ້າ. ແຕ່ການກະທຳອັນຮ້າຍກາດດັ່ງກ່າວນັ້ນຍິ່ງເຮັດໃຫ້ຄວາມຄຽດແຄ້ນຂອງປະຊາຊົນທຸກຊັ້ນຄົນທະວີຂຶ້ນ, ເຮັດໃຫ້ນາຍແລະພົນທະຫານ, ນາຍ ແລະ ພົນຕຳຫຼວດ ຕະຫຼອດ ເຖິງບຸກຄົນຈຳນວນໜຶ່ງ ໃນຊັ້ນເທິງ, ໃນກົງຈັກປົກຄອງຂອງ

ສັດຕູເກີດຄວາມບໍ່ພໍໃຈ ແລະ ນັບມື້ນັບເຫັນແຈ້ງໃນຄວາມເປັນທຳ ຂອງການປະຕິວັດ ອັນພາໄປເຖິງການລັດຖະປະຫານທີ່ຮັກຊາດ ໃນວັນທີ່ ໙ ສິງຫາ ໑໙໖໐ ຢູ່ນະຄອນຫຼວງວຽງຈັນ.

ໂດຍກຳເອົາກາລະໂອກາດອັນສຳຄັນດັ່ງກ່າວ ນັ້ນພັກເຮົາໄດ້ມີແຜນນະໂຍບາຍຕັ້ງໜ້າສະໜັບສະໜູນ ກຳລັງລັດຖະປະຫານ, ໜູນຊ່ວຍເຂົາເຈົ້າໃຫ້ສ້າງຕັ້ງລັດຖະບານທີ່ເດີນຕາມນະໂຍບາຍສັນຕິພາບ, ເປັນກາງ,ຄວາມຖືກຕ້ອງປອງດອງຊາດ, ຊ່ວຍເຫຼືອ ເຂົາເຈົ້າ ກໍ່ສ້າງກຳລັງໃຫ້ເປັນກຳລັງ ເປັນກາງຮັກຊາດ, ປະຕິບັດການຮ່ວມສຳພັນ ກັບເຂົາເຈົ້າ, ຮ່ວມກັບເຂົາເຈົ້າຕໍ່ສູ້ ຕ້ານ ການຕ່າວຕີຂອງສັດຕູ, ປົກປັກຮັກສານະຄອນຫຼວງວຽງຈັນ ໄວ້ຊົ່ວໄລຍະໜຶ່ງ, ສ້າງເງື່ອນໄຂໃຫ້ພຸກທ້ອງຖິ່ນຈັດຕັ້ງກຳລັງແລະຊຸກຍູ້ການເຄື່ອນໄຫວຕີສັດຕູຢ່າງທົ່ວເຖິງ.ຕໍ່ຈາກນັ້ນ, ໂດຍສົມທົບຂະບວນການຕໍ່ສູ້ຢ່າງແຂງແຮງທາງການເມືອງແລະການທະຫານໃນທົ່ວປະເທດ,ພວກເຮົາໄດ້ໃຊ້ ໝັດ "ສອກກັບຫຼັງ" ເປີດທິດບຸກໂຈມຕີຍຸດທະສາດໃຫມ່ຢ່າງໄວວາ,ປົດປ່ອຍບໍລິເວນທົ່ງໄຫຫີນ-ຊຽງຂວາງໃນວັນທີ ໑ມັງກອນປີ ໑໙໖໑,ເຮັດໃຫ້ສັດຕູຫວາຍຕະເງິບແກມບໍ່ທັນໂດຍ

ຍົກສູງຄັນທຸງປະສົມລະຫວ່າງບັນດາກຳລັງປະຕິວັດ ແລະ ຮັກຊາດກ້າວໜ້າ ແລະ ໃຊ້ທ່າຖືກກົດໝາຍຂອງ ລັດຖະບານໃໝ່ຢ່າງສຸດຂີດ, ພວກເຮົາໄດ້ອອກແຮງຍາດ ແຍ່ງການຊ່ວຍເຫຼືອ ຢ່າງເປີດເຜີຍຂອງສາທາລະນະລັດປະຊາທິປະໄຕຫວຽດນາມ, ຂອງສະຫະພາບສາທາລະນະລັດສັງຄົມນິຍົມໂຊວຽດ ແລະ ຂອງບັນດາປະເທດ ສັງຄົມນິຍົມອື່ນ ໆ , ຂະຫຍາຍກຳລັງປະຕິວັດ ໃນທຸກດ້ານ ເປັນຕົ້ນແມ່ນກຳລັງປະກອບອາວຸດຢ່າງໄວວາ ຊຸກຍູ້ການບຸກໂຈມຕີທາງການທະຫານ ສົມທົບກັບການຕໍ່ສູ້ທາງການເມືອງຢ່າງແຂງແຮງ, ເປີດກວ້າງບັນດາຖານທີ່ໝັ້ນ, ສ້າງເຂດປົດປ່ອຍອັນ ທີ່ຕິດລຽນກັນ ແຕ່ເໜືອຕະຫຼອດໃຕ້ ເຊິ່ງກວມເນື້ອທີ່ ໔/໕ ຂອງ ດິນແດນ ແລະ ພົນລະເມືອງ ໑/໔ ຂອງທົ່ວປະເທດ.

ຕໍ່ໜ້າໄພອັນຕະລາຍ ແຫ່ງການປະລາໄຊຢ່າງໃຫຍ່ຫຼວງ, ຈັກກະພັດອາເມລິກາ ແລະ ລູກມືຈຳຕ້ອງ ຍອມຮັບເອົາການໂຮມກອງປະຊຸມປະສົມ ມີ ຝ່າຍທີ່ໜີ່ນເທີບ , ນາມອື່ນ ແລະ ໂຮມກອງປະຊຸມເຈນີວ ເພື່ອແກ້ໄຂ ບັນຫາລາວ. ເຖິງຢ່າງນັ້ນກໍຕາມ, ພວກເຂົາກໍ່ຍັງດຶງດົງດານໜ່ວງເວລາການເຈລະຈາ ແລະມາເຖິງຕົ້ນປີ ໑໙໖໔,

ພວກເຂົາໄດ້ລະດົມບັນດາກອງພົນໃຫຍ່ເຄື່ອນທີ່ ທີ່ຍອດຢ້ຽມ ນັບທັງກອງພົນໃຫຍ່ ທະຫານຣາບອາກາດ ຂອງກອງ ທະຫານຫຸ່ນ ໂດຍມີການຊ່ວຍຫນູນຈາກພາກສ່ວນເຕັກນິກຂອງກອງທະຫານ ບໍລິວານໄທ ສຸ່ມເຂົ້າຫຼວງນ້ຳທາ, ,ເປີດບັ້ນຮົບຕາວໂຈມຕີຂະຫນາດໃຫຍ່ ຫວັງຍຶດເອົາທ່າເປັນ ເຈົ້າການຄືນ. ກອງທັບ ແລະ ປະຊາຊົນເຮົາດ້ວຍແບບ ວິທີ ແລະ ລະດັບອັນເໝາະສົມ ໄດ້ຕີພວກເຂົາແຕກສະຫຼຸ ຜຸພ່າຍ, ທັບມ້າງກຸ່ມທີ່ຕັ້ງການທະຫານທີ່ໃຫຍ່ກວ່າໝູ່ ຂອງພວກຫຸ່ນໃນເວລານັ້ນ, ທັງສາມາດສະກັດກັ້ນກົນອຸບາຍຂອງອາເມລິກາ ທີ່ໄດ້ເອົາກອງທະຫານເຮືອສູ້ຮົບເທິງບົກຂອງເຂົາກຽມຈໍ້ຢູ່ໄທແລ້ວ ເພື່ອໂດດເຂົ້າມາລາວ ຢ່າງສ່ຽງໄພນັ້ນໄດ້. ຍອມຖືກປະລາໄຊຢ່າງຕິດຕໍ່ ນໍ່ເນື່ອງກັນໃນທົ່ວທຸກສະຫນາມຮົບ, ເປັນຕົ້ນແມ່ນຢູ່ນ້ຳທາ ແລະຍ້ອນຖືກທາງສຽງທີ່ກ້າວຫນ້າ ໃນໂລກກ່າວປະນາມຢ່າງ ແຂງແຮງ, ຈັກກະພັດອາເມລິກາ ແລະ ລູກມືຈຳຕ້ອງໄດ້ຍອມເຊັນສັນຍາເຊີແນວ ກ່ຽວກັບລາວ ໃນວັນທີ ໒໓ ກໍລະກົດ ໑໙໖໒ ໂດຍມີ ໑໔ ປະເທດເຂົ້າຮ່ວມ, ຮັບຮູ້ ຢ່າງສະຫງ່າຜ່າເຜີຍລັດຖະບານປະສົມຊົ່ວຄາວແຫ່ງຊາດ ທີ່ໄດ້ຮັບການສ້າງຕັ້ງຂຶ້ນກ່ອນຫນ້ານັ້ນ ເດືອນຫນຶ່ງຕາມ ສັນຍາ

ຕ່າງ ໆ ທີ່ໄດ້ເຊັນກັນຢູ່ທົ່ງໄຫຫີນ ລະຫວ່າງ ໓ ຝ່າຍໃນລາວ. ໄຊຊະນະອັນໃຫຍ່ຫຼວງ ດັ່ງກ່າວນັ້ນເປັນຂີດຫມາຍແຫ່ງບາດກ້າວຂະຫຍາຍຕົວໃຫມ່ຢ່າງກະໂດດຂັ້ນທາງດ້ານທ່າ ແລະ ກຳລັງຂອງການປະຕິວັດລາວ.

ແຕ່ ກົນອຸບາຍຂອງຈັກກະພັດອາເມລິກາ ໃນເວລານັ້ນ ແມ່ນແນ່ໃສ່ຍາດເວລາອັນຈຳເປັນເພື່ອປັບປຸງ, ເພີ່ມທະວີກຳລັງທະຫານຫຸ່ນ ແລະ ກຽມທຸກດ້ານໃຫ້ແກ່ ຍຸດທະສາດສົງຄາມພິເສດຂອງພວກເຂົາຢູ່ລາວ ກໍຄື ຢູ່ພາກໃຕ້ຫວຽດນາມ. ດ້ວຍເຫດນັ້ນ, ພໍແຕ່ລັດຖະບານປະສົມ ໓ ຝ່າຍ ໄດ້ຮັບການສ້າງຕັ້ງຂຶ້ນ ພວກເຂົາກໍໄດ້ຫຼົບ ລີ້ນປີ້ນຄວາມ, ດຳເນີນການຂົ່ມຂູ່ປາບປາມບັນດາຄົນ ຜູ້ຮັກຊາດກ້າວຫນ້າ ທີ່ເຫັນດີໃຫ້ປະຕິບັດສັນຍາເຈນີວຢ່າງ ເຂັ້ມງວດ, ໃຊ້ທຸກວິທີຊື້ຈ້າງແກ່ດຶງເອົາບຸກຄົນຈຳນວນຫນຶ່ງໃນລັດຖະບານ ແລະ ໃນກຳລັງປະກອບອາວຸດເປັນກາງ ແນ່ໃສ່ມ້າງມ້າງກ້ອນກຳລັງຮ່ວມສຳພັນ ລະຫວ່າງບັນດາກຳລັງ ຮັກຊາດກ້າວຫນ້າ, ເຮັດໃຫ້ແນວລາວຮັກຊາດ ຕົກຢູ່ໂດດດ່ຽວ ເພື່ອປະຕິບັດກົນອຸບາຍອັນເລິກແລບ " ເອົາສອງຕີຫນຶ່ງ " ຂອງພວກເຂົາ. ບັງອາດໄປກວ່ານັ້ນ ພວກເຂົາໄດ້ລອບຄາດຕະກຳ ທ່ານ ກີນີມ ພົນເສນາ, ລັດຖະມົນຕີ

ວ່າການ ກະຊວງການຕ່າງປະເທດຂອງລັດຖະບານປະສົມ ແລະ ຜູ້ນຳຂອງຝ່າຍກຳລັງເປັນກາງຮັກຊາດກ້າວໜ້າໃນວັນທີ່ ໑ ເມສາ ໑໙໖໓. ດ້ວຍການກະທຳເຫຼົ່ານັ້ນ, ພວກເຂົາໄດ້ມ້າງລັດຖະບານປະສົມ ໃນດ້ານເນື້ອແທ້, ລະເມີດສັນຍາເຈນີວຢ່າງຮ້າຍແຮງ, ກໍ່ສົງຄາມຄືນໃໝ່ຢູ່ລາວ.

ໄລຍະແຕ່ກາງປີ ໑໙໖໔ ເຖິງຕົ້ນ ປີ ໑໙໗໓ ເປັນໄລຍະຕໍ່ສູ້ພາບແພ້ຍຸດທະສາດ " ສົງຄາມພິເສດຂອງໂຢນເຊີນ " ແລະ ຍຸດທະສາດ " ສົງຄາມພິເສດ ເພີ່ມທະວີຕາມທິດສະດີນິກເຊີນ " ຂອງຈັກກະພັດອາເມລິກາ.

ວັນທີ່ ໑໗ ພຶດສະພາ ໑໙໖໔, ອຳນາດ ການປົກຄອງໂຢນເຊີນໄດ້ໃຊ້ກຳລັງທັບອາກາດ ອາເມລິກາຖິ້ມລະເບີດຍິງທຳລາຍເຂດປົດປ່ອຍລາວ ຢ່າງບັງອາດເປີດແປນເປັນຄັ້ງທຳອິດ, ພວກເຂົາໄດ້ຂົນເອົາອາວຸດຍຸດທະພັນອັນທັນສະໄໝມາປະກອບໃຫ້ກອງທະຫານຝ່າຍຂວາຢ່າງລູ້ລົ່ງທົ່ງເທ, ເພີ່ມຈຳນວນທະຫານໜຸ່ມຂຶ້ນຄີບເທົ່າ ແລະ ສ້າງກອງທະຫານໜຸ່ມ ໃຫ້ເປັນກົມກອງໃຫຍ່, ໃຊ້ກຸ່ມຂຸນເສິກຟາຊິດກູປະສິດ - ຊະນະນິກອນ ເປັນລູກມື, ມີທີ່ປຶກສາອາເມລິກາເປັນພັນ ໆ ຄົນບັງຄັບບັນຊາໂດຍກົງ. ດ້ວຍກອງທະຫານໜຸ່ມລາວ ປະມານ ໔ ໝື່ນຄົນ ແລະກອງທະ

ທານເລວຮັບຈ້າງໄທ ຫຼາຍກອງພັນພາຍໃຕ້ການ ຊຸ້ມກັນຂອງກອງທັບອາກາດອາເມລິກາ, ໂດຍປະສານ ສົມທົບຢ່າງແໜ້ນແຟ້ນກັບສົງຄາມພາກສ່ວນຢູ່ພາກໃຕ້ຫວຽດນາມ ແລະ ສົງຄາມທຳລາຍພາກເໜືອຫວຽດນາມ, ຈັກກະພັດອາເມລິກາ ໄດ້ດຳເນີນນະໂຍບາຍປີ້ນອ້ນໄດສົງຄາມ , ເຮັດໃຫ້ສົງຄາມພິເສດຢູ່ລາວນັບມື້ນັບຂະຫຍາຍຕົວຂຶ້ນສູ່ລະດັບສູງ. ເລີ່ມດ້ວຍບັ້ນຮົບ " ສາມສອນ " ທີ່ໃຊ້ກຳ ລັງ ໒໐ ກວ່າກອງພັນ ບຽດຍຶດເຂດປົດປ່ອຍວັງວຽງ, ສາລາພູຄູນ, ກິ່ວກະຈຳ, ເມືອງສຸຍ ເຊິ່ງແມນເຂດຍຸດທະສາດສຳຄັນ ຢູ່ເຂດຕໍ່ແດນລະຫວ່າງ ໒ ແຂວງ ວຽງຈັນ - ຫຼວງພະບາງ-ຊຽງຂວາງ, ນັບແຕ່ທ້າຍປີ ໑໙໖໔ ເປັນຕົ້ນມາ, ພວກເຂົາໄດ້ເປີດບັ້ນຮົບຕ່າງໆ ດ້ວຍຂະໜາດອັນນັບມື້ນັບໃຫຍ່ຂຶ້ນເປັນລຳດັບ ຄື : ບັ້ນຮົບ " ສອນໄຊ ໑ " ແລະ " ສອນໄຊ ໒ ", ບັ້ນຮົບ " ມັງກອນ ", ບັ້ນຮົບ " ໂຄດຕະບອງ " ... ບຸກຕີບຽດຍຶດເຂດປົດປ່ອຍ ຢູ່ພາກກາງ ແລະ ພາກໃຕ້ຢ່າງຜິດກົດໝາຍ, ບັ້ນຮົບ " ທະນົງກຽດ" ດ້ວຍການບຸກໂຈມຕີເຂົ້າໃສ່ " ພູກູດ ຈອມເຫຼັກ "ເປັນຫຼາຍສິບບັ້ນ ແນໃສ່ຍຶດເອົາບໍລິເວນ ພູພຽງຍຸດທະສາດທົ່ງໄຫຫີນ ແລະ ອື່ນ ໆ ...ມາເຖິງຕົ້ນ

ປີ ໑໙໖໓, ພວກເຂົາໄດ້ໃຊ້ ໔ ກອງພົນໃຫຍ່ເຄື່ອນທີ່ກຳລັງຫຼວງ ໄປບຸກຕີຍຶດຕັ້ງຢູ່ເຂດນ້ຳບາກ ໂດຍມີກົນ ອຸບາຍບຽດຍຶດເຂດປົດປ່ອຍທັງໝົດ ຂອງພວກເຮົາ ຢູ່ທາງພາກເໜືອ.

ຕໍ່ໜ້າສະພາບການອັນເຄັ່ງຮ້ອນດັ່ງກ່າວນັ້ນ, ພັກເຮົາໄດ້ມີຄວາມທຸ່ນທ່ຽງ, ໄຈ້ແຍກການຊັ່ງຊາ ກຳລັງລະຫວ່າງເຮົາກັບສັດຕູຢູ່ພາຍໃນ ແລະ ນອກປະເທດຢ່າງຈັດເຈນ, ເຫັນແຈ້ງບັນດາດ້ານອ່ອນ, ດ້ານຈຳກັດ ຂອງອັນທີ່ເອີ້ນວ່າ " ກຳລັງແຮງທີ່ບໍ່ອາດຈະຄາດຄິດໄດ້ ຂອງສະຫະລັດອາເມລິກາ ", ຍືນຢັນໄຊຊະນະອັນແນ່ນອນຂອງການປະຕິວັດເຮົາ ດ້ວຍກຳລັງແຮງສັງລວມຂອງໝົດ ທັງຊາດ, ກຳລັງແຮງແຫ່ງການຮ່ວມສຳພັນສູ້ຮົບ ກັບ ກອງທັບແລະ ປະຊາຊົນຫວຽດນາມອ້າຍນ້ອງ ແລະກຳລັງແຮງຂອງຍຸກສະໄໝ.ບົນພື້ນຖານນັ້ນ ພັກເຮົາໄດ້ຍຶດໝັ້ນຍຸດທະສາດບຸກ,ໝູນໃຊ້ວິທີປະຕິວັດ ແລະ ແບບວິທີຕໍ່ສູ້ອັນປະດິດ ສ້າງແລະ ເໝາະສົມ, ເດັດດ່ຽວຍົກສູງຄັນທຸງກູ້ຊາດຕ້ານຈັກກະພັດອາເມລິກາ, ປຸກລະດົມທົ່ວປວງຊົນ, ທົ່ວກອງ ທັບທັງຕໍ່ສູ້ທັບມ້າງການບຸກໂຈມຕີບຽດຍຶດຂອງສັດຕູ ທັງປັບປຸງ, ເປີດກວ້າງ ແລະ ກໍ່ສ້າງເຂດປົດປ່ອຍໃນທຸກດ້ານ ການ

ຂະໜາດ ຂອງ ລັດໜຶ່ງ ໃຫ້ເປັນ ແນວໜຶ່ງ ໃຫຍ່ ຂອງ ການຕໍ່ຕ້ານ ທົ່ວປະເທດ. ໃນຍຸດທະສາດ ບຸກ, ພັກ ເຮົາ ໄດ້ໝູນໃຊ້ ຢ່າງປະດິດສ້າງ ຍຸດໂທບາຍຈຳກັດ ສັດຕູ ເພື່ອເອົາຊະນະສັດຕູ, ວາງແຜນນະໂຍບາຍ ແກ້ ໄຂບັນຫາລາວ ໃນຂອບເຂດ ແຫ່ງສາຍພົວພັນ ເຊິ່ງກັນ ແລະ ກັນລະຫວ່າງ ຝ່າຍຕ່າງ ໆ ຢູ່ໃນລາວ ທັງນັ້ນກໍ ເພື່ອສະກັດກັ້ນ ກົນອຸບາຍ ກໍ່ສົງຄາມ ພາກສ່ວນ ຂອງຈັກ ກະພັດອາເມລິກາ ຢູ່ໃນປະເທດ ຂອງພວກເຮົາ. ການ ສືບຕໍ່ຮັກສາຜູ້ຕາງໜ້າ ຂອງ ແນວລາວ ຮັກຊາດ ແລະ ກຳລັງປະກອບອາວຸດ ຂອງພວກເຮົາ ກອງໜຶ່ງ ໄວ້ຢູ່ ວຽງຈັນ ພາຍຫຼັງທີ່ລັດຖະບານປະສົມ ມີ ຝ່າຍ ຖືກມ້າງ ໃນເບື້ອງແທ້, ການປະກາດ "ໂຄງການ ດຳເນີນ ງານ ແລະ ຫຼັກໝັ້ນ ໔ ຂໍ້" ຂອງແນວລາວຮັກຊາດ ແລະ ບັນດາກຳລັງເປັນກາງຮັກຊາດ ໃນກອງປະຊຸມປະສົມການ ເມືອງທົ່ວປະເທດ ເມື່ອເດືອນ ຕຸລາ ໑໙໖໔ ກໍ່ຄືລະດັບ ຂອງການບຸກສັດຕູ ທາງດ້ານທະຫານ ໃນສະໜາມຮົບ ຕ່າງ ໆ ... ນັ້ນ ໄດ້ສ່ອງແສງເຖິງບັນດາ ແຜນນະໂຍ ບາຍຍຸດທະສາດ ແລະ ຍຸດໂທບາຍອັນຖືກຕ້ອງ ຂອງພັກ ເຮົາໃນໄລຍະນັ້ນ.

ຕອບສະໜອງຄຳຮຽກຮ້ອງຂອງພັກ ໃນການຕໍ່ສູ້ກູ້ຊາດ ຕ້ານອາເມລິກາ, ທົ່ວທັງຊາດ ໄດ້ເຄື່ອນພົນດ້ວຍທ່ວງທ່າອັນຟົດເດືອດ ເຂັ້ມແຂງ, ທັງສູ້ຮົບ ທັງກໍ່ສ້າງຂະຫຍາຍກຳລັງ, ທັງອອກແຮງງານ ເພີ່ມພູນຜະລິດຜົນເພິ່ງຕົນເອງກຸ້ມຕົນເອງ, ກໍ່ສ້າງເຂດປົດປ່ອຍ,ສົມທົບລະຫວ່າງການສູ້ຮົບແບບກອງຫຼອນ ກັບການສູ້ຮົບແບບລວມໝູ່, ໃຊ້ອາວຸດພື້ນເມືອງຫຼ້າສະໄໝ ສົມທົບກັບອາວຸດ ທັນສະໄໝ, ຕີສັດຕູທັງຢູ່ໜ້າດິນ ທັງຢູ່ເທິງອາກາດ, ເດັດດ່ຽວຜາບແພ້ການບຸກໂຈມຕີບຽດຍຶດຂອງສັດຕູ, ປົກປັກຮັກສາເຂດປົດປ່ອຍໄວ້ຢ່າງໝັ້ນຄົງ. ພ້ອມກັນນັ້ນ ກໍ່ກ້າຫານແທງເລິກເຂົ້າໄປເຄື່ອນໄຫວໃນເຂດແນວຫຼັງ ຂອງສັດຕູເພື່ອກໍ່ສ້າງຖານທີ່ໝັ້ນກອງຫຼອນ, ຊຸກຍູ້ຂະບວນການຕໍ່ສູ້ຢູ່ໃນເຂດກວດກາຂອງສັດຕູ, ເປີດສົງຄາມປະຊາຊົນຢ່າງກວ້າງຂວາງຢູ່ໃນທົ່ວປະເທດ ດ້ວຍຫຼາຍຮູບການຕໍ່ສູ້ ທີ່ອຸດົມຮັ່ງມີ. ບັນດາຕົວຢ່າງທີ່ດີເດັ່ນບໍ່ຈັກວ່າເທົ່າໃດໃນດ້ານສູ້ຮົບ, ໃນດ້ານອອກແຮງງານສ້າງສາ ໄດ້ປະກົດອອກໃນທຸກທ້ອງຖິ່ນ, ທຸກຊົນຊາດເຊັ່ນ ຂະບວນຕີສັດຕູ,ປົກປັກຮັກສາຄວາມສະຫງົບ, ປ້ອງກັນອາກາດປະຊາຊົນ, ອອກໄປເປັນທະຫານ, ໄປເປັນຄົນງານ, ຂະບວນຕໍ່ສູ້ການເມືອງ,

ກໍ່ສ້າງຣາກຖານ, ເພີ່ມພູນຜະລິດຜົນ, ຂະບວນປະຊາສຶກສາ, ສາທາລະນະສຸກ, ອະນາໄມ ແລະ ອື່ນ ໆ ...

ເດືອນ ມັງກອນ ປີ ໑໙໖໘, ກອງທັບ ແລະປະຊາຊົນເຮົາໄດ້ເປີດບັ້ນຮົບນ້ຳບາກ, ບຸກຕີກຳລັງຫຼວງເຄື່ອນທີ່ຂອງສັດຕູ ໔ ກອງພັນໃຫຍ່ໃຫ້ແຕກທະລາຍໄປ , ດັບສູນ ແລະ ຈັບທະຫານຝ່າຍຂວາໄດ້ເກືອບ ໕.໐໐໐ຄົນ. ໄຊຊະນະອັນ ໃຫຍ່ຫຼວງດັ່ງກ່າວນັ້ນ ໄດ້ຕີກຳລັງ ປະກອບອາວຸດຂອງຝ່າຍຂວາ ເຊິ່ງເປັນໜຶ່ງໃນສອງກຳລັງຍຸດທະສາດທີ່ຈັກກະພັດ ອາເມລິກາ ໄດ້ຫຼຸ່ມເຫື່ອເທແຮງ, ເງິນຄ້ຳສ້າງຂຶ້ນມັ້ນໃຫ້ລົ້ມຕູບພູບ, ເຮັດໃຫ້ພວກປະຕິການລູກມືຕົກສະທ້ານຢ້ານກົວ ກະວົນກະວາຍ ອັນໄດ້ອຳນວຍຄວາມສະດວກໃຫ້ແກ່ສະໜາມຮົບຕ່າງ ໆ ໃນທົ່ວປະເທດ ໃນການບຸກໂຈມຕີສັດຕູ ແລະ ເປີດກວ້າງເຂດປົດປ່ອຍ. ໃນຂະນະດຽວກັນນັ້ນ, ຍຸດທະສາດສົງຄາມພາກສ່ວນຂອງຈັກກະພັດອາເມລິກາ ຢູ່ພາກໃຕ້ຫວຽດນາມ ຖືກພັງທະລາຍພາຍຫຼັງ ການບຸກໂຈມຕີທົ່ວໄປ ແລະ ການລຸກຮືຂຶ້ນ ພ້ອມກັນພາບດຽວໃນບຸນ " ເຕດ " ປີ ໑໙໖໘ ຂອງກອງທັບ ແລະ ປະຊາຊົນຫວຽດນາມອ້າຍນ້ອງ; ອຳນາດ ການປົກຄອງໂຢນເຊີນຖືກຄອນແຄນສຸດຂະໜາດ ຈຳຕ້ອງຢຸດເຊົາ

ການຖິ້ມລະເບີດໃສ່ພາກເໜືອຫວຽດນາມ ແລະຍອມເຂົ້າຮ່ວມກອງປະຊຸມເຈລະຈາກັບສາທາລະນະລັດ ປະຊາທິປະໄຕຫວຽດນາມຢູ່ປາຣີ. ໃນສະພາບການດັ່ງກ່າວນັ້ນ, ກອງປະຊຸມໃຫຍ່ວິສາມັນຄັ້ງວັນທີ່ ໓໑ ຕຸລາ ໑໙໖໘ ຂອງແນວລາວຮັກຊາດ ໄດ້ປະກາດໂຄງການການເມືອງ ໑໒ ຂໍ້ກ່ຽວກັບການກໍ່ສ້າງປະເທດລາວໃຫ້ເປັນປະເທດສັນຕິພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ ແນໃສ່ເພີ່ມທະວີ ແລະ ເປີດກວ້າງແນວໂຮມສາມັກຄີປະຊາຊົນພາຍໃນປະເທດ, ຍາດແຍ່ງການເປັນໃຈສະໜັບສະໜູນ ຈາກທາງສຽງ ທີ່ກ້າວໜ້າໃນໂລກ, ເຮັດໃຫ້ບັນດາອິດທິກຳລັງກະຫາຍສົງຄາມຂອງຈັກກະພັດອາເມລິກາ ແລະ ລູກມືຕົກຢູ່ໂດດດ່ຽວກວ່າເກົ່າ, ແລະ ໄຂຊ່ອງທາງ ໃຫ້ແກວິທີການແກ້ໄຂ ບັນຫາລາວ ດ້ວຍວິທີການເມືອງ.

ແຕ່ ຈັກກະພັດອາເມລິກາ ບໍ່ທັນຍອມຮັບການ ປະລາໄຊຂອງພວກເຂົາ. ເລີ່ມແຕ່ຕົ້ນປີ ໑໙໖໙ ພາຍໃຕອຳນາດການປົກຄອງ ນິກເຊິນ, ພວກເຂົາໄດ້ຫັນໄປສູ່ຍຸດທະສາດສົງຄາມໃໝ່ : ໃຊ້ກຳລັງແຮງທາງການທະຫານໃນລະດັບສູງສຸດ, ເພີ່ມທະວີສົງຄາມພິເສດຂຶ້ນສູ່ຍອດສູງສຸດຢູ່

ລາວ ໄປຄຽງຄູ່ກັບການດຳເນີນການເຮັດໃຫ້ " ສົງຄາມ ຫວຽດນາມ ເປັນຂອງຫວຽດນາມ " ແລະ ເປີດກວ້າງ ສົງຄາມຮຸກຮານອອກໄປສູ່ກຳປູເຈຍ; ໄປພ້ອມກັນນັ້ນ ອຳ ນາດການປົກຄອງນິກເຊີນ ກໍ່ໄດ້ຫຼິ້ນ ທຸກເລ່ລ່ຽມການເມືອງ ແລະ ການຕ່າງປະເທດ ທີ່ເລີກແລບໂຫດຫ້ຽມທີ່ສຸດ ຫວັງ ລ້ອມປ່ຽວ ແລະ ຈຳກັດໄຊຊະນະແຫ່ງການຕໍ່ຕ້ານຂອງປະ ຊາຊົນ ມີ ປະເທດໃນອິນດູຈີນ, ຍາດເອົາທ່າດີຄືນໄປໃຫ້ ພວກເຂົາ ແລະ ບັງຄັບພວກເຮົາຕ້ອງຍອມຮັບເອົາບັນດາ ເງື່ອນໄຂທີ່ເປັນຜົນດີໃຫ້ແກ່ອາເມລິກາ ແລະ ລູກມື.

ສະໜາມຮົບຂອງລາວ ເປັນບ່ອນດຳເນີນການທົດ ສອບບາງຈຸດທີ່ສຳຄັນຂອງ " ທິດສະດີນິກເຊີນ ". ກາງ ປີ ໑໙໗໑, ຈັກກະພັດອາເມລິກາ ແລະ ລູກມືໄດ້ເປີດ ບັ້ນຮົບ " ກູ້ກຽດ " ບຸກໂຈມຕີບຽດຍຶດເຂດປົດປ່ອຍ ທົ່ງ ໄຫຫີນ ດ້ວຍການໃຊ້ກອງທະຫານເກືອບ ໕໐ ກອງພັນປະ ກອບດ້ວຍບັນດາກົມກອງຍອດຢ້ຽມສ່ວນໃຫຍ່ຂອງກຳລັງ ພິ ເສດເຊິ່ງເປັນກຳລັງຍຸດທະສາດ ກຳລັງໜຶ່ງ ໂດຍແມ່ນ ຈັກກະພັດອາເມລິກາ ເປັນຜູ້ສ້າງຂຶ້ນ, ລ້ຽງເກືອ ແລະ ບັງຄັບບັນຊາໂດຍກົງ ແລະ ໄດ້ຮັບການຊ່ວຍໜູນ ຈາກ ກອງທັບອາກາດຂອງອາເມລິກາ ນັບທັງກອງບິນ ຍຸດທະ

ສາດ ເບ - ໕໒ ແລະ ຈາກກົມກອງທະຫານລາວ (ຂະຫນາດກອງພັນໃຫຍ່), ທະຫານປືນໃຫຍ່ຂອງໄທ ຈຳນວນຫນຶ່ງ. ໃນຂະນະດຽວກັນນັ້ນ, ພວກເຂົາກໍ່ໄດ້ດຳເນີນສົງຄາມທຳລາຍຢ່າງດຸເດືອດຮ້າຍກາດທີ່ບໍ່ເຄີຍມີມາກ່ອນ, ຍິງທຳລາຍຢ່າງມີລັກສະນະລ້າງຜານ ໃນຫຼາຍບໍລິເວນທີ່ປະຊາຊົນອາໄສຢູ່ຢ່າງຫນາແຫນ້ນໃນເຂດປົດປ່ອຍ ຫວັງເຮັດໃຫ້ຄວາມຕັດສິນໃຈຂອງປະຊາຊົນເຮົາ ໃນການຕີເອົາຊະນະຈັກກະພັດອາເມລິກາ ແລະ ລູກມືນັ້ນ ເກີດຫວັ່ນໄຫວຄອນແຄນ. ການຕໍ່ສູ້ຂອງກອງທັບ ແລະ ປະຊາຊົນເຮົາຕ້ອງໄດ້ຜ່ານວັນເວລາທີ່ຂຽວຂາດ, ລຳບາກທີ່ສຸດ, ຕ້ອງຍາດຊີງກັບສັດຕູເປັນແຕ່ລະຫນ່ວຍພູ, ຮ່ອມຫ້ວຍ; ລູກປືນແຕ່ລະລູກ, ເຂົ້າແຕ່ລະເມັດ ທີ່ສົ່ງອອກໄປສູ່ສະຫນາມຮົບກໍ່ແມ່ນໄດ້ຍອມດ້ວຍເລືອດຂອງນັກຮົບ ແລະປະຊາຊົນເຮົາ.

ຕໍ່ຫນ້າຄວາມຫຍຸ້ງຍາກອັນໃຫຍ່ຫຼວງ ໃນໄລຍະທຳອິດແຫ່ງການປະເຊີນຫນ້າກັບຍຸດທະສາດ " ສົງຄາມ ພິເສດ ເພີ່ມທະວີຂອງທິດສະດີ ນິກເຊີນ ", ພັກເຮົາກໍ່ຍັງຄົງຢືນຢັນຄວາມຕັດສິນໃຈຍຸດທະສາດຂອງຕົນ ຄືເດັດດ່ຽວຕີເອົາຊະນະຈັກກະພັດອາເມລິກາ ແລະ ລູກມືໃນທຸກກໍລະນີຂອງສະພາບການ ແລະ ໄດ້ປຸກລະດົມທົ່ວກອງທັບ, ທົ່ວ

ປວງຊົນຜ່ານຂ້າມຄວາມຫຍຸ້ງຍາກ ແລະ ອຸປະສັກນາ ໆ ປະການ, ຕີສັດຕູ, ຈັດຕັ້ງຊີວິດການເປັນຢູ່ຂອງປະຊາຊົນ ໃນເຂດປົດປ່ອຍໃຫ້ສອດຄ່ອງກັບສະພາບການ ຂອງການຕໍ່ ສູ້ອັນດຸເດືອດ, ຊຸກຍູ້ການຕໍ່ສູ້ໃນທຸກດ້ານຢູ່ໃນເຂດກວດກາ ຂອງສັດຕູຢ່າງແຂງແຮງ, ສ້າງທຸກເງື່ອນໄຂ ອັນຈຳເປັນ ເພື່ອພາບແພ້ສັດຕູ. ຕົ້ນປີ ໑໙໗໐, ພວກເຮົາໄດ້ເປີດບັ້ນ ຮົບທົ່ງໄຫຫີນ-ຊຽງຂວາງ ໂມ່ງບາດຄ້ອນກະໄຊຕາຍ ໃສ່ ກຳລັງພິເສດ, ກວາດພວກເຂົາອອກຈາກເຂດທີ່ພວກເຂົາ ໄດ້ມາບຸກຍຶດເອົານັ້ນ ຢ່າງຮາບກ້ຽງ ແລະ ຂັບໄລ່ພວກ ເຂົາໄປຈົນເຖິງເຮືອນຮັງຂອງພວກເຂົາ ຢູ່ຊຳທອງ-ລ້ອງ ແຈ້ງ, ເຮັດໃຫ້ " ທິດສະດີນິກເຊິນ " ຢູ່ລາວຖືກແຫຍ້ ເຂົ້າໃນທ່າຄູງຕາແຈ ຕັ້ງແຕ່ຫົວທີ່ໂລດ. ຕໍ່ຈາກນັ້ນ, ຢູ່ ທາງພາກໃຕ້ລາວ, ພວກເຮົາກໍໄດ້ບຸກໂຈມຕີເຂົ້າສາລະວັນ -ອັດຕະປື, ປົດປ່ອຍ ໒ ແຂວງນີ້ໄດ້ເກືອບໝົດ. ໂດຍປະ ສານສົມທົບກັບບາດຄ້ອນທາງການທະຫານ, ພັກເຮົາ ໄດ້ ເປີດທິດບຸກທາງດ້ານການເມືອງ ດ້ວຍການປະກາດວິທີແກ້ ໄຂທາງການເມືອງ ໕ ຂໍ້ ກ່ຽວກັບບັນຫາລາວ ລົງວັນທີ ໖ ມີນາ ໑໙໗໐. ໃນໄລຍະດຽວກັນນີ້ເອງໄດ້ມີເຫດການ ການເມືອງສຳຄັນທີ່ສຸດເຫດການໜຶ່ງ ນັ້ນກໍຄືກອງປະຊຸມ

ສູດຍອດປະຊາຊົນອິນດູຈີນ ໃນເດືອນ ເມສາ ໑໙໗໐ ເຊິ່ງໄດ້ຢືນຢັນຢ່າງສະຫງ່າຜ່າເຜີຍ ຫຼັກຫມັ້ນ ສາມັກຄີຮ່ວມສຳພັນສູ້ຮົບລະຫວ່າງກອງທັບ ແລະປະຊາຊົນ ໓ ປະເທດ ແລະ ຄວາມຕັດສິນໃຈຍຸດທະສາດ ຂອງ ໓ ຊາດໃນການເດັດດ່ຽວຜາບແພ້ກົນອຸບາຍ " ໃຊ້ຄົນອິນດູຈີນ ເລວຄົນອິນດູຈີນ " ດ້ວຍບັນດາ ຫຼັກຕຳລາ ສົງຄາມຂອງ" ທິດສະດີນິກເຊິນ " ເພື່ອນຳເອົາການຕໍ່ຕ້ານຂອງ ປະຊາຊົນ ໓ ປະເທດອ້າຍນ້ອງໄປສູ່ໄຊຊະນະສົມບູນ. ຜົນສຳເລັດ ອັນສະຫງ່າງາມ ຂອງກອງປະຊຸມຄັ້ງປະຫວັດການນີ້ ໄດ້ເປັນການເພີ່ມທະວີກຳລັງແຮງສາມັກຄີສູ້ຮົບ ຂອງປະຊາຊົນ ໓ ປະເທດຂຶ້ນສູ່ບາດກ້າວໃຫມ່, ພ້ອມກັນນັ້ນ ກໍ່ໄດ້ຮັບການເປັນໃຈສະຫນັບສະຫນູນຢ່າງກວ້າງຂວາງ ແລະແຂງແຮງຈາກຂະບວນການຕໍ່ສູ້ຂອງປະຊາຊົນທີ່ກ້າວຫນ້າ ແລະ ຮັກຫອມສັນຕິພາບ ໃນໂລກ ຕ້ານຈັກກະພັດອາເມລິກາ ຜູ້ຮຸກຮານ, ເຮັດໃຫ້ພາຍໃນຂອງສັດຕູ ນັບທັງໃນວົງການ ກຳອຳນາດຂອງອາເມລິກາ ເກີດມີການແບ່ງແຍກ ແຕກແຫງຢ່າງເລິກເຊິ່ງຮ້າຍແຮງ.

ເຖິງຢ່າງນັ້ນກໍ່ຕາມ, ຈັກກະພັດອາເມລິກາກໍ່ຍັງດື້ຮົນບ່ອງບ້າຢູ່ຕໍ່ມາ. ພວກເຂົາໄດ້ພິປອງ " ຫຼົ້ນການ

ພະນັນໃຫຍ່ " ຫວັງກອບກູ້ເອົາພວກເຂົາ ອອກຈາກການ
ປະລາໄຊອັນໜັກໜ່ວງຢູ່ລາວ ກໍຄືຢູ່ພາກໃຕ້ຫວຽດນາມ
ແລະ ກຳປູເຈຍ. ເດືອນ ກຸມພາ ໑໙໗໑, ພວກເຂົາໄດ້
ໃຊ້ກອງທະຫານຫຸ່ນໄຊງ່ອນ ໔ ໝື່ນກວ່າຄົນ ໂດຍການ
ຊ່ວຍໜູນຢ່າງຫຼວງຫຼາຍ ທີ່ສຸດ ຂອງກອງທັບອາກາດອາ
ເມລິກາ ແລະ ການປະສານສົມທົບຂອງກອງທະຫານ ຫຸ່ນ
ວຽງຈັນ ແລະ ກອງທະຫານເລວຮັບຈ້າງໄທ ເປີດບັ້ນຮົບ
ຂະໜາດໃຫຍ່ ຢ່າງບໍ່ເຄີຍມີມາກ່ອນ ບຸກໂຈມຕີເຂົ້າເຂດ
ປົດປ່ອຍທາງເລກ ໙- ພາກໃຕ້ລາວ ຫວັງຕັດແຖບທາງ
ຍຸດທະສາດຂອງ ໓ ປະເທດໃຫ້ຂາດໄປ ແລະມ້າງທ່າຕິດ
ລ່ຽນຂອງເຂດປົດປ່ອຍລາວ. ແຕ່ດ້ວຍການປະສານ ສົມ
ທົບຢ່າງແໜ້ນແຟ້ນ ແລະ ການຊ່ວຍເຫຼືອຢ່າງໃຫຍ່ຫຼວງ
ທີ່ສຸດ ຂອງກອງທັບ ແລະປະຊາຊົນຫວຽດນາມອ້າຍນ້ອງ,
ກອງທັບ ແລະປະຊາຊົນເຮົາຢູ່ພາກໃຕ້ໄດ້ອົງອາດກ້າຫານ
ບຸກຕີສັດຕູ ຕະຫຼອດໃນ ໔໓ ມື້ ແລະ ທັບມ້າງການເຄື່ອນ
ທັບຍຸດທະສາດ " ລາມເຊີນ ໗໑໙ " ຂອງອາເມລິກາ-
ຫຸ່ນໄດ້ຢ່າງຮາບຄາບ. ໂດຍເສີມຂະຫຍາຍໄຊຊະນະອັນ
ໃຫຍ່ຫຼວງດັ່ງກ່າວນັ້ນ, ພວກເຮົາໄດ້ບຸກໂຈມຕີສັດຕູຢ່າງ
ຕໍ່ເນື່ອງກັນໃນທຸກສະໜາມຮົບ, ຍາດເອົາໄຊຊະນະ ໄດ້

ຫຼາຍປະການ , ພິເສດແມ່ນໄດ້ປົດປ່ອຍພູພຽງບໍລະເວນທັງໝົດ ອັນເປັນການສ້າງທາງຍຸດທະສາດໃຫມ່ ທີ່ເປັນຜົນດີທີ່ສຸດໃຫ້ແກ່ພວກເຮົາ. ບັນດາຜົນສູ້ຣົບອັນສະຫງ່າງາມທີ່ກອງທັບ ແລະ ປະຊາຊົນເຮົາຍາດເອົາມາໄດ້ ຢ່າງຕິດຕໍ່ບໍ່ເນື່ອງກັນ ພ້ອມກັບໄຊຊະນະອັນໃຫຍ່ຫຼວງ ຂອງກອງທັບ ແລະ ປະຊາຊົນຫວຽດນາມ, ກຳປູເຈັຽອ້າຍນ້ອງໃນລະດູບານໃຫມ່ ປີ ໑໙໗໑ ໄດ້ຟາດບາດຄອນອັນເປັນຕາຍໃສ່ " ທິດສະດີນິກະເຊິນ ", ເຮັດໃຫ້ຈິດໃຈຂອງກອງທະຫານຫຸ່ນ, ອຳນາດການປົກຄອງຫຸ່ນ ວຽງຈັນ, ໄຊງ່ອນ ແລະ ພະນົມເປັນ ອ່ອນເພຽຊຸດໂຊມລົງ ຢ່າງໜັກ ແລະ ເຮັດໃຫ້ເຈດຈຳນົງຮຸກຮານຂອງຈັກກະພັດອາເມລິກາ ສັ່ນສະເທືອນຈົນເຖິງກົກເຖິງຮາກ.

ໂດຍປະສານສົມທົບກັບການເຄື່ອນໄຫວ ທາງການທະຫານ, ພວກເຮົາໄດ້ສືບຕໍ່ຂະຫຍາຍທ່າບຸກ ທາງການເມືອງ. ບົນພື້ນຖານວິທີການແກ້ໄຂ ໕ ຂໍ້, ໃນວັນທີ ໒໗ ເມສາ ແລະ ວັນທີ ໒໒ ມິຖຸນາ ໑໙໗໑, ແນວລາວ ຮັກຊາດໄດ້ວາງຂໍ້ສະເໜີລະອຽດໃຫມ່ອອກ, ທວງໃຫ້ຈັກກະພັດອາເມລິກາ ຢຸດເຊົາການຖິ້ມລະເບີດ ໃສ່ເຂດປົດປ່ອຍໂດຍທັນທີ, ທັງສອງຝ່າຍລາວ ຢຸດຍິງກັນທີ່ໃນທົ່ວພື້ນແຜ່ນ

ດິນລາວ ແລະເປີດການເຈລະຈາ ແນໃສ່ຟື້ນຟູສັນຕິພາບ, ປະຕິບັດຄວາມຖືກຕ້ອງປອງດອງຊາດຢູ່ລາວ. ຈັກກະພັດອາເມລິກາ ແລະ ລູກມືຍັງດື້ດ້ານສືບຕໍ່ຫນ່ວງຫນ່ຽວບໍ່ຍອມເຈລະຈາ, ແຕ່ ຍ້ອນຖືກປະລາໄຊຢ່າງຕໍ່ເນື່ອງກັນໃນທຸກສະຫນາມຮົບ ແລະ ຖືກກົດດັນຈາກທາງສຽງ ທີ່ກ້າວຫນ້າໃນໂລກ ນັບທັງປະຊາຊົນອາເມລິກາຜູ້ກ້າວຫນ້າ, ໃນທີ່ສຸດພວກເຂົາ ກໍ່ຈຳຕ້ອງໄດ້ຍອມເຈລະຈາ ກັບພວກເຮົາ ໃນເດືອນ ຕຸລາ ໑໙໗໒ ຕາມເງື່ອນໄຂ ທີ່ພວກເຮົາໄດ້ວາງອອກ.

ການຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາ ຂອງປະຊາຊົນເຮົາມາເຖິງເວລານີ້ໄດ້ຮັບໄຊຊະນະອັນ ໃຫຍ່ຫຼວງ, ຮອບດ້ານ ແລະ ຫນັກແຫນ້ນ. ບັນດາກຳລັງປະຕິວັດທີ່ໄດ້ຜ່ານການຫຼໍ່ຫຼອມ ໃນແປວໄຟຕໍ່ສູ້ອັນດຸເດືອດ ໂດຍສະເພາະໃນໄລຍະຕໍ່ສູ້ຕ້ານຍຸດທະສາດຂອງ " ທິດສະດີ ນິກເຊີນ " ນັ້ນ ໄດ້ຂະຫຍາຍຕົວເຕີບໃຫຍ່ຂື້ນຢ່າງໄວ. ເຂດປົດປ່ອຍໄດ້ເປີດກວ້າງອອກ ກວມເນື້ອທີ່ ໔/໕ ຂອງດິນແດນ, ປະກອບດ້ວຍບໍລິເວນຍຸດທະສາດ ທີ່ສຳຄັນກວ່າຫມູ່ ແລະ ມີພົນລະເມືອງກວ່າເຄິ່ງຫນຶ່ງຂອງທົ່ວປະເທດ ແລະ ໄດ້ຮັບການກໍ່ສ້າງ ເປັນຂະຫນາດລັດຫນຶ່ງ. ການກໍ່ສ້າງ

ທາງດ້ານເສດຖະກິດ, ວັດທະນະທຳ ແລະ ສັງຄົມໃນເຂດປົດປ່ອຍໄດ້ບັນລຸຜົນສຳເລັດຢ່າງດີເດັ່ນ ຫຼາຍປະການໃນນັ້ນ ໄດ້ມີຫນໍ່ແຫນງຂອງສັງຄົມນິຍົມປະກົດຕົວຂຶ້ນ. ໃນດ້ານກະສິກຳ, ໄດ້ມີຂະບວນການສາມັກຄີ ເພີ່ມພູນຜະລິດຜົນຢ່າງກວ້າງຂວາງ, ເນື້ອທີ່ປູກຝັງ ແລະ ປະລິມານການຜະລິດ ໄດ້ເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ, ເຕັກນິກໃຫມ່ກໍ່ໄດ້ນຳໃຊ້ເຂົ້າໃນການຜະລິດກະສິກຳ; ບັນດາວິຊາຊ່າງ ຫັດຖະກຳ ອັນເປັນມູນເຊື້ອຂອງປະຊາຊົນເຮົາໄດ້ຮັບການຟື້ນຟູ, ອຸດສາຫະກຳນ້ອຍ ໄດ້ຮັບການສ້າງຂຶ້ນ ໃນຫຼາຍແຫ່ງ ແລະ ໄດ້ຜະລິດເຄື່ອງມືກະສິກຳ ແລະ ສິນຄ້າໃຊ້ສອຍຈຳນວນຫນຶ່ງ ເພື່ອຮັບໃຊ້ຊີວິດການເປັນຢູ່ ຂອງປະຊາຊົນ ; ການຄົມມະນາຄົມຂົນສົ່ງ ກໍ່ໄດ້ຂະຫຍາຍຕົວ, ເສັ້ນທາງໃຫມ່ໄດ້ສ້າງຂຶ້ນເພີ່ມອີກນັບເປັນພັນ ຫຼັກກິໂລແມັດ; ລະບົບການຄ້າຂອງລັດ ແລະສະຫະກອນຊື້ຂາຍລວມຫມູ່ຂອງປະຊາຊົນກໍ່ໄດ້ປະກົດຕົວຂຶ້ນ; ການເງິນ ແລະ ເງິນຕາທີ່ເປັນເອກະລາດ ຂອງເຂດປົດປ່ອຍໄດ້ມີຄວາມຫມັ້ນທ່ຽງ; ພິເສດ ແມ່ນຂະແຫນງການສຶກສາ ແລະ ສາທາລະນະສຸກໄດ້ມີຄວາມກ້າວຫນ້າຢ່າງກະໂດດຂຶ້ນ; ຂະບວນປະຊາສຶກສາ ແລະ ບຳລຸງວັດທະນະທຳໄດ້ຂະຫຍາຍຕົວຢ່າງກວ້າງ

ຂວາງ, ຂະບວນອະນາໄມ, ກັນພະຍາດ ແລະການສ້າງແບບແຜນດຳລົງຊີວິດ ແບບໃຫມ່ທີ່ສີວິໄລ ໄດ້ແຜ່ຂະຫຍາຍລົງໄປຮອດຫມູ່ບ້ານ, ຕາແສງ, ນັບທັງ ບໍລິເວນຊົນ ຊາດສ່ວນຫນ້ອຍຕາມແຖບພູດອຍດ້ວຍ.

ໃນສະພາບການດັ່ງກ່າວນັ້ນ, ສູນກາງພັກເຮົາໄດ້ຮຽກໂຮມກອງປະຊຸມໃຫຍ່ ທົ່ວປະເທດ ຄັ້ງທີ່ ໔ ຂອງພັກໃນຕົ້ນປີ ໑໙໗໔. ກອງປະຊຸມໃຫຍ່ ໄດ້ສັງເກດ ຕີລາຄາສະພາບການຂອງໂລກ ແລະ ພາຍໃນປະເທດ ຢ່າງຖືກຕ້ອງ, ໄດ້ສະຫຼຸບສັງລວມບັນດາບົດຮຽນໃຫຍ່ແຫ່ງການຕໍ່ສູ້ມີໄຊ ຂອງການປະຕິວັດລາວເຮົາ, ໄດ້ໄຈ້ແຍກ ແລະຕີລາຄາຢ່າງເປັນເອກະພາບ ກ່ຽວກັບຈຸດພິເສດພື້ນຖານ ແລະ ລັກສະນະຂອງສັງຄົມລາວ ແລ້ວໄດ້ວາງແນວທາງຕໍ່ສູ້, ຈຸດຫມາຍການເມືອງ, ທິດນຳ, ຮູບການຕໍ່ສູ້ ເພື່ອສຳເລັດໄລຍະປະຕິວັດຊາດ-ປະຊາທິປະໄຕປະຊາຊົນ ໃນທົ່ວປະເທດ ແລະກ້າວຂຶ້ນສັງຄົມນິຍົມໂດຍກົງ ໂດຍບໍ່ຜ່ານໄລຍະຂະຫຍາຍຕົວຂອງທຶນນິຍົມ.

ກອງປະຊຸມໃຫຍ່ທົ່ວປະເທດ ຄັ້ງທີ່ ໔ ຂອງພັກເປັນເຫດການອັນຫນຶ່ງ ທີ່ສຳຄັນທີ່ສຸດ ໃນຊີວິດການເມືອງຂອງປະຊາຊົນບັນດາຊົນຊາດເຮົາ ແລະ ກໍ່ເປັນຂີດຫມາຍ

ແຫ່ງການຂະຫຍາຍຕົວເຕີບໃຫຍ່ ທັງທາງດ້ານການເມືອງ ແລະ ການຈັດຕັ້ງຂອງພັກເຮົາ ເຊິ່ງເປັນຜູ້ຈັດຕັ້ງ ແລະ ນຳພາທຸກໄຊຊະນະ ຂອງການປະຕິວັດລາວເຮົາ. ບັນດາມະຕິອັນເປັນປະຫວັດການຂອງກອງປະຊຸມໃຫຍ່ ຄັ້ງນີ້ ໄດ້ເປັນດວງປະທີບເຍືອງທາງໃຫ້ທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນເຮົາກ້າວຂຶ້ນຢ່າງໜັກແໜ້ນໃນການຕີເອົາຊະນະສັດຕູຂອງຊາດ ແລະ ພາການປະຕິວັດເຮົາ ກ້າວຂຶ້ນສູ່ໄລຍະໃໝ່.

ໃນໄລຍະດຽວກັນນີ້, ໄປພ້ອມ ໆ ກັບ ໄຊຊະນະ ຂອງພວກເຮົາ ກໍ່ຄືຂອງປະຊາຊົນກຳປູເຈຍນັ້ນ, ກອງທັບ ແລະ ປະຊາຊົນຫວຽດນາມອ້າຍນ້ອງໄດ້ເປີດການບຸກໂຈມຕີຍຸດທະສາດໃນທົ່ວທຸກສະໜາມຮົບ ພາກໃຕ້ຫວຽດນາມ, ທັບມ້າງການ ຫຼອນໂຈມຕີຍຸດທະສາດ ດ້ວຍເຮືອບິນ ເບ-໕໒ ຂອງຈັກກະພັດອາເມລິກາເຂົ້ານະຄອນ ຫຼວງຮ່າໂນ້ຍ -ເມືອງທ່າຮາຍຟ່ອງ ໃຫ້ມຸ່ນທະລາຍໄປ, ສ້າງ " ດຽນບຽນຟູ ເທິງອາກາດ " ຂຶ້ນຢ່າງສະຫງ່າອົງອາດ, ເຮັດໃຫ້ການດີ້ນຮົນຄັ້ງສຸດທ້າຍ ຂອງ " ທິດສະດີ ນິກເຊິນ " ປະລາໄຊຢ່າງຮາບຄາບ. ຕໍ່ໜ້າໄພອັນຕະລາຍ ແຫ່ງການປະລາໄຊຢ່າງສິ້ນເຊີງ ໃນສົງຄາມຮຸກຮານ ມີ ປະ

ເທດໃນອິນດູຈີນ, ເພື່ອປະຕິບັດອັນທີ່ເອີ້ນວ່າ " ຖອນຕົວອອກຈາກສົງຄາມຢ່າງມີກຽດ " ນັ້ນ, ຈັກກະພັດອາເມລິກາຈຳຕ້ອງໄດ້ຍອມເຊັນສັນຍາປາຣີ ກ່ຽວກັບຫວຽດນາມ, ຍອມຖອນກອງທະຫານອາເມລິກາ ແລະ ກອງທະຫານບໍລິວານທັງຫມົດອອກຈາກພາກໃຕ້ຫວຽດນາມ. ສ່ວນຢູ່ລາວເຮົາ, ຍອມຖືກບຸກໂຈມຕີຢ່າງແຂງແຮງທາງການທະຫານ, ການເມືອງ ແລະ ການຕ່າງປະເທດ, ຈັກກະພັດອາເມລິກາ ແລະ ລູກມືບໍ່ມີວິທີການໃດອື່ນ, ຈຳຕ້ອງຍອມເຊັນສັນຍາວຽງຈັນ ກ່ຽວກັບການຟື້ນຟູສັນຕິພາບ ແລະ ປະຕິບັດຄວາມຖືກຕ້ອງປອງດອງຊາດຢູ່ລາວ ໃນວັນທີ່ ໒໑ ກຸມພາ ໑໙໗໓. ສັນຍາດັ່ງກ່າວນັ້ນ ເປັນຂີດຫມາຍແຫ່ງການ ປະລາໄຊຢ່າງສິ້ນເຊີງ ໃນສົງຄາມຮຸກຮານລ່າເມືອງຂຶ້ນແບບໃຫມ່ຂອງຈັກກະພັດອາເມລິກາ ຕໍ່ປະເທດເຮົາ. ລັດຖະບານປະສົມຊົ່ວຄາວ ແຫ່ງຊາດ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດ ໄດ້ຮັບການສ້າງຕັ້ງຂຶ້ນ ຕາມອັດຕາສ່ວນເທົ່າກັນລະຫວ່າງສອງຝ່າຍ; ນະຄອນ ຫຼວງວຽງຈັນ ແລະ ພະລາຊະນະຄອນ ຫຼວງພະບາງ ໄດ້ກາຍເປັນເຂດເປັນກາງ ຕາມລະບຽບການພິເສດ. ໄຊຊະນະນີ້ເປັນໄຊຊະນະໃຫຍ່ ຫຼວງທີ່ສຸດ, ມັນມີຄວາມຫມາຍປະຫວັດສາດ

ແລະ ເປັນການສັງລວມໝາກຜົນທີ່ກອງທັບ ແລະ ປະຊາຊົນເຮົາຍາດເອົາມາໄດ້ ໃນ ໑໘ ປີ ແຫ່ງການຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາ ແລະ ລູກມື. ໄຊຊະນະນັ້ນໄດ້ສ້າງເງື່ອນໄຂໃໝ່ທີ່ເປັນພື້ນຖານທີ່ສຸດ ເພື່ອພາການປະຕິວັດເຮົາກ້າວຂຶ້ນຍາດເອົາໄຊຊະນະອັນສົມບູນ, ເຖິງຖອງ ແລະ ບໍລິບູນ.

ໄລຍະແຕ່ປີ ໑໙໗໓ ເຖິງປີ ໑໙໗໔ ເປັນໄລຍະຕໍ່ສູ້ ເພື່ອສຳເລັດການປະຕິວັດຊາດ-ປະຊາທິປະໄຕໃນທົ່ວປະເທດ ດ້ວຍກຳລັງແຮງສັງລວມຂອງທົ່ວທັງຊາດ ທີ່ພວມຢູ່ໃນທ່າມີໄຊ ແລະດຳເນີນໄປໃນເງື່ອນໄຂທີ່ສັນຕິພາບໄດ້ຮັບການຟື້ນຟູ ແລະ ດ້ວຍຈຸດພິເສດ ທີ່ພົ້ນຂຶ້ນ ຄື ປະເທດຊາດຂອງພວກເຮົາຖືກແບ່ງຊົ່ວຄາວອອກເປັນ ໓ ເຂດ : ເຂດປົດປ່ອຍ, ເຂດກວດກາຂອງຝ່າຍກົງກັນຂ້າມ ແລະ ເຂດເປັນກາງ ແລະ ມີ ໓ ອຳນາດການປົກຄອງ : ອຳນາດການປົກຄອງປະຕິວັດ, ອຳນາດການປົກຄອງ ຝ່າຍວຽງຈັນ ແລະ ອຳນາດການປົກຄອງປະສົມສູນກາງ.

ພາຍ ຫຼັງທີ່ສັນຍາວຽງຈັນ ໄດ້ຮັບການເຊັນກັນ , ດ້ວຍຄຳຂວັນ " ປົກປັກຮັກສາສັນຕິພາບ, ປະຕິບັດຄວາມຖືກຕ້ອງປອງດອງຊາດ " , ພັກເຮົາໄດ້ຫັນແບບວິທີຕໍ່ສູ້,

ເອົາການຕໍ່ສູ້ທາງການເມືອງ ຂອງມະຫາຊົນຊັ້ນຄົນຕ່າງໆ ສົມທົບກັບການຕໍ່ສູ້ທາງດ້ານກົດໝາຍ ໃນສະຖາບັນປະສົມ ເປັນສຳຄັນ ແນໃສ່ບັງຄັບໃຫ້ຝ່າຍກົງກັນຂ້າມຕ້ອງປະຕິບັດ ຂໍ້ຄວາມຕ່າງໆ ຂອງສັນຍາຢ່າງເຂັ້ມງວດ. ພັກເຮົາ ໄດ້ ເພີ່ມທະວີການຊີ້ນຳ, ລະດົມພະນັກງານ ແລະ ກຳລັງ ພາກສ່ວນໜຶ່ງທີ່ສຳຄັນເຂົ້າໃນການຕໍ່ສູ້ນີ້ ແນໃສ່ເສີມ ຂະຫຽາຍລັກສະນະເປັນເຄື່ອງມືຂອງບັນດາສະຖາບັນປະສົມ, ນຳໃຊ້ສິດອຳນາດຂອງການປະຕິວັດໃນສະຖາບັນ ເຫຼົ່ານັ້ນ ເທົ່າທີ່ຈະໃຊ້ໄດ້, ໝູນໃຊ້ຮູບການຕໍ່ສູ້ ຫຼາຍຮູບ ຫຼາຍສີ, ຫຼາຍ ວິທີ ທີ່ອຸດົມຮັ່ງມີຢ່າງມີໄຫວພິບ, ຈຳໃຫ້ຝ່າຍກົງກັນຂ້າມຕ້ອງຮັບເອົາຂໍ້ເລັ່ງທວງຂອງພວກເຮົາ, ສ້າງອາວຸດ ທາງດ້ານກົດໝາຍ ໃຫ້ມະຫາຊົນຕໍ່ສູ້ເຊັ່ນ ໂຄງການ ໑໘ ຂໍ້ ຂອງລັດຖະບານປະສົມ, ລະບຽບການເຮັດໃຫ້ ໔ ນະຄອນເປັນກາງ ...

ເຖິງແມ່ນວ່າ ຈະຕ້ອງໃຊ້ວິທີປະຕິວັດຄືແນວໃດ , ແຕ່ໂດຍເຫັນແຈ້ງທາດແທ້ປະຕິການ ແລະ ດື້ດ້ານ ທີ່ປ່ຽນແປງບໍ່ໄດ້ ຂອງສັດຕູ ແລະ ຈາກບົດຮຽນ ແຫ່ງການເຂົ້າລວມລາວ ໔ ຄັ້ງກ່ອນ, ພັກເຮົາໄດ້ຢືນຢັນສະເໝີ ວ່າ ເສັ້ນທາງຍາດເອົາໄຊຊະນະສຸດທ້າຍກໍ່ຍັງແມ່ນເສັ້ນ ທາງ

ແຫ່ງຄວາມຮຸນແຮງປະຕິວັດ ຂອງມະຫາຊົນ, ຍຸດທະສາດປະຕິວັດ ກໍ່ຍັງແມ່ນຍຸດທະສາດບຸກ. ດ້ວຍເຫດນັ້ນ, ໄປຄຽງຄູ່ກັບການຕໍ່ສູ້ທາງດ້ານການເມືອງ, ກົດໝາຍ ແລະການຕາງປະເທດ, ພັກເຮົາໄດ້ຖືການປັບປຸງ ແລະ ຂະຫຍາຍກຳລັງປະຕິວັດໃນທຸກດ້ານເປັນບັນຫາພື້ນຖານ ກ່ວາໝູ່ ແລະໄດ້ອອກແຮງກໍ່ສ້າງປັບປຸງເຂດ ປົດປ່ອຍ ໃນທຸກດ້ານ, ຕັ້ງໜ້າກໍ່ສ້າງກຳລັງປະກອບອາວຸດ ແລະ ກຳລັງການເມືອງຂອງມະຫາຊົນ, ດຳເນີນວຽກງານຂົນຂວາຍແລະ ຈັດຕັ້ງປະຊາຊົນຊັ້ນຄົນຕ່າງ ໆ ໃນຕົວເມືອງ, ຂົນຂວາຍທະຫານ, ຕຳຫຼວດ ຂອງຝ່າຍກົງກັນຂ້າມ, ນຳພາມະຫາຊົນຕໍ່ສູ້ ແຕ່ຕ່ຳໄປຫາສູງ, ສ້າງທ່າ ແລະ ກຳລັງໃໝ່ຂອງການປະຕິວັດຢູ່ໃນກະໂຕເຮືອນຮັງຂອງສັດຕູ.

ພາຍໃຕ້ຄຳຂວັນຕໍ່ສູ້ທີ່ສົມເຫດສົມຜົນ ຂອງພັກ, ປະຊາຊົນຊັ້ນຄົນຕ່າງໆ ຢູ່ໃນເຂດຂອງຝ່າຍກົງກັນຂ້າມ ແລະເຂດເປັນກາງເປັນຕົ້ນກຳມະກອນ, ຊາວໜຸ່ມ, ນັກຮຽນ, ນັກສຶກສາໃນບັນດາຕົວເມືອງທີ່ມີຄວາມຄຽດແຄ້ນຢ່າງເລິກເຊິ່ງຕໍ່ພວກອາດຍາສິດຊຸ່ມເສິກ ປະຕິການຂາຍຊາດ ແລະສໍ້ລາດບັງຫຼວງ ມາແຕ່ເຫິງນານແລ້ວນັ້ນ, ມາບັດນີ້ ກໍ່ໄດ້ມີບັນດາກຳລັງຮັກຊາດ, ທັງມີກົດໝາຍເປັນບ່ອນອີງ ອັນ

ໜັກແໜ້ນ, ເຂົາເຈົ້າໄດ້ລຸກຂຶ້ນ ແລະ ເຂົ້າຮ່ວມການຕໍ່ສູ້
ນັບມື້ນັບຫຼາຍ, ຟົດເດືອດ ແລະ ກວ້າງຂວາງ ທົ່ວເຖິງ
ດ້ວຍຂໍ້ເລັ່ງທວງ ທີ່ສູງຂຶ້ນເລື້ອຍ ໆ, ຈາກການທວງເອົາ
ສິດປະຊາທິປະໄຕ, ທວງໃຫ້ປົວແປງຊີວິດ ການເປັນຢູ່,
ຕ້ານການ ສໍ້ລາດບັງຫຼວງ ໄປເຖິງການທວງໃຫ້ຍຸບ ອົງ
ການ " ຊ່ວຍ ເຫຼືອ " ຕ່າງໆຂອງອາເມລິກາ, ຂັບໄລ່
ໄຖຫົວພວກທີ່ເປີກສາອາເມລິກາ, ປົດຕຳແໜ່ງພວກປະຕິ
ການກຳອຳນາດ ... ຂະບວນການຕໍ່ສູ້ຂອງມະຫາຊົນໄດ້
ແຜ່ລາມກວ້າງອອກຢ່າງໄວວາ ດ້ວຍທ່ວງທ່າອັນແຂງແຮງ
ຟົດຟື້ນ, ດູດດິງເຕົ້າໂຮມກຳລັງໄດ້ຢ່າງ ຫຼວງຫຼາຍ ຕະ
ຫຼອດ ເຖິງຊັ້ນຄົນຕ່າງໆ ໃນໝູ່ຂ້າລາຊະການ, ຊາວຄ້າ
ຂາຍນ້ອຍ, ເຈົ້າຊັບນ້ອຍ, ພະສົງສາມະເນນ, ຄອບຄົວ
ຂອງທະຫານ ແລະ ກະທັ້ງເຖິງນາຍ ແລະ ພົນທະຫານ,
ຕຳຫຼວດ ພາກສ່ວນໜຶ່ງຂອງຝ່າຍກົງກັນຂ້າມດ້ວຍ. ສະ
ພາບການດັ່ງກ່າວນັ້ນ ໄດ້ສ້າງໃຫ້ມີຄວາມອາດສາມາດຂະ
ຫຍາຍເປັນກະແສສູງລຸກຮຶ້ນ ຂອງມະຫາຊົນໃນການຍາດ
ເອົາສິດເປັນເຈົ້າເປັນແຕລະພາກສ່ວນ. ການລຸກຮຶ້ນຕໍ່ສູ້
ຢ່າງເດັດດ່ຽວກ້າຫານ ຂອງກຳມະກອນໄຟຟ້າວຽງຈັນ ທີ່
ຂັບໄລ່ພວກປະຕິການ, ຍາດເອົາສິດເປັນເຈົ້າມານີ້ ຂອງ

ຕົນ; ການລຸກຮືຂຶ້ນຕໍ່ສູ້ຢ່າງຫມັ້ນຫນຽວ ທົນທານຕະຫຼອດ ໔໔ ມື້ ໔໔ ຄືນ ຂອງມະຫາຊົນຊາວນາ ແລະ ຊັ້ນຄົນຕ່າງ ໆ ຢູ່ເມືອງຫນອງບົກ (ແຂວງຄຳມ່ວນ) ທີ່ສາມາດຍາດເອົາສິດເປັນເຈົ້າ ໃນຂອບເຂດທົ່ວເມືອງ ຢ່າງມີໄຊ; ຂະບວນການຕໍ່ສູ້ຂອງຊາວຫນຸ່ມ, ນັກຮຽນ,ນັກສຶກສາໃນຕົວເມືອງຕ່າງໆ ເຊັ່ນ : ວຽງຈັນ, ປາກເຊ,ສະຫວັນນະເຂດ ... ທີ່ທວງໃຫ້ຂັບໄລໄຖຫົວຈັກກະພັດອາເມລິກາອອກຈາກລາວ, ປົດຕຳແຫນ່ງພວກປະຕິການຂາຍຊາດ, ທວງໃຫ້ລົບລ້າງການສຶກສາແບບຜູກຫາດລ່າເມືອງຂຶ້ນແບບໃຫມ່ ..., ການລຸກຮືຂຶ້ນແຍກຕົວຂອງກອງ ພັນ ໑໐໔ ຂອງຝ່າຍວຽງຈັນ ໂດຍການຊ່ວຍຫນູນຢ່າງ ແຂງແຮງຈາກມະຫາຊົນຊັ້ນຄົນຕ່າງ ໆ ທີ່ສາມາດເປັນເຈົ້າໃນເມືອງຫ້ວຍຊາຍ ... ທັງຫມົດເຫຼົ່ານັ້ນ ເປັນການຢັ້ງຢືນລັກສະນະຕົວຈິງແຫ່ງຄວາມອາດສາມາດຍາດເອົາ ສິດເປັນເຈົ້າ ເປັນແຕ່ລະພາກສ່ວນມາມີປະຊາຊົນ.

ໃນຂະນະທີ່ສະພາວະການປະຕິວັດ ໂດຍກົງ ໄດ້ປະກົດຕົວຂຶ້ນຢູ່ໃນປະເທດເຮົານັ້ນ,ປະຊາຊົນ ໔ ປະເທດອ້າຍນ້ອງໄດ້ຮັບໄຊຊະນະອັນໃຫຍ່ຫຼວງ ເປັນຕົ້ນແມ່ນການບຸກໂຈມຕີຍຸດທະສາດທີ່ມີໄຊສົມບູນຂອງກອງທັບ ແລະ ປະ

ຊາວຈີນຫວຽດນາມອ້າຍນ້ອງ ໃນເດືອນ ເມສາ ໑໙໗໕ ຍິ່ງສ້າງເງື່ອນໄຂອຳນວຍຄວາມສະດວກທີ່ສຸດ ທີ່ມີລັກສະນະເປັນປັດໃຈໂດຍກົງໃຫ້ແກ່ການປະຕິວັດເຮົາ. ໂດຍກຳເອົາກາລະໂອກາດປະຫວັດສາດ " ພັນປີມີເທື່ອໜຶ່ງ " , ພັກເຮົາໄດ້ຕົກລົງລຸກຮືຂຶ້ນພ້ອມກັນພາບດຽວແລະບຸກໂຈມຕີຢ່າງຮອບດ້ານ, ຍາດເອົາອຳນາດການປົກຄອງ ທັງໝົດມາມືປະຊາຊົນພາຍໃນເວລາອັນສັ້ນ. ດ້ວຍທ່າສະໜາມທັງ ໓ ເຂດອັນເປັນຜົນດີທີ່ສຸດຂອງພວກເຮົາ, ດ້ວຍ ໓ ບາດຄ້ອນຍຸດທະສາດອັນຕັດສິນ : ການລຸກຮືຂຶ້ນຂອງ ມະຫາຊົນ, ການໜູນໜີບຂອງກຳລັງປະກອບອາວຸດປະຕິວັດ ແລະ ການລຸກຂຶ້ນແຍກຕົວອອກຂອງທະຫານຂອງສັດຕູ ສົມທົບກັບປາຍ ແຫຼມຕໍ່ສູ້ ທາງດ້ານກົດໝາຍ, ພັກເຮົາໄດ້ເສີມຂະຫຍາຍກຳລັງແຮງຂອງໝົດທັງຊາດຢ່າງສູດຂີດ,ຕໍ່ສູ້ຢ່າງເດັດດຽວ, ບຸກໂຈມຕີສັດຕູ ຢ່າງເນື່ອງນິດລຽນຕິດຈາກຫຼາຍທິດ, ດ້ວຍຫຼາຍປະເພດກຳລັງ, ດ້ວຍຫຼາຍຮູບ ຫຼາຍສີທີ່ອຸດົມຮັ່ງມີ ແລະ ມີໄຫວພິບ, ສ້າງທ່າຢຽບສັດຕູລົງຢ່າງຂາດຂັ້ນ ເພື່ອກ້າວໄປເຖິງການລົບລ້າງ ກົງຈັກປົກຄອງປະຕິການ ທັງໝົດ ນັບທັງເຄື່ອງມືປາບປາມຂອງພວກເຂົາ, ເຮັດໃຫ້ຄວາມຕັດສິນໃຈຍຸດທະສາດຂອງ

ພັກປະກົດເປັນຈິງ.

ຕອບສະໜອງຄຳຮຽກຮ້ອງຂອງພັກ, ດ້ວຍທ່າສະໜາມທີ່ໄດ້ພົນຂະຫຍາຍຢ່າງໜັກແໜ້ນ ໃນ ໓ ເຂດ ແລ້ວ, ວັນທີ ໖ ພຶດສະພາ ໑໙໗໕, ກຳລັງປະກອບອາວຸດເຮົາ ໂດຍການປະສານສົມທົບຊ່ວຍຊູ ຢ່າງມີຜົນສັກສິດ ຈາກຂະບວນການມະຫາຊົນ ໄດ້ເຄື່ອນທັບຍຸດທະສາດເຂົ້າໄປຍຶດເອົາບັນດາທີ່ຕັ້ງສຳຄັນໃນເຂດຂອງຝ່າຍກົງກັນຂ້າມຢ່າງໄວວາ, ກ່ອນອື່ນໝົດແມ່ນຕົວເມືອງໃຫຍ່ຕ່າງໆເຊັ່ນ ວຽງຈັນ, ປາກເຊ, ສະຫວັນນະເຂດ ທີ່ເປັນໃຈກາງບັງຄັບບັນຊາຂອງສັດຕູ, ສ້າງເປັນກຳລັງໜຶບທາງການ ທະຫານຢ່າງແຂງແຮງ ໃນເຂດຂອງຝ່າຍກົງກັນຂ້າມເອງ. ໃນເວລາດຽວກັນນັ້ນ ພາຍໃຕ້ການຊີ້ນຳຂອງບັນດາຄະນະກຳມະການລຸກຮືຂຶ້ນ, ປະຊາຊົນຊັ້ນຄົນຕ່າງ ໆ ໃນເຂດຂອງຝ່າຍກົງກັນຂ້າມທີ່ມີບ່ອນອີງໃຫມ່ອັນໜັກແໜ້ນໄດ້ລຸກຮືຂຶ້ນຢ່າງຟົດສະນັ່ນຫວັ່ນໄຫວ, ດຳເນີນການແຫ່ຂະບວນສຳແດງກຳລັງ, ໂຮມຊຸມນຸມກ່າວປະນາມໂທດກຳຂອງຈັກກະພັດອາເມລິກາ, ເພີຍແປໜ້າຕາຂອງພວກປະຕິການຂາຍຊາດ, ເຮັດໃຫ້ພວກເຂົາຕົກເຂົ້າໃນສະພາບກະວົນກະວາຍ ແລະ ອົນລະຫົ່ນວຸ່ນວາຍຢ່າງໃຫຍ່. ພ້ອມກັນນັ້ນ

ຫຼາຍ ກົນກອງຂອງທະຫານສັດຕູ ທີ່ເຫັນໄດ້ຄວາມເປັນທຳຂອງການປະຕິວັດກໍ່ໄດ້ລຸກຮື້ຂຶ້ນ ແຍກຕົວອອກຈາກຖັນແຖວຂອງພວກເຂົາແລະຊ່ວຍຊູຂະບວນການຕໍ່ສູ້ຂອງມະຫາຊົນ.

ຕໍ່ໜ້າກຳລັງແຮງແຫ່ງການລຸກຮື້ຂຶ້ນ ແລະບຸກໂຈມຕີປານພະຍຸລົມແຮງຂອງປະຊາຊົນ ແລະ ກອງທັບເຮົາດັ່ງກ່າວນັ້ນ, ພວກພະນັກງານ ທະຫານ ແລະ ພົນລະເຮືອນອາເມລິກາ, ພວກປະຕິການລາວຫົວໂປ່, ພວກບັງລັບບັນຊາຜູ້ໂຫດຮ້າຍໄດ້ຟ້າວຟັ່ງໜອບສັງຂານໂຕນໜີ, ສ່ວນກຳລັງການທະຫານ ແລະ ຕຳຫຼວດຂອງສັດຕູທີ່ຕົກຢູ່ ໃນສະພາບປານງູຫົວກຸດໄດ້ເປັນອຳມະພາດເປື່ອຍເຍື່ອຍດ້ານຈິດໃຈ ແລະ ການຈັດຕັ້ງ, ສ່ວນຫຼວງຫຼາຍບໍ່ກ້າຕອບຕ້ານຄືນ. ໃນດ້ານອື່ນ, ໂດຍປະສານສົມທົບແໜ້ນກັບບັນດາບາດຄ້ອນດັ່ງກ່າວເທິງນັ້ນ, ພວກເຮົາໄດ້ໃຊ້ການຕໍ່ສູ້ທາງດ້ານກົດໝາຍຢ່າງເຕັມຂິດ ແລະ ທັນການ ເຊັ່ນ ການວາງຂໍ້ກຳນົດ ກ່ຽວກັບການຈັດຕັ້ງ ແລະ ການແບ່ງງານໃໝ່ພາຍໃນກະຊວງປ້ອງກັນປະເທດ, ອອກຄຳສັ່ງ ຫ້າມເຄື່ອນຍ້າຍກຳລັງ, ຫ້າມບໍ່ໃຫ້ຕ້ານປະຊາຊົນ, ປົດຕຳແໜ່ງພວກບັງລັບບັນຊາຜູ້ໂຫດຮ້າຍ, ອອກຄຳສັ່ງໃຫ້ເກັບອາວຸດເຂົ້າສາງ, ເຕົ້າໂຮມກັນໄປສຳມະນາ ແລະອື່ນໆ...

ທັງໝົດເຫຼົ່ານັ້ນ ໄດ້ບັງຄັບກອງທະຫານ ແລະ ຕຳຫຼວດຂອງສັດຕູເຊິ່ງທາງດ້ານຈັດຕັ້ງຍັງຄົບຖ້ວນຢູ່ນັ້ນ ຕ້ອງມອບອາວຸດຍຸດໂທປະກອນ ແລະ ພາຫະນະສົງຄາມທັງໝົດໃຫ້ບັນດາກຳລັງຮັກຊາດ ແລະ ປະຊາຊົນ; ກົງຈັກປົກຄອງປະຕິການຢູ່ຂັ້ນແຂວງ, ຂັ້ນເມືອງ ຕະຫຼອດຮອດຂັ້ນຮາກຖານຖືກພັງທະລາຍລົງຕາມ ໆ ກັນ. ໃນບາງບ່ອນພວກປະຕິການທີ່ລີ້ຊ່ອນປ່ອນຕົວ, ພວກສວຍໂອກາດທາງການເມືອງໄດ້ຈັດຕັ້ງການລຸກຮືຂຶ້ນແບບປອມແປງ ແນໃສ່ຫຼົບຫຼີກ ຈາກບາດຄ້ອນ ຂອງການປະຕິວັດ ຫຼື ປອມຕົວເປັນ " ຜູ້ຮັກຊາດກ້າວໜ້າ " ເພື່ອເລັດລອດເຂົ້າໃນຄະນະກຳມະການປົກຄອງປະຕິວັດປະຊາຊົນ ທີ່ຫາກໍ່ສ້າງຕັ້ງຂຶ້ນໃຫມ່ນັ້ນ, ແຕ່ພວກເຂົາກໍ່ໄດ້ຖືກມະຫາຊົນບັກໜ້າ ແລະ ຊຳລະສະສາງພວກເຂົາຢ່າງທັນການ. ມາຮອດ ວັນທີ ໒໓ ສິງຫາ ໑໙໔໕ ມື້ທີ່ອຳນາດການປົກຄອງປະຕິວັດຂອງແຂວງ ແລະ ກຳແພງນະຄອນວຽງຈັນ ທຳພິທີສະເໜີຕົວຕໍ່ມວນຊົນເປັນໝື່ນ ໆ ຄົນທີ່ນະຄອນຫຼວງວຽງຈັນ ກໍ່ເປັນອັນວ່າ ລະບົບອຳນາດການປົກຄອງປະຕິວັດທັງໝົດແຕ່ຂັ້ນແຂວງ, ກຳແພງນະຄອນ ລົງຮອດຂັ້ນຮາກຖານໄດ້ຮັບການສ້າງຕັ້ງຂຶ້ນ ໃນທົ່ວເຂດກວດກາ ຂອງຝ່າຍກົງກັນ

ຂ້ານ, ແລະ ມາຮອດຫັ້ນ ເຖິງວ່າອຳນາດການປົກຄອງປະສົມຂັ້ນສູນກາງຍັງຄົງຕົວຢູ່, ແຕ່ເຂດຂອງ ຝ່າຍກົງກັນຂ້າມໄດ້ຖືກລົບລ້າງໄປໝົດສິ້ນ.

ບົນພື້ນຖານດັ່ງກ່າວນັ້ນ ວັນທີ່ ໑ ທັນວາ ໑໙໗໕ ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ເຊິ່ງມີບັນດາຕົວແທນທີ່ໄດ້ຮັບເລືອກຕັ້ງຈາກການປ່ອນບັດຄັດເລືອກ ສະພາປະຊາຊົນແຂວງຕ່າງໆ ມາເຂົ້າຮ່ວມນັ້ນ ໄດ້ໄຂຂຶ້ນຢ່າງສະຫງ່າຜ່າເຜີຍ ທີ່ນະຄອນ ຫຼວງວຽງຈັນ. ກອງປະຊຸມໃຫຍ່ໄດ້ຮັບຮອງເອົາ ໃບສະລະລາຊະສົມບັດຂອງເຈົ້າຊີວິດ, ໃບຂໍຍຸບຕົວຂອງຄະນະມົນຕີປະສົມການເມືອງແຫ່ງຊາດ ແລະ ລັດຖະບານປະສົມຊົ່ວຄາວແຫ່ງຊາດ. ກອງປະຊຸມໃຫຍ່ ໄດ້ເປັນເອກະສັນກັນຜ່ານບັນດາມະຕິອັນເປັນປະຫວັດການ : ຕົກລົງລົບລ້າງລະບອບລາຊາທິປະໄຕ ທີ່ຫຼ້າສະໄໝ ແລະ ສະຖາປະນາລະບອບສາທາລະນະລັດປະຊາທິປະໄຕປະຊາຊົນ, ສ້າງຕັ້ງສະພາປະຊາຊົນສູງສຸດ, ແຕ່ງຕັ້ງປະທານປະເທດ ແລະ ສ້າງຕັ້ງລັດຖະບານສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ກຳນົດທຸງຊາດ, ເພງຊາດ ແລະພາສາທາງລັດຖະການ. ວັນທີ່ ໒ ທັນວາ ໑໙໗໕, ກອງປະຊຸມໃຫຍ່ໄດ້ອັດລົງດ້ວຍຜົນສຳເລັດອັນສະ

ຫງ່າລາສີທ່າມກາງບັນຍາກາດແຫ່ງຄວາມຊື່ນຊົມຍິນດີຢ່າງສຸດອົກສຸດໃຈ ຂອງປະຊາຊົນບັນດາຊົນຊາດໃນທົ່ວປະເທດ ກໍຄືຂອງປະເທດອ້າຍນ້ອງ ແລະ ເພື່ອນມິດໃນທົ່ວທຸກ ທະວີບ. ເຫດການປະຫວັດສາດອັນອັດສະຈັນ ດັ່ງກ່າວນັ້ນ ເປັນຂີດໝາຍແຫ່ງການສິ້ນສຸດລົງ ຢ່າງມີໄຊສົມບູນ ຂອງການປະຕິວັດຊາດ – ປະຊາທິປະໄຕໃນປະເທດຂອງ ເຮົາ ແລະ ໄຂໄລຍະຂະຫຍາຍຕົວໃໝ່ ທີ່ຮຸ່ງເຮືອງສົດໃສທີ່ສຸດ ໃນປະຫວັດສາດ ຂອງຊາດເຮົາ : ໄລຍະທີ່ປະຊາຊົນບັນດາຊົນຊາດເຮົາເປັນເຈົ້າປະເທດຊາດ, ເປັນເຈົ້າຊາຕາກຳຂອງຕົນຢ່າງແທ້ຈິງ, ກ້າວຂຶ້ນສູ່ເສັ້ນທາງອັນສະຫວ່າງ ສະໄຫວຂອງລັດທິສັງຄົມນິຍົມພາຍໃຕການນຳພາຂອງພັກ ເຮົາ.

× ×

ໃນ ໓໐ ປີທີ່ຜ່ານມາ, ນັບຕັ້ງແຕ່ທຸງໄຊປະຕິວັດ ໄດ້ປິວສະບັດຢູ່ໃນທ້ອງຟ້າ ຂອງນະຄອນ ຫຼວງວຽງຈັນ ອັນເປັນສັນຍາລັກແຫ່ງສິດໃນເອກະລາດ ຂອງຊາດເຮົາຕໍ່ໂລກ ຈົນມາເຖິງເວລາທີ່ທຸງໄຊນັ້ນ ໄດ້ກາຍເປັນທຸງຊາດ ຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ປະຊາຊົນບັນດາຊົນຊາດເຮົາ ໄດ້ຜ່ານຂະບວນວິວັດແຫ່ງການຕໍ່ສູ້ອັນຫຍຸ້ງຍາກ, ລຳບາກ, ລະອິດລະອຽວ, ດຸເດືອດແລະ

ເຕັມໄປດ້ວຍການເສຽສະຫຼະຢ່າງໃຫຍ່ຫຼວງ. ວິລະຊົນບໍ່ຈັກວ່າເທົ່າໃດຄົນ ໄດ້ສະຫຼະຊີວິດເພື່ອຊາດ, ຊາວລາວຜູ້ຮັກຊາດຫຼາຍຄົນ ໄດ້ມີການອຸທິດກຳລັງວັງຊາ ແລະ ສະຕິປັນຍາ, ນັບທັງຊີວິດເລືອດເນື້ອຂອງຕົນບໍ່ຈັກວ່າ ເທົ່າໃດເຂົ້າໃນໄຊຊະນະອັນຍິ່ງໃຫຍ່ຂອງຊາດລາວເຮົາ.

ແຕ່ ສິບ ປີທີ່ຜ່ານມາ ກໍ່ແມ່ນ ສິບ ປີແຫ່ງການຕໍ່ສູ້ອັນສະຫງ່າອົງອາດກວ່າໝູ່ໃນປະຫວັດການຕໍ່ສູ້ຂອງຊາດເຮົາ. ໃນຂະບວນວິວັດແຫ່ງການສ້າງຕັ້ງປະເທດ ແລະ ປົກປັກຮັກສາປະເທດ ບໍ່ທັນມີເວລາໃດທີ່ຊາດເຮົາໄດ້ຢືນຕໍ່ໜ້າການທົດສອບອັນໃຫຍ່ໂຕພິລຶກພິລ້ຳຄືແນວນັ້ນຈັກເທື່ອ. ໃນຄາວກ່ອນພຸ້ນ ປູ່ຍ່າຕານາຍ ຂອງພວກເຮົາໄດ້ປະເຊີນໜ້າກັບໄພຮຸກຮານ ຈາກກຸ່ມສັກດີນາ ພາຍນອກເຊິ່ງ ລະດັບຂະຫຍາຍຕົວ ທາງເສດຖະກິດ-ສັງຄົມບໍ່ມີການໂຕນກັນປານໃດທຽບກັບປະເທດເຮົາ, ມາໃນຊຸມນີ້ ສັດຕູຜູ້ມາຮຸກຮານຊາດເຮົາພັດແມ່ນບັນດາຈັກກະພັດໂຕຫົວໂປທີ່ມີເຫງົ້າພະລັງ ທາງດ້ານເສດຖະກິດ ແລະ ການທະຫານອັນໃຫຍ່ຫຼວງທີ່ສຸດ , ມີລະດັບຂະຫຍາຍຕົວ ທາງດ້ານເຕັກນິກ, ອາວຸດຍຸດທະພັນ ລື່ນພວກເຮົາຕັ້ງ ເປັນຫຼາຍສັດຕະວັດ, ທັງມີບົດຮຽນໃນການຮຸກຮານໂລກເປັນຮ້ອຍປີມາແລ້ວ, ແຕ່

ກໍ່ບໍ່ທັນມີເວລາໃດທີ່ປະຊາຊົນເຮົາເຊິ່ງເປັນຜູ້ສ້າງປະຫວັດສາດຂອງຊາດນັ້ນ ໄດ້ຍາດເອົາໄຊຊະນະອັນສົມບູນ, ເຖິງຖອງ ແລະ ບໍລິບູນມາໄດ້ຢ່າງສະຫງ່າລາສີຄືແນວນີ້ ຈັກເທື່ອ. ໄຊຊະນະນັ້ນ ບໍ່ສະເພາະແຕ່ໄດ້ຟື້ນຟູຄວາມເປັນເອກະລາດຂອງປະເທດເຮົາທີ່ຖືກຢຽບຢ່ຳຢີ່ໄດ້ ໘ ສັດຕະວັດກວ່າມາແລ້ວ, ຫາກຍັງເປັນຄັ້ງທຳອິດ ທີ່ປະຊາຊົນບັນດາຊົນຊາດເຮົາຜູ້ເຄີຍດຳລົງຊີວິດເປັນທາດ, ໄດ້ຜ່ານພາວະທຸກຍາກຫຼາຫຼັງ, ເຈັບໃຂ້ໄດ້ປ່ອຍຈົມຢູ່ໃນຄວາມມືດມົນອົນທະການ ກາຍມາເປັນເຈົ້າຂອງແທ້ຈິງຂອງຊາດໜຶ່ງທີ່ມີເອກະລາດ, ມີອິດສະຫຼະພາບຢ່າງສົມບູນ ແລະ ພວມກ້າວຂຶ້ນສັງຄົມນິຍົມ, ເຮັດໃຫ້ຄວາມມຸ່ງຫວັງອັນແຮງກ້າ ຂອງປວງຊົນລາວກໍ່ຄືຂອງມວນມະນຸດປະກົດເປັນຈິງຢູ່ບົນຜືນແຜ່ນດິນທີ່ແສນຮັກຂອງພວກເຮົາ.

ໄຊຊະນະອັນຍິ່ງໃຫຍ່ນັ້ນ ກ່ອນອື່ນໝົດແມ່ນໄຊຊະນະຂອງແນວທາງອັນຖືກຕ້ອງ ແລະ ການນຳພາອັນສະຫຼາດສ່ອງໃສຂອງພັກເຮົາ ພັກມາກ-ເລນິນທີ່ແທ້ຈິງ, ພັກຂອງຊົນຊັ້ນກຳມະກອນລາວ ເຊິ່ງເປັນຕົວແທນ ແຕ່ຜູ້ດຽວໃຫ້ແກ່ຜົນປະໂຫຍດຂອງປະຊາຊົນຜູ້ອອກແຮງງານ ແລະ ຂອງຊາດລາວທັງໝົດ. ໂດຍໝູນໃຊ້ລັດທິມາກ-ເລນິນ

ເຂົ້າໃສ່ເງື່ອນໄຂຕົວຈິງຂອງປະເທດເຮົາຢ່າງປະດິດສ້າງ, ພັກເຮົາໄດ້ວາງແນວທາງຍຸດທະສາດ, ຍຸດໂທບາຍ ແລະ ວິທີປະຕິວັດຢ່າງຖືກຕ້ອງ, ຍົກສູງຄັນທຸງຊາດ-ປະຊາທິປະໄຕ, ສາມັກຄີເຕົ້າໂຮມປະຊາຊົນ ບັນດາຊົນຊາດ ໃນທົ່ວປະເທດເຂົ້າໃນແນວໂຮມເອກະພາບແຫ່ງຊາດ ໂດຍເອົາພັນທະພາບ ກຳມະກອນ-ຊາວນາເປັນພົ້ນ, ສົມທົບແໜ້ນລະຫວ່າງການຕໍ່ສູ້ດ້ວຍອາວຸດ ກັບການຕໍ່ສູ້ດ້ວຍການເມືອງ, ສົມທົບລະຫວ່າງກຳລັງແຮງ ຂອງຊາດກັບກຳລັງແຮງຂອງຍຸກສະໄໝ, ສວຍໃຊ້ຄວາມຂັດແຍ້ງຂອງສັດຕູເທົ່າທີ່ ຈະສວຍໃຊ້ໄດ້ ເພື່ອພັນແຍກ ແລະ ລ້ອມປ່ຽວພວກເຂົາ, ຕີສັດຕູໃຫ້ຖອຍໄປເທື່ອລະກ້າວ, ຍາດເອົາໄຊຊະນະ ເປັນແຕ່ລະພາກສ່ວນ, ແລະ ໃນທີ່ສຸດໂດຍກຳແໜ້ນກາລະໂອກາດປະຫວັດສາດກໍ່ພາການປະຕິວັດກ້າວຂຶ້ນ ຍາດເອົາໄຊຊະນະອັນສົມບູນ. ດ້ວຍແນວທາງແຜນນະໂຍບາຍອັນຖືກຕ້ອງ, ປະດິດສ້າງດັ່ງກ່າວນັ້ນ ການນຳພາ ຂອງພັກໄດ້ເປັນປັດໃຈພົ້ນຖານກວ່າໝູ່ ທີ່ຕັດສິນໄຊຊະນະ ອັນບໍລິບູນຂອງການປະຕິວັດຂອງປະເທດເຮົາ ໃນຊຸມນີ້.

ໄຊຊະນະອັນຍິ່ງໃຫຍ່ດັ່ງກ່າວນັ້ນ ກໍ່ແມ່ນໄຊຊະນະຂອງກຳລັງແຮງແຫ່ງຄວາມສາມັກຄີ ເປັນຈິດໜຶ່ງ ໃຈ

ດຽວກັນ ຂອງປວງຊົນທັງຊາດ, ຄວາມເປັນອັນໜຶ່ງ ອັນ
ດຽວກັນຂອງກອງທັບ ແລະ ປະຊາຊົນບັນດາຊົນຊາດເຮົາ
ທີ່ຕັດສິນໃຈຕີເອົາຊະນະສັດຕູ ຜູ້ຮຸກຮານ. ໂດຍເສີມຂະ
ຫຍາຍມູນເຊື້ອອັນດີງາມຂອງຊາດເຮົາ, ປະຊາຊົນບັນດາ
ຊົນຊາດເຮົາ ພາຍໃຕ້ການນຳພາຂອງພັກ ໄດ້ເຊີດຊູຈິດ
ໃຈຮັກຊາດ ແລະ ລັດທິວິລະຊົນປະຕິວັດ, ສາມັກຄີກັນຢືດ
ໝັ້ນຕໍ່ສູ້, ທົນທານຕໍ່ຄວາມເສຽສະຫຼະ ຢ່າງຄະນານັບບໍ່
ໄດ້ ໃນຫຼາຍສິບປີ ຕິດໆກັນ, ບໍ່ທໍ້ຖອຍຕໍ່ຄວາມຫຍຸ້ງຍາກ
ໃດ ໆ, ບໍ່ວໍ້ວ່ຽງຕໍ່ການເສຽສະຫຼະເລືອດເນື້ອ, ທັງຕີ
ເສິກ ທັງກໍ່ສ້າງ ແລະ ບຳລຸງເຫງົ້າພະລັງໃນທຸກ ດ້ານ
ໃຫ້ແກ່ການຕໍ່ຕ້ານຍືດເຍື້ອຍາວນານ, ເຮັດໃຫ້ທິດນຳຍິ່ງຕີ
ຍິ່ງເຂັ້ມແຂງ ແລະ ມີໄຊເລື້ອຍໄປປະກົດເປັນຈິງ. ກຳ
ລັງປະກອບອາວຸດພວກເຮົາ ເລີ່ມຈາກບັນດາໜ່ວຍ ກອງ
ຫຼອນ ນອຍໆ ປະກອບດ້ວຍປືນແກັບ, ປືນເພີງ, ຂວາກ
ຫ່າວຫຼາວແຫຼມ ໄດ້ເຕີບໃຫຍ່ເຂັ້ມແຂງທ່າມກາງການຫຸ້ມ
ຫໍ່, ລ້ຽງດູຂອງປະຊາຊົນບັນດາຊົນຊາດ, ໄດ້ກິ້ງເກືອກລີ
ເລືອໃນທົ່ວທຸກສະໜາມຮົບ, ນຳເອົາກຳລັງແຮງ ແຫ່ງ
ຄວາມສາມັກຄີລະຫວ່າງ ກອງທັບກັບປະຊາຊົນ, ຄວາມ
ຄຽດແຄ້ນສັດຕູ, ຄວາມອົງອາດກ້າຫານ ແລະ ຄວາມສະ

ຫຼາດແຫຼມຄົມ ອັນປະດິດສ້າງຂອງຕົນ ໄປຕໍ່ສູ້ແບບຫມັດແລກຫມັດກັບ ເຫຼັກກ້າ ເປັນລ້ານ ໆ ໂຕນ ຂອງສັດຕູ, ຕີພວກເຂົາ ໃຫ້ເລືອດຍ້ອຍເລືອດຍັ່ງ, ຫົວແຕກຫົວຂາດ, ສ້າງຜົນສູ້ຮົບອັນລືຊາພາກົດຂື້ນຢ່າງຄະນານັບບໍ່ໄດ້, ສ້າງວິລະກຳອັນອັດສະຈັນ ບໍ່ຈັກວ່າເທົ່າໃດ, ເຮັດໃຫ້ມູນເຊື້ອແຫ່ງຄວາມສາມັກຄີຕໍ່ສູ້ອັນກ້າແກ່ນ, ເດັດຂາດບໍ່ອ່ອນຍອມຂອງບັນພະບູລຸດເຮົາມີຄວາມສະຫວ່າງສະໄຫວຍິ່ງຂື້ນ ອັນໄດ້ຂຽນເປັນຫນ້າປະຫວັດສາດຄຳທີ່ສະຫງ່າງາມກວ່າ ຫມູ່ຂອງຊາດເຮົາ.

ໄຊຊະນະອັນຍິ່ງໃຫຍ່ດັ່ງກ່າວນັ້ນ ຍັງແມ່ນໄຊຊະນະແຫ່ງຄວາມສາມັກຄີຮ່ວມສຳພັນສູ້ຮົບລະຫວ່າງປະຊາຊົນເຮົາ ກັບປະຊາຊົນຫວຽດນາມ ແລະ ປະຊາຊົນກຳປູເຈຍອ້າຍນ້ອງ, ຄວາມສາມັກຄີທີ່ໄດ້ຮັບການສ້າງຂື້ນ ບົນພື້ນຖານລັດທິຮັກຊາດອັນດູດດື່ມສົມທົບກັບລັດທິສາກົນກຳມາຊີບອັນແທ້ຈິງ. ໂດຍຕົກຢູ່ໃນສະພາວະເຄາະເຂັນອັນດຽວກັນ, ຖືກເສັຽບ້ານເສັຽເມືອງ ແລະ ມີສັດຕູຜູ້ຮຸກຮານໂຕດຽວກັນ, ມີຄວາມຄຽດແຄ້ນ ແລະ ມຸ່ງມາດອັນດຽວກັນ, ປະຊາຊົນ ໓ ຊາດອ້າຍນ້ອງພວກເຮົາໄດ້ ອີງຫຼັງໃສ່ກັນເພື່ອຕໍ່ສູ້, ປະສານສົມທົບ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ

ພ້ອມກັນສ້າງເງື່ອນໄຂ ອຳນວຍຄວາມສະດວກ ໃຫ້ແກ່ກັນ ເພື່ອຕໍ່ເອົາຊະນະສັດຕູໂຕດຽວກັນ. ພິເສດແມ່ນການຮ່ວມສຳພັນຕໍ່ສູ້ອັນໜັ້ນໜ່ນໜຽວກຽວກົມ, ບໍລິສຸດສະເໝີຕົ້ນ ສະເໝີປາຍ ລະຫວ່າງປະຊາຊົນເຮົາ ກັບປະຊາຊົນ ຫວຽດນາມ, ລະຫວ່າງກອງທັບເຮົາກັບກອງທັບປະຊາຊົນຫວຽດນາມ, ລະຫວ່າງພັກເຮົາກັບພັກຄົນງານຫວຽດນາມ(ປັດຈຸບັນແມ່ນພັກກອມມູນິດຫວຽດນາມ) ນັ້ນ ຍາມໃດກໍ່ເປັນໜຶ່ງໃນບັນດາປັດໄຈພື້ນຖານ ທີ່ຕັດສິນໄຊຊະນະຂອງການປະຕິວັດຂອງປະເທດເຮົາໃນພາລະກິດປົດປ່ອຍຊາດ ໃນເມື່ອກ່ອນກໍ່ຄືໃນພາລະກິດປົກປັກຮັກສາ ແລະ ກໍ່ສ້າງປະເທດຊາດໃນປັດຈຸບັນ.

ໄຊຊະນະອັນເປັນປະຫວັດສາດຍິ່ງໃຫຍ່ຂອງຊາດເຮົາ ຍັງແມ່ນໄຊຊະນະແຫ່ງການສະໜັບສະໜູນ ແລະ ຊ່ວຍເຫຼືອ ຢ່າງກວ້າງຂວາງ ຂອງຂະບວນການ ປະຕິວັດ ແລະກ້າວໜ້າໃນໂລກ ແກ່ ພາລະກິດຕໍ່ສູ້ກູ້ຊາດຂອງປະຊາຊົນ ເຮົາ.ໂດຍດຳເນີນການຕໍ່ສູ້ໃນຂະນະທີ່ສາມກະແສຟອງປະຕິວັດຂອງຍຸກສະໄໝພວມບຸກໂຈມຕີຢ່າງແຂງແຮງເຂົ້າໃສ່ລັດທິຈັກກະພັດນິຍົມ ຢ່າງເນື່ອງນິດລຽນຕິດຈາກທຸກທິດນັ້ນ, ປະຊາຊົນເຮົາໄດ້ຮັບການ ຊ່ວຍເຫຼືອອັນໃຫຍ່ຫຼວງ,

ປະເສີດເລີດລ້ຳ ແລະ ມີຜົນສັກສິດບົນມິດຈິດມິດໃຈສາກົນ ກຳມາຊີບອັນສູງສົ່ງຈາກປະຊາຊົນ. ສະຫະພາບໂຊວຽດ, ປະຊາຊົນຈີນ ແລະ ປະຊາຊົນບັນດາປະເທດ ສັງຄົມນິຍົມ ອ້າຍນ້ອງອື່ນ ໆ ; ພ້ອມກັນນັ້ນກໍໄດ້ຮັບການເປັນໃຈ,ສະໜັບສະໜູນ ແລະ ຊ່ວຍເຫຼືອຢ່າງແຂງແຮງຈາກບັນດາ ປະເທດຊາດນິຍົມ,ບັນດາປະເທດເພື່ອນມິດ,ຈາກຂະບວນ ການສັນຕິພາບ, ປະຊາທິປະໄຕ ແລະ ມວນມະນຸດຜູ້ກ້າວ ໜ້າໃນໂລກ. ການສະໜັບສະໜູນແລະການ ຊ່ວຍເຫຼືອ ອັນໃຫຍ່ຫຼວງເຫຼົ່ານັ້ນ ເປັນການເຮັດໃຫ້ກຳລັງແຮງຂອງ ຊາດເຮົາທະວີຄູນຂຶ້ນຫຼາຍເທົ່າ ແລະເປັນປັດໃຈອັນໜຶ່ງທີ່ ສຳຄັນທີ່ສຸດ ແລະ ຂາດບໍ່ໄດ້ໃນການຕໍ່ສູ້ອັນຍືດເຍືອ ຍາວ ນານ ແລະ ມີໄຊຂອງການປະຕິວັດເຮົາ.

ບັນດາປັດໃຈທີ່ຕັດສິນໄຊຊະນະດັ່ງກ່າວ ມາເຖິງ ນັ້ນ ກໍ່ເປັນສາຍເຫດແຫ່ງຜົນສຳເລັດ ຂອງການ ປະຕິວັດ ໃນ ປະເທດເຮົາ, ໃນນັ້ນ ການນຳພາອັນຖືກຕ້ອງ, ປະດິດສ້າງຂອງພັກເຮົາ ເປັນຕົ້ນເຫດຕັດສິນກວາໝູ ແລະ ເປັນກົກເຫງົ້າຂອງທຸກໄຊຊະນະ ຂອງຊາດເຮົາ.

ພາກ ທີ ສອງ

ບາງບົດຮຽນຕົ້ນຕໍແຫ່ງການຕໍ່ສູ້ມີໄຊ
ຂອງ
ການປະຕິວັດປະເທດເຮົາ

ໄຊຊະນະອັນໃຫຍ່ຫຼວງຂອງການປະຕິວັດເຮົາ ໄດ້ຢັ້ງຢືນຢ່າງປະຈັກແຈ້ງຕື່ມອີກສັດຈະທຳໃຫຍ່ອັນໜຶ່ງ ຂອງຍຸກສະໄໝທີ່ວ່າ ບັນດາປະຊາຊາດ ທີ່ຖືກຄອບຄອງ ແລະຖືກກົດຂີ່ມີຄວາມອາດສາມາດພຽງພໍໃນການຕໍ່ສູ້ປົດປ່ອຍຕົນເອງ, ຕີເອົາຊະນະຈັກກະພັດນິຍົມຜູ້ຮຸກຮານໃດຢ່າງ ສິ້ນບຸນ, ພ້ອມກັນນັ້ນມັນຍັງໄດ້ປະກອບບົດຮຽນ ຈຳນວນໜຶ່ງກ່ຽວກັບການໝູນໃຊ້ແນວທາງຍຸດທະສາດ, ຍຸດໂທ ບາຍແລະ ວິທີປະຕິວັດຂອງລັດທິມາກ-ເລນິນ ເຂົ້າໃສ່ການປະຕິວັດຊາດ-ປະຊາທິປະໄຕໃນປະເທດນ້ອຍ ເຊິ່ງມີ ລະດັບເສດຖະກິດ, ວັດທະນະທຳ, ສັງຄົມດ້ອຍພັດທະນາ.

ຈາກພຶດຕິກຳອັນອຸດົມຮັ່ງມີແຫ່ງການຕໍ່ສູ້ມີໄຊ ຂອງການປະຕິວັດລາວດັ່ງທີ່ກ່າວມານັ້ນ, ພວກເຮົາຂໍຍົກໃຫ້ເຫັນບາງບົດຮຽນຕົ້ນຕໍດັ່ງຕໍ່ໄປນີ້:

7. <u>ຍົກສູງຄັນທຸງຊາດ-ປະຊາທິປະໄຕ, ແກ້ໄຂເນື້ອໃນ ແລະສາຍພົວພັນລະຫວ່າງສອງຫນ້າທີ່ ປະຕິວັດຊາດ ແລະປະຊາທິປະໄຕຢ່າງຖືກຕ້ອງ.</u>

ໄຊຊະນະຂອງການປະຕິວັດ ເກີດຂຶ້ນຍ້ອນຫຼາຍປັດໃຈ, ແຕ່ກ່ອນອື່ນຫມົດແມ່ນຍ້ອນມີແນວທາງ ຖືກຕ້ອງ. ແນວທາງນັ້ນ ຕ້ອງເລັ່ງໃສ່ແກ້ໄຂບັນດາຂໍ້ຂັດແຍ້ງພື້ນຖານທີ່ຄົງຄ້າງຢູ່ໃນສັງຄົມນັ້ນໃຫ້ໄດ້; ພ້ອມກັນນັ້ນກໍ່ຕ້ອງ ກຳນົດທິດທາງກ້າວຂຶ້ນຂອງການປະຕິວັດໃຫ້ສອດຄ່ອງກັບການຂະຫຍາຍຕົວທີ່ຕ້ອງເປັນໄປຂອງຍຸກສະໄຫມ ປັດຈຸບັນອີກດ້ວຍ.

ປະເທດເຮົາເປັນປະເທດຫນຶ່ງທີ່ຕົກເປັນເມືອງຂຶ້ນ, ຖືກຈັກກະພັດນິຍົມຮຸກຮານ ແລະຄອບຄອງ; ຜົນປະໂຫຍດຂັ້ນຕ່ຳສຸດທຸກຢ່າງຂອງຊາດລ້ວນແຕ່ຖືກພວກເຂົາຍາດ ຊິງເອົາໄປຫມົດ. ສະນັ້ນ,ພໍແຕ່ໄດ້ກຳເນີດຂຶ້ນ, ພັກເຮົາ-ໃນເມື່ອກ່ອນແມ່ນພັກກອມມູນິດອິນດູຈີນ,ໃນປະຈຸບັນ ແມ່ນພັກປະຊາຊົນປະຕິວັດລາວ ຈຳຕ້ອງໄດ້ແກ້ໄຂຄວາມ ຮຽກຮ້ອງຕ້ອງການອັນຮີບດ່ວນ ເຊິ່ງເປັນຄວາມມຸ່ງມາດປາຖະຫນາອັນແຮງກ້າກວ່າຫມູ່ຂອງຄົນລາວຜູ້ຮັກຊາດ ແຕ່ລະຄົນຄື ຂັບໄລ່ພວກລ່າເມືອງຂຶ້ນຜູ້ຮຸກຮານ,ປົດປ່ອຍຊາດ,ຍາດ

ເອົາເອກະລາດ ແລະອິດສະຫຼະພາບມາໃຫ້ປະເທດຊາດ.

ຈຸດພິເສດຂອງລັດທິລ່າເມືອງຂຶ້ນຈັກກະພັດ ແມ່ນການສົມຮູ້ຮ່ວມຄິດລະຫວ່າງພວກເຂົາເອງ ກັບຊົນຊັ້ນປະຕິການກວ່າຫມູ່ຢູ່ໃນບັນດາປະເທດທີ່ພວກເຂົາຮຸກຮານ ເພື່ອດຳເນີນ ແລະຮັກສາການຄອບຄອງຂອງພວກເຂົາໄວ້. ໃນລະບອບລ່າເມືອງຂຶ້ນແບບເກົ່າ ແມ່ນການສົມຮູ້ຮ່ວມຄິດລະຫວ່າງພວກລ່າເມືອງຂຶ້ນກັບຊົນຊັ້ນສັກດີນາ; ໃນລະບອບລ່າເມືອງຂຶ້ນແບບໃຫມ່ແມ່ນການສົມຮູ້ຮ່ວມຄິດ ລະຫວ່າງພວກລ່າເມືອງຂຶ້ນກັບຊົນຊັ້ນສັກດີນາ ແລະພວກນາຍທຶນຈຳຫນ່າຍພາຍໃຕ້ຮູບການຂອງອຳນາດການປົກຄອງລູກມືທີ່ສູມເສື້ອ "ຊາດ, ປະຊາທິປະໄຕ" ແບບປອມແປງເພື່ອຊູດເນື້ອເຖືອຫນັງ ແລະກຳຣາບປາບປາມປະຊາຊົນ. ສະນັ້ນ, ຢາກໂຈມຕີຂັບໄລ່ຈັກກະພັດຜູ້ຮຸກຮານໄດ້ກໍ່ຈຳຕ້ອງ ໂຈມຕີໂຄ່ນລົ້ມຕະຫຼອດທັງຊົນຊັ້ນປະຕິການທີ່ເປັນບ່ອນອີງໃຫ້ພວກເຂົານັ້ນໄປພ້ອມ ໆ ກັນ. ໃນດ້ານອື່ນ, ຢາກປຸກ ລະດົມແລະບຳລຸງກຳລັງຂອງຊາດໄດ້ ແມ່ນຕ້ອງແກ້ໄຂຄວາມຮຽກຮ້ອງຕ້ອງການກ່ຽວກັບຜົນປະໂຫຍດທາງດ້ານປະຊາທິປະໄຕອັນພື້ນຖານຂອງປະຊາຊົນຜູ້ອອກແຮງງານ ທີ່ເປັນພາກສ່ວນຫຼວງຫຼາຍກວ່າຫມູ່ ທີ່ຕັດສິນການແພ້ ການຊະນະ

ຂອງຂະບວນການປົດປ່ອຍຊາດນັ້ນໃຫ້ໄດ້.

ດ້ວຍເຫດນັ້ນ, ການປະຕິວັດປົດປ່ອຍຊາດຈຶ່ງຈຳຕ້ອງໄດ້ກວມທັງເນື້ອໃນປະຊາທິປະໄຕດ້ວຍແລະແນວທາງຍຸດທະສາດຂອງພັກເຮົາ ແມ່ນແນວທາງແກ້ໄຂ ທັງບັນຫາຊາດ ທັງບັນຫາປະຊາທິປະໄຕຢູ່ໃນປະເທດເຮົາຢ່າງສອດຄ່ອງກັບຈຸດພິເສດຂອງສັງຄົມປະເທດເຮົາ ແລະກັບຄວາມຮຽກຮ້ອງຕ້ອງການແຫ່ງການຂະຫຍາຍຕົວພາວະວິໄສຂອງຍຸກສະໄໝນັ້ນເອງ.

ໂດຍເປັນພັກການເມືອງຂອງຊົນຊັ້ນກຳມະກອນ ທີ່ປະກອບດ້ວຍລັດທິມາກ-ເລນິນ, ພັກເຮົາຮັບຮູ້ວ່າ ບັນຫາຊາດ ແລະບັນຫາປະຊາທິປະໄຕ ເວລາໃດກໍ່ຕິດພັນກັບບັນຫາຊົນຊັ້ນ. ໃນແຕ່ລະສະໄໝປະຫວັດສາດ, ຊົນຊັ້ນໃດທີ່ເປັນຕົວແທນໃຫ້ແກ່ແບບວິທີການຜະລິດທີ່ກ້າວໜ້າ ໃນສະໄໝນັ້ນ ກໍ່ເປັນທັງຕົວແທນໃຫ້ແກ່ຊາດ ແລະທັງ ມີຄວາມຂາດສາມາດ ແລະເງື່ອນໄຂເປັນຜູ້ກຳຄັນທຸງຊາດພອມ . ຢູ່ ຢູໂລບ, ໄດ້ມີສະໄໝໜຶ່ງທີ່ຊົນຊັ້ນນາຍທຶນເປັນຕົວແທນໃຫ້ແກ່ແບບວິທີການຜະລິດທີ່ກ້າວໜ້າ, ກຳຄັນທຸງຊາດ-ປະຊາທິປະໄຕໄດ້ແລະໄດ້ນຳພາການປະຕິວັດ ນາຍທຶນໂຄ່ນລົ້ມລະບອບສັກດີນາທີ່ເປື່ອຍເນົ່າ, ກໍ່ສ້າງ ລະບອບ

ທຶນນິຍົມຂື້ນຕາມລັດທິຊາດ ແລະປະຊາທິປະໄຕ ແບບນາຍທຶນຂອງມັນ. ແຕ່ໃນເມື່ອລັດທິນາຍທຶນໄດ້ກາຍມາເປັນລັດທິຈັກກະພັດ, ເປັນອຸປະສັກກີດຫນ່ວງການຂະຫຍາຍ ຕົວຂອງຊາດຕົນ ແລະ ໄປຜູກທາດ ປະຊາຊາດອື່ນ ແລ້ວຊົນຊັ້ນນາຍທຶນໄດ້ເສຍບົດບາດປະຫວັດສາດ ອັນຕັ້ງຫນ້າຂອງມັນໄປຫມົດສິ້ນ. ຊົນຊັ້ນກຳມະກອນເປັນຕົວແທນໃຫ້ແກ່ແບບວິທີການຜະລິດໃຫມ່ ແບບວິທີການຜະລິດສັງຄົມນິຍົມ, ສະນັ້ນ ພໍແຕ່ໄດ້ກຳເນີດຂື້ນມັນກໍ່ເປັນຊົນຊັ້ນດຽວ ເທົ່ານັ້ນທີ່ສາມາດເຕົ້າໂຮມແລະນຳພາປະຊາຊົນທັງປວງ ຕໍ່ສູ້ໂຄ່ນລົ້ມລະບອບທຶນນິຍົມ,ປົດປ່ອຍຫມົດທັງຊາດ, ກໍ່ສ້າງລະບອບສັງຄົມໃຫມ່, ລະບອບສັງຄົມນິຍົມ, ນຳເອົາສັງຄົມແລະຊາດກ້າວຂື້ນຕາມທິດຂະຫຍາຍຕົວພາວະວິໄສຂອງປະຫວັດສາດໄດ້. ການຂະຫຍາຍຕົວເຕີບໃຫຍ່ຂອງ ໓ ກະແສຟອງປະຕິວັດໃນປັດຈຸບັນ ເຊິ່ງເປີດສາກດ້ວຍມະຫາປະຕິວັດສັງຄົມນິຍົມເດືອນ ຕຸລາ ລັດເຊຍນັ້ນ ນັບມື້ນັບຢັ້ງຢືນຢ່າງປະຈັກແຈ້ງບົດບາດປະຫວັດສາດຂອງຊົນຊັ້ນ ກຳມະກອນໃນຍຸກສະໄຫມປັດຈຸບັນ.

ຢູ່ໃນແຫຼມອິນດູຈີນ ກໍ່ຄືຢູ່ໃນປະເທດລາວເຮົາ,ປະຫວັດສາດກໍ່ເຄີຍພິສູດສັດຈະທຳດັ່ງກ່າວນັ້ນແລ້ວ. ນັບແຕ່ລັດ

ທີ່ລ່າເມືອງຂຶ້ນຝະລັ່ງເຂົ້າມາຄອບຄອງປະເທດເຮົາ ເປັນ
ຕົ້ນມາ, ພາຍໃຕ້ການນຳພາຂອງບັນດາຊົນຊັ້ນແລະຊັ້ນຄົນ
ທີ່ແຕກຕ່າງກັນ, ນັບທັງບັນດາເຈົ້າສັກດີນາ ຫຼືບັນດາເຈົ້າ
ກົກເຈົ້າເຫຼົ່າຕະຫຼອດເຖິງຊົນຊັ້ນນາຍທຶນແລະ ນາຍ ທຶນ
ນ້ອຍທີ່ເປັນປັນຍາຊົນ ໄດ້ມີຂະບວນການເຫງຊາດຫຼາຍຂະ
ບວນເກີດຂຶ້ນຢ່າງຕໍ່ເນື່ອງກັນ, ໃນນັ້ນມີບາງຂະບວນກໍ່ໄປ
ຕາມທາງອຽງຂອງລັດທິຊາດ-ປະຊາທິປະໄຕແບບນາຍທຶນ;
ແຕ່ພາກຕົວຈິງປະຫວັດສາດໄດ້ຢັ້ງຢືນແລ້ວວ່າຂະບວນເຫຼົ່າ
ນັ້ນບໍ່ສາມາດກ້າວໄປເຖິງຫຼັກໄຊໄດ້ ດ້ວຍວ່າ ເນື້ອໃນຕໍ່ສູ້
ແລະທິດທາງກ້າວຂຶ້ນຂອງມັນບໍ່ຕອບສະໜອງ ຄວາມຮຽກ
ຮ້ອງຕ້ອງການພື້ນຖານຂອງມະຫາຊົນ ແລະບໍ່ສອດຄ່ອງກັບ
ການຂະຫຍາຍຕົວທີ່ຕ້ອງເປັນໄປຂອງຍຸກສະໄໝ. ສະນັ້ນ
ຈຶ່ງບໍ່ສາມາດປຸກລະດົມເຕົ້າໂຮມກຳລັງຂອງຊາດໄດ້ ຢ່າງ
ກວ້າງຂວາງ ແລະຍາດແຍ່ງການສະໜັບສະໜູນ ແລະ
ຊ່ວຍເຫຼືອຂອງສາກົນໃນການຕໍ່ສູ້ ເພື່ອຕີເອົາຊະນະ ສັດ
ຕູຂອງຊາດ.

ໄຊຊະນະຂອງມະຫາປະຕິວັດສັງຄົມນິຍົມເດືອນຕຸລາ
ໄດ້ໄຂເສັ້ນທາງປົດປ່ອຍ ໃຫ້ແກ່ບັນດາປະຊາຊາດ ທີ່ຖືກ
ກົດຂີ່ ແລະສັດຈະທຳຂອງຍຸກສະໄໝໄດ້ມາສູ່ຂະບວນການ

ຕໍ່ສູ້ຮັກຊາດຂອງປະຊາຊົນເຮົາ. ພັກເຮົາ-ພັກຂອງຊົນຊັ້ນກຳມະກອນໄດ້ກຳເນີດເກີດຂຶ້ນ ແລະໂຄງການການເມືອງທຳອິດຂອງພັກກອມມູນິດອິນດູຈີນໄດ້ກຳນົດຢ່າງຈະແຈ້ງວ່າ "ກ່ອນອື່ນໝົດ ແມ່ນເຮັດການປະຕິວັດຊາດ-ປະຊາທິປະໄຕ, ຈູນຈາກນັ້ນ ແມ່ນຫັນໄປສູ່ການປະຕິວັດ ສັງຄົມນິຍົມໂດຍກົງ ໂດຍບໍ່ຜ່ານໄລຍະຂະຫຍາຍຕົວຂອງທຶນນິຍົມ"[1] ໃນໂຄງການການເມືອງຂອງກອງປະຊຸມໃຫຍ່ຄັ້ງທີ່ ໒ ຂອງພັກປະຊາຊົນປະຕິວັດລາວ ໄດ້ກຳນົດເປັນອັນລະອຽດຕື່ມຄື: "...ສຳເລັດການປະຕິວັດຊາດ-ປະຊາທິປະໄຕໃນທົ່ວປະເທດ, ກຽມເງື່ອນໄຂທຸກຢ່າງທີ່ຈຳເປັນ ເພື່ອກ້າວຂຶ້ນສັງຄົມນິຍົມໂດຍກົງ ໂດຍບໍ່ຜ່ານເສັ້ນທາງຂະຫຍາຍຕົວ ແບບທຶນນິຍົມ..., ຕັ້ງໜ້າປະກອບສ່ວນເຂົ້າໃນການຕໍ່ສູ້ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະສັງຄົມນິຍົມໃນອິນດູຈີນ, ໃນອາຊີອາຄະເນ ແລະໃນໂລກ"[2]. ເປັນອັນຈະແຈ້ງວ່າພັກເຮົາໄດ້ຢືນຢັນຕັ້ງແຕ່ຫົວທີໂລດ ລັກສະນະ ຂອງການປະຕິວັດປົດປ່ອຍຊາດຢູ່ໃນປະເທດເຮົາຄື

---

1. ໂຄງການການເມືອງຂອງພັກກອມມູນິດອິນດູຈີນ, ປີ 1930.
2. ໂຄງການການເມືອງຂອງກອງປະຊຸມໃຫຍ່ຄັ້ງທີ່ສອງຂອງພັກປະຊາຊົນປະຕິວັດລາວ, ປີ 1972.

ການປະຕິວັດຊາດ-ປະຊາທິປະໄຕໂດຍແມ່ນພັກຂອງຊົນຊັ້ນກຳມະກອນເປັນຜູ້ນຳພາ ແມ່ນນອນຢູ່ໃນນາດຕະເກນຂອງການປະຕິວັດກຳມາຊີບ, ແລະວັດຖຸປະສົງຂອງມັນ ບໍ່ແມ່ນຢຸດເຊົາຢູ່ແຕ່ໃນເອກະລາດແຫ່ງຊາດ ແລະປະຊາທິປະໄຕເທົ່ານັ້ນ ຫາກຕ້ອງພາປະເທດຊາດກ້າວຂຶ້ນສັງຄົມນິຍົມ , ກອມມູນິດນິຍົມ, ພ້ອມກັນນັ້ນ ພັກເຮົາກໍ່ຢັ້ງຢືນວ່າ ການປະຕິວັດຊາດ-ປະຊາທິປະໄຕຢູ່ໃນປະເທດເຮົາເປັນພາກສ່ວນໜຶ່ງທີ່ສະໜິດແໜ້ນຂອງການປະຕິວັດໂລກ.

ດ້ວຍແນວທາງລວມດັ່ງກ່າວມາເທິງນັ້ນ, ການປະຕິວັດຊາດ-ປະຊາທິປະໄຕຂອງປະເທດເຮົາມີລັກສະນະປະຕິວັດສຸດກົກສຸດປາຍ, ລັກສະນະວິທະຍາສາດອັນເລິກເຊິ່ງ. ຈຸດໝາຍພື້ນຖານ ແລະທິດທາງອັນຖືກຕ້ອງ ເພື່ອຕົກລົງແກ້ໄຂບັນດາບັນຫາຕົວຈິງທາງດ້ານຍຸດທະສາດ, ຍຸດໂທບາຍ ແລະວິທີປະຕິວັດໃນຂະບວນວິວັດແຫ່ງການຕໍ່ສູ້ປະ ຕິບັດແນວທາງລວມດັ່ງກ່າວນັ້ນ ແມ່ນຍົກສູງຄັນທຸງຊາດ-ປະຊາທິປະໄຕ ພາຍໃຕ້ການນຳພາຂອງຊົນຊັ້ນ ກຳມະກອນແລະກອງລະວັງໜ້າຂອງມັນຄື ພັກການເມືອງ ມາກ-ເລນິນ; ຈັດຕັ້ງແນວໂຮມເອກະພາບແຫ່ງຊາດອັນ ກວ້າງຂວາງ ບົນພື້ນຖານພັນທະພາບກຳມະກອນ-ຊາວນາ ພາຍ

ໃຕ້ການນຳພາຂອງພັກ; ກໍ່ສ້າງອຳນາດການປົກຄອງ ກຳມະກອນ-ຊາວນາ ແລະກອງທັບກຳມະກອນ-ຊາວນາໂດຍແມ່ນພັກເປັນຜູ້ນຳພາ; ຫມູນໃຊ້ຍຸດໂທບາຍຢ່າງມີໄຫວພິບ, ໃຊ້ທຸກວິທີ, ທຸກຮູບການຕໍ່ສູ້ບົນຫຼັກການເອົາຄວາມຮຸນແຮງປະຕິວັດຂອງມະຫາຊົນເປັນພື້ນຖານ ເພື່ອແກ້ໄຂທຸກຫນ້າທີ່ຂອງການປະຕິວັດຢ່າງເຖິງຖອງ; ຕໍ່ສູ້ໂຈມຕີໂຄ່ນລົ້ມຈັກກະພັດອາເມລິກາຜູ້ຮຸກຮານ, ພວກສັກດີນາ ແລະນາຍທຶນຈ່າຫນ່າຍ; ພ້ອມກັນນັ້ນ, ຕ້ອງກໍ່ສ້າງປະຖົມປັດໄຈ ທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ແນວຄິດຂອງລັດທິສັງຄົມນິຍົມຂຶ້ນໃນຂະບວນວິວັດແຫ່ງການດຳເນີນການປະຕິວັດຊາດ - ປະຊາທິປະໄຕນັ້ນໂລດ; ເສີມຂະຫຍາຍລັດທິຮັກຊາດ ແລະກຳລັງແຮງຂອງຊາດຢ່າງສຸດຂີດສົມທົບກັບລັດທິສາກົນກຳມາຊີບ ແລະ ກຳລັງແຮງຂອງຍຸກສະໄຫມຢ່າງແຫນ້ນແຟ້ນ ແລະອື່ນ ໆ...ທັງຫມົດເຫຼົ່ານັ້ນໄດ້ຮັບປະກັນຢ່າງຫນັກແຫນ້ນ ໃຫ້ແກ່ໄຊຊະນະອັນສົມບູນຂອງການປະຕິວັດຊາດ-ປະຊາທິປະໄຕຂອງປະເທດ ເຮົາ ແລະໄຂຊ່ອງທາງອັນສະດວກໃຫ້ແກ່ການຫັນໄປສູ່ໄລຍະປະຕິວັດສັງຄົມນິຍົມໃນທັນທີທັນໃດ.

ແນວທາງລວມແຫ່ງການ "ຍົກສູງຄັນທຸງ ປະຕິວັດ

ຊາດ-ປະຊາທິປະໄຕພາຍໃຕ້ການນຳພາຂອງພັກ ຂອງຊົນຊັ້ນກຳມະກອນ ແລະຕາມທິດກ້າວຂຶ້ນສັງຄົມນິຍົມ" ນັ້ນ ຕາມພວກເຮົາເຂົ້າໃຈມັນບໍ່ພຽງແຕ່ເປັນແນວທາງ ອັນຖືກຕ້ອງສຳລັບການປະຕິວັດຂອງປະເທດເຮົາເທົ່ານັ້ນ, ຫາກຍັງເປັນການເຮັດໃຫ້ກົດເກນທີ່ຕ້ອງເປັນໄປອັນຫນຶ່ງ ຂອງຂະບວນການຕໍ່ສູ້ ເພື່ອເອກະລາດແຫ່ງຊາດ ແລະປະຊາທິປະໄຕໃນຍຸກສະໄຫມປັດຈຸບັນ ມີຄວາມຊັດແຈ້ງຂຶ້ນຕື່ມ.

ການກຳນົດແນວທາງລວມຢ່າງຖືກຕ້ອງ ມີຄວາມຫມາຍສຳຄັນທີ່ສຸດໃນການຕັດສິນການຂະຫຍາຍຕົວທັງຫມົດຂອງການປະຕິວັດ. ເຖິງຢ່າງນັ້ນກໍ່ດີ, ພັກກໍ່ຍັງຕ້ອງ ໄດ້ວາງແນວທາງຍຸດທະສາດອັນລະອຽດຕົວຈິງອອກ ໃຫ້ຖືກແທດກັບສະພາບການທຸກດ້ານຂອງປະເທດໃນແຕ່ລະໄລຍະຕໍ່ສູ້ ຈຶ່ງຈະສາມາດພາການປະຕິວັດ ເດີນໄປສູ່ຫຼັກໄຊໄດ້. ໂດຍອີງໃສ່ການວິເຄາະວິໄຈລັກສະນະຂອງສັງຄົມ ແລະຂໍ້ຂັດແຍ້ງພື້ນຖານໃນສັງຄົມຂອງປະເທດເຮົາ, ພັກເຮົາໄດ້ວາງເນື້ອໃນ ແລະຫນ້າທີ່ພື້ນຖານຕະຫຼອດໄລຍະປະຕິວັດ, ກຳນົດບັນດາເປົ້າຫມາຍທີ່ການປະຕິວັດຕ້ອງໂຈມຕີໂຄ່ນລົ້ມ, ຈັດວາງສັບຊ້ອນບັນດາກຳລັງປະຕິວັດ ເພື່ອດຳເນີນການຕໍ່ສູ້ປະຕິວັດ. ອີກດ້ານຫນຶ່ງ ຍັງຕ້ອງໄດ້ວິເຄາະວິໄຈ ຕີ

ລາຄາສາຍພົວພັນຊົນຊັ້ນ ແລະຄວາມອາດສາມາດໃນການພັນແຍກສັດຕູໃນແຕ່ລະໄລຍະອັນລະອຽດ ເພື່ອກຳນົດໜ້າທີ່ຕົ້ນຕໍ ແລະຈຸດໝາຍການເມືອງໃນສະເພາະໜ້າ ໃຫ້ເໝາະສົມ, ທັງນີ້ເພື່ອສຸມປາຍຫອກຕໍ່ສູ້ຂອງການປະຕິວັດເຂົ້າໃສ່ສັດຕູຕົວຕົ້ນທີ່ອັນຕະລາຍກວ່າໝູ່. ທັງໝົດເຫຼົ່ານີ້ຮຽກຮ້ອງໃຫ້ການນຳພາຂອງພັກຕ້ອງມີວິທະຍາສາດ ແລະຕ້ອງປະດິດສ້າງທີ່ສຸດ, ທັງຕ້ອງກຳກົດເກນທົ່ວໄປ ຂອງການປະຕິວັດ ກັບທິດທາງກາວຂຶ້ນຂອງມັນໃຫ້ໄດ້, ທັງຕ້ອງຄົ້ນຄວ້າພຶດຕິກຳຂອງສັງຄົມຢ່າງຄົບຖ້ວນ ເພື່ອມີວິທີແກ້ໄຂໃຫ້ຖືກຕ້ອງແທດເໝາະ, ບໍ່ຕົກເຂົ້າໃນທ່າອຽງ "ຊ້າຍ" ຫຼື "ຂວາ", ໂດຍສະເພາະຢ່າງຍິ່ງໃນສະພາບທີ່ປະເທດເຮົາມີຫຼາຍຊົນຊາດເຊິ່ງການພັນແຍກຊົນຊັ້ນບໍ່ທັນສູງເທື່ອ, ຖານະສັງຄົມຂອງແຕ່ລະຊົນຊັ້ນ ກໍ່ຄືສາຍພົວພັນລະຫວ່າງບັນດາຊົນຊັ້ນກໍ່ຍັງມີຈຸດພິເສດສະເພາະຂອງມັນ.

ປະເທດເຮົາ ກ່ອນສະໄໝຕົກເປັນເມືອງຂຶ້ນຂອງຝະລັ່ງ ເປັນປະເທດສັກດີນາທີ່ບໍ່ທັນລວມສູນ, ປະກອບດ້ວຍຫຼາຍອານາຈັກນ້ອຍ ແລະບັນດາຊົນເຜົ່າພູດອຍ; ເສດຖະກິດແມ່ນເອກະເທດກະແຈກກະຈາຍ, ເພິ່ງຕົນເອງກຸ້ມຕົນເອງ ພໍໃຜພໍລາວຕາມລັກສະນະຂອງສະໄໝຕົ້ນສັກ

ດິນາ. ນັບຕັ້ງແຕ່ພວກລ່າເມືອງຂຶ້ນຝະລັ່ງ ເຂົ້າມາຢຶດຄອງປະເທດຂອງພວກເຮົາເປັນຕົ້ນມາ, ເຖິງວ່າພວກເຂົາໄດ້ນຳເອົາເສດຖະກິດນາຍທຶນ ລ່າເມືອງຂຶ້ນເຂົ້າມາຫນ້ອຍຫນຶ່ງກໍ່ຈິງ, ແຕ່ພວກເຂົາຍັງອີງໃສ່ຊົນຊັ້ນສັກດິນາ, ຮັກສາບັນດາຮູບການຂູດຮີດແບບສັກດິນາແລະ ກ່ອນສັກດິນາ ພ້ອມທັງຮັກສາວັດທະນະທຳທີ່ປະຕິການ ຂອງມັນໄວ້ເພື່ອວາງແອກຄອບຄອງຂອງພວກເຂົາ, ກົດຂີ່ແລະຂູດຮີດປະຊາຊົນເຮົາ ຕົ້ນຕໍແມ່ນຊາວໄຮ່ນາຜູ້ອອກແຮງ ງານບັນດາຊົນຊາດ. ລັກສະນະສັງຄົມຂອງປະເທດເຮົາ ໃນຄາວນັ້ນ ແມ່ນ<u>ເມືອງຂຶ້ນແບບເກົ່າ ແລະໃນດ້ານພື້ນຖານກໍ່ຍັງແມ່ນສັກດິນາ</u>ຢູ່.

ພາຍຫຼັງທີ່ພວກລ່າເມືອງຂຶ້ນຝະລັ່ງປະລາໄຊແລ້ວ, ຈັກກະພັດອາເມລິກາກໍ່ໄດ້ໂດດເຂົ້າມາຮຸກຮານ ປະເທດຂອງພວກເຮົາແທນພວກຝະລັ່ງ. ພວກເຂົາ ໄດ້ອອກແຮງເຮັດໃຫ້ພວກສັກດິນາອາດຍາສິດຊຸນເສິກກາຍເປັນນາຍທຶນຈຳຫນ່າຍ ເພື່ອສ້າງຮາກຖານສັງຄົມໃຫ້ແກ່ລັດທິລ່າເມືອງຂຶ້ນແບບໃຫມ່ຂອງເຂົາ ແລະໃຊ້ພວກນີ້ປັ້ນແຕ່ງລະບົບ ອຳນາດການປົກຄອງລູກມືຂຶ້ນ ພາຍໃຕ້ປ້າຍ "ເອກະລາດ" ເພື່ອດຳເນີນນະໂຍບາຍລ່າເມືອງຂຶ້ນແບບໃຫມ່, ເຮັດໃຫ້

ເສດຖະກິດຂອງປະເທດເຮົາຂຶ້ນກັບພວກເຂົາອ້ອຍຕ້ອຍ ; ພ້ອມກັນນັ້ນ, ພວກເຂົາກໍ່ແຜ່ຜາຍວັດທະນະທຳແບບຂ້ອຍຂ້າເສື່ອມຊາມ ເພື່ອເບື່ອເມົາປະຊາຊົນເຮົາ. ລັກສະນະສັງຄົມຂອງປະເທດເຮົາໃນເວລານີ້ແມ່ນ <u>ສັງຄົມເມືອງຂຶ້ນແບບໃຫມ່ ແລະເຄິ່ງສັກດີນາ</u>.

ຈາກລັກສະນະສັງຄົມດັ່ງກ່າວນັ້ນ, ໃນເກືອບຫນຶ່ງສັດຕະວັດມານີ້ ບັນດາຂໍ້ຂັດແຍ້ງພື້ນຖານທີ່ໄດ້ພົ້ນເດັ່ນຂຶ້ນຢູ່ໃນປະເທດເຮົາ ແມ່ນຂໍ້ຂັດແຍ້ງລະຫວ່າງ ຊາດລາວທັງຫມົດກັບຈັກກະພັດຜູ້ຮຸກຮານ (ໃນເມື່ອກ່ອນແມ່ນຝະລັ່ງ, ຕໍ່ມາແມ່ນອາເມລິກາ) ແລະພວກລູກມືຜູ້ຂາຍຊາດ, ແລະຂໍ້ຂັດແຍ້ງລະຫວ່າງປະຊາຊົນຜູ້ອອກແຮງງານ ເຊິ່ງກ່ອນອື່ນຫມົດແມ່ນຊາວໄຮ່ນາບັນດາຊົນຊາດ ກັບຊົນຊັ້ນນາຍທຶນຈຳຫນ່າຍ ແລະຊົນຊັ້ນສັກດີນາ. ຂໍ້ຂັດແຍ້ງທັງສອງນີ້ພົວພັນກັນແບບກາຍອິນຊີ ແລະຕ້ອງແກ້ໄຂໄປພ້ອມໆ ກັນ; ດ້ວຍເຫດນັ້ນ, <u>ຫນ້າທີ່ຕ້ານຈັກກະພັດແລະລູກມືຈຶ່ງ ແຍກອອກຈາກຫນ້າທີ່ຕ້ານນາຍທຶນຈຳຫນ່າຍ ແລະຊົນຊັ້ນ ສັກດີນາບໍ່ໄດ້</u>. ເຖິງຢ່າງນັ້ນກໍ່ຕາມ, ເນື່ອງຈາກຈັກກະພັດນິຍົມແລະພວກລູກມືຂອງເຂົາ (ກຸ່ມນາຍທຶນຈຳຫນ່າຍ, ອາດຍາສິດຂຸນເສິກແລະສັກດີນາປະຕິການ) ເປັນອິດທິກຳລັງ

ປີລະປັກໃຫຍ່ ແລະ ເປັນອັນຕະລາຍກວ່າໝູ່, ສະນັ້ນ ຕ້ອງສຸມໃສ່ໂຄ່ນລົ້ມພວກເຂົາ, ຍາດເອົາເອກະລາດມາໃຫ້ຊາດ, ແກ້ໄຂຂໍ້ຂັດແຍ້ງທີ່ໜຶ່ງ, ສ່າງເງື່ອນໄຂ ເພື່ອແກ້ໄຂຂໍ້ຂັດແຍ້ງທີ່ສອງໃຫ້ໄດ້ຢ່າງເຖິງຖອງ, ປົດປ່ອຍປະຊາຊົນຜູ້ອອກແຮງງານຢ່າງສົມບູນ. ແຕ່ພ້ອມກັນນັ້ນ, ໃນຂະບວນວິວັດແຫ່ງການໂຈມຕີໂຄ່ນລົ້ມຈັກກະພັດ ແລະລູກມືນັ້ນ ກໍ່ຕ້ອງໄດ້ແກ້ໄຂບັນດາເນື້ອໃນຂອງການປະຕິວັດ ປະຊາທິປະໄຕເປັນເທື່ອລະກ້າວ, ລົບລ້າງການກົດຂີ່ຂູດຮີດ, ຄວາມບໍ່ຍຸດຕິທຳ, ເຊີດຊູຖານະເປັນເຈົ້າສັງຄົມ ຂອງປະຊາຊົນຜູ້ອອກແຮງງານ ຕົ້ນຕໍແມ່ນຊາວໄຮ່ນາ ບັນດາຊົນຊາດຂັ້ນຢ່າງບໍ່ຢຸດຢັ້ງ ຕາມບາດກ້າວເດີນອັນເໝາະສົມ ແນໃສ່ເຕົ້າໂຮມກຳລັງເທົ່າທີ່ຈະຫຼາຍໄດ້, ຜັນແຍກ ແລະ ລ້ອມປ່ຽວສັດຕູ, ສຸມປາຍຫອກເຂົ້າໃສ່ສັດຕູຕົວຕົ້ນ ໃນສະເພາະໜ້າ.

ໂດຍກຳແໜ້ນແນວທາງຍຸດທະສາດອັນລະອຽດດັ່ງກ່າວນັ້ນ, ໃນຫຼາຍສິບປີທີ່ຜ່ານມາ ພັກເຮົາກໍ່ໄດ້ຍົກສູງທັງສອງຄັນທຸງຊາດ ແລະປະຊາທິປະໄຕຕະຫຼອດມາ ແລະແກ້ໄຂສາຍພົວພັນລະຫວ່າງສອງໜ້າທີ່ຍຸດທະສາດນັ້ນຢ່າງຖືກຕ້ອງ. ຍ້ອນແນວນັ້ນ, ພັກເຮົາຈຶ່ງສາມາດປຸກລະດົມແລະ

ເຕົ້າໂຮມປະຊາຊົນຊັ້ນຄົນຕ່າງ ໆ ໃນທົ່ວປະເທດໄດ້ຢ່າງຫຼວງຫຼາຍໃຫ້ສາມັກຄີກັນລຸກຂຶ້ນຕ້ານຈັກກະພັດຜູ້ ຮຸກຮານແລະບັນດາກຸ່ມປະຕິການລູກມືຂອງເຂົາ, ແລະ ກໍ່ຍາດເອົາໄຊຊະນະອັນສົມບູນມາໃຫ້ປະເທດຊາດໄດ້ດີໃນຂຸມນີ້. ແຕ່ຄວາມຖືກຕ້ອງ, ປະດິດສ້າງຂອງແນວທາງນັ້ນບໍ່ພຽງແຕ່ຢູ່ໃນບ່ອນໄດ້ໄຈແຍກຢ່າງເລິກເຊິ່ງ ຂໍ້ຂັດແຍ້ງພື້ນຖານຂອງສັງຄົມ, ຊອກເຫັນ ຂໍ້ຂັດແຍ້ງຕົ້ນຕໍ ເພື່ອສຸມໃສ່ແກ້ໄຂ , ຫາກຍັງໄດ້ວາງເນື້ອໃນລະອຽດ ຂອງແຕ່ລະໜ້າທີ່ປະ ຕິວັດຊາດ-ປະຊາທິປະໄຕຢ່າງແທດເໝາະກັບລັກສະນະສະເພາະໃນອົງປະກອບສັງຄົມ ແລະລະດັບຂະຫຍາຍຕົວຂອງປະເທດຊາດອີກດ້ວຍ.

ປະເທດເຮົາເປັນປະເທດມີພົນລະເມືອງໜ້ອຍ , ແຕ່ພັດມີຫຼາຍຊົນຊາດ, ຊົນເຜົ່າ. ໃນປະຫວັດສາດ, ປະເທດເຮົາຍັງຖືກຕັດແບ່ງເປັນເວລາຍາວນານຍ້ອນລະບອບສັກດີນາທີ່ຍັງບໍ່ທັນລວມສູນ. ສະນັ້ນ, ສະຕິປະເທດຊາດເປັນເອກະພາບອັນໜຶ່ງອັນດຽວຈຶ່ງມີອັນຖືກຈຳກັດ; ໃນດ້ານອື່ນ, ຊົນຊັ້ນປົກຄອງ ແລະຈັກກະພັດນິຍົມ ໂດຍສະເພາະຢ່າງຍິ່ງຈັກກະພັດອາເມລິກາໄດ້ສວຍໃຊ້ຈຸດພິ ເສດດັ່ງກ່າວນັ້ນ ເພື່ອແບ່ງແຍກບັນດາຊົນຊາດໃນປະເທດເຮົາ

ດ້ວຍການລົວດເລີກຄວາມອາຄາດບາດໝາງ, ຄວາມລະແວງສົງໄສກັນທີ່ໄດ້ມີມາແຕ່ເຫິງນານແລ້ວລະຫວ່າງບັນດາຊົນຊາດ, ທັງໃຊ້ທຸກວິທີການອັນເລິກແລບໂຫດຫ້ຽມປຸກປັ່ນລັດທິຊາດນາຍທຶນ ປະຕິການເພື່ອຕ້ານຢັ້ນມາງເພການປະຕິວັດ. ດ້ວຍເຫດນັ້ນ, ເນື້ອໃນ ຂອງໜ້າທີ່ປະຕິວັດຊາດຢູ່ໃນປະເທດເຮົາຈຶ່ງບໍ່ພຽງແຕ່ຕ້ອງໂຄ່ນລົ້ມຈັກກະພັດ ຜູ້ຮຸກຮານ ແລະ ພວກລູກມື, ຍາດເອົາເອກະລາດມາໃຫ້ຊາດເທົ່ານັ້ນ, ຫາກຍັງຕ້ອງ " ສ້າງສະຕິປະເທດຊາດ ລາວເປັນອັນໜຶ່ງອັນດຽວ, ສ້າງແນວຄິດສະເໝີພາບ ລະຫວ່າງຊົນຊາດ, ປັບປຸງກ້ອນກຳລັງສາມັກຄີ ລະຫວ່າງຊົນຊາດ ແລະເຜົ່າຊົນພາຍໃນຄອບຄົວໃຫຍ່ແຫ່ງຊາດລາວອັນໜຶ່ງອັນດຽວ, ຕັ້ງໜ້າແກ້ໄຂຂໍ້ນິກຄິດຕາຍຕົວ, ຄວາມອາຄາດບາດໝາງ ແລະ ຄວາມຫ່າງໄກເຊິ່ງກັນແລະກັນລະຫວ່າງຊົນຊາດ, ເສີມຂະຫຍາຍມູນເຊື້ອອັນດີງາມແລະຄວາມສາມາດຂອງບັນດາຊົນຊາດໃນພາລະກິດຕໍ່ສູ້ກູ້ຊາດແລະສ້າງຊາດຢ່າງສຸດຂີດ"[1]. ນີ້ແມ່ນເນື້ອໃນອັນໜຶ່ງ ທີ່ສຳຄັນທີ່ສຸດ ເພື່ອປຸກລະດົມປະຊາຊົນ ບັນດາຊົນຊາດ ໃນ

1. ໂຄງການການເມືອງຂອງກອງປະຊຸມໃຫຍ່ຄັ້ງທີສອງຂອງພັກປະຊາຊົນປະຕິວັດລາວ. ປີ 1872.

ທົ່ວປະເທດໃຫ້ສາມັກຄີເປັນກຸ່ມໜຶ່ງກ້ອນດຽວ ພ້ອມກັນລຸກຂຶ້ນຕໍ່ສູ້ຕ້ານສັດຕູຂອງຊາດ.

ນັບຕັ້ງແຕ່ໄລຍະທົວທີຂອງການຕໍ່ຕ້ານຝະລັ່ງ, ພັກເຮົາໄດ້ຕັ້ງບັນຫາຂຶ້ນຢ່າງຈະແຈ້ງວ່າ ບັນຫາສາມັກຄີ ບັນດາຊົນຊາດເປັນເນື້ອໃນຍຸດທະສາດອັນໜຶ່ງ ທີ່ມີຄວາມໝາຍຕັດສິນໃນການປຸກລຸກມະຫາຊົນ, ກໍ່ສ້າງກຳລັງ, ກໍ່ສ້າງຖານທີ່ໝັ້ນຕໍ່ຕ້ານ. ດ້ວຍບັນດາແຜນນະໂຍບາຍ, ນະໂຍບາຍແລະດ້ວຍການກະທຳຕົວຈິງທີ່ແທດເໝາະ, ພັກເຮົາໄດ້ນຳພາປະຊາຊົນຕໍ່ສູ້ລົບລ້າງຄວາມອາຄາດ ບາດໝາງລະຫວ່າງຊົນຊາດໄປ່ເທື່ອລະກ້າວ, ປະຕິບັດຄວາມສະເໝີພາບທາງດ້ານການເມືອງ, ປົວແປງຊີວິດ ການເປັນຢູ່ຂອງປະຊາຊົນບັນດາຊົນຊາດໃນທຸກດ້ານໃຫ້ນັບມື້ນັບດີຂຶ້ນ. ໂດຍເລີ່ມຈາກການປຸກລຸກ ຄວາມຮັກບ້ານ ເກີດເມືອງນອນ, ຮັກຊົນຊາດ, ຊົນເຜົ່າຂອງຕົນ, ພັກເຮົາໄດ້ກ້າວໄປເຖິງປຸກລຸກປະຊາຊົນບັນດາຊົນຊາດໃຫ້ມີຈິດໃຈຊາດ, ຮັກປະເທດຊາດລວມ, ເສີມຂະຫຍາຍມູນເຊື້ອອັນດີງາມ ແລະຄວາມອາດສາມາດຂອງແຕ່ລະຊົນຊາດໃນພາລະກິດກູ້ຊາດຕ້ານສັດຕູ. ຍ້ອນແນວນັ້ນແຫຼະ, ພັກເຮົາຈຶ່ງກໍ່ສ້າງຮາກຖານປະຕິວັດຂຶ້ນໄດ້ໃນບັນດາບໍລິເວນຊົນຊາດ,

ຂະຫຍາຍຖັນແຖວພະນັກງານ, ກໍ່ສ້າງກຳລັງປະກອບ ອາວຸດ, ກໍ່ສ້າງຮາກຖານຂອງພັກ, ກໍ່ສ້າງກ້ອນກຳລັງສາມັກຄີຮ່ວມສຳພັນສູ້ຮົບອັນນັບມື້ນັບແໜ້ນແກ່ນລະຫວ່າງ ບັນດາຊົນຊາດໃນຖານທີ່ໝັ້ນຕໍ່ຕ້ານແຫ່ງຕ່າງ ໆ ໄດ້. ໃນໄລຍະຕໍ່ມາ, ເມື່ອໄດ້ມີເຂດປົດປ່ອຍອັນກວ້າງໃຫຍ່ແລະມີອຳນາດການປົກຄອງປະຕິວັດແລ້ວ, ພັກເຮົາຍິ່ງມີເງື່ອນໄຂ ແລະຄວາມອາດສາມາດ ເພື່ອຂະຫຍາຍເສດຖະກິດ, ວັດທະນະທຳ, ສຶກສາ, ສາທາລະນະສຸກຢູ່ໃນບໍລິເວນຊົນຊາດ, ເປີດກວ້າງການກໍ່ສ້າງ ແລະບຳລຸງພະນັກງານ, ບຳລຸງສ້າງຖັນແຖວປັນຍາຊົນໃນບັນດາຊົນຊາດ, ສ້າງເງື່ອນ ໄຂລົບລ້າງການໂຕນກັນລະຫວ່າງບັນດາຊົນຊາດ ໄປເທື່ອລະກ້າວ, ປະຕິບັດສິດສະເໝີພາບຢ່າງແທ້ຈິງໃນທຸກດ້ານແລະເສີມຂະຫຍາຍການປະກອບສ່ວນອັນໃຫຍ່ຫຼວງ ຂອງທຸກໆຊົນຊາດໃນທົ່ວປະເທດ ເຂົ້າໃນພາລະກິດປະຕິວັດ ອັນຍິ່ງໃຫຍ່ຂອງຊາດ. ໃນຂະບວນວິວັດ ແຫ່ງການກໍ່ສ້າງກ້ອນກຳລັງສາມັກຄີແຫ່ງຊາດນັ້ນບໍ່ວ່າເວລາໃດ ພັກເຮົາ ກໍ່ໄດ້ຢືນໝັ້ນຢູ່ໃນຫຼັກໝັ້ນທັດສະນະຂອງຊົນຊັ້ນກຳມະກອນເພື່ອແກ້ໄຂບັນຫາຊົນຊາດ, ຕ້ານບັນດາທ່າອ່ຽງ ຜິດພາດ, ທ່າອ່ຽງ "ຊາດອ້າຍໃຫຍ່" ກໍຄືທ່າອ່ຽງ "ຊາດຄັບແຄບ "

ດ້ວຍນະໂຍບາຍອັນຖືກຕ້ອງແທດເໝາະຂອງພັກ, ກຳລັງປະຕິວັດເຮົາໃນທົ່ວປະເທດໄດ້ຂະຫຍາຍຕົວຢ່າງແຂງແຮງ ແລະນັບມື້ນັບສ່ອງແສງຢ່າງເຕັມເມັດເຕັມໜ່ວຍ ເຖິງກຳລັງແຮງແຫ່ງກ້ອນກຳລັງສາມັກຄີຮ່ວມສຳພັນສູ້ຮົບລະຫວ່າງບັນດາຊົນຊາດໃນທົ່ວປະເທດ, ທັບມ້າງກົນອຸບາຍຂອງສັດຕູໃນການແບ່ງແຍກຊົນຊາດນັ້ນໄດ້ ເປັນຕົ້ນແມ່ນໄດ້ທັບມ້າງກົນອຸບາຍ ຍຸດທະສາດອັນໜຶ່ງທີ່ໂຫດຫ້ຽມ ແລະເປັນ ອັນຕະລາຍທີ່ສຸດຂອງຈັກກະພັດອາເມລິກາໃນການສວຍໃຊ້ບັນຫາຊົນຊາດ ເພື່ອສ້າງ "ກຳລັງພິເສດ" ມາຕ້ານການປະຕິວັດເຮົາຢ່າງຍາວນານນັ້ນໃຫ້ມູ່ນທະລາຍໄປ. ພວກເຮົາອາດເວົ້າໄດ້ວ່າ ການທີ່ພັກເຮົາໝູນໃຊ້ຍຸດທະສາດ ປະຕິວັດຊາດເຂົ້າໃສ່ສະພາບການຕົວຈິງຂອງປະເທດເຮົາຢ່າງປະດິດສ້າງ ດ້ວຍສອງເນື້ອໃນຄື ໂຈມຕີ, ໂຄ່ນລົ້ມຈັກກະພັດຜູ້ຮຸກຮານແລະລູກມື, ປະຕິບັດຄວາມສາມັກຄີສະເໝີພາບລະຫວ່າງຊົນຊາດນັ້ນ ມັນມີຄວາມໝາຍຕັດສິນທີ່ສຸດຕໍ່ໄຊຊະນະອັນສົມບູນຂອງຊາດເຮົາໃນອູມື້ນີ້.

ກ່ຽວກັບເນື້ອໃນປະຕິວັດປະຊາທິປະໄຕ, ໃນສະພາບທີ່ປະເທດເຮົາເປັນປະເທດກະສິກຳ ເຊິ່ງ ປະຊາຊົນສ່ວນຫຼວງຫຼາຍແມ່ນຊາວໄຮ່ນາຜູ້ອອກແຮງງານນັ້ນ, ພັກ

ເຮົາຄືວ່າ ການເວົ້າເຖິງປະຊາທິປະໄຕ ກ່ອນອື່ນໝົດ ແລະເປັນພື້ນຖານກວ່າໝູ່ແມ່ນເວົ້າເຖິງປະຊາທິປະໄຕສຳລັບຊາວໄຮ່ນາ; ເມື່ອເວົ້າເຖິງການປົດປ່ອຍຊາດກ່ອນອື່ນໝົດ ແລະເປັນພື້ນຖານກວ່າໝູ່ແມ່ນຕ້ອງປົດປ່ອຍຊາວໄຮ່ນາ. ການກະສິກຳຂອງປະເທດເຮົາ ແມ່ນກະສິກຳ ຂະໜາດນ້ອຍ, ກະແຈກກະຈາຍ, ຫຼ້າຫຼັງທີ່ສຸດ, ຂຶ້ນກັບ ທຳມະຊາດຢ່າງໜັກ; ເຄື່ອງມືຜະລິດ ແລະເຕັກນິກໃນການປູກຝັງແມ່ນປະຖົມປະຖານ ແລະຂາດເຂີນທີ່ສຸດ. ຊາວໄຮ່ນາບັນດາຊົນຊາດຂອງປະເທດເຮົາບໍ່ສະເພາະແຕ່ ໄດ້ຮັບຄວາມທຸກຍາກກາກກຳຍ້ອນລະບອບກົດຂີ່ຂູດຮີດ ຂອງສັກດີນາ ແລະກ່ອນສັກດີນາເທົ່ານັ້ນ, ຫາກຍັງຖືກກົດຂີ່ ຢ່າງໜັກໜ່ວງ ຈາກທຳມະຊາດ, ຈາກອຳນາດຟ້າແຖນແລະຮີດຄອງອັນເປື່ອຍເໜົ່າ, ເຮັດໃຫ້ເຂົາເຈົ້າຕົກຢູ່ໃນ ພາວະທຸກຍາກອຶດຢາກ, ເຈັບໄຂ້ໄດ້ປ່ວຍ, ຫຼ້າຫຼັງ ຕະຫຼອດມາ ທັງເປັນພົນສະທ້ອນເຖິງການຍືນຍົງຄົງຕົວຂອງແຕ່ລະເຊື້ອສາຍຕະກູນ, ຂອງແຕ່ລະຊົນເຜົ່າ. ດ້ວຍເຫດນັ້ນ , ຖ້າຫາກວ່າ ໃນບັນດາປະເທດ ເຊິ່ງລະບອບສັກດີນາ ໄດ້ຂະຫຍາຍຕົວແລ້ວ ຄຳຂວັນທີ່ວ່າ "ດຳເນີນການປະຕິວັດທີ່ດິນ, ຜູ້ເຮັດນາຕ້ອງມີນາເຮັດ" ເປັນຄຳຂວັນຍຸດທະສາດ

ອັນໜຶ່ງຂອງການປະຕິວັດຊາດ–ປະຊາທິປະໄຕໃນປະເທດນັ້ນ ໆ ທີ່ມີຄວາມໝາຍສຳຄັນທີ່ສຸດເພື່ອປູກລະດົມຊາວນາລຸກຂຶ້ນຕໍ່ສູ້ປະຕິວັດແລ້ວ, ເອົາສຳລັບປະເທດເຮົາ ໄປຄຽງຄູ່ກັບຄວາມຮຽກຮ້ອງຕ້ອງການໃນການລົບລ້າງບັນດາ ຮູບການຂູດຮີດຂອງຊົນຊັ້ນສັກດິນາ, ຄຳຂວັນທີ່ວ່າ "ສາມັກຄີຕໍ່ສູ້, ຂະຫຍາຍການຜະລິດ, ປ່ຽນແປງຊີວິດການເປັນຢູ່ທາງດ້ານວັດຖຸ ແລະຈິດໃຈ" ເປັນຄຳຂວັນທີ່ສະແດງອອກຢ່າງຄົບຖ້ວນເຖິງຄວາມມຸ່ງມາດປາຖະໜາທີ່ມີມາ ແຕ່ເຫິງນານ ແລະຮີບດ່ວນກວ່າໝູ່ຂອງຊາວໄຮ່ນາບັນດາຊົນຊາດໃນປະເທດເຮົາ.

ເພາະສະນັ້ນ, ໜ້າທີ່ປະຕິວັດປະຊາທິປະໄຕຢູ່ໃນປະເທດເຮົາ ຈຶ່ງຕ້ອງໄດ້ມີສອງເນື້ອໃນຄືປະຕິບັດການດັດແປງປະຊາທິປະໄຕ, ລົບລ້າງການຂູດຮີດຂອງສັກດິ ນາ ແລະຂະຫຍາຍການຜະລິດ, ປ່ຽນແປງຊີວິດການເປັນຢູ່ ໃນທຸກດ້ານຂອງຊາວໄຮ່ນາໃຫ້ດີຂຶ້ນ. ເນື້ອໃນທີ່ໜຶ່ງນັ້ນ ຈະຕ້ອງເຮັດເທື່ອລະກ້າວໂດຍອີງຕາມການຂະຫຍາຍຕົວຂອງການປະຕິວັດ ແລະດ້ວຍວິທີການຕໍ່ສູ້ອັນເໝາະສົມ ອີງໃສ່ຈຸດພິເສດແຫ່ງການພົວພັນລະຫວ່າງຊາວໄຮ່ນາ ກັບສັກ ດິນາໃນແຕ່ລະບໍລິເວນ, ໃນແຕ່ລະຊົນຊາດ ຂອງປະເທດ

ເຮົາ ເພື່ອຈະສາມາດເຕົ້າໂຮມກຳລັງ ຢ່າງກວ້າງຂວາງ ຫຼວງຫຼາຍ, ສຸມປາຍຫອກຕໍ່ສູ້ ເຂົ້າໃສ່ສັດຕູໂຕອັນຕະລາຍກວ່າໝູ່. ສ່ວນເນື້ອໃນທີ່ສອງນັ້ນແມ່ນຕ້ອງໄດ້ເຮັດ ໂດຍທັນທີ, ເຮັດກ່ອນໝູ່ໃນຂະບວນຂົນຂວາຍປະຕິວັດ. ໃນເວລາທຳອິດແມ່ນດຳເນີນໄປໂດຍຜ່ານການຊ່ວຍເຫຼືອ ປະຊາຊົນເພີ່ມພູນຜະລິດຜົນ, ປິ່ນປົວພະຍາດແລະສອນໜັງສືໃຫ້ປະຊາຊົນ, ສ້າງແບບແຜນດຳລົງຊີວິດແບບໃໝ່...ເພື່ອເດີນເຂົ້າສູ່ການປູກລູກ ແລະຈັດຕັ້ງມະຫາຊົນຢູ່ຊົນນະ ບົດໃຫ້ສາມັກຄີລຸກຂຶ້ນຕໍ່ສູ້; ໃນເມື່ອໄດ້ມີເຂດປົດປ່ອຍແລ້ວແມ່ນໃຊ້ກົງຈັກປົກຄອງ ແລະບັນດາອົງການຈັດຕັ້ງມະຫາຊົນປະຕິວັດເຂົ້າໃນການປຸກລະດົມແລະຊຸກຍູ້ການຜະລິດ, ແນະນຳ ແລະຊ່ວຍເຫຼືອປະຊາຊົນແກ້ໄຂບັນຫາຕ່າງ ໆ ເຊັ່ນເຄື່ອງມືກະສິກຳ, ແຮງລາກແກ, ແນວປູກ, ສ້າງຊົນລະປະທານ, ຈັດຕັ້ງປະຊາຊົນໃຫ້ສາມັກຄີຊ່ວຍເຫຼືອກັນ ໃນການເພີ່ມພູນຜະລິດຜົນ, ດັດແປງເຕັກນິກໃນການ ປູກຝັງແລະອື່ນ ໆ... ໄປຄຽງຄູ່ກັນນັ້ນກໍ່ຂະຫຍາຍວັດທະນະທຳ, ສຶກສາ, ສາທາລະນະສຸກເພື່ອປົວແປງຊີວິດການເປັນຢູ່ ໃນທຸກດ້ານຂອງຊາວໄຮ່ນາໃຫ້ດີຂຶ້ນເທື່ອລະກ້າວ.

ການທີ່ພັກເຮົາສາມາດວາງ ແລະຢືນຢັນເນື້ອໃນ

ສອງປະການດັ່ງກ່າວນັ້ນໄດ້ ແມ່ນເກີດຈາກຜົນ ຂອງ ຂະບວນວິວັດແຫ່ງການຊອກຮູ້, ຄົ້ນຄວ້າ, ຖອດຖອນບົດຮຽນຈາກການປຸກລຸກທົດລອງຫຼາຍຂັ້ນໃນຫຼາຍບໍລິເວນຊົນນະບົດຂອງຊົນຊາດທີ່ແຕກຕ່າງກັນ. ອັນນີ້ ກໍ່ແມ່ນການປະດິດສ້າງອັນໜຶ່ງຂອງພັກເຮົາໃນການໝູນໃຊ້ຍຸດທະສາດຂອງການປະຕິວັດຊາດ-ປະຊາທິປະໄຕຢູ່ໃນປະເທດເຮົາ; ມັນໄດ້ເຮັດໃຫ້ຊາວໄຮ່ນາບັນດາຊົນຊາດເຮົາ ນັບມື້ນັບເຊື່ອໝັ້ນ, ຜູກພັນກັບການປະຕິວັດຢ່າງສະໜິດແໜ້ນ ແລະ ຕັດສິນໃຈໄປນຳການປະຕິວັດຈົນເຖິງທີ່ສຸດ

ຢູ່ໃນເຂດກວດກາຂອງສັດຕູ, ພາຍໃຕ້ລະບອບລ່າເມືອງຂຶ້ນແບບໃໝ່ຂອງອາເມລິກາ, ກຸ່ມປົກຄອງ ລູກມືຂອງເຂົາໄດ້ອອກແຮງປາບປາມ, ໜີບຮັດປະຊາຊົນແລະໂດຍອີງໃສ່ອະພິສິດ, ຜົນປະໂຫຍດພິເສດຂອງພວກເຂົາ, ພວກເຂົານັບມື້ນັບແຊກຊຶມ, ທຳລາຍພື້ນຖານເສດຖະກິດແຫ່ງຊາດ, ອັນເປັນການຂົ່ມຂູ່ຢ່າງຮ້າຍແຮງບໍ່ສະ ເພາະແຕ່ຕໍ່ຊີວິດການເປັນຢູ່ຂອງປະຊາຊົນຜູ້ອອກແຮງງານ ເທົ່ານັ້ນ, ຫາກຍັງເປັນການຂົ່ມຂູ່ຢ່າງຮ້າຍແຮງຕະຫຼອດ ເຖິງຊົນຊັ້ນອື່ນ ໆ ອີກດ້ວຍ. ຍ້ອນແນວນັ້ນ, ການຕໍ່ສູ້ທວງເອົາສິດເສລີພາບປະຊາທິປະໄຕ, ປົວແປງຊີວິດການເປັນຢູ່ ,

<u>ລົບລ້າງທຸກອະພິສິດ ແລະຜົນປະໂຫຍດພິເສດຂອງກຸ່ມນາຍທຶນຈຳໜ່າຍ ອາດຍາສິດຂຸນເສິກແລະ ສັກດິນາປະຕິການ</u> ຈຶ່ງເປັນຄວາມມຸ່ງມາດປາ ຖະໜາອັນແຮງກ້າ, ເປັນເນື້ອໃນຕໍ່ສູ້ອັນສຳຄັນທີ່ມີຄວາມດຶງດູດປະຊາຊົນ ຊັ້ນຄົນຕ່າງ ໆໃນເຂດຂອງຝ່າຍກົງກັນຂ້າມຢ່າງແຂງແຮງ,ແລະມີບາງຄັ້ງມັນໄດ້ສ້າງເປັນກະແສສູງປະຕິວັດຂອງມະຫາຊົນຢູ່ໃນຕົວເມືອງຕ່າງ ໆ ໂດຍສະເພາະແມ່ນໃນໄລຍະ ລຸກຮືຂຶ້ນຍຶດອຳນາດການປົກຄອງ ປີ ໑໙໗໕ ອັນໄດ້ປະກອບສ່ວນ ຢ່າງໃຫຍ່ຫຼວງເຂົ້າໃນໄຊຊະນະຂອງການປະຕິວັດ.

ບັນດາເນື້ອໃນຂອງການປະຕິວັດຊາດ ແລະ ຂອງການປະຕິວັດປະຊາທິປະໄຕຄັ້ງທີ່ຜ່ານມາເທິງນັ້ນ ມີ ການພົວພັນກັນຢ່າງແໜ້ນແຟ້ນແລະຊ້ອນເຂົ້າກັນເປັນເອກະພົບອັນໜຶ່ງອັນດຽວທີ່ຄົບຖ້ວນບໍລິບູນ ດ້ວຍວ່າ ແຕ່ລະເນື້ອໃນນັ້ນ <u>ດ້ານໜຶ່ງມັນມີລັກສະນະຊາດ</u>, <u>ອີກດ້ານໜຶ່ງມັນມີລັກສະນະປະຊາທິປະໄຕທີ່ແນ່ນອນ</u>. ການແກ້ໄຂເນື້ອໃນຊາດເປັນການສ້າງເງື່ອນໄຂໃຫ້ການແກ້ໄຂເນື້ອໃນປະຊາທິປະໄຕ, ແລະການແກ້ໄຂເນື້ອໃນປະຊາທິປະໄຕໄດ້ດີເທົ່າໃດກໍ່ເປັນການສ້າງເງື່ອນໄຂໃຫ້ການແກ້ໄຂເນື້ອໃນຊາດໄດ້ດີເທົ່ານັ້ນ. ຍ້ອນແນວນັ້ນ, ຈຶ່ງບໍ່ອາດຕັ້ງບັນຫາທີ່ວ່າ ແກ້

ໄຂ "ຊາດກ່ອນ, ປະຊາທິປະໄຕຕາມຫຼັງ" ຫຼື " ຊາດ ແມ່ນສຸດກົກສຸດປາຍ, ສ່ວນປະຊາທິປະໄຕແມ່ນມີລະດັບ". ໃນເວລາພວກເຮົາສຸມໃສ່ໜ້າທີ່ໂຄ່ນລົ້ມຈັກກະພັດອາເມລິກາ ພູຮຸກຮານ ແລະກຸ່ມນາຍທຶນຈຳໜ່າຍ, ອາດຍາສິດຊຸມເສິກ ແລະສັກດິນາປະຕິການນັ້ນ ແມ່ນເພື່ອແກ້ໄຂ ຄວາມຮຽກຮ້ອງຕ້ອງການອັນຮີບດ່ວນກວ່າໝູ່ທັງດ້ານຊາດ ແລະທັງດ້ານປະຊາທິປະໄຕພ້ອມ ໆ ກັນ, ດ້ວຍວ່າ ໃນເປົ້າໝາຍເຫຼົ່ານີ້ ທັງແມ່ນພວກປຸ້ນຊາດ ແລະຂາຍຊາດ ທັງແມ່ນອິດທິກຳລັງກົດຂີ່ຂູດຮີດທີ່ໃຫຍ່ກວ່າໝູ່ຕໍ່ປະຊາຊົນເຮົາ. ໃນເມື່ອວາງແຜນນະໂຍບາຍ "ຕີສັດຕູໃຫ້ຖອຍໄປເທື່ອລະກ້າວ, ໂຄ່ນລົ້ມສັດຕູເປັນແຕ່ລະພາກສ່ວນ, ຍາດເອົາໄຊຊະນະເທື່ອລະອັນ "ແມ່ນເວົ້າເຖິງ" ລະດັບ " ຕໍ່ສູ້ຂອງທັງ ໔ ໜ້າທີ່ຊາດ ແລະປະຊາທິປະໄຕ ໃນແຕ່ລະໄລຍະຕົວຈິງ. ໃນດ້ານອື່ນ ດ້ວຍວ່າ ບັນຫາຊາດ ແລະປະຊາທິປະໄຕເວລາໃດກໍ່ຕິດພັນກັບບັນຫາຊົນຊັ້ນ, ສະນັ້ນ ໃນເວລາແກ້ໄຂບັນຫາລະອຽດຕົວຈິງ ຈະຕ້ອງໄດ້ຜ່ານການ ວິເຄາະວິໄຈ ສາຍພົວພັນຊົນຊັ້ນໃນພຶດຕິກຳຂອງສັງຄົມຢ່າງລະອຽດລະອໍ ເພື່ອຫຼີກເວັ້ນຈາກຄຳພີຕາຍຕົວແບບກົນຈັກ, ໂດຍສະເພາະແມ່ນໃນສະພາບທີ່ການພົນແຍກຊົນຊັ້ນໃນສັງ

ຄືນຂອງປະເທດເຮົາບໍ່ທັນຂະຫຍາຍຕົວຢ່າງເລິກເຊິ່ງ ເຖິງຢ່າງໃດກໍ່ຕາມ, ໃນທີ່ສຸດໜ້າທີ່ຊາດ ແລະໜ້າທີ່ປະຊາທິປະໄຕ ຕ້ອງໄດ້ເຮັດໃຫ້ສຳເລັດ ໂດຍພື້ນຖານພ້ອມໆກັນ,ໝາຍຄວາມວ່າ ໃນເມື່ອປົດປ່ອຍປະເທດຊາດ,ຍາດເອົາເອກະລາດມາໃຫ້ຊາດໄດ້ແລ້ວ ອຳນາດການປົກຄອງທັງໝົດໃນທົ່ວປະເທດກໍ່ຕ້ອງມາມີປະຊາຊົນໃນເວລາດຽວກັນນັ້ນໂລດ.

ໃນເວລາຍົກສູງຄັນທຸງຊາດ-ປະຊາທິປະໄຕ ຕ້ອງຮູ້ຈັກຜັນແຍກ ລະຫວ່າງຍຸດທະສາດ ກັບຍຸດໂທບາຍ, ລະຫວ່າງໜ້າທີ່ພື້ນຖານ ກັບຈຸດໝາຍສະເພາະໜ້າ, ແຕ່ອັນສຳຄັນກວ່າໝູ່ໝົດແມ່ນບໍ່ອະນຸຍາດໃຫ້ຫຼົງລືມ ທາດແທ້ຊົນຊັ້ນຂອງການປະຕິວັດ ແລະວັດຖຸປະສົງສຸດທ້າຍຂອງມັນເປັນອັນຂາດ ຈະແມ່ນໃນເວລາໃດກໍ່ຕາມ. ຍອນແນວນັ້ນ, ອີງຕາມຄວາມຮຽກຮ້ອງຕ້ອງການຂອງຍຸດໂທບາຍ ໃນແຕ່ລະໄລຍະ, ມີບາງຄັ້ງບາງຄາວ ພວກເຮົາບໍ່ຍົກບົດບາດການນຳພາຂອງພັກອອກຢ່າງເປີດເຜີຍ, ບໍ່ເວົ້າເຖິງລັດທິສັງຄົມນິຍົມ, ແຕ່ຊ້ຳພັດເວົ້າຫຼາຍເຖິງສັນຕິພາບ, ເປັນກາງ, ຄວາມຖືກຕ້ອງປອງດອງຊາດ, ລັດຖະບານປະສົມແລະອື່ນໆ...ແຕ່ບັນດາບັນຫາທີ່ມີລັກສະນະຫຼັກການ ຂອງ

ການປະຕິວັດຊາດ-ປະຊາທິປະໄຕປະຊາຊົນເຊັ່ນການກໍ່ຕັ້ງສິດນຳພາຂອງພັກ ຂອງຊົນຊັ້ນກຳມະກອນຕໍ່ການປະຕິວັດ, ການກໍ່ສ້າງພັນທະພາບກຳມະກອນ-ຊາວນາ, ການສ້າງກຳລັງປະກອບອາວຸດປະຊາຊົນແລະອຳນາດການປົກຄອງ ປະຊາຊົນໂດຍແມ່ນພັກ ເປັນຜູ້ນຳພານັ້ນລ້ວນແຕ່ຕ້ອງໄດ້ ດຳເນີນໄປຕັ້ງແຕ່ຫົວທີໂລດ ແລະຕ້ອງໄດ້ຮັບການປັບປຸງ, ຂະຫຍາຍຢ່າງບໍ່ຢຸດຢັ້ງ ໃນຂະບວນວິວັດ ແຫ່ງການປະຕິວັດ, ແລະໃນເມື່ອມີເງື່ອນໄຂພັກຕ້ອງລົງມືສ້າງບັນດາຮາກຖານເສດຖະກິດ, ວັດທະນະທຳປະຊາທິປະໄຕໂດຍທັນທີ ເພື່ອກຽມປະຖົມປັດໄຈອັນຈຳເປັນໃຫ້ແກ່ສັງຄົມນິຍົມ.

ທັງໝົດທີ່ກ່າວມາເທິງນັ້ນ ແມ່ນບົດຮຽນຕົ້ນຕໍຂອງພັກເຮົາ ເຊິ່ງຖອດຖອນມາໄດ້ຈາກການໝູນໃຊ້ ຢ່າງສຳເລັດຜົນແນວທາງປະຕິວັດຊາດ-ປະຊາທິປະໄຕໃນ ໓໐ ປີທີ່ຜ່ານມາ. ປະຈຸບັນນີ້ ການປະຕິວັດເຮົາໄດ້ຫັນໄປສູ່ ໄລຍະໃໝ່-ໄລຍະປະຕິວັດສັງຄົມນິຍົມ, ເນື້ອໃນຂອງໜ້າທີ່ປະຕິວັດກໍ່ໄດ້ມີອັນປ່ຽນແປງ, ຄັນທຸງຊາດ -ປະຊາທິປະໄຕໄດ້ກາຍມາເປັນຄັນທຸງຊາດສັງຄົມນິຍົມ, ແຕ່ຄວາມໝາຍຂອງບັນດາບົດຮຽນກ່ຽວກັບການໝູນໃຊ້ແນວທາງ ຍຸດທະສາດຂອງພັກເຮົານັ້ນ ກໍ່ຍັງຄົງຮັກສາຄຸນຄ່າເດີມ ຂອງມັນ

ໄວ້ຢູ່ ດ້ວຍວ່າທາດແທ້ຂອງຄັນທຸງຊາດ-ປະຊາທິປະໄຕ ທີ່ພັກເຮົາໄດ້ຍົກຂຶ້ນຕະຫຼອດໃນ ໓໐ ປີທີ່ຜ່ານມາ ນັ້ນ ແມ່ນທາດແທ້ຂອງຄັນທຸງຊາດ-ປະຊາທິປະໄຕຂອງຊົນຊັ້ນກຳມະກອນ ຕາມທິດກ້າວຂຶ້ນສັງຄົມນິຍົມນັ້ນເອງ. ບັນດາປະຖົມປັດໄຈທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ແນວຄິດ...ທີ່ພັກເຮົາໄດ້ສ້າງຂຶ້ນພາຍໃຕ້ຄັນທຸງ ດັ່ງກ່າວນັ້ນ ມາໃນຊຸມນີ້ ກໍ່ຍັງຄົງເປັນພື້ນຖານອັນໜັກແໜ້ນ ໃຫ້ແກ່ການກໍ່ສ້າງລະບອບສັງຄົມນິຍົມຢູ່ໃນປະເທດເຮົາ. ໂດຍໝູນໃຊ້ບົດຮຽນເຫຼົ່ານັ້ນໃສ່ເງື່ອນໄຂໃໝ່, ດ້ວຍຈິດໃຈປະຕິວັດສູດກົກສູດປາຍ ແລະວິທະຍາສາດຂອງລັດທິມາກ-ເລນິນ, ແນວໃດພວກເຮົາກໍ່ຈະຍາດເອົາໄຊຊະນະໃນໄລຍະໃໝ່ມາໄດ້ຢ່າງແນ່ນອນ.

III - ກໍ່ສ້າງກອງກຳລັງພັນທະພາບກຳມະກອນ-ຊາວນາອັນແໜ້ນແກ່ນ ພາຍໃຕ້ການນຳພາຂອງພັກ.

ພັນທະພາບກຳມະກອນ-ຊາວນາ ເປັນ ຫຼັກການຍຸດທະສາດອັນໜຶ່ງຂອງລັດທິມາກ-ເລນິນ, ເປັນກົດເກນທົ່ວໄປອັນໜຶ່ງ ສຳລັບທຸກການປະຕິວັດໂດຍແມ່ນຊົນຊັ້ນກຳມະກອນເປັນຜູ້ນຳພາ. ຊາວນາກວມຈຳນວນ ຫຼວງຫຼາຍໃນໝູ່ປະຊາຊົນ, ເປັນຜູ້ຜະລິດວັດຖຸສິ່ງຂອງໃຫ້ ສັງຄົມໂດຍກົງ, ແຕ່ເຂົາເຈົ້າພັດຖືກກົດຂີ່ຂູດຮີດຢ່າງໜັກໜ່ວງ, ສະນັ້ນ ເຂົາເຈົ້າຈຶ່ງບໍ່ພຽງແຕ່ມີກຳລັງອັນເຂັ້ມແຂງ ໃຫຍ່ໂຕ, ຫາກຍັງມີຈິດໃຈປະຕິວັດອັນອຸດົມຮັ່ງມີ ແລະ ເປັນ " ພັນທະມິດທຳມະຊາດ, ຍາວນານທີ່ເຊື່ອຖືໄດ້ກວ່າໝູ່" ຂອງຊົນຊັ້ນກຳມະກອນ-ຊົນຊັ້ນນຳພາການປະຕິວັດ. ດັ່ງທີ່ເລນິນໄດ້ກ່າວ : " .... ການປະຕິວັດທີ່ປະກອບດ້ວຍຊົນຊັ້ນກຳມາຊີບ ແລະ ຊາວນາເທົ່ານັ້ນ, ຈຶ່ງຈະເປັນການປະຕິວັດ " ປະຊາຊົນ " ແລະ ຈຶ່ງຈະດູດດຶງປະຊາຊົນສ່ວນ ຫຼວງຫຼາຍ ເຂົ້າໃນຂະບວນການໄດ້ຢ່າງແທ້ຈິງ.

... ຄັນບໍ່ມີການຮ່ວມສຳພັນນີ້ ກໍ່ບໍ່ອາດມີປະຊາທິປະໄຕ

ອັນໝັ້ນຄົງໄດ້, ບໍ່ອາດຈະດັດສ້າງສັງຄົມນິຍົມໄດ້ " 1 .
ຍ້ອນແນວນັ້ນ, ບັນຫາເສີມຂະຫຍາຍຄວາມອາດສາມາດປະຕິວັດອັນໃຫຍ່ ຫຼວງ ຂອງຊາວນາຢ່າງສູດຂີດ, ກໍ່ສ້າງກ້ອນກຳລັງພັນທະພາບກຳມະກອນ-ຊາວນາຢ່າງແໜ້ນແກ່ນພາຍໃຕ້ການນຳພາຂອງຊົນຊັ້ນກຳມະກອນຈຶ່ງເປັນ ຫຼັກມູນ ອັນໜຶ່ງຂອງລັດທິມາກ-ເລນິນ, ເປັນເງື່ອນໄຂຮັບປະກັນ ອັນໜຶ່ງ ທີ່ຂາດບໍ່ໄດ້ໃຫ້ແກ່ໄຊຊະນະອັນແນ່ນອນຂອງການປະຕິວັດຊາດ-ປະຊາທິປະໄຕປະຊາຊົນ ກໍ່ຄືຂອງການປະຕິວັດສັງຄົມນິຍົມ .

ສຳລັບ ປະເທດເຮົາ,ບັນຫາພັນທະພາບກຳມະກອນ-ຊາວນາ ຍິ່ງມີຄວາມໝາຍສຳຄັນເປັນພິເສດ. ດ້ວຍເສດຖະກິດກະສິກຳຂະໜາດນ້ອຍ, ຫຼ້າຫຼັງທີ່ສຸດ ພາຍໃຕ້ລະບອບການປົກຄອງຂອງພວກລ່າເມືອງຂຶ້ນ ແລະສັກດີນາ,ຊາວໄຮ່ນາຂອງປະເທດເຮົາທີ່ກວມຈຳນວນກວ່າ ໙໐ % ຂອງພົນລະເມືອງໃນທົ່ວປະເທດ ແມ່ນມີຊີວິດການເປັນຢູ່ລຳບາກກາກກຳ, ມືດມົນທີ່ສຸດ; ເຂົາເຈົ້າເຄີຍໄດ້ລຸກຂຶ້ນກຳອາວຸດຕ້ານພວກລ່າເມືອງຂຶ້ນຈັກກະພັດ ແລະລູກມືຕົງ ຫຼາຍຄັ້ງ ຫຼາຍທົບ. ຍ້ອນແນວນັ້ນ, " ຊາວໄຮ່ນາເປັນກຳລັງ ການຜະ

1 ເລນິນ, ນິພົນເລືອກເຟັ້ນ, ພາສາຫວຽດນາມ, ສຳນັກພິມຈ້າພ່າງ " ຊືເທິດ ", ຮ່າໂນ້ຍ, ພາກທີ່ໜຶ່ງ, ໜ້າ 206.

ລົດ ແລະປະຕິວັດອັນໃຫຍ່ຫຼວງ ທີ່ສຸດໃນສັງຄົມ, ແມ່ນອັນໜຶ່ງໃນສອງກຳລັງພື້ນຖານຂອງການປະຕິວັດ ຂອງປະເທດເຮົາ"[1]. ພັກເຮົາ, ເຖິງວ່າໄດ້ກຳເນີດຂຶ້ນໃນເງື່ອນໄຂຂອງປະເທດໜຶ່ງທີ່ດ້ອຍພັດທະນາ, ການພັນແຍກຊົນຊັ້ນໃນສັງຄົມ ຍັງບໍ່ທັນເລິກເຊິ່ງເທື່ອ ແລະ ຊົນຊັ້ນກຳມະກອນຍັງອ່ອນນ້ອຍ, ແຕ່ກໍ່ສາມາດກຳບົດບາດເປັນຜູ້ນຳພາແຕ່ຜູ້ດຽວຕໍ່ການປະຕິວັດຂອງປະເທດເຮົາຢ່າງໝັ້ນຄົງ ແລະ ໄດ້ພາການປະຕິວັດກ້າວໄປສູ່ໄຊຊະນະອັນສົມບູນໄດ້ຄືໃນຊຸມມື້ນີ້. ອັນນັ້ນ ແມ່ນຍ້ອນ ຫຼາຍສາຍເຫດ, ແຕ່ສາຍເຫດພື້ນຖານ ອັນໜຶ່ງແມ່ນຍ້ອນພັກເຮົາສາມາດ ສ້າງກ້ອນກຳລັງພັນທະພາບກຳມະກອນ-ຊາວນາອັນໜັກແໜ້ນຂຶ້ນໄດ້." ທຸກໄຊຊະນະຂອງການປະຕິວັດ ແລະການທີ່ພວກເຮົາໄດ້ສາມາດ ກໍ່ສ້າງປັບປຸງກຳລັງປະຕິວັດໃຫ້ນັບມື້ນັບເຕີບໃຫຍ່ ໃນໄລຍະ ໔໕ ປີມານີ້ ລ້ວນແຕ່ຕິດແໜ້ນກັບການທີ່ພັກເຮົາໄດ້ສາມາດກໍ່ສ້າງ ແລະປັບປຸງພັນທະພາບກຳມະກອນ-ຊາວນາຂຶ້ນ ໄດ້ ແລະສາມາດປຸກລູກມະຫາຊົນຊາວໄຮ່ນາບັນດາຊົນຊາດລຸກຂຶ້ນຕໍ່ສູ້ຕ້ານຈັກກະພັດຜູ້ຮຸກຮານ, ພວກລູກມື້ຜູ້ຂາຍຊາດ ແລະກໍ່ສ້າງຊີວິດໃໝ່"[2].

1. ໂຄງການການເມືອງຂອງກອງປະຊຸມໃຫຍ່ຄັ້ງທີສອງຂອງພັກປະຊາຊົນປະຕິວັດລາວ, ປີ 1972.
2. ລາຍງານກ່ຽວກັບໂຄງການການເມືອງ ຕໍ່ກອງປະຊຸມໃຫຍ່ຄັ້ງທີສອງຂອງພັກ, ປີ 1972

ໃນການກໍ່ສ້າງ ພັນທະພາບກຳມະກອນ-ຊາວນາ, ບັນຫາພື້ນຖານ ກ່ອນອື່ນຫມົດແມ່ນພັກ ຂອງຊົນຊັ້ນກຳມະກອນຕ້ອງມີແນວທາງການເມືອງອັນຖືກຕ້ອງ ເພື່ອປຸກລຸກຊາວນາເຮັດການປະຕິວັດ. ແນວທາງດັ່ງກ່າວນັ້ນ ຕ້ອງຕອບສະຫນອງຄວາມມຸ່ງມາດປາຖະຫນາອັນແຮງກ້າ ແລະ ຜົນປະໂຫຍດອັນເປັນຕາຍຂອງຊາວໄຮ່ນາ ຕາມທັດສະນະ *selon le point de vue* *et la plate-forme de la classe ouvrière* ແລະ ຫຼັກຫມັ້ນຂອງຊົນຊັ້ນກຳມະກອນ. ຊາວນາເປັນກຳລັງປະຕິວັດອັນໃຫຍ່ ຫຼວງ ກຳລັງຫນຶ່ງ, ແຕ່ຊາວນາບໍ່ເປັນຕົວແທນໃຫ້ແກ່ແບບວິທີການຜະລິດອັນຫນຶ່ງຕ່າງຫາກ, ແລະຍ້ອນແນວນັ້ນ ຊາວນາກໍ່ບໍ່ອາດຈະມີແນວທາງການເມືອງທີ່ເປັນເອກະລາດ ເພື່ອປົດປ່ອຍຕົນເອງດ້ວຍຕົນເອງໄດ້. ມີແຕ່ຊົນຊັ້ນກຳມະກອນ ແລະ ກອງລະວັງຫນ້າ ຂອງມັນ *sa plate-forme révolutionnaire ferme et radicale* ເຊິ່ງມີ ຫຼັກຫມັ້ນປະຕິວັດອັນຫນຽວແຫນນ, ສຸດກົກສຸດປາຍ ແລະ ມີທິດສະດີປະຕິວັດ, ມີວິທະຍາສາດຂອງລັດທິມາກ-ເລນິນເທົ່ານັ້ນຈຶ່ງຈະສາມາດສົມທົບລະຫວ່າງຜົນປະໂຫຍດພື້ນຖານຂອງຊົນຊັ້ນຕົນກັບຜົນປະໂຫຍດພື້ນຖານ ຂອງຊາວນາ ແລະ ຂອງຫມົດທັງຊາດໄດ້, ແລະບົນພື້ນຖານ ດັ່ງກ່າວນັ້ນ ຈຶ່ງວາງຈຸດຫມາຍ ແລະ ວິທີຕໍ່ສູ້ປະຕິວັດອອກໄດ

ຢ່າງຖືກຕ້ອງ, ຈາກນັ້ນ ຈຶ່ງຈະສາມາດປົດປ່ອຍຊາດຢ່າງສົມບູນ, ປົດປ່ອຍຊາວນາໄດ້ຢ່າງເຖິງຖອງ. ປະຫວັດສາດແຫ່ງການຕໍ່ສູ້ຂອງປະຊາຊົນເຮົາ ໃນ ໔ ສັດຕະວັດທີ່ຜ່ານມາ ກໍ່ຄືພຶດຕິກຳ ໃນ ໓໐ ປີ ແຫ່ງການປະຕິວັດຊາດ-ປະຊາທິປະໄຕ ໂດຍແມ່ນພັກເຮົານຳພານັ້ນ ໄດ້ຢືນຢັນຂໍ້ນີ້ແລວ.

ໃນຂະບວນວິວັດ ແຫ່ງການປຸກລຸກຊາວນາ, ປະຕິບັດພັນທະພາບກຳມະກອນ-ຊາວນາຢູ່ໃນປະເທດເຮົາ, ພັກເຮົາໄດ້ຮັບຮູ້ສະເໝີວ່າ ຊາວໄຮ່ນາພຽບພອມໄປດວຍຈິດໃຈປະຕິວັດ, ແຕ່ ມີແຕ່ເດີນໄປນຳຊົນຊັ້ນ ກຳມະກອນ ແລະ ຍອມຢູ່ພາຍໃຕ້ການນຳພາຂອງພັກຂອງຊົນຊັ້ນກຳມະກອນເທົ່ານັ້ນ ເຂົາຈຶ່ງຈະກາຍເປັນກຳລັງປະຕິວັດ ອັນຍິ່ງໃຫຍ່ໄດ້ ແລະ ພອມກັບຊົນຊັ້ນກຳມະກອນ ກາຍເປັນກອງກຳລັງຫຼວງ ທີ່ເຂັ້ມແຂງແຮງກ້າຂອງການປະຕິວັດ. ໃນສະພາບແວດລອມ ຂອງປະເທດເຮົາ ເຊິ່ງເປັນປະເທດເມືອງຂຶ້ນ ແລະ ສັກດີນາ, ຊົນຊັ້ນກຳມະກອນ ຍັງອ່ອນນອຍ, ຊາວໄຮ່ນາເປັນກຳລັງການຜະລິດຕົ້ນຕໍໃນສັງຄົມ, ຫຼູກການຈັດຕັ້ງ ແລະ ຫຼູກກຳລັງປະຕິວັດ ລວນແຕ່ປະກອບດວຍຊາວໄຮ່ນາເປັນສ່ວນຫຼວງຫຼາຍ . ສະນັ້ນ, ຖ້າຫາກ

ບໍ່ຢືນຢັນບົດບາດການນຳພາຂອງຊົນຊັ້ນກຳມະກອນ ຕໍ່ຊາວໄຮ່ນາ ຢ່າງຈະແຈ້ງຕັ້ງແຕ່ຫົວທີໂລດ, ບໍ່ຢືນຢັນລະບົບແນວຄິດ ທີ່ແນ່ແທ້ອັນດຽວຄື ລະບົບແນວຄິດມາກ-ເລນິນແລ້ວ ກໍ່ຈະໄປຜິກອອກຈາກເສັ້ນທາງປະຕິວັດທີ່ແທ້ຈິງ, ຈະເອົາຕົວອອກຫ່າງຈາກລັດທິມາກ-ເລນິນ, ເອົາຕົວອອກຫ່າງຈາກລັດທິສັງຄົມວິທະຍາສາດ. ອັນນີ້ ເປັນຂໍ້ໜຶ່ງທີ່ສຳຄັນທີ່ສຸດ ເຊິ່ງຖອດຖອນມາໄດ້ຈາກພຶດຕິກຳແຫ່ງການຕໍ່ສູ້ປະຕິວັດຂອງປະເທດເຮົາ.

ແມ່ນຍ້ອນເລີ່ມຈາກ ຫຼັກໝັ້ນ ທັດສະນະ ຂອງຊົນຊັ້ນກຳມະກອນນັ້ນເອງ, ພັກເຮົາຈຶ່ງໄດ້ຕີລາຄາ ແລະແກ້ໄຂບັນຫາຊາວໄຮ່ນາຢູ່ໃນປະເທດເຮົາຢ່າງຖືກຕ້ອງ ແລະ ປະດິດສ້າງ, ທັງເປັນໄປຕາມກົດເກນທົ່ວໄປ ທັງສອດຄ່ອງກັບຈຸດພິເສດຂອງສັງຄົມປະເທດເຮົາ. ການປົດປ່ອຍຊາວໄຮ່ນາ ຕ້ອງບົນພື້ນຖານການປົດປ່ອຍຊາດ, ແຕ່ ຊາວໄຮ່ນາໃນປະເທດເຮົາແມ່ນຊາວໄຮ່ນາ ບັນດາຊົນຊາດ, ຊົນເຜົ່າໂຮມເຂົ້າກັນ ເຊິ່ງສາຍພົວພັນລະຫວ່າງ ບັນດາຊົນຊາດຍັງສັບສົນຢູ່. ຄຽງຂ້າງກັບການກົດຂີ່ຂູດຮີດຂອງພວກຊັ້ນເທິງ ໃນແຕລະຊົນຊາດຊົນເຜົ່ານັ້ນ, ພວກຈັກກະພັດ ແລະ ສັກດີນາຍັງໄດ້ສ້າງການພົວພັນທີ່ບໍ່ສະເໝີພາບ, ກໍ່

ຄວາມອາຄາດບາດໝາງ, ຄວາມດູຖູກດູໝິ່ນ ລະຫວ່າງ ບັນດາຊົນຊາດ ດວຍກັນອີກຕື່ມ ເພື່ອຮັບໃຊ້ກົນອູບາຍ " ແບ່ງແຍກ ເພື່ອປົກຄອງ " ຂອງພວກເຂົາ. ຍອນແນວ ນັ້ນ, ການຕໍ່ສູ້ຕານກົນອຸບາຍແບ່ງແຍກຂອງຊົນຊັ້ນປົກຄອງ, ການຕໍ່ສູ້ລົບລາງຄວາມນຶກຄິດ ຕາຍຕົວຊົນຊາດ ເຊິ່ງປະ ຫວັດສາດໄດປະໄວ ແລະ ການເພີ່ມທະວີ ຄວາມສາມັກຄີ ບັນດາຊົນຊາດໃນທົ່ວປະເທດຢ່າງບໍ່ຢຸດຢັ້ງ, ປະຕິບັດຄວາມ ສະເໝີພາບຢ່າງສົມບູນ ໃນທຸກດານລະຫວ່າງ ບັນດາຊົນ ຊາດ, ຊົນເຜົ່າ ຈຶ່ງບໍ່ພຽງແຕ່ເປັນໜ້າທີ່ຍຸດທະສາດ ອັນ ໜຶ່ງຂອງການປະຕິວັດຊາດເທົ່ານັ້ນ, ຫາກຍັງເປັນເງື່ອນ ໄຂອັນໜຶ່ງທີ່ສຳຄັນທີ່ສຸດ ເພື່ອປຸກລຸກ ແລະ ຈັດຕັ້ງຊາວ ໄຮ່ນາ ໃນທົ່ວປະເທດໃຫ້ເປັນກຳລັງພື້ນຖານອັນໜຶ່ງຂອງ ການປະຕິວັດ ພາຍໃຕການນຳພາ ຂອງຊົນຊັ້ນກຳມະກອນ ແລະ ຈາກນັ້ນ ຈຶ່ງຈະມີກຳລັງແຮງ ເພື່ອປົດປ່ອຍຊາດ, ປົດປ່ອຍຊາວໄຮ່ນາໄດ.

ໃນດານອື່ນ, ການປົດປ່ອຍຊາວນາ ໃນປະເທດ ໜຶ່ງທີ່ເປັນເມືອງຂຶ້ນ, ສັກດີນານັ້ນຕາມກົດເກນທົ່ວໄປແລວ ແມ່ນຕອງໄດດຳເນີນການປະຕິວັດທີ່ດິນ, ລົບລາງລະບອບ ຢຶດຖືກຳມະສິດຂອງສັກດີນາ, ປະຕິບັດຄຳຂວັນທີ່ວ່າ " ຜູ

ເຮັດນາຕ້ອງມີນາເຮັດ ". ແຕ່ຢູ່ໃນປະເທດເຮົາ ການກະສິກຳກະແຈກກະຈາຍ, ເຕັມໄປດ້ວຍລັກສະນະທຳມະຊາດ, ເພິ່ງຕົນເອງກຸ້ມຕົນເອງພໍໃຜພໍລາວ, ລະດັບການຜະລິດ ຫຼ້າຫຼັງ ທີ່ສຸດ, ຮູບການຂູດຮີດຕາມແບບກ່ອນສັກດີນາ ຍັງຄົງຄ້າງຢູ່ ຫຼາຍ, ຊາວໄຮນາດຳລົງຊີວິດຢ່າງທຸກຍາກ ດ້ານໜຶ່ງແມ່ນຍອມການຂູດຮີດ ຂອງຊົນຊັ້ນສັກດີນາ ແລະ ບັນດາກຸ່ມປົກຄອງ, ແຕ່ອີກດ້ານໜຶ່ງ ທີ່ສຳຄັນແມ່ນຍ້ອນເຄື່ອງມືການຜະລິດ ຫຼ້າ ສະໄໝ, ເຕັກນິກການປູກຝັງຕ່ຳ, ສິ່ງທີ່ຕ້ອງການອັນເປັນພື້ນຖານ ສຳລັບ ການຜະລິດ (ເຄື່ອງມືກະສິກຳ, ແຮງລາກແກ່, ຊົນລະປະທານ, ເຕັກນິກ ແລະ ອື່ນ ໆ ...) ຍັງຂາດເຂີນທີ່ສຸດ, ເຮັດໃຫ້ສະມັດຖະພາບບໍ່ສູງ. ເມື່ອເປັນແນວນັ້ນ, ເຖິງແມ່ນວ່າ ພີ່ນ້ອງ ຊາວໄຮນາ ຂອງພວກເຮົາໄດ້ອອກເຫື່ອອອກແຮງເຮັດຢ່າງ ຫຼັງສູ້ຟ້າໜ້າສູ້ດິນ ແລະ ເງື່ອນໄຂ ໃນການບຸກເບີກທີ່ດິນມີ ຫຼາຍ ປານໃດກໍຕາມ, ແຕ່ກໍຍັງບໍ່ກຸ້ມຢູ່ກຸ້ມກິນ, ບໍ່ໜຳ ເຂົາເຈົ້າຊ້ຳພັດຖືກຜູກມັດ ດ້ວຍອຳນາດຟາແຖນ, ການເຊື່ອຖືແບບງົມງວາຍ, ຮີດຄອງອັນເປື່ອຍເນົ່າເຮັດໃຫ້ຊີວິດຂອງເຂົາເຈົ້າຍິ່ງມືດມົນ, ທຸກຍາກກາກກຳຂຶ້ນຕື່ມ ອັນເປັນການຈຳກັດກຳລັງແຮງການຜະລິດຂອງ

ເຂົາເຈົ້າຢ່າງໃຫຍ່ຫຼວງ . ດ້ວຍເຫດນັ້ນ, ເພື່ອປົດປ່ອຍຊາວໄຮ່ນາ ຂອງພວກເຮົາ, ດ້ານໜຶ່ງແມ່ນຕ້ອງລົບລ້າງບັນດາຮູບການຂູດຮີດກ່ອນສັກດີນາ ແລະ ອະພິສິດ, ຜົນປະໂຫຍດພິເສດຂອງກຸ່ມປົກຄອງ, ແຕ່ອີກດ້ານໜຶ່ງ ແມ່ນຕ້ອງໝູນໃຊ້ ທຸກຄວາມສາມາດ ແລະ ກຳລັງແຮງ ຂອງການປະຕິວັດ ເພື່ອແກ້ໄຂຄວາມຕ້ອງການພື້ນຖານ ທາງດ້ານການຜະລິດ ແລະ ຊີວິດການເປັນຢູ່ຂອງຊາວໄຮ່ນາ, ສ້າງເງື່ອນໄຂ ເພື່ອຂະຫຍາຍການຜະລິດ, ນຳເອົາແສງສະຫວ່າງຂອງວັດທະນະທຳ, ວິທະຍາສາດ, ເຕັກນິກເຍືອງເຂົ້າສູ່ຊີວິດຂອງເຂົາເຈົ້າ, ຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງເຂົາເຈົ້າ ໃຫ້ສູງຂຶ້ນເທື່ອລະກ້າວ. ອັນນັ້ນເປັນຄວາມມຸ່ງມາດປາຖະໜາ ອັນແຮງກ້າ ແລະຮີບດ່ວນກວ່າໝູ່ຂອງຊາວໄຮ່ນາບັນດາຊົນຊາດໃນປະເທດເຮົາ ເຊິ່ງເຂົາເຈົ້າແກ້ໄຂເອົາເອງບໍ່ໄດ້, ມີແຕ່ພັກເຮົາທີ່ຢືນໝັ້ນ ໃນຫຼັກ ໝັ້ນທັດສະນະ ຂອງຊົນຊັ້ນກຳມະກອນເທົ່ານັ້ນ ຈຶ່ງສາມາດວາງແນວທາງແກ້ໄຂບັນຫາຊາວໄຮ່ນາຢູ່ປະເທດເຮົາໄດ້ຢ່າງເຖິງຖອງແລະວິທະຍາສາດ.

ກ່ຽວກັບແບບວິທີປຸກລຸກຊາວໄຮ່ນາ, ກໍ່ສ້າງ ພັນທະພາບກຳມະກອນ-ຊາວນາຂອງພັກເຮົາ ມັນກໍ່ມີບາງຈຸດ

ທີ່ເປັນອັນສະເພາະຂອງມັນ. ຈຸດພິເສດຂອງການຕໍ່ສູ້ປະຕິວັດໃນປະເທດເຮົາ ແມ່ນ ໄປຄຽງຄູ່ກັບການຕໍ່ສູ້ທາງການເມືອງນັ້ນ, ການຕໍ່ສູ້ດ້ວຍອາວຸດໄດ້ດຳເນີນໄປຕັ້ງແຕ່ຫົວທີ ແລະ ສອດຫອຍໄປຕະຫຼອດ ໃນຂະບວນວິວັດແຫ່ງການຕໍ່ສູ້ປະຕິວັດຂອງປະເທດເຮົາ. ດ້ວຍເຫດນັ້ນ, ໃນ ຫຼາຍທ້ອງຖິ່ນ, ຫຼາຍຊົນຊາດ ການພົບພໍ້ກັນບາດທຳອິດລະຫວ່າງຊາວໄຮ່ນາບັນດາຊົນຊາດຂອງປະເທດເຮົາ ກັບຊົນຊັ້ນກຳມະກອນ ແມ່ນໄດ້ດຳເນີນໄປໂດຍຜ່ານ ກຳລັງປະກອບອາວຸດ ແລະ ໜ່ວຍຂົນຂວາຍມະຫາຊົນ ຂອງພັກ. ດ້ວຍການກະທຳສູ້ຮົບປົກປັກຮັກສາຊີວິດ ແລະ ຊັບສິນ ສົມທົບກັບການໂຄສະນາຂົນຂວາຍ ແລະ ຊ່ວຍເຫຼືອ ຊາວໄຮ່ນາໃນການຜະລິດ ແລະ ຊີວິດການເປັນຢູ່, ພະນັກງານ, ສະມາຊິກພັກ ແລະ ນັກຮົບໃນກຳລັງປະກອບອາວຸດ ປະຕິວັດ ແລະ ໃນໜ່ວຍຂົນຂວາຍມະຫາຊົນ ໄດ້ເຜີຍແຜ່ໂຄງການຊາດ-ປະຊາທິປະໄຕ ຂອງພັກໄປສູ່ບໍລິເວນຊົນນະບົດຢ່າງກວ້າງຂວາງ. ໃນດ້ານອື່ນ, ພາຍຫຼັງ ທີ່ໄດ້ຮັບການປຸກລຸກ ແລະ ໄດ້ມີການຈັດຕັ້ງແລ້ວ, ຊາວໄຮ່ນາ ກໍ່ໄດ້ເຂົ້າຮ່ວມການຕໍ່ສູ້ປະຕິວັດໂດຍທັນທີໂລດ ພາຍໃຕ້ຮູບການຕໍ່ສູ້ດ້ວຍອາວຸດ ເຊິ່ງແມ່ນຮູບການຕໍ່ສູ້ອັນຂຽວຂາດກວ່າໝູ່.

ການໂຄສະນາດ້ວຍກຳລັງປະກອບອາວຸດ ເພື່ອປຸກລຸກຊາວ
ໄຮ່ນາ, ແລະ ຜ່ານການຕໍ່ສູ້ດ້ວຍອາວຸດ ເພື່ອກໍ່ສ້າງ ພັນ
ທະພາບກຳມະກອນ–ຊາວນາ ເປັນແບບວິທີສຳຄັນ ແບບ
ຫນຶ່ງ, ມັນບໍ່ພຽງແຕ່ສອດຄ່ອງກັບຈຸດພິເສດ ແຫ່ງການຕໍ່ສູ້
ປະຕິວັດຂອງປະເທດເຮົາ, ເຮັດໃຫ້ຊາວໄຮ່ນາຜູກພັນກັບ
ກຳລັງປະກອບອາວຸດຂອງພັກ ແລະ ມີຄວາມຕື່ນຕົວ ກ່ຽວ
ກັບແນວທາງ ແລະ ແບບວິທີຕໍ່ສູ້ປະຕິວັດຂອງພັກເທົ່ານັ້ນ,
ຫາກຍັງເຮັດໃຫ້ສາຍພົວພັນແຫ່ງການຮ່ວມສຳພັນສູ້ຣົບ ລະ
ຫວ່າງຊົນຊັ້ນກຳມະກອນ ກັບຊາວໄຮ່ນາຂອງປະເທດເຮົາ
ມີຄວາມຫມັ້ນແກ່ນແຫນ້ນຫນຽວທີ່ສຸດ ດ້ວຍວ່າອັນນັ້ນ ເປັນ
ການຮ່ວມສຳພັນ ທີ່ໄດ້ປະກົດຕົວຂຶ້ນ ແລະ ໄດ້ຮັບການທົດ
ສອບ, ຫຼໍ່ຫຼອມທ່າມກາງການຕໍ່ສູ້ດ້ວຍອາວຸດ. ຜ່ານ
ການຮ່ວມສຳພັນໃນຂະບວນວິວັດແຫ່ງການຕໍ່ສູ້ອັນຂຽວຂາດ
ຍືດເຍື້ອຍາວນານ, ຊາວໄຮ່ນາບັນດາຊົນຊາດຍິ່ງມີຄວາມ
ຕື່ນຕົວຢ່າງເລິກເຊິ່ງວ່າ ມີແຕ່ຕໍ່ສູ້ປົດປ່ອຍ ປະເທດຊາດ
ຢ່າງສົມບູນເທົ່ານັ້ນ ຈຶ່ງຈະສາມາດແກ້ໄຂຜົນປະໂຫຍດພື້ນ
ຖານຂອງຕົນໄດ້ຢ່າງເຖິງຖອງ; ຈາກນັ້ນ ຈິດໃຈຮັກຊາດ
ແລະ ສະຕິປະຊາທິປະໄຕ, ຄວາມຕື່ນຕົວກ່ຽວກັບຊາດ
ແລະ ຄວາມຕື່ນຕົວກ່ຽວກັບຊົນຊັ້ນຂອງຊາວໄຮ່ນາ ຈຶ່ງຂະ

ຫຼາຍຕືອກ້ຽວພັນກັນຢ່າງແໜ້ນແຟ້ນ, ເຮັດໃຫ້ຊາວໄຮ່ນາຍິ່ງຜູກພັນກັບພັກຢ່າງໝັ້ນໜຽວ ແລະເຮັດໃຫ້ພັນທະພາບກຳມະກອນ-ຊາວນາຍິ່ງໄດ້ຮັບການປັບປຸງແໜ້ນແກ່ນ ຂຶ້ນຕື່ມ.

ໃນຂະບວນວິວັດ ແຫ່ງການປຸກລຸກຊາວໄຮ່ນາ, ກໍ່ສ້າງພັນທະພາບກຳມະກອນ-ຊາວນາ ຢູ່ໃນບໍລິເວນຊົນນະບົດທີ່ແຕກຕ່າງກັນນັ້ນ, ພັກເຮົາໄດ້ກຳນົດບັນດາບາດ ກ້າວເດີນ, ວິທີຢ່າງສອດຄ່ອງກັບຈຸດພິເສດຂອງແຕລະບໍລິ ເວນແລະກໍ່ໄດ້ຊີ້ນຳປະຕິບັດຢ່າງຕິດແທດແລະມີໄຫວພິບ. ສຳລັບບໍລິເວນຊົນຊາດ ແຖບພູດອຍທີ່ພວກຊັ້ນເທິງເປັນເຈົ້າ ກົກເຈົ້າເຫຼົ່າ ຍັງມີສາຍພົວພັນກັບມະຫາຊົນ ຜູ້ອອກແຮງງານຫຼາຍ ຢູ່ນັ້ນ ໄປຄຽງຄູ່ກັບການໂຄສະນາ ຂົນຂວາຍມະຫາຊົນພື້ນຖານ, ອັນຈຳເປັນໃນເບື້ອງຕົ້ນ ແມ່ນຕ້ອງກຳເອົາເຈົ້າກົກເຈົ້າເຫຼົ່າ ໃຫ້ໄດ້, ຜ່ານເຂົາເຈົ້າເພື່ອສ້າງເງື່ອນໄຂອັນສະດວກໃນການເຂົ້າສູ່ມະຫາຊົນ, ປຸກລຸກ ແລະຈັດຕັ້ງຊາວໄຮ່ນາ, ແລວເອົາກຳລັງແຮງແຫ່ງຄວາມສາມັກຄີຂອງຊາວໄຮ່ນານັ້ນ ກັບຄືນມາດູດດຶງບັນດາເຈົ້າກົກ ເຈົ້າເຫຼົ່າ ໃຫ້ໄປນຳການປະຕິວັດ ແລະ ຂົນຂວາຍຊວນເຊື່ອ, ໃຫ້ເຂົາເຈົ້າປະລະການພົວພັນແບບຄອບງຳຂູດຮີດຊາວໄຮ

ນານັ້ນລົງເທື່ອລະກ້າວ. ສຳລັບ ຊົນນະບົດໃນເຂດກວດກາຂອງສັດຕູນັ້ນ ແມ່ນເລີ່ມຕົ້ນດ້ວຍການອົບຂວາຽມະຫາຊົນຊາວໄຮ່ນາຕໍ່ສູ້ທວງໃຫ້ປ່ຽນແປງຊີວິດການເປັນຢູ່, ຕ້ານການເກັບສ່ວຍ, ຕ້ານການເກັບຄ່າຫົວ ອັນໜັກໜ່ວງ, ຕ້ານການບັງຄັບເກນທະຫານ, ການໄປເປັນກູລີ, ຕ້ານການປາບປາມ ກ້າວຂຶ້ນທວງເອົາສິດເສລີພາບປະຊາທິປະໄຕ, ທວງລົບລ້າງອະພິສິດ, ຜົນປະໂຫຍດພິເສດ ຂອງພວກລູກມືຂອງສັດຕູ, ຍາດເອົາສິດເປັນເຈົ້າດ້ວຍລະດັບທີ່ແຕກຕ່າງກັນ ໂດຍອີງຕາມການຊຸ່ງຊາກຳລັງຢູ່ໃນແຕ່ລະບໍລິເວນ. ຢູ່ໃນເຂດປົດປ່ອຍ ແມ່ນປຸກລູກປະຊາທິປະໄຕ, ພ້ອມກັນນັ້ນ ກໍ່ປຸກລະດົມກຳລັງແຮງຂອງມະຫາຊົນ ສົມທົບກັບການແນະນຳ ແລະ ຊ່ວຍເຫຼືອ ຂອງອຳນາດການປົກຄອງປະຕິວັດ ເພື່ອຂະຫຍາຍການຜະລິດ, ປ່ຽນແປງຊີວິດການເປັນຢູ່ຂອງມະຫາຊົນໃຫ້ດີຂຶ້ນ, ປະຕິບັດສິດເປັນເຈົ້າຢ່າງແທ້ຈິງໃນທຸກດ້ານຂອງຊາວໄຮ່ນາຜູ້ອອກແຮງງານບັນດາຊົນຊາດ.

ຈາກຂະບວນວິວັດ ແຫ່ງການກໍ່ສ້າງພັນທະພາບກຳມະກອນ-ຊາວນາ ຕາມແນວທາງ, ແບບວິທີ ແລະ ບາດກ້າວເດີນດັ່ງທີ່ກ່າວມາເທິງນັ້ນ, ບັນດາອົງການຈັດຕັ້ງມະ

ຫາຊົນຂອງພັກ ໄດ້ປະກົດຕົວຂຶ້ນ ແລະ ນັບມື້ນັບຂະຫຍາຍ
ຕົວ; ກຳລັງປະກອບອາວຸດໄດ້ຮັບການເພີ່ມທະວີຢ່າງບໍ່ຢຸດ
ຢັ້ງ ແລະ ນັບມື້ນັບເຕີບໃຫຍ່ເຂັ້ມແຂງ; ອຳນາດການປົກ
ຄອງປະຕິວັດ ທຸກຂັ້ນໄດ້ຮັບການສ້າງຕັ້ງຂຶ້ນ ແລະ ນັບມື້
ນັບໄດ້ຮັບການປັບປຸງ, ພັນທະພາບກຳມະກອນ-ຊາວນາ
ໄດ້ຮັບການປະຕິບັດຢູ່ໃນກະໂຕເຄື່ອງມືຂອງຄວາມຮຸນແຮງ
ຕົ້ນຕໍກ່ວາໝູ່ຂອງພັກນັ້ນໂລດ. ອັນນັ້ນເປັນການອະທິບາຍ
ວ່າ ໃນຂະບວນວິວັດແຫ່ງການດຳເນີນການປະຕິວັດຊາດ-
ປະຊາທິປະໄຕນັ້ນ ດ້ວຍເຫດໃດກົງຈັກອຳນາດ ການປົກ
ຄອງປະຊາຊົນຂັ້ນຕ່າງ ໆ ຢູ່ໃນເຂດປົດປ່ອຍ ຈຶ່ງສາມາດ
ລົງມືເຂົ້າໃສ່ການດັດແປງປະຊາທິປະໄຕ, ຂະຫຍາຍການ
ຜະລິດ, ປົວແປງຊີວິດການເປັນຢູ່ຂອງປະຊາຊົນຕາມ ຫຼັກ
ໝັ້ນທັດສະນະຂອງຊົນຊັ້ນກຳມະກອນ, ປະຕິບັດພາລະບົດ
ບາດຜະເດັດການກຳມາຊີບພາຍໃຕ້ການນຳພາຂອງພັກໄດ້.
ແມ່ນຍ້ອນມີກ້ອນກຳລັງ ພັນທະພາບ ກຳມະກອນ-ຊາວນາ
ອັນແໜ້ນແກ່ນນັ້ນເອງ, ພາຍຫຼັງ ທີ່ໄດ້ສຳເລັດການປະຕິວັດ
ຊາດ-ປະຊາທິປະໄຕແລ້ວ, ລັດປະຊາທິປະໄຕ ປະຊາຊົນ
ໂດຍແມ່ນ ພັກເປັນຜູ້ນຳພາ ຈຶ່ງສາມາດ ຫັນ ໄປສູ່ການ
ປະຕິບັດ ໜ້າທີ່ ປະຫວັດສາດ ຂອງຜະເດັດການກຳມາ

ຊິບໄດ້ໂລດ, ດຳເນີນການປະຕິວັດສັງຄົມນິຍົມ ແລະ ກໍ່ສ້າງສັງຄົມນິຍົມ ໂດຍບໍ່ຜ່ານໄລຍະຂະຫຍາຍຕົວຂອງທຶນນິຍົມ, ເຮັດໃຫ້ຄວາມມຸ່ງຫວັງທີ່ມີມາແຕ່ເຫິງນານຂອງຊາວໄຮ່ນາ ແລະ ປະຊາຊົນຜູ້ອອກແຮງງານບັນດາຊົນຊາດໃນປະເທດເຮົາ ທີ່ຢາກຫຼຸດ ພົ້ນຈາກພາວະຖືກກົດຂີ່ ຂູດຮີດ, ຫຼຸດ ພົ້ນຈາກຄວາມທຸກຍາກ ຫຼ້າຫຼັງ ຢ່າງຕະຫລອດກາລະນານ ແລະ ຢາກໃຫ້ມີຊີວິດ ຢ່າງຢູ່ດີກິນດີ, ສີວິໄລ ແລະ ສົມບູນພູນສຸກຕະຫຼອດ ເທົ່າໃດ ໆ ນັ້ນປະກົດເປັນຈິງຂຶ້ນ.

24/VII
ห้ามจำหน่าย

III – ສ້າງແນວໂຮມເອກະພາບແຫ່ງຊາດບົນພື້ນຖານພັນທະພາບກຳມະກອນ – ຊາວນາພາຍໃຕ້ການນຳພາຂອງພັກ.

" ... ຄວາມສາມັກຄີເປັນກຸ່ມໜຶ່ງ ກອນດຽວຂອງປະຊາຊົນທົ່ວຊາດ ເປັນບັນຫາໜຶ່ງ ທີ່ມີຄວາມໝາຍຕັດສິນຕໍ່ຄວາມເປັນຕາຍຂອງຊາດ"[1]. ປະຫວັດສາດແຫ່ງການສ້າງຊາດ ແລະ ປົກປັກຮັກສາຊາດ ຕັ້ງແຕ່ບູຮານນະການຈົນເຖິງປັດຈຸບັນຂອງປະຊາຊົນເຮົາລ້ວນແຕ່ໄດ້ຢັ້ງຢືນຄຳວິນິດໄສດັ່ງກ່າວນັ້ນ. ໃນການປະຕິວັດຊາດ-ປະຊາທິປະໄຕ, ບັນຫາເຕົ້າໂຮມທຸກ ໆ ກຳລັງທີ່ສາມາດສາມັກຄີ ແລະ ຍາດແຍ່ງໄດ້ຢ່າງກວ້າງຂວາງເຂົ້າໃນແນວໂຮມແຫ່ງຊາດອັນກວ້າງໃຫຍ່ ໂດຍເອົາກອນກຳລັງ ພັນທະພາບ ກຳມະກອນ-ຊາວນາເປັນພື້ນ ແລະ ພາຍໃຕ້ການນຳພາຂອງພັກເພື່ອພັນແຍກ, ລ້ອມປ່ຽວ, ໂຄ່ນລົ້ມສັດຕູ ຂອງຊາດນັ້ນເປັນໜຶ່ງໃນບັນດາບັນຫາຍຸດທະສາດ ທີ່ມີຄວາມໝາຍຕັດສິນເຖິງການແພ້ ການຊະນະ ຂອງການປະຕິວັດ. ເພາະສະນັ້ນ, ໃນທຸກ ໆ ໄລຍະຂອງການປະຕິວັດ ເປັນຕົ້ນໃນ

1. ໂຄງການການເມືອງຂອງກອງປະຊຸມໃຫຍ່ຄັ້ງທີ່ສອງຂອງພັກປະຊາຊົນປະຕິວັດລາວ, ປີ 1972.

ໄລຍະຕໍ່ສູ້ກູ້ຊາດຕ້ານອາເມລິກາ, ໂດຍອີງໃສ່ ແນວທາງ
ຍຸດທະສາດລວມ ແລະ ຈຸດໝາຍການເມືອງໃນສະເພາະ
ໜາ, ພັກເຮົາໄດ້ມີນະໂຍບາຍແນວໂຮມອັນລະອຽດເຊິ່ງ
ສະແດງອອກໃນບັນດາຄຳຂວັນຍຸດໂທບາຍທີ່ສອດຄ່ອງແລະ
ມີຮູບການຈັດຕັ້ງ ຫຼາຍຮູບ ຫຼາຍແບບທີ່ອຸດົມຮັ່ງມີ ເພື່ອສາ
ມັກຄີປະຊາຊົນທຸກ ໆ ຊັ້ນຄົນ, ສາມັກຄີບັນດາຊົນຊາດ
ແລະ ສາສະໜາ ຢູ່ໃນປະເທດ, ຍາດແຍ່ງທຸກກຳລັງ
ແລະ ຜູ້ຊົງຄຸນວຸດທິທ່ຽງທຳຮັກຊາດ ແລະ ກາງໜາ,
ເຮັດໃຫ້ເປັນກາງທຸກໆ ກຳລັງທີ່ສາມາດເຮັດໃຫ້ເປັນກາງ
ໄດ້, ທັງນີ້ກໍເພື່ອສຸມປາຍຫອກ ຂອງການປະຕິວັດເຂົ້າ ໃສ່
ການໂຄ່ນລົ້ມພວກຈັກກະພັດຮຸກຮານ ແລະລູກມືຂາຍຊາດ.

ໃນສະໄໝ ຂົນຂວາຍທາງລັບ ໃນລະຫວ່າງ ຕົ້ນ
ທົດສະວັດທີ່ ໔ , ດ້ວຍຄຳຂວັນ " ຕີຝະລັ່ງ, ຂັບໄລ່ ຍີ່
ປຸ່ນ, ຍາດເອົາເອກະລາດ ", ອົງການຈັດຕັ້ງພັນທະມິດ
ລາວ ເອກະລາດ ເຊິ່ງເປັນຮູບການແນວໂຮມ ອັນ
ໜຶ່ງ ພາຍໃຕ້ການນຳພາ ຂອງພັກ ໃນຄາວນັ້ນ ໄດ້ເຕົ້າ
ໂຮມກຳມະກອນ,ຊາວໜຸ່ມ, ຂາລາຊະການ, ປະຊາຊົນ
ຜູ້ທຸກຍາກໃນຕົວເມືອງ (ນັບທັງຊາວຫວຽດນາມ ຕ່າງ
ດາວຈຳນວນໜຶ່ງ), ທັງສາມາດດູດດຶງເອົາ ຂະບວນ

ການ " ລາວອິດສະຫຼະ " ຂອງພວກປັນຍາຊົນນາຍທຶນນ້ອຍ ຜູ້ກ້າວໜ້າ ທີ່ຫາກໍ່ຕັ້ງຕົນຕັ້ງໂຕຂຶ້ນນັ້ນ, ແລະ ມາຮອດໄລຍະທີ່ພວກຟາຊິດຍີ່ປຸ່ນຍອມຈຳນົນແລ້ວ, ພັກເຮົາກໍ່ໄດ້ລະດົມມະຫາຊົນລຸກຮື້ຂຶ້ນຍຶດອຳນາດ ການປົກຄອງຢ່າງທັນການ ແລະ ປະກາດຄວາມເປັນເອກະລາດ ຂອງປະເທດລາວ ໃນວັນທີ່ ໑໒ ຕຸລາ ໑໙໔໕.

ເມື່ອພວກລ່າເມືອງຂຶ້ນ ຝະລັ່ງ ໄດ້ກັບຕ່າວຄືນມາຮຸກຮານປະເທດເຮົາອີກເປັນຄັ້ງທີ່ສອງ, ພັກເຮົາໄດ້ສ້າງຕັ້ງ " ແນວລາວອິດສະຫຼະ " ຂຶ້ນ. ພາຍໃຕ້ຄຳຂວັນ " ສາມັກຄີປະຊາຊົນບັນດາຊົນຊາດ, ສາມັກຄີທຸກຊັ້ນຄົນໂດຍບໍ່ຈຳແນກຊົນຊັ້ນ, ວັນນະ, ສາສະໜາ, ເພດໄວພ້ອມກັນລຸກຂຶ້ນຕໍ່ຕ້ານຝະລັ່ງ ຍາດເອົາເອກະລາດ ", ແນວລາວອິດສະຫຼະ ກໍ່ສາມາດປຸກລະດົມມະຫາຊົນຊັ້ນຄົນຕ່າງ ໆ ໃນບັນດາຊົນຊາດ ໄດ້ຢ່າງ ຫຼວງຫຼາຍ ໃຫ້ສາມັກຄີກັນລຸກຂຶ້ນຕໍ່ສູ້ກູ້ຊາດ ຕ້ານສັດຕູຜູ້ຮຸກຮານ ແລະ ແນວລາວອິດສະຫຼະ ກໍ່ໄດ້ສຳເລັດບົດບາດປະຫວັດສາດຂອງຕົນຢ່າງສະຫງ່າງາມດ້ວຍການຕີເອົາຊະນະພວກລ່າເມືອງຂຶ້ນຝະລັ່ງ.

ໃນໄລຍະຕໍ່ມາ, ໂດຍອີງໃສ່ເງື່ອນໄຂໃໝ່ ຂອງ

ການຕໍ່ສູ້ປະຕິວັດ ແລະ ອີງໃສ່ບັນດາບົດຮຽນ ທີ່ສະສົມມາໄດ້ຈາກພຶດຕິກຳແຫ່ງການຕໍ່ສູ້, ພັກເຮົາໄດ້ວາງນະໂຍບາຍແນວໂຮມໃຫມ່ອອກ ແລະ ໄດ້ຫມູນໃຊ້ມັນຢ່າງຖືກຕ້ອງ, ປະດິດສ້າງ ແລະ ກໍ່ໄດ້ຮັບຜົນສຳເລັດ ອັນສະຫງ່າງາມ. ໃນໄລຍະນີ້, ສັດຕູຂອງຊາດເຮົາ ແມ່ນຈັກກະພັດອາເມລິກາ ທີ່ໄດ້ລົງມືປະຕິບັດນະໂຍບາຍລັດທິລ່າເມືອງຂຶ້ນ ແບບໃຫມ່. ດ້ານຫນຶ່ງ, ພວກເຂົາໃຊ້ເອກະລາດ, ປະຊາທິປະໄຕ ແບບຈອມປອມ ແລະ ເລ່ລ່ຽມ ທາງການເມືອງ, ເສດຖະກິດອັນເລິກແລບ ໂຫດຫຽມ ຫຼາຍສິ່ງ ຫຼາຍແນວເພື່ອ ຫຼອກລວງ, ຈອບອອຍປະຊາຊົນເຮົາ; ແຕ່ອີກດ້ານຫນຶ່ງ, ພວກເຂົາກໍ່ຊຸ້ມຂຽວປະຕິບັດກົນອຸບາຍໃຊ້ກຳລັງອາວຸດ ເພື່ອດັບສູນກຳລັງປະຕິວັດ ແລະ ກາວໄປເຖິງການກໍ່ສົງຄາມອັນໂຫດຮ້າຍປ່າເຖື່ອນຢູ່ໃນທົ່ວປະເທດເຮົາ. ກ່ຽວກັບຝ່າຍເຮົາ, ຈິດໃຈຊາດຂອງປະຊາຊົນທຸກຊັ້ນຄົນທີ່ໄດ້ຮັບການປູກລູກ ຫຼໍ່ຫຼອມ ຈາກການຕໍ່ຕ້ານ ຝະລັ່ງມານັ້ນ ນັບມື້ນັບໄດ້ຮັບການເສີມຂະຫຍາຍຢ່າງແຂງແຮງ; ກຳລັງປະຕິວັດຍິ່ງຕໍ່ຍິ່ງເຂັ້ມແຂງ, ຍິ່ງໃສແຈ້ງໃນຄວາມເປັນທຳແລະມີອິດທິພົນນັບມື້ນັບສູງເດັ່ນທັງຢູ່ພາຍໃນແລະນອກປະເທດ. ຢູ່ໃນໂລກ, ການຕໍ່ສູ້ ເພື່ອສັນຕິພາບ, ເອກະລາດ ແຫ່ງ

ຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ ໄດ້ກາຍເປັນທ່າອຽງທົ່ວໄປ ຂອງຍຸກສະໄໝ. ຕໍ່ໜ້າສະພາບການ ເຫຼົ່ານັ້ນ ພັກເຮົາ ໄດ້ມີແຜນນະໂຍບາຍ ໃໝ ກ່ຽວກັບແນວໂຮມ, ດ້ານໜຶ່ງແມ່ນຮັກສາ ຫຼັກການ ເອົາພັນທະພາບກຳມະກອນ-ຊາວນາເປັນພື້ນຖານ, ສ້າງກອນກຳລັງສາມັກຄີ ອັນແໜ້ນແກ່ນລະຫວ່າງ ປະຊາຊົນຜູ້ອອກແຮງງານບັນດາຊົນຊາດ; ອີກດ້ານໜຶ່ງ ແມ່ນຍາດແຍ່ງການຮ່ວມສຳພັນກັບກຳລັງ ລະຫວ່າງກາງ ແລະ ພວກຊັ້ນເທິງທີ່ມີທ່າອຽງ ຕ້ານການແຊກແຊງຮຸກຮານ ຂອງຈັກກະພັດອາເມລິກາ ແລະ ພວກລູກມືປະຕິການຂາຍຊາດ ແນ່ໃສ່ພັນແຍກຖັນແຖວຂອງສັດຕູຢ່າງສຸດຂີດ, ລອມປ່ຽວ ແລະ ໂຄ່ນລົ້ມສັດຕູຕົວຕົ້ນຂອງຊາດ. ບົນພື້ນຖານນັ້ນ ແນວລາວຮັກຊາດ ໄດ້ກຳເນີດເກີດຂຶ້ນ, ສືບຕໍ່ພາລະກິດ ຂອງແນວລາວອິດສະຫຼະ ແລະ ຮັບເອົາບົດບາດປະຫວັດສາດ ໃນໄລຍະໃໝ່ຂອງການຕໍ່ສູ້ປະຕິວັດ. ໃນ ໔໐ ປີທີ່ຜ່ານມາ, ໂດຍຍົກສູງ ຄົນທຸງຊາດ-ປະຊາທິປະໄຕ ດ້ວຍ ຄຳຂວັນ "ສັນຕິພາບ, ເປັນກາງ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ", ແນວລາວຮັກຊາດ ໄດ້ປະຕິບັດນະໂຍບາຍແນວໂຮມຂອງພັກຢ່າງຖືກ

ຕ້ອງ ແລະ ໝູນໃຊ້ຍຸດໂທບາຍຢ່າງມີໄຫວພິບຄ່ອງແຄ່ວ, ປະສົມປະສານ ຫຼາຍຮູບການເຄື່ອນໄຫວ ຢ່າງອຸດົມຮັ່ງມີ, ທັງຮ່ວມສຳພັນຢ່າງມີການຈັດຕັ້ງ ທັງປະສານກັນໃນແຕ່ລະການກະທຳ, ໃນແຕ່ລະແຜນນະໂຍບາຍ, ໃນແຕ່ລະວຽກລະອຽດ; ຈາກການຮ່ວມສຳພັນທາງການເມືອງ ໄປເຖິງການຮ່ວມສຳພັນທາງການທະຫານ, ທັງກໍ່ສ້າງແນວໂຮມຢູ່ໃນບັນດາອົງການຈັດຕັ້ງມະຫາຊົນ ທັງປະສົມປະສານລະຫວ່າງພັກຝ່າຍຕ່າງ ໆ , ກະທັ້ງເຖິງຢູ່ໃນກົງຈັກອຳນາດການປົກຄອງສູນກາງດ້ວຍ. ຜົນສຳເລັດແຫ່ງການປະຕິບັດນະໂຍບາຍແນວໂຮມດັ່ງກ່າວນັ້ນ ບໍ່ພຽງແຕ່ໄດ້ສ້າງກອນກຳລັງສາມັກຄີຊົນຊາດໃນໝູ່ມະຫາຊົນຊັ້ນພື້ນຖານຂື້ນຢ່າງແໜ້ນແກ່ນເທົ່ານັ້ນ, ຫາກຍັງສາມາດຍາດແຍ່ງຊົນຊັ້ນ ຄົນອື່ນໆ ໄດ້ຢ່າງກວ້າງຂວາງນັບທັງບຸກຄົນຈຳນວນໜຶ່ງ ໃນພວກຊັ້ນເທິງ.

ຜົນສຳເລັດ ສຳຄັນກວ່າໝູ່ ອັນໜຶ່ງ ຂອງນະໂຍບາຍແນວໂຮມຂອງພັກ ໃນໄລຍະນີ້ ແມ່ນສາມາດຍາດແຍ່ງກຳລັງລະຫວ່າງກາງໄດ້, ທັງສາມາດປະຕິບັດການຮ່ວມສຳພັນທາງການເມືອງ, ການທະຫານກັບກຳລັງເປັນກາງຮັກຊາດ ເຊິ່ງແມ່ນພາກສ່ວນທີ່ກ້າວໜ້າກວ່າໝູ່ ໃນ

ກຳລັງລະຫວ່າງກາງດັ່ງກ່າວນັ້ນ. ກຳລັງລະຫວ່າງກາງນີ້ ໄດ້ເລີ່ມປະກົດຕົວຂຶ້ນຈາກທ່າອຽງການເມືອງຂອງພວກປັ່ນຍາຊົນ, ຂ້າລາຊະການ, ນັກຮຽນ, ນັກສຶກສາ, ນາຍທຶນແຫ່ງຊາດ, ພະສົງອົງເຈົ້າທີ່ບໍ່ພໍໃຈຕໍ່ນະໂຍບາຍແຊກແຊງກໍ່ສົງຄາມກາງເມືອງຂອງຈັກກະພັດອາເມລິກາແລະພວກລູກມືຂວາຈັດ, ຢາກແກ້ໄຂບັນຫາລາວໂດຍສັນຕິວິທີ.ພາຍລູນມາ, ທ່າອຽງດັ່ງກ່າວນັ້ນໄດ້ແຜ່ຂະຫຍາຍອອກໄປຮອດບຸກຄົນຈຳນວນໜຶ່ງ ໃນພວກຊັ້ນເທິງອູດຍາເຈົ້ານາຍ, ນາຍທະຫານ, ສະມາຊິກ " ສະພາຜູ້ແທນລາສະດອນ ..., ໂດຍສະເພາະຢ່າງຍິ່ງແມ່ນ ພາຍຫຼັງ ທີ່ແນວລາວຮັກຊາດໄດ້ປະກາດໂຄງການດຳເນີນງານ ຂອງຕົນອອກ ໃນຕົ້ນປີ ໑໙໕໖, ກຳລັງລະຫວ່າງກາງໄດ້ເຫັນດີ ເຫັນພ້ອມຮັບ<u>ເອົານະໂຍບາຍສັນຕິພາບ, ເປັນກາງ, ຄວາມຖືກຕ້ອງປອງດອງຊາດ</u> ຂອງພວກເຮົາ. ເຂົາເຈົ້າໄດ້ເຂົ້າຮ່ວມຂະບວນການຕໍ່ສູ້ຢ່າງຟົດເດືອດທາງການເມືອງຂອງມະຫາຊົນຄັດຄ້ານນະໂຍບາຍແຊກແຊງກໍ່ສົງຄາມກາງເມືອງຂອງອາເມລິກາ ແລະ ພວກປະຕິການ, ປະກອບສ່ວນຢ່າງສຳຄັນເຂົ້າ ໃນໄຊຊະນະ ຂອງການເຊັນສັນຍາ ວຽງຈັນ ປີ ໑໙໕໗ ກໍ່ຄືໄດ້ປະສານສົມທົບການເຄື່ອນໄຫວກັບພວກເຮົາ

ໃນບັນຫາສຳຄັນຈຳນວນໜຶ່ງ ຢູ່ໃນລັດຖະບານປະສົມຊຸດທີ່ ໑ ເຊັ່ນ : ການເລືອກຕັ້ງສະພາຜູ້ແທນລາສະດອນ ເພີ່ມເຕີມ, ການປະກາດໃຊ້ລັດຖະທຳມະນູນ ທີ່ມີບາງລະບຽບການກ້າວໜ້າ, ການອອກກົດໝາຍວ່າດ້ວຍສິດເສລີພາບປະຊາທິປະໄຕ ..., ອັນໄດ້ເຮັດໃຫ້<u>ຮູບການຮ່ວມ ສຳພັນໃນການກະທຳ</u> (ການຮ່ວມສຳພັນທີ່ບໍ່ມີການຈັດຕັ້ງ) ລະຫວ່າງກຳລັງປະຕິວັດ ກັບກຳລັງລະຫວ່າງກາງໃນຄາວນັ້ນ ປະກົດຕົວຂຶ້ນ.

ພາຍຫຼັງ ທີ່ອາເມລິກາ ແລະ ພວກປະຕິການ ສຸດຂະໜາດໄດ້ ຫຼີ້ນ ລີ້ນປີ້ນຄວາມ, ໂຄ່ນລົ້ມລັດຖະບານ ປະສົມຢ່າງບັງອາດເປີດແປ້ນ, ປະຕິບັດນະໂຍບາຍຜະເດັດການ ຟາຊິດ ແລະ ຕໍ່ໜ້າກຳລັງແຮງແຫ່ງການຕໍ່ສູ້ ຂອງປະຊາຊົນເຮົາ, ພາຍໃນຂອງສັດຕູ ໄດ້ຖືກຜັນແຍກແຕກແຫງຢ່າງຮ້າຍແຮງ ພາໄປເຖິງການລັດຖະປະຫານທີ່ກ້າວໜ້າ ໃນເດືອນ ສິງຫາ ໑໙໖໐. ໂດຍໄດ້ຮັບການຊ່ວຍເຫຼືອ ຂອງພວກເຮົາ, ກຳລັງລະຫວ່າງກາງ ໄດ້ຮັບເອົາທັດສະນະທີ່ວ່າ " ສັນຕິພາບ ເປັນກາງ ຕ້ອງຢູ່ບົນພື້ນຖານໂຄ່ນລົ້ມຈັກກະພັດອາເມລິກາ ແລະ ພວກລູກມື ຂວາຈັດ, ຍາດເອົາເອກະລາດມາໃຫ້ຊາດ " ແລະ ຈາກນັ້ນ

ກຳລັງລະຫວ່າງກາງໄດ້ມີທິດທາງຕໍ່ສູ້ອັນຖືກຕ້ອງ ແລະນັບ ມື້ນັບໄດ້ຮັບການປັບປຸງ, ຂະຫຍາຍຕົວ ກາຍເປັນກຳລັງ ການເມືອງ ທີ່ສຳຄັນກຳລັງໜຶ່ງ ແລະ ທັງມີກອງທະຫານ ຂອງຕົນຕ່າງຫາກ. ການຮ່ວມສຳພັນລະຫວ່າງກຳລັງແນວ ລາວຮັກຊາດ ກັບກຳລັງເປັນກາງຮັກຊາດ ໄດ້ກ້າວເຂົ້າສູ່ ບາດກ້າວໃໝ່: ຈາກການຮ່ວມສຳພັນ ໃນການ ກະທຳ ກາຍມາເປັນ<u>ການຮ່ວມສຳພັນທີ່ມີການຈັດຕັ້ງ.</u> ທັງສອງກຳ ລັງ ໄດ້ພ້ອມກັນເຄື່ອນໄຫວ ຕາມໂຄງການລວມ ອັນດຽວ ພາຍໃຕ້ການຊີ້ນຳປະສົມປະສານຂອງອົງການຈັດຕັ້ງລວມຄື ຄະນະກຳມະການຮ່ວມສຳພັນບັນດາກຳລັງຮັກຊາດ. ເຖິງ ຢ່າງນັ້ນກໍ່ຕາມ, ແຕ່ລະຝ່າຍກໍ່ຍັງຮັກສາລັກສະນະ ເອກະ ລາດ ທາງດ້ານການຈັດຕັ້ງ ຂອງກຳລັງໃຜລາວ; ຈາກ ການຮ່ວມສຳພັນທາງການເມືອງ ກາຍມາເປັນ <u>ການຮ່ວມ ສຳພັນທາງການເມືອງ-ການທະຫານພອມ.</u> ກອງທະຫານ ທັງສອງຝ່າຍໄດປະສານສົມທົບກັນໃນການສູ້ຮົບ ແລະຊ່ວຍ ໜູນກັນຢູ່ໃນບໍລິເວນເຄື່ອນໄຫວອັນດຽວ ຫຼືຢູ່ໃນບັນດາບໍ ລິເວນເຄື່ອນໄຫວທີ່ໄດ້ແບ່ງປັນກັນເປັນເຂດສະເພາະຕາມ ແຜນການເຄື່ອນໄຫວ ລວມອັນດຽວ ທີ່ໄດ້ກຳນົດຢ່າງເປັນ ເອກະພາບ ແລະ ໂດຍແຕ່ລະຝ່າຍເປັນຜູ້ຈັດຕັ້ງ, ຊີ້ນຳ,

ບັງຄັບບັນຊາກຳລັງຂອງຕົນ. ຮູບການ ແລະ ເນື້ອໃນຮ່ວມສຳພັນຢ່າງຮອບດ້ານນີ້ ໄດ້ມີຄຸນປະໂຫຍດ ອັນໃຫຍ່ຫຼວງ ໃນການເສີມຂະຫຍາຍ ແລະ ເພີ່ມທະວີກຳລັງແຮງຂອງຊາດເຮົາ, ແລະ ມັນໄດ້ປະກອບສ່ວນ ຢ່າງສຳຄັນທີ່ສຸດເຂົ້າໃນໄຊຊະນະອັນໃຫຍ່ຫຼວງ ຂອງການປະຕິວັດເຮົາໃນໄລຍະຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາ.

ຜ່ານຂະບວນວິວັດ ແຫ່ງການປະຕິບັດການຮ່ວມສຳພັນກັບກຳລັງ ລະຫວ່າງກາງນີ້, ພັກເຮົາໄດ້ມີບົດຮຽນອັນປະເສີດບາງປະການກ່ຽວກັບນະໂຍບາຍແນວໂຮມ :

ກ່ອນອື່ນໝົດ, ໃນເງື່ອນໄຂທີ່ປະເທດເຮົາ ຕົກເປັນເມືອງຂຶ້ນ ແລະ ເຄິ່ງສັກດີນາ, ການພັນແຍກຊົນຊັ້ນໃນສັງຄົມຍັງບໍ່ທັນເລິກເຊິ່ງເທື່ອ, ຊົນຊັ້ນນາຍທຶນ ແລະ ຊົນຊັ້ນກຳມະກອນຍັງອ່ອນນ້ອຍ, ເມື່ອເປັນແນວນັ້ນ ກຳລັງລະຫວ່າງກາງ ຈຶ່ງມີຖານະສຳຄັນ ໃນທຸກຂົງເຂດການເຄື່ອນໄຫວຂອງຊາດ, ເປັນຕົ້ນແມ່ນ ທາງດ້ານວັດທະນະທຳ, ສັງຄົມ. ເຂົາເຈົ້າຖືກຈັກກະພັດ ແລະ ລູກມືໜີບເຕັງທາງດ້ານຖານະ ແລະ ຜົນປະໂຫຍດ, ຍ້ອນແນວນັ້ນເຂົາເຈົ້າຈຶ່ງມີທ່າອ່ຽງຮັກຊາດ ແລະກ້າວໜ້າ, ມີເງື່ອນໄຂອັນແນ່ນອນ ເພື່ອຮັບເອົາແນວທາງປະຕິວັດຊາດ- ປະ

ຊາທິປະໄຕຂອງພັກ. ສະນັ້ນ ຖ້າຫາກໄດ້ຮັບການນຳພາດີຈາກພັກ, ເຂົາເຈົ້າຈະສາມາດເສີມຂະຫຍາຍຄຸນປະໂຫຍດອັນສຳຄັນຂອງຕົນໃນຂະບວນການຕໍ່ສູ້ຂອງມະຫາຊົນ ເປັນຕົ້ນໃນຕົວເມືອງ. ພວກເຮົາຕ້ອງອອກແຮງ ຍາດແຍ່ງ , ສາມັກຄີກັບເຂົາເຈົ້າ ເພື່ອເປີດກວ້າງກຳລັງ ແຫ່ງຊາດ ແລະ ກາວໜ້າ, ແລະ ດ້ວຍເຫດນັ້ນ ຖັດຈາກໜ້າທີ່ພື້ນຖານກ່ວາໝູ່ດີ ການສ້າງກອງກຳລັງສາມັກຄີອັນ ແໜນແກ່ນ ລະຫວ່າງປະຊາຊົນຜູ້ອອກແຮງງານ ບັນດາຊົນຊາດແລ້ວ, <u>ບັນຫາຍາດແຍ່ງ ແລະ ຮ່ວມສຳພັນກັບກຳລັງ ລະຫວ່າງກາງ ເປັນເນື້ອໃນທີ່ສຳຄັນທີ່ສຸດໃນນະໂຍບາຍແນວໂຮມຢູ່ໃນປະເທດເຮົາ</u> ເຊິ່ງພັກເຮົາໄດ້ວາງອອກ ເປັນແຜນຄົບຖ້ວນບົນພື້ນຖານການຄົ້ນຄວ້າວິເຄາະສະພາບການຕົວຈິງໃນທຸກດ້ານຂອງປະເທດເຮົາຢ່າງຖືກຕ້ອງ.

ການດູດດຶງກຳລັງ ລະຫວ່າງກາງ ໃຫ້ງ່ຽວມາຫາຝ່າຍປະຕິວັດນັ້ນ, ແຕ່ໃດມາກໍ່ເປັນຍຸດທະສາດລວມ ຂອງການປະຕິວັດກຳມາຊີບ ເປັນຕົ້ນແມ່ນ ໃນໄລຍະການປະຕິວັດຊາດ-ປະຊາທິປະໄຕ ແລະ ກໍ່ໄດ້ຮັບການໝູນໃຊ້ຢູ່ໃນຫຼາຍ ປະເທດ, ແຕ່ຮູບການ ທີ່ແຜ່ຂະຫຍາຍແດ່ນັ້ນ ໂດຍມາກແມ່ນຮູບການອົນຂວາງເຂົາເຈົ້າໃຫ້ເຂົ້າຮ່ວມໂດຍກົງ

ໃນແນວໂຮມແຫ່ງຊາດຂອງພັກ, ຕັ້ງຕົວເປັນປໍລະປັກຢ່າງສົ້ນເຊີງກັບກຳລັງປະຕິການ. ຢູ່ໃນປະເທດເຮົາ, ຮູບການຮ່ວມສຳພັນກັບກຳລັງ ລະຫວ່າງກາງພັດມີບ່ອນຕ່າງຫາກ. ໂດຍເລີ່ມຈາກການຕີລາຄາບົດບາດ ແລະ ຄວາມສາມາດຂອງກຳລັງລະຫວ່າງກາງ ແລະ ອີງໃສ່ການຊັ່ງຊາກຳລັງລະຫວ່າງກຳລັງປະຕິວັດ ກັບກຳລັງຝືນປະຕິວັດ, <u>ພັກເຮົາໄດ້ວາງບາດກ້າວເດີນຂ້າມຜ່ານດີ</u> ຮັບຮູ້ການຄົງຕົວຂອງກຳລັງລະຫວ່າງກາງໃນການປະຕິວັດຊາດ-ປະຊາທິປະໄຕ ຖືເຂົາເຈົ້າເປັນກຳລັງການເມືອງທີ່ມີເອກະລາດທາງດ້ານການຈັດຕັ້ງ ແລະມີບໍລິເວນເຄື່ອນໄຫວສະເພາະ, ບໍ່ພຽງແຕ່ເທົ່ານັ້ນ, ພັກຍັງໄດ້ຊ່ວຍເຫຼືອ ເຂົາເຈົ້າໃນການກໍ່ຮ່າງສ້າງຕົວ ແລະ ຈັດຕັ້ງການຮ່ວມສຳພັນ ກັບເຂົາເຈົ້າອີກດ້ວຍ. ໃນເວລາທີ່ຝ່າຍຂວາຈັດ ກະຫາຍສົງຄາມ ເຊິ່ງຕັ້ງໃຈ ເປັນລູກມືໃຫ້ຈັກກະພັດອາເມລິກາ ຢ່າງສຸດ ຂະໜາດ ແລະ ຫວັງດັບສູນການປະຕິວັດນັ້ນ, ການຄົງຕົວຂອງຝ່າຍລະຫວ່າງກາງ ເຖິງວ່າໃນເບື້ອງຕົ້ນຫາກໍ່ເປັນພຽງແຕ່ທາງອຽງສັນຕິພາບ ເປັນກາງເທົ່ານັ້ນ ກໍ່ເປັນຜົນດີໃຫ້ແກ່ການປະຕິວັດຢູ່ແລ້ວ, ດ້ວຍວ່າມັນອາດສາມາດສ້າງເງື່ອນໄຂໃຫ້ພວກເຮົາປະຕິບັດການເອົາສອງຕີໜຶ່ງ, ຊຸກ

ພວກຂວາຈັດ ໃຫ້ຕົກເຂົ້າໃນທ່າໂດດດ່ຽວ. ກະໂຕຈັກກະພັດອາເມລິກາເອງກໍ່ຮັບຮູ້ໄພອັນຕະລາຍດັ່ງກ່າວນັ້ນ.ຍອມແນວນັ້ນ, ເລີ່ມແຕ່ຫົວທີ ເຂົາຈຶ່ງໄດ້ອອກແຮງຊອກຫາວິທີເພື່ອກຳເອົາກຳລັງລະຫວ່າງກາງ ດ້ວຍການຊື້ຈ້າງ,ແຊກຊຶມ, ແກ່ດຶງ ບໍ່ໃຫ້ງຽວມາຫາກຳລັງປະຕິວັດ; ເມື່ອບໍ່ໄດ້ຕາມເຈຕະນາຂອງເຂົາແລ້ວ ເຂົາກໍ່ຫັນໄປໃຊ້ວິທີການທຳລາຍດັບສູນກຳລັງ ລະຫວ່າງກາງ. ເຖິງຢ່າງນັ້ນກໍ່ຕາມ, ຈາກທ່າອ່ຽງທີ່ກ້າວຫນ້າຂອງກຳລັງລະຫວ່າງກາງ ໃນຂັ້ນຕົ້ນ, ດ້ວຍຄວາມເປັນທຳ ແລະ ກຳລັງແຮງຂອງການປະຕິວັດ, ພວກເຮົາກໍ່ມີຄວາມສາມາດພຽງພໍ ເພື່ອເຮັດໃຫ້ເຂົາເຈົ້າໄວ້ເນື້ອເຊື່ອໃຈ ແລະ ຕື່ນຕົວ, ຊັກຈູງເຂົາເຈົ້າໃຫ້ໄປນຳການປະຕິວັດຢ່າງຍາວນານ.

ໃນຂະນະ ທີ່ປະຕິບັດການຮ່ວມສຳພັນກັບກຳລັງລະຫວ່າງກາງນັ້ນ, ພັກເຮົາກໍ່ຮັບຮູ້ສະເຫມີວ່າ ເນື່ອງຈາກພື້ນຖານສັງຄົມຂອງເຂົາ, ກຳລັງລະຫວ່າງກາງມີທາດແທ້ໂນ້ມອຽງໄປມາ, ທັງຖືກກະທົບຢ່າງເປັນປະຈຳ ຈາກບັນດາປັດໃຈພາວະວິໄສດີ ດ້ານຫນຶ່ງແມ່ນແສນຍານຸພາບຂອງຄວາມເປັນທຳ ແລະ ໄຊຊະນະ ຂອງການປະຕິວັດ; ອີກດ້ານຫນຶ່ງ ແມ່ນນະໂຍບາຍ ລໍ້ລວງ, ຊື້ຈ້າງ, ແບ່ງແຍກ

ຂອງສັດຕູ ... ສະນັ້ນ, ກຳລັງລະຫວ່າງກາງຍາມໃດກໍ່ມີຄວາມອາດສາມາດຜົນແຍກໄປຕາມສອງທິດ : ທິດໜຶ່ງແມ່ນອຽງຊ້າຍ, ອຽງໄປທາງຕັ້ງໜ້າ, ທາງຕໍ່ສູ້, ຮ່ວມສຳພັນກັບກຳລັງປະຕິວັດຢ່າງແໜ້ນແຟ້ນຍິ່ງຂຶ້ນ; ທິດໜຶ່ງອີກ ແມ່ນອຽງຂວາ, ປະນີ ປະນອມ ແລະ ກ້າວໄປເຖິງສົມຮູ້ຮ່ວມຄິດ ກັບພວກປະຕິການ ນິຍົມຈັກກະພັດ. ເພາະສະນັ້ນ, ຂະບວນວິວັດ ແຫ່ງການຮ່ວມສຳພັນກັບກຳລັງລະຫວ່າງກາງ ຕ້ອງເປັນຂະບວນວິວັດ ທັງສາມັກຄີ, ທັງຕໍ່ສູ້ທັງອອກແຮງຂົນຂວາຍ ເຂົາເຈົ້າ, ຊຸກຍູ້ ແລະ ເສີມຂະຫຍາຍດ້ານຕັ້ງໜ້າຂອງເຂົາເຈົ້າ, ແຕ່ພ້ອມກັນນັ້ນກໍ່ຕ້ອງຕໍ່ສູ້ ຢ່າງເປັນປະຈຳ, ໃຈແຍກຈຳແນກທ່າອຽງ ຜິດພາດຂອງເຂົາເຈົ້າດ້ວຍຄວາມຈິງໃຈ, ຈຳກັດດ້ານຫຽ້ທ້ ຂອງເຂົາເຈົ້າ, ຕ້ານການແຊກຊຶມຂອງສັດຕູເຂົ້າໃນແນວ ຄິດແລະການຈັດຕັ້ງຂອງເຂົາເຈົ້າ. ໃນເມື່ອເກີດມີການຜົນແຍກຢູ່ພາຍໃນກຳລັງລະຫວ່າງກາງ,ພວກເຮົາກໍ່ຍັງໄດ້ຢືນໝັ້ນຢູ່ໃນຫຼັກໝັ້ນຮ່ວມສຳພັນຂອງພວກເຮົາ : ດ້ານໜຶ່ງແມ່ນເພີ່ມທະວີຄວາມສາມັກຄີກັບກຳລັງ ທີ່ກ້າວໜ້າ, ແຕ່ອີກດ້ານໜຶ່ງກໍ່ກ່າວປະນາມການກະທຳສົມຮູ້ຮ່ວມຄິດກັບອາເມລິກາ ຂອງພາກສ່ວນອຽງຂວານັ້ນ ຢ່າງເຄັ່ງຂິມ. ແຕ່

ເຖິງຢ່າງນັ້ນ ກໍ່ຍັງຢຶດໝັ້ນນະໂຍບາຍ ເຮັດໃຫ້ເຂົາເຈົ້າ ຕັ້ງຕົວຢູ່ເປັນກາງ, ຍາດແຍ່ງເຂົາເຈົ້າ ແລະ ແຍກ ເຂົາເຈົ້າອອກຈາກ ພວກຂວາຈັດ ໃນລະດັບໃດໜຶ່ງ, ບໍ່ປະໃຫ້ເຂົາເຈົ້າກອນເຂົ້າກັນກັບພວກຂວາຈັດ ແລະ ໃຫ້ ເຂົາເຈົ້າມີໂອກາດກັບຄືນມາ ຫາການປະຕິວັດ. ນະໂຍ ບາຍແນວໂຮມອັນສະເໝີຕົ້ນ ສະເໝີປາຍ, ມີຫຼັກ ມີ ເກນ ແລະ ຈິງໃຈຂອງພັກເຮົາ ໄດ້ປັບປຸງການຮ່ວມສຳ ພັນ ລະຫວ່າງກຳລັງປະຕິວັດ ກັບກຳລັງເປັນກາງຮັກຊາດ ຢ່າງໜັ້ນໜຶ້ນ, ເຮັດໃຫ້ເຂົາເຈົ້ານັບມື້ ນັບເຊື່ອໝັ້ນຕໍ່ ພັກ ແລະ ຕັດສິນໃຈໄປນຳການປະຕິວັດ; ພ້ອມກັນນັ້ນ ກໍ່ ຄ່ອຍ ໆ ເຮັດໃຫ້ຫຼາຍ ຄົນ ທີ່ຢູ່ໃນພາກສ່ວນງຽງຂວານັ້ນ ເຫັນໃບໜ້າຂອງຈັກກະພັດອາເມລິກາ ແລະ ລູກມື ແລະ ເຫັນແຈ້ງຄວາມເປັນທຳຂອງການປະຕິວັດ. ຍ້ອນແນວນັ້ນ, ເຂົາເຈົ້າກໍ່ໄດ້ມີໂອກາດປະກອບສ່ວນ ໃນລະດັບ ໃດໜຶ່ງ ເຂົ້າໃນໄຊຊະນະຂອງການປະຕິວັດໃນຫວ່າງແລ້ວນີ້.

ກ່ຽວກັບຮູບການຮ່ວມສຳພັນ ກັບກຳລັງລະຫວ່າງ ກາງ ກໍ່ເຊັ່ນດຽວກັນກັບການຮ່ວມສຳພັນກັບຄົນອື່ນ ເທິງ ອື່ນໆ, ມັນເປັນບັນຫາໜຶ່ງ ທີ່ຈະຕ້ອງພິຈາລະນາຢ່າງລະ ອຽດລະອໍ ເພື່ອມີຮູບການອັນເໝາະສົມ. ໃນເມື່ອກຳລັງ

ປະຕິວັດຍັງບໍ່ທັນເຂັ້ມແຂງພຽງພໍເທື່ອ, ພົນຖານຂອງການ
ຮ່ວມສຳພັນຍັງອີງໃສ່ແຕ່ບາງທັດສະນະກວມລວມ (ຄືບັນ
ຫາ ສັນຕິພາບ ເປັນກາງ ...) ຫລື ຫາກໍ່ເປັນເອກະ
ພາບກັນໄດ້ ແຕ່ໃນບັນຫາລະອຽດຈຳນວນຫນຶ່ງນັ້ນ , ພັກ
ເຮົາໄດ້ໃຊ້ຮູບການປະສົມ ປະສານ ການກະທຳກັບແຕ່ລະ
ຝ່າຍ, ແຕ່ລະຫຽອມ, ກະທັ້ງເຖິງກັບແຕ່ລະຄົນ, ໃນແຕ່
ລະໄລຍະເວລາ ແລະໃນບັນຫາໃດຫນຶ່ງອັນແນ່ນອນ(ເຊັ່ນ
ບັນຫາຕໍ່ສູ້ທວງໃຫ້ເຈລະຈາ, ບັນຫາເລືອກຕັ້ງສະພາ ຜູ້
ແທນລາສະດອນເພີ່ມເຕີມ, ການປະກາດໃຊ້ລັດຖະທຳມະ
ນູນ ທີ່ມີບາງລະບຽບການກ້າວຫນ້າ ແລະ ອື່ນ ໆ ...).
ຖ້າຈັດຕັ້ງການຮ່ວມສຳພັນອັນໃດ ອັນຫນຶ່ງ ທີ່ບໍ່ທັນສົມຄວນ
ເຮັດເທື່ອໃນສະພາບການດັ່ງກ່າວນີ້, ມັນຈະເປັນການ ກໍ່
ອຸປະສັກ ໃຫ້ແກ່ການເຕົ້າໂຮມກຳລັງ ຢ່າງກວ້າງຂວາງ.
ຕະຫຼອດ ໄລຍະແຫ່ງການຕໍ່ສູ້ເຈລະຈາກັບຝ່າຍກົງກັນຂ້າມ
ເວັ້ນແຕ່ເທື່ອສຸດທ້າຍ, ນອກນັ້ນ ເທື່ອໃດຝ່າຍກົງກັນຂ້າມ
ກໍ່ທວງໃຫ້ພວກເຮົາເຂົ້າຮ່ວມໃນຖານະນາມອັນດຽວກັບຈຳ
ພວກຄົນນິຍົມ ສັນຕິພາບ ເປັນກາງ, ທັງນີ້ ກໍ່ເພາະວ່າ
ເຈດຕະນາຂອງເຂົາເຈົ້າແມ່ນຢາກຍາດເອົາເກົ້າອີ້ໃນລັດ
ຖະບານປະສົມ ໄດ້ ຫຼາຍ , ນອກນັ້ນ ເຂົາເຈົ້າຍັງມີກົນອຸ

ບາຍແນໃສ່ຈຳກັດ ບໍ່ໃຫ້ພວກເຮົາເປີດກວ້າງກຳລັງ ແລະ ຫວັງເຮັດໃຫ້ແນວໂຮມສາມັກຄີຂອງພວກເຮົາຮັດແຄບເຂົ້າໃນຕົວ.

ໃນເມື່ອກຳລັງປະຕິວັດ ໄດ້ເຕີບໃຫຍ່ ເຂັ້ມແຂງ, ອິດທິພົນຂອງການປະຕິວັດໄດ້ເຊີດຊູຂຶ້ນ, ເມື່ອໃນຮ່ວມສຳພັນກໍ່ໄດ້ບັນລຸຄວາມເປັນເອກະສັນກັນ ໃນບັນດາຈຸດຫມາຍ ແລະແຜນນະໂຍບາຍອັນຍາວນານກວ່ານັ້ນແລ້ວ ແມ່ນຕ້ອງມີ <u>ຮູບການຈັດຕັ້ງຮ່ວມສຳພັນດ້ວຍໂຄງການທີ່ເຫມາະ ສົມ</u> ເພື່ອອຳນວຍຄວາມສະດວກໃຫ້ແກ່ການປະສົມ ປະສານກັນ ແລະເຮັດໃຫ້ມີຄວາມເປັນເອກະພາບໃນການກະທຳ ທີ່ສູງຂຶ້ນກວ່າເກົ່າ, ແຕ່ ກໍ່ຍັງຮັບປະກັນລັກສະນະ ເປັນເອກະລາດ ທີ່ຈຳເປັນຂອງແຕ່ລະພາຄີ ໃນວົງສຳພັນ, ພ້ອມກັນນັ້ນ ກໍ່ເພື່ອປະຕິບັດທິດນຳ " ທັງສາມັກຄີ ທັງຕໍ່ສູ້ " ເຊິ່ງເປັນເງື່ອນໄຂອັນຫນຶ່ງທີ່ຈຳເປັນສຳ ລັບ ການປັບປຸງ ແລະ ຂະຫຍາຍແນວໂຮມໃນສະພາບການໃຫມ່. ຮູບການຈັດຕັ້ງຮ່ວມສຳພັນດັ່ງກ່າວນັ້ນ ເປັນແນວໂຮມອັນກວ້າງໃຫຍ່ກວ່າເກົ່າ, ນອກຈາກການຮ່ວມສຳພັນ ລະຫວ່າງແນວລາວຮັກຊາດ ກັບກຳລັງເປັນກາງຮັກຊາດແລ້ວ ຍັງໄດ້ຮ່ວມສຳພັນກັບບັນດາກຳລັງ ແລະ ພາກສ່ວນທີ່ມີທ່າອ່ຽງຮັກຊາດອື່ນໆ

ອີກຕື່ມ. ໃນແນວໂຮມໃຫມ່ນັ້ນ ແນວລາວຮັກຊາດ ດຳລົງບົດບາດເປັນ ຫຼັກແຫຼ່ງ ເພື່ອຮັບປະກັນການນຳພາຂອງພັກ. ອັນນີ້ເປັນການປະດິດສ້າງ ຂອງພັກໃນການປະຕິບັດນະໂຍບາຍແນວໂຮມ ແນໃສ່ເຕົ້າໂຮມທຸກກຳລັງ, ທຸກທ່າອຽງທີ່ຮັກຊາດ ແລະ ກ້າວຫນ້າ, ພັນແຍກຖັນແຖວ ຂອງສັດຕູ, ລອມປ່ຽວສັດຕູຕົວຕົ້ນຢ່າງສູດຂີດ.

<u>ການຮວມສຳພັນ ທາງການທະຫານ</u> ແມ່ນຮູບການຮ່ວມສຳພັນເປັນພິເສດແບບຫນຶ່ງ ຢູ່ໃນປະເທດເຮົາ. ການຮ່ວມສຳພັນດັ່ງກ່າວນັ້ນ ໄດ້ຢັ້ງຢືນໃຫ້ເຫັນວ່າ ໃນການປະຕິວັດຊາດ-ປະຊາທິປະໄຕ, ໃນເງື່ອນໄຂໃດຫນຶ່ງ ທີ່ແນ່ນອນ, ສອງກອງທະຫານ ທີ່ສັງກັດໃນສອງກຳລັງ ການເມືອງ ທີ່ແຕກຕ່າງກັນ ກໍ່ມີຄວາມອາດສາມາດ ສ້າງແນວຮ່ວມສຳພັນສູ້ຮົບ ຕານສັດຕູລວມ ຂອງຊາດໄດ້, ຈິ່ງຢູ່ວ່າກອງທັບເປັນເຄື່ອງມືແຫ່ງຄວາມຮຸນແຮງດວຍອາວຸດ, ແຕ່ລະກອງທັບຕ່າງກໍ່ມີທາດແທຈິນຈຸ້ນສະເພາະຂອງໃຜລາວ. ເພາະສະນັ້ນ, <u>ຮູບການຮວມສຳພັນແບບນີ້ ຈະຄົງຕົວຢູ່ໄດ້ກໍ່ຕໍ່ເມື່ອການປະຕິວັດ ມີເງື່ອນໄຂ ແລະ ຄວາມສາມາດເຮັດໃຫ້ກອງທະຫານ ທີ່ຮວມສຳພັນນັ້ນ ມີການປ່ຽນທາດເທື່ອລະກາວ ໄປຕາມທິດ ຂອງກອງທັບຮັບໃຊ້ປະຊາຊົນ,</u>

ກ່ອນອື່ນໝົດຕ້ອງແກ້ໄຂໃຫ້ໄດ້ບັນດາ ບັນຫາພື້ນຖານກວ່າໝູ່ດີ ກຳນົດວັດຖຸປະສົງ ຂອງການຕໍ່ສູ້, ສາງການພົວພັນແບບໃໝ່ລະຫວ່າງກອງທັບກັບປະຊາຊົນ,ລະຫວ່າງ ນາຍແລະ ພົນທະຫານ ... ວິທີການອົນຂວາງຊອນເຊື້ອຕົ້ນຕໍແມ່ນເອົາການສຶກສາອົບຮົມ ການເມືອງປະຕິວັດ ເຂົ້າໃນການດຳເນີນຊີວິດໃນກອງທະຫານຂອງເຂົາເຈົ້າ, ປຸກລຸກແນວຄິດ ແລະ ເຊີດຊູລະດັບຄວາມຕື່ນຕົວຂອງພົນທະຫານຂຶ້ນຢ່າງບໍ່ຢຸດຢັ້ງ; ພອມກັນນັ້ນ ກໍ່ຈິງໃຈຊ່ວຍເຫຼືອ ອົບຮົມດັດສາງຖັນແຖວນາຍທະຫານ ໃຫ້ມີຄວາມກາວໜາ. ໃນບັນຫານີ້ ຕ້ອງມີການຮັບຮູ້ ຢ່າງຖືກຕ້ອງວ່າ ການເຄົາລົບນັບຖືລັກສະນະເອກະລາດ ຂອງບັນດາກຳລັງ ທີ່ເຂົ້າຮ່ວມສຳພັນນັ້ນ ຕ້ອງບົນ ຫຼັກການທີ່ວ່າ ລັກສະນະ ເອກະລາດຂອງແຕ່ລະກຳລັງ ຕ້ອງອີງໃສ່ພື້ນຖານທີ່ໄດ້ເປັນເອກະສັນກັນກ່ຽວກັບ ວັດຖຸປະສົງ ຂອງການຮ່ວມສຳພັນ ຄື : ຕໍ່ສູ້ເພື່ອເອກະລາດແຫ່ງຊາດ, ຕໍ່ສູ້ເພື່ອຜົນປະໂຫຍດຂອງປະຊາຊົນ. ບົດຮຽນຕົວຈິງ ຈາກຂະບວນວິວັດແຫ່ງການຮ່ວມສຳພັນກັບກອງທະຫານເປັນກາງໄດ້ຢັ້ງຢືນໃຫ້ເຫັນວ່າ ຄັນບໍ່ເຮັດໃຫ້ກອງທະຫານນັ້ນກາຍ ເປັນກອງທະຫານປະຕິວັດເທື່ອລະກາວ ໄດ້ແລ້ວກໍ່ບໍ່ອາດຈະຮັກສາການຮ່ວມສຳພັນລະ

ຫວ່າງ ສອງກອງທະຫານນັ້ນໄດ້ ເພາະວ່າ, ຖ້າຫາກແທ້ ຊົນຊັ້ນເກົ່າຂອງເຂົາເຈົ້າຫາກບໍ່ໄດ້ຮັບການດັດສາງ, ກອງທະຫານນັ້ນບໍ່ໄວ້ກໍ່ຊາກໍ່ຈະກາຍເປັນກຳລັງຕ້ານປະຊາຊົນ, ຕ້ານການປະຕິວັດ.

ການທີ່ພວກເຮົາ ສາມາດປະຕິບັດການຮ່ວມສຳພັນກັບກຳລັງ ລະຫວ່າງກາງ ແລະ ຍາດແຍ່ງຊັ້ນຄົນຊັ້ນເທິງອື່ນໆ ໄດ້ຢ່າງກວ້າງຂວາງນັ້ນ ແມ່ນຜົນສຳເລັດໃຫຍ່ອັນໜຶ່ງ ແລະ ກໍ່ເປັນບົດຮຽນເອກະລັກ ຂອງພັກເຮົາ. ແຕ່ອັນນັ້ນ ເປັນພຽງແຕ່ດ້ານໜຶ່ງໃນວຽກງານແນວໂຮມຂອງພັກ, ຈິງຢູ່ວ່າ ມັນມີຄວາມສຳຄັນທີ່ສຸດ, ຫາກບໍ່ທັນແມ່ນວຽກງານພື້ນຖານກວ່າໝູ່. ປັດໃຈຕັດສິນຜົນສຳເລັດຂອງວຽກງານຮ່ວມສຳພັນ ແລະ ຍາດແຍ່ງນີ້ ນອກຈາກ ແນວທາງການເມືອງອັນຖືກຕ້ອງຂອງພັກແລ້ວ ແມ່ນກຳລັງແຮງແຫ່ງຄວາມສາມັກຄີ ຂອງປະຊາຊົນຜູ້ອອກແຮງງານບັນດາຊົນຊາດ ·ເຊື້ອພັນ ຂອງມັນແມ່ນກ້ອນກຳລັງພັນທະພາບກຳມະກອນ-ຊາວນາ. ຖ້າການປະຕິວັດ ບໍ່ມີກຳລັງແຮງແລ້ວເຖິງແມ່ນວ່າຈະມີຍຸດໂທບາຍອ່ອນໂຍນ, ຈະມີວິທີ ຄ່ອງແຄ້ວປານໃດກໍ່ຕາມ, ກໍ່ບໍ່ອາດໄປດູດດຶງກຳລັງ ລະຫວ່າງກາງ ແລະ ບັນດາຊັ້ນຄົນຊັ້ນເທິງອື່ນ ໆ ໃຫ້ຮວມມາທາງ

ຝ່າຍປະຕິວັດໄດ້ດອກ. ກົງກັນຂ້າມ, ຖ້າກ້ອນກຳລັງພົນທະພາບກຳມະກອນ-ຊາວນາ ຫາກໄດ້ຮັບ ການກໍ່ສ້າງຂຶ້ນເປັນພື້ນອັນໜັກແໜ້ນ ໃຫ້ແກ່ແນວໂຮມແລ້ວ, ເຖິງແມ່ນວ່າ ສັດຕູຈະທຳການແບ່ງແຍກ, ມາງເພທຳລາຍ ຫຼືວ່າ " ສຳພັນທະມິດ ທີ່ມີຄວາມໂນ້ມອຽງ " ຫາກຄອນແຄນຂອນອຽງ, ເປັນຕົ້ນແມ່ນ ໃນໄລຍະທີ່ການຕໍ່ສູ້ພວມຜັນແປໄປຢ່າງດູເດືອດສັບສົນ, ແຕ່ແນວໂຮມເອກະພາບ ແຫ່ງຊາດກໍ່ບໍ່ອາດຖືກຜ່າມ້າງໄດ້. ເພາະສະນັ້ນ, ໃນເວລາດຳເນີນວຽກງານແນວໂຮມພັກຕອງກັນ ແລະຕ້ານທ່າອຽງ " ຂວາ " ຢູ່ສະເໝີ ເຊິ່ງມັນມັກປະກົດອອກ ຢູ່ໃນບ່ອນເບິ່ງເບົາການສ້າງກອນກຳລັງສາມັກຄີ ໃນໝູ່ມະຫາຊົນຂັ້ນພື້ນຖານ, ເບິ່ງເບົາບົດບາດຂອງພັນທະພາບ ກຳມະກອນ-ຊາວນາ, ເອົາໃຈໃສ່ແຕ່ການຍາດແຍ່ງ ບັນດາຊັ້ນຄົນຊັ້ນເທິງ, ບໍ່ຫວງໃຍຈິດຈໍ່ເຖິງຜົນປະໂຫຍດຂອງມະຫາຊົນຜູ້ອອກແຮງງານ, ສາມັກຄີດ້ານດຽວ, ຂາດການຕໍ່ສູ້ຢູ່ພາຍໃນແນວໂຮມ, ຢ້ານແຕ່ມີການແຕກຫັກ, ບໍ່ກາຍົກລະດັບຄາດໝາຍ ຂອງການຕໍ່ສູ້ໃຫ້ສູງຂຶ້ນຕາມການຂະຫຍາຍຕົວຂອງສະພາບການ ... ພອມກັນນັ້ນ ກໍ່ຕອງກັນ ແລະຕ້ານທ່າອຽງລັບແຄບ, ມີຂັ້ນກຄິດຕາຍຕົວ, ບໍ່ກາເປີດ

ກວ້າງແນວໂຮມ ຫຼື ວາງລະດັບຄາດໝາຍສູງເກີນໄປ; ທ່າອຽງດັ່ງກ່າວນັ້ນ ມັກປະກົດອອກພາຍຫຼັງ ທີ່ການ ເຂົ້າລວມລາວໃນແຕ່ລະເທື່ອຖືກສັດຕູມ້າງເພ ຫຼື ໃນເວລາທີ່ຖັນແຖວຂອງບັນດາກຳລັງຮ່ວມສຳພັນມີການຜັນແຍກ.

ທັງໝົດທີ່ກ່າວມາເທິງນັ້ນ ແມ່ນບົດຮຽນຂອງພັກເຮົາ ໃນຂະບວນວິວັດແຫ່ງການປະຕິບັດນະໂຍບາຍ ແນວໂຮມ. ບົດຮຽນ ເຫຼົ່ານັ້ນຊີ້ໃຫ້ເຫັນຢ່າງຈະແຈ້ງວ່າ ຖ້າຮູ້ອີງໃສ່ມະຫາຊົນພື້ນຖານ, ສ້າງກຳລັງຕົວຈິງຂອງການປະຕິວັດຂຶ້ນໄດ້ ໂດຍເອົາພັນທະພາບ ກຳມະກອນ-ຊາວນາເປັນພື້ນ ແລະ ບົນພື້ນຖານດັ່ງກ່າວນັ້ນ ໃນແຕ່ລະໄລຍະກໍຮູ້ໃຈແຍກການຫັນປ່ຽນ ໃນສາຍພົວພັນລະຫວ່າງ ຊັ້ນຄົນຕ່າງ ໆ ໃນສັງຄົມ ແລະ ຄວາມອາດສາມາດໃໝ່ ຂອງການປະຕິວັດ ເພື່ອວາງຍຸດໂທບາຍອັນຄ່ອງແຄ້ວ, ມີໄຫວພິບ ແລ້ວຈິ່ງສາມາດສ້າງແນວໂຮມສາມັກຄີ ແລະ ປະສົມຢ່າງກວ້າງຂວາງ ພາຍໃຕ້ການນຳພາຂອງພັກໄດ້, ແລະຈາກນັ້ນ ກໍ່ສາມາດລະດົມກຳລັງແຮງທັງໝົດ ຂອງຊາດເພື່ອຕີເອົາຊະນະສັດຕູ.

VII. ກຳແໜ້ນທັດສະນະກຳລັງຊຸນແຮງປະຕິວັດ, ສົມທົບສອງກຳລັງ ແລະ ສອງຮູບການຕໍ່ສູ້ ອາວຸດກັບການເມືອງ ຢ່າງແໜ້ນແຟ້ນ ເພື່ອຕີເອົາຊະນະສັດຕູ.

ການປະຕິວັດແມ່ນການຕໍ່ສູ້ຊົນຊັ້ນ ທີ່ດຸເດືອດ ຂ້ຽວຂາດ, ບັນຫາພື້ນຖານຂອງທຸກການປະຕິວັດ ແມ່ນ ບັນຫາອຳນາດການປົກຄອງ. ພັກເຮົານຳພາປະຊາຊົນ ດຳເນີນການຕໍ່ສູ້ປະຕິວັດ ແມ່ນແນໃສ່ວັດຖຸປະສົງໂຄ່ນລົ້ມຊົນຊັ້ນປົກຄອງທັງໝົດ, ຍາດເອົາອຳນາດການປົກຄອງມາມີປະຊາຊົນ ເພື່ອສ້າງສັງຄົມໃໝ່, ໃນນັ້ນ ປະຊາຊົນ ເປັນເຈົ້າຊາຕາກຳຂອງປະເທດຊາດ, ເປັນເຈົ້າແຫ່ງການດຳລົງຊີວິດຂອງຕົນຢ່າງແທ້ຈິງ. ພວກຈັກກະພັດ ແລະຊົນຊັ້ນປົກຄອງບໍ່ຫ່ອນຍອມປະວາງສິດປົກຄອງຂອງພວກເຂົາ ຢ່າງງ່າຍດາຍຈັກເທື່ອ, ເພາະສະນັ້ນ ມີແຕ່ຜ່ານກຳລັງ ຊຸນແຮງປະຕິວັດເທົ່ານັ້ນ ຈຶ່ງຈະສາມາດແກ້ໄຂວັດຖຸປະສົງສຸດທ້າຍຂອງການປະຕິວັດໄດ້ຢ່າງເຖິງຖອງ. ພຶດຕິກຳ ແຫ່ງການຕໍ່ສູ້ອັນດຸເດືອດຂ້ຽວຂາດ, ລະອິດລະອຽວໃນ ໓໐ ປີ ຂອງປະຊາຊົນບັນດາຊົນຊາດເຮົາ ເພື່ອຍາດເອົາເອກະ

ລາວ, ອິດສະຫຼະພາບມາໃຫ້ປະເທດຊາດນັ້ນ ໄດ້ຍົກຂຶ້ນໃຫ້ເຫັນຢ່າງເຕັມສ່ວນທາດແທ້ອັນດື້ດານປະຕິການສຸດ ຂະໜາດຂອງພວກຈັກກະພັດຜູ້ມາຮຸກຮານ ແລະບັນດາກຸ່ມປົກຄອງທີ່ເປັນລູກມື, ພ້ອມກັນນັ້ນ ກໍ່ຍົກໃຫ້ເຫັນຢ່າງຈະແຈ້ງວ່າ ເພື່ອຍາດເອົາສິດດຳລົງຊີວິດຂອງຕົນ ປະຊາຊົນເຮົາມີແຕ່ທາງເສັ້ນດຽວເທົ່ານັ້ນຄື ເສັ້ນທາງປະຕິວັດດ້ວຍ ກຳລັງຮຸນແຮງ.

ກຳລັງຮຸນແຮງປະຕິວັດ ແມ່ນກຳລັງຮຸນແຮງ ຂອງມະຫາຊົນ. ການປະຕິວັດຊາດ-ປະຊາທິປະໄຕ ຂອງປະເທດເຮົາ ແມ່ນພາລະກິດຂອງປະຊາຊົນລາວ ຜູ້ຮັກຊາດແລະກ້າວໜ້າທຸກ ໆ ຄົນ. ເພາະສະນັ້ນ, ກຳລັງຮຸນແຮງປະຕິວັດຂອງປະເທດເຮົາແນ່ນອນຕ້ອງແມ່ນກຳລັງຮຸນແຮງຂອງມະຫາຊົນສ່ວນຫຼວງຫຼາຍໃນບັນດາຊັ້ນຄົນ ກ່ອນອື່ນໝົດແມ່ນຂອງປະຊາຊົນຜູ້ອອກແຮງງານ ທີ່ຖືກກົດຂີ່ຂູດຣີດໜັກໜ່ວງກວ່າໝູ່. ມະຫາຊົນມີຫຼາຍຮູບຫຼາຍແບບຫຼາຍວິທີທີ່ສຸດໃນການສຳແດງກຳລັງແຮງແຫ່ງມານະຈິດຕໍ່ສູ້ ຂອງຕົນ. ແຕ່ຜ່ານບົດຮຽນຕົວຈິງ ຂອງການປະຕິວັດປະເທດເຮົາ, ພວກເຮົາອາດກ່າວໂດຍສັງເຂບໄດ້ວ່າ ກຳລັງຮຸນແຮງຂອງມະຫາຊົນສະແດງອອກເປັນຈິງໃນສອງຮູບການຄື

ຮູບການຕໍ່ສູ້ດ້ວຍການເມືອງ, ຮູບການຕໍ່ສູ້ດ້ວຍອາວຸດແລະການສົມທົບລະຫວ່າງສອງຮູບການດັ່ງກ່າວນັ້ນ. ສະນັ້ນ, ເພື່ອດຳເນີນການປະຕິວັດ ຈຳເປັນຕ້ອງສ້າງສອງ ກຳລັງ ຂອງກຳລັງຮຸນແຮງຄື ກຳລັງການເມືອງ ຂອງມະຫາ ຊົນ ແລະກຳລັງປະກອບອາວຸດປະຊາຊົນ.

<u>ກຳລັງການເມືອງຂອງມະຫາຊົນ ແມ່ນກຳລັງຂອງທົ່ວປວງຊົນທີ່ເຂົ້າຮ່ວມການຕໍ່ສູ້ປະຕິວັດຢ່າງມີການ ຈັດຕັ້ງ</u> ປະກອບດ້ວຍບັນດາຊົນຊັ້ນປະຕິວັດ ແລະຊັ້ນຄົນໃນໝູ່ ປະຊາຊົນທີ່ຮັກຊາດ, ກ້າວໜ້າ ສັງກັດໃນບັນດາຊົນຊາດ ທີ່ໄດ້ເຕົ້າໂຮມເຂົ້າໃນແນວໂຮມເອກະພາບແຫ່ງຊາດ ອັນກວ້າງຂວາງ ໂດຍເອົາພັນທະພາບກຳມະກອນ -ຊາວນາ ເປັນພື້ນຖານພາຍໃຕ້ການນຳພາຂອງພັກ. ຢູ່ໃນປະເທດເຮົາ, ກຳລັງການເມືອງຂອງມະຫາຊົນປະກອບດ້ວຍ ບັນດາອົງການຈັດຕັ້ງມະຫາຊົນຢູ່ໃນແນວລາວຮັກຊາດ, ບັນດາກຳລັງເປັນກາງຮັກຊາດທີ່ຮ່ວມສຳພັນກັບແນວລາວ ຮັກຊາດ ແລະບັນດາອົງການຈັດຕັ້ງມະຫາຊົນຢູ່ຕົວເມືອງ ໃນເຂດຄວບຄຸມຂອງສັດຕູທີ່ໄດ້ຮັບພົນກະທົບຂອງການປະຕິວັດ ແລະຕໍ່ສູ້ຕາມຄຳຂວັນຕ່າງໆ ເຊິ່ງພັກເຮົາໄດ້ວາງອອກໃນແຕ່ລະໄລຍະ.

ກຳລັງການເມືອງຂອງມະຫາຊົນ ເປັນພື້ນຖານໃຫ້ແກ່ການສ້າງທຸກກຳລັງປະຕິວັດຂອງພັກ, ເປັນແຫຼ່ງກຳເນີດຖັນແຖວພະນັກງານແລະເປັນບ່ອນຂະຫຍາຍ, ເຝິກຝົນຫຼໍ່ຫຼອມຖັນແຖວສະມາຊິກຂອງພັກ. ໃນທຸກໆໄລຍະຂອງການປະຕິວັດ, ກຳລັງການເມືອງຂອງມະຫາຊົນ ເປັນກຳລັງຕໍ່ສູ້ເຊິ່ງໜ້າກັບສັດຕູຢ່າງເປັນປະຈຳດ້ວຍວິທີການຮອບອັນພົນແນວທີ່ແຕກຕ່າງກັນ, ນັບແຕ່ການຕໍ່ສູ້ທວງເອົາຜົນປະໂຫຍດທາງດ້ານເສດຖະກິດ, ຊີວິດການເປັນຢູ່, ຕໍ່ສູ້ເພື່ອຄຸນຄ່າທາງດ້ານວັດທະນະທຳ-ຈິດໃຈໄປເຖິງການຕໍ່ສູ້ເພື່ອສິດທາງການເມືອງອັນເປັນຕາຍຂອງຊາດ. ເມື່ອການປະຕິວັດຜັນແປໄປພາຍໃຕ້ຮູບການຕໍ່ສູ້ດ້ວຍອາວຸດເປັນຕົ້ນຕໍນັ້ນ ກຳລັງການເມືອງຂອງມະຫາຊົນບໍ່ພຽງແຕ່ ເປັນຮາກຖານສຳລັບສ້າງ ແລະຂະຫຍາຍກຳລັງປະກອບອາວຸດ ປະຊາຊົນເທົ່ານັ້ນ, ຫາກຍັງເປັນກຳລັງບຸກເຊິ່ງໜ້າທີ່ສຳຄັນທີ່ສຸດ, ມັນປະສົມປະສານຢ່າງເປັນປະຈຳກັບກຳລັງ ປະກອບອາວຸດເພື່ອບຸກສັດຕູຕະຫຼອດໃນຂະບວນວິວັດແຫ່ງການຕໍ່ສູ້ດ້ວຍອາວຸດອີກດ້ວຍ. ໃນທຸກໄລຍະຂອງການເອົາລວມລາວ, ກຳລັງການເມືອງຂອງມະຫາຊົນໄດ້ເປັນກຳລັງຕໍ່ສູ້ຢູ່ຮາກຖານ ເພື່ອປະສານສົມທົບກັບພາກສ່ວນຕໍ່ສູ້ທາງ ກົດ

ຫມາຍຂອງພວກເຮົາໃນສະຖາບັນປະສົມ ແລະເປັນກຳລັງຫນູນຫນີບບັງຄັບສັດຕູຕ້ອງປະຕິບັດຂໍ້ຄວາມທີ່ໄດ້ ເຊັນກັນ, ຈຳກັດການປະຕິບັດບັນດານະໂຍບາຍປະຕິການ ຂອງພວກເຂົາ; ພ້ອມກັນນັ້ນກໍ່ເປັນພື້ນຖານທີ່ຂາດບໍ່ໄດ້ເພື່ອໃຫ້ພວກເຮົາຫັນທິດການຕໍ່ສູ້ ໃນແຕ່ລະເທື່ອ ຕາມຄວາມຮຽກຮ້ອງແຫ່ງການປ່ຽນແປງຂອງສະຖານະການ. ໃນແຕ່ລະໄລຍະທີ່ການປະຕິວັດຂຶ້ນສູ່ກະແສສູງເປັນຕົ້ນໃນເມື່ອການປະຕິວັດໄດ້ຫັນໄປສູ່ໄລຍະລຸກຮື້ຂຶ້ນພ້ອມກັນພາບດຽວແລະບຸກໂຈມຕີຢ່າງຮອບດ້ານນັ້ນ, ກຳລັງການເມືອງ ຂອງມະຫາຊົນ ກໍ່ຍັງເປັນກຳລັງຫນຶ່ງຂອງຄວາມຮຸນແຮງ ທີ່ມີບົດບາດຕັດສິນແລະພ້ອມກັບກຳລັງປະກອບອາວຸດ ໄດ້ເຮັດໃຫ້ມານະ ຈິດແລະກຳລັງຂອງສັດຕູແຕກທະລາຍ, ເຮັດໃຫ້ກົງຈັກອຳນາດການປົກຄອງປະຕິການເປ່ຽລອຍແລ້ວທັບມ້າງມັນ ຢ່າງສິ້ນເຊີງ, ຍາດເອົາສິດເປັນເຈົ້າມາເທື່ອລະພາກສ່ວນ ກ້າວໄປເຖິງຍາດເອົາສິດເປັນເຈົ້າທັງຫມົດມາໃຫ້ປະຊາຊົນ.

ເນື່ອງຈາກກຳລັງການເມືອງມີຖານະບົດບາດຍຸດທະສາດສຳຄັນທີ່ສຸດດັ່ງໄດ້ກ່າວມານັ້ນ, ການປຸກລະດົມ, ຈັດຕັ້ງມະຫາຊົນ ແລະສ້າງໃຫ້ເປັນກຳລັງການເມືອງອັນຫນັກແຫນ້ນເຂັ້ມແຂງຂອງການປະຕິວັດນັ້ນ ເປັນຫນ້າທີ່ພື້ນຖານ

ອັນເປັນປະຈຳໜ້າທີ່ໜຶ່ງຂອງພັກ. ໃນບັນຫານີ້ວຽກງານອັນໜຶ່ງທີ່ມີຄວາມສຳຄັນເປັນພິເສດ ແມ່ນວຽກງານຈັດຕັ້ງມະຫາຊົນ ເພາະການສ້າງກຳລັງການເມືອງ ແມ່ນເພື່ອຕໍ່ສູ້ກັບສັດຕູ. ຢາກເຮັດໄດ້ຄືແນວນັ້ນ ມີແຕ່ເອົາ ມະຫາຊົນເຂົ້າໃນການຈັດຕັ້ງພາຍໃຕ້ຮູບການນີ້ ຫຼື ຮູບການອື່ນ ຈຶ່ງຈະສາມາດເສີມຂະຫຍາຍກຳລັງແຮງ ຂອງມະຫາຊົນເພື່ອຕີເອົາຊະນະສັດຕູໄດ້; ພ້ອມກັນນັ້ນ ກໍ່ຈຶ່ງ ຈະມີເງື່ອນໄຂສຶກສາອົບຮົມ, ເຕົ້າໂຮມ ແລະສາມັກຄີ ມະຫາຊົນ, ຊີ້ນຳຂະບວນການຕໍ່ສູ້ຂອງມະຫາຊົນໃຫ້ໄປຖືກທິດຖືກທາງ. ວຽກງານຈັດຕັ້ງມະຫາຊົນ ຕ້ອງເຮັດຖືກຕາມແນວທາງການເມືອງຂອງພັກ: ດ້ານໜຶ່ງແມ່ນ ຕ້ອງອີງໃສ່ມະຫາຊົນຊັ້ນພື້ນຖານ–ມະຫາຊົນກຳມະກອນ, ຊາວນາສ້າງເປັນບັນດາອົງການຈັດຕັ້ງມະຫາຊົນຫຼັກແຫຼ່ງຂອງພັກ, ແຕ່ພ້ອມກັນນັ້ນກໍ່ຕ້ອງໝູນໃຊ້ຫຼາຍຮູບການຈັດຕັ້ງຢ່າງ ມີໄຫວພິບແລະອຸດົມຮັ່ງມີ ເພື່ອລະດົມທຸກຄວາມສາມາດຂອງຊັ້ນຄົນອື່ນ ໆ ເຂົ້າໃນແນວຕໍ່ສູ້ລວມ. ຕະຫຼອດໃນທຸກໆໄລຍະປະຕິວັດ, ກ່ອນອື່ນໝົດພັກເຮົາໄດ້ລົງເລິກໃນໝູ່ ມະຫາຊົນຊາວໄຮ່ນາບັນດາຊົນຊາດ, ໂຄສະນາ,ສຶກສາ ອົບຮົມ, ຈັດຕັ້ງເຂົ້າເຈົ້າເປັນກອງກຳລັງການເມືອງ ທີ່ໜັກແໜ້ນ

ແລະເຂັ້ມແຂງຂອງພັກ. ແມ່ນກຳລັງການເມືອງ ອັນໃຫຍ່ຫຼວງດັ່ງກ່າວນີ້ເອງທີ່ໄດ້ສະແດງບົດບາດອັນສຳຄັນທີ່ສຸດໃນການກໍ່ສ້າງ ແລະປົກປັກຮັກສາບັນດາຖານທີ່ໝັ້ນ ປະຕິວັດໃນສະໄໝຕໍ່ຕ້ານຝະລັ່ງ, ໃນຂະບວນລຸກຮືຂຶ້ນພ້ອມກັນທັນທິດຕໍ່ສູ້ໃນປີ ໑໙໔໙–໑໙໕໐, ໃນສົງຄາມປະຊາຊົນອັນຍືດເຍື້ອຕ້ານອາເມລິກາຜູ້ຮຸກຮານ ກໍ່ເຊັ່ນດຽວກັນກັບໃນການລຸກຮືຂຶ້ນພ້ອມກັນພາບດຽວ ແລະບຸກໂຈມຕີ ຢ່າງຮອບດ້ານໃນປີ ໑໙໗໕. ໄປຄຽງຄູ່ກັບການປຸກລຸກມະຫາຊົນຊາວໄຮ່ນາ, ຢູ່ໃນບໍລິເວນຕົວເມືອງຕ່າງ ໆ ພັກເຮົາໄດ້ຜ່ານບັນດາຮາກຖານຫຼັກແຫຼ່ງຂອງພັກທີ່ໄດ້ຈັດຕັ້ງຂຶ້ນທາງລັບ, ອີງໃສ່ຊົນຊັ້ນກຳມະກອນ ແລະ ຊັ້ນຄົນພື້ນຖານ, ນຳໃຊ້ເງື່ອນໄຂຖືກກົດໝາຍຢ່າງສູດຂີດ ເພື່ອເຕົ້າໂຮມມະຫາຊົນພາຍໃຕ້ຮູບການຈັດຕັ້ງຫຼາຍຮູບທີ່ແຕກຕ່າງກັນ ແລະນຳພາເຂົາເຈົ້າທຳການຕໍ່ສູ້ຢ່າງຄ່ອງແຄ່ວຕາມຄຳຂວັນຂອງພັກ. ດ້ວຍແບບວິທີຈັດຕັ້ງມະຫາຊົນດັ່ງກ່າວນັ້ນ ໃນວັນເວລາ ແຫ່ງກະແສສູງຂອງການລຸກຮືຂຶ້ນພ້ອມກັນພາບດຽວ ເພື່ອຍາດເອົາອຳນາດການປົກຄອງໃນທົ່ວປະເທດ, ພັກເຮົາໄດ້ລະດົມກຳລັງການເມືອງອັນໃຫຍ່ໂຕເຂັ້ມແຂງປະກອບດ້ວຍບັນດາຊັ້ນຄົນມະຫາຊົນໃນຊົນນະບົດ ແລະຕົວເມືອງ, ຢູ່

ກັບທີ່ ກໍ່ຄືເອົາມາຈາກເຂດປົດປ່ອຍເຂົ້າໃນ ບັ້ນຕໍ່ສູ້ຍຸດທະສາດຂັ້ນສຸດທ້າຍ, ເຮັດໃຫ້ກຳລັງການເມືອງ ຂອງມະຫາຊົນກາຍເປັນກຳລັງອັນຍິ່ງໃຫຍ່ມະຫາສານ ສົມທົບກັບກຳລັງປະກອບອາວຸດ ທັບມ້າງບັນດາພາຫະນະປະຕິການແລະລະບອບປົກຄອງຂອງສັດຕູຢູ່ໃນກະໂຕແກອແຫຼ່ງ ຂອງພວກເຂົາ, ເຮັດໃຫ້ການປະຕິວັດຊາດ-ປະຊາທິປະໄຕຂອງປະເທດເຮົາສິ້ນສຸດລົງຢ່າງມີໄຊສົມບູນ.

ໄປຄຽງຄູ່ກັບການສ້າງກຳລັງການເມືອງ ຂອງມະຫາຊົນ, <u>ພັກເຮົາໄດ້ຖືເປັນສຳຄັນທີ່ສຸດການສ້າງກຳລັງປະກອບອາວຸດປະຊາຊົນ</u>. ຈຸດພິເສດອັນໜຶ່ງຂອງການປະຕິວັດຂອງປະເທດເຮົາ ແມ່ນຮູບການຕໍ່ສູ້ດ້ວຍອາວຸດ ໄດ້ປະກົດຂຶ້ນຕັ້ງແຕ່ຂັ້ນຕົ້ນ ແລະໄດ້ສອດຮ້ອຍໄປຕະຫຼອດ ໃນຂະບວນວິວັດຂອງການປະຕິວັດເຮົາ. ສະນັ້ນ ບັນຫາສ້າງກຳລັງປະກອບອາວຸດຢູ່ໃນປະເທດເຮົາກໍ່ມີຈຸດສະເພາະ ຂອງມັນຄື: ກຳລັງປະກອບອາວຸດເຮົາແມ່ນສ້າງຂຶ້ນເທິງພື້ນຖານກຳລັງການເມືອງຂອງມະຫາຊົນ, ແຕ່ມັນຫາກໄດ້ ປະກົດຕົວຂຶ້ນຕັ້ງແຕ່ຫົວທີພ້ອມໆກັບບັນດາອົງການຈັດຕັ້ງມະຫາຊົນ, ທຳອິດແມ່ນເລີ່ມຈາກບັນດາຈຸໜ່ວຍ, ກົມກອງທະຫານຈາດກອງຫຼອນທີ່ອ່ອນນ້ອຍໃນເຂດຮາກຖານມະຫາຊົນຢູ່ແຕ່

ລະບ້ານ, ແຕ່ລະຕາແສງ. ໃນສະໄໝຕົ້ນ ຂອງການຕໍ່ຕ້ານຝະລັ່ງ, ມະຫາຊົນແກ່ນສານທີ່ຕັ້ງໜ້າຂັນແຂງກວ່າໝູ່ໃນບັນດາການຈັດຕັ້ງອົດສະຫຼະໃນຄາວນັ້ນກໍ່ໄດ້ເປັນທັງກອງຫຼອນ, ທັງຕໍ່ສູ້ດ້ວຍອາວຸດ (ຕີແບບກອງຫຼອນ), ທັງເຂົ້າຮ່ວມການຕໍ່ສູ້ດ້ວຍການເມືອງ (ຖືກກົດໝາຍ ຫຼືບໍ່ຖືກກົດໝາຍ). ເລີ່ມຈາກໜໍ່ແໜງທຳອິດດັ່ງກ່າວນັ້ນ ແລະຜ່ານຂະບວນວິວັດແຫ່ງການສົມທົບຮູບການຕໍ່ສູ້ທັງສອງເພື່ອກໍ່ສ້າງ, ປົກປັກຮັກສາ ແລະເປີດກວ້າງບັນດາຖານທີ່ໝັ້ນກອງຫຼອນ, ພັກເຮົາໄດ້ຈັດຕັ້ງ ແລະຂະຫຍາຍມັນ ອອກເປັນກຳລັງປະກອບອາວຸດມະຫາຊົນຢ່າງກວ້າງຂວາງຫຼວງຫຼາຍ. ກຳລັງດັ່ງກ່າວນັ້ນກໍ່ແມ່ນພາກສ່ວນໜຶ່ງຂອງກຳລັງການເມືອງມະຫາຊົນຢູ່ຮາກຖານນັ້ນເອງ ແລະກໍ່ເປັນພາກສ່ວນຫຼັກແຫຼ່ງອີກດ້ວຍ. ບົນພື້ນຖານທີ່ກຳລັງປະກອບອາວຸດມະຫາຊົນນັບມື້ນັບໄດ້ຮັບການເປີດກວ້າງ, ໄປຄຽງຄູ່ ກັບການຂະຫຍາຍຕົວຂອງກຳລັງການເມືອງ, ຕະຫຼອດໄລຍະການຕໍ່ສູ້, ພັກເຮົາໄດ້ສ້າງກຳລັງປະກອບອາວຸດປະຈຳການຂຶ້ນເທື່ອລະກ້າວ ເລີ່ມຕົ້ນແມ່ນການສ້າງບັນດາກົມກອງທະຫານທ້ອງຖິ່ນຢູ່ໃນແຕ່ລະບໍລິເວນ ໄປເຖິງກົມກອງກຳລັງຫຼວງໃນແຕ່ລະສະໜາມຮົບ, ກ້າວຂຶ້ນສ້າງ ເປັນກຳລັງ

ຫຼວງເຄື່ອນທີ່ຢູ່ໃນບັນດາບໍລິເວນຍຸດທະສາດອັນກວ້າງໃຫຍ່ໃນທົ່ວປະເທດ. ຕະຫຼອດໃນຂະບວນວິວັດແຫ່ງການເຄື່ອນໄຫວ, ກົມກອງທະຫານປະຈຳການເຫຼົ່ານີ້ຍັງໄດ້ເປັນ ຫຼັກແຫຼ່ງໃຫ້ການຂະຫຍາຍກຳລັງການເມືອງຂອງມະຫາຊົນ ຢູ່ຕາມບໍລິເວນເຄື່ອນໄຫວສູ້ຮົບຂອງຕົນ, ແລະກຳລັງການເມືອງຂອງມະຫາຊົນຍິ່ງເຕີບໃຫຍ່ເຂັ້ມແຂງຂຶ້ນເທົ່າໃດ ກໍ່ຍິ່ງເປັນການເພີ່ມທະວີໃຫ້ກຳລັງປະກອບອາວຸດ ຂະຫຍາຍຕົວເຕີບໃຫຍ່ຂຶ້ນນຳເທົ່ານັ້ນ.

ການປະກົດຕົວຂອງກຳລັງປະກອບອາວຸດ ບົນພື້ນຖານກຳລັງການເມືອງຂອງມະຫາຊົນ, ການຂະຫຍາຍຕົວໄປພ້ອມໆ ກັນຂອງກຳລັງທັງສອງທີ່ເພີ່ມເຕີມໃຫ້ກັນ, ຊຸກຍູ້ກັນໃຫ້ເຕີບໃຫຍ່ນັ້ນ ໄດ້ເຮັດໃຫ້ກຳລັງປະກອບອາວຸດຂອງປະເທດເຮົາມີລັກສະນະທັງເປັນກອງກຳລັງສູ້ຮົບ, ທັງເປັນກອງກຳລັງການເມືອງຂອງພັກຢ່າງເດັ່ນຈັດທີ່ສຸດ. ໃນທຸກໆໄລຍະ ແຫ່ງການຂະຫຍາຍຕົວ ຂອງຕົນນັບຕັ້ງແຕ່ ເວລາຍັງເປັນກົມກອງເຄື່ອນໄຫວກະແຈກກະຈາຍຈົນມາເຖິງເວລາໄດ້ປະກົດຕົວຂຶ້ນເປັນກົມກອງລວມໝູ່ຂະໜາດຕ່າງ ໆ ນັ້ນ ບໍ່ວ່າຢູ່ບ່ອນໃດແລະເວລາໃດ, ກຳລັງປະກອບອາວຸດຂອງພວກເຮົາກໍ່ມີສອງໜ້າທີ່ຕົ້ນຕໍຄື ທັງສູ້ຮົບ ດັບສູນກຳ

ລັງການທະຫານຂອງສັດຕູ ເພື່ອປົກປັກຮັກສາ ຮາກຖານການເມືອງ, ທັງເຂົ້າຮ່ວມປຸກລຸກມະຫາຊົນ ເພື່ອກໍ່ສ້າງ, ປັບປຸງແລະ ຂະຫຍາຍຮາກຖານການເມືອງ; ທັງສອງຫນ້າທີ່ນັ້ນມີການຕິດພັນກັນ ແລະ ແລ້ວແຕ່ສະພາບການໃນແຕ່ລະບ່ອນ, ແຕ່ລະເວລາ, ຫນ້າທີ່ນີ້ ຫຼື ຫນ້າທີ່ນັ້ນໄດ້ພົ້ນເດັ່ນຂຶ້ນເປັນຫນ້າທີ່ອັນດັບຫນຶ່ງສຳລັບແຕ່ລະກົມກອງ.

ເນື່ອງຈາກຈຸດພິເສດທາງດ້ານລັກສະນະ ແລະບົດບາດຂອງກຳລັງປະກອບອາວຸດຂອງປະເທດເຮົາຄືແນວນັ້ນ, ພັກເຮົາ ຈຶ່ງໄດ້ຢືນຢັນສະເຫມີວ່າ ກຳລັງປະກອບອາວຸດຂອງປະເທດເຮົາເປັນກຳລັງປະກອບອາວຸດປະຕິວັດ ຂອງປະຊາຊົນບັນດາຊົນຊາດໃນທົ່ວປະເທດ, ຕົ້ນຕໍ ແມ່ນຂອງປະຊາຊົນຜູ້ອອກແຮງງານ, ເນື້ອແທ້ແມ່ນຂອງກຳມະກອນ-ຊາວນາພາຍໃຕ້ການນຳພາອັນເດັດຂາດ, ໂດຍກົງ ແລະຮອບດ້ານຂອງພັກ. ດ້ວຍເຫດນັ້ນ ກຳລັງປະກອບອາວຸດຂອງປະເທດເຮົາຈຶ່ງເປັນກຳລັງເສົາຄ້ຳຂອງພັກ, ເປັນພາກສ່ວນຫນຶ່ງທີ່ສຳຄັນທີ່ສຸດຂອງກຳລັງຮຸນແຮງ ປະຕິວັດເພື່ອດຳເນີນການຕໍ່ສູ້ທາງອາວຸດ ແລະ ເປັນຫຼັກແຫຼ່ງ, ເປັນກຳລັງຫນູນຫຼັງ ໃຫ້ແກ່ການຕໍ່ສູ້ທາງການເມືອງອີກດ້ວຍ. ພ້ອມກັນນັ້ນ, ມັນກໍ່ເປັນພາຫະນະຜະເດັດການ

ຂອງອຳນາດການປົກຄອງປະຕິວັດ ແລະ ມາໃນຊູ່ມນີ້ ໄດ້ເປັນພາຫະນະຜະເດັດການອັນຄົມແຫຼມຂອງລັດປະຊາທິປະໄຕປະຊາຊົນ ເພື່ອຕ້ານສັດຕູຢູ່ພາຍໃນ ກໍ່ຄືສັດຕູທີ່ມາຈາກພາຍນອກ, ປົກປັກຮັກສາໝາກຜົນຂອງການປະຕິວັດ. ທາດແທ້ຂອງມັນແມ່ນທາດແທ້ຂອງຊົນຊັ້ນກຳມະກອນ, ຫຼັກໝັ້ນແນວຄິດຂອງມັນແມ່ນຫຼັກໝັ້ນແນວຄິດ ຂອງລັດທິ ມາກ-ເລນິນ. ທາງການຈັດຕັ້ງ, ກຳລັງປະກອບອາວຸດຂອງປະເທດເຮົາປະກົດຕົວຂຶ້ນເປັນ ໓ ປະເພດກຳລັງ ຄືກອງທະຫານຫຼວງ, ກອງທະຫານທ້ອງຖິ່ນ ແລະ ທະຫານລາດກອງຫຼອນ. ທັງ ໓ ປະເພດກຳລັງນີ້ລ້ວນແຕ່ມີ ຖານະຍຸດທະສາດອັນສຳຄັນທີ່ສຸດ ປະສານສົມທົບກັນແລະເສີມຂະຫຍາຍຄວາມສັກສິດເຊິ່ງກັນ ແລະກັນໃນການຕໍ່ສູ້, ເປັນຫຼັກແຫຼ່ງໃຫ້ປວງຊົນເລວເສີກ, ເຮັດໃຫ້ທ່າສະໜາມ ອັນກວ້າງຂວາງ ແລະໜັກແໜ້ນຂອງສົງຄາມປະຊາຊົນ ປະກົດຂຶ້ນໃນທົ່ວປະເທດ.

ໂດຍອີງໃສ່ທັດສະນະພື້ນຖານດັ່ງກ່າວນັ້ນ, ໃນຂະບວນວິວັດແຫ່ງການສ້າງກຳລັງປະກອບອາວຸດ, ພັກເຮົາຍາມໃດກໍ່ໄດ້ກຳແໜ້ນຫຼັກການ <u>ເອົາການກໍ່ສ້າງທາງການ</u>

ເມືອງເປັນພື້ນຖານ, ເອົາຊຸມນະພາບເປັນຕົ້ນຕໍ, ແລະບໍ່ໄດ້ລົດລະໃນການຈົດຈໍ່ກໍ່ສ້າງ ແລະ ປັບປຸງສາຍພົວພັນ ໔ ປະການຂອງກອງທັບ ຄື ການພົວພັນລະຫວ່າງກອງທັບກັບປະຊາຊົນ, ລະຫວ່າງພະນັກງານກັບນັກຮົບ, ລະຫວ່າງບັນດາຊົນຊາດ ແລະການພົວພັນສາກົນ; ແກ້ໄຂ ສາຍພົວພັນລະຫວ່າງຈຳນວນ ກັບຄຸນນະພາບ, ລະຫວ່າງ ການຈັດຕັ້ງກັບແນວຄິດ, ລະຫວ່າງອາວຸດກັບຄົນຢ່າງຖືກຕ້ອງ, ເສີມຂະຫຍາຍປັດໃຈທາງການເມືອງ-ຈິດໃຈເພື່ອ ເຊີດຊູປະສິດທິພາບຂອງການສູ້ຮົບໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ ແລະແກ້ໄຂຂໍ້ຫຍຸ້ງຍາກຕ່າງໆ ທາງດ້ານວັດຖຸ ແລະ ທາງດ້ານການປະກອບອາວຸດຍຸດທະພັນ; ພ້ອມກັນນັ້ນ ກໍ່ເດັດດ່ຽວປະຕິບັດທິດນຳທີ່ວ່າ ທັງສູ້ຮົບ ທັງກໍ່ສ້າງ ເພື່ອປັບປຸງແລະຂະຫຍາຍກຳລັງ. ຍ້ອນແນວນັ້ນ, ເຖິງແມ່ນວ່າຕ້ອງໄດ້ສູ້ຮົບຢ່າງລຽນຕິດຕະຫຼອດໃນຂະບວນວິວັດແຫ່ງການຕໍ່ສູ້ຢ່າງລຳບາກຍາວນານ, ດຸເດືອດ, ລະອິດລະອ້ຽວ, ສັບສົນແລະເຖິງແມ່ນວ່າ ປະເທດຊາດຂອງພວກເຮົາຍັງຢູ່ໃນສະພາບດ້ອຍພັດທະນາໃນຫຼາຍດ້ານກໍ່ຕາມ, ກຳລັງປະກອບອາວຸດປະຊາຊົນຂອງປະເທດເຮົາຍາມໃດກໍ່ເຮັດຫຼ້ອນພາລະບົດບາດທີ່ເປັນພາຫະນະຂອງກຳລັງຮຸນແຮງ ແລະ

ເປັນພາຫະນະຂອງຜະເດັດການ, ຈິ່ງຮັກພັກດີ ຢ່າງເດັດຂາດຕໍ່ພັກຢູ່ສະເໝີ, ໝັ້ນໝນຮອກ້າກັ່ນໃນທຸກສະຖານະການແລະຂະຫຍາຍຕົວເຕີບໃຫຍ່ຢ່າງບໍ່ຢຸດຢັ້ງ ສຳເລັດຢ່າງດີເດັ່ນທຸກໜ້າທີ່ປະຕິວັດ ທີ່ພັກໄດ້ມອບໝາຍໃຫ້ ໃນທຸກໆໄລຍະຂອງສົງຄາມ, ໃນທຸກໆເທື່ອທີ່ເຂົ້າລວມລາວກໍ່ຄືໃນບັ້ນລຸກຮື້ຂຶ້ນພ້ອມກັນພາບດຽວ ແລະບຸກໂຈມຕີ ຢ່າງຮອບດ້ານທີ່ມີໄຊຊະນະສົມບູນໃນປີ ໑໙໗໕.

ໂດຍກຳແໜ້ນສອງກຳລັງຍຸດທະສາດນັ້ນ ພັກເຮົາໄດ້ປະສານສົມທົບຢ່າງຖືກຕ້ອງ ແລະປີຊາສາມາດສອງຮູບການຕໍ່ສູ້ຄື ຮູບການຕໍ່ສູ້ດ້ວຍອາວຸດ ກັບຮູບການຕໍ່ສູ້ ດ້ວຍການເມືອງ ເພື່ອດຳເນີນການປະຕິວັດປົດປ່ອຍປະເທດຊາດ, ປົດປ່ອຍປະຊາຊົນ, ສ້າງລະບອບສັງຄົມໃໝ່. ພວກຈັກກະພັດ ແລະ ລູກມືປະຕິການຍາມໃດ ກໍ່ອີງໃສ່ ກຳລັງຮຸນແຮງຝືນປະຕິວັດ ແລະ ໃຊ້ວິທີການຮອບດ້ານ ການທະຫານ ແລະການເມືອງເພື່ອຕີ້ນາງການປະຕິວັດ ຂອງປະເທດເຮົາ. ຍ້ອນແນວນັ້ນ, ຢາກພາການປະຕິວັດໄປເຖິງໄຊຊະນະ, ພັກຈຶ່ງບໍ່ພຽງແຕ່ຕ້ອງມີແນວທາງການ ເມືອງອັນຖືກຕ້ອງເທົ່ານັ້ນ, ຫາກຍັງຕ້ອງຮູ້ໝູນໃຊ້ວິທີ, ຮູບການຕໍ່ສູ້ຢ່າງເໝາະສົມອີກດ້ວຍ ເພື່ອລະດົມບັນດາກຳລັງ

ປະຕິວັດໃຫ້ໄດ້ໃນລະດັບສູງທີ່ສຸດເທົ່າທີ່ຈະສູງໄດ້ ບຸກເຂົ້າ
ໃສ່ບ່ອນອ່ອນຂອງສັດຕູ, ຍາດເອົາໄຊຊະນະໃຫຍ່ ເທົ່າທີ່
ຈະໃຫຍ່ໄດ້ມາໃຫ້ການປະຕິວັດ. ການສົມທົບການຕໍ່ສູ້ດ້ວຍ
ອາວຸດກັບການຕໍ່ສູ້ດ້ວຍການເມືອງ ຕັ້ງເປັນແບບວິທີ ທີ່ພັກ
ເຮົາໄດ້ຫມູນໃຊ້ເພື່ອແກ້ໄຂຄວາມຮຽກຮ້ອງຕ້ອງການ ດັ່ງ
ກ່າວມາເທິງນັ້ນ. ພຶດຕິກຳແຫ່ງການຕໍ່ສູ້ຢ່າງມີໄຊ ຂອງ
ການປະຕິວັດເຮົາເປັນເວລາ ໓໐ ປີນັ້ນ ໄດ້ຢັ້ງຢືນ ຢ່າງ
ປະຈັກແຈ້ງວ່າ ການກຳນົດແບບວິທີຕໍ່ສູ້ຂອງພັກເຮົາ ແມ່ນ
ຖືກຕ້ອງ ແລະປະດິດສ້າງທີ່ສຸດ.

ພາຍຫລັງການລຸກຮືຂຶ້ນພ້ອມກັນພາບດຽວ ເມື່ອ ປີ
໑໙໔໕, ພວກລ່າເມືອງຂຶ້ນຝະລັ່ງໄດ້ຕ່າວຄືນມາ ຮຸກຮານ
ປະເທດເຮົາດ້ວຍກຳລັງອາວຸດຢ່າງບັງອາດ ເປີດແປນ,
ຢຽບຢ່ຳຍ່ຳຍີສິດ ແລະຜົນປະໂຫຍດທຸກປະການ ຂອງຊາດ
ເຮົາ, ການຕໍ່ສູ້ດ້ວຍອາວຸດ ໄດ້ກາຍເປັນຮູບການຕໍ່ສູ້ທີ່ຈຳ
ເປັນຂອງການປະຕິວັດເຮົາ. ແຕ່ ຢາກນຳພາປວງຊົນລຸກ
ຂຶ້ນຕໍ່ສູ້ດ້ວຍອາວຸດ ກໍຕ້ອງມີຂະບວນວິວັດ ແຫ່ງການໂຄສະ
ນາ, ສຶກສາອົບຮົມມະຫາຊົນໃຫ້ຕື່ນຕົວ, ເອົາເຂົາເຈົ້າ
ເຂົ້າໃນການຈັດຕັ້ງ ແລະນຳພາເຂົາເຈົ້າຕໍ່ສູ້ດ້ວຍຮູບການ
ຕ່າງ ໆ ແຕ່ຕ່ຳໄປຫາສູງ, ຈາກຮູບການເຄື່ອນໄຫວ ຖືກ

ກົດໝາຍ ທັງຕີແບບກອງຫຼອນ ແລະໃຊ້ການຕໍ່ສູ້ທາງການເມືອງຖືກກົດໝາຍ ແລະເຄິ່ງກົດໝາຍ ເພື່ອຕ້ານ ການກໍາຣາບປາບປາມຂອງສັດຕູ, ກ້າວຂຶ້ນເຖິງຂັ້ນຈັດຕັ້ງເປັນແນວຣົບປົລະປັກ, ທໍາການສູ້ຣົບ ຕີສັດຕູ ຢ່າງເປີດເຜີຍ, ປົກປັກຮັກສາຖິ່ນຖານບ້ານຊ່ອງ, ປົກປັກຮັກສາ ແລະ ກໍ່ສ້າງຖານທີ່ໝັ້ນ. ການສົມທົບລະຫວ່າງ ການຕໍ່ສູ້ດ້ວຍອາວຸດກັບການຕໍ່ສູ້ດ້ວຍການເມືອງໄດ້ປະກົດອອກຕັ້ງແຕ່ເວລານັ້ນໂລດ ແລະກໍ່ໄດ້ກາຍເປັນກົດເກນແຫ່ງການເຄື່ອນໄຫວຕໍ່ສູ້ປະຕິວັດຂອງປະຊາຊົນເຮົາ. ເພາະສະນັ້ນ, ແນວທາງ "ຕໍ່ຕ້ານແບບປ່ອງຊົນ, ຕໍ່ຕ້ານຢ່າງຮອບດ້ານ" ທີ່ພັກເຮົາໄດ້ໝູນໃຊ້ໃນໄລຍະຕໍ່ຕ້ານຝະລັ່ງນັ້ນ ໄດ້ກວມທັງຄວາມໝາຍຂອງການສົມທົບການຕໍ່ສູ້ດ້ວຍອາວຸດກັບການຕໍ່ສູ້ດ້ວຍການເມືອງໃນຕົວຂອງມັນແລ້ວ.

ກໍາລັງປະຕິວັດ ແລະ ຂະບວນການຕໍ່ສູ້ປະຕິວັດຍິ່ງເຕີບໃຫຍ່ເຂັ້ມແຂງເທົ່າໃດ, ບັນດາຮູບການຕໍ່ສູ້ ດ້ວຍອາວຸດ ແລະຕໍ່ສູ້ດ້ວຍການເມືອງກໍ່ຍິ່ງມີບາດກ້າວຂະຫຍາຍຕົວໃໝ່ທາງດ້ານໜ້າທີ່, ດ້ານຂະໜາດ, ດ້ານຮູບການຕໍ່ສູ້, ແລະຈາກນັ້ນຖານະບົດບາດຂອງແຕ່ລະຮູບການດັ່ງກ່າວໃນການຕໍ່ສູ້ປະຕິວັດເວົ້າທົ່ວໄປ ກໍ່ມີບັນບັບໄດ້ຮັບການ ກໍານົດ

ຢ່າງຈະແຈ້ງ.

<u>ການຕໍ່ສູ້ດ້ວຍອາວຸດ</u> ໃນຂັ້ນທໍາອິດ ມີໜ້າທີ່ບັ່ນທອນດັບສູນກໍາລັງປະກອບອາວຸດຂອງສັດຕູເທື່ອລະ ພາກສ່ວນນ້ອຍ ເພື່ອປົກປັກຮັກສາ, ເປີດກວ້າງຖານທີ່ ໝັ້ນແຫ່ງຕ່າງ ໆ ແລະລົບກວນແນວຫຼັງຂອງສັດຕູ, ເຂົ້າຮ່ວມແລະຊ່ວຍຊູ້ຍູ້ໜູນວຽກງານກໍ່ສ້າງ, ຂະຫຍາຍຮາກ ຖານການເມືອງ. ຈາກນັ້ນ ໄດ້ກ້າວຂຶ້ນເທື່ອລະກ້າວ ໄປເຖິງຂັ້ນຣັດໜ້າທີ່ສູ້ຣົບດັບສູນກໍາລັງທະຫານຂອງສັດຕູເປັນກົມກອງໃຫຍ່, ນັບທັງບັນດາກໍາລັງຍຸດທະສາດຂອງພວກປະຕິການພາຍໃນປະເທດກໍ່ຄືກໍາລັງປະກອບອາວຸດຂອງພວກບໍລິວານຂອງຈັກກະພັດອາເມລິກາ, ຜາບແພທຸກໆ ຫຼັກ ຕໍາລາຍຸດທະສາດສົງຄາມຂອງພວກເຂົາ, ປົກປັກຮັກສາແລະກໍ່ສ້າງເຂດປົດປ່ອຍໃຫ້ໜັກແໜ້ນຕາມຂະໜາດຂອງ ລັດໜຶ່ງ; ພ້ອມກັນນັ້ນກໍ່ຕີມ້າງ, ຣັດແຄບເຂດກວດກາ ຂອງສັດຕູ, ເປີດກວ້າງເຂດປົດປ່ອຍຂອງພວກເຮົາອອກຢ່າງບໍ່ຢຸດຢັ້ງ. ການຕໍ່ສູ້ດ້ວຍອາວຸດມີຄຸນປະໂຫຍດຊ່ວຍໜູນການຕໍ່ສູ້ດ້ວຍການເມືອງ ແລະປະສານສົມທົບນໍາກັນ, ຊຸກ ຍູ້ເຊິ່ງກັນ ແລະກັນ, ຊ່ວຍຊູຢ່າງມີຜົນສັກສິດໃຫ້ແກ່ຂະບວນການຕໍ່ສູ້ທາງການເມືອງຂອງມະຫາຊົນ ແລະ ໃຫ້ແກ່ການ

ລຸກຮື້ຂຶ້ນຍາດເອົາສິດເປັນເຈົ້າຂອງມະຫາຊົນ, ເປັນກຳລັງແຮງຫນູນຫຼັງອັນເຂັ້ມແຂງໃຫ້ພວກເຮົາໃນການຕໍ່ສູ້ ເຈລະຈາປະສົມ ແລະສ້າງເງື່ອນໄຂໃຫ້ບັນດາບັ້ນ ອົນຂວາຍ ແລະພັນແຍກຖັນແຖວຂອງສັດຕູ; ພິເສດແມ່ນ ໃນໄລຍະເຂົ້າລວມລາວຄັ້ງທີ່ ໒, ດ້ວຍການຢຶດເອົາບັນດາທີ່ຕັ້ງສຳຄັນຢູ່ໃນໃຈກາງຂອງສອງນະຄອນເປັນກາງ, ດ້ວຍບາດຄ້ອນຟາດໃສ່ການກະທຳບຽດຢຶດຂອງສັດຕູຢ່າງສະສົມແລະເປັນຕົ້ນແມ່ນດ້ວຍການເຄື່ອນທັບພອມກັນພາບດຽວຂອງກຳລັງປະກອບອາວຸດເຮົາເຂົ້າຕົວເມືອງຕ່າງ ໆ ທີ່ສຳຄັນໃນເຂດກວດກາຂອງຝ່າຍກົງກັນຂ້າມຢ່າງໄວພະລັນນັ້ນ, ການຕໍ່ສູ້ດ້ວຍອາວຸດ ໄດ້ກາຍເປັນບາດຄ້ອນຍຸດທະສາດອັນຫນຶ່ງໃນການສ້າງທາງຢຽບສັດຕູຢ່າງຂາດຕົວ, ເຮັດໃຫ້ມານະຈິດຕ້ານທານຂອງສັດຕູຊຸດໂຊມເສັຽຂວັນ, ເຮັດໃຫ້ສະພາບການມີການປ່ຽນປ້ຽນ ແລະ ສ້າງເງື່ອນໄຂໃຫ້ມະຫາຊົນລຸກຮື້ຂຶ້ນຢຶດອຳນາດການປົກຄອງມາມືຂອງຕົນຢ່າງມີໄຊສົມບູນ.

<u>ການຕໍ່ສູ້ດ້ວຍການເມືອງ</u> ທີ່ປະກົດອອກໃນໄລຍະຕໍ່ຕ້ານຝະລັ່ງ ແມ່ນພາຍໃຕ້ຮູບການຕໍ່ສູ້ຂອງມະຫາຊົນຢູ່ໃນແຕ່ລະທ້ອງຖິ່ນ ທວງໃຫ້ແກ້ໄຂບັນຫາທີ່ແຕະຕ້ອງເຖິງຊີວິດການເປັນຢູ່ຂອງເຂົາເຈົ້າ (ເຊັ່ນຕ້ານການເກນທະຫານ,

ການເກນກູລີ, ການກຳຣາບປາບປາມ, ການກວາດລ້າງ ແລະອື່ນໆ); ມາເຖິງໄລຍະຕ້ານອາເມລິກາ, ການຕໍ່ສູ້ນັ້ນໄດ້ຂະຫຍາຍຕົວຢ່າງແຂງແຮງດ້ວຍຫຼາຍຮູບການຕໍ່ສູ້ທີ່ອຸດົມຮັ່ງມີ ແລະມີໄຫວພິບ. ບົນພື້ນຖານໄຊຊະນະຂອງການຕໍ່ສູ້ດ້ວຍອາວຸດ ແລະອີງໃສ່ການຫນູນຫນຸນຂອງກຳລັງ ປະກອບອາວຸດ, ໂດຍປະສານສົມທົບ ລະຫວ່າງກຳລັງຮຸນແຮງຂອງມະຫາຊົນກັບການຕໍ່ສູ້ເຈລະຈາປະສົມ ແລະ ການຕໍ່ສູ້ໃນບັນດາສະຖາບັນປະສົມ, <u>ການຕໍ່ສູ້ດ້ວຍການເມືອງ ໃນໄລຍະນີ້ໄດ້ກາຍເປັນແບບວິທີບຸກສັດຕູແບບຫນຶ່ງທີ່ສຳຄັນ ທີ່ສຸດ</u> ແລະໄດ້ຮັບໄຊຊະນະອັນໃຫຍ່ຫຼວງຫຼາຍປະການຄື ໄດ້ບັງຄັບສັດຕູຕ້ອງເຈລະຈາ ແລະເຊັນສັນຍາທີ່ມີຜົນໃຫ້ການປະຕິວັດ, ຍອມສ້າງຕັ້ງບັນດາສະຖາບັນປະສົມຂຶ້ນ ຕາມແຜນທາງຂອງພວກເຮົາ, ປະຕິບັດນະໂຍບາຍ ຈຳນວນຫນຶ່ງທີ່ກ້າວຫນ້າ ເຊິ່ງເປັນການສ້າງເງື່ອນໄຂໃຫ້ ມະຫາຊົນຕໍ່ສູ້ນັບມື້ນັບແຂງແຮງຂຶ້ນ; ການຕໍ່ສູ້ນີ້ຍິ່ງເຮັດໃຫ້ ຖັນແຖວຂອງສັດຕູຄອນແຄນຜັນແຍກ, ຍາດແຍ່ງກຳລັງ ລະຫວ່າງກາງໃຫ້ງຽງມາຫາຝ່າຍປະຕິວັດ ແລະ ຂົນຂວາຍກອງທະຫານຂອງຝ່າຍກົງກັນຂ້າມພາກສ່ວນຫນຶ່ງ ໃຫ້ທຳການຄັດຄ້ານສົງຄາມ, ລຸກຮືຂຶ້ນກໍ່ການຈະລາຈົນ, ແຍກ

ຕົວອອກຈາກກຸ່ມແຖວຂອງພວກເຂົາ ແລ້ວຕັ້ງຕົວເປັນກອງທະຫານເປັນກາງຮັກຊາດ, ຮ່ວມສຳພັນສູ້ຮົບກັບກອງ ທັບປົດປ່ອຍປະຊາຊົນລາວ. ໃນໄລຍະທ້າຍຂອງການຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາ ແລະລູກມື, ຂະບວນການຕໍ່ສູ້ດ້ວຍການເມືອງຂອງມະຫາຊົນ ເປັນຕົ້ນ ໃນຕົວເມືອງໄດ້ຂະຫຍາຍຕົວຂຶ້ນສູ່ກະແສສູງ ອັນໄດ້ສ້າງເປັນສະພາວະການປະຕິວັດໂດຍກົງ, ແລະໂດຍປະສານສົມທົບລະຫວ່າງ " ໓ ບາດລ້ອມຍຸດທະສາດ" ໄດ້ບຸກໂຈມຕີປານພະຍຸ ລົມແດງເຂົ້າໃສ່ສັດຕູ, ທັບມ້າງບັນດາອົງການ ຫົວສະຫມອງຂອງພວກເຂົາໃຫ້ມຸ່ນທະລາຍລົງ, ລົບລ້າງລະບົບ ປົກຄອງທັງຫມົດຂອງພວກເຂົາ, ຍາດເອົາອຳນາດການປົກຄອງໃນຂອບເຂດທົ່ວປະເທດ, ສະຖາປະນາລະບອບສາທາລະນະລັດປະຊາທິປະໄຕປະຊາຊົນຂຶ້ນ. ທັງຫມົດ ນັ້ນໄດ້ດຳເນີນໄປໃນໄລຍະເວລາອັນສັ້ນ ແລະ ບໍ່ໄດ້ຜ່ານສົງຄາມກາງເມືອງທີ່ນອງເລືອດ.

ເມື່ອຫວນຄືນເບິ່ງຂະບວນວິວັດທັງຫມົດແຫ່ງການຕໍ່ສູ້ປະຕິວັດຂອງປະຊາຊົນເຮົາໃນ ໓໐ ປີທີ່ຜ່ານມາ, ການປະຕິວັດຂອງປະເທດເຮົາໄດ້ຜັນແປໄປພາຍໃຕ້ ຫລາຍຮູບການໃນຫລາຍໄລຍະ: ເລີ່ມຕົ້ນດ້ວຍການລຸກຮືຂຶ້ນ ຂອງມະ

ຫາຊົນ, ແລ້ວດຳເນີນສົງຄາມປະຊາຊົນສອງບັ້ນຕໍ່ເນື່ອງກັນຢ່າງຍືດເຍື້ອຍາວນານ ແລະດຸເດືອດຂ້ຽວຂາດ, ໃນນັ້ນ ໄດ້ມີການເຈລະຈາສ້າງຕັ້ງລັດຖະບານປະສົມ ໒ ຄັ້ງສະຫຼັບສັບຫວ່າງກັນ, ທ້າຍສຸດໄດ້ສຳເລັດລົງດ້ວຍ ບັ້ນລຸກຮືຂຶ້ນພ້ອມກັນພາບດຽວ ແລະ ບຸກໂຈມຕີຢ່າງ ຮອບດ້ານຍາດເອົາອຳນາດການປົກຄອງໃນທົ່ວປະເທດມາມີປະ ຊາຊົນ. ໃນແຕ່ລະໄລຍະໄດ້ມີຮູບການຕໍ່ສູ້ອັນອຸດົມຮັ່ງມີ ແຕກຕ່າງກັນ, ແຕ່ເບິ່ງທົ່ວໄປແລ້ວ,ຫມົດທຸກໄລຍະ ກໍ່ລ້ວນແຕ່ມີການສົມທົບລະຫວ່າງສອງຮູບການຕໍ່ສູ້ພື້ນຖານຄື ຮູບການຕໍ່ສູ້ດ້ວຍການເມືອງ ກັບຮູບການຕໍ່ສູ້ດ້ວຍອາວຸດ. ການລຸກຮືຂຶ້ນທົ່ວໄປໃນປີ ໑໙໔໕ ແມ່ນການສົມທົບລະຫວ່າງກຳລັງຮຸນແຮງຂອງມະຫາຊົນ ກັບກຳລັງປະກອບອາວຸດ ປ້ອງກັນຕົວຂອງມະຫາຊົນທີ່ປະກອບດ້ວຍອາວຸດພື້ນເມືອງທຸກຊະນິດທີ່ມີໃນເວລານັ້ນ. ໃນສົງຄາມປະຊາຊົນສອງບັ້ນ, ຮູບການຕໍ່ສູ້ດ້ວຍອາວຸດ ເປັນຮູບການຕໍ່ສູ້ຕົ້ນຕໍ, ແຕ່ການ ຕໍ່ສູ້ດ້ວຍການເມືອງຂອງມະຫາຊົນ ເປັນຕົ້ນຢູ່ໃນເຂດກວດກາຂອງສັດຕູ ກໍ່ມີຄວາມສຳຄັນທີ່ສຸດ. ໃນບັນດາໄລຍະແຫ່ງການເຂົ້າລວມລາວ, ການຕໍ່ສູ້ດ້ວຍການເມືອງຂອງມະຫາຊົນ ປະສານສົມທົບກັບການຕໍ່ສູ້ທາງກົດໝາຍໃນບັນດາສະ

ຖາບັນປະສົມນັ້ນ ຊ້ຳພັດພົ້ນເດັ່ນຂຶ້ນເປັນອັນດັບໜຶ່ງ. ແຕ່ພ້ອມກັນນັ້ນ, ກຳລັງປະກອບອາວຸດ ຂອງພວກເຮົາ ກໍ່ຍັງຕ້ອງໄດ້ກຽມພ້ອມສູ້ຮົບຢູ່ສະເໝີ ແລະ ສູ້ຮົບເປັນຢ່າງດີ, ຜາບແພ້ທຸກການກະທຳເກາະຜິດທາງການທະຫານຂອງສັດຕູ, ປົກປັກຮັກສາສະພາບການໃຫ້ຢູ່ໃນຄວາມ ສະຫງົບ, ທັງນັ້ນກໍ່ເພື່ອຮັບໃຊ້ຢ່າງມີຜົນສັກສິດໃຫ້ແກ່ການຕໍ່ສູ້ ທາງການເມືອງ. ມາຮອດການລຸກຮືຂຶ້ນ ເດືອນ ພຶດສະພາ ໑໙໗໕ ເຊິ່ງເປັນບັ້ນສິ້ນສຸດຂອງໄລຍະການປະຕິວັດຊາດ-ປະຊາທິປະໄຕນັ້ນ, ການສົມທົບທັງສອງຮູບການນີ້ ໄດ້ສະແດງອອກໃນ ມີ ບາດຄ້ອນຍຸດທະສາດ, ຈິງຢູ່ວ່າ ຮູບການຕໍ່ສູ້ດ້ວຍອາວຸດພຽງແຕ່ຜັນແປໄປ ພາຍໃຕ້ຮູບ ການເຄື່ອນທັບຍຸດທະສາດເຂົ້າຢຶດຕັ້ງບັນດາໃຈກາງ ຫົວສະໝອງຂອງສັດຕູຢ່າງໄວພະລັນ ແລະເປັນກຳລັງ ໜູນໜຶບໂດຍກົງໃຫ້ການຕໍ່ສູ້ທາງການເມືອງ.

ພຶດຕິກຳດັ່ງກ່າວນັ້ນ ໄດ້ຍົກຂຶ້ນໃຫ້ເຫັນວ່າ, ເຖິງແມ່ນວ່າໃນແຕ່ລະໄລຍະຂອງການປະຕິວັດ, ຮູບການຕໍ່ສູ້ດ້ວຍອາວຸດ ຫຼືຮູບການຕໍ່ສູ້ດ້ວຍການເມືອງ ໄດ້ພົ້ນເດັ່ນຂຶ້ນດ້ວຍຖານະທີ່ແຕກຕ່າງກັນກໍ່ຕາມ, ມັນກໍ່ລ້ວນແຕ່ ເປັນຮູບການຕໍ່ສູ້ພື້ນຖານສອງປະການຂອງການປະຕິວັດ ຂອງປະ

ເທດເຮົາ ແລະແຕ່ລະຮູບການຕໍ່ສູ້ນັ້ນ ຕ່າງກໍ່ມີບົດບາດຕັດສິນຂອງມັນ. ການຕໍ່ສູ້ດ້ວຍອາວຸດມີບົດບາດຕັດສິນໂດຍກົງໃນການດັບສູນກຳລັງທະຫານຂອງສັດຕູ, ທັບມ້າງ ບັນດາກົນອຸບາຍການທະຫານ, ການເມືອງຂອງ ພວກເຂົາ , ສ້າງເງື່ອນໄຂ ແລະຊ່ວຍຊູຍູ້ໜູນໃຫ້ແກ່ການຕໍ່ສູ້ດ້ວຍການເມືອງ. ການຕໍ່ສູ້ດ້ວຍການເມືອງ ເປັນແບບວິທີ ສຳຄັນທີ່ສຸດແບບໜຶ່ງ ເພື່ອປັບປຸງ ແລະຂະຫຍາຍໄຊຊະນະ ຂອງການຕໍ່ສູ້ດ້ວຍອາວຸດ; ພ້ອມກັນນັ້ນ ກໍ່ບຸກເຂົ້າໃສ່ຖັນແຖວຂອງສັດຕູ, ເຮັດໃຫ້ພວກເຂົາຜັນແຍກອອນເພຽຊຸດ ໂຊມລົງ ແລະລອມປ່ຽວສັດຕູຕົວຕົ້ນ, ປະສານສົມທົບກັບການຕໍ່ສູ້ດ້ວຍອາວຸດ ແລະດ້ວຍການໜູນໜີບຂອງກຳລັງປະກອບອາວຸດຕັດສິນໄຊຊະນະຂັ້ນສຸດທ້າຍຂອງການປະຕິວັດ. ຮູບການຕໍ່ສູ້ທັງສອງປະການນັ້ນ ລ້ວນແຕ່ເປັນພື້ນຖານ, ລ້ວນແຕ່ມີບົດບາດຕັດສິນ. ເຖິງແມ່ນວ່າການຕໍ່ສູ້ດ້ວຍອາວຸດໄດ້ຜັນແປໄປຕັ້ງແຕ່ຕົ້ນຕະຫຼອດປາຍ ອັນເນື່ອງມາຈາກ ການປະຕິວັດຂອງປະເທດເຮົາຕ້ອງໄດ້ຜ່ານສົງຄາມ ປະຊາຊົນສອງບັ້ນຢ່າງຍືດເຍື້ອຍາວນານ, ແຕ່ໃນຂະບວນ ວິວັດແຫ່ງການຕໍ່ສູ້ດ້ວຍອາວຸດນັ້ນ ກໍ່ຕ້ອງໄດ້ດຳເນີນ ການຕໍ່ສູ້ດ້ວຍການເມືອງຢູ່ສະເໝີ, ແລະມາເຖິງບັ້ນສິ້ນສຸດ ກໍ່

ຕ້ອງໄດ້ຜ່ານການລຸກຮື້ຂຶ້ນພ້ອມກັນພາບດຽວ ແລະການບຸກ ໂຈມຕີຢ່າງຮອບດ້ານຂອງປວງຊົນ ເຊິ່ງໃນນັ້ນ ການສົມທົບລະຫວ່າງກຳລັງຮຸນແຮງທາງການເມືອງຂອງມະຫາຊົນ ກັບການຫມູນຫມີຢ່າງແຂງແຮງທີ່ສຸດຂອງກຳລັງ ປະກອບອາວຸດປະຕິວັດ ເປັນປັດໄຈຕັດສິນ. ໃນທີ່ນີ້ ຍັງມີບັນຫາມູນສານກາລະໂອກາດ, ແຕ່ກໍ່ເປັນອັນຈະແຈ້ງທີ່ສຸດວ່າ ມີພຽງແຕ່ກຳລັງປະກອບອາວຸດ ແລະ ການຕໍ່ສູ້ດ້ວຍອາວຸດເທົ່ານັ້ນແມ່ນບໍ່ອາດຈະຫຼີກລ່ຽງຈາກການນອງເລືອດທີ່ບໍ່ຈຳເປັນໄດ້ຫາກຍັງບໍ່ອາດຈະຍາດເອົາໄຊຊະນະມາໄດ້ ຢ່າງວ່ອງໄວ, ຫນັກແຫນ້ນແລະບໍລິບູນດີໃນການລຸກຮື້ຂຶ້ນເດືອນພຶດສະພາ ໑໙໗໕ ປະຫວັດສາດນັ້ນ. ກົງກັນຂ້າມ, ການຕໍ່ສູ້ດ້ວຍການເມືອງ, ເຖິງແມ່ນວ່າໃນຫຼາຍໄລຍະໄດ້ດຳລົງບົດບາດຕົ້ນຕໍ, ແຕ່ມັນຈະສາມາດເສີມຂະຫຍາຍທ່າບຸກຂອງການປະຕິວັດໄດ້ຢ່າງແຂງແຮງກໍ່ຍ້ອນຜົນແຫ່ງ ໄຊຊະນະຂອງການຕໍ່ສູ້ດ້ວຍອາວຸດແລະການຫມູນຫຼັງຢ່າງຫນັກແຫນ້ນຂອງກຳລັງປະກອບອາວຸດນັ້ນເອງ. ໃນກະແສສູງແຫ່ງການລຸກຮື້ຂຶ້ນເດືອນພຶດສະພາ ໑໙໗໕ ປະຫວັດສາດ ຂອງມະຫາຊົນໄດ້ມີກຳລັງແຮງອັນຍິ່ງໃຫຍ່ມະຫາສານກໍ່ຈິງ, ແຕ່ຖ້າບໍ່ມີທ່າສະຫນາມທາງດ້ານການທະຫານ ທີ່ໄດ້ຈັດວາງໄວ້

ແລະຖ້າຫາກບໍ່ມີການເຄື່ອນທັບຍຸດທະສາດຂອງກຳລັງ ປະກອບອາວຸດເຮົາທີ່ໄດ້ບັງຄັບກອງທະຫານສັດຕູຕ້ອງວາງອາວຸດນັ້ນແລ້ວການທັບມ້າງອຳນາດການປົກຄອງປະຕິການທັງຫມົດກໍ່ບໍ່ເປັນຂອງງ່າຍປານໃດ. ດ້ວຍເຫດນັ້ນ, ການສົມທົບລະຫວ່າງກຳລັງການເມືອງກັບກຳລັງປະກອບອາວຸດ , ການສົມທົບລະຫວ່າງການຕໍ່ສູ້ດ້ວຍອາວຸດ ກັບການຕໍ່ສູ້ດ້ວຍການເມືອງຈຶ່ງເປັນກົດເກນທີ່ຕ້ອງເປັນໄປແຫ່ງການຕໍ່ສູ້ ມີໄຊຂອງການປະຕິວັດຂອງປະເທດເຮົາ.

ໃນດ້ານການຊີ້ນຳການຕໍ່ສູ້ດ້ວຍອາວຸດກັບການຕໍ່ ສູ້ດ້ວຍການເມືອງສົມທົບກັນນັ້ນ, ຍັງມີບັນຫາຫນຶ່ງອີກທີ່ສຳຄັນທີ່ສຸດ, ນັ້ນແມ່ນການກຳນົດຢ່າງຖືກຕ້ອງວ່າ ຈະເອົາຮູບການຕໍ່ສູ້ອັນໃດເປັນຮູບການຕໍ່ສູ້ຕົ້ນຕໍໃນແຕ່ລະໄລຍະ ຂອງການປະຕິວັດ ແລະທັງຕ້ອງຮູ້ຫັນຮູບການຕໍ່ສູ້ນັ້ນໃນເມື່ອສະຖານະການປະຕິວັດມີການປ່ຽນແປງ. ຖ້າບໍ່ດັ່ງນັ້ນ ກໍ່ບໍ່ສາມາດຍູ້ການປະຕິວັດໃຫ້ກ້າວຂຶ້ນໄດ້, ຍິ່ງໄປກວ່ານັ້ນ ຍັງຈະກໍ່ຄວາມເສັຽຫາຍໃຫ້ການປະຕິວັດອີກຊ້ຳ. ພັກເຮົາກໍ່ເຄີຍໄດ້ຊີ້ນຳການຫັນທິດຕໍ່ສູ້ດັ່ງກ່າວນັ້ນມາຫຼາຍເທື່ອ ຢ່າງຖືກຕ້ອງ, ແທດເຫມາະແລະທັນເວລາຄື ໄດ້ຫັນທິດຈາກການຕໍ່ສູ້ດ້ວຍອາວຸດ ໄປສູ່ການຕໍ່ສູ້ດ້ວຍການເມືອງ- ກົດ

ໝາຍ ໓ ເທື່ອ ແລະ ຫັນທິດຈາກການຕໍ່ສູ້ດ້ວຍການເມືອງ-ກົດໝາຍກັບໄປສູ່ການຕໍ່ສູ້ດ້ວຍອາວຸດ ໔ ເທື່ອ; ໃນແຕ່ລະເທື່ອທີ່ມີການຫັນທິດນັ້ນ ການປະຕິວັດໄດ້ມີບາດກ້າວຂະຫຍາຍຕົວຢ່າງກະໂດດຂັ້ນທັງດ້ານທ່າ ແລະ ທັງດ້ານກຳລັງ. ພິເສດໃນການເຂົ້າລວມລາວຄັ້ງທີ່ ໓, ໃນເມື່ອສະພາວະການປະຕິວັດໂດຍກົງໄດ້ປະກົດຕົວອອກແລ້ວ ແລະ ໂດຍກຳເອົາກາລະໂອກາດປະຫວັດສາດ, ພັກເຮົາໄດ້ຫັນທິດຢ່າງວ່ອງໄວໃນຂະນະທີ່ພວມຕໍ່ສູ້ດ້ວຍການເມືອງ ກົດໝາຍໄປສູ່ການໝູນໃຊ້ບັນດາຮູບການຕໍ່ສູ້ຢ່າງສັງລວມ ຄືຮູບການຕໍ່ສູ້ດ້ວຍການເມືອງຂອງມະຫາຊົນ, ການຕໍ່ສູ້ດ້ວຍອາວຸດ, ການລຸກຮື້ຂຶ້ນຂອງທະຫານສັດຕູ ສົມທົບກັບການຊ່ວຍຊູ້ຍູ້ໝູນທາງດ້ານກົດໝາຍເພື່ອຍູ້ການປະຕິວັດຊາດ - ປະຊາທິປະໄຕກ້າວຂຶ້ນສູ່ໄລຍະທ້າຍສຸດຂອງມັນ ແລະ ສຳເລັດລົງດ້ວຍໄຊຊະນະອັນສົມບູນ.

ການຊີ້ນຳການຕໍ່ສູ້ດ້ວຍອາວຸດ ກັບການຕໍ່ສູ້ ດ້ວຍການເມືອງສົມທົບກັນນີ້ ເປັນບັນຫາໜຶ່ງ ໃນສິລະປະຊີ້ນຳການໝູນໃຊ້ວິທີປະຕິວັດ, ມັນມີຄວາມໝາຍຕັດສິນການຂະຫຍາຍຕົວຂອງການປະຕິວັດ. ສະນັ້ນ, ມັນຮຽກຮ້ອງໃຫ້ພັກເຮົາຕ້ອງເຂົ້າໃຈສະພາບການຂອງສັດຕູ ແລະ ຂອງ

ເຣົາຢ່າງເລິກເຊິ່ງ, ຕີລາຄາທ່າ, ກຳລັງ ແລະ ຄວາມອາດສາມາດຂະຫຍາຍຕົວຂອງທັງສອງຝ່າຍ ຢ່າງຖືກຕ້ອງ, ໄດ້ແຍກບັນດາສາຍພົວພັນຢູ່ພາຍໃນປະເທດ ແລະ ຢູ່ໃນໂລກຢ່າງຮອບດ້ານ, ຈຶ່ງຈະສາມາດຕົກລົງການຫມູນໃຊ້ວິທີປະຕິວັດຢ່າງຊັດເຈນໄດ້, ພິເສດແມ່ນໃນບັນຫາ ຕົກລົງການຫັນຮູບການຕໍ່ສູ້ໃນແຕ່ລະໄລຍະຂອງການປະຕິວັດ ໃຫ້ທັນການແລະ ເຫມາະສົມ. ແຕ່ອັນພື້ນຖານກວ່າຫມູ່ ໃນການນຳພາຂອງພັກ ກໍ່ຍັງຕ້ອງກຳແຫນນທັດສະນະ ກຳລັງຮຸນແຮງປະຕິວັດ ແລະ ເຊື່ອມຊຶມແນວຄິດຍຸດທະສາດບຸກ ປະຕິວັດຢູ່ສະເຫມີ. ໃນການຫມູນໃຊ້ຮູບການຕໍ່ສູ້ໂດຍຖືອັນໃດເປັນອັນຕົ້ນຕໍ ແລະການຫັນຈາກຮູບການນີ້ໄປສູ່ຮູບການ ນັ້ນແມ່ນເພື່ອຂະຫຍາຍທາບຸກຂອງການປະຕິວັດ, ເລືອກວິທີພາການປະຕິວັດສືບຕໍ່ກ້າວຂຶ້ນໃນສະພາບການອັນໃດຫນຶ່ງ ທີ່ແນ່ນອນ, ຫາກບໍ່ແມ່ນຍຸດຢູ່ບ່ອນເກົ່າເປັນອັນຂາດ, ແລະຍິ່ງບໍ່ແມ່ນຜ່ອນລະດັບຄາດຫມາຍຂອງການຕໍ່ສູ້ ປະຕິວັດລົງ. ໃນເມື່ອຫມູນໃຊ້ຮູບການໃດຫນຶ່ງນັ້ນ ແມ່ນຕ້ອງໃຊ້ແລະເສີມຂະຫຍາຍມູນສານກຳລັງຮຸນແຮງຂອງມັນຢ່າງສູດຂີດ, ສ່ວນບັນດາມູນສານອື່ນ ກໍພຽງແຕ່ເພື່ອປະສານສົມທົບແລະສ້າງເງື່ອນໄຂໃຫ້ມູນສານກຳລັງຮຸນແຮງ, ຫາກບໍ່ແມ່ນເພື່ອມາ

ແທນໃຫ້ກຳລັງຊຸມແຮງເປັນອັນຂາດ. ເພາະສະນັ້ນ, ໃນບັນດາໄລຍະຕໍ່ສູ້ທາງການເມືອງເປັນຕົ້ນຕໍນັ້ນ ເຖິງແມ່ນວ່າການຕໍ່ສູ້ດ້ວຍກົດໝາຍ, ການຕໍ່ສູ້ໃນລັດຖະບານປະສົມເປັນການຕໍ່ສູ້ທີ່ຕ້ອງການທີ່ສຸດແລະບໍ່ອາດຈະຂາດໄດ້ກໍຕາມ, ແຕ່ການຕໍ່ສູ້ທີ່ມີຄຸນປະໂຫຽດພື້ນຖານກວ່າໝູ່ ແມ່ນຂະບວນການຕໍ່ສູ້ດ້ວຍການເມືອງຂອງມະຫາຊົນ. ຍ້ອນແນວນັ້ນ, ຕ້ອງໝູນໃຊ້ການຕໍ່ສູ້ດ້ານອື່ນ ໆ ຢ່າງສຸດຂີດ ເພື່ອຮັບໃຊ້ຄວາມຮຽກຮ້ອງຕ້ອງການຂອງການຍູ້ຂະບວນການຕໍ່ສູ້ຂອງມະຫາຊົນໃຫ້ນັບມື້ນັບແຂງແຮງຂຶ້ນເລື້ອຍໆ.

ຂະບວນວິວັດແຫ່ງການຕໍ່ສູ້ປະຕິວັດ ຂອງພັກເຮົາໃນ ໓໐ ປີທີ່ຜ່ານມາ, ເນື້ອແທ້ແມ່ນຂະບວນວິວັດ ແຫ່ງການສ້າງສອງກຳລັງຂອງກຳລັງຊຸມແຮງປະຕິວັດແລະການສົມທົບສອງຮູບການຕໍ່ສູ້ ຮູບການຕໍ່ສູ້ດ້ວຍອາວຸດແລະການຕໍ່ສູ້ດ້ວຍການເມືອງຢ່າງຖືກຕ້ອງ ແລະປະດິດສ້າງ. ນັ້ນກໍ່ແມ່ນບົດຮຽນພື້ນຖານກວ່າໝູ່ ກ່ຽວກັບການຊີ້ນຳການໝູນໃຊ້ວິທີປະຕິວັດໃນເງື່ອນໄຂຕົວຈິງຂອງປະເທດເຮົາ, ແລະຜົນສຳເລັດອັນສະຫງ່າລາສີຂອງມັນນັ້ນໄດ້ຮັບການຢືນ ຢັນຢ່າງແຈ່ມແຈ້ງຈາກປະຫວັດສາດແຫ່ງການຕໍ່ສູ້ປະຕິວັດຂອງພວກເຮົາ.

(/ - ໝູນໃຊ້ " ຍຸດໂທບາຍປະນິປະນອມ " ທີ່ມີ ຫຼັກ ການກັບຝ່າຍກົງກັນຂ້າມ.

ການຕໍ່ສູ້ດ້ວຍອາວຸດ ກັບການຕໍ່ສູ້ ດ້ວຍການເມືອງສົມທົບກັນ ດ້ວຍສອງກຳລັງແຫ່ງກຳລັງຮຸນແຮງຂອງມະຫາຊົນ ເປັນວິທີປະຕິວັດພື້ນຖານໃນການປະຕິວັດຊາດ-ປະຊາທິປະໄຕຂອງປະເທດເຮົາ. ແຕ່ ການປະຕິວັດ ເປັນຂະບວນວິວັດແຫ່ງການຕໍ່ສູ້ຢ່າງຍຶດເຍື້ອຍາວນານ, ລະອິດລະອ້ຽວ; ບົນເສັ້ນທາງກາວໄປສູ່ວັດຖຸປະສົງສຸດທາຍນັ້ນ ບໍ່ອາດຈະກຳຈັດປັດເປົ່າອຸປະສັກຕ່າງໆ ເຊິ່ງບັນດາກຸ່ມປົກຄອງເປັນຜູ້ກໍ້ນດ້ວຍການໃຊ້ເຄື່ອງມືປາບປາມ, ຫຼອກລວງ, ເບື່ອ ເມົາ ແລະ ພາຫະນະທາງດ້ານວັດຖຸ, ຈິດໃຈຢ່າງໃຫຍ່ ຫຼວງທີ່ສຸດຂອງພວກເຂົານັ້ນໄດ້ໃນຍາມໜຶ່ງຍາມດຽວ. ດ້ວຍເຫດນັ້ນ, ການປະຕິວັດ ຕ້ອງມີບັນດາບາດກ້າວເດີນອັນເໝາະສົມ, ບາງເທື່ອແມ່ນບຸກໂດຍກົງເຂົ້າໃສ່ສັດຕູ, ບາງເທື່ອ ແມ່ນຕ້ອງໄປລະອິດ ລະອ້ຽວເລື້ອກລວງ, ຍອມຮັບເອົາ " ການປະນິ ປະນອມ ທີ່ຈຳເປັນ ", ທັງນີ້ ກໍ່ເພື່ອແນໃສ່ປັດເປົ່າອຸປະສັກທີ່ກີດຂວາງບົນເສັ້ນທາງເດີນນັ້ນ ອອກເປັນລຳດັບໄປ, ເຮັດໃຫ້ການ

ຊົ່ງຊາກຳລັງລະຫວ່າງສອງຝ່າຍມີການປ່ຽນແປງ ເທື່ອລະ
ກາວ ແລະ ໃນທີ່ສຸດແມ່ນສາງທ່າດີຢ່າງເດັດຂາດ ເພື່ອ
ເອົາຊະນະສັດຕູຢ່າງສົມບູນ. ອັນນັ້ນ ແມ່ນ ສິລະປະຊີ້ນຳ
ການຕໍ່ສູ " ຍາດເອົາໄຊຊະນະເທື່ອລະກາວ " ເຊິ່ງພັກ
ເຮົາໄດຫມູນໃຊຢ່າງຫົນຫານຫມຽວແຫມນ ແລະ ປີຊາສາ
ມາດຕະຫຼອດ ໃນຂະບວນວິວັດແຫ່ງການນຳພາການປະຕິ
ວັດຂອງປະເທດເຮົາ.

ການຍາດເອົາໄຊຊະນະ ເທື່ອລະກາວ ຫມາຍ
ຄວາມວ່າ ໃນແຕ່ລະໄລຍະຂອງການປະຕິວັດ, ໃນສະຖາ
ນະການ ແລະ ກາລະໂອກາດໃດຫນຶ່ງອັນແນ່ນອນ ແມ່ນຮູ
ວາງບັນດາຈຸດຫມາຍລະອຽດ ທີ່ຖືກຕອງແທດເຫມາະ ກັບ
ເງື່ອນໄຂຕົວຈິງຂອງສັດຕູ ແລະ ຂອງເຮົາຢູ່ພາຍໃນ ປະ
ເທດ ກໍຄືຢູ່ໃນໂລກ ແລະ ຫມູນໃຊບັນດາແບບວິທີ, ວິທີຕໍ່
ສູທີ່ສອດຄ່ອງກັບເງື່ອນໄຂ ແລະ ຄວາມອາດສາມາດຂອງ
ການປະຕິວັດ ເພື່ອເຮັດໃຫຈຸດຫມາຍ ເຫຼົ່ານັ້ນ ບັນລຸຜົນ
ເປັນຈິງດວຍໄຊຊະນະອັນໃຫຍ່ ເທົ່າທີ່ຈະໃຫຍ່ໄດ ແນ່ໃສ່
ໄຂ່ຊອງທາງພາການປະຕິວັດກາວຂຶ້ນສູ່ບາດກາວໃຫມ່ທີ່ສູງ
ກ່ວາເກົ່າ, ສາງພື້ນຖານອັນນັບມື້ນັບຫນັກແຫນ່ນ ແກການ
ເຮັດໃຫວັດຖຸປະສົງສຸດທາຍ ຂອງການປະຕິວັດປະກົດເປັນ

ຈິງ.

ໃນການຍາດເອົາໄຊຊະນະ ເທື່ອລະກ້າວ ນັ້ນ, ການປະຕິວັດ ຂອງປະເທດເຮົາໄດ້ມີບັນຫາໜຶ່ງທີ່ເດັ່ນອັນເປັນພິເສດ, ນັ້ນແມ່ນບັນຫາການດຳເນີນການຕໍ່ສູ້ ເຈລະຈາສ້າງຕັ້ງລັດຖະບານປະສົມ. ການເຂົ້າຮ່ວມລັດຖະບານປະສົມ ແລະ ຕໍ່ສູ້ໃນບັນດາສະຖາບັນປະສົມ ມີ ຄັ້ງໃນສະພາບແວດລ້ອມປະຫວັດສາດ ແລະ ໃນເງື່ອນໄຂແຫ່ງການຊັ່ງຊາກຳລັງທີ່ແຕກຕ່າງກັນ, ພັກເຮົາໄດ້ຊີ້ນຳ ການໝູນໃຊ້ຮູບການຕໍ່ສູ້ເຈລະຈາການເມືອງນັ້ນຢ່າງຄ່ອງແຄ້ວໂດຍມີການປະສານສົມທົບກັບຮູບການຕໍ່ສູ້ພື້ນຖານອື່ນ ໆ ເພື່ອປົກປັກຮັກສາໝາກຜົນ ຂອງການປະຕິວັດ ໄວ້ໃຫ້ໝັ້ນຄົງ ແລະ ພາການປະຕິວັດ ຜ່ານຂ້າມບາດລ້ຽວ ຂອງການຕໍ່ສູ້ ເພື່ອສືບຕໍ່ກ້າວຂຶ້ນສູ່ບາດກ້າວໃໝ່. ນັ້ນແມ່ນການໝູນໃຊ້ຢ່າງປະດິດສ້າງຍຸດໂທບາຍ " ປະນີ ປະນອມ " ທີ່ລັຊຂອງເລນິນ ເຂົ້າໃນເງື່ອນໄຂຕົວຈິງ ຂອງການປະຕິວັດຂອງປະເທດເຮົາ ແລະ ໄດ້ນຳມາເຊິ່ງຜົນສຳເລັດອັນສະຫງ່າງາມ.

ບັນຫາ " ຈະມີການປະນີປະນອມ ຫຼື ບໍ່ ແລະປະນີປະນອມແນວໃດ ຈຶ່ງຈະຖືກ ຫຼັກການ " ນັ້ນ ແຕ່ໃດມາ

ເປັນໜຶ່ງໃນບັນດາບັນຫາທີ່ເຄີຍມີການຕໍ່ສູ້ກັນມາຢ່າງເປັນປະຈຳລະຫວ່າງລັດທິມາກ-ເລນິນທີ່ແທ້ຈິງ ກັບຄຳວິນິດໄສຂອງລັດທິຄຳພີ, ລັດທິຈາຣີດນິຍົມ ແລະລັດທິສວຍໂອກາດໃນຂະບວນກອມມູນິດສາກົນ. ເລນິນ ອາຈານຜູ້ຍິ່ງໃຫຍ່ຂອງການປະຕິວັດກຳມາຊີບຂອງໂລກໄດ້ຕັກເຕືອນຢ່າງຈະແຈ້ງວ່າ " ຊາວກອມມູນິດຕ້ອງພະຍາຍາມເອົາແທ້ ເອົາວ່າໃນການປ້ອງເອົາຂະບວນການກຳມະກອນ ແລະ ເວົ້າທົ່ວໄປແມ່ນປ້ອງເອົາການຂະຫຽາຍຕົວຂອງສັງຄົມ ໃຫ້ໄປຕາມເສັ້ນທາງໂດຍກົງກວ່າໝູ່ ແລະໄວວ່າກວ່າໝູ່ ເພື່ອກ້າວໄປສູ່ ຫຼັກ ໄຊຂອງອຳນາດການປົກຄອງໂຊວຽດໃນທົ່ວໂລກແລະກ້າວໄປເຖິງກໍ່ຕັ້ງຜະເດັດການກຳມາຊີບ". ແຕ່ພ້ອມກັນນັ້ນ ເພິ່ນກໍ່ໄດ້ຊີ້ບອກວ່າ "... ແຕ່, ຈະເວົ້າພຽງແຕ່ວ່າ ພວກເຮົາມີແຕ່ຍອມຮັບເອົາທາງເສັ້ນດຽວ ຄືເສັ້ນທາງໂດຍກົງເທົ່ານັ້ນ, ວ່າ ພວກເຮົາບໍ່ຍອມຮັບວ່າຕ້ອງໄປຢ່າງລະອິດ ລະອ້ຽວເລື້ອຍລວງ, ກໍ່ບໍ່ຍອມຮັບວ່າຕ້ອງມີການປະນີປະນອມຜ່ອນສັ້ນຜ່ອນຍາວ, ຄົນເປັນແນວນັ້ນ ກໍ່ຈະຕົກເຂົ້າໃນຄວາມຜິດພາດທີ່ມັນອາດຈະນຳມາໃຫ້, ທີ່ໄດ້ນຳມາໃຫ້ສ່ວນໃດ ສ່ວນໜຶ່ງແລ້ວ ແລະ ພວມນຳມາໃຫ້ເຊິ່ງຄວາມເສັຽຫາຍອັນໃຫຍ່ຫຼວງ ກວາໝູແກຂະບວນ

ກວມມູນິດ "[1]

ແລະ ຢູ່ໃນເອກະສານ " ກ່ຽວກັບບັນຫາ ປະນີປະນອມ" ເພິ່ນກໍໄດ້ສອນ: "ໜ້າທີ່ຂອງພັກປະຕິວັດທີ່ແທ້ຈິງພັກໜຶ່ງ ບໍ່ແມ່ນວ່າຖະແຫຼງປະຕິເສດ ການປະນີປະນອມທຸກຢ່າງເຊິ່ງແມ່ນການປະຕິເສດທີ່ບໍ່ອາດຈະນ້ອມໄດ້, ຫາກແມ່ນຕ້ອງຮູ້ຈັກວິທີຜ່ານການປະນີປະນອມທຸກຢ່າງໃນກໍລະນີທີ່ບໍ່ອາດຈະຫຼີກລ່ຽງການປະນີປະນອມໄດ້ ດ້ວຍການຮັກສາທ່າທີຈິງຮັກພັກດີຕໍ່ຫຼັກການຂອງຕົນ, ຕໍ່ຊົນຊັ້ນຂອງຕົນ, ຕໍ່ພາລະປະຕິວັດຂອງຕົນ, ຕໍ່ໜ້າທີ່ຂອງຕົນຄື ກຽມການປະຕິວັດ ແລະ ສຶກສາອົບຮົມມະຫາຊົນ ເພື່ອພາການປະຕິວັດໄປສູ່ຫຼັກໄຊ "[2].

ພາຍ ຫຼັງທີ່ການຕໍ່ຕ້ານຝະລັ່ງ ຂອງປະຊາຊົນເຮົາໄດ້ສົ້ນສຸດລົງຢ່າງມີໄຊ, ຈັກກະພັດອາເມລິກາ ໄດ້ໂດດເຂົ້າມາແຊກແຊງ, ໃຊ້ກຳລັງຂອງພວກລູກມືປິດລ້ອມໂດຍຫວັງດັບສູນກຳລັງປະຕິວັດທີ່ໄດ້ໄປເຕົ້າໂຮມຢູ່ ໒ ແຂວງ. ຕໍ່ໜ້າສະພາບການດັ່ງກ່າວນັ້ນ, ພັກເຮົາມີແຜນນະໂຍບາຍເປີດແນວຮົບຕໍ່ສູ້ເຈລະຈາກັບສັດຕູ ເພື່ອປະສານສົມທົບກັບ

1. ເລນິນ, ລິບຊຸດ, ພາສາຫວຽດນາມ, ສຳນັກພິມຈຳໜ່າຍ ''ຊືເທິດ'', ຮ່າໂນ້ຍ 1970 ພິມເທື່ອທີ 2, ເຫຼັ້ມ 31, ໜ້າ 123.
2. ເລນິນ, ລິບຊຸດ, ພາສາຫວຽດນາມ, ສຳນັກພິມຈຳໜ່າຍ ''ຊືເທິດ'', ຮ່າໂນ້ຍ 1973, ເຫຼັ້ມ 25 ໜ້າ 382-383.

ການຕໍ່ສູ້ດ້ວຍອາວຸດປ້ອງກັນຕົວຢູ່ ໔ ແຂວງ ແລະຂະບວນການຕໍ່ສູ້ການເມືອງຂອງມະຫາຊົນຢູ່ ໑໐ ແຂວງ.ວັດຖຸປະສົງຂອງການເຂົ້າລວມລາວເທື່ອນີ້,ທາງຝ່າຍເຮົາ ແມ່ນແນໃສ່ສະກັດກັ້ນ ແລະ ຕີການແຊກແຊງຂອງຈັກກະພັດອາເມລິກາ ໃຫ້ລ້າຖອຍໄປກາວຫນຶ່ງ, ມາງທາທີ່ຖືກປິດລ້ອມຂອງ ໔ ແຂວງ ແລະ ສວຍໃຊ້ຖານະຖືກກົດຫມາຍ ຂອງພວກເຮົາ ເພື່ອຂະຫຍາຍອິດທິພົນຂອງການປະຕິວັດ ອອກໄປທົ່ວປະເທດ, ເຕົ້າໂຮມກຳລັງອີກຕື່ມ ເພື່ອກຽມໃຫ້ການຕໍ່ສູ້ຂັ້ນໃຫມ່. ທາງຝ່າຍສັດຕູ, ເຈຕະນາ ຂອງພວກເຂົາແມ່ນສວຍໃຊ້ປ້າຍຖືກຕ້ອງປອງດອງຊາດ ເພື່ອແບ່ງແຍກ, ຊື້ຈ້າງ, ລອມປ່ຽວ ແລະ ກືນກິນກຳລັງຂອງພວກເຮົາໂດຍສັນຕິວິທີ. ລັດຖະບານປະສົມຄັ້ງທຳອິດ ໄດ້ຮັບການສ້າງຕັ້ງຂຶ້ນ ໃນປີ ໑໙໕໗ ດ້ວຍໂຄງການສັນຕິພາບ, ເປັນກາງ, ຄວາມຖືກຕ້ອງປອງດອງຊາດ. ການເຂົ້າລວມລາວຄັ້ງທຳອິດພ້ອມກັບການຕໍ່ສູ້ດ້ານອື່ນ ໆ ໄດ້ນຳຜົນອັນໃຫຍ່ຫຼວງ ມາໃຫ້ການປະຕິວັດ : ກຳລັງປະຕິວັດ ບໍ່ພຽງແຕ່ບໍ່ຖືກລົບລ້າງດັ່ງທີ່ສັດຕູໄດ້ຄິດມັ້ນແຕ່ຢ່າງໃດ, ຫາກຍັງໄດ້ກະຈາຍ ແລະ ຂະຫຍາຍອອກໃນທົ່ວປະເທດ, ຂະບວນການຕໍ່ສູ້ທາງການເມືອງ ຂອງມະຫາຊົນ ນັບມື້ນັບຟົດ

ເດືອດແຂງແຮງດ້ວຍຂະໜາດອັນກວ້າງໃຫຍ່ຂຶ້ນເລື້ອຍໆ.
ການຕໍ່ສູ້ຂອງພວກເຮົາຢູ່ໃນບັນດາສະຖາບັນປະສົມ ສົມທົບກັບຂະບວນການຕໍ່ສູ້ ຂອງມະຫາຊົນ ໄດ້ຈຳໃຫ້ລັດຖະບານປະສົມ ຕ້ອງປະກາດໃຊ້ຂໍ້ກຳນົດກົດໝາຍທີ່ກ້າວໜ້າ ຈຳນວນໜຶ່ງ ອັນໄດ້ສ້າງເງື່ອນໄຂທາງດ້ານກົດໝາຍຕື່ມໃຫ້ການຕໍ່ສູ້ຂອງມະຫາຊົນ ແລະ ເຮັດໃຫ້ພາຍໃນ ຂອງສັດຕູຖືກຜັນແຍກຂຶ້ນຈັກໄຊ.

ຕໍ່ໜ້າການເຕີບໃຫຍ່ ເຂັ້ມແຂງ ຂອງກຳລັງປະຕິວັດ ແລະ ກ້າວໜ້າ, ສັດຕູໄດ້ໂຄ່ນລົ້ມລັດຖະບານປະສົມທຳອິດເຊິ່ງລົງຕົວໄດ້ໃນລະຫວ່າງປີດຽວ ແລະ ຫັນໄປໃຊ້ນະໂຍບາຍກຳຮາບປາບປາມການປະຕິວັດ ຢ່າງໂຫດຮ້າຍປ່າເຖື່ອນ. ສະພາບການດັ່ງກ່າວນັ້ນ ໄດ້ຈຳໃຫ້ພວກເຮົາຕ້ອງຫັນທິດ ໄປສູ່ການຕໍ່ສູ້ດ້ວຍອາວຸດ ສົມທົບກັບການຕໍ່ສູ້ດ້ວຍການເມືອງ ຢ່າງທັນການ. ໄຊຊະນະ ທາງການທະຫານອັນໃຫຍ່ຫຼວງ ຂອງພວກເຮົາຕໍ່ຈາກນັ້ນມາ, ສົມທົບກັບການຕໍ່ສູ້ອັນແຂງແຮງ ຂອງມະຫາຊົນ ແລະ ການຜັນແຍກຢ່າງເລິກເຊິ່ງໃນພາຍໃນຖັນແຖວຂອງສັດຕູນັ້ນ ເຮັດໃຫ້ພວກເຂົາຈຳຕ້ອງຍອມກັບຄືນມາເຈລະຈາກັບພວກເຮົາອີກ. ການທີ່ພວກເຂົາຍອມເຈລະຈາໃນຄັ້ງນີ້ ແມ່ນເພື່ອ

ປະຕິບັດກົນອຸບາຍສະກັດກັ້ນບາດຄ້ອນບຸກໂຈມຕີ ທາງການທະຫານຂອງພວກເຮົາທີ່ພວມໄດ້ຮັບໄຊຊະນະຢ່າງລຽນຕິດ; ພວກເຂົາຢາກຍາດເອົາເວລານີ້ ເພື່ອປັບປຸງພາຍໃນແລະພັນຂະຫຍາຍກຳລັງ, ກຽມໃຫ້ແກ່ຍຸດທະສາດສົງຄາມໃໝ່ຂອງພວກເຂົາ. ສຳ ລັບພວກເຮົາເອງ ກໍ່ຢາກຍາດແຍ່ງເອົາທ່າໂຍະຍານ ທີ່ເປັນຜົນດີ, ດ້ານໜຶ່ງ ເພື່ອກັ້ນກາງການເຂົ້າຮຸກຮານໂດຍກົງຂອງກຳລັງອາເມລິກາ ເຊິ່ງໃນຄາວນັ້ນໄດ້ພັນຂະຫຍາຍ ຢູ່ດິນໄທ້ແລ້ວ ແລະ ພວມກຽມຈໍ້ຈະໂດດເຂົ້າມາລາວ; ອີກດ້ານໜຶ່ງ ກໍ່ເພື່ອຍາດເອົາເວລາປັບປຸງ ແລະ ເສີມຂະຫຍາຍໝາກຜົນ ຂອງການປະຕິວັດທີ່ຍາດມາໄດ້ຢ່າງກະໂດດຂັ້ນ ໃນເວລານັ້ນທັງພາຍໃນແລະ ນອກປະເທດ ແລະ ເພື່ອຜັນແຍກຖັ່ນແຖວຂອງສັດຕູອີກຕື່ມ. ລັດຖະບານປະສົມຄັ້ງທີ່ ໒ ໄດ້ຮັບການສ້າງຕັ້ງຂຶ້ນ (ປີ ໑໙໖໒). ໃນຄັ້ງນີ້, ເຖິງແມ່ນວ່າໃນການຊິ່ງຊາກຳລັງ ພວກເຮົາບໍ່ທັນລົ້ມສັດຕູຢ່າງຂາດຂັ້ນກໍ່ຕາມ, ແຕ່ທ່າ ແລະ ກຳລັງຂອງການປະຕິວັດ ໄດ້ເຕີບໃຫຍ່ເຂັ້ມແຂງຢ່າງແຕກຕ່າງກັບແຕ່ກ່ອນ ຫຼາຍທີ່ສຸດ, ໂດຍສະເພາະຢ່າງຍິ່ງ ໄດ້ມີກຳລັງເປັນກາງຮັກຊາດ ປະກົດຕົວຂຶ້ນເຊິ່ງຮ່ວມສຳພັນກັບກຳລັງປະຕິວັດ.

ເປັນອັນຈະແຈ້ງວ່າ ຈຸດປະສົງຂອງສັດຕູ ໃນການສ້າງຕັ້ງລັດຖະບານປະສົມ ເທື່ອທີ ໒ ນີ້ກໍແມ່ນ ເພື່ອສວຍເອົາກາລະເວລາໂຍະຍານນີ້ ກຽມໃຫ້ຍຸດທະສາດສົງຄາມຮຸກຮານແຜນໃຫມ່ ຂອງພວກເຂົາທັງຢູ່ລາວ ແລະ ຫວຽດນາມ. ຍອນແນວນັ້ນ, ລັດຖະບານປະສົມຄັ້ງນີ້ເຊິ່ງຄົງຕົວຢູ່ໄດ້ບໍ່ພໍປີຫນຶ່ງ ກໍເລີຍຖືກສັດຕູມ້າງອີກ. ຕໍ່ຈາກນັ້ນມາ, ຜ່ານການຕໍ່ສູ້ຢ່າງເນື່ອງນິດລຽນຕິດ, ດຸເດືອດເປັນເວລາ ໑໐ ປີ, ພວກເຮົາໄດ້ຕີບັນດາກົນອຸບາຍຍຸດທະສາດ, ບັນດາ ຫຼັກຕຳລາສົງຄາມ, ບັນດາກຳລັງຍຸດທະສາດຂອງຈັກກະພັດອາເມລິກາ ແລະ ພວກລູກມືໃຫ້ປະລາໄຊລົງ ເປັນລຳດັບ, ສາມາດບັງຄັບພວກເຂົາຕອງກັບຄືນໄປສູ່ກອງປະຊຸມເຈລະຈາ, ເຊັນສັນຍາວຽງຈັນ ເດືອນ ກຸມພາ ປີ ໑໙໗໓, ສ້າງຕັ້ງລັດຖະບານປະສົມ ຄັ້ງທີ ໓. ໃນການເຂົ້າຮ່ວມປະສົມຄັ້ງນີ້, ພວກເຮົາມີອິດທິພົນ ແລະ ທ່າໃນດ້ານການເມືອງ ສູງກວ່າເກົ່າຫຼາຍ, ມີກຳລັງ ການທະຫານເຂັ້ມແຂງ, ມີເຂດປົດປ່ອຍກວ້າງໃຫຍ່ ກວມ ໔/໕ ຂອງດິນແດນ ແລະ ມີພົນລະເມືອງກວ່າເຄິ່ງຫນຶ່ງຂອງທົ່ວປະເທດ. ຈຸດປະສົງຂອງພວກເຮົາແມ່ນແນໃສ່ເຮັດໃຫ້ທຸກການແຊກແຊງ ແລະ ການຕິດພັນທາງການທະຫານ ຂອງ

ຈັກກະພັດອາເມລິກາ ແລະ ບໍລິວານຕໍ່ລາວຢູດູຕີລົງ, ຂີດເຂຽບັນດາກຳລັງປະຕິການຂວາຈັດ, ເຮັດໃຫ້ລັດຖະບານປະສົມມີລັກສະນະເປັນພາຫະນະປະຕິບັດໂຄງການ ການເມືອງຂອງແນວລາວຮັກຊາດ ເພື່ອປະສານສົມທົບກັບ ບັນດາກຳລັງປະຕິວັດໃນແນວຮົບຕໍ່ສູ້ອື່ນ ໆ, ພາການປະຕິວັດກາວຂຶ້ນສູ່ບາດກາວໃຫມ່. ການຕໍ່ສູ້ໃນ໘ປີແຫ່ງການ ເຂົ້າຮ່ວມປະສົມຄັ້ງນີ້ ເນື້ອແທ້ແມ່ນ ໘ ປີ ແຫ່ງການຫມູນ ໃຊ້ກຳລັງແຮງສັງລວມຂອງການປະຕິວັດ ປະສານສົມທົບຢ່າງແຫນ້ນແຟ້ນກັບການຕໍ່ສູ້ ທັງ ສີ່ ດ້ານ ຄື : ການຕໍ່ສູ້ທາງດ້ານກົດຫມາຍ, ການຕໍ່ສູ້ຂອງມະຫາຊົນ ແລະ ການ ພັນຂະຫຽາຍທາສະຫນາມ ບຸກລຸກ ຂອງບັນດາກຳລັງປະຕິວັດເພື່ອທັບມ້າງກົນອຸບາຍຕານປັນຂອງພວກປະຕິການ, ເຕົ້າໂຮມກຳລັງ, ລອມປ່ຽວສັດຕູອີກຕື່ມ, ຈັດຕັ້ງ ແລະ ເຝິກຊອມມະຫາຊົນລຸກຮືຂຶ້ນແບໃສ່ກຽມປະທົມປັດໃຈ ທາງດ້ານວັດຖຸ ແລະ ຈິດໃຈໃຫ້ການລຸກຮືຂຶ້ນ ຢຶດອຳນາດ ການປົກຄອງໃນທົ່ວປະເທດ. ກະແສສູງແຫ່ງການລຸກຮືຂຶ້ນຂອງມະຫາຊົນດ້ວຍ ສີ່ ບາດຄອນຍຸດທະສາດ ແລະ ການຊ່ວຍຊູຫນູນທາງດ້ານກົດຫມາຍຂອງບັນດາເຄື່ອງມື ໃນສະຖາບັນປະສົມ ແຕ່ເດືອນ ພຶດສະພາ ປີ ໑໙໖໔ ເປັນຕົ້ນມານັ້ນ

ໄດ້ນຳເອົາອຳນາດການປົກຄອງທັງຫມົດມາມີປະຊາຊົນ , ແລະມາເຖິງວັນທີ ໒ ທັນວາ ປະຫວັດສາດ, ຕໍ່ຫນ້າກອງປະຊຸມໃຫຍ່ ຜູ້ແທນປະຊາຊົນທົ່ວປະເທດ, ລັດຖະບານປະສົມຄັ້ງທີ່ ໓ ໄດ້ປະກາດຍຸບບົດບາດຂອງຕົນ ເຊິ່ງເປັນບົດບາດປະສານສົມທົບການກຽມໃຫ້ການສິ້ນສຸດລົງ ຢ່າງ ຕະຫຼອດການຂອງລະບອບເກົ່າ ແລະຂອງກະໂຕມັນເອງ.

ເມື່ອຫວນຄືນເບິ່ງຂະບວນວິວັດທັງຫມົດ ແຫ່ງການຕໍ່ສູ້ຂອງການປະຕິວັດຊາດ-ປະຊາທິປະໄຕໃນປະເທດເຮົານັບແຕ່ຈັກກະພັດອາເມລິກາ ໄດ້ເຕັ້ນເຂົ້າມາຮຸກຮານ ປະເທດເຮົາ ແລະ ວາງແອກຄອບຄອງ ລັດທິລ່າເມືອງຂຶ້ນແບບໃຫມ່ຂອງພວກເຂົາ ໃນໄລຍະ ໒໐ ປີມານີ້ ກໍ່ເຫັນຢ່າງຈະແຈ້ງວ່າການຕໍ່ສູ້ເຂົ້າຮ່ວມປະສົມໄດ້ມີຄຸນປະໂຫຍດທີ່ສຳຄັນທີ່ສຸດ ໃນການສະກັດກັ້ນ ແລະ ຈຳກັດກົນອຸບາຍເປີດກວ້າງສົງຄາມຂອງສັດຕູ, ໃນການຍາດແຍ່ງ ກາລະເວລາ ເພື່ອປັບປຸງ ແລະ ຂະຫຍາຍກຳລັງຂອງພວກເຮົາໂດຍສະເພາະຢ່າງຍິ່ງແມ່ນໄດ້ສ້າງເງື່ອນໄຂໃຫ້ການຊຸກຍູ້ຂະບວນການຕໍ່ສູ້ທາງການເມືອງຂອງມະຫາຊົນ ຢູ່ໃນເຂດກວດກາຂອງຝ່າຍກົງກັນຂ້າມຂຶ້ນສູ່ບາດກ້າວໃຫມ່ ດ້ວຍຄຸນ

ນະພາບໃຫມ່. ໃນຄັ້ງຫນຶ່ງ ໆ ທີ່ກຳລັງ ຂອງພວກເຮົາ ເຈົ້າລວມລາວ ກໍ່ແມ່ນຄັ້ງຫນຶ່ງ ທີ່ເຮັດໃຫ້ຄວາມເປັນທຳ ຂອງການປະຕິວັດ ມີຄວາມແຈ່ມໃສຕື່ມ, ແມ່ນຄັ້ງຫນຶ່ງທີ່ກໍ່ ກະແສຟອງມະຫາຊົນສະຫນັບສະຫນູນການປະຕິວັດ ແລະຕໍ່ ສູ້ຕ້ານບັນດານະໂຍບາຍປະຕິການ ຂອງສັດຕູຟົດເຟືອນຂຶ້ນ ເປັນລຳດັບ, ເຮັດໃຫ້ກຳລັງ ຂອງຝ່າຍກົງກັນຂ້າມຍິ່ງຜົນ ແຍກເລີກເຊື່ອງເຂົ້ານຳຈັກໄຂ ແລະ ສັດຕູກໍ່ຍິ່ງຖືກໂດດ ດ່ຽວກວ່າເກົ່າ. ອັນນັ້ນກໍ່ຍອມວ່າ ແນວທາງຍຸດທະສາດ ແລະ ຍຸດໂທບາຍທີ່ພັກເຮົາໄດ້ຫມູນໃຊ້ແມ່ນຖືກຕ້ອງ, ມັນ ໄດ້ຕອບສະຫນອງຜົນປະໂຫຍດ ແລະ ຄວາມມຸ້ງມາດ ປາ ຖະຫນາຂອງມະຫາຊົນທຸກຊັ້ນຄົນ, ພ້ອມກັນນັ້ນກໍ່ສອຍໃຊ້ ຄວາມຂັດແຍ້ງຢູ່ພາຍໃນຖັນແຖວ ຂອງສັດຕູ ເພື່ອພົນແຍກ ພວກເຂົາໄດ້. ອີກດ້ານຫນຶ່ງກໍ່ແມ່ນຍ້ອນວ່າ ປະຊາຊົນ ເຮົາພຽບພ້ອມໄປດ້ວຍນ້ຳໃຈຮັກຊາດ, ເຖິງແມ່ນວ່າເຂົາ ເຈົ້າໄດ້ດຳລົງຊີວິດຢູ່ພາຍໃຕ້ລະບອບການຫນີບຮັດຂອງສັດ ຕູກໍ່ຕາມ, ແຕ່ເວລາໃດ ກໍ່ໄດ້ອວາຍຫນ້າໄປຫາການປະຕິ ວັດຢູ່ສະເຫມີ; ບັນດາຊັ້ນຄົນ ລະຫວ່າງກາງ ອັນ ຫຼວງ ຫຼາຍ ໃນສັງຄົມຂອງປະເທດເຮົາ ກໍ່ໄດ້ເບື່ອຫນ່າຍຄຽດ ຊັງນະໂຍບາຍກຳຣາບປາບປາມ, ກໍ່ສົງຄາມ ແລະ ຂາຍ

ຊາດຂອງພວກປົກຄອງປະຕິການ, ສະນັ້ນ ເຂົາເຈົ້າ ຈຶ່ງນັບມື້ນັບບ່ຽງໄປນຳການປະຕິວັດ. ແຕ່ອັນສຳຄັນທີ່ສຸດແມ່ນຍ້ອນວ່າການປະຕິວັດ ໄດ້ມີກຳລັງຕົວຈິງທີ່ເຂັ້ມແຂງພຽງພໍແລະ ໄດ້ພັນຂະຫຍາຍກຽມພ້ອມ ຢູ່ໃນບັນດາແນວຮົບຕໍ່ສູ້ແລ້ວ. ສິ່ງ ເຫຼົ່ານັ້ນ ຈຳໃຫ້ພວກສັດຕູຕ້ອງໄດ້ຄິດໄລ່ ຊັ່ງຊາ ໃນແຕ່ລະເທື່ອ ທີ່ພວກເຂົາຢາກໃຊ້ກຳລັງຮຸນແຮງຝືນປະຕິວັດ. ມີຍຸດທະສາດ ແລະ ຍຸດໂທບາຍຖືກຕ້ອງ, ມີຂະບວນການຕໍ່ສູ້ຂອງມະຫາຊົນຊັ້ນພື້ນຖານ ແລະ ມີການເຂົ້າຮ່ວມສະໜັບສະໜູນຂອງຊັ້ນຄົນລະຫວ່າງກາງ, ແລະ ມີກຳລັງຕົວຈິງຂອງການປະຕິວັດເຂັ້ມແຂງ, ນັ້ນແມ່ນບັນດາປັດໃຈພື້ນຖານທີ່ຕັດສິນການສຳເລັດຜົນ ຂອງການຕໍ່ສູ້ເຂົ້າຮ່ວມປະສົມຢູ່ໃນປະເທດເຮົາ.

ໃນເມື່ອ ໄດ້ເຂົ້າຮ່ວມປະສົມແລ້ວ ກໍ່ໝາຍຄວາມວ່າ ໄດ້ຍອມຮັບເອົາການ " ປະນີປະນອມທີ່ຈຳເປັນ ". ການປະນີປະນອມດັ່ງກ່າວນັ້ນ ມີອັນປ່ຽນແປງໄປຕາມການຊັ່ງຊາທາງດ້ານທ່າ ແລະ ກຳລັງລະຫວ່າງ ຝ່າຍປະຕິວັດກັບຝ່າຍກົງກັນຂ້າມ ແລະ ສະພາບແວດລ້ອມປະຫວັດສາດຂອງແຕ່ລະໄລຍະເຂົ້າຮ່ວມປະສົມ. ໃນຂະນະທີ່ເຄາະເພື່ອຊັ່ງຊາເງື່ອນໄຂປະນີ ປະນອມນັ້ນ, ພັກຕ້ອງຄົ້ນຄວ້າ

ສະພາບການຢ່າງຮອບດ້ານ, ຂອງຝ່າຍສັດຕູກໍ່ຄືຂອງຝ່າຍເຮົາ ຢູ່ໃນປະເທດ ແລະ ຢູ່ນອກປະເທດ, ໃຈແຍກຢ່າງລະອຽດລະອໍບັນດາຂໍ້ຂັດແຍ້ງນ້ອຍ ໃຫຍ່ຢູ່ພາຍໃນຂອງສັດຕູເຊິ່ງພວກເຮົາອາດຈະສວຍໃຊ້ໄດ້, ທັງຕ້ອງໄດ້ຄິດຫງ່ຳເຖິງສາຍພົວພັນສາກົນອັນສະດວກກໍ່ຄືອັນສັບສົນໃນສະພາບການຂອງໂລກໃນຍາມນັ້ນ ເພື່ອກຳນົດລະດັບ ແລະ ເນື້ອໃນຍຸດໂທບາຍປະນີປະນອມ. ໃນເວລານີ້ ຍິ່ງກວ່າເວລາໃດໝົດ, ພັກຕ້ອງຊາບຊຶມຢ່າງເຖິງຖອງຄຳຕັກເຕືອນອັນປະເສີດ ຂອງເລນິນທີ່ວ່າ " ຈະອາດສາມາດເອົາຊະນະສັດຕູທີ່ແຂງແຮງລື່ນເຮົາໄດ້ ກໍ່ດ້ວຍຄວາມມານະບາກບັ່ນອັນໃຫຍ່ທີ່ສຸດ ແລະ ດ້ວຍເງື່ອນໄຂ ອັນບັງຄັບ ຄື ຕ້ອງສວຍໃຊ້ຢ່າງລະອຽດລະອໍ ອີຫຼີ, ຢ່າງເອົາໃຈໃສ່ຈົດຈໍ່ ອີຫຼີ, ຢ່າງສຸຂຸມຮອບຄອບອີຫຼີ, ຢ່າງຄ່ອງແຄ່ວອີຫຼີ ກ່ຽວກັບທຸກ " ຄວາມແຕກແຫງ " ລະຫວ່າງບັນດາສັດຕູບໍ່ວ່າຈະນ້ອຍປານໃດ ກໍ່ຕາມ, ທຸກຂໍ້ຂັດແຍ້ງ ບໍ່ວ່າມັນຈະນ້ອຍປານໃດກໍ່ຕາມ ກ່ຽວກັບຜົນປະໂຫຍດ ລະຫວ່າງ ຊົນຊັ້ນນາຍທຶນຂອງປະເທດຕ່າງ ໆ, ລະຫວ່າງບັນດາກຸ່ມ ຫຼືບັນດາປະເພດນາຍທຶນເສດຖີທີ່ແຕກຕ່າງກັນຢູ່ ໃນແຕ່ລະ ປະເທດ, ກໍ່ຄືຕ້ອງສວຍໃຊ້ທຸກຄວາມອາດສາມາດ ເຖິງຈະ

ນ້ອຍ ໆ ປານໃດກໍ່ຕາມ ເພື່ອໃຫ້ມີເພື່ອນສຳພັນທະມິດ ທີ່ແຂງແຮງທາງດ້ານຈຳນວນ ເຖິງແມ່ນວ່າເປັນເພື່ອນ ສຳພັນທະມິດຊົ່ວຄາວ, ທີ່ບໍ່ທ່ຽງໝັ້ນ, ທີ່ມີເງື່ອນໄຂ, ທີ່ມີຄວາມໜັກແໜ້ນໜ້ອຍແລະທີ່ໜ້າເຊື່ອຖືໜ້ອຍກໍ່ຕາມ"[1].

ຈຸດປະສົງຂອງການຕໍ່ສູ້ເຂົ້າຮ່ວມປະສົມ ຂອງພວກເຮົາແມ່ນເພື່ອສືບຕໍ່ຂະຫຍາຍທາບຸກປະຕິວັດ, ສ້າງເງື່ອນໄຂໃຫ້ການປະຕິວັດສືບຕໍ່ກ້າວຂຶ້ນສູ່ບາດກ້າວໃໝ່, ຫາກບໍ່ແມ່ນຢຸດຈັ້ງຢູ່ " ຮັກສາພາວະເດີມ ", ຫຼືຖົດຖອຍ, ສະນັ້ນ ກຽວກັບ ຫຼັກການປະນີປະນອມ ບໍ່ວ່າການປະນີ ປະນອມໃດ ໆ ກໍ່ບໍ່ອະນຸຍາດ ເຮັດໃຫ້ໝາກຜົນຂອງການປະຕິວັດ ທີ່ຍາດເອົາມາໄດ້ ຫຼຸດຜ່ອນລົງ ໃນດ້ານເນື້ອແທ້ ແລະ ຈຳກັດກຳລັງຕໍ່ສູ້ຂອງມະຫາຊົນ. ເມື່ອຈຳແນກການປະນີປະນອມປະຕິວັດກັບການປະນີປະນອມ ຂອງລັດທິສວຍໂອກາດນັ້ນ ເລນິນ ເຄີຍເວົ້າວ່າ " ບັນຫາທັງໝົດແມ່ນຢູ່ບ່ອນຮູ້ວິທີໝູນໃຊ້ຍຸດໂທບາຍນັ້ນ, (ໝາຍເຫດ : ຍຸດໂທບາຍຮ່ວມສຳພັນ ແລະ ປະນີປະນອມ) ເຮັດແນວໃດ ເພື່ອເຊີດຊູ, ແຕ່ຫາກ ບໍ່ແມ່ນຍຸບຍອບລະດັບ ຄວາມ

---

1. ເລນິນ, ຄົບຊຸດ, ພາສາຫວຽດນາມ, ສຳນັກພິມຈຳໜ່າຍ ''ຊື່ເທິດ'', ຮ່າໂນ້ຍ 1970, ພິມເທື່ອທີ 2 ເຫຼັ້ມ 31, ໜ້າ 76 – 77.

ຕື່ນຕົວທົ່ວໄປຂອງຊົນຊັ້ນກຳມາຊີບ, ຈິດໃຈປະຕິວັດ, ຄວາມສາມາດຕໍ່ສູ້ແລະເອົາຊະນະຂອງເຂົາເຈົ້າ"[1]. ໃນເງື່ອນໄຂແຫ່ງການຕໍ່ສູ້ປະຕິວັດຢູ່ໃນປະເທດເຮົາ ແລະຕາມບົດຮຽນຂອງພັກເຮົາ, ສິ່ງດັ່ງກ່າວນັ້ນມີຄວາມຫມາຍວ່າ : ຕ້ອງຮັກສາກຳລັງປະຕິວັດທັງຫມົດ ເຊິ່ງປະກອບດ້ວຍບັນດາອົງການຈັດຕັ້ງມະຫາຊົນ, ເຂດປົດປ່ອຍ ແລະ ອັນພິເສດແມ່ນກຳລັງປະກອບອາວຸດທີ່ເປັນພາຫະນະ ແຫ່ງກຳລັງຮຸນແຮງຕົ້ນຕໍຂອງພັກໄວ້ໃຫ້ໄດ້ ດ້ວຍວິທີນີ້ ຫຼືວິທີອື່ນ ແລະດ້ວຍລັກສະນະເປັນເອກະລາດຂອງມັນ; ອີກ ດ້ານຫນຶ່ງແມ່ນຕ້ອງຮັບປະກັນສິດເສລີພາບ ໃນການກະທຳໃນລະດັບອັນແນ່ນອນຂອງບັນດາກຳລັງປະຕິວັດ ແລະບັນດາສິດເສລີພາບປະຊາທິປະໄຕອັນຈຳເປັນຂອງມະຫາຊົນ ເພື່ອຮັກສາ ແລະ ສືບຕໍ່ຂະຫຍາຍທ່າບຸກປະຕິວັດ ແລະເມື່ອເວລາຕ້ອງການກໍ່ອາດຈະຫັນໄປສູ່ຮູບການຕໍ່ສູ້ອັນອື່ນໄດ້. ອັນນັ້ນແມ່ນສອງເງື່ອນໄຂທີ່ຮັບປະກັນການປະນີປະນອມຢ່າງມີຫຼັກການໃນສະພາບແວດລ້ອມແຫ່ງການຕໍ່ສູ້ປະຕິວັດ ຂອງປະເທດເຮົາ. ພວກເຮົາອາດຈະຜ່ອນສັ້ນຜ່ອນຍາວກັບຝ່າຍກົງກັນຂ້າມກ່ຽວກັບບັນຫາຈຳນວນສະມາຊິກທີ່ເຂົ້າຮ່ວມໃນລັດຖະ

1. ເລນິນ, ຄົບຊຸດ ພາສາຫວຽດນາມ, ສຳນັກພິມຈົ່ງທ່າຍ ''ຊື່ເຖິດ'', ຮ່າໂນ້ຍ'' 1970, ພິມເທື່ອທີ 2, ເຫຼັ້ມ 31 ໜ້າ 82.

ບານ,ກ່ຽວກັບຖານະຕຳແໜ່ງຮັບຜິດຊອບ,ກ່ຽວກັບຖານະນາມ ແລະ ຮູບການຂອງການຈັດຕັ້ງຈຳນວນໜຶ່ງທັງຂອງເຮົາ ແລະ ຂອງພວກເຮົາ..., ແຕ່ຫາກບໍ່ແມ່ນວ່າເພື່ອການປະສົມແລ້ວຈະເຮັດໃຫ້ຄວາມສາມາດສູ້ຮົບຂອງກຳລັງປະກອບອາວຸດ,ຖ່ວງທ່າຕໍ່ສູ້ຂອງມະຫາຊົນຫຼຸດຜ່ອນລົງ ຫລືເປັນການຜູກມັດໂຕເອງ. ໃນການເຂົ້າຮ່ວມປະສົມຄັ້ງທຳອິດ, ໃນສະພາບການທີ່ຖືກປິດລ້ອມ ແລະ ໃນເງື່ອນໄຂທີ່ທ່າ ແລະກຳລັງຂອງການປະຕິວັດຍັງອ່ອນກວ່າສັດຕູ ຫຼາຍນັ້ນ, ພວກເຮົາໄດ້ເຫັນດີເອົາກຳລັງປະກອບອາວຸດ ຂອງພວກເຮົາເຂົ້າຮ່ວມກັບກອງທະຫານລາຊະອານາຈັກ ແລະຫຼຸດຜ່ອນຈຳນວນພົນ, ແຕ່ບັນດາກົມກອງຂອງພວກເຮົາທີ່ເຂົ້າລວມລາວນັ້ນ ກໍ່ຍັງຄົງຮັກສາການຈັດຕັ້ງຢ່າງເປັນເອກະລາດຂອງຕົນຄືເກົ່າ ແລະຈຸດປະສົງອັນແທ້ຈິງຂອງການຫຼຸດຜ່ອນຈຳນວນພົນນັ້ນ ມັນຕັ້ງແມ່ນເພື່ອຫັນພະນັກງານ, ນັກຮົບຂອງພວກເຮົາພາກສ່ວນໜຶ່ງອອກໄປເປີດແນວຮົບຕໍ່ສູ້ໃໝ່ຢູ່ໃນທົ່ວປະເທດ ແລະສ້າງຮາກຖານການເມືອງ, ກຽມເງື່ອນໄຂໃຫ້ການຫັນທິດໄປສູ່ການຕໍ່ສູ້ ດ້ວຍອາວຸດໃນໄລຍະຕໍ່ມາ. ຍ້ອນແນວນັ້ນ, ເຖິງແມ່ນວ່າທາງດ້ານຮູບການ, ຖານະນາມ, ກຳລັງປະກອບອາວຸດຂອງພວກເຮົາ

ໄດ້ເອົາລວມລາວ ແລະໄດ້ຫຼຸດ ຜ່ອນຈຳນວນພົນແທ້, ແຕ່ຄວາມສາມາດສ຺ູ້ຮົບຂອງການປະຕິວັດກໍ່ບໍ່ໄດ້ ຈຸດໂຊມລົງ; ກົງກັນຂ້າມ ໃນເມື່ອສັດຕູໄດ້ທໍລະຍົດແລ້ວ, ພັກກໍ່ສາມາດປຸກຂະບວນການຕໍ່ສູ້ດ້ວຍອາວຸດສົມທົບກັບການຕໍ່ສູ້ດ້ວຍການເມືອງຢ່າງກວ້າງຂວາງໃນທົ່ວປະເທດ ໄດ້ໃນທັນທີທັນໃດໂລດ.

ການຕໍ່ສູ້ເອົາຮ່ວມປະສົມກໍ່ແມ່ນຮູບການ ອັນໜຶ່ງຂອງການຕໍ່ສູ້ອັນຈົບຊັ້ນ. ຈຸດປະສົງເອົາຮ່ວມປະສົມຂອງພວກເຮົາ ແລະຂອງສັດຕູນັ້ນມັນເປັນປໍລະປັກກັນຢ່າງສິ້ນເຊີງ: ພວກເຮົາເອົາຮ່ວມປະສົມ ແມ່ນເພື່ອຂະຫຍາຍ ອິດທິພົນຂອງການປະຕິວັດ ແລະເຕົ້າໂຮມກຳລັງຕົນ, ຂະຫຍາຍທາບຸກ, ພັນແຍກ, ລ້ອມປ່ຽວສັດຕູ ແລະ ປະສານສົມທົບກັບຮູບການຕໍ່ສູ້ອື່ນໆ ເພື່ອສືບຕໍ່ພາການປະຕິວັດກ້າວຂຶ້ນ, ແລະໃນທີ່ສຸດແມ່ນຍາດເອົາອຳນາດການປົກຄອງ ທັງໝົດມາມີປະຊາຊົນ. ສ່ວນສັດຕູເອົາຮ່ວມປະສົມ ແມ່ນເພື່ອຕ້ານຢັນມ້າງເພ ແລະດັບມອດການປະຕິວັດດ້ວຍວິທີອື່ນ, ຫຼື ໃນກໍລະນີທີ່ພວກເອົາຖືກປະລາໄຊຢ່າງໜັກໜ່ວງນັ້ນ, ແມ່ນເພື່ອກີດກັ້ນ, ຈຳກັດການປະຕິວັດ ແລະຍາດເວລາເພື່ອປັບປຸງກຳລັງຂອງເອົາຄືນໃໝ່, ປົກປ້ອງຮັກສາເອົາ

ລະບອບການປົກຄອງຂອງເຂົາໄວ້ ແລະຊອກທຸກວິທີຕ່າງຕີ
ການປະຕິວັດຄືນ. ສະນັ້ນ, ການເຂົ້າຮ່ວມປະສົມແມ່ນຜົນ
ແຫ່ງການຕໍ່ສູ້ດ້ວຍກຳລັງຮຸນແຮງຂອງການປະຕິວັດ, ແລະ
ມັນສະແດງອອກເປັນຈິງເຖິງການຊ່ວງຊາກຳລັງໃນສະພາບ
ແວດລ້ອມໃດໜຶ່ງທີ່ແນ່ນອນລະຫວ່າງເຮົາກັບສັດຕູ, ແຕ່
ຫາກບໍ່ແມ່ນ"ຍ້ອນເຈຕະນາດີຂອງຝ່າຍກົງກັນຂ້າມ"ຈັກ ດົ້.

ດ້ວຍລັກສະນະຂອງການຕໍ່ສູ້ ຊົນຊັ້ນ ດັ່ງກ່າວນັ້ນ,
ໃນເມື່ອເຂົ້າຮ່ວມປະສົມ ເຖິງວ່າມີບາງເທື່ອສັດຕູຖືກບັງ
ຄັບຈຳໃຈຕ້ອງຮັບເອົາບັນດາຂໍ້ຄວາມກ້າວໜ້າທີ່ເປັນຜົນດີ
ໃຫ້ມະຫາຊົນ ຫຼືຍອມມອບຕຳແໜ່ງອຳນາດການປົກຄອງທີ່
ສຳຄັນໃຫ້ຝ່າຍປະຕິວັດຕາມຂໍ້ເລັ່ງທວງ ຂອງພວກເຮົາ ກໍ່
ຕາມ, ແຕ່ ບໍ່ວ່າເວລາໃດ ພວກເຂົາກໍ່ກຳແໜ້ນກົງຈັກ
ຄວບຄຸມບັນຊາວຽກງານຢ່າງແທ້ຈິງຂອງລັດຖະບານ ແລະ
ບັນດາເຄື່ອງມືປາບປາມຂອງພວກເຂົາໄວ້ ເພື່ອກີດຂວາງ
ໂດຍເປີດເຜີຍ ຫຼືໂດຍປິດບັງການປະຕິບັດໃນພາກຕົວຈິງ
ກ່ຽວກັບແຜນນະໂຍບາຍ, ນະໂຍບາຍກ້າວໜ້າ ທີ່ໄດ້ຕົກ
ລົງກັນແລ້ວ. ຍ້ອນແນວນັ້ນ, ພວກເຮົາເດັດຂາດບໍ່ໄຝ່ຝັນ
ວ່າ ພວກເຮົາຈະສາມາດປ່ຽນແປງລະບອບສັງຄົມເກົ່າໄດ້
ຢ່າງພົ້ນຖານໂດຍຜ່ານເສັ້ນທາງລັດຖະບານປະສົມ; ຖ້າ

ຫາກມີການປະຕິບັດອັນໃດອັນໜຶ່ງທີ່ເປັນຜົນດີໃຫ້ການປະຕິວັດ ແລະໃຫ້ແກ່ມະຫາຊົນນັ້ນ ກໍ່ແມ່ນຍ້ອນຜົນຂອງການປະສານສົມທົບລະຫວ່າງການຕໍ່ສູ້ໃນລັດຖະບານປະສົມກັບການຕໍ່ສູ້ຂອງມະຫາຊົນຢ່າງແໜ້ນແຟ້ນ; ມີບາງກໍລະນີ, ຍັງຕ້ອງໄດ້ສົມທົບກັບການໝູນໜີບຂອງກຳລັງປະກອບອາວຸດ ຫຼື ຈົນກະທັ້ງກັບການຕໍ່ສູ້ດ້ວຍອາວຸດຢູ່ແຕ່ລະບ່ອນ, ເປັນແຕ່ລະຄັ້ງຄາວດ້ວຍ." ຖ້າຫາກຮັດແຄບການຕໍ່ສູ້ຊົນຊັ້ນຢູ່ແຕ່ໃນຂອບເຂດການຕໍ່ສູ້ພາຍໃນລັດຖະສະພາເທົ່ານັ້ນ ຫລື ຖ້າຫາກຖືການຕໍ່ສູ້ໃນລັດຖະສະພາເປັນຮູບການຕໍ່ສູ້ສູງ ທີ່ມີລັກສະນະຕັດສິນ, ຄອບງຳທຸກຮູບການຕໍ່ສູ້ອື່ນໆ ໄດ້ແລ້ວ, ເມື່ອເປັນເຊັ່ນນັ້ນ ໃນຕົວຈິງກໍ່ແມ່ນໄດ້ໂຕນໄປຫາຖັນແຖວຂອງຊົນຊັ້ນນາຍທຶນມາຕານຢັນຊົນຊັ້ນກຳມາຊີບ"1)

ສະໄໜຕໍ່ສູ້ເຂົ້າຮ່ວມປະສົມນັ້ນ ເປັນສະໄໜທີ່ຕໍ່ສູ້ເປີດເຜີຍຖືກກົດໝາຍ ແລະ ເຄິ່ງຖືກກົດໝາຍ ສົມທົບຢ່າງແໜ້ນແຟ້ນກັບການເຄື່ອນໄຫວປິດລັບ, ຜິດກົດໝາຍຂອງພັກ. ນີ້ເປັນໂອກາດດີທີ່ສຸດໂອກາດໜຶ່ງ ສຳລັບການປຸກລຸກ ແລະ ສຶກສາອົບຮົມການເມືອງໃຫ້ມະຫາຊົນຢ່າງ

1 ເລນິນ, ນິພົນເລືອກເຟັ້ນ, ພາສາຈີນ, ສຳນັກພິມຈົ່ງຫ່ວາງ " ປັກກິ່ງ ... 1960. ເຫຼັ້ມ 4 ໜ້າ 144.

24/VII

ກ້ວາງຂວາງ ແລະ ວ່ອງໄວໃນເຂດກວດກາຂອງສັດຕູ. ໃນແຕ່ລະສະໄຫມແຫ່ງການເຂົ້າຮ່ວມປະສົມ, ພັກເຮົາໄດ້ຮູ້ໃຊ້ຢ່າງສຸດຂີດທຸກເງື່ອນໄຂຖືກກົດຫມາຍ ແລະເຄິ່ງຖືກກົດຫມາຍ, ໂດຍອີງໃສ່ບັນດາອົງການຈັດຕັ້ງປະຕິວັດ ຢູ່ຮາກຖານ ແລະຜ່ານອົງການຈັດຕັ້ງທີ່ກ້າວຫນ້າຂອງຊຸ້ມຊົນລະຫວ່າງກາງ ເປັນຕົ້ນແມ່ນອົງການຈັດຕັ້ງຊາວຫນຸ່ມ, ນັກຮຽນ ນັກສຶກສາ ເພື່ອລະດົມມະຫາຊົນເປັນຫມື່ນໆ ມາສະແດງແຜ່ງກຳລັງ, ດຳເນີນການຕໍ່ສູ້ຕາມຄຳຂວັນຂອງພັກ. ນັ້ນແມ່ນສະໄຫມທີ່ການເຄື່ອນໄຫວຂອງມະຫາຊົນຟົດເດືອດເຊິ່ງບໍ່ເຄີຍມີມາແຕ່ກ່ອນ ໃນເຂດກວດກາ ຂອງຝ່າຍກົງກັນຂ້າມ ດ້ວຍ ຫຼາຍຮູບການຈັດຕັ້ງ ແລະ ວິທີຕໍ່ສູ້ຢ່າງມີໄຫວພິບອຸດົມຮ່ວມທີ່ສຸດ; ມັນໄດ້ສ້າງເປັນກຳລັງຊ່ວຍຊູຫນູນຢ່າງແຂງແຮງໃຫ້ແກ່ການປະຕິວັດ ແລະ ຢັນສັດຕູໃຫ້ຕົກເຂົ້າໃນທ່າຮັບ, ກະວົນກະວາຍທີ່ສຸດ. ແຕ່ວ່າ, ການຕໍ່ສູ້ເປີດເຜີຍຖືກກົດຫມາຍນັ້ນ ເປັນພຽງແຕ່ວຽກງານດ້ານຫນຶ່ງຂອງພັກເທົ່ານັ້ນ, ຍິ່ງບໍ່ແມ່ນວຽກງານດ້ານພື້ນຖານກວ່າຫມູ່ໃນຂະນະທີ່ສັດຕູຍັງກຳອຳນາດການປົກຄອງຢູ່ນັ້ນ. ດ້ວຍເຫດນັ້ນ, ໃນຂະບວນວິວັດແຫ່ງການຕໍ່ສູ້ເຂົ້າຮ່ວມປະສົມ, ພັກຕ້ອງຮູ້ຜ່ານບັນດາການເຄື່ອນໄຫວຕໍ່ສູ້ ເປີດເຜີຍ

ຂອງມະຫາຊົນ ເພື່ອສ້າງກຳລັງ ຫຼັກແຫຼ່ງ, ແກ່ນສານຂອງຕົນ; ພອມກັນນັ້ນ ກໍ່ຕ້ອງຮູ້ປົກປັກຮັກສາບັນດາກຳລັງດັ່ງກ່າວນັ້ນ ກໍ່ຄືຕ້ອງຮູ້ປົກປັກຮັກສາບັນດາການຈັດຕັ້ງຂອງພັກ, ບໍ່ປະໃຫ້ເພີຍອອກຫມົດຕໍ່ຫນ້າສັດຕູ. ໃນເວລາດຽວກັນນັ້ນ, ຊ້ຳພັດຕ້ອງມີສະຕິລະວັງຕົວຢູ່ສະເຫມີ, ກຽມພອມທຸກເງື່ອນໄຂ ໃນເມື່ອສະຖານະການ ປ່ຽນແປງ, ສັດຕູທໍລະຍົດ ຫຼືບລົ້ນປັ້ນຄວາມ, ພັກກໍ່ສາມາດຫັນວຽກງານ ທັງຫມົດຂອງຕົນໄປສູ່ການເຄື່ອນໄຫວບໍ່ຖືກກົດຫມາຍ ຢ່າງທັນການໄດ້ໂລດ. ບົດຮຽນຂອງການເຂົ້າຮ່ວມປະສົມ ນີ້ ຄົງໄດ້ຊີ້ໃຫ້ເຫັນວ່າ : ບໍ່ວ່າເວລາໃດ ພັກກໍ່ຕ້ອງ ຕານລັດທິເປີດເຜີຍຖືກກົດຫມາຍ, ຕ້ານການເຜີຍແຜ່ກຳລັງທັງຫມົດຂອງການປະຕິວັດ ອອກຕໍ່ຫນ້າສັດຕູ, ຕານການລະເມີດຫຼັກ ການຈັດຕັ້ງປິດລັບຂອງພັກ, ຕານການຖືເບົາ ການກໍ່ສ້າງ, ຂະຫຍາຍພັກ ແລະ ບັນດາອົງການຈັດຕັ້ງ ມະຫາຊົນແກນສານຂອງພັກ, ບໍ່ກ້າຜ່ານຂ້າມ ຂອບວົງກົດຫມາຍຂອງສັດຕູໃນເມື່ອຈຳເປັນ. ຕໍ່ພະນັກງານ, ສະມາຊິກພັກທີ່ເຂົ້າຮ່ວມ ໃນບັນດາການຈັດຕັ້ງປະສົມນັ້ນ, ພັກຕ້ອງສຶກສາອົບຮົມເຂົາເຈົ້າຢູ່ສະເຫມີໃຫ້ຮັບຮູ້ແຈ້ງທີ່ຕັ້ງ ແລະຫນ້າທີ່ ຂອງນັກຮົບປະຕິວັດ, ຕ້ານທາງອຽງແຍກຕົວ ອອກຫ່າງ

ຈາກມະຫາຊົນ, ບໍ່ຍາດໂອກາດເຂົ້າໃກ້ຊິດຕິດພັນກັບ ມະຫາຊົນ ເພື່ອນຳເອົາປາກສຽງຂອງການປະຕິວັດເຂົ້າໄປສູ່ມະຫາຊົນ, ໄຝ່ຝັນ ຫຼົງເຊື່ອຕໍ່ " ຈິດໃຈຖືກຕອງປອງດອງ " ຂອງຝ່າຍກົງກັນຂາມ ອັນເປັນການຈຳກັດກຳລັງຕໍ່ສູ້ຂອງມະຫາຊົນ.

ການຕໍ່ສູ້ເຂົ້າຮ່ວມປະສົມເປັນພຽງແຕ່ໜຶ່ງ ໃນບັນດາຮູບການຕໍ່ສູ້ຂອງພັກໃນສະຖານະການໃດໜຶ່ງທີ່ແນ່ນອນ ແລະ ກໍ່ບໍ່ແມ່ນຮູບການຕໍ່ສູ້ພື້ນຖານອັນໜຶ່ງ ຂອງການປະຕິວັດ ເພາະມັນເອງ ບໍ່ອາດຈະທັບມ້າງລະບອບເກົ່າໄດ້. ໃນເວລາເຂົ້າຮ່ວມປະສົມ, ພັກເຮົາໄດ້ມີສະຕິຢ່າງພຽງພໍສະເໝີວ່າ ໃນທີ່ສຸດກໍ່ມີແຕ່ລຸກຂຶ້ນ ໃຊ້ກຳລັງຮຸນແຮງປະຕິວັດທັບມ້າງກົງຈັກປົກຄອງທັງໝົດຂອງຈັກກະພັດນິຍົມແລະພວກລູກມືຂອງເຂົາ, ຍາດເອົາອຳນາດການປົກຄອງ ທັງໝົດມາມືປະຊາຊົນເທົ່ານັ້ນ ຈຶ່ງຈະບັນລຸຈຸດໝາຍຍຸດ ທະສາດຂອງການປະຕິວັດໄດ້. ດ້ວຍເຫດນັ້ນ, ພັກຕອງຮູ້ຈັກເຂົ້າຮ່ວມປະສົມໃນເມື່ອເຫັນວ່າຕອງການ, ແຕ່ກໍ່ຍັງຕອງຮູ້ຈັກລຶບລ້າງການເຂົ້າຮ່ວມປະສົມນັ້ນທັນທີ ໃນເມື່ອມັນໄດກາຍເປັນອຸປະສັກຂັດຂວາງການກ້າວຂຶ້ນຂອງການປະຕິວັດ ໂດຍສະເພາະຢ່າງຍິ່ງແມ່ນໃນເມື່ອສະພາວະການປະຕິວັດ

ໂດຍກົງຢູ່ໃນທົ່ວປະເທດ ໄດ້ປະກົດຕົວຂຶ້ນແລ້ວ. ເລນິນເຄີຍໄດ້ສອນວ່າ : "ເວລາທີ່ໃຊ້ຮູບການຕໍ່ສູ້ຖືກກົດໝາຍແລະ ບໍ່ຖືກກົດໝາຍພອມ ໆ ກັນຢູ່ໃນລັດຖະສະພາ ແລະນອກລັດຖະສະພານັ້ນ, ມີບາງຄັ້ງຄາວຈຳຕ້ອງໄດ້ປັດເປົ່າແລະ ກະທັ້ງຕ້ອງຮູ້ຈັກປັດເປົ່າຮູບການຕໍ່ສູ້ ທາງລັດຖະສະພາອີກຊ້ຳ "[1].

໑໕ ການລຸກຮື້ອນອັນເປັນປະຫວັດການເດືອນພຶດສະພາ ປີ ໑໙໑໙, ຂະບວນການຕໍ່ສູ້ຂອງມະຫາຊົນໄດ້ຂະຫຍາຍຕົວຂຶ້ນເປັນກະແສສູງປະຕິວັດ, ມະຫາຊົນຮຽກຮອງ " ຕ້ອງໂຄ່ນລົ້ມພວກປະຕິການທັງໝົດ, ບໍ່ໃຫ້ເຂົ້າຮ່ວມປະສົມກັບສັດຕູ " ນັ້ນ, ແມ່ນວ່າລັດຖະບານປະສົມເຊິ່ງມີໂຄງການ ໑໔ ຂໍ້ ທີ່ມີລັກສະນະ ກາວໜ້າຢູ່ ກໍ່ໄດ້ກາຍເປັນອັນພົ້ນສະໄໝ ແລະ ຫຼ້າຫຼັງໄປແລ້ວ. ຖ້າຫາກຮັກສາການເຂົ້າຮ່ວມປະສົມ ໃນສະພາວະການດັ່ງກ່າວນັ້ນ ກໍ່ແມ່ນໄປຈຳກັດກຳລັງຕໍ່ສູ້ຂອງມະຫາຊົນ, ຂັດຂວາງ ບໍ່ໃຫ້ການປະຕິວັດກ້າວຂຶ້ນ ແລະ ອັນນັ້ນມັນກໍ່ແມ່ນຕົກຖືກແຮ້ວຂອງສັດຕູໃນຄາວນັ້ນ. ກົງກັນຂ້າມ, ຕ້ອງກຳເອົາບັນດາຄຳປະຫວ້ງ ຂອງມະຫາຊົນ ໃນທັນທີທັນໃດໂລດ, ໃຊ້ບັນດາກຳລັງແຫ່ງຄວາມຮຸນແຮງປະຕິວັດ, ບັງ

1. ເລນິນ ຄົບຊຸດ, ພາສາຫວຽດນາມ, ສຳນັກພິມຈຳໜ່າຍ "ຊືເຊີດ", ຮ່າໃນ້ຍ, 1970, ພິມເທື່ອທີ 2, ເຫຼັ້ມ 31, ໜ້າ 28.

ຄັບໃຫ້ສັດຕູຕ້ອງຍອມວາງອາວຸດ, ທັບມ້າງກົງຈັກອຳນາດ
ການປົກຄອງປະຕິການທັງຫມົດ ພ້ອມທັງເຄື່ອງມືປາບປາມ
ຂອງມັນ, ສ້າງຕັ້ງອຳນາດການປົກຄອງປະຊາຊົນປະຕິວັດ
ຂຶ້ນແທນທີ່ໂລດ. ພັກເຮົາໄດ້ເຮັດຄືແນວນັ້ນ ແລະ ກໍ່ຍາດ
ເອົາໄຊຊະນະອັນສົມບູນ, ເຖິງຖອງ ແລະ ບໍລິບູນມາໃຫ້
ການປະຕິວັດຊາດ-ປະຊາທິປະໄຕໃນທົ່ວປະເທດ.

ຈາກຂະບວນວິວັດ ແຫ່ງການນຳພາການຕໍ່ສູ້ ປະຕິ
ວັດຂອງພັກເຮົາ, ພວກເຮົາອາດຈະສະຫຼຸບ ໄດ້ດັ່ງນີ້ :
" ການເຂົ້າຮ່ວມ ປະສົມ " ເຖິງແມ່ນວ່າ ມັນມີຄວາມ
ຫມາຍສຳຄັນທີ່ສຸດຕໍ່ການປະຕິວັດຂອງປະເທດເຮົາ, ແຕ່ກໍ່
ເປັນພຽງແຕ່ຍຸດໂທບາຍອັນຫນຶ່ງໃນເງື່ອນໄຂໃດຫນຶ່ງທີ່ແນ່
ນອນເພື່ອຮັບໃຊ້ຈຸດຫມາຍຍຸດທະສາດ; ພັກຕ້ອງຮູ້ຫມູນໃຊ້
ແລະ ນຳໃຊ້ເປັນຢ່າງດີຮູບການຕໍ່ສູ້ເຂົ້າຮ່ວມປະສົມ ເພື່ອ
ປະຕິບັດແຜນນະໂຍບາຍ " ຍາດເອົາໄຊຊະນະ ເທື່ອລະ
ກ້າວ ", ແຕ່ ການຕໍ່ສູ້ເຂົ້າຮ່ວມປະສົມ ນັ້ນ ຕ້ອງອີງໃສ່
ກຳລັງຕົວຈິງຂອງການປະຕິວັດ ແລະ ຕ້ອງປະສານສົມທົບ
ຢ່າງແຫນນແຟ້ນ ກັບບັນດາຮູບການຕໍ່ສູ້ດ້ວຍກຳລັງຮຸນແຮງ
ຂອງມະຫາຊົນ ຈຶ່ງຈະພາການປະຕິວັດກ້າວຂຶ້ນໄດ້; ແລະ
ໃນທີ່ສຸດກໍ່ມີແຕ່ໃຊ້ກຳລັງຮຸນແຮງຂອງມະຫາຊົນທັບມ້າງລະ

ບອບເກົ່າທັງຫມົດ, ຍາດເອົາອຳນາດການປົກຄອງ ມາມື
ປະຊາຊົນເທົ່ານັ້ນ ຈຶ່ງຈະສາມາດເຮັດໃຫ້ ຈຸດປະສົງສູດ
ທາຍຂອງການປະຕິວັດປະກົດເປັນຈິງໄດ້.

(77. ສ້າງກາລະໂອກາດ, ກຳແໜ້ນກາລະໂອກາດ, ເສີມຂະຫຍາຍກຳລັງແຮງສັງລວມຂອງການປະຕິວັດ, ທັບມ້າງກົງຈັກປົກຄອງປະຕິການຢ່າງເຖິງ ຖອງ, ຍາດເອົາໄຊຊະນະສົມບູນ.

ໃນເງື່ອນໄຂທີ່ການປະຕິວັດ ຂອງປະເທດ ເຮົາເຊິ່ງໄປແຕ່ບໍ່ມີເຖິງມີ, ແຕ່ນ້ອຍເຖິງໃຫຍ່ນັ້ນ ມັນຮຽກຮ້ອງໃຫ້ສິລະປະໃນການນຳພາການປະຕິວັດຂອງພັກ ຕ້ອງຮູ້ຈັກເປີດສາກຢ່າງຖືກກັບເວລາ, ຮູ້ຈັກຍາດເອົາໄຊຊະນະເທື່ອລະກ້າວ ແລະຮູ້ຈັກສຳເລັດຢ່າງຮອບຄອບ, ຖືກກັບກາລະໂອກາດ ເພື່ອສ້າງບາດກ້າວຫັນປ່ຽນທີ່ຕັດສິນທາງດ້ານທາດ.

ໃນເວລາທີ່ບັນດາເງື່ອນໄຂອຳນວຍຄວາມສະດວກໃດໜຶ່ງທີ່ແນ່ນອນຢູ່ພາຍໃນ ແລະນອກປະເທດປະກົດຕົວຂຶ້ນນັ້ນ ພັກເຮົາໄດ້ຮູ້ຈັກກຳເອົາຢ່າງທັນການ ເພື່ອເສີມຂະຫຍາຍກຳລັງແຮງສັງລວມຂອງການປະຕິວັດ, ຊຸກຍູ້ການປະຕິວັດໃຫ້ກ້າວຂຶ້ນດ້ວຍບາດກ້າວກະໂດດຂັ້ນ ແນໃສ່ຍາດເອົາໄຊຊະນະໃຫຍ່ເທົ່າທີ່ຈະໃຫຍ່ໄດ້ມາໃຫ້ພາລະກິດປະຕິວັດ ແລະລຶດຜ່ອນການເສັຽເລືອດເສັຽຢາງຂອງ ປະຊາຊົນເທົ່າທີ່ຈະຫຼາຍໄດ້. ອັນນັ້ນບໍ່ພຽງແຕ່ເປັນລະດັບຄາດ

ໝາຍສຳລັບພັກ ໃນການຊີ້ນຳການຕໍ່ສູ້ປະຕິວັດເທົ່າ ນັ້ນ, ຫາກຍັງເປັນຄວາມຮັບຜິດຊອບການເມືອງຂອງພັກເຮົາອີກດ້ວຍ.

ພຶດຕິກຳຂອງຍຸກສະໄໝປັດຈຸບັນ-ຍຸກສະໄໝຂ້າມຜ່ານແຕ່ລັດທິທຶນນິຍົມຂຶ້ນສູ່ລັດທິສັງຄົມນິຍົມ, ຍຸກສະໄໝທີ່ມີ ກະແສຟອງປະຕິວັດຢູ່ໃນທ່າບຸກຢ່າງແຂງແຮງ - ໄດ້ມີບາດລ້ຽວປະຫວັດສາດທີ່ມີຄວາມໝາຍຍຸກສະໄໝປະ ກົດຕົວຂຶ້ນຢ່າງເນື່ອງນິດອັນສ້າງເປັນຄວາມສະດວກໃຫຍ່ຫຼວງທີ່ສຸດໃຫ້ແກ່ການຂະຫຍາຍຕົວຂອງການປະຕິວັດຂອງແຕ່ລະປະເທດ. ແຕ່ຈະສາມາດຍາດເອົາກາລະໂອກາດເພື່ອນຳເອົາການປະຕິວັດກ້າວຂຶ້ນໄດ້ ຫຼື ບໍ່ບັນຫານີ້ກ່ອນອື່ນ ໝົດມັນຂຶ້ນກັບຄວາມມານະພະຍາຍາມອັດຕະວິໄສຂອງ ຊາດເຮົາ ແລະ ຄວາມຄົມແຫຼມ, ຮູ້ສຶກໄວ ແລະຄວາມຕັດສິນໃຈຂອງພັກເຮົາຕໍ່ໜ້າກາລະໂອກາດປະຫວັດສາດນັ້ນ.

ຂະບວນວິວັດແຫ່ງການນຳພາການປະຕິວັດຂອງປະເທດເຮົາ, ພັກເຮົາເວລາໃດກໍ່ຮັບຮູ້ບັນຫານີ້ຢ່າງເຕັມເມັດເຕັມໜ່ວຍວ່າ ດ້ານໜຶ່ງ, ແມ່ນບາກບັ່ນບຸກບືນ ກໍ່ສ້າງບັນດາປັດໄຈອັດຕະວິໄສຂອງການປະຕິວັດເຮົາ, ຖືອັນນັ້ນແມ່ນດ້ານພື້ນຖານທີ່ຕັດສິນກ່ອນໝູ່ຕໍ່ການປະຕິ ວັດ.

ແຕ່ອີກດ້ານໜຶ່ງ–ເຊິ່ງເປັນດ້ານສຳຄັນທີ່ສຸດທີ່ມີ ຄວາມໝາຍຕັດສິນຕື່ມອີກແມ່ນ: ຮູ້ຈັກສ້າງກາລະໂອ ກາດ, ຍາດແຍ່ງກາລະໂອກາດທັງພາຍໃນ ແລະ ນອກປະເທດ ເພື່ອຍາດເອົາໄຊຊະນະເທື່ອລະກ້າວ, ສ້າງເງື່ອນໄຂກ້າວຂຶ້ນຍາດເອົາໄຊຊະນະສົມບູນ.

ເດືອນ ສິງຫາ ໑໙໔໕, ຕໍ່ໜ້າກາລະໂອກາດທີ່ມີຄວາມໝາຍສາກົນ ແລະມີລັກສະນະຍຸກສະໄໝຄືກອງທັບແດງສະຫະພາບໂຊວຽດ ໄດ້ຕີເອົາຊະນະລັດທິຟາດ ຊິດ; ການປະຕິວັດໃນແຫຼມອິດດູຈີນໄດ້ຟົດຟື້ນຂຶ້ນຢ່າງແຂງແຮງທີ່ສຸດນັ້ນ ເຖິງວ່າເງື່ອນໄຂອັດຕະວິໄສໃນທຸກດ້ານຂອງການປະຕິວັດປະເທດເຮົາໃນເວລານັ້ນຍັງຖືກຈຳກັດທີ່ສຸດກໍ່ຕາມ, ແຕ່ໂດຍກຳແໜ້ນກາລະໂອກາດປະຫວັດສາດທີ່ຫາຍາກ ທີ່ສຸດນັ້ນ ພັກເຮົາໄດ້ນຳພາປະຊາຊົນທົ່ວປະເທດສາມັກຄີກັບປະຊາຊົນຫວຽດນາມ ແລະກຳປູເຈຍອ້າຍນ້ອງລຸກຂຶ້ນເຮັດການປະຕິວັດເດືອນ ສິງຫາ; ວັນທີ່ ໑໒ ຕຸລາ ໑໙໔໕ ໄດ້ປະກາດຄວາມເປັນເອກະລາດຂອງປະເທດລາວຕໍ່ໂລກເປັນຄັ້ງທຳອິດ ພາຍຫຼັງ ທີ່ຖືກເສຍບ້ານເສຍເມືອງ ແລະຕົກເປັນທາດມາເປັນເວລານານປີ, ໄຂໄລຍະໃໝ່ໃນພາລະກິດຕໍ່ສູ້ປະຕິວັດປົດປ່ອຍຊາດຂອງປະເທດເຮົາ.

ປີ ໑໙໕໙, ເມື່ອຈັກກະພັດອາເມລິກາ ແລະລູກມື ທໍລະຍົດຕໍ່ການລວມລາວ, ຕ້ານຢັນຄວາມມຸ່ງມາດປາຖະໜາໃນສັນຕິພາບ, ເອກະລາດຂອງປະຊາຊົນບັນດາ ຊົນຊາດເຮົານັ້ນ, ມະຫາຊົນຊັ້ນຄົນຕ່າງໆ ໃນທົ່ວປະເທດເຮົາໄດ້ຄຽດແຄ້ນພວກເຂົາເປັນທີ່ສຸດ, ແລະພາຍໃຕ້ການນຳພາທັນທິດຕໍ່ສູ້ຢ່າງຖືກຕ້ອງ ແລະທັນການຂອງພັກເຮົາ, ປະຊາຊົນໃນທົ່ວປະເທດໄດ້ລຸກຂຶ້ນຕໍ່ສູ້ຢ່າງແຂງແຮງ, ພາໄປເຖິງການລັດຖະປະຫານທີ່ຮັກຊາດເດືອນສິງຫາ ໑໙໖໐. ພັກເຮົາໄດ້ກຳເອົາກາລະໂອກາດທີ່ສ້າງຂຶ້ນຢູ່ພາຍໃນປະເທດຢ່າງທັນເວລາ, ເປີດກວ້າງແນວໂຮມແຫ່ງຊາດຢ່າງໄວວາ, ອອກແຮງຍາດແຍ່ງການຊ່ວຍເຫຼືອຂອງສາກົນ, ຂະຫຍາຍກຳລັງປະຕິວັດໃນທຸກດ້ານດ້ວຍລະດັບໄວທີ່ບໍ່ເຄີຍມີມາກ່ອນ, ພາການປະຕິວັດເຮົາກ້າວຂຶ້ນດ້ວຍບາດກ້າວກະໂດດຂັ້ນທີ່ສຳຄັນ, ປົດປ່ອຍດິນແດນ ໔/໕ ແລະພົນລະເມືອງເຄິ່ງໜຶ່ງຂອງທົ່ວປະເທດ, ສ້າງລັດຖະບານປະສົມ ໕ ຝ່າຍຕາມເງື່ອນໄຂຂອງພວກເຮົາ; ສິ່ງເຫຼົ່ານັ້ນໄດ້ສ້າງເປັນທ່າ ແລະກຳລັງອັນເຂັ້ມແຂງໃຫ້ການປະຕິວັດສືບຕໍ່ຂະຫຍາຍຕົວ.

ດ້ວຍບັນດາບົດຮຽນອັນລ້ຳຄ່າໃນຂະບວນວິວັດແຫ່ງ

ການຕໍ່ສູ້ປະຕິວັດທີ່ກ່າວມານັ້ນ, ພັກເຮົາໄດ້ໝູນໃຊ້ບັນດາ ສ້າງກາລະໂອກາດ, ກໍາເອົາກາລະໂອກາດໃນໄລຍະສິ້ນ ສຸດແຫ່ງການປະຕິວັດຊາດ-ປະຊາທິປະໄຕຂອງປະເທດເຮົາ ຢ່າງປີຊາສາມາດ ແລະປະດິດສ້າງ, ແລະກໍ່ໄດ້ຮັບໄຊຊະ ນະອັນສົມບູນ, ເຖິງຖອງ ແລະບໍລິບູນ.

ພາຍຫຼັງສັນຍາວຽງຈັນໄດ້ຮັບການເຊັນກັນ ໃນ ເດືອນ ກຸມພາ ປີ ໑໙໗໓, ພວກເຮົາໄດ້ກໍາຈັດປັດ ເປົ່າ ການແຊກແຊງຂອງຈັກກະພັດອາເມລິກາຕໍ່ລາວໄດ້ ກ້າວ ໜຶ່ງທີ່ສໍາຄັນ. ດ້ວຍກໍາລັງຕົວຈິງຂອງການປະຕິວັດທີ່ໃຫຍ່ ໂຕເຂັ້ມແຂງ ແລະດ້ວຍການປະສານສົມທົບລະຫວ່າງການ ຕໍ່ສູ້ທາງການເມືອງຂອງມະຫາຊົນກັບການຕໍ່ສູ້ທາງ ກົດ ໝາຍ ແລະບັນດາບາດຄ້ອນລົງໂທດການກະທໍາສ່ຽງ ໄພ ທາງການທະຫານຂອງ ພວກຂວາຈັດກະຫາຍສົງ ຄາມ, ພວກເຮົາໄດ້ບັງຄັບຝ່າຍກົງກັນຂ້າມ ຕ້ອງຍອມຮັບແລະປະ ຕິບັດຂໍ້ຄວາມຈໍານວນໜຶ່ງໃນສັນຍາເຊິ່ງເປັນຜົນດີທີ່ສຸດໃຫ້ ແກ່ການປະຕິວັດ, ໃນນັ້ນ ມີການເຮັດໃຫ້ ໒ ນະຄອນ ວຽງຈັນ ແລະຫຼວງພະບາງເປັນກາງ. ຕໍ່ໜ້າຖ່ວງທ່າ, ອິດທິລິດອັນນັບມື້ນັບເຕີບໃຫຍ່ເຂັ້ມແຂງຂອງບັນດາກໍາ ລັງ ປະຕິວັດ ແລະການລົ້ມລະລາຍຢ່າງຮ້າຍແຮງທີ່ສຸດຂອງຈັກ

ກະພັດອາເມລິກາໃນຍຸດທະສາດສົງຄາມລ່າເມືອງຂຶ້ນແບບໃໝ່ຕໍ່ອິນດູຈີນນັ້ນ, ພວກປະຕິການລູກມືຂອງເຈົ້າຢູ່ ລາວຍິ່ງສະທ້ານຢ້ານກົວ, ຕົກຢູ່ໃນທ່າຮັບ ແລະຖືກພັນແຍກຢ່າງໜັກ; ຂະບວນການຕໍ່ສູ້ຂອງປະຊາຊົນຊັ້ນຄົນຕ່າງໆເປັນຕົ້ນແມ່ນໃນບັນດາຕົວເມືອງຍິ່ງຂະຫຍາຍຕົວຢ່າງ ຟົດເຟືອດແຂງແຮງ; ກຳລັງລະຫວ່າງກາງໄດ້ວຽນມາຝ່າຍປະຕິວັດ. ສະພາວະການປະຕິວັດໂດຍກົງໄດ້ປະກົດ ຕົວອອກ ແລະບັນຫາຍຶດອຳນາດການປົກຄອງໃນທົ່ວປະ ເທດໄດ້ຕັ້ງຂຶ້ນ.

ພັກເຮົາໄດ້ຢືນຢັນສະເໝີວ່າ ເສັ້ນທາງປະຕິວັດດ້ວຍຄວາມຮຸນແຮງເປັນເສັ້ນທາງດຽວເພື່ອຍາດເອົາ ອຳນາດການປົກຄອງ, ຫາກບໍ່ແມ່ນເສັ້ນທາງປະຕິຮູບ, ເສັ້ນທາງ "ດັດແປງໂຄງປະກອບ" ຂອງລັດຖະບານປະສົມເປັນອັນຂາດ ແລະ "... ລັດນາຍທຶນບໍ່ທ້ອນຍອມປະບ່ອນໃຫ້ລັດກຳມາຊີບ (ພະເດັດການກຳມາຊີບ) ຂຶ້ນແທນທີ່ດ້ວຍເສັ້ນທາງດັບສູນມັນເອງຈັກເທື່ອ, ຕາມກົດເກນທົ່ວ ໄປແລ້ວ ແມ່ນມີແຕ່ດ້ວຍການປະຕິວັດຮຸນແຮງເທົ່ານັ້ນ"[1] ແຕ່ຈະໃຊ້ກຳລັງຮຸນແຮງຄືແນວໃດ ຈຶ່ງຈະມີຜົນກວ່າໝູ່, ຮັບ

1. ເລນິນ. ນິພົນເລືອກເຟັ້ນ. ພາສາຫວຽດນາມ. ສຳນັກພິມຈຳໜ່າຍ ''ຊືເຖີດ''. ຮ່າໂນ້ຍ. 1958, ພາກທີນຶ່ງ, ເຫຼັ້ມ 2, ໜ້າ 191.

ປະກັນການຍາດເອົາ ແລະປົກປັກຮັກສາອຳນາດການ ປົກຄອງໄວ້ໄດ້ໂດຍບໍ່ຕ້ອງຜ່ານການເປີດສົງຄາມປວງຊົນຮອບດ້ານຄືນໃໝ່ ? ການລຸກຮື້ຂຶ້ນຍາດເອົາສິດເປັນເຈົ້າຂອງກຳມະກອນໄຟຟ້າລາວທີ່ວຽງຈັນ, ການລຸກຮື້ຂຶ້ນຢຶດ ອຳນາດການປົກຄອງຂອງຊາວນາ ແລະຊຸມຊົນຕ່າງໆ ໃນທົ່ວເມືອງ ໜອງບົກ (ແຂວງຄຳມ່ວນ), ການລຸກຮື້ຂຶ້ນຕໍ່ສູ້ຂອງຊາວໜຸ່ມ, ນັກຮຽນ, ນັກສຶກສາ ໃນນະຄອນ ຫຼວງວຽງຈັນ, ຕົວເມືອງປາກເຊ, ສະຫວັນນະ ເຂດ... ແລະການລຸກຮື້ຂຶ້ນແຍກຕົວອອກຂອງທະຫານ ຝ່າຍກົງ ກັນຂ້າມທີ່ເມືອງຫ້ວຍຊາຍ ເຊິ່ງເປັນບັນດາເຫດການດັ່ງ ທີ່ເກີດຂຶ້ນໃນລະຫວ່າງທ້າຍປີ ໑໙໗໔ ແລະຕົ້ນປີ ໑໙໗໕ນັ້ນໄດ້ຢັ້ງຢືນໃຫ້ເຫັນຄວາມອາດສາມາດຍາດເອົາ ແລະປົກປັກຮັກສາອຳນາດການປົກຄອງເປັນແຕ່ລະພາກສ່ວນ ໄດ້ດ້ວຍວິທີສົມທົບກຳລັງແຮງແຫ່ງການລຸກຮື້ຂຶ້ນຂອງມະຫາຊົນຢູ່ກັບທີ່ ກັບການໜູນໜີບຂອງກຳລັງປະກອບອາວຸດ ປະຕິວັດ ແລະການລຸກຮື້ຂຶ້ນແຍກຕົວຂອງທະຫານຝ່າຍ ກົງກັນຂ້າມ ແລະການຊ່ວຍຊູຍູ້ໜູນຂອງການຕໍ່ສູ້ທາງດ້ານ ກົດໝາຍ; ພ້ອມກັນນັ້ນ, ມັນກໍ່ເຮັດໃຫ້ພວກເຮົາຕີລາຄາລະດັບການຕອບຕ້ານຂອງສັດຕູໄດ້ (ທັງຢູ່ພາຍໃນປະເທດ

ແລະນອກປະເທດ); ເຖິງແມ່ນວ່າ ພວກເຂົາຍັງອອກ
ແຮງຕ້ານປັນຄືນຢ່າງຂ້ຽວຂາດກໍ່ຕາມ, ແຕ່ຖ້າພວກເຮົາ
ຫາກສົມທົບບັນດາວິທີການນັ້ນຢ່າງຄ່ອງແຄ່ວ, ມີບາດກ້າວ
ເດີນອັນເໝາະສົມແລ້ວ ກໍ່ຈະສາມາດເຮັດໃຫ້ກຳລັງຕອບ
ຕ້ານຂອງພວກເຂົາຖືກຈຳກັດ, ກັ້ນກາງບໍ່ໃຫ້ສົງຄາມລະ
ເບີດຂຶ້ນໃໝ່ໃນທົ່ວປະເທດ. ຈາກນັ້ນ, ພັກເຮົາໄດ້ກຳນົດ
ທິດທາງຍຶດເອົາອຳນາດການປົກຄອງ ໂດຍສັງເຂບ ຄື
ລຸກຮືຂຶ້ນເປັນແຕ່ລະພາກສ່ວນ, ຍາດເອົາອຳນາດການປົກ
ຄອງຂັ້ນຮາກຖານເປັນແຕ່ລະທ້ອງຖິ່ນ, ສ້າງເງື່ອນໄຂກ້າວ
ຂຶ້ນລຸກຮືຂຶ້ນພ້ອມກັນພາບດຽວ, ຍາດເອົາອຳນາດການ ປົກ
ຄອງໃນທົ່ວປະເທດ. ຕາມທິດທາງດັ່ງກ່າວ, ພາຍໃຕ້ການ
ນຳພາໂດຍກົງຂອງສູນກາງພັກ ທົ່ວພັກ, ທົ່ວກອງທັບ ແລະ
ທົ່ວປວງຊົນເຮົາໄດ້ຕັ້ງໜ້າກຽມ ແລະພັນຂະຫຍາຍ ດ້ານ
ຕ່າງໆ ຢ່າງເຄັ່ງຮ້ອນ: ຈັດວາງ ແລະປັບປຸງ ທ່າສະ
ໜາມຍຸດທະສາດຂອງ ນີ ເຂດ, ເພີ່ມທະວີກຳລັງປະ
ກອບອາວຸດ ແລະ ກຳລັງການເມືອງ, ຈັດຕັ້ງວຽກງານ
ຂົນຂວາຍທະຫານສັດຕູ, ຊຸກຍູ້ການຕໍ່ສູ້ໃນບັນດາສະຖາບັນ
ປະສົມຢ່າງແຂງແຮງ, ຈຳໃຫ້ຝ່າຍກົງກັນຂ້າມຕ້ອງ ຍອມ
ຮັບຂໍ້ປະທ້ວງຕ່າງໆ, ທີ່ຊອບທຳຂອງປະຊາຊົນ, ປະກາດ

ໃຊ້ບັນດາຂໍ້ກຳນົດທີ່ຈຳເປັນເພື່ອສ້າງພື້ນຖານທາງດ້ານກົດຫມາຍຊ່ວຍຊູຢູ້ຫນູນໃຫ້ການລຸກຮື້ນຂອງມະຫາຊົນ.

ໃນເວລາດຽວນັ້ນເອງ, ໄຊຊະນະອັນໃຫຍ່ຫຼວງຂອງປະຊາຊົນກຳປູເຈຍ, ໂດຍສະເພາະຢ່າງຍິ່ງໄຊຊະນະອັນຍິ່ງໃຫຍ່ແຫ່ງການບຸກໂຈມຕີທົ່ວໄປ ຂອງກອງທັບແລະປະຊາຊົນຫວຽດນາມໃນລະດູບານໃຫມ່ປີ ໑໙໗໕ ທີ່ໄດ້ເຮັດໃຫ້ຍຸດທະສາດສົງຄາມລ່າເມືອງຂຶ້ນແບບໃຫມ່ຂອງຈັກກະພັດອາເມລິກາຖືກລົ້ມລະລາຍຢ່າງສິ້ນເຊີງຢູ່ໃນ ໒ ປະເທດນີ້ ໄດ້ສົ່ງຜົນກະທົບໂດຍກົງຕໍ່ສະພາບການປະຕິວັດຂອງລາວເຮົາ. ກາລະໂອກາດປະຫວັດສາດ "ພັນປີມີເທື່ອຫນຶ່ງ" ເພື່ອໃຫ້ປະຊາຊົນເຮົາຍາດເອົາອຳນາດການປົກຄອງທັງຫມົດໃນທົ່ວປະເທດໄດ້ມາຮອດແລ້ວ.

ບັນຫາກາລະໂອກາດ ແລະ ກຳລັງຍາມໃດກໍ່ເປັນສອງປັດໄຈທີ່ມີຄວາມຫມາຍຕັດສິນໃນທຸກໆ ການປະຕິວັດ, ພັກເຮົາຮັບຮູ້ວ່າ ປັດໄຈທັງ ໒ ນີ້ ແຍກອອກຈາກກັນບໍ່ໄດ້: ມີກຳລັງຈຶ່ງຈະສ້າງກາລະໂອກາດຂຶ້ນໄດ້ ແລະຈຶ່ງຈະສວຍໃຊ້ກາລະໂອກາດໄດ້; ກົງກັນຂ້າມ ກາລະໂອກາດຊ້ຳພັດທະວີຄູນກຳລັງຂຶ້ນຕື່ມ ແລະສ້າງເປັນກຳລັງໃຫມ່, ກາລະໂອກາດກໍ່ແມ່ນກຳລັງ. ເນື່ອງຈາກສາຍພົວພັນອັນສະຫນິດ

ແຫ້ນລະຫວ່າງການປະຕິວັດຂອງ ໓ ປະເທດ ລາວ , ຫວຽດນາມ, ກຳປູເຈຍ ແລະລັກສະນະເປັນສະໜາມຮົບອັນດຽວຂອງອິນດູຈີນ, ດັ່ງນັ້ນ ກາລະໂອກາດພາວະວິໄສທີ່ເກີດຈາກໄຊຊະນະອັນສົມບູນຂອງການປະຕິວັດຂອງ ປະຊາຊົນສອງປະເທດອ້າຍນ້ອງ ເປັນຕົ້ນແມ່ນຂອງການ ປະຕິວັດຫວຽດນາມ ຈຶ່ງມີຄວາມໝາຍອັນສຳຄັນທີ່ສຸດ ສຳລັບການປະຕິວັດຂອງປະເທດເຮົາ. ໄຊຊະນະດັ່ງກ່າວ ນັ້ນ ໄດເປັນສັນຍານບອກວາການພັງທະລາຍຂອງບັນດາກຸ່ມປົກຄອງລູກມືຂອງຈັກກະພັດອາເມລິກາຢູ່ລາວ ແມ່ນບໍ່ອາດຫຼີກລ້ຽງໄດ ແລະວັນອາວະສານຂອງພວກເຂົາໄດ້ມາເຖິງແລ້ວ. ພ້ອມກັນນັ້ນ, ມັນຊ້ຳພັດເປັນການປຸກລະດົມໂດຍກົງການຕໍ່ສູ້ຂອງປະຊາຊົນເຮົາຢ່າງແຂງແຮງທີ່ສຸດ ແລະສ້າງຄວາມສະດວກອັນໃຫຍ່ຫຼວງທີ່ສຸດໃຫ້ບັນດາກຳລັງປະຕິວັດຂອງປະເທດເຮົາ ຂະຫຍາຍຕົວຢ່າງໄວວາ ແລະກະໂດດຂັ້ນ.

ເລນິນ, ອາຈານຜູ້ຍິ່ງໃຫຍ່ຂອງການປະຕິວັດໂລກໄດ້ຂຽນວາ: "...ຕ້ອງຮູ້ຈັກເລືອກເອົາກາລະໂອກາດ ແລະສະແດງຄວາມກ້າຫານໃນເວລາຕົກລົງຄວາມຕັດສິນ ໃຈ. ປະຫວັດສາດຈະບໍ່ອະໄພໂທດໃຫ້ຊາວປະຕິວັດທີ່ອາດຈະ ມີ

ໄຊໃນມື້ນີ້ (ແລະແນ່ນອນວ່າ ຈະມີໄຊໃນມື້ນີ້) ແຕ່ຊ້າພັດ ເຍື້ອນໄປມື້ອື່ນຍ້ອນຄວາມຊັກຊ້າເຊິ່ງອາດສາມາດກໍ່ຄວາມ ເສັຽຫາຍຫຼາຍທີ່ສຸດ, ອາດຈະເສັຽຫມົດທຸກສິ່ງທຸກອັນ"[1]. ໂດຍຮັບຮູ້ຄວາມຫມາຍຍຸດທະສາດຂອງກາລະໂອກາດ ປະຫວັດສາດນີ້ຢ່າງເລິກເຊິ່ງ ແລະ ດ້ວຍທັດສະນະທີ່ວ່າ ກາລະໂອກາດກໍ່ແມ່ນກຳລັງນັ້ນ, ເຖິງແມ່ນວ່າການກຽມໃນເວລານັ້ນຍັງບໍ່ທັນຄົບຖ້ວນເທື່ອກໍ່ຕາມ' ພັກເຮົາກໍ່ຍັງຄົງຕົກລົງຄວາມຕັດສິນໃຈລຸກຮືຂຶ້ນຍຶດອຳນາດການປົກຄອງໃນຕົ້ນເດືອນພຶດສະພາ ໑໙໗໕. ຄວາມຕັດສິນໃຈ ຍຸດທະສາດດັ່ງກ່າວນັ້ນ ໄດ້ຢືນຫມັ້ນບົນພື້ນຖານການຕີລາຄາ ວ່າເງື່ອນໄຂພື້ນຖານທີ່ຮັບປະກັນໄຊຊະນະຂອງການລຸກຮື ຂຶ້ນໄດ້ສຸກງອມໃນສະພາວະການປະຕິວັດຂອງປະເທດເຮົາໃນເວລານັ້ນແລ້ວ; ເງື່ອນໄຂເຫຼົ່ານັ້ນແມ່ນຄືກັບເງື່ອນໄຂ ທີ່ເລນິນເຄີຍໄດ້ຊີ້ແຈງວ່າ "໑. ກະແສສູງປະຕິວັດໃນຂອບເຂດທົ່ວປະເທດ; ໒. ການພັງທະລາຍຢ່າງສົມເຊິງທາງດ້ານຈິດໃຈ ແລະການເມືອງຂອງລັດຖະບານເກົ່າ, ຕົວຢ່າງຄືລັດຖະບານປະສົມ; ໓. ມີຮູບການ ລົ່ງ ໆ ເລງ

1. ເລນິນ, ຄົບຊຸດ, ພາສາຝະລັ່ງ, ສຳນັກພິມຈຳໜ່າງ ''ມົດສະກູ'', 1958, ເຫຼັ້ມ 26, ໜ້າ 478,.

ໃຫຍ່ຫຼາຍປະການໃນຈຳພວກຄົນລະຫວ່າງກາງ, ໝາຍ
ຄວາມວ່າໃນຈຳພວກຄົນທີ່ບໍ່ໄປນຳລັດຖະບານ ອ້ອຍຕ້ອຍ,
ເຖິງແມ່ນວ່າ ມື້ວານນີ້ ເຂົາຍັງຄົງສະໜັບສະໜູນລັດຖະ
ບານນັ້ນກໍ່ຕາມ"[1]. ຄວາມຕັດສິນໃຈຍຸດທະສາດດັ່ງກ່າວນັ້ນ
<u>ຍັງອີງໃສ່ການຕີລາຄາຢ່າງຖືກຕ້ອງ</u>, <u>ປະຕິວັດ ແລະວິທະ
ຍາສາດກ່ຽວກັບກຳລັງແຮງສັງລວມຂອງບັນດາກຳລັງປະຕິ
ວັດ</u> ແລະກ່ຽວກັບການພົວພັນກະທົບເຊິ່ງກັນ. ແລະກັນລະ
ຫວ່າງບັນດາປັດໄຈທ່າ ແລະກຳລັງທັງຂອງສັດຕູແລະຂອງ
ເຮົາ, ກ່ຽວກັບກຳລັງແຮງຮອບດ້ານຂອງເຂດປົດປ່ອຍແລະ
ກຳລັງແຮງຂອງມະຫາຊົນຢູ່ກັບທີ່ໃນເຂດກວດກາຂອງຝ່າຍ
ກົງກັນຂ້າມ, ກ່ຽວກັບຄວາມອາດສາມາດລະດົມກຳລັງໃນ
ເວລານັ້ນ ແລະຄວາມອາດສາມາດລະດົມກຳລັງພາຍ ຫຼັງ
ທີ່ໄດ້ເປີດການລຸກຮື້ຂຶ້ນ, ກ່ຽວກັບພື້ນສະທ້ອນຂອງ ໄຊຊະ
ນະ ພາກສ່ວນຕໍ່ໄຊຊະນະກວມລວມໝົດທັງຂະບວນ ...
ບັນຫາໃຫຍ່ກວ່າໝູ່ເພື່ອຕົກລົງຄວາມຕັດສິນໃຈຍຸດທະສາດ
ນັ້ນກໍ່ຍັງຄົງແມ່ນບັນຫາຕີລາຄາການຊັ່ງຊາກຳລັງລະຫວ່າງ
ສັດຕູກັບເຮົາໃນເງື່ອນໄຂທີ່ສັດຕູຍັງກຳກອງທະຫານທີ່ມີຈຳ
ນວນຫລາຍລື່ນກຳລັງປະກອບອາວຸດຂອງພວກເຮົາ ແລະມີ

---

1 ເລນິນ, ວິບຊຸດ, ພາສາຣັດເຊັງ, ສຳນັກພິມຈຳໜ່າງ ''ນິດສະຍູ'', 1958, ເຫຼັ້ມ 28, ໜ້າ 128.

ການປະກອບອາວຸດ ຍຸດທະພັນ ແລະພາຫະນະສົງຄາມລົ້ນ
ພວກເຮົາຕັ້ງຫຼາຍເທົ່າ, ແລະ ກໍ່ໃນເງື່ອນໄຂທີ່ກົງຈັກອຳນາດການປົກຄອງປະຕິການ ແຕ່ຂັ້ນຮາກຖານເຖິງຂັ້ນສູນກາງ ເຊິ່ງມີກຳລັງຕຳຫຼວດອັນໃຫຍ່ຫຼວງ ແລະ ມີລະບົບໜີບຣັດອັນໜາແໜ້ນເກືອບເວົ້າໄດວ່າ ຍັງຢູ່ໃນພາວະເດີມ. ໃນນັ້ນບັນຫາທີ່ວ່າຕ້ອງກຳຈັດແກ້ໄຂທັດສະນະຄິດໄລ່ແຕ່ຈຳນວນພົນດ້ານດຽວ, ບໍ່ທັນເຫັນໝົດສາຍພົວພັນສັດຈະວິພາກລະຫວ່າງບັນດາມູນສານຈິດໃຈແລະວັດຖຸ, ລະຫວ່າງທາແລະກຳລັງຕໍ່ໜ້າກາລະໂອກາດປະຫວັດສາດ "ພັນປີມີເທື່ອໜຶ່ງ" ນັ້ນ. ພ້ອມກັນນັ້ນກໍ່ຕ້ອງຕ້ານບັນດາທາງອຽງຂວາ, ຢຸດຢ່ອນລັ່ງເລແລະຕ້ານທຸກປະກົດການທີ່ຂາດຄວາມ ເຂັ້ມງວດໃນການປະຕິບັດຄຳສັ່ງລຸກຮືຂຶ້ນ, ທັງນັ້ນກໍ່ເພື່ອເຮັດໃຫ້ພາຍໃນເປັນເອກະພາບຢ່າງສົມບູນ ໃນດ້ານແຜນ ນະໂຍບາຍ ແລະໃນການກະທຳ.

ບົນພື້ນຖານດັ່ງກ່າວນັ້ນ, ພັກເຮົາໄດ້ຄົ້ນຄວ້າແລະຕົກລົງແຜນການລຸກຮືຂຶ້ນທົ່ວປວງຊົນຢ່າງຮອບຄອບຖີ່ຖ້ວນ, ເພາະວ່າ "ກໍ່ຄືກັນກັບສົງຄາມນັ້ນແຫຼະ, ການລຸກ ຮືຂຶ້ນດ້ວຍອາວຸດແມ່ນສິລະປະອັນໜຶ່ງ" ແລະ "ຍາມໃດກໍ່ບໍ່ໃຫ້ໄປຢອກກັບການລຸກຮືຂຶ້ນ..."[1]. ພັກເຮົາໄດ້ວິເຄາະ ວິໄຈ

1. ເລນິນ. ຄົບຊຸດ, ພາສາຫວຽດນາມ. ສຳນັກພິມຈຳໜ່າຍ "ຊື່ເທີດ", ຮ່າໂນ້ຍ, 1963, ເຫຼັ້ມ 26, ໜ້າ 29-30.

ຢ່າງລະອຽດ ລະອໍ ສະພາບການຕົວຈິງ ໃນເວລານັ້ນ ທັງຂອງເຮົາ ແລະ ຂອງສັດຕູທັງຢູ່ພາຍໃນ ແລະນອກປະເທດ ເພື່ອກຳນົດ ບັນດາບາດກ້າວເດີນ ແລະວິທີດຳເນີນການລຸກຮື້ຂຶ້ນພ້ອມກັນພາບດຽວ ແລະ ການບຸກໂຈມຕີຢ່າງຮອບດ້ານ.

ໃນດ້ານຫຼັກການ, ການລຸກຮື້ຂຶ້ນທົ່ວໄປ ຂອງປະຊາຊົນແມ່ນຕ້ອງລະເບີດຂຶ້ນພ້ອມກັນພາບດຽວ ແລະໃນເວລາດຽວກັນຢູ່ໃນທົ່ວປະເທດ, ກ່ອນອື່ນໝົດແມ່ນຢູ່ນະຄອນຫຼວງ ແລະບັນດາໃຈກາງການເມືອງ-ເສດຖະກິດທີ່ສຳຄັນເພື່ອທັບມ້າງອົງການຫົວສະໝອງຂອງກຳລັງປະຕິການຕັ້ງແຕ່ຫົວທີໂລດ. ບົດຮຽນຂອງການລຸກຮື້ຂຶ້ນເດືອນ ສິງຫາ ປີ ໑໙໔໕ ຂອງພັກເຮົາແມ່ນແນວນັ້ນ. ແຕ່ໃນເງື່ອນໄຂຕົວຈິງຂອງການລຸກຮື້ຂຶ້ນເດືອນ ພຶດສະພາ ປີ ໑໙໗໕, ກອງທະຫານ ແລະ ຕຳຫຼວດປະກອບອາວຸດຂອງສັດຕູ ເຖິງແມ່ນວ່າຈິດໃຈຂອງເຂົາໄດ້ອ່ອນເພຽ ຊຸດໂຊມລົງແລ້ວ ກໍ່ຈິງ, ແຕ່ການຈັດຕັ້ງຂອງເຂົາກໍ່ຍັງຢູ່ໃນສະພາບເດີມ; ກຳລັງລະຫວ່າງກາງເຖິງແມ່ນວ່າ ສະໜັບສະໜູນການປະຕິວັດ, ແຕ່ກໍ່ມີພາກສ່ວນໜຶ່ງບໍ່ໜ້ອຍຍັງບໍ່ທັນຮັບຮູ້ ຢ່າງຈະແຈ້ງເລລ່ຽມອັນໂຫດຫ້ຽມຂອງພວກປະຕິການທີ່ຫວັງຫຼີບຫຼີກ

ບາດກ້າວຂອງການປະຕິວັດ; ວຽກງານການກຽມ ຂອງພວກເຮົາຍັງບໍ່ທັນຄົບຖ້ວນ, ຈຳນວນພະນັກງານຊັ້ນນຳ ຂະບວນການຍັງຈຳກັດ, ກຳລັງປະກອບອາວຸດປະຕິວັດ ພາກສ່ວນໃຫຍ່ຍັງຢູ່ໃນເຂດປົດປ່ອຍ...ດັ່ງນັ້ນ, ເພື່ອຮັບປະກັນຫຼັກ ການລວມສູນການຊີ້ນຳ ແລະລວມສູນກຳລັງທັງ ການເມືອງແລະທັງການທະຫານຍາດເອົາໄຊຊະນະທຳອິດ,ແລ້ວຈາກໄຊຊະນະນີ້ເລັ່ງ ໄປສູ່ ໄຊຊະນະໃຫມ່,ສວຍໃຊ້ຄວາມກະວົນກະວາຍ ສະທົກສະທ້ານຂອງສັດຕູ, ບຸກສັດຕູ ຢ່າງບໍ່ຢຸດຢັ້ງດ້ວຍທຸກວິທີຈົນໄປເຖິງຍາດເອົາໄຊຊະນະສົມບູນ, ພັກເຮົາຕົກລົງດຳເນີນການລຸກຮືຂຶ້ນ ຢຶດອຳນາດການປົກຄອງຕາມບັນດາບາດກ້າວ ແລະວິທີການດັ່ງນີ້:

– ກ່ອນອື່ນຫມົດ ແມ່ນ ເປີດຂະບວນການຕໍ່ສູ້ທາງການເມືອງຂອງມະຫາຊົນຢູ່ໃນຕົວເມືອງໃຫຍ່ຢ່າງ ແຂງແຮງ, ຫວງໃຫ້ຂັບໄລ່ໄຖທົວຈັກກະພັດອາເມລິກາ ແລະໂຈມຕີໂຄ່ນລົ້ມ ໔ ກຸ່ມປົກຄອງທີ່ປະຕິການກວາຫມູ່ (ກຸ່ມຊະນະນິກອນ ແລະກຸ່ມນະຈຳປາສັກ) ເຊິ່ງແມ່ນ ຄວາມຮຽກຮ້ອງຕ້ອງການເປັນເອກະສັນ ແລະ ຮີບດ່ວນຂອງມະຫາຊົນທຸກງ ຊັ້ນຄົນ ທັງຊັ້ນຄົນພົ້ນຖານ ແລະ ຊັ້ນຄົນລະຫວ່າງກາງໃນເວລານັ້ນ ເພື່ອຈູດ ຂະບວນຂອງການລຸກຮື

ຂຶ້ນໃນທົ່ວປະເທດ; ໃນເວລາດຽວກັນນັ້ນ, ກໍ່ດຳເນີນການ ເຄື່ອນທັບຍຸດທະສາດເຂົ້າໄປເຂດຝ່າຍກົງກັນຂ້າມ, ຜັນຂະຫຍາຍກຳລັງຢຶດຕັ້ງບັນດາທີ່ຕັ້ງສຳຄັນຢູ່ໃນ ຕົວເມືອງໃຫຍ່ຕ່າງໆ, ນາບຂູ່, ລອບງຳສັດຕູຢູ່ໃນກະໂຕແກວແຫຼ່ງຂອງພວກເຂົາ ສົມທົບກັບການເສີມຂະຫຍາຍຄຸນປະໂຫຍດຊ່ວຍຊູ້ຍູ້ໜູນຂອງອຳນາດການປົກຄອງປະຊົນ ເພື່ອເຮັດໃຫ້ບັນດາກຳລັງທະຫານ ແລະ ຕຳຫຼວດປະກອບອາວຸດຂອງສັດຕູຕົກເຂົ້າໃນສະພາບເປັນເປ້ຍເປັນລ່ອຍ, ບໍ່ມີກຳລັງຕ້ານຢັນ.

– ບົນພື້ນຖານນັ້ນ ແມ່ນລະດົມມະຫາຊົນດຳເນີນການລຸກຮືຂຶ້ນ ໃນແຕ່ລະທ້ອງຖິ່ນຢ່າງທົ່ວເຖິງ ກ່ອນອື່ນໝົດແມ່ນບັນດາຕົວເມືອງໃຫຍ່ ເຊິ່ງເປັນບ່ອນລວມສູນຂອງບັນດາອິດທິກຳລັງປະຕິການກວາໝູ່ ໂດຍໃຊ້ກຳລັງແຮງຂອງມະຫາຊົນຢູ່ກັບທີ່ ແລະ ຂອງມະຫາຊົນທີ່ສົ່ງໄປຈາກເຂດປົດປ່ອຍ, ສົມທົບກັບກຳລັງໜູນໜີບຂອງກຳລັງປະກອບອາວຸດປະຕິວັດ ແລະການລຸກຮືຂຶ້ນແຍກຕົວຂອງທະຫານສັດຕູ ໂດຍມີການຊ່ວຍຊູ້ຍູ້ໜູນຈາກການຕໍ່ສູ້ທາງດ້ານກົດໝາຍໃນບັນດາການຈັດຕັ້ງປະຊົນ, ສ້າງເປັນກຳລັງແຮງສັງລວມຍຸບຍອບສັດຕູລົງ, ທັບມ້າງກົງຈັກອຳນາດ

ການປົກຄອງປະຕິການທັງໝົດ ແຕ່ຂັ້ນແຂວງກໍາແພງນະຄອນລົງລຸ່ມພາຍໃນເວລາອັນສັ້ນທີ່ສຸດ, ສ້າງຕັ້ງອໍານາດການປົກຄອງປະຊາຊົນປະຕິວັດທ້ອງຖິ່ນຂຶ້ນ.

- ພາຍຫລັງໄດ້ສໍາເລັດການຍຶດອໍານາດການປົກຄອງຢູ່ໃນທຸກໆ ແຂວງ ແລະກໍາແພງນະຄອນ ນັບທັງຢູ່ໃນ ໘ ນະຄອນເປັນກາງໂດຍພື້ນຖານແລ້ວ ຕ້ອງຮຽກໂຮມກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດທັນທີ, ຍຸບບັນດາສະຖາບັນປະສົມຂັ້ນສູນກາງ, ລົບລ້າງລະບອບລາຊາທິປະໄຕ, ສະຖາປະນາສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ.

ພຶດຕິກໍາແຫ່ງການພັນແປ ໄດ້ຢັ້ງຢືນໃຫ້ເຫັນວ່າ: ແຜນນະໂຍບາຍດໍາເນີນການຍຶດອໍານາດການປົກຄອງຕາມລໍາດັບດັ່ງກ່າວເທິງນັ້ນ ແລະຕາມແບບວິທີລຸກຮືຂຶ້ນດ້ວຍ ມີບາດກ້າວຍຸດທະສາດສົມທົບກັບການຕໍ່ສູ້ທາງດ້ານກົດໝາຍນັ້ນ ແມ່ນຖືກຕ້ອງຢ່າງເຕັມປ່ຽມ, ມັນສອດຄ່ອງທີ່ສຸດກັບສະພາບການປະຕິວັດໃນເວລານັ້ນ . ກະແສສູງແຫ່ງການລຸກຮືຂຶ້ນເດືອນ ພຶດສະພາ ປີ ໑໙໗໕ ເຊິ່ງມີມະຫາ ຊົນເປັນໝື່ນໆ ເຂົ້າຮ່ວມສໍາແດງແຜງກໍາລັງໃນທ່ວງທ່າ ອັນເຂັ້ມແຂງແຮງກ້າ ໄດ້ບັງຄັບພວກອາເມລິກາ ຜູ້ຮຸກຮານ

ພ້ອມທັງ ທົວໂປ່ປະຕິການລູກມືຂອງເຂົາ ໃນກົງຈັກ ອຳນາດການປົກຄອງ ແລະກອງທະຫານຫຸ່ນ ຕ້ອງໄດ້ຫອບສັງຂານໂຕນໜີ; ການເຄື່ອນທັບຍຸດທະສາດຢ່າງໄວພະ ລັນຂອງກຳລັງປະກອບອາວຸດຂອງພວກເຮົາທີ່ເຂົ້າໄປຍຶດ ຕັ້ງໃນບັນດາບໍລິເວນສຳຄັນເປັນຕາຍໃນເຮືອນຮັງຂອງ ສັດຕູພ້ອມດ້ວຍຄຳສັ່ງຫ້າມເຄື່ອນຍ້າຍກຳລັງ, ຫ້າມບໍ່ໃຫ້ລັ່ນປືນ, ໃຫ້ມອບອາວຸດເຂົ້າສາງ, ເຕົ້າໂຮມກັນໄປສຳມະນາ... ທີ່ລັດຖະບານປະສົມອອກປະກາດ ເຊິ່ງຝ່າຍກົງກັນຂ້າມຈຳຕ້ອງຮັບເອົານັ້ນ, ໃນຕົວຈິງ ໄດ້ເປັນເຊືອກຜູກຄໍເປັນ ປໍຜູກສອກກຳລັງດັ່ງກ່າວ, ເຮັດໃຫ້ພວກເຂົາຕົກຢູ່ໃນສະພາບເສັຽຄວາມສາມາດຕ້ານທານຢ່າງສິ້ນເຊີງ ແລະໃນເນື້ອແທ້ແມ່ນຖືກປົດອາວຸດ. ບັນດາການລຸກຮືຂຶ້ນຢູ່ທ້ອງຖິ່ນໄດ້ລະເບີດຂຶ້ນຢ່າງຕິດຕໍ່ເນື່ອງກັບປານພະຍຸລົມແດງ ນັ້ນໄດ້ລົບລ້າງກົງຈັກບັງຄັບບັນຊາການທະຫານ ນັບແຕ່ຂັ້ນພາກທະຫານລົງລຸ່ມ ແລະທັບມ້າງອຳນາດການປົກຄອງປະຕິການທັງໝົດນັບແຕ່ຂັ້ນແຂວງລົງລຸ່ມ ພ້ອມທັງເຄື່ອງມືປາບປາມຂອງພວກເຂົາໄປເປັນລຳດັບ. ມາເຖິງເດືອນສິງຫາ ປີ ໑໙໗໕, ກົງຈັກປົກຄອງ ແລະປາບປາມຂອງສັດຕູທັງໝົດແຕ່ຂັ້ນແຂວງລົງໄປເຖິງຂັ້ນຮາກຖານໃນ ທົ່ວ

ປະເທດ ນັບທັງນະຄອນຫຼວງວຽງຈັນ ແລະນະຄອນຫຼວງ ພະບາງໄດ້ຖືກລົບລ້າງໄປຢ່າງສິ້ນເຊີງ. ຕາກນັ້ນ ແມ່ນ ຂັ້ນຂີ້ນຂວາຍການເມືອງອັນໃຫຍ່ຫຼວງ ເພື່ອເລືອກຕັ້ງສະ ພາປະຊາຊົນ ແລະສ້າງຕັ້ງອຳນາດການປົກຄອງປະຊາຊົນ ຂັ້ນຕ່າງໆ, ມາຮອດນີ້ ໃນເນື້ອແທ້ ອຳນາດການປົກ ຄອງໃນທົ່ວປະເທດໄດ້ມາມີປະຊາຊົນແລ້ວ. ວັນທີ ໔ ທັນ ວາ ປີ ໑໙໗໕ ປະຫວັດສາດ, ກອງປະຊຸມໃຫຍ່ຜູ້ແທນ ປະ ຊາຊົນທົ່ວປະເທດ ເຊິ່ງເປັນຕົວແທນໃຫ້ແກ່ນາມະຈິດແລະ ສິດອຳນາດຂອງປະຊາຊົນທົ່ວປະເທດໄດ້ຮັບຮອງການ ສະ ຫຼະລາຊະສົມບັດຂອງເຈົ້າຊີວິດ, ການຍຸບຕົວຂອງອຳນາດ ການປົກຄອງປະສົມສູນກາງ, ປະກາດລົບລ້າງລະບອບລາ ຊາທິປະໄຕ, ສະຖາປະນາສາທາລະນະລັດ ປະຊາທິປະ ໄຕປະຊາຊົນລາວຂຶ້ນ, ເຮັດໃຫ້ໄລຍະທ້າຍສຸດຂອງການຕໍ່ ສູ້ອັນຍືດເຍື້ອຍາວນານ ແລະຫຍຸ້ງຍາກລຳບາກຂອງປະຊາ ຊົນເຮົາເພື່ອຍາດເອົາເອກະລາດ, ປະຊາທິປະໄຕນັ້ນສົມ ສູດລົງຢ່າງສະຫງ່າງາມ ແລະມີໄຊຊະນະສົມບູນ

ກະແສສູງແຫ່ງການລຸກຮືຂຶ້ນຂອງມະຫາຊົນໃນທ້າຍ ລະດູແລ້ງຕໍ່ໃສ່ຕົ້ນລະດູຝົນປີ ໑໙໗໕, ເນື້ອແທ້ແມ່ນການລຸກ ຮືຂຶ້ນທາງການເມືອງ-ອາວຸດດ້ວຍກຳລັງແຮງສັງລວມຂອງ

ປວງຊົນເຮົາ ເພື່ອຍາດເອົາອຳນາດການປົກຄອງໃນທົ່ວປະເທດ. ກະແສສູງດັ່ງກາວນັ້ນ ໄດ້ຜັນແປໄປຢ່າງອຸດົມຮັ່ງມີ ແລະມີຊີວິດຊີວາ, ດ້ວຍທຸກກຳລັງແຮງ ແລະຄວາມສາມາດປະດິດສ້າງອັນບໍ່ມີຂອບເຂດຂອງມະຫາຊົນ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສ ແລະຄົມແຫຼມຂອງພັກ.

ກາລະຂອງການລຸກຮືຂຶ້ນແມ່ນໃນເວລາທີ່ສະພາວະການປະຕິວັດໂດຍກົງຢູ່ພາຍໃນປະເທດໄດ້ປະກົດຕົວອອກ ແລະໃນເວລາທີ່ກາລະໂອກາດພາວະວິໄສອຳນວຍທີ່ສຸດ, ແມ່ນຂະບວນວິວັດໜຶ່ງທີ່ປະກອບດ້ວຍຫຼາຍຂັ້ນສືບເນື່ອງກັນ ດ້ວຍເນື້ອໃນຕໍ່ສູ້ນັບມື້ນັບສູງຂຶ້ນ. ເທສະ ຂອງການລຸກຮືຂຶ້ນແມ່ນທົ່ວທັງປະເທດ, ແຕ່ລະເບີດຂຶ້ນກ່ອນໝູ່ແມ່ນຢູ່ ທ້ອງຖິ່ນຈຸດໜັກຈຳນວນໜຶ່ງ, ສຸມການໂຈມຕີເຂົ້າໃສ່ ບ່ອນອິດທິກຳລັງທີ່ປະຕິການກວາດໝູ່ ແລະທີ່ກຳອຳນາດຕົວ ຈິງ. ແບບວິທີ ຂອງການລຸກຮືຂຶ້ນແມ່ນໃຊ້ກຳລັງແຮງສັງລວມທັງໝົດຂອງການປະຕິວັດ, ປະສານສົມທົບ ຝີ ບາດຄ້ອນຍຸດທະສາດກັບການຕໍ່ສູ້ທາງກົດໝາຍ, ບຸກຢ່າງລວມ ສູນແລະລຽນຕິດເຂົ້າໃສ່ຈິດໃຈ ແລະການຈັດຕັ້ງຂອງສັດ ຕູ, ຕັດແບ່ງກຳລັງຂອງພວກເຂົາ, ຍູ້ກຳລັງຂອງພວກເຂົາໃຫ້ຕົກເຂົ້າໃນທ່າແຕກທະລາຍຫຼົ້ມຈົມຢ່າງສິ້ນເຊີງ ໂດຍບໍ່

ຕ້ອງຜ່ານສົງຄາມກາງເມືອງ. <u>ຈຸດປະສົງ</u> ຂອງການລຸກຮືຂຶ້ນແມ່ນທັບມ້າງກົງຈັກອຳນາດການປົກຄອງປະຕິການ ທັງໝົດແຕ່ຂັ້ນຮາກຖານຈົນເຖິງຂັ້ນສູນກາງ ພ້ອມທັງເຄື່ອງມືປາບປາມ, ໜີບຮັດທັງໝົດຂອງພວກເຂົາ, ລົບລ້າງລະບອບລາຊາທິປະໄຕ, ສ້າງຕັ້ງອຳນາດການປົກຄອງປະຊາຊົນໃນທົ່ວປະເທດ. ອັນນັ້ນແມ່ນຈຸດຕົ້ນຕໍຂອງການລຸກຮື້ຂຶ້ນດ້ວຍການເມືອງ-ອາວຸດທົ່ວປວງຊົນໃນຄັ້ງນີ້ແລະອັນນັ້ນ ກໍຕັ້ງແມ່ນວິທີທີ່ພັກເຮົາໄດ້ເລືອກເຟັ້ນເພື່ອແກ້ໄຂບັນຫາຍາດເອົາອຳນາດການປົກຄອງຢ່າງເຖິງຖອງໃນໄລຍະທ້າຍສຸດຂອງການປະຕິວັດຊາດ-ປະຊາທິປະໄຕຢູ່ປະເທດເຮົາ.

ແຕ່ ການຢຶດອຳນາດການປົກຄອງບໍ່ໝາຍຄວາມວ່າ "ມີແຕ່ຢຶດເອົາກົງຈັກລັດທີ່ມີຢູ່ແລ້ວ, ແລ້ວບັງຄັບໃຫ້ມັນຮັບໃຊ້ຈຸດປະສົງຂອງຕົນເທົ່ານັ້ນ". ກົງຈັກລັດຂອງລະບອບເກົ່າຢູ່ໃນປະເທດເຮົາແມ່ນອຳນາດການປົກຄອງເມືອງຂຶ້ນແບບໃໝ່ທີ່ຈັກກະພັດອາເມລິກາສ້າງຕັ້ງຂຶ້ນ. ຈຸດພິເສດຂອງມັນບໍ່ແມ່ນແຕ່ປະກອບສ້າງຂຶ້ນດ້ວຍ "ກົງຈັກອາດຍາສິດ ແລະການທະຫານ" ອັນໃຫຍ່ໂຕມະໂຫຖານກັບບັນດາເຄື່ອງມືປາບປາມ, ໜີບຮັດອັນໃຫຍ່ຫຼວງເພື່ອປົກຄອງ, ຂອບງຳປະຊາຊົນດ້ວຍກຳລັງຮຸນແຮງເທົ່ານັ້ນ, ຫາກຍັງມີ

ທັງລະບົບການຈັດຕັ້ງອັນແນບນຽນທີ່ເຄື່ອນໄຫວໃນທຸກ ຂົງເຂດເສດຖະກິດ-ວັດທະນະທຳ-ສັງຄົມ ແນໃສ່ປົ່ນປ່ວນ, ເບື່ອເມົາ, ເຮັດໃຫ້ຊາດທັງຫມົດເສື່ອມເສຍ, ປ່ຽນສັງຄົມຂອງປະເທດເຮົາໃຫ້ກາຍເປັນສັງຄົມມີແຕ່ຫຼິ້ນແຕ່ ກິນ, ຂຶ້ນຕໍ່ອາເມລິກາ. ດ້ວຍເຫດນັ້ນ, ການປົດອຳນາດການປົກຄອງແມ່ນຕ້ອງທັບມ້າງກົງຈັກຄອບຄອງ, ເຄື່ອງມືປາບປາມ, ໂຄສະນາ, ລະບົບຫນີບຣັດທັງຫມົດ ແລະທຸກ ໆ ການຈັດຕັ້ງຂອງສັດຕູໃນທຸກຂົງເຂດເຄື່ອນໄຫວທີ່ແຕກຕ່າງກັນ ແຕ່ຂັ້ນເທິງລົງໄປຮອດຂັ້ນຮາກຖານສຸດ, ບໍ່ພຽງແຕ່ທັບມ້າງບັນດາການຈັດຕັ້ງ ແລະກຳລັງເປີດເຜີຍເທົ່ານັ້ນ, ຫາກຍັງຕ້ອງກວາດລ້າງບັນດາການຈັດຕັ້ງ ແລະກຳລັງໃຕ້ດິນຢ່າງຮາບກ້ຽງ, ເດັດດ່ຽວປາບປາມພວກທີ່ດື້ດ້ານຕ້ານຢັນການປະຕິວັດ, ດຳເນີນການດັດສ້າງຂະຫນາດໃຫຍ່ຕໍ່ພວກຂ້າລາຊະການ ຂອງ ອຳນາດການປົກຄອງເກົ່າ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດຂອງສັດຕູ ຕາມນະໂຍບາຍຂອງພັກ. ພ້ອມກັນນັ້ນ, ກໍ່ຕ້ອງລົບລ້າງວັດທະນະທຳເສື່ອມຊາມປະຕິການ ແລະ ພື້ນຖານເສດຖະກິດນາຍທຶນຈຳຫນ່າຍຜູກຂາດ. ແຊກຊຶມເຊື່ອງເປັນບ່ອນອີງຂອງຈັກກະພັດອາເມລິກາ ແລະ ພວກລູກມື.

ໄປຄຽງຄູ່ກັບການທັບມ້າງກົງຈັກປົກຄອງ ເກົ່າ , ຕ້ອງສ້າງກົງຈັກລັດໃໝ່ອ້ອຍຕ້ອຍຂຶ້ນຢ່າງໄວ ເພື່ອມາປ່ຽນແທນອຳນາດການປົກຄອງເກົ່າ, ຣັຍພາລະໜ້າທີ່ປາບສັດຕູພາຍໃນ ແລະພາຍນອກ, ດັດສ້າງສັງຄົມ ເກົ່າແລະສ້າງລະບອບສັງຄົມໃໝ່; ອັນນັ້ນແມ່ນອຳນາດການປົກຄອງປະຊາຊົນຜູ້ອອກແຮງງານບັນດາຊົນຊາດພາຍ ໃຕ້ການນຳພາອັນເດັດຂາດຂອງພັກ ເຊິ່ງເນື້ອແທ້ແມ່ນພະເດັດການກຳມາຊີບ. ຍ້ອນແນວນັ້ນ, ພາຍຫລັງການລຸກຮື້ຂຶ້ນໄດ້ຮັບໄຊຊະນະແລ້ວ, ໄປພ້ອມໆ ກັບການສ້າງຕັ້ງກົງຈັກບໍລິຫານຊົ່ວຄາວຂຶ້ນ ເພື່ອອຳນວຍຄວບຄຸມວຽກງານອັນຮີບດ່ວນສະເພາະໜ້ານັ້ນ, ພັກໄດ້ລົງມືທັນທີທັນໃດ ເຂົ້າໃສ່ວຽກງານປຸກລຸກມະຫາຊົນ, ເສີມຂະຫຍາຍສິດເປັນເຈົ້າອັນແທ້ຈິງຂອງປະຊາຊົນ, ແລະຜ່ານການເລືອກ ຕັ້ງແບບປະຊາທິປະໄຕ ເພື່ອສ້າງກົງຈັກອຳນາດການປົກຄອງທຸກຂັ້ນທີ່ສາມາດຮັບປະກັນລັກສະນະປະຊາຊົນຂອງ ມັນ; ພ້ອມກັນນັ້ນ, ກໍ່ກໍ່ຕັ້ງສິດນຳພາຂອງພັກຕໍ່ອຳນາດການປົກຄອງປະຊາທິປະໄຕ ປະຊາຊົນ.

ໃນການທັບມ້າງກົງຈັກປົກຄອງເກົ່າ, ຢູ່ໃນປະເທດເຮົາກໍ່ມີຈຸດສະເພາະທີ່ແຕກຕ່າງກັບຫຼາຍປະເທດຄື ມີ

ອຳນາດການປົກຄອງປະສົມສູນກາງທີ່ໄດ້ສ້າງຕັ້ງຂຶ້ນ ຈາກໄຊຊະນະຂອງພວກເຮົາໃນການຕໍ່ສູ້ເຈລະຈາ. ອຳນາດການປົກຄອງປະສົມນັ້ນເຖິງວ່າມີໂຄງການສັນຕິພາບ ເປັນກາງ ແລະຄວາມຖືກຕ້ອງປອງດອງຊາດ ແລະໃນສ່ວນປະກອບຂອງມັນກໍ່ມີພະນັກງານປະຕິວັດ ແລະສະມາຊິກຂອງພັກເຮົາເຂົ້າຮ່ວມນຳ, ແຕ່ ທາດແທ້ຂອງກົງຈັກລັດນັ້ນກໍ່ຍັງແມ່ນກົງຈັກອຳນາດການປົກຄອງຂອງບັນດາກຸ່ມປົກຄອງອາດຍາສິດຊຸນເສີກທີ່ມີການພົວພັນຕິດແໜ້ນກັບຈັກກະ ພັດອາເມລິກາ. ພັກເຮົາໄດ້ເຂົ້າຮ່ວມບັນດາກົງຈັກລັດ ແບບນັ້ນ ຕາມຄວາມຮຽກຮ້ອງຕ້ອງການຂອງຍຸດໂທບາຍໃນເວລານັ້ນ, ແຕ່ ພັກເຮົາກໍ່ຖືວ່າ ອັນນັ້ນເປັນສິ່ງແວດລ້ອມອັນໜຶ່ງແຫ່ງການເຄື່ອນໄຫວຂອງພັກ ແນໃສ່ຜັນແຍກລ້ອມປ່ຽວສັດຕູ, ຍາດແຍ່ງກຳລັງລະຫວ່າງກາງ ແລະໜູນໃຊ້ຮູບການຕໍ່ສູ້ທາງກົດໝາຍ ເພື່ອປະສານສົມທົບກັບແນວຮົບຕໍ່ສູ້ອື່ນໆ, ຫາກບໍ່ແມ່ນຖືກົງຈັກລັດອັນນັ້ນເປັນຮູບການ ອຳນາດການປົກຄອງ "ປະນີປະນອມຈົນຈຸ້ນ" ເປັນອັນຂາດ, ມັນຍິ່ງບໍ່ແມ່ນຮູບການອຳນາດການປົກຄອງ "ສືບເນື່ອງ" ແຕ່ອຳນາດການປົກຄອງລ່າເມືອງຂຶ້ນແບບໃໝ່ໄປສູ່ ອຳນາດການປົກຄອງປະຕິວັດ, ເຖິງແມ່ນວ່າ ໃນບາງຄັ້ງ

ລາວ, ອຳນາດການປົກຄອງນັ້ນ ມີລັກສະນະເປັນພາຫະ
ນະຂອງປະຊາຊົນໃນລະດັບໃດໜຶ່ງທີ່ແນ່ນອນ ກໍ່ຕາມ.
ດ້ວຍເຫດນັ້ນ, ໃນເມື່ອລຸກຮືຂຶ້ນຍຶດອຳນາດການປົກຄອງກໍ່
ຕ້ອງທັບມ້າງໂຄງຮ່າງການຈັດຕັ້ງທັງໝົດຂອງລັດຖະບານ
ທີ່ໃສ່ຊື່ "ປະສົມ" ນັ້ນໂດຍບໍ່ເສັຽດາຍ ແລະອິດູກູນາມັນ
ແລະຕ້ານບັນດາເລ່ລ່ຽມຂອງອຳນາດການປົກຄອງເກົ່າໃນ
ການ "ເຮັດພິທີມອບຮັບ" ແນໃສ່ເຮັດໃຫ້ຄວາມຮັບ ຮູ້
ຂອງມະຫາຊົນມົວຟາງ. ແຕ່ ສຳລັບບຸກຄົນທີ່ໄດ້ເຂົ້າ
ຮ່ວມໃນອຳນາດການປົກຄອງນັ້ນ ການປະຕິວັດພ້ອມແລ້ວທີ່
ຈະນຳໃຊ້ເຂົາເຈົ້າຕາມຄວາມສາມາດ ແລະ ຄວາມສະ
ໝັກໃຈດ້ວຍຖານະຕຳແໜ່ງໃໝ່ອັນເໝາະສົມ.

ດ້ວຍແບບວິທີລຸກຮືຂຶ້ນທາງການເມືອງ- ອາວຸດໃນ
ໄລຍະທ້າຍຂອງການປະຕິວັດຊາດ-ປະຊາທິປະໄຕດ້ວຍ ມີ
ບາດຄ້ອນຍຸດທະສາດສົມທົບກັບການຕໍ່ສູ້ທາງກົດໝາຍນັ້ນ,
ພັກເຮົາໄດ້ຍາດເອົາອຳນາດການປົກຄອງທັງໝົດໃນ ທົ່ວ
ປະເທດ ພາຍໃນເວລາອັນສັ້ນ. ໄຊຊະນະອັນອັດສະຈັນ
ດັ່ງກ່າວນັ້ນ ໄດ້ຢັ້ງຢືນວ່າໃນເງື່ອນໄຂປະຫວັດສາດ ຂອງ
ການປະຕິວັດອິນດູຈີນ ແລະການປະຕິວັດໂລກໃນປັດຈຸບັນ
ແລະໃນສະພາບຕົວຈິງທຸກດ້ານຂອງປະເທດເຮົາ, ດ້ວຍ

ແນວທາງ ແລະ ແຜນນະໂຍບາຍອັນຖືກຕ້ອງຂອງ ພັກ, ດ້ວຍບັນດາບາດກ້າວເດີນ ແລະວິທີການອັນເໝາະສົມ, ພວກເຮົາບໍ່ພຽງແຕ່ມີຄວາມສາມາດຢ່າງສົມບູນໃນ ການຍາດເອົາອຳນາດການປົກຄອງມາໄດ້ດ້ວຍກຳລັງຮຸນ ແຮງປະຕິວັດເທົ່ານັ້ນ, ຫາກຍັງມີຄວາມສາມາດຮັກສາສັນ ຕິພາບຂອງປະເທດຊາດໄວ້ໄດ້ໂດຍບໍ່ໃຫ້ເກີດສົງຄາມ ກາງເມືອງຝືນປະຕິວັດ ແລະສົງຄາມແຊກແຊງຂອງບັນດາກຳລັງປະຕິການພາຍນອກ.

ແນວທາງປະຕິວັດອັນສະເໝີຕົ້ນສະເໝີປາຍຂອງ ພັກເຮົາ ນັບຕັ້ງແຕ່ເວລາເລີ່ມຕົ້ນຈົນມາເຖິງເວລາສົ້ນສຸດ ແມ່ນດຳເນີນການປະຕິວັດດ້ວຍກຳລັງຮຸນແຮງ, ດ້ວຍແນວຄິດຍຸດທະສາດບຸກ; ຈະແມ່ນໃນຍາມສົງຄາມຫຼືໃນຍາມໂຍະຍານຊົ່ວຄາວ, ໃນເວລາຫຍຸ້ງຍາກກໍ່ຄືໃນເວລາສະດວກ , ພັກເຮົາບໍ່ມີຍາມໃດຈະໄປພິກອອກຈາກແນວທາງນັ້ນ. ແຕ່ຄືດັ່ງເລນິນໄດ້ເວົ້າ "ການມາກບໍ່ໄດ້ຜູກມັດຕົນເອງ ແລະ ກໍ່ບໍ່ຜູກມັດບັນດານັກສັງຄົມນິຍົມໃນອະນາຄົດທາງຮູບການ, ວິທີ, ແບບວິທີຫັນປ່ຽນ..."[1]. ໂດຍເລີ່ມຈາກສະພາບຕົວຈິງ ຂອງການປະຕິວັດປະເທດເຮົາ, ໃນສະພາບແວດລ້ອມຂອງ

1. ເລນິນ, ລົບຊຸດ, ພາສາຣັດເຊຍ, ສຳນັກພິມຈຳໜ່າຍ "ນິດສະຕູ", 1961, ເຫຼັ້ມ 27, ໜ້າ 359 – 360.

ການປະຕິວັດອິນດູຈີນແລະຂອງການປະຕິວັດໂລກທີ່ອຳນວຍ
ຄວາມສະດວກເປັນພື້ນຖານ ແລະ ມີສາຍພົວພັນອັນສືບສືນ
ຂອງມັນ, ພັກເຮົາໄດ້ມີແຜນນະໂຍບາຍຍາດເອົາໄຊ ຊະ
ນະເທື່ອລະກ້າວ, <u>ຈຳກັດສັດຕູ ເພື່ອຕີເອົາ ຊະນະສັດຕູ.</u>
ອັນນີ້ ແມ່ນວິທີປະຕິວັດອັນສະເໝີຕົ້ນສະເໝີປາຍຂອງພັກ
ເຮົາ ແລະໄດ້ຮັບການໝູນໃຊ້ຢ່າງມີຜົນຕະຫຼອດ ໃນຂະ
ບວນວິວັດແຫ່ງການຕໍ່ສູ້ປະຕິວັດຢູ່ໃນປະເທດເຮົາ. ໃນໄລ
ຍະຕ່າງໆ ຂອງສົງຄາມ ຈົນກະທັ້ງໃນເວລາທີ່ຕ້ອງ ໃຊ້
ບາດຄ້ອນບຸກໂຈມຕີທາງການທະຫານຢ່າງດຸເດືອດ ຂ້ຽວ
ຂາດທີ່ສຸດນັ້ນ, ພັກເຮົາກໍ່ຍັງຄົງມີວິທີການຈຳກັດສັດຕູ ຄື
ການໃຊ້ກຳລັງ ແລະຂະໜາດສູ້ຮົບອັນເໝາະສົມ, ຮູ້ຢຸດ
ເຊົາຢ່າງຖືກເວລາ, ສົມທົບລະຫວ່າງການຕີກັບການເຈ
ລະຈາ... ສະນັ້ນ ຈຶ່ງເອົາຊະນະສັດຕູໄດ້ເທື່ອລະກ້າວ,
ບໍ່ໃຫ້ພວກເຂົາເປີດກວ້າງສົງຄາມອອກໄປກວ່ານັ້ນ ອີກ.
ດ້ວຍເຫດນັ້ນ, ມາເຖິງໄລຍະສິ້ນສຸດ, ໃນເງື່ອນໄຂທີ່ທ່າ
ແລະກຳລັງຂອງການປະຕິວັດໄດ້ແຂງແຮງ ລື່ນສັດຕູແລ້ວ
ແລະສັດຕູພວມດີ້ນຮົນກະວົນກະວາຍຢູ່ນັ້ນ, ພວກເຮົາຍັງມີ
ຄວາມສາມາດຈຳກັດກຳລັງຕ້ານທານຂອງພວກເຂົາ ເພື່ອ
ຍາດເອົາອຳນາດການປົກຄອງ ໂດຍບໍ່ຕ້ອງການໃຊ້ວິທີ

ການສົງຄາມອັນດຸເດືອດ. ບັ້ນຕໍ່ສູ້ການເມືອງທີ່ເປີດສາກ ດ້ວຍການທວງໃຫ້ຂັບໄລ່ຈັກກະພັດອາເມລິກາ ແລະໂຄ່ນລົ້ມກຸ່ມຊະນະນິກອນ-ກຸ່ມນະຈຳປາສັກ ເຊິ່ງເປັນກຸ່ມອາດຍາສິດ. ຂຸມເສິກທີ່ປະຕິການກວ່າໝູ່, ແຕ່ຍັງບໍ່ທັນວາງຄໍ່ ອ້ວນໂຈມຕີໂຄ່ນລົ້ມກົງຈັກອຳນາດການປົກຄອງທັງ ໝົດຂອງສັດຕູເທື່ອ, ພວກເຮົາກໍ່ສາມາດປັດເຂັ່ຽອາເມລິກາຜູ້ຮຸກຮານ ທີ່ຍັງເຫຼືອຄ້າງຢູ່ ແລະ ພວກຫົວໂປ່ທີ່ໂຫດຮ້າຍເປັນໄພອັນຕະລາຍກວ່າໝູ່ໄດ້, ເຮັດໃຫ້ຝ່າຍກົງກັນ ຂ້າມຕົກເຂົ້າໃນສະພາບຄຶງຫົວກຸດ. ຖັດຈາກນັ້ນແມ່ນການເຄື່ອນທັບຍຸດທະສາດຢ່າງໄວພະລັນຂອງບັນດາກຳລັງປະກອບອາວຸດຂອງພວກເຮົາເຂົ້າໄປສູ່ແກວແຫຼ່ງຂອງພວກເຂົາສົມທົບກັບການຕໍ່ສູ້ທາງກົດໝາຍ ເຮັດໃຫ້ບັນດາກົມກອງທະຫານຂອງສັດຕູຕົກເຂົ້າໃນສະພາບຖືກມັດມື, ບໍ່ທັນແລະບໍ່ກ້າລັ່ນປືນ, ຕົກເປັນເປ້ຽລອຍ ເສັຽກຳລັງຕ້ານຢັນຢ່າງສິ້ນເຊີງ. ໃນເວລາດຽວກັນນັ້ນ, ການລຸກຮື້ອນພ້ອມກັນພາບດຽວຂອງມະຫາຊົນຢູ່ທ້ອງຖິ່ນຕ່າງໆ ໄດ້ລົບລ້າງກົງຈັກອຳນາດການປົກຄອງເກົ່າຢູ່ຂັ້ນຮາກຖານເປັນລຳດັບ ໃນຂະນະ ທີ່ອຳນາດການປົກຄອງປະສົມສູນກາງຍັງຮັກສາໄວ້ຢູ່. ພາຍຫລັງທີ່ໄດ້ສ້າງຕັ້ງອຳນາດການປົກຄອງ ປະຕິວັດແຕ່ ຂັ້ນ

ແຂວງລົງລຸ່ມແລ້ວ ກໍ່ໄດ້ກ້າວຂຶ້ນແກ້ໄຂກົງຈັກອໍານາດການປົກຄອງຂັ້ນສູນກາງ ໂດຍຜ່ານກອງປະຊຸມໃຫຍ່ຜູ້ແທນ ປະຊາຊົນທົ່ວປະເທດ ເຊິ່ງໄດ້ຮຽກໂຮມປະຊຸມ ໃນເວລາ ທີ່ສັດຕູບໍ່ໄດ້ນຶກ ໄດ້ຝັນ ແລະ ຕໍ່ໜ້າມານະຈິດອັນເດັດຂາດ ແລະກໍາລັງແຮງຂອງປວງຊົນ, ພວກທີ່ກໍາບັງຫຽນຂອງລະບອບເກົ່າບໍ່ມີເສັ້ນທາງໃດອື່ນ ນອກຈາກຂໍສະຫຼະລາຊະສົມບັດ, ຍຸບຕົວເອງ. ອັນນັ້ນແມ່ນບາດກ້າວເດີນ ແລະ ວິທີການ ເຊິ່ງພັກເຮົາໄດ້ໝູນໃຊ້ໃນການຢຶດອໍານາດການປົກຄອງໃນໄລຍະທ້າຍ ຂອງການປະຕິວັດ ແລະ ວິທີ ເຮັດຄືແນວນັ້ນໄດ້ສ້າງໃຫ້ມີກໍາລັງໜີບສັດຕູຢ່າງລຽນຕິດ, ໜ່ຳໆເຂົ້າ, ໝົດຂັ້ນນີ້ ໄປສູ່ຂັ້ນໃໝ່, ເຮັດໃຫ້ສັດຕູ ບໍ່ສາມາດກະຕວງເຈດຕະນາຂອງພວກເຮົາໄດ້, ເຖິງແມ່ນວ່າພວກເຂົາມີກໍາລັງຢູ່ ແຕ່ກໍ່ບໍ່ມີວິທີອັນໃດ ເພື່ອຕອບຕ້ານ , ຜົນທີ່ສຸດກໍ່ຕ້ອງຍອມກອດຫົວເຂົ່າ, ຍອມວາງ ອາວຸດຢ່າງສົ້ນເຊີງ.

ແຜນນະໂຍບາຍຍຸດທະສາດອັນຖືກຕ້ອງ ແລະການຊີ້ນໍາອັນສະຫຼາດສ່ອງໃສຂອງພັກເຮົາ ເຊິ່ງສະແດງອອກໃນການກໍາແໜ້ນກາລະໂອກາດ, ຕົກລົງຄວາມຕັດສິນໃຈລຸກຮື້ຂຶ້ນຢ່າງໄວ ແລະທັນການ, ເສີມຂະຫຍາຍກໍາລັງ

ແຮງສັງລວມຂອງການປະຕິວັດ ແລະ ໜູນໃຊ້ບັນດາບາດກ້າວເດີນ ແລະວິທີການອັນເໝາະສົມນັ້ນໄດ້ເປັນໜຶ່ງໃນບັນດາມູນເຫດໂດຍກົງທີ່ເຮັດໃຫ້ ບັ້ນລຸກຮື້ຂຶ້ນ ຍຶດອຳນາດການປົກຄອງຂອງປະຊາຊົນເຮົາເດືອນພຶດສະພາ ປີ໑໙໗໕ ປະຫວັດສາດ ສຳເລັດຜົນຢ່າງສະຫງ່າງາມ, ແຕ່ມູນ ເຫດຕົ້ນຕໍແລະເລິກເຊິ່ງຂອງມັນແມ່ນການໂຮມກອນຜົນສຳເລັດຂອງ ໓໐ ປີແຫ່ງການຕໍ່ສູ້ອັນດຸເດືອດຂ້ຽວຂາດ, ໓໐ ປີແຫ່ງການຍາດເອົາອຳນາດການປົກຄອງດ້ວຍຄວາມ ເສຍສະຫຼະຊີວິດເລືອດເນື້ອຂອງປະຊາຊົນເຮົາບໍ່ຈັກວ່າເທົ່າໃດ, ດ້ວຍວາບາດກ້າວເດີນແລະວິທີປະຕິວັດໃດໆກໍ່ລ້ວນແຕ່ຕ້ອງຕັ້ງຢູ່ບົນພື້ນຖານແຫ່ງກຳລັງຕົວຈິງຂອງການປະຕິວັດທັງນັ້ນ. ໃນເວລາທີ່ການປະຕິວັດຍັງອ່ອນນ້ອຍ, ວິທີຕອບໂຕ້ຂັ້ນ ທຳອິດຂອງຊົນຊັ້ນປົກຄອງຕໍ່ການຕໍ່ສູ້ຂອງມະຫາຊົນເວລາໃດກໍ່ແມ່ນ "ສັມລະເສີນຄຸນປະໂຫຍດຂອງກະບີ່ປາຍປືນ" ເພາະສະນັ້ນຕ້ອງໄດ້ຜ່ານຂະບວນການຕໍ່ສູ້ອັນຍືດເຍື້ອຍາວນານ, ທຸກຍາກລຳບາກ, ດຸເດືອດຂ້ຽວຂາດ, ຈາກນັ້ນແລ້ວ ກໍ່ສ້າງແລະຂະຫຍາຍກຳລັງປະຕິວັດເທື່ອລະກ້າວ, ຍາດເອົາອຳນາດການປົກຄອງເທື່ອລະກ້າວ ນັບແຕ່ຢູ່ຂັ້ນຮາກຖານ, ຢູ່ແຕ່ລະຖານທີ່ໝັ້ນຈົນເຖິງເວລາສາມາດກຳອຳນາດການ

1. ເລນິນ, ລົບລວມ, ພາສາປະລັ້ງ, ສຳນັກພິມຈຳໜ່າຍ ''ມົດສະກູ'', 1961, ເຫຼັ້ມ 31, ໜ້າ 362.

ປົກຄອງໃນເຂດປົດປ່ອຍອັນກວ້າງໃຫຍ່ໄພສານ, ເຮັດໃຫ້
ທ່າ ແລະ ກຳລັງຂອງການປະຕິວັດນັບມື້ນັບເຕີບໃຫຍ່ເຂັ້ມ
ແຂງຂຶ້ນຢ່າງບໍ່ຢຸດຢັ້ງ ແລະເຮັດໃຫ້ສັດຕູອອນເພຍຊຸດໂຊມ
ລົງຊັກໄຊ້. ຈົນກວ່າເວລາໃດທີ່ທ່າ ແລະກຳລັງຂອງການ
ປະຕິວັດໄດ້ເຂັ້ມແຂງເຖິງລະດັບສາມາດຢຽບສັດຕູລົງ, ກຳ
ລັງຕໍ່ສູ້ຂອງມະຫາຊົນໄດ້ຂະຫຍາຍຕົວຂຶ້ນເປັນກະແສສູງປະ
ຕິວັດ, ສັດຕູໄດ້ຕົກເຂົ້າໃນສະພາບອັດຕະຄັດ ຂັດສົນ ທີ່
ສຸດແລ້ວ, ຕໍ່ໜ້າໄພພິບັດທີ່ຈະຖືກດັບສູນຢ່າງຮາບຄາບນັ້ນ,
ພວກເຂົາຈຶ່ງບໍ່ກ້າຕ້ານຄືນດ້ວຍກຳລັງຮຸນແຮງຝືນປະຕິວັດ,
ແຕ່ພວກເຂົາກໍ່ຍັງຄົງສືບຕໍ່ຕ້ານຢັນດ້ວຍແບບວິທີອື່ນ. ເລ
ນິນເຄີຍພະຍາກອນວາ: "ໃນບາງກໍລະນີເຊິ່ງມີລັກ ສະ
ນະນອກກົດເກນ..., ຊົນຊັ້ນນາຍທຶນອາດຈະຍອມ ປະ
ວາງ ອຳນາດການປົກຄອງຢ່າງສັນຕິ, ຖາພວກເຂົາ ຮູ້
ຄັກວາບໍ່ມີຄວາມຫວັງອັນໃດອີກແລ້ວທີ່ຈະຕ້ານຢັນຄືນ ໄດ
ແລະຖາພວກເຂົາຢາກຮັກສາບໍ່ໃຫ້ຄໍຂອງເຂົາສະເດັນອອກ
ຈາກບ່າ"[1] ໄລຍະ ທ້າຍສຸດ ຂອງການປະຕິວັດ ໃນປະ
ເທດເຮົາ ໄດ້ຜັນແປໄປ ໃນສະ ຖານະການ ຄ້າຍຄືກັນ
ນັ້ນ, ແລະ ກໍ່ມີ ແຕ່ບົນພື້ນຖານ ເຊິ່ງທ່າ ແລະກຳ
ລັງຂອງການປະຕິວັດ ໄດ້ແຂງແຮງ ຈົນເຖິງຂັ້ນຢຽບສັດຕູ

1. ເລນິນ, ລິບຊູດ, ພາສາຫວຽດນາມ, ສຳນັກພິມຈຳໜ່າຍ ''ຊື່ເທິດ'' ຮ່າໂນ້ຍ 1963, ເຫຼັ້ມ 23, ໜ້າ 26.

ຢ່າງຂາດຕົວ, ສັດຕູໄດ້ເປັນເປ່ຽເປັນລ່ອຍ, ອັດຕະລັດ ຊຽງຕາແຈແລ້ວ, ການປະຕິວັດຈຶ່ງສາມາດໜູນໃຊ້ບັນດາ ບາດກ້າວເດີນ ແລະວິທີການອັນເໝາະສົມ ເພື່ອຍາດ ເອົາອຳນາດການປົກຄອງທັງໝົດ ໂດຍບໍ່ຕ້ອງເປີດ ສົງ ຄາມປວງຊົນຢ່າງຮອບດ້ານຄືນໃໝ່.

ການທີ່ການປະຕິວັດຂອງປະເທດເຮົາຍາດເອົາອຳ ນາດການປົກຄອງມາໄດ້ດ້ວຍກຳລັງຣຸນແຮງ ໂດຍສາມາດ ຮັກສາສົມຕິພາບຂອງບ້ານເມືອງໄວ້ໄດ້ນັ້ນ, ມັນບໍ່ໝາຍ ຄວາມວ່າ ໃນຂະບວນວິວັດແຫ່ງການປົກປັກຮັກສາອຳນາດ ການປົກຄອງໃນໄລຍະຕໍ່ໄປນີ້ ຈະບໍ່ມີການຕໍ່ສູ້ດ້ວຍກຳລັງ ຣຸນແຮງທີ່ນອງເລືອດອີກ. ບັນດາຊົນຊັ້ນປະຕິການ ໄດ້ປະ ລາໄຊຢ່າງໜັກໜ່ວງມາແລ້ວ, ແຕ່ບໍ່ໝາຍຄວາມວ່າ ພວກເຂົາໄດ້ຖອຍໄປຢ່າງງຽບໆ, ພວກເຂົາຍັງບໍ່ທັນຍອມ ປະລະເສັ້ນທາງຕ້ານຢັ້ນການປະຕິວັດດ້ວຍກຳລັງຣຸນ ແຮງ ປະກອບອາວຸດ. ບົດຣຽນແຫ່ງການປົກປັກຮັກສາອຳນາດ ການປົກຄອງຢູ່ປະເທດເຮົາໃນ ໖ ປີທີ່ຜ່ານມາ ໄດ້ຢັ້ງຢືນ ໃຫ້ເຫັນສິ່ງດັ່ງກ່າວນີ້ແລ້ວ. ເພາະສະນັ້ນ, ພາຍຫລັງທີ່ ຍາດເອົາອຳນາດການປົກຄອງມາແລ້ວ, ພວກເຮົາຍັງ ຕ້ອງອອກແຮງປັບປຸງຜະເດັດການກຳມາຊີບ, ປັບປຸງບັນດາ

ພາຫະນະຣຸນແຮງປະຕິວັດ, ເຊີດຊູສະຕິລະວັງຕົວ, ກຽມພ້ອມຢູ່ສະເໝີເພື່ອທັບມ້າງທຸກກົນອຸບາຍກໍ່ຄວາມວຸ້ນວາຍ, ຕ່າວຕີຂອງສັດຕູ; ແລະ ມີແຕ່ເຮັດຄືແນວນັ້ນ ຈິ່ງຈະ ສາມາດຮັບປະກັນໃຫ້ການປະຕິວັດສືບຕໍ່ຂະຫຍາຍຕົວ ຢ່າງສົມຕິໄດ້.

ຂະບວນວິວັດແຫ່ງການເຕີບໃຫຍ່ເຂັ້ມແຂງຢ່າງບໍ່ຢຸດຢັ້ງຂອງການປະຕິວັດປະເທດເຮົາໃນ ໓໐ ປີທີ່ຜ່ານມານັ້ນແມ່ນຂະບວນວິວັດແຫ່ງການຕໍ່ສູ້ດ້ວຍກຳລັງ ຮຸນແຮງປະຕິວັດຂອງມະຫາຊົນ ເຊິ່ງໄດ້ສະແດງອອກ ແລະໄດ້ຮັບການປະຕິບັດພາຍໃຕ້ຫຼາຍຮູບການທີ່ແຕກຕ່າງກັນ, ຕ້ອງໄດ້ໝູນໃຊ້ບາດກ້າວເດີນອັນເໝາະສົມ, ມີຮູບການ, ວິທີການຕໍ່ສູ້ຢ່າງມີໄຫວພິບ, ອຸດົມຮັ່ງມີ, ແຕ່ແນວຄິດຊີ້ນຳອັນສະເໝີຕົ້ນສະເໝີປາຍຂອງພັກເຮົາເວລາໃດກໍ່ ແມ່ນ "ດຳເນີນການປະຕິວັດດ້ວຍກຳລັງຮຸນແຮງ, ດ້ວຍຍຸດທະສາດບຸກ". ອັນນັ້ນ ແມ່ນເສັ້ນທາງແຫ່ງຄວາມສຳເລັດຜົນຂອງການປະຕິວັດຂອງປະເທດເຮົາ ໃນໄລຍະທີ່ຜ່ານມາ ແລະມັນກໍ່ແມ່ນເສັ້ນທາງທີ່ຈະຕ້ອງມີໄຊຢ່າງເດັດຂາດ ໃນໄລຍະຕໍ່ໄປ.

VIII. ສົມທົບນ້ຳໃຈຮັກຊາດ ອັນດູດດື່ມ ກັບນ້ຳໃຈສາກົນກຳມາຊີບອັນແທ້ຈິງຢ່າງຖືກຕ້ອງຊຳນິຊຳນານ.

ພວກເຮົາພວມດຳລົງຊີວິດ ໃນຍຸກສະໄໝ ເຊິ່ງເນື້ອໃນຕົ້ນຕໍຂອງມັນແມ່ນ: "... ການຂ້າມຜ່ານຈາກລັດລັດທິທຶນນິຍົມຂຶ້ນສູ່ລັດທິສັງຄົມນິຍົມ, ເປີດສາກດ້ວຍມະຫາປະຕິວັດສັງຄົມນິຍົມ ເດືອນ ຕຸລາ..."[1]. ກຳລັງແຮງຂອງ ໓ ກະແສຟອງ-ລະບົບສັງຄົມນິຍົມ, ຂະບວນການປົດປ່ອຍຊາດ ແລະຂະບວນການກຳມະກອນ ໃນປະເທດທຶນນິຍົມ-ທີ່ໂຮມເຂົ້າກັນເປັນກະແສສູງ ປະຕິວັດອັນຍິ່ງໃຫຍ່ມະຫາສານ ໄດ້ດູດດຶງ ແລະພວມດູດດຶງປະຊາຊົນ ນັບເປັນຮ້ອຍໆ ລ້ານຄົນເດີນເຂົ້າສູ່ວົງໂຄຈອນສັງຄົມນິຍົມ, ຊຸກຍູ້ປະຊາຊົນປະເທດຕ່າງໆ ໃຫ້ກ້າວຂຶ້ນສຳເລັດ ຈຸດໝາຍເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ສັງຄົມນິຍົມໃນຂອບເຂດທົ່ວໂລກ.

ດ້ວຍຍຸດທະສາດກວມໂລກ ຝົ້ນປະຕິວັດ, ຈັກກະພັດນິຍົມ ອັນມີຈັກກະພັດອາເມລິກາເປັນຫົວໂປ່ ແລະ

---

1. ຄັດຈາກຖະແຫຼງການຂອງກອງປະຊຸມ ບັນດາພັກກອມມູນິດ ແລະກຳມະກອນ, ມົສກູ, ປີ 1960.

ບັນດາ ອິດທິກຳລັງປະຕິການອື່ນ ໆ ພວມອອກແຮງ ສົມຮູ້ຮ່ວມຄິດກັນຊອກຫູກວິທີສະກັດກັ້ນ, ຕ່າວຕີຂະບວນການປະຕິວັດຂອງປະເທດຕາງ ໆ ແລະ ເພີ່ມທະວີການກົດຂີ່ ຂູດຮີດຊົນຊັ້ນກຳມະກອນ ແລະ ປະຊາຊົນຜູ້ອອກແຮງງານໃນປະເທດຂອງເຂົາ. ກົງກັນຂ້າມ, ການປະຕິວັດຂອງແຕ່ລະປະເທດ ເຊິ່ງເປັນພາກສ່ວນກາຍອິນຊີ ຂອງຂະບວນການປະຕິວັດໂລກ ທັງຖືກກະທົບໂດຍກົງຂອງບັນດາກະແສປະຕິວັດ ຂອງຍຸກສະໄໝ ທັງປະກອບສ່ວນ ຊຸກຍູ້ກະແສເຫຼົ່ານັ້ນໃຫ້ຂະຫຍາຍຕົວ. ຊົນຊັ້ນກຳມະກອນ ແລະ ປະຊາຊົນຜູ້ອອກແຮງງານ ໃນແຕ່ລະປະເທດລ້ວນແຕ່ມີພົນປະໂຫຍດ ແລະ ຄວາມມຸ່ງມາດປາຖະໜາຄືກັນ, ບໍ່ພຽງແຕ່ມີຄວາມຮັບຜິດຊອບ ຕໍ່ຊາດຂອງຕົນ, ຫາກຍັງມີໜ້າທີ່ຕໍ່ການປະຕິວັດໂລກອີກດ້ວຍ.

ໃນດ້ານອື່ນ, ເນື່ອງຈາກເງື່ອນໄຂພູມສາດແລະຂະບວນວິວັດ ແຫ່ງການຂະຫຍາຍຕົວ ຂອງປະຫວັດສາດ, ໃນໂລກຊຸ່ມນີ້ ໄດ້ປະກົດມີພາກພື້ນ ເຊິ່ງປະກອບດ້ວຍ ປະເທດຈຳນວນໜຶ່ງທີ່ມີການພົວພັນກັນຢ່າງແໜ້ນແຟ້ນມາແຕ່ເຫິງນານ. ຈັກກະພັດນິຍົມ ແລະ ຊົນຊັ້ນປົກຄອງໃນປະເທດເຫຼົ່ານັ້ນ ລ້ວນແຕ່ມີຍຸດທະສາດ ພາກພື້ນ ແລະ ຈັດ

ຕັ້ງການຮ່ວມສຳພັນ ເປັນແຕ່ລະພາກພື້ນພາຍໃຕ້ຫຼາຍຮູບການທີ່ແຕກຕ່າງກັນ. ຂະບວນການປະຕິວັດຂອງບັນດາປະເທດໃນແຕ່ລະພາກພື້ນກໍ່ມີສາຍພົວພັນກັນຢູ່ສະໜິດແໜ້ນກະທົບເຊິ່ງກັນ ແລະກັນ, ສ້າງເປັນບາດກ້າວ ຂະຫຍາຍຕົວ ສະເພາະຂອງຂະບວນການປະຕິວັດຢູ່ໃນພາກພື້ນນັ້ນ.

ດັ່ງທີ່ເລນິນໄດ້ກ່າວ : " ... ທຶນແມ່ນກຳລັງສາກົນ. ຢາກເອົາຊະນະມັນຕ້ອງມີການຮ່ວມສຳພັນສາກົນ ແລະ ໄມຕີຈິດສາກົນ ຂອງກຳມະກອນ. ພວກເຮົາເປັນຜູ້ຕ້ານການຢາດຄາດບາດໝາງ ລະຫວ່າງຊົນຊາດ, ຕ້ານການບໍ່ຖືກຕ້ອງປອງດອງ ລະຫວ່າງຊົນຊາດ ແລະ ການແຍກບັນດາຊົນຊາດອອກຈາກກັນ, ພວກເຮົາເປັນຜູ້ເດີນຕາມລັດທິສາກົນ "[1]

ຍ້ອນແນວນັ້ນ, ພັກການເມືອງ ມາກ-ເລນິນ ທີ່ນຳພາການປະຕິວັດຢູ່ໃນແຕ່ລະປະເທດໃນຍຸກສະໄໝປັດຈຸບັນ ຈິ່ງບໍ່ພຽງແຕ່ຕ້ອງມີແນວທາງ ແລະ ທັດສະນະຕໍ່ພາຍໃນອັນຖືກຕ້ອງເພື່ອປຸກລະດົມ ແລະຈັດຕັ້ງກຳລັງຂອງຊາດຕົນໃຫ້ລຸກຂຶ້ນຕໍ່ສູ້ ປະຕິວັດເທົ່ານັ້ນ, ຫາກຍັງຕ້ອງມີແນວທາງ ແລະ ທັດສະນະສາກົນອັນຖືກຕ້ອງ, ຮັບຮູ້ທີ່ຕັ້ງຂອງ

1. ເລນິນ, ຄົບຊຸດ, ພາສາລັດເຊຍ, ເຫຼັ້ມ 30, ໜ້າ 288.

ການປະຕິວັດຂອງປະເທດຕົນໃນສິ່ງແວດລ້ອມປະຫວັດສາດຂອງການປະຕິວັດໃນແຕ່ລະພາກພື້ນ ແລະ ຂອງການປະຕິວັດໂລກອີກດ້ວຍ ເພື່ອຈະສາມາດໝູນໃຊ້ກຳລັງແຮງຂອງຍຸກສະໄໝມາເພີ່ມທະວີກຳລັງແຮງຂອງຊາດຕົນຕີເອົາຊະນະສັດຕູ ແລະ ປະກອບສ່ວນຢ່າງຕັ້ງໜ້າຂອງຕົນເຂົ້າໃນພາລະກິດປະຕິວັດໂລກ ເປັນຕົ້ນແມ່ນ ໃນສະພາບການ ທີ່ການພົວພັນສາກົນມີອັນສັບສົນດີ ໃນຊຸມນີ້, ເດັດດ່ຽວຕ້ານທຸກປະກົດການຜິດເຂວຂອງແນວຄິດຊາດຄັບແຄບ, ແນວຄິດຊາດໃຫຍ່ ທີ່ເປັນອັນແປກຕ່າງ ກັບລັດທິມາກ- ເລນິນ ແລະ ລັດທິສາກົນກຳມາຊີບ.

<u>ການປະຕິວັດລາວ ເປັນພາກສ່ວນໜຶ່ງທີ່ສະໜິດຕິດພັນຂອງການປະຕິວັດໃນ ແຫຼມ ອິນດູຈີນ ແລະຂອງການປະຕິວັດໂລກ</u>. ສາຍພົວພັນ ລະຫວ່າງການປະຕິວັດຂອງປະຊາຊົນລາວກັບການປະຕິວັດ ຂອງປະຊາຊົນຫວຽດນາມ ແລະ ກຳປູເຈຍອ້າຍນ້ອງເປັນສາຍພົວພັນແບບພິເສດເຊິ່ງໄດ້ສ້າງຂຶ້ນຈາກການພົວພັນທາງດ້ານປະຫວັດສາດ, ພູມສາດ ແລະ ຄວາມຮັກແພງ ປະຕິວັດແບບພິເສດ. ໂດຍດຳລົງຄົງຕົວຢູ່ໃນພື້ນແຜ່ນດິນຈອດຈ້ຳກັນ ຂອງ ແຫຼມ ອິນດູຈີນ, ມີສະພາວະເຄາະເຂັນຮ່ວມກັນ, ຖືກເສັຽບານເສັຽ

ເມືອງຄືກັນ ແລະ ກໍມີສັດຕູໂຕດຽວກັນ, ປະຊາຊົນ ໓ ປະເທດອ້າຍນ້ອງ ກໍເຄີຍໄດ້ສາມັກຄີອີງ ຫຼັງ ໃສ່ກັນ ແລະ ຊ່ວຍ ເຫຼືອກັນ ໃນການຕໍ່ສູ້ກູ້ຊາດຕ້ານແອກຄອບຄອງຂອງພວກລ່າເມືອງຂຶ້ນຝະລັ່ງ ແລະ ພວກສັກດີນາ ປະຕິການ. ນັບຕັ້ງແຕ່ມື້ທີ່ສະຫາຍ ໂຮ່ຈີມິນ, ນັກຮົບຜູ້ເລີດລ້ຳຂອງຂະບວນການກອມມູນິດສາກົນ ໄດ້ນຳເອົາລັດທິມາກ-ເລນິນ ສົມທົບກັບລັດທິຮັກຊາດ ອັນແທ້ຈິງເຂົ້າມາເຜີຜາຍໃນອິນດູຈີນ ແລະ ສ້າງຕັ້ງພັກກອມມູນິດອິນດູຈີນຂຶ້ນເປັນຕົ້ນມາ , ຂະບວນການຕໍ່ສູ້ ເພື່ອຍາດເອົາເອກະລາດປະຊາທິປະໄຕຂອງປະຊາຊົນ ໓ ປະເທດ ພາຍໃຕ້ການນຳພາ ຂອງພັກຂອງຊົນຊັ້ນກຳມະກອນພັກດຽວ ກໍຍິ່ງໄດ້ຂະຫຍາຍຕົວຢ່າງແຂງແຮງດ້ວຍຄຸນນະພາບໃໝ່. ພາຍລຸນມາ, ໃນເມື່ອຂະບວນການປະຕິວັດ ຂອງທັງ ໓ ປະເທດ ໄດ້ຂະຫຍາຍຕົວເຕີບໃຫຍ່, ແຕ່ລະປະເທດມີພັກຂອງຊົນຊັ້ນກຳມະກອນສະເພາະຂອງຕົນ, ປະຊາຊົນ ໓ ປະເທດກໍຍັງສາມັກຄີຜູກພັນກັນ, ຊ່ວຍ ເຫຼືອ ກັນຢ່າງບໍ່ຢຸດຢັ້ງ ແລະ ໄດ້ພ້ອມກັນຍາດເອົາໄຊຊະນະມາໄດ້ຢ່າງສົມບູນໃນກາລະປະຫວັດສາດອັນດຽວກັນ.

ເວົ້າເຖິງສັດຕູ, ຈັກກະພັດນິຍົມ ກໍຖືສະເໝີວ່າ

ອິນດູຈີນເປັນໜ່ວຍຍຸດທະສາດ ອັນໜຶ່ງອັນດຽວຂອງພວກເຂົາ ທັງດ້ານການເມືອງ ກໍ່ຄືການທະຫານ. ໃນໄລຍະເວລາເກືອບ ໑ ສັດຕະວັດທີ່ຕົກຢູ່ໃຕ້ການຄອບຄອງ ເປັນອາລັກຂາຂອງພວກລ່າເມືອງຂຶ້ນຝະລັ່ງນັ້ນ, ປະເທດ ທັງ ໓ ຖືກແບ່ງເປັນ ໕ ແຄວ້ນໃນ " ສະຫະພັນອິນດູຈີນ ຝະລັ່ງ " ອັນດຽວ ພາຍໃຕ້ການປົກຄອງລວມຂອງຜູ້ສຳເລັດລາຊະການສູງສຸດ ຜູ້ໜຶ່ງຜູ້ດຽວ. ເມື່ອພວກຟາຊິດຍີ່ປຸ່ນເຕະຝະລັ່ງອອກຈາກທີ່ນັ້ນແລວ, ເຂົາກໍ່ໄດ້ສືບຕໍ່ປົກຄອງແບບເກົ່າ. ບາດຝະລັ່ງກັບຕ່າວຄືນມາ ພາຍຫຼັງເສິງຄາມໂລກຄັ້ງທີ ໒ ນັ້ນ, ພວກເຂົາກໍ່ຍັງຖືອິນດູຈີນເປັນສະໜາມຮົບອັນດຽວໃນສົງຄາມຮຸກຮານຂອງພວກເຂົາຄືເກົ່າ. ມາເຖິງຄາວທີ່ຈັກກະພັດອາເມລິກາ ໂດດເຂົ້າມາ, ເຖິງວ່າພວກເຂົາໄດ້ເອົາລັດທິລ່າເມືອງຂຶ້ນແບບໃໝ່ມາແທນ ທີ່ລັດທິລ່າເມືອງຂຶ້ນແບບເກົ່າ, ປັ້ນແຕ່ງອຳນາດການປົກຄອງລູກມື ຢູ່ໃນແຕ່ລະປະເທດ ໂດຍຊູນເສື້ອ " ເອກະລາດແຫ່ງຊາດ " ກໍ່ຕາມ, ແຕ່ອິນດູຈີນກໍ່ຍັງເປັນເອກະພິບອັນດຽວ, ເປັນຕ່ອງໂສ້ໜຶ່ງໃນຍຸດທະສາດກວມໂລກຂອງຈັກກະພັດອາເມລິກາໃນພາກພື້ນອາຊີອາຄະເນ. ແຕ່ລະກົນອຸບາຍທີ່ອາເມລິກາ ນຳມາປະຕິບັດຢູ່ໃນແຕ່ລະປະເທດລາວ

ຫວຽດນາມ-ກຳປູເຈຍນັ້ນ ລ້ວນແຕ່ໄດ້ອີງໃສ່ສະພາບການ ແລະແນໃສ່ຈຸດປະສົງຍຸດທະສາດອັນໜຶ່ງອັນດຽວຕໍ່ອິນດູຈີນທັງໝົດ ແລະ ໄດ້ນຳໄປປະຕິບັດ ໃນແຕ່ລະປະເທດດວຍຮູບການ ແລະ ລະດັບທີ່ແຕກຕ່າງກັນ. ບັ້ນຖິ້ມລະເບີດຄັ້ງທຳອິດດ້ວຍກອງທັບອາກາດ ຂອງອາເມລິກາ ໃສ່ເຂດປົດປ່ອຍລາວມີການກ່ຽວພັນຢ່າງແໜ້ນແຟ້ນເຖິງການປະຕິບັດຍຸດທະສາດສົງຄາມທຳລາຍ ຂອງອາເມລິກາຕໍ່ພາກເໜືອຫວຽດນາມ, ມັນເປັນການຂົ່ມຂູ່ຕໍ່ການປະຕິວັດລາວ ໂດຍກົງ, ທັງເປັນການຢັ່ງເບິ່ງວ່າ ຫວຽດນາມ ແລະ ບັນດາປະເທດສັງຄົມນິຍົມອື່ນຈະມີທ່າທີແນວໃດ. ການໂຄ່ນລົ້ມລັດຖະບານເປັນກາງ ຂອງກຳປູເຈຍ, ການເອົາກອງທະຫານອາເມລິກາ-ຫຸ່ນໄຊງ່ອນເປີດກວ້າງສົງຄາມ ໃຫລາມໄປສູ່ປະເທດດັ່ງກ່າວນັ້ນ ແມ່ນເພື່ອຟາດບາດຄ້ອນ ອັນຕັດສິນເຂົ້າໃສ່ການປະຕິວັດກຳປູເຈຍ, ແຕ່ພ້ອມກັນນັ້ນກໍເພື່ອປິດລ້ອມ, ກີດກັ້ນການປະຕິວັດພາກໃຕ້ຫວຽດນາມ ແລະຂົ່ມຂູ່ຖານທີ່ໝັ້ນ ຂອງພວກເຮົາຢູ່ພາກໃຕ້ຢ່າງຮ້າຍແຮງ.

ການເປີດບັ້ນຮົບ " ລາມເຊີນ ໗໑໙ " ຢູ່ທາງເລກ ໙ ພາກໃຕ້ຂອງລາວ ແມ່ນແນໃສ່ຕັດສາຍທາງ ຍຸດທະສາດຂອງ ໓ ປະເທດ ແລະ ເພື່ອມ້າງການຕິດລຽນກັນ ຂອງ

ເຂດປົດປ່ອຍລາວເຮົາ ...

ບັນດາສາຍພົວພັນ ດັ່ງກ່າວເທິງນັ້ນ ໄດ້ເຮັດໃຫ້ ຂະບວນການປະຕິວັດຂອງປະຊາຊົນ ນິ ປະເທດອາຍນອງ ໃນອິນດູຈີນຜູກພັນກັນຢ່າງສະໜິດແໜ້ນຕັ້ງແຕ່ເວລາຫາກໍ່ ກຳເນີດ ຈົນເຖິງເວລາເຕີບໃຫຍ່ເຕັມກະສຽນ ແລະເປັນ ກຸ່ມກ້ອນສາມັກຄີ, ຮ່ວມສຳພັນສູ້ຮົບນັບມື້ນັບແໜ້ນແຟ້ນຍິ່ງ ຂຶ້ນໂດຍຜ່ານການທົດສອບໃນແປວໄຟແຫ່ງການຕໍ່ສູ້ຂອງປະ ຊາຊົນ ນິ ຊາດ.

ກ້ອນກຳລັງ ສາມັກຄີຮ່ວມສຳພັນສູ້ຮົບ ດັ່ງກ່າວນັ້ນ ໄດ້ເປັນບ່ອນອີງອັນໜັກແໜ້ນອັນໜຶ່ງໃຫ້ແກ່ການປະຕິວັດ ຂອງແຕ່ລະປະເທດ ແລະ ມັນໄດ້ກາຍເປັນໜຶ່ງໃນບັນດາ ປັດໃຈອັນເປັນປະຈຳທີ່ຮັບປະກັນການຂະຫຍາຍຕົວຢ່າງ ມີ ໄຊຂອງການປະຕິວັດຂອງແຕ່ລະປະເທດ. ນັ້ນແມ່ນສັດຈະ *c'est là une* ທຳພາວະວິໄສ !
vérité objective

ດ້ວຍເຫດນັ້ນ, <u>ແນວທາງສາກົນ</u> <u>ຂອງພັກເຮົາ</u> <u>ກ່ອນອື່ນໝົດແມ່ນປັບປຸງເພີ່ມທະວີກ້ອນກຳລັງສາມັກຄີຮ່ວມ ສຳພັນສູ້ຮົບ ລະຫວ່າງປະຊາຊົນ ນິ ປະເທດ ໃນອິນດູຈີນ ຢ່າງບໍ່ຢຸດຢັ້ງ</u> ບົນພື້ນຖານ ແຫ່ງການສົມທົບຢ່າງຖືກຕ້ອງ ຜົນປະໂຫຍດຂອງການປະຕິວັດປະເທດເຮົາ ກັບ ຜົນປະ

ໂຫຍດລວມຂອງການປະຕິວັດ ຂອງທັງ ໓ ປະເທດ ອິນດູຈີນ ແລະບົນພື້ນຖານແຫ່ງການສົມທົບຢ່າງຊຳນິຊຳນານຈິດໃຈຮັກຊາດ ອັນດູດດື່ມ ກັບຈິດໃຈສາກົນກຳມາຊີບ ອັນແທ້ຈິງ. ພັກເຮົາຍາມໃດກໍ່ເອົາໃຈໃສ່ສຶກສາອົບຮົມປະຊາຊົນເຮົາ ໃຫ້ຍົກສູງຄວາມເສຍສະຫຼະໃນການຕໍ່ສູ້ເພື່ອສຳເລັດໜ້າທີ່ປະຕິວັດ ຂອງຊາດຕົນ, ພ້ອມກັນນັ້ນກໍ່ປະກອບສ່ວນຈົນສຸດຄວາມສາມາດຂອງຕົນເຂົ້າໃນພາລະກິດຕໍ່ສູ້ຂອງປະຊາຊົນຫວຽດນາມ ແລະກຳປູເຈຍ ອ້າຍນ້ອງ, ພ້ອມແລ້ວຈະຮັບເອົາຄວາມຫຍຸ້ງຍາກມາທາງຕົນ ກໍ່ຄືພ້ອມແລ້ວ ຈະສ້າງທຸກເງື່ອນໄຂອຳນວຍຄວາມສະດວກເທົ່າທີ່ຈະເຮັດໄດ້ເພື່ອຊ່ວຍການປະຕິວັດຂອງປະຊາຊົນ ໒ ປະເທດອ້າຍນ້ອງໃຫ້ຂະຫຍາຍຕົວ ແລະໄດ້ຮັບໄຊຊະນະ.ພັກເຮົາຕໍ່ຕ້ານຢ່າງເດັດດ່ຽວຕໍ່ນະໂຍບາຍອັນດັ່ງເດີມ"ແບ່ງແຍກເພື່ອປົກຄອງ" ຂອງຈັກກະພັດນິຍົມ, ເດັດດ່ຽວທັບມ້າງທຸກກົນອຸບາຍ,ເລ່ຫຼ່ຽມຂອງສັດຕູ ທັງພາຍໃນ ແລະພາຍນອກປະເທດ ທີ່ແນໃສ່ບິດເບືອນ, ຍຸແຍ່, ກໍ່ຄວາມແບ່ງແຍກແຕກແຫງຫວັງເຮັດໃຫ້ຄວາມສາມັກຄີແບບສູ້ຮົບ ອັນສັກກະລະບູຊາ ທີ່ປະຊາຊົນ ໓ ປະເທດໄດ້ພ້ອມກັນສ້າງຂຶ້ນໃນປະຫວັດສາດ ດ້ວຍຊີວິດເລືອດເນື້ອນັ້ນ ໃຫ້ອ່ອນເພຍຊຸດໂຊມລົງ.ຈະແມ່ນໃນ

ການເຂົ້າຮ່ວມ "ແນວພັນທະພາບລາວ-ຫວຽດນາມ-ກຳປູເຈຍ" ໃນສະໄໝຕໍ່ຕ້ານຝະລັ່ງ ກໍ່ຄືໃນ "ແນວໂຮມ ສາມັກຄີປະຊາຊົນອິນດູຈີນ" ໃນສະໄໝຕ້ານຈັກກະພັດອາເມລິກາ, ພັກເຮົາໄດ້ຖືຢູ່ສະເໝີວ່າ ການປັບປຸງ,ເພີ່ມທະວີກຳລັງສາມັກຄີຮ່ວມສຳພັນສູ້ຮົບ ລະຫວ່າງ ການປະຕິວັດຂອງປະຊາຊົນ ໒ ປະເທດ ເປັນສິ່ງທີ່ຕ້ອງເປັນໄປ ທາງປະຫວັດສາດຂອງທັງ ໒ ຊາດ, ເປັນໜ້າທີ່ ຍຸດທະສາດອັນໜຶ່ງ ຂອງການປະຕິວັດລາວ. ພ້ອມກັນນັ້ນ,ມັນກໍ່ເປັນໜ້າທີ່ສາກົນອັນໜຶ່ງ ຂອງປະຊາຊົນເຮົາ,ຂອງພັກເຮົາ, ບໍ່ພຽງແຕ່ໃນສະໄໝຕໍ່ຕ້ານອັນຍາວນານ, ລຳບາກ ເພື່ອປົດປ່ອຍປະເທດຊາດເທົ່ານັ້ນ, ຫາກຍັງໃນໄລຍະສ້າງສາປະເທດຊາດ ໃນສັນຕິພາບໃນຊຸມ'໕໘໐ ນອກດ້ວຍ.

ໃນກ່ອນກຳລັງສາມັກຄີຮ່ວມສຳພັນສູ້ຮົບ ລະຫວ່າງປະຊາຊົນບັນດາປະເທດໃນອິນດູຈີນນັ້ນ, ການຮ່ວມສຳພັນແບບສູ້ຮົບ ລະຫວ່າງ ການປະຕິວັດລາວ ກັບການປະຕິວັດຫວຽດນາມ, ລະຫວ່າງ ປະຊາຊົນລາວ ກັບປະຊາຊົນຫວຽດນາມຍິ່ງເປັນອັນພິເສດທີ່ຫາຍາກ. ອັນນັ້ນມັນບໍ່ພຽງແຕ່ເປັນການຮ່ວມສຳພັນອັນໜຶ່ງ ທີ່ໄດ້ຮັບການສ້າງຂຶ້ນບົນພື້ນຖານສາຍພົວພັນແບບພິເສດເທົ່ານັ້ນ, ແຕ່ມັນຍັງເປັນ

ການຮ່ວມສຳພັນອັນໜຶ່ງ ເພື່ອການດຳລົງຄົງຕົວຂອງຊາດທັງສອງ, ເພື່ອເອກະລາດ, ຄວາມໝັ້ນຄົງ ແລະ ການຂະຫຍາຍຕົວ ວັດທະນາຖາວອນ ຂອງປະເທດ ທັງສອງ. ໂດຍສືບຕໍ່ເພີ່ມທະວີການພົວພັນມິດຕະພາບ ທີ່ມີມາແຕ່ເຫິງນານ ແລະ ມູນເຊື້ອສາມັກຄີຊ່ວຍຊູຍູ້ໜູນ ເຊິ່ງກັນ ແລະ ກັນ ໃນປະຫວັດແຫ່ງການຂະຫຍາຍຕົວຂອງຊາດທັງສອງນັ້ນ ການຮ່ວມສຳພັນ ແບບສູ້ຮົບນັ້ນ ໄດ້ປະກົດຂຶ້ນບົນພື້ນຖານແຫ່ງການສົມທົບຈິດໃຈຮັກຊາດອັນດູດດື່ມກັບລັດທິສາກົນກຳມາຊີບອັນແທ້ຈິງ ຢ່າງຊຳນິຊຳນານ ນັບຕັ້ງແຕ່ເວລາພັກກອມມູນິດອິນດູຈີນໄດ້ກຳເນີດຂຶ້ນເປັນຕົ້ນມາ. ການລຸກຮືຂຶ້ນໃນເດືອນ ສິງຫາ ປີ ໑໙໔໕ ສຳເລັດຜົນຢູ່ໃນປະເທດທັງສອງ ແລະ ການຕໍ່ຕ້ານຝະລັ່ງ ຖັດຈາກນັ້ນມາໄດ້ເປັນຂີດໝາຍແຫ່ງບາດກ້າວຂະຫຍາຍຕົວໃໝ່ ຂອງການຮ່ວມສຳພັນດັ່ງກ່າວນັ້ນ, ມັນໄດ້ເປີດກວ້າງເນື້ອໃນ ແລະ ຮູບການຮ່ວມສຳພັນອອກໄປໃນບັນດາຂົງເຂດຕໍ່ສູ້ ທາງການເມືອງ, ການທະຫານ. ມາເຖິງສະໄໝຕໍ່ສູ້ຕ້ານອາເມລິກາ, ການຮ່ວມສຳພັນສູ້ຮົບ ລະຫວ່າງສອງຊາດຊ້ຳ ຂະຫຍາຍຕົວອອກຢ່າງຮອບດ້ານ ແລະ ໜັກແໜ້ນຍິ່ງໆຂຶ້ນ. ບົນພື້ນຖານຄວາມເປັນເອກະພາບກັນຢ່າງສົມບູນ ຂອງພັກ

ທັງສອງທາງດ້ານແນວທາງ, ການປະຕິວັດ ຂອງປະເທດ
ທັງສອງໄດ້ອີງໃສ່ກັນຢ່າງຂາດຂັ້ນ, ຊ່ວຍ ເຫຼືອ ເຊິ່ງກັນ
ແລະ ກັນຢ່າງສຸດອົກສຸດໃຈ, ສ້າງທຸກເງື່ອນໄຂ ອັນອຳ
ນວຍຄວາມສະດວກໃຫ້ແກ່ກັນ ແລະ ຮັບເອົາຄວາມ ຫຍຸງ
ຍາກມາທາງຝ່າຍຕົນ, ປະສານສົມທົບກັນຕໍ່ສູ້ ໃນບັນດາ
ແນວຮົບການທະຫານ, ການເມືອງ, ເສດຖະກິດ, ການ
ຕ່າງປະເທດ ... ເພື່ອປົກປັກຮັກສາ ແລະ ຂະຫຍາຍ
ໝາກຜົນຂອງການປະຕິວັດຢ່າງບໍ່ຢຸດຢັ້ງ, ປະຊາຊົນແລະ
ກອງທັບ ຂອງປະເທດທັງສອງໄດ້ຄຽງບ່າຄຽງໄຫຼ່ກັນ ສາ
ມັກຄີຕໍ່ສູ້, ຮ່ວມເປັນຮ່ວມຕາຍນຳກັນ, ຜ່ານແຜທຸກໆ ກົນ
ອຸບາຍເລ່ຫຼ່ຽມຂອງຈັກກະພັດອາເມລິກາຜູ້ຮຸກຮານ, ຍາດ
ເອົາໄຊຊະນະສົມບູນມາໃຫ້ຊາດຕົນ. ການຮ່ວມສຳພັນສູ້
ຮົບຢ່າງຮອບດ້ານ, ໜັກແໜ້ນ ແລະ ຜ່ອງໃສເປັນພິ
ເສດລະຫວ່າງລາວ ກັບຫວຽດນາມອັນເປັນແບບຢ່າງ ອັນ
ໜຶ່ງທີ່ຫາຍາກກ່ຽວກັບຄວາມສາມັກຄີສາກົນກຳມາຊີບນັ້ນ,
ມັນໄດ້ມີບົດບາດສຳຄັນທີ່ສຸດ ແລະມີ ລັກສະນະກົດເກນ ໃນ
ພາລະກິດຕໍ່ສູ້ປະຕິວັດຂອງປະຊາຊົນປະເທດທັງສອງ.

ສຳລັບ ການປະຕິວັດລາວ, ຂະບວນວິວັດ ແຫ່ງ -
ການຮ່ວມສຳພັນສູ້ຮົບດັ່ງກ່າວນັ້ນ ເປັນຂະບວນວິວັດ ແຫ່ງ

ການຕໍ່ສູ້ ແລະ ຂະຫຍາຍກຳລັງປະຕິວັດຂອງປະເທດເຮົາ ໃຫ້ເຕີບໃຫຍ່ເຂັ້ມແຂງຢ່າງບໍ່ຢຸດຢັ້ງ, ເປັນຂະບວນວິວັດແຫ່ງການສ້າງໃຫ້ມີການປ່ຽນແປງໂດຍພື້ນຖານກ່ຽວກັບທ່າ ແລະ ກຳລັງລະຫວ່າງເຮົາກັບສັດຕູ, ເປີດຊ່ອງທາງໃຫ້ການປະຕິວັດກ້າວໄປສູ່ບັນດາບາດກ້າວກະໂດດຂັ້ນທາງປະຫວັດສາດ ແລະ ໃນທີ່ສຸດໄປເຖິງໄຊຊະນະອັນສົມບູນຂອງຊາດເຮົາ. ພັກເຮົາຍາມໃດກໍ່ຖື ສາຍພົວພັນສາມັກຄີສູ້ຮົບແບບພິເສດນັ້ນເປັນສຳຄັນ ແລະຕີລາຄາສູງທີ່ສຸດ: "ຄວາມເປັນຈິງໄດ້ຢັ້ງຢືນວ່າ ແຕ່ລະບາດກ້າວອັນມີໄຊຂອງການປະຕິວັດລາວ ລ້ວນແຕ່ເປັນການສົມທົບ ຢ່າງແໜ້ນແຟ້ນ
des efforts subjectifs
ຄວາມມານະພະຍາຍາມອັດຕະວິໄສ ຂອງພັກ, ຂອງຊາດເຮົາ ກັບການຊ່ວຍເຫຼືອ ຂອງຝ່າຍສັງຄົມນິຍົມ ແລະຂອງທຸກຂະບວນການປະຕິວັດ, ປະຊາທິປະໄຕ ແລະສັນຕິພາບໃນທົ່ວໂລກ. ໃນນັ້ນ ກ່ອນກຳລັງສຳພັນສູ້ຮົບລະຫວ່າງພັກເຮົາກັບພັກຄົນງານຫວຽດນາມ, ລະຫວ່າງ ການປະຕິວັດຂອງຊາດເຮົາກັບການປະຕິວັດຫວຽດນາມ, ລະຫວ່າງປະຊາຊົນເຮົາ ກັບປະຊາຊົນຫວຽດນາມ ເວລາໃດກໍ່ແມ່ນເງື່ອນໄຂພື້ນຖານອັນໜຶ່ງຂອງໄຊຊະນະ "[1].

1. ເອກະສານຂອງກອງປະຊຸມໃຫຍ່ຄັ້ງທີສອງຂອງພັກປະຊາຊົນປະຕິວັດລາວ, ປີ 1972, ລາຍງານໃສ່ງການການເມືອງ.

'໕໕
ໃນຊຸມນີ້, ການປະຕິວັດປົດປ່ອຍ ຂອງປະເທດທັງສອງຕ່າງກໍ່ໄດ້ຮັບຜົນສຳເລັດຢ່າງສົມບູນແລ້ວ, ປະຊາຊົນເຮົາຍິ່ງມີເງື່ອນໄຂ ເພື່ອຜູກຣັດນ້ຳໃຈ ມິດຕະພາບ ຖານອ້າຍນ້ອງອັນຍິ່ງໃຫຍ່ ແລະ ຄວາມສາມັກຄີສູ້ຮົບແບບພິເສດລະຫວ່າງສອງຊາດ ອັນບໍ່ມີສິ່ງໃດມາສັ່ນສະເທືອນໄດ້ນັ້ນ ໃຫ້ແໜ້ນແຟ້ນ ແລະ ຈະເລີນງອກງາມຍິ່ງ ໆ ຂຶ້ນ.ພ້ອມກັບພັກກອມມູນິດຫວຽດນາມອ້າຍນ້ອງ, ພັກເຮົາຕັດສິນໃຈປັບປຸງ ແລະ ເພີ່ມທະວີຄວາມສາມັກຄີແບບພິເສດ ລະຫວ່າງປະເທດທັງສອງໃຫ້ເຂັ້ມແຂງເລື້ອຍໄປ, ເປີດກວ້າງການຮ່ວມມືຢ່າງຮອບດ້ານລະຫວ່າງ ໒ ຝ່າຍ ໃນເງື່ອນໄຂປະຫວັດສາດໃໝ່ ເພື່ອຊ່ວຍເຫຼືອກັນ ໃນພາລະກິດສ້າງສາ ແລະ ປົກປັກຮັກສາ ປະເທດຊາດ, ເພື່ອເອກະລາດ, ຄວາມໝັ້ນຄົງຄະນົງແກ່ນ ແລະ ການຂະຫຍາຍຕົວອັນຈະເລີນຮຸ່ງເຮືອງຂອງປະເທດຊາດເຮົາກໍ່ຄືຂອງສາທາລະນະລັດສັງຄົມນິຍົມຫວຽດນາມ, ເພື່ອຄວາມໝັ້ນຄົງຖາວອນໃນພາກພື້ນອິນດູຈີນ ແລະ ໃນອາຊີອາຄະເນ.

ໄປຄຽງຄູ່ກັບການສາມັກຄີຮ່ວມສຳພັນສູ້ຮົບກັບ ປະຊາຊົນ ໒ ປະເທດຫວຽດນາມ ແລະ ກຳປູເຈຍອ້າຍນ້ອງ,

ພັກເຮົາ ກໍໄດ້ອອກແຮງສາມັກຄີ ແລະ ຍາດແຍ່ງຄວາມເປັນໃຈ, ການສະໜັບສະໜູນ ແລະ ການຊ່ວຍ ເຫຼືອ ຂອງສາກົນ ກ່ອນອື່ນໝົດແມ່ນ ຂອງສະຫະພາບສາທາລະນະລັດສັງຄົມນິຍົມໂຊວຽດ ແລະ ບັນດາປະເທດສັງຄົມ ນິຍົມອ້າຍນ້ອງອື່ນ ໆ ແນໃສ່ໜູນໃຊ້ກຳລັງແຮງຂອງຍຸກສະໄໝສົມທົບກັບກຳລັງຂອງຊາດເຮົາ ເພື່ອສ້າງເປັນກຳລັງແຮງສັງລວມອັນໃຫຍ່ ຫຼວງ ຕີເອົາຊະນະສັດຕູ. ນີ້ກໍເປັນດ້ານໜຶ່ງອີກທີ່ສຳຄັນທີ່ສຸດ ໃນແນວທາງສາກົນອັນສະເໝີຕົ້ນສະເໝີປາຍຂອງພັກເຮົາ ນັບຕັ້ງແຕ່ ໄດ້ມີພັກມາເຖິງປະຈຸບັນນີ້ ແລະ ໃນຕໍ່ໄປພາຍໜ້າກໍຈະເປັນແນວນີ້ ຕະຫຼອດ ໄປ. ໃນການຕໍ່ສູ້ຕ້ານສັດຕູຮຸກຮານ ທີ່ໃຫຍ່ໂຕເຂັ້ມແຂງລື່ນເຮົາຕັ້ງ ຫຼາຍ ໆ ເທົ່າ ເປັນຕົ້ນແມ່ນຈັກກະພັດອາເມລິກາ, ຈັກກະພັດໂຕຫົວໂປ່ທີ່ມີກຳລັງແຮງທາງດ້ານວັດຖຸອັນໃຫຍ່ຫຼວງ ແລະ ໄດ້ຜັນຂະຫຍາຍ ຍຸດທະສາດກວມໂລກແລ້ວນັ້ນ, ການເປັນໃຈ, ການສະໜັບສະໜູນແລະ ການຊ່ວຍເຫຼືອ ຂອງບັນດາປະເທດສັງຄົມນິຍົມອ້າຍນ້ອງ, ຂອງບັນດາປະເທດຊາດນິຍົມ, ບັນດາປະເທດເພື່ອນມິດ, ຂອງຂະບວນການປົດປ່ອຍຊາດ, ຂະບວນສັນຕິພາບ, ປະຊາທິປະໄຕ ແລະ ກ້າວໜ້າທາງສັງຄົມຢູ່ໃນ

ໂລກເປັນປັດໄຈໜຶ່ງທີ່ຂາດບໍ່ໄດ້ ໃນການຕໍ່ສູ້ຍືດເຍື້ອຍາວນານ ແລະ ມີໄຊຂອງຊາດເຮົາ. ໃນດ້ານອື່ນ, ໂດຍເປັນພາກສ່ວນກາຍອິນຊີຂອງການປະຕິວັດໂລກ, ທັງຕໍ່ສູ້ຢູ່ໃນບໍລິເວນໜຶ່ງທີ່ສຳຄັນຂອງພາກພື້ນອາຊີອາຄະເນ ເຊິ່ງເປັນພາກພື້ນນໍລະສຸມ ປະຕິວັດ ແລະ ເປັນບ່ອນໜຶ່ງທີ່ມີການສູ້ປັນກັນຢ່າງຂ້ຽວຂາດລະຫວ່າງກຳລັງປະຕິວັດກັບກຳລັງປະຕິການສາກົນນັ້ນ, ການຕໍ່ສູ້ຂອງພວກເຮົາບໍ່ພຽງແຕ່ແມ່ນເພື່ອຜົນປະໂຫຍດຂອງຊາດເຮົາເທົ່ານັ້ນ, ຫາກຍັງແມ່ນເພື່ອຜົນປະໂຫຍດຂອງການປະຕິວັດໃນພາກພື້ນນີ້ແລະໃນໂລກອີກດ້ວຍ. ແຕ່ລະໄຊຊະນະຂອງການປະຕິວັດເຮົາກໍ່ມີອັນປະກອບສ່ວນເຂົ້າໃນການປຸກລະດົມຂະບວນຕໍ່ສູ້ຂອງປະຊາຊົນໃນພາກພື້ນ ແລະ ໃນໂລກ ແລະ ປະກອບສ່ວນເຂົ້າ ໃນການປັບປຸງລະບົບສັງຄົມນິຍົມ. ເພາະສະນັ້ນ, ເຖິງແມ່ນວ່າໃນຂະບວນກອມມູນິດ ແລະ ກຳມະກອນສາກົນມີຄວາມບໍ່ຖືກຕ້ອງຄອງກັນໃນດ້ານທັດສະນະ ແລະແນວທາງ ກະທັ່ງເຖິງມີຄວາມຂັດແຍ້ງກັນຢ່າງຮ້າຍແຮງກໍ່ຕາມ, ແຕ່ ຕະຫຼອດ ຂະບວນວິວັດແຫ່ງການຕໍ່ສູ້ປະຕິວັດ ຂອງປະເທດເຮົາ ເປັນຕົ້ນໃນສະໄໝຕ້ານຈັກກະພັດອາເມລິການັ້ນ, ພັກເຮົາກໍ່ບໍ່ໄດ້ລົດລະໃນການປະກອບສ່ວນ ຢ່າງຕັ້ງ

ໜ້າຂອງຕົນເຂົ້າໃນການປັບປຸງ ແລະ ເພີ່ມທະວີຄວາມສາມັກຄີກັບບັນດາປະເທດ ສັງຄົມນິຍົມ ແລະ ຍາມໃດກໍ່ເພີ່ມທະວີຄວາມສາມັກຄີ ກັບບັນດາ ຂະບວນການປະຕິວັດ ແລະ ກ້າວໜ້າໃນໂລກ. ພ້ອມກັນນັ້ນ ກໍ່ອອກແຮງຍາດແຍ່ງການຊ່ວຍ ເຫຼືອ ຂອງສາກົນ. ບັນດາພັກອ້າຍນ້ອງໄດ້ເປັນໃຈເຫັນພ້ອມນຳແນວທາງກູ້ຊາດຕ້ານອາເມລິກາຂອງພັກເຮົາ; ສະຫະພາບໂຊວຽດ, ບັນດາປະເທດສັງຄົມນິຍົມອ້າຍນ້ອງອື່ນ ໆ ແລະ ບັນດາປະເທດເພື່ອນມິດໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອ ທາງດ້ານວັດຖຸ ແລະ ຈິດໃຈຢ່າງໃຫຍ່ຫຼວງ ແກ່ພວກເຮົາອັນເປັນການເພີ່ມທະວີກຳລັງແຮງໃຫ້ການປະຕິວັດເຮົາຕໍ່ສູ້ຊີງໄຊ.

ໃນຂະນະທີ່ດັດດ່ຽວ ປະຕິບັດແນວທາງ ສາມັກຄີສາກົນນັ້ນ, ພັກເຮົາຍາມໃດກໍ່ຕັ້ງໝັ້ນໃນແຜນນະໂຍບາຍອີງໃສ່ກຳລັງຂອງຕົນເອງເປັນຕົ້ນຕໍ, ເຊີດຊູສະຕິເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງ ດ້ວຍຕົນເອງ, ເສີມຂະຫຍາຍຄວາມບາກບັ່ນອັດຕະວິໄສຂອງຕົນຢ່າງສຸດຂີດ. ໂດຍເຊື່ອໝັ້ນຢ່າງໜັກແໜ້ນໃນກຳລັງແຮງຂອງປະຊາຊົນບັນດາຊົນຊາດ ໃນປະເທດເຮົາ ແລະ ເຫັນແຈ້ງໜ້າທີ່ປະຫວັດສາດຂອງຕົນ, ພັກເຮົາເວລາໃດກໍ່ຖືວ່າ ການປະຕິ

ວັດແມ່ນພາລະກິດຂອງມະຫາຊົນ. " ການປະຕິວັດລາວຕ້ອງແມ່ນປະຊາຊົນລາວເປັນຜູ້ເຮັດ, ພາລະກິດປະຕິວັດຂອງປະຊາຊົນລາວ ຕ້ອງແມ່ນພັກປະຊາຊົນ ປະຕິວັດລາວເປັນຜູ້ນຳພາ ". ໃນດ້ານອື່ນ, ຈາກປະສົບການແຫ່ງການຕໍ່ສູ້ອັນຍືດເຍື້ອຍາວນານ ຂອງການປະຕິວັດ ປະເທດເຮົາ, ພັກເຮົາຍິ່ງເຂົ້າໃຈຢ່າງຈະແຈ້ງວ່າ : ຍິ່ງເສີມຂະຫຍາຍກຳລັງແຮງ ຂອງຊາດເຮົາໄດ້ດີເທົ່າໃດ ກໍຍິ່ງຍາດແຍ່ງເອົາຄວາມເປັນໃຈ, ສະໜັບສະໜູນ ແລະ ຊ່ວຍເຫຼືອ ຂອງສາກົນໄດ້ດີເທົ່ານັ້ນ, ແລະ ກໍມີແຕ່ບົນພື້ນຖານເສີມຂະຫຍາຍກຳລັງແຮງ ຂອງຊາດ ຈຶ່ງຈະສາມາດຮັບເອົາ ແລະ ນຳໃຊ້ການຊ່ວຍເຫຼືອ ຂອງສາກົນໄດ້ຢ່າງມີຜົນດີ. ໃນຂະບວນວິວັດແຫ່ງການນຳພາການປະຕິວັດນັ້ນທິດນຳຕົ້ນຕໍ ເພື່ອປະຕິບັດແຜນນະໂຍບາຍ ອີງໃສ່ກຳລັງຂອງຕົນເປັນຕົ້ນຕໍຂອງພັກເຮົາແມ່ນຢຶດໝັ້ນໃນຄວາມເປັນເອກະລາດ, ເປັນເຈົ້າຕົນເອງທາງດ້ານແນວທາງ ບົນພື້ນຖານ ແຫ່ງການໝູນໃຊ້ ລັດທິມາກ-ເລນິນ ເຂົ້າໃສ່ເງື່ອນໄຂຕົວຈິງຂອງການປະຕິວັດປະເທດເຮົາຢ່າງປະດິດສ້າງ ແລະ ຮ່ຳຮຽນເອົາບົດຮຽນຂອງບັນດາພັກອ້າຍນ້ອງຢ່າງມີການເລືອກເຟັ້ນ; ປຸກລະດົມ ແລະ ຈັດຕັ້ງປ້ວງປະ

ຊາຊົນ ເພື່ອກໍ່ສ້າງກຳລັງປະຕິວັດໃນທຸກດ້ານ ໃຫ້ນັບມື້ນັບ ເຕີບໃຫຍ່ເຂັ້ມແຂງ, ທັງຕໍ່ສູ້ ທັງກໍ່ສ້າງ, ຕັ້ງໜ້າຮ່ຳຮຽນ ເຝິກຝົນຫຼໍ່ຫຼອມ ຍົກລະດັບຂອງຕົນໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ, ເສີມຂະຫຍາຍຄວາມພະຍາຍາມອັດຕະວິໄສ ໃນລະດັບສູງສຸດ ເພື່ອຮັບພາລະວຽກງານທຸກດ້ານໃນທຸກ ຂົງເຂດຂອງການຕໍ່ສູ້ເອົາເອງ. ຍອນແນວນັ້ນ, ກຳລັງແຮງຂອງຊາດເຮົາ ຈຶ່ງໄດ້ຂະຫຍາຍຕົວ ແລະ ເພີ່ມທະວີຂຶ້ນເລື້ອຍ ໆ, ແລະ ສົມທົບກັບກຳລັງແຮງ ຂອງກອນກຳລັງສາມັກຄີ ຮ່ວມສຳພັນຂອງປະຊາຊົນ ສີ ຊາດ ໃນອິນດູຈີນ ແລະການຊ່ວຍເຫຼືອ ຂອງສາກົນ ກ່ອນອື່ນໝົດແມ່ນຂອງບັນດາປະເທດສັງຄົມນິຍົມອ້າຍນ້ອງ, ມັນໄດ້ສ້າງເປັນກຳລັງແຮງສັງລວມອັນໃຫຍ່ຫຼວງ ໃຫ້ພວກເຮົາ ເພື່ອຕີເອົາຊະນະສັດຕູຜູ້ຮຸກຮານທຸກໂຕ.

" ສົມທົບຜົນປະໂຫຍດ ຂອງຊາດກັບຜົນປະໂຫຍດຂອງການປະຕິວັດໂລກ, ສົມທົບກຳລັງແຮງ ຂອງຊາດກັບກຳລັງແຮງ ຂອງຍຸກສະໄໝບົນພື້ນຖານລັດທິມາກ-ເລນິນແລະ ລັດທິສາກົນກຳມາຊົນ ". ນັ້ນແມ່ນຈິດໃຈຕົ້ນຕໍຂອງແນວທາງສາກົນຂອງພັກເຮົາ, ພ້ອມກັນນັ້ນກໍ່ເປັນບົດຮຽນໃຫຍ່ອັນໜຶ່ງ ຂອງພັກເຮົາ ເພື່ອຍາດເອົາໄຊຊະນະໃນ

ການຕໍ່ສູ້ປະຕິວັດອັນດຸເດືອດຂ້ຽວຂາດ ແລະ ສັບສົນ,ຕ້ານ ສັດຕູທັງພາຍໃນ ແລະ ນອກປະເທດ.

-(////

ເພີ່ມທະວີການນຳພາຂອງພັກໃນທຸກຂົງເຂດຂອງການຕໍ່ສູ້.

ການປະຕິວັດປົດປ່ອຍຊາດຂອງປະເທດເຮົາໄດ້ຮັບໄຊຊະນະຢ່າງສົມບູນແລ້ວ. ໄຊຊະນະນັ້ນແມ່ນຜົນລວມຍອດຂອງຂະບວນວິວັດແຫ່ງການຕໍ່ສູ້ອັນອົງອາດກ້າຫານຍືດເຍື້ອຍາວນານ, ເຕັມໄປດ້ວຍຄວາມ ເສັຽສະຫຼະອັນສູງສົ່ງ ແລະສະຫງ່າງາມທີ່ສຸດຂອງປະຊາຊົນບັນດາຊົນຊາດໃນປະເທດເຮົາ, ແລະມັນຕິດພັນກັບການກຳເນີດ ແລະການເຄື່ອນໄຫວຂອງພັກເຮົາ, ພັກມາກ-ເລນິນ ທີ່ແທ້ຈິງ ແລະກ້າແກ່ນ ເຊິ່ງເປັນຄັນທຸງນຳພາ ແລະເປັນຜູ້ຈັດ ຕັ້ງທຸກໄຊຊະນະຂອງການປະຕິວັດລາວເຮົາ.

ຕະຫຼອດໃນ ໘໐ ກວ່າປີທີ່ຕົກຢູ່ພາຍໃຕ້ ແອກຄອບຄອງຂອງພວກລ່າເມືອງຂຶ້ນຝະລັ່ງ ແລະສັກດີນາ, ປະຊາຊົນເຮົາໄດ້ລຸກຮືຂຶ້ນຕໍ່ສູ້ຫຼາຍຄັ້ງພາຍໃຕ້ການນຳພາຂອງບັນດາຊົນຊັ້ນ, ຊັ້ນຄົນທີ່ແຕກຕ່າງກັນ. ແຕ່ ຂະບວນໃຫຍ່ນ້ອຍທັງໝົດນັ້ນລ້ວນແຕ່ບໍ່ໄປເຖິງຫຼັກໄຊ. ການລຸກຮືຂຶ້ນຂອງຊາວໄຮ່ນາບັນດາຊົນຊາດເປັນເວລາຫຼາຍສິບປີໃນຕົ້ນສັດຕະວັດນີ້, ເຖິງແມ່ນວ່າສະຫງ່າອົງອາດທີ່ສຸດກໍ່ຕາມ, ແຕ່ເນື່ອງຈາກຜູ້ນຳພາການລຸກຮືຂຶ້ນນັ້ນ ເປັນພວກເຈົ້າກົກ

ເຈົ້າເຫຼົ່າ,ດ້ວຍທາດແທ້ຊົນຊັ້ນຂອງເຂົາເຈົ້າ ກໍ່ຄືດ້ວຍບັນດາເງື່ອນໄຂປະຫວັດສາດໃນເວລານັ້ນ,ອັນໄດ້ ເຮັດ ໃຫ້ເຂົາເຈົ້າບໍ່ສາມາດວາງແນວທາງ,ແບບວິທີຕໍ່ສູ້ອັນຖືກຕ້ອງໄດ້,ໃນທີ່ສຸດລ້ວນແຕ່ຖືກດັບມອບ.ຂະບວນ"ລາວອິດສະຫຼະ" ກໍ່ຄືຂະບວນຮັກຊາດອື່ນໆ ໃນຕົ້ນທົດສະວັດທີ ໔ ຂອງຊັ້ນຄົນນາຍທຶນນ້ອຍໃນຕົວເມືອງນັ້ນ, ເຖິງວ່າໄດ້ມີກຳລັງຈຳນວນໜຶ່ງ, ແຕ່ດ້ວຍທາດແທ້ຊົນຊັ້ນຂອງເຂົາເຈົ້າ, ພວກປັນຍາຊົນນາຍທຶນດັ່ງກ່າວນັ້ນ ບໍ່ສາມາດຮັບຮູ້ ກົດເກນຂະຫຍາຍຕົວຂອງສັງຄົມ; ແຜນນະໂຍບາຍຂອງເຂົາເຈົ້າແມ່ນພາປະເທດຊາດໄປຕາມເສັ້ນທາງຂອງລະບອບ ທຶນນິຍົມອັນເປັນ ລະບອບທີ່ພົ້ນສະໄໝໄປແລ້ວ, ຍ້ອນແນວນັ້ນຈຶ່ງບໍ່ສາມາດຕ້ານໂຮມມະຫາຊົນໄດ້ ແລະກໍ່ບໍ່ສາມາດສ້າງພາລະກິດອັນໃຫຍ່ໂຕອິຫຍັງໄດ້.

ນັບຕັ້ງແຕ່ໄດ້ກຳເນີດເປັນຕົ້ນມາ, ພັກເຮົາ (ໃນເມື່ອກ່ອນແມ່ນພັກກອມມູນິດອິນດູຈີນ ແລະໃນປັດຈຸບັນແມ່ນພັກປະຊາຊົນປະຕິວັດລາວ) -ຕົວແທນທີ່ແທ້ຈິງໃຫ້ ແກ່ຜົນປະໂຫຍດຂອງຊົນຊັ້ນກຳມະກອນ, ຂອງປະຊາຊົນຜູ້ອອກແຮງງານ ແລະຂອງຊາດເຮົາທັງໝົດ-ສາມາດກຳແໜນກົດເກນຂະຫຍາຍຕົວພາວະວິໄສຂອງສັງຄົມ ເພື່ອແກ້ໄຂ

ບັນດາບັນຫາຍຸດທະສາດ ແລະຍຸດໂທບາຍຂອງການປະຕິວັດປະເທດເຮົາຢ່າງຖືກຕ້ອງ, ເຮັດໃຫ້ການຕໍ່ສູ້ ອັນກ້າແກ່ນອົງອາດຂອງປະຊາຊົນເຮົາ ຫັນໄປສູ່ບາດລ້ຽວ ໃຫມ່ດ້ວຍໄຊຊະນະປະຫວັດສາດຕິດຕໍ່ເນື່ອງກັນ ຕະຫຼອດມາແລະໃນທີ່ສຸດໄດ້ປົດປ່ອຍປະເທດຊາດທັງໝົດ, ສ້າງຕັ້ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ນຳເອົາປະເທດຊາດກ້າວຂຶ້ນສັງຄົມນິຍົມ.

ໂດຍເປັນຜະລິດພົນຂອງ "ການສົມທົບລະຫວ່າງຂະບວນການຮັກຊາດຂອງປະຊາຊົນບັນດາຊົນຊາດກັບລັດທິມາກ-ເລນິນ ໂດຍແມ່ນສະຫາຍ ໂຮ່ຈີມິນເປັນຜູ້ ແຜ່ພາຍຂະຫຍາຍເຂົ້າອິນດູຈີນ", ພັກເຮົາ-ຜູ້ສືບທອດພາລະ ກິດອັນສະຫງ່າງາມຂອງພັກກອມມູນິດອິນດູຈີນ-ໄດ້ຮັບເອົາພາລະອັນສັກກະລະບູຊາໃນການຜູກຂາດສິດນຳພາການ ປະຕິວັດລາວແຕ່ຜູ້ດຽວໃນໄລຍະທີ່ຫຍຸ້ງຍາກກວ່າໝູ່ໃນປະຫວັດສາດຂອງຊາດ. ດ້ວຍທາດແທ້ປະຕິວັດ ແລະວິທະຍາສາດຂອງຕົນເອງໄດ້ມີມາແຕ່ກຳເນີດນັ້ນ, ຕະຫຼອດໃນຂະບວນວິວັດແຫ່ງການນຳພາການປະຕິວັດຂອງປະເທດເຮົາ, ພັກເຮົາ ກໍ່ໄດ້ປະຕິບັດພາລະບົດບາດຂອງຕົນຢ່າງສົມກຽດກັບຄວາມຮັກແພງແລະຄວາມເຊື່ອຖືຂອງປະຊາຊົນບັນດາ ຊົນ

ຊາດເຮົາ, ຍາມໃດກໍ່ໄດ້ຍົກສູງຈິດໃຈຕໍ່ສູ້ອັນກ້າແກ່ນ, ເດັດຂາດບໍ່ອ່ອນຍອມ, ຄວາມບໍລິສຸດຜຸດຜ່ອງ ແລະຄວາມຈົງຮັກພັກດີຢ່າງສຸດຊຶ້ງຕໍ່ຜົນປະໂຫຍດຂອງຊົນຊັ້ນ ແລະຂອງຊາດເຮົາ, ໄດ້ຄົ້ນຄວ້າ ແລະໝູນໃຊ້ລັດທິມາກ-ເລນິນຢ່າງຖືກຕ້ອງ, ປະດິດສ້າງ ແລະຮ່ຳຮຽນບົດຮຽນຂອງບັນດາພັກອ້າຍນ້ອງເພື່ອແກ້ໄຂບັນດາບັນຫາຂອງການປະຕິວັດປະເທດເຮົາຢ່າງສອດຄ່ອງກັບສະພາບການຕົວຈິງໃນທຸກດ້ານຂອງປະເທດເຮົາ, ພາການປະຕິວັດເຮົາກ້າວຂຶ້ນເທື່ອລະກ້າວຢ່າງໜັກແໜ້ນ ຈົນໄປເຖິງໄຊຊະນະອັນສົມບູນ.

ພຶດຕິກຳແຫ່ງການຕໍ່ສູ້ຂອງປະຊາຊົນເຮົາ ໃນຫຼາຍສິບປີທີ່ຜ່ານມາ ໄດ້ຢັ້ງຢືນໃຫ້ເຫັນຢ່າງເລິກເຊິ່ງວ່າ ພັກເຮົາເປັນປັດໃຈພື້ນຖານທີ່ຕັດສິນກວ່າໝູ່ຕໍ່ການສຳເລັດຜົນຂອງການປະຕິວັດປະເທດເຮົາ; ຄັນບໍ່ມີພັກ ແລະການນຳພາຂອງພັກແລ້ວ, ການປະຕິວັດກໍ່ບໍ່ອາດມີໄຊຊະນະອັນບໍລິບູນ ແລະເຖິງຖອງຄືໃນມື້ນີ້ໄດ້. ພຶດຕິກຳດັ່ງກ່າວຍັງເຮັດໃຫ້ສັດຈະທຳໃຫຍ່ອັນໜຶ່ງ ຂອງຍຸກສະໄໝປັດຈຸບັນ ຍຸກສະໄໝຂ້າມຜ່ານຈາກລັດທິທຶນນິຍົມ ຂຶ້ນສູ່ລັດທິສັງຄົມນິຍົມໃນຂອບເຂດທົ່ວໂລກນັ້ນແຈ່ມແຈ້ງຂຶ້ນຕື່ມອີກ ຊົນຊັ້ນກຳມະກອນໄດ້ກາຍເປັນກຳລັງໃຈກາງທີ່ຊຸກຍູ້ສັງຄົມມະນຸດໃຫ້

ກ້າວຂຶ້ນ, ແລະບໍ່ວ່າການປະຕິວັດໃດໆ ຄັນຢາກໄດ້ຮັບໄຊຊະນະຢ່າງເຖິງທອງ ກໍ່ລ້ວນແຕ່ຕ້ອງມີພັກຂອງຊົນຊັ້ນກຳມະກອນທີ່ປະກອບດ້ວຍລັດທິມາກ-ເລນິນເປັນຜູ້ນຳພາ.

"... ພັກປະຊາຊົນປະຕິວັດລາວ ແມ່ນພັກມາກ-ເລນິນອັນແທ້ຈິງຂອງຊົນຊັ້ນກຳມະກອນລາວ, ແມ່ນກຳລັງນຳໜ້າທີ່ມີການຈັດຕັ້ງອັນແໜ້ນໜາ ແລະແມ່ນການຈັດຕັ້ງສູງສຸດຂອງຊົນຊັ້ນກຳມະກອນ. ພັກສາມັກຄີ ແລະນຳພາປະຊາຊົນບັນດາຊົນຊາດເຮັດການປະຕິວັດຊາດ-ປະຊາທິປະໄຕປະຊາຊົນໃຫ້ສຳເລັດຜົນໃນທົ່ວປະເທດ, ກ້າວຂຶ້ນເຮັດການປະຕິວັດສັງຄົມນິຍົມ, ກໍ່ສ້າງລັດທິສັງຄົມນິຍົມ ແລະລັດທິກອມມູນິດຢູ່ໃນປະເທດລາວ... ພັກຮັບໃຊ້ປະຊາຊົນ, ຮັບໃຊ້ປະເທດຊາດຢ່າງສຸດໃຈສຸດກຳລັງ; ພັກບໍ່ມີສິດປະໂຫຍດອັນໃດອື່ນນອກຈາກສິດປະໂຫຍດຂອງຊົນຊັ້ນກຳມະກອນ, ຂອງປະຊາຊົນຜູ້ອອກແຮງງານບັນດາຊົນຊາດ ແລະຂອງຊາດ. ຍ້ອນແນວນັ້ນ, ພັກປະຊາຊົນປະຕິວັດລາວ ຈິ່ງແມ່ນພັກຂອງຊົນຊັ້ນກຳມະກອນ, ຂອງປະຊາຊົນຜູ້ອອກແຮງງານ ບັນດາຊົນ ຊາດ ແລະຂອງຊາດລາວທັງໝົດ"[1]. ດ້ວຍລັກສະນະ ແລະວັດຖຸປະສົງດັ່ງກ່າວ

1. ໂອງການການເມືອງຂອງກອງປະຊຸມໃຫຍ່ຄັ້ງທີ່ສອງຂອງພັກປະຊາຊົນປະຕິວັດລາວ, ປີ 1972.

ນັ້ນ, ພັກເຮົາໄດ້ຮັບການສ້າງຂຶ້ນຕາມຫຼັກການຂອງເລນິນ ກ່ຽວກັບການກໍ່ສ້າງພັກແບບໃໝ່ ຂອງຊົນຊັ້ນກຳມະກອນ: ເອົາລັດທິມາກ-ເລນິນ, ລັດທິຮັກຊາດອັນແທ້ຈິງສົມທົບກັບລັດທິສາກົນກຳມາຊີບ ເປັນພື້ນຖານແນວຄິດ ແລະເປັນເຂັມທິດຊີ້ນຳໃຫ້ທຸກການເຄື່ອນໄຫວຂອງຕົນ; ຈັດຕັ້ງຕາມຫຼັກການລວມສູນ ປະຊາທິປະໄຕ; ສາມັກຄີ ເປັນເອກະພາບທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະການເຄື່ອນໄຫວ, ບໍ່ອະນຸຍາດໃຫ້ມີການກະທຳ ແບ່ງພັກແຍກພວກໃດໆ ໝົດ; ເຄື່ອນໄຫວຕາມແນວທາງ ມະຫາຊົນ, ພົວພັນຢ່າງສະໜິດແໜ້ນກັບມະຫາຊົນ; ເອົາການຕຳໜິຕົນເອງ ແລະ ຕຳໜິໝູ່ຄູ່ເປັນກົດເກນ ຂະຫຍາຍຕົວ. ນັ້ນແມ່ນບັນດາຫຼັກການ ພື້ນຖານກ່ຽວກັບການສ້າງພັກ ເຊິ່ງພັກເຮົາໄດ້ສູ້ຊົນ ປະຕິບັດຢ່າງເຂັ້ມງວດ, ຢ່າງບໍ່ຢຸດຢັ້ງ ເພື່ອຮັບປະກັນລັກສະນະຊົນຊັ້ນ ແລະລັກສະນະນຳໜ້າຂອງພັກມາກ-ເລນິນທີ່ແທ້ຈິງ.

ໂດຍກຳເນີດຢູ່ໃນປະເທດໜຶ່ງທີ່ລະດັບສັງຄົມດ້ອຍພັດທະນາ, ຊົນຊັ້ນກຳມະກອນຫາກໍ່ເລີ່ມປະກົດເປັນຮູບຮ່າງ, ສ່ວນປະກອບຊົນຊາດຊ້ຳພັດສັບສົນນັ້ນ, ພັກເຮົາຈຳຕ້ອງໄດ້ແກ້ໄຂໃນທັນທີ " ໜ້າທີ່ອັນໜຶ່ງທີ່ຫຍຸ້ງຍາກ

ແລະພິເສດທີ່ສຸດ, ແຕ່ຊ້ຳພັດຊູດືມຮື່ງມີເປັນພິເສດ ... ໜ້າທີ່ອັນໜຶ່ງເຊິ່ງຊາວກອມມູນິດໃນໂລກ ໃນເມື່ອກ່ອນບໍ່ມີ" ແມ່ນເຮັດແນວໃດຈຶ່ງຈະນຳເອົາທິດສະດີກອມມູນິດເຂົ້າມາໄດ້ ແລະສ້າງພັກມາກ-ເລນິນທີ່ແທ້ຈິງພັກໜຶ່ງຂຶ້ນໄດ້ "ໃນຂະນະທີ່ສ່ວນຫຼວງຫຼາຍໃນບັນດາຊົນຊາດລ້ວນແຕ່ເປັນຜູ້ແທນຕົວຢ່າງໃຫ້ແກ່ມະຫາຊົນຜູ້ອອກແຮງງານ ປະເພດໜຶ່ງ ເຊິ່ງບໍ່ແມ່ນກຳມະກອນທີ່ໄດ້ຮັບການເຝິກຝົນໃນບັນດາໂຮງຈັກ ແລະວິສາຫະກິດຂອງນາຍທຶນ, ຫາກແມ່ນຜູ້ແທນຕົວຢ່າງແຫ່ງມະຫາຊົນຊາວນາຜູ້ອອກແຮງງານທີ່ຖືກຂູດຮີດ ແລະ ຕ້ອງທົນຕໍ່ການກົດຂີ່ແບບສະໄໝກາງໂບຮານ"[1]. ຄຸນງາມຄວາມດີອັນຍິ່ງໃຫຍ່ຂອງສະຫາຍໂຮ່ຈີມິນຢູ່ບ່ອນວ່າ ເພິ່ນໄດ້ສາມາດຊອກເຫັນເສັ້ນທາງແກ້ໄຂ "ໜ້າທີ່ອັນໃຫຍ່ຫຼວງຜິດປົກປະຕິ" ດັ່ງກ່າວນັ້ນ ແລະໄດ້ນຳພາປະຊາຊົນບັນດາປະເທດໃນອິນດູຈີນ ໄປຕາມເສັ້ນທາງທີ່ເພິ່ນເອງໄດ້ເດີນຜ່ານມາແລ້ວ, ເສັ້ນທາງທີ່ເລີ່ມຈາກລັດທິຮັກຊາດໄປສູ່ລັດທິມາກ-ເລນິນ. ພັກເຮົາກໍໄດ້

1. ເລນິນ, ຄົບຊຸດ, ພາສາຫວຽດນາມ, ສຳນັກພິມຈຳໜ່າຍ "ຊືເຖິດ", ຮ່າໂນ້ຍ, 1982 ເຫຼັ້ມ 30, ໜ້າ 17.

ນຳພາປະຊາຊົນບັນດາຊົນຊາດໃນ ປະເທດເຮົາກ້າວໄປຕາມເສັ້ນທາງທີ່ສະຫາຍໂຮ່ຈີມິນ ຊອກເຫັນນັ້ນ ແລະໄດ້ຫມູນໃຊ້ມັນຢ່າງຖືກຕ້ອງ ແລະປະດິດສ້າງເຂົ້າໃສ່ເງື່ອນໄຂຕົວຈິງຂອງປະເທດເຮົາ ເຊິ່ງເປັນປະເທດຫນຶ່ງທີ່ສອງແສງໃຫ້ເຫັນຢ່າງເດັ່ນຈັດທີ່ສຸດລັກສະນະພິເສດດັ່ງກ່າວມາເທິງນັ້ນ.

ປະເທດເຮົາບໍ່ພຽງແຕ່ເປັນປະເທດຫນຶ່ງ ເຊິ່ງປະຊາຊົນພົນລະເມືອງສ່ວນຫລວງຫລາຍແມ່ນ ຊາວໄຮ່ນາຜູ້ອອກແຮງງານທີ່ຖືກກົດຂີ່ຂູດຣີດພາຍໃຕ້ແອກຄອບຄອງ ຂອງພວກລ່າເມືອງຂຶ້ນ, ສັກດີນາ ແລະກ່ອນສັກດີນາ, ຫາກຍັງເປັນປະເທດຫນຶ່ງທີ່ມີຫລາຍຊົນຊາດເຊິ່ງການພົວພັນລະຫວ່າງຊົນຊາດມີອັນສັບສົນຫລາຍອັນ. ເພື່ອນຳເອົາລັດທິມາກ-ເລນິນເຂົ້າສູ່ມະຫາຊົນຊາວໄຮ່ນາບັນດາ ຊົນຊາດ, ກ່ອນອື່ນຫມົດພັກເຮົາໄດ້ປຸກລູກນ້ຳໃຈຮັກບ້ານເກີດ ເມືອງນອນ, ຮັກຖິ່ນຖານບ້ານຊ່ອງ, ໄດ້ປຸກລູກຄວາມປາຖະຫນາອັນແຮງກ້າທີ່ຢາກດຳລົງຊີວິດຢູ່ຢ່າງເປັນ ອິດສະຫລະແລະການຄົງຕົວຂອງແຕ່ລະຊົນຊາດ ຊົນເຜົ່າ ເພື່ອໃຫ້ເຂົາເຈົ້າລຸກຂຶ້ນຕໍ່ສູ້ປົກປັກຮັກສາ ບ້ານເກີດ ເມືອງນອນແລະການດຳລົງຊີວິດຂອງຊົນຊາດ, ຊົນເຜົ່າຂອງຕົນຕ້ານ

ພວກລ່າເມືອງຂຶ້ນຈັກກະພັດທີ່ເປັນສັດຕູໜູ່ມານ. ຜ່ານພາກປະຕິບັດຕົວຈິງແຫ່ງການຕໍ່ສູ້ດັ່ງກ່າວແລວດຳເນີນການ ໂດສະມາສຶກສາອົບຣົມເຂົາເຈົ້າໃຫເຫັນຄວາມຈຳເປັນທີ່ ຈະຕ້ອງຮ່ວມແຮງຮ່ວມໃຈ, ສາມັກຄີຜູກພັນກັນກັບບັນດາຊົນຊາດ, ຊົນເຜົ່າອື່ນໆ ໃນແຕ່ລະທ້ອງຖິ່ນ ກ້າວຂຶ້ນສູ່ ຂອບເຂດທົ່ວປະເທດ ເພື່ອສ້າງເປັນກ້ອນກຳລັງສາມັກຄີປວງຊົນ ຈິ່ງຈະສາມາດຕໍ່ສູ້ເອົາຊະນະສັດຕູທີ່ໃຫຍ່ໂຕເຂັ້ມແຂງໄດ້. ຈາກນັ້ນ, ສະຕິປະເທດຊາດເປັນເອກະພາບ ອັນໜຶ່ງອັນດຽວກັນ, ນ້ຳໃຈຮັກປະເທດຊາດລວມກໍ່ໄດ້ປະກົດຕົວຂຶ້ນເທື່ອລະກ້າວແລະນັບມື້ນັບຂະຫຍາຍຕົວ. ຂະບວນ ວິວັດແຫ່ງການຕໍ່ສູ້ປົດປ່ອຍຊາດຂອງຊາດເຮົາກໍ່ເປັນຂະບວນວິວັດແຫ່ງການຮ່ວມສຳພັນຕໍ່ສູ້ກັບບັນດາປະຊາຊາດ ອ້າຍນ້ອງ ໃນແຫຼມອິນດູຈີນທີ່ຕ້ານສັດຕູໂຕດຽວກັນ. ພ້ອມກັນນັ້ນ ມັນກໍ່ໄດ້ຮັບການຊ່ວຍເຫຼືອຂອງການປະຕິວັດ ໂລກ; ຍ້ອນແນວນັ້ນ, ໄປພ້ອມໆ ກັບການເຊີດຊູສະຕິຊາດ, ສະຕິສາມັກຄີສາກົນກໍ່ໄດ້ແຕກໜໍ່ອອກຈາວ ແລະນັບມື້ນັບໄດ້ຮັບການເພີ່ມທະວີຂຶ້ນ; ລັດທິຮັກຊາດ ແລະລັດທິສາກົນກຳມາຊີບອັນແທ້ຈິງໄດ້ເຊື່ອມເຂົ້າກັນ, ພັນກ້ຽວເຂົ້າກັນ. ກາຍເປັນຄວາມຮັກແພງສະໜິດສະໜົມອັນໜຶ່ງ ອັນດຽວ

ຂອງໝົດທັງປະຊາຊາດລາວເຮົາ. ການປະຕິວັດຍິ່ງກ້າວຂຶ້ນເທົ່າໃດ ປະຊາຊົນເຮົາກໍ່ຍິ່ງຮັບຮູ້ແຈ້ງຕື່ມວ່າ ຢາກຍາດເອົາເອກະລາດອັນສົມບູນມາໃຫ້ຊາດນັ້ນ, ບໍ່ພຽງແຕ່ຕ້ອງໂຄ່ນລົ້ມພວກຈັກກະພັດລ່າເມືອງຂຶ້ນຜູ້ຮຸກຮານເທົ່ານັ້ນ ຫາກຍັງຕ້ອງໂຈມຕີໂຄ່ນລົ້ມບັນດາກຸ່ມປົກຄອງລູກມື ຂອງເຂົາ, ດຳເນີນການດັດແປງປະຊາທິປະໄຕ, ລົບລ້າງການຂູດຮີດແບບສັກດີນາ ແລະກ່ອນສັກດີນາ, ແລະສ້າງລະບອບສັງຄົມໃໝ່ເຊິ່ງປະຊາຊົນເປັນເຈົ້າຊາຕາກຳຂອງປະເທດຊາດ, ເປັນເຈົ້າແຫ່ງການດຳລົງຊີວິດຂອງຕົນເອງ. ອັນນັ້ນໄດ້ເຮັດໃຫ້ສະຕິຊົນຊັ້ນ ແລະ ສະຕິຊາດເຊື່ອມເຂົ້າກັນ ກາຍເປັນເນື້ອໃນຕົ້ນຕໍດ້ວຍຄຸນນະພາບໃໝ່ສູງກວ່າເກົ່າໃນສະຕິຕື່ນຕົວຂອງຊາວປະຕິວັດ ແລະຮັກຊາດ. ຈາກນ້ຳໃຈຮັກບ້ານເກີດເມືອງນອນ ແລະການຍືນຍົງຄົງຕົວຂອງຊົນຊາດ, ຊົນເຜົ່າຕົນໄປເຖິງນ້ຳໃຈຮັກປະເທດຊາດ ແລະສາມັກຄີສາກົນກຳມາຊີບ, ຈາກຄວາມຕື່ນຕົວກ່ຽວກັບຜົນປະໂຫຍດຂອງຊາດໄປເຖິງຄວາມຕື່ນຕົວກ່ຽວກັບຜົນປະໂຫຍດຂອງຊົນຊັ້ນ, ອັນນັ້ນແມ່ນເສັ້ນທາງທີ່ພັກເຮົາໄດ້ໝູນໃຊ້ເພື່ອເອົາລັດທິມາກ-ເລນິນ ເຂົ້າສູ່ປະຊາຊົນເຮົາ, ປຸກລຸກຂະບວນການຊາດ-ປະຊາທິປະໄຕຢູ່

ໃນທົ່ວປະເທດອັນຢ່າງກວ້າງຂວາງ, ແລະມັນຕັ້ງແມ່ນບົນພື້ນຖານຂະບວນການນັ້ນເອງ, ພັກເຮົາຈິ່ງສາມາດກໍ່ສ້າງແລະຂະຫຍາຍການຈັດຕັ້ງຂອງຕົນໃຫ້ເຕີບໃຫຍ່ ເຂັ້ມແຂງຢ່າງບໍ່ຢຸດຢັ້ງ, ຮັບປະກັນບົດບາດນຳໜ້າພາທາງຂອງຕົນ, ພາການປະຕິວັດຂອງປະເທດເຮົາກ້າວຈາກໄຊຊະນະນີ້ໄປສູ່ໄຊຊະນະໃໝ່ ແລະມາໃນຊຸມນີ້ ໄດ້ກາຍເປັນພັກກຳອຳນາດໃນທົ່ວປະເທດ.

ຈຸດພິເສດເດັ່ນອີກອັນໜຶ່ງຂອງການຕໍ່ສູ້ຢູ່ໃນ ປະເທດເຮົາແມ່ນການຕໍ່ສູ້ດ້ວຍອາວຸດ ອັນເປັນຮູບການຕໍ່ສູ້ເດືອດຂຽວຂາດກວ່າໝູ່ ໄດ້ຜັນແປໄປຕັ້ງແຕ່ຫົວທີ ແລະສອດທ້ອຍໄປຕະຫຼອດຂະບວນວິວັດແຫ່ງການຕໍ່ສູ້ ປະຕິວັດ. ສະນັ້ນໃນເມື່ອເຂົ້າຮ່ວມການປະຕິວັດ, ປະຊາຊົນຜູ້ຮັກຊາດແຕ່ລະຄົນຕ່າງກໍ່ຕ້ອງໄດ້ກ້າວເຂົ້າສູ່ແນວຮົບຕໍ່ສູ້ເອົາ ເປັນເອົາຕາຍກັບສັດຕູໂລດ ດ້ວຍການເຂົ້າຮ່ວມໃນກອງທັບປະຕິວັດ, ເຂົ້າຮ່ວມໃນໜ່ວຍປະຕິບັດງານ ປະກອບອາວຸດຫຼືເປັນນັກຮົບກອງຫຼອນປູ່ຮາກຖານ, ເຂົ້າຮ່ວມບັນດາການຈັດຕັ້ງທີ່ຮັບໃຊ້ການສູ້ຮົບແລະດຳເນີນການຕໍ່ສູ້ດ້ວຍອາວຸດດ້ວຍຫຼາຍຮູບຫຼາຍແບບທີ່ແຕກຕ່າງກັນ. ອີກດ້ານໜຶ່ງ, ການຕໍ່ສູ້ປະຕິວັດຂອງປະເທດເຮົາຊ້ຳພັດດຳເນີນໄປຢ່າງລະອິດລະ

ອ້ຽວ ມີທັງຕີ, ມີທັງເຈລະຈາ ເຊິ່ງການຕໍ່ສູ້ການເມືອງ ເຂົ້າລວມລາວນັ້ນ ກໍ່ບໍ່ແມ່ນວ່າບໍ່ດຸເດືອດຂ້ຽວຂາດ. ເປັນອັນປະຈັກແຈ້ງວ່າ ການຕໍ່ສູ້ປົດປ່ອຍຊາດຂອງພວກເຮົາ ຕັ້ງແຕ່ຕົ້ນຕະຫຼອດປາຍແມ່ນແປວໄຟຫຼໍ່ຫຼອມ, ທົດສອບ ແລະ ກັ່ນຕອງຜູ້ຄົນຢ່າງເຂັ້ມງວດແລະຈັດຈ້ານທີ່ສຸດ. ມັນບໍ່ອະນຸຍາດໃຫ້ມີການອອນແອ, ຄອນແຄນໃດໆ, ຕ້ອງຮັກສານ້ຳໃຈ ແລະມານະຈິດຕໍ່ສູ້ຢູ່ສະເໝີ, ເດັດດ່ຽວກຳຈັດປັດເປົ່າທຸກຄວາມຫຍຸ້ງຍາກລຳບາກ ແລະ ກຽມພ້ອມຍອມເສັຽສະຫລະ ກະທັ່ງເຖິງຊີວິດ ເລືອດເນື້ອຂອງຕົນເພື່ອຕີເອົາຊະນະສັດຕູ. ອັນນັ້ນ ມັນຕັ້ງແມ່ນການ ສະແດງອອກທີ່ສູງທີ່ສຸດຂອງທາດແທ້ຊົນຊັ້ນກຳມະກອນ, ຂອງຫຼັກໝັ້ນແນວຄິດມາກ-ເລນິນ ໃນສະພາບແວດລ້ອມ ແຫ່ງການຕໍ່ສູ້ປະຕິວັດໃນປະເທດເຮົາ. ຍ້ອນແນວນັ້ນ ແຫຼະ ຖັນແຖວສະມາຊິກພັກຂອງພັກເຮົາ ຈິ່ງໄດ້ຮັບການເລືອກເຟັ້ນຈາກພົນດານັກຮົບທີ່ດີເດັ່ນໃນຂະບວນການ ປະຕິວັດຊາດ-ປະຊາທິປະໄຕຂອງປະຊາຊົນເຮົາ, ທັງໄດ້ຜ່ານການທົດສອບໃນຂະບວນວິວັດແຫ່ງການເຂົ້າຮ່ວມ ການຕໍ່ສູ້ດ້ວຍອາວຸດ ແລະການເມືອງຢ່າງຍືດເຍື້ອຍາວນານ ແລະດຸເດືອດຂ້ຽວຂາດ ສະນັ້ນ ເຖິງແມ່ນວ່າສ່ວນຫຼວງຫຼາຍ

ແມ່ນກຳເນີດມາຈາກຊາວໄຮ່ນາຜູ້ອອກແຮງງານໃນສັງຄົມດ້ອຍພັດທະນາ, ແຕ່ຖັນແຖວສະມາຊິກຂອງພັກເຮົາກໍ່ໄດ້ມີທາດແທ້ຊົນຊັ້ນກຳມະກອນ ແລະຫຼັກໝັ້ນແນວຄິດມາກ-ເລນິນອັນແໜ້ນໜຽວ.

et plate-forme marxiste-léniniste

ການໝູນໃຊ້ລັດທິມາກ-ເລນິນຢ່າງຖືກຕ້ອງ, ປະດິດສ້າງໄດ້ນຳຜົນສຳເລັດມາໃຫ້ພັກເຮົາ ໃນການສ້າງພັກແບບໃໝ່ຂອງຊົນຊັ້ນກຳມະກອນ ໃນເງື່ອນໄຂຕົວຈິງຂອງປະເທດເຮົາ. ເຖິງຢ່າງນັ້ນກໍ່ຕາມ ພວກເຮົາກໍ່ຕ້ອງເຫັນຢ່າງຈະແຈ້ງວ່າຜົນສະທ້ອນອັນໜັກໜ່ວງຂອງສັງຄົມດ້ອຍພັດທະນາພາຍໃຕ້ລັດທິລ່າເມືອງຂຶ້ນ ແລະສັກດີນາ, ທັງມີຫຼາຍຊົນຊາດ ແລະການພັນແຍກຊົນຊັ້ນກໍ່ຍັງບໍ່ທັນເລິກເຊິ່ງເທື່ອນັ້ນ ໄດ້ກະທົບເຂົ້າໃນພັກເຮົາຢ່າງເປັນປະຈຳ. ເພາະສະນັ້ນ, ບັນຫາສຶກສາອົບຮົມ, ບຳລຸງເຝິກຝົນຫຼໍ່ຫຼອມຖັນແຖວສະມາຊິກພັກ, ຍົກສູງລັກສະນະຊົນຊັ້ນ ແລະລັກສະນະມະຫາຊົນຂອງພັກ ໄດ້ກາຍເປັນບັນຫາກົກເຄົ້າທີ່ຈະຕ້ອງເຮັດຢ່າງຮີບດ່ວນ ແລະເປັນປະຈຳໃນວຽກງານກໍ່ສ້າງພັກ. ຈາກຄວາມຮັບຮູ້ເບື້ອງຕົ້ນກ່ຽວກັບລັດທິຮັກຊາດ ແລະລັດທິສາກົນກຳມາຊີບ, ກ່ຽວກັບການຕໍ່ສູ້ປົດປ່ອຍຊາດ ແລະການຕໍ່ສູ້ຊົນຊັ້ນນັ້ນ, ພັກຕ້ອງເອົາໃຈໃສ່ຈັດຈໍ່ຢ່າງບໍ່ລົດ

ລະການສຶກສາອົບຮົມ, ຍົກສູງຄວາມຮັບຮູ້ຂອງສະມາຊິກພັກກ່ຽວກັບບັນດາຫຼັກມູນ ຂອງລັດທິມາກ-ເລນິນ, ວັດຖຸປະສົງ ແລະຊຸດົມຄະຕິຂອງພັກ, ທັດສະນະຫຼັກໝັ້ນຂອງຊົນຊັ້ນກຳມະກອນ, ຄຸນສົມບັດສິນທຳຂອງຊາວສະມາຊິກພັກກອມມູນິດ, ຕ້ານທຸກປະກົດການຂອງບັນດາແນວຄິດໄຮ້ກຳມາຊີບ ກໍ່ຄືຜົນສະທ້ອນຂອງລັດທິສວຍໂອກາດພາຍໃຕ້ທຸກຮູບທຸກສີ. ບົດຮຽນສຳລັບພັກເຮົາແມ່ນຕ້ອງເອົາໃຈໃສ່ເປັນພິເສດການບຳລຸງໃຫ້ພະນັກງານ ແລະສະມາຊິກພັກກ່ຽວກັບຄວາມເດັດດ່ຽວໜຽວແໜ້ນໃນຫຼັກໝັ້ນຊົນຊັ້ນກຳມະກອນ ແລະຈິດໃຈປະຕິວັດສູດກົກສູດປາຍ, ຕ້ານບັນດາທ່າອຽງຄອນແຄນມະລຸ້ມມະລ້ວຍໄຟຝັນ, ບໍ່ໄດ້ແຍກຈຳແນກແຈ້ງລະຫວ່າງມິດກັບສັດຕູ ເຊິ່ງເຄີຍປະກົດອອກໃນເວລາທີ່ພັກເຮົາຕ້ອງການໝູນໃຊ້ຍຸດໂທບາຍ ເພື່ອຈຳກັດສັດຕູ ກໍ່ຄືຕ້ານແນວຄິດເຄິ່ງໆ ກາງໆ, ຢາກພັກຜ່ອນຢ່ອນອາລົມທີ່ໄດ້ປະກົດອອກເປັນຄັ້ງເປັນຄາວ ໃນຂະບວນວິວັດແຫ່ງການຕໍ່ສູ້ອັນຍືດເຍື້ອຍາວນານ ແລະທຸກຍາກລຳບາກ. ພັກເຮົາຍັງໄດ້ເອົາໃຈໃສ່ຕ້ານບັນດາປະກົດການຂອງແນວຄິດເຫັນແກ່ແຕ່ຊາດຂອງຕົນ, ແນວຄິດທ້ອງຖິ່ນ, ພາກສ່ວນ, ອິດສະຫຼະເສລີຕາມໃຈຊອບ ອັນເປັນການກໍ່ຊຸປະ

ສັກຂັດຂວາງການປະຕິບັດຫຼັກການລວມສູນປະຊາທິປະ ໄຕ ຂອງພັກ, ພ້ອມກັນນັ້ນກໍ່ໄດ້ເອົາໃຈໃສ່ບຳລຸງສະຕິປະຊາທິປະໄຕ ແລະແບບແຜນນຳພາເປັນຄະນະ, ຕ້ານແບບແຜນເຈົ້າໂຄດ, ອາດຍາສິດ, ຂຸນເສິກ, ຜະເດັດການອ້າຍດຽວ.

ໄປຄຽງຄູ່ກັບການຍົກສູງລັກສະນະຊົນຊັ້ນ ແລະລັກສະນະນຳຫນ້າຂອງພັກ, ບັນຫາສ້າງຄວາມສາມັກຄີ ເປັນເອກະພາບພາຍໃນພັກກໍ່ເປັນບັນຫາເປັນຕາຍອັນຫນຶ່ງຂອງພັກເຮົາ. ກ່ອນອື່ນຫມົດ "ຄວາມສາມັກຄີເປັນກຳລັງແຮງ", ພັກແມ່ນແກ່ນສານນຳພາ, ແມ່ນກອງເສນາທິການສູ້ຮົບຂອງຊົນຊັ້ນກຳມະກອນ, ພັກຕ້ອງສາມັກຄີເປັນກ້ອນກຳລັງອັນຫນັກແຫນ້ນ, ມີມານະຈິດອັນຫນຶ່ງອັນດຽວເທົ່ານັ້ນ ຈຶ່ງຈະມີກຳລັງແຮງພຽງພໍເພື່ອນຳພາຊົນຊັ້ນ ແລະຊາດຕີເອົາຊະນະສັດຕູ, ເຮັດໃຫ້ວັດຖຸປະສົງສຸດທ້າຍຂອງພັກປະກົດເປັນຈິງຂຶ້ນໄດ້. ໃນດ້ານອື່ນ, ພັກເຮົາໄດ້ກຳເນີດເກີດຂຶ້ນ ແລະເຕີບໃຫຍ່ໃນປະເທດຫນຶ່ງທີ່ມີຈຸດພິເສດຂອງເສດຖະກິດກະສິກຳຂະຫນາດນ້ອຍ, ກະແຈກກະຈາຍ ກໍ່ຄືສາຍພົວພັນລະຫວ່າງບັນດາຊົນຊາດ ແລະທ້ອງຖິ່ນຕ່າງໆ ຍັງສັບສົນ ອັນເປັນຜົນສະທ້ອນໃນລະດັບໃດຫນຶ່ງທີ່ແນ່ນອນ

ເຂົ້າໃສ່ແນວຄິດຂອງພະນັກງານ, ສະມາຊິກພັກ. ໃນເວລາດຽວກັນນັ້ນ, ພັກຊໍ້າພັດຕ້ອງໄດ້ນຳພາການຕໍ່ສູ້ຢ່າງລໍາບາກຍາວນານ, ລະອຽດລະອອຽວ, ສັບສົນ ຕ້ານຢັນສັດຕູທີ່ໃຫຍ່ໂຕເຂັ້ມແຂງ ແລະເລິກແລບແນບນຽນ ເຊິ່ງເວລາໃດພວກເຂົາກໍ່ຊອກທຸກວິທີແບ່ງແຍກ, ມາງເພທຳລາຍພາຍໃນຂອງພວກເຮົາ. ສະນັ້ນ, ພັກຈຶ່ງຕ້ອງໄດ້ເອົາໃຈໃສ່ຈິດຈໍ່ຢ່າງສຸດຂີດ ແລະເປັນປະຈຳການກໍ່ສ້າງ, ປັບປຸງຄວາມສາມັກຄີເປັນເອກະພາບຢູ່ໃນພັກ. ຍິ່ງໄປກວ່ານັ້ນ, ການຕໍ່ສູ້ຂອງປະຊາຊົນເຮົາໃນເມື່ອກ່ອນກໍ່ຄືໃນປັດຈຸ ບັນແມ່ນໄດ້ດຳເນີນໄປໃນສິ່ງແວດລ້ອມສາກົນທີ່ມີຄວາມ ສະດວກເປັນພື້ນຖານ, ແຕ່ກໍ່ມີຄວາມສັບສົນຫຼາຍອັນ. ສະນັ້ນພັກຍິ່ງຕ້ອງໄດ້ເພີ່ມທະວີຄວາມສາມັກຄີພາຍໃນ ເພື່ອປົກປັກຮັກສາແນວທາງທີ່ເປັນເອກະລາດ, ເປັນເຈົ້າຕົນເອງ ແລະ ຖືກຕ້ອງຂອງຕົນໄວ້ໃຫ້ໝັ້ນຄົງ. ດ້ວຍເຫດນັ້ນ, ການປັບປຸງເພີ່ມທະວີຄວາມສາມັກຄີ ເປັນເອກະພາບພາຍໃນພັກຈຶ່ງເປັນບັນຫາຫຼັກການອັນໜຶ່ງໃນວຽກງານກໍ່ ສ້າງພັກ, ທັງເປັນຄວາມຮຽກຮ້ອງຕ້ອງການອັນໜຶ່ງທາງພຶດຕິກຳ ສຳລັບ ພັກເຮົາ ເຊິ່ງທົ່ວພັກ ນັບແຕ່ຂັ້ນສູນກາງລົງເຖິງໜ່ວຍພັກ, ລົງເຖິງສະມາຊິກພັກແຕ່ລະຄົນລ້ວນແຕ່ຕ້ອງ

ໄດ້ເອົາໃຈໃສ່ຈົດຈໍ່ກໍ່ສ້າງ, ປົກປັກຮັກສາມັນໄວ້ຄືກັນກັບ "ປົກປັກຮັກສາແກ້ວຕາຂອງຕົນ". ພັກເຮົາບໍ່ມີເວລາໃດຈະອະນຸຍາດໃຫ້ມີປະກົດການຂອງລັດທິແບ່ງແຍກ, ພັກຝ່າຍທ້ອງຖິ່ນ, ພາກສ່ວນ ບໍ່ວ່າຈະມາໃນຮູບລັກສະນະໃດ ກໍ່ຕາມ, ຖືອັນນັ້ນເປັນການກະທຳມ້າງເພທຳລາຍພັກ, ເປັນໂທດໜັກກວ່າໝູ່ຕໍ່ການປະຕິວັດ ແລະຕໍ່ຊາດ.

ຄວາມສາມັກຄີເປັນເອກະພາບພາຍໃນ ກ່ອນອື່ນໝົດແມ່ນຕ້ອງກໍ່ສ້າງຄວາມເປັນເອກະພາບກັນຢ່າງ ເຕັມປ່ຽມທາງດ້ານການເມືອງ, ແນວຄິດ, ອັນນັ້ນໝາຍຄວາມວ່າ ທົ່ວພັກຕ້ອງເປັນເອກະພາບທາງດ້ານແນວຄິດແລະການກະທຳ ບົນພື້ນຖານລັດທິມາກ-ເລນິນ ເຊິ່ງສະແດງອອກລວມສູນໃນໂຄງການການເມືອງ ແລະ ກົດລະບຽບຂອງພັກທີ່ທົ່ວພັກໄດ້ປະກອບສ່ວນກໍ່ສ້າງມັນຂຶ້ນ ກໍ່ຄືສະແດງອອກຢ່າງລວມສູນໃນແນວທາງການເມືອງ ໃນແຕ່ລະໄລຍະເຊິ່ງໄດ້ກຳນົດໄວ້ໃນມະຕິຕ່າງໆ ຂອງສູນກາງພັກ. ອັນນັ້ນແມ່ນຄວາມເປັນເອກະພາບດ້ວຍຄວາມຕື່ນຕົວ ຂອງຕົນເອງຢ່າງເຕັມສ່ວນ, ບົນພື້ນຖານຄວາມຕື່ນຕົວຂອງສະມາຊິກພັກທັງໝົດທາງດ້ານອຸດົມຄະຕິ, ວັດຖຸປະສົງ ແລະໜ້າທີ່ຂອງພັກ, ບົນພື້ນຖານທັດສະນະ, ຫຼັກໝັ້ນ, ທິດ

ສະດີປະຕິວັດ ແລະ ວິທະຍາສາດຂອງລັດທິມາກ-ເລນິນ ເຊິ່ງສະມາຊິກພັກແຕ່ລະຄົນລ້ວນແຕ່ຕ້ອງໄດ້ຮ່ຳຮຽນ, ເຝິກຝົນບໍ່ຫຼຸດຫຼ່ອນ. ຄວາມເປັນເອກະພາບດັ່ງກ່າວນັ້ນ ບໍ່ສະເພາະແຕ່ສະແດງອອກໃນຄວາມຮັບຮູ້, ໃນຄວາມປາກເວົ້າເທົ່ານັ້ນ, ອັນສຳຄັນໄປກວ່ານັ້ນອີກແມ່ນຕ້ອງສະແດງອອກໃນການເຄື່ອນໄຫວຕົວຈິງເປັນປະຈຳວັນຂອງສະ ມາຊິກພັກແຕ່ລະຄົນ ບໍ່ວ່າຈະຢູ່ໃນຖານະຕຳແໜ່ງໃດ ແລະໃນຂົງເຂດວຽກງານໃດ.

ຄວາມສາມັກຄີເປັນເອກະພາບທາງ ການເມືອງ, ແນວຄິດ, ຕ້ອງໄດ້ຮັບປະກັນດ້ວຍຄວາມເປັນເອກະພາບທາງດ້ານການຈັດຕັ້ງ. ຄັນບໍ່ມີຄວາມເປັນເອກະພາບທາງດ້ານການຈັດຕັ້ງແລ້ວ ກະໂຕຄວາມເປັນເອກະພາບທາງດ້ານການເມືອງ, ແນວຄິດກໍບໍ່ມີຄວາມໝາຍທາງພຶດຕິກຳ ແລະກໍບໍ່ອາດຮັກສາມັ້ນໄວ້ໄດ້ຢ່າງໝັ້ນຄົງ. ພັກເຮົາເປັນພັກສູ້ຮົບພັກໜຶ່ງ, ມັນບໍ່ແມ່ນສະໂມສອນໂຕ້ວາທີ; ສະມາຊິກພັກ ທຸກໆ ຄົນລ້ວນແຕ່ໄດ້ຮັບປະກັນກ່ຽວກັບສິດສະເໜີຄວາມເຫັນທຸກດ້ານຂອງຕົນຢູ່ໃນການຈັດຕັ້ງຂອງພັກ ບໍ່ວ່າຈະແມ່ນບັນຫາໃດໆ ທີ່ຂຶ້ນກັບຜົນປະໂຫຍດຂອງການປະຕິວັດ ກໍຄືລ້ວນແຕ່ໄດ້ມີສິດເຂົ້າຮ່ວມເປີກສາຫາລື, ຕົກລົງ

ທຸກວຽກງານຂອງພັກ; ແຕ່ທຸກໆ ຄວາມເຫັນຖືກຖຽງກັນນັ້ນ ໃນທີ່ສຸດກໍ່ຕ້ອງໄດ້ມີການສະຫຼຸບ ລົງມະຕິເພື່ອເປັນພື້ນຖານໃຫ້ການກະທຳຢ່າງເປັນເອກະພາບຂອງພັກ. ມັນປຽບເໝືອນດັ່ງກອງທະຫານສູ້ຮົບກອງໜຶ່ງ, ກ່ອນຈະອອກສູ່ສະໜາມຮົບ ທຸກໆ ຄົນລ້ວນແຕ່ມີສິດອະພິປາຍ ແລະສະເໜີຍັດຕິສູ້ຮົບ ຫຼາຍອັນຫຼາຍແນວທີ່ແຕກຕ່າງກັນອອກມາ, ແຕ່ໃນເມື່ອໄດ້ເຂົ້າສູ່ສະໜາມຮົບແລ້ວ ກໍ່ມີແຕ່ຕ້ອງສູ້ຮົບຕາມຍັດຕິອັນໜຶ່ງອັນດຽວເທົ່ານັ້ນພາຍໃຕ້ ການບັງຄັບບັນຊາທີ່ເປັນເອກະພາບ. ເພາະສະນັ້ນ, ຢູ່ພາຍໃນພັກຈຶ່ງປະຕິບັດລະບອບລວມສູນປະຊາທິປະໄຕຕາມຫຼັກການທີ່ວ່າ: "ບຸກຄົນຂຶ້ນກັບການຈັດຕັ້ງ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ, ຂັ້ນລຸ່ມຂຶ້ນກັບຂັ້ນເທິງ, ພັກທັງໝົດຂຶ້ນກັບສູນກາງ". ນັ້ນແມ່ນຫຼັກການຈັດຕັ້ງພື້ນຖານເພື່ອປະຕິບັດຄວາມເປັນເອກະພາບທາງດ້ານການຈັດຕັ້ງຂອງ ພັກ, ຈາກນັ້ນຈຶ່ງຮັບປະກັນຄວາມສາມັກຄີເປັນເອກະພາບ ທາງດ້ານການເມືອງ, ແນວຄິດຢູ່ພາຍໃນພັກໄດ້ຢ່າງໜັກແໜ້ນ.

ການຕິຊົມຕົນເອງ ແລະຕິຊົມກັນ ເປັນກົດເກນຂະຫຍາຍຕົວຂອງພັກ; ພ້ອມກັນນັ້ນກໍ່ເປັນວິທີພື້ນຖານອັນໜຶ່ງເພື່ອເພີ່ມ ທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ.

ຂະບວນວິວັດແຫ່ງການນຳພາການປະຕິວັດຂອງພັກເປັນຂະບວນວິວັດແຫ່ງການຊອກຮູ້ກົດເກນຂະຫຍາຍຕົວຂອງ ການປະຕິວັດຢ່າງບໍ່ລົດລະ, ຊອກເຫັນຂໍ້ຂັດແຍ້ງ ແລະວາງວິທີແກ້ໄຂ ເພື່ອພາການປະຕິວັດກ້າວຂຶ້ນຢ່າງບໍ່ຢຸດຢັ້ງ. ໃນການຕໍ່ສູ້ອັນຍືດເຍື້ອຍາວນານ, ລະອິດລະອ້ຽວ, ຂ້ຽວຂາດກັບສັດຕູນັ້ນ, ສະພາບການໄດ້ມີການຜັນແປໄປຢ່າງສັບສົນທີ່ສຸດ ໂດຍສະເພາະໃນເວລາທີ່ການປະຕິວັດຢືນຕໍ່ໜ້າບາດລ້ຽວປະຫວັດສາດ. ດ້ານໜຶ່ງອີກ, ວັດຖຸເຫດການນັ້ນມັນບໍ່ໂປໂລອອກຢ່າງເຕັມເມັດເຕັມໜ່ວຍໃນບາດດຽວໂລດ ແລະມີ ອັນ ກໍ່ປະກົດອອກພາຍໃຕ້ຫຼາຍຮູບການທີ່ຄ້າຍກັບວ່າ ຂັດແຍ້ງກັບທາດແທ້ແລະທິດກ້າວຂຶ້ນຂອງວັດຖຸເຫດການນັ້ນ. ໃນສະພາບການດັ່ງກ່າວນັ້ນ, ເນື່ອງຈາກຈຸດພິເສດຂະຫຍາຍຕົວທີ່ແຕກຕ່າງກັນຂອງພະນັກງານສະມາຊິກພັກແຕ່ລະຄົນ,ສະນັ້ນ ການສັງເກດ ແລະຕີ ລາຄາວັດຖຸເຫດການຂອງແຕ່ລະຄົນກໍ່ບໍ່ຄືກັນ; ມີບາງສະຫາຍຮັບຮູ້ການຫັນປ່ຽນໃໝ່ຂອງສະພາບການໄດ້ໄວ, ມີບາງສະຫາຍຮັບຮູ້ຊ້າກວ່າ, ມີບາງສະຫາຍຊ້ຳພັດບໍ່ຫັນເຫັນບັນຫາ, ຈາກນັ້ນ ຈິ່ງພາໃຫ້ວິທີແກ້ໄຂທີ່ຈະວາງອອກນັ້ນ ກໍ່ແຕກຕ່າງກັນ. ນອກຈາກນັ້ນ, ຄວາມຮັບຮູ້ຂອງພະນັກ

ງານ, ສະມາຊິກພັກແຕ່ລະຄົນຍັງຖືກຜົນສະທ້ອນຂອງແນວຄິດໄຮ້ກຳມາຊີບຫຼາຍປະເພດ, ຍ້ອນການກະທົບຂອງຫຼາຍສາຍເຫດແຕກຕ່າງກັນ ໃນນັ້ນມີບາງສາຍເຫດກໍ່ເກີດມາຈາກຈຸດພິເສດທາງສັງຄົມ, ຊົນຊາດ ແລະສະພາບແວດລ້ອມແຫ່ງການຕໍ່ສູ້ປະຕິວັດຂອງປະເທດເຮົາ. ດ້ວຍເຫດນັ້ນ, ການຕໍ່ສູ້ລະຫວ່າງການກ້າວຂຶ້ນກັບການຮັກສາຄອງເດີມ, ລະຫວ່າງອັນໃຫມ່ກັບອັນເກົ່າ, ລະຫວ່າງອັນຖືກກັບອັນຜິດຈຶ່ງເປັນເລື່ອງທີ່ຕ້ອງເປັນໄປຢ່າງ ພາວະວິໄສ ແລະເປັນອັນປະຈຳຢູ່ພາຍໃນພັກ. ຜ່ານການຕໍ່ສູ້ພາຍໃນເພື່ອພ້ອມກັນສຳຫຼວດກວດກາ, ວິເຄາະວິໄຈຄວາມຮັບຮູ້, ທັດສະນະ, ແນວຄິດທີ່ແຕກຕ່າງກັນນັ້ນ ມັນໄດ້ເຮັດໃຫ້ລະດັບຄວາມຮັບຮູ້ຂອງສະມາຊິກພັກເຊີດຊູຂຶ້ນ; ດ້ານຖືກຕ້ອງ, ຈຸດດີກໍ່ໄດ້ຮັບການເສີມຂະຫຍາຍ, ດ້ານຜິດເຂວກໍ່ໄດ້ຮັບການຕຳນິວິພາກ, ເຮັດໃຫ້ຄວາມເຫັນທີ່ແຕກຕ່າງກັນ, ຄວາມຂັດແຍ້ງກັນຢູ່ພາຍໃນຖືກຮັດແຄບເຂົ້າ ແລະໄດ້ຮັບການແກ້ໄຂ, ໃນທີ່ສຸດກໍ່ສາມາດສ້າງເປັນຄວາມເປັນເອກກະພາບດ້ວຍຄວາມຕື່ນຕົວຂອງຕົນເອງ, ເຮັດໃຫ້ພັກຍິ່ງຫນັກແຫນ້ນເຂັ້ມແຂງຂຶ້ນຕື່ມ ແລະ ເຮັດໃຫ້ພະນັກງານ, ສະມາຊິກພັກຍິ່ງມີຄວາມກ້າວຫນ້າ.

ພັກເຮົາບໍ່ເກງກົວການຕໍ່ສູ້ພາຍໃນ, ບໍ່ຢ້ານການຕິຊົມຕົນເອງ ແລະຕິຊົມກັນ, ແລະກໍ່ເຄີຍໄດ້ມີການຕໍ່ສູ້ຕິຊົມກັນຢ່າງກົງໄປກົງມາຢູ່ພາຍໃນພັກກ່ຽວກັບບັນຫາທີ່ສຳຄັນທີ່ສຸດ ໂດຍສະເພາະຢ່າງຍິ່ງແມ່ນໃນບາດລ້ຽວປະຫວັດສາດຂອງການປະຕິວັດຂອງປະເທດເຮົາ. ຜ່ານການຕໍ່ສູ້ພາຍໃນ ເພື່ອພ້ອມກັນຮັບຮູ້ສັດ ຈະທຳຢ່າງເປັນເອກະພາບນັ້ນ ມີຫຼາຍຄັ້ງຫຼາຍຄາວກໍ່ບໍ່ແມ່ນຈະເປັນໄປຢ່າງງາຍດາຍປານໃດ ແລະມີບາງກໍລະນີ ພັກກໍ່ຈຳຕ້ອງໄດ້ມີວິທີການແກ້ໄຂຢ່າງເໝາະສົມ, ແຕ່ຜ່ານການຕໍ່ສູ້ຢູ່ພາຍໃນແຕ່ລະຄັ້ງ ບໍ່ວ່າເທື່ອໃດ ພັກເຮົາກໍ່ເຕີບໃຫຍ່ເຂັ້ມແຂງຂຶ້ນຕື່ມ ແລະເປັນເອກະພາບກັນຍິ່ງຂຶ້ນ. ມີບາງຄັ້ງບາງຄາວສະພາວະການເຄັ່ງຮ້ອນ, ສັບສົນທີ່ສຸດ ອັນເກີດມາຈາກກົນອຸບາຍຍຸດທະສາດໃໝ່ຂອງສັດຕູ, ຫຼືເນື່ອງມາຈາກການຫັນປ່ຽນກະທັນຫັນຂອງສະພາບການຢູ່ໃນປະເທດ ແລະ ນອກປະເທດນັ້ນ ຖ້າຫາກວ່າມີຄວາມຊັກໆ ຊ້າໆ, ຄວາມລັ່ງໆ ເລໆ, ການຂາດຄວາມເປັນເອກະພາບໃດໜຶ່ງໃນການນຳພາ ກໍ່ຈະນຳມາເຊິ່ງຜົນເສຍຫາຍອັນໜັກໜ່ວງໃຫ້ແກ່ພາລະກິດປະຕິວັດ; ແຕ່ຍ້ອນຈິດໃຈ ແລະວິທີຕໍ່ສູ້ພາຍໃນອັນຖືກຕ້ອງ, ເຂັ້ມງວດ, ໃນທີ່ສຸດທົ່ວພັກກໍ່ໄດ້ລວມສູນ

ເຂົ້າໃນມານະຈິດອັນໜຶ່ງອັນດຽວ, ດ້ວຍຄວາມຕັດສິນໃຈ
ຍຸດທະສາດທີ່ເປັນເອກະພາບ ເພື່ອພ້ອມກັນນຳພາການປະ
ຕິວັດກ້າວຂຶ້ນ, ຜ່ານຜ່າບັນດາບາດລ້ຽວປະຫວັດສາດ
ແລະຍາດໄດ້ໄຊຊະນະອັນໃຫຍ່ຫຼວງ.

ຄວາມສາມັກຄີເປັນເອກະພາບຢູ່ພາຍໃນພັກ ຕ້ອງ
ແມ່ນຄວາມສາມັກຄີທີ່ສ້າງຂຶ້ນ ບົນພື້ນຖານເປັນເອກະພາບ
ໃນແນວທາງ, ແຜນນະໂຍບາຍຂອງພັກ ຕາມຫຼັກການ
ລວມສູນປະຊາທິປະໄຕເປັນຕົ້ນຕໍ, ພ້ອມກັນນັ້ນຕ້ອງຖືເປັນ
ສຳຄັນທີ່ສຸດການກໍ່ສ້າງສາຍພົວພັນຮັກແພງສະໜິດສະໜົມ
ກັນ ຜູກພັນກັນລະຫວ່າງພະນັກງານ, ສະມາຊິກພັກດ້ວຍ
ກັນ. ການພົວພັນຖານສະຫາຍທີ່ມີອຸດົມຄະຕິ ແລະອັດຖຸປະ
ສົງຕໍ່ສູ້ອັນດຽວກັນທັງໄດ້ເຄີຍພ້ອມກັນຕໍ່ສູ້, ເປັນຕາຍຮ່ວມ
ກັນ, ຮ່ວມສຸກຮ່ວມທຸກນຳກັນນັ້ນ ແມ່ນການພົວພັນອັນສັກ
ກະລະບູຊາກວ່າໝູ່ລະຫວ່າງຊາວກອມມູນິດ. ຢູ່ພາຍໃນ
ພັກເຮົາໄດ້ມີສະພາບເສັຽຄວາມສາມັກຄີເກີດຂຶ້ນຢູ່ໃນບາງ
ບ່ອນ, ບາງຄັ້ງບາງຄາວ, ແຕ່ສ່ວນມາກການເສັຽຄວາມ
ສາມັກຄີນັ້ນ ມັນບໍ່ແມ່ນເກີດຂຶ້ນຍ້ອນຄວາມຂັດແຍ້ງ ທາງ
ດ້ານແນວທາງ, ທັດສະນະ, ແຕ່ຊ້ຳພັດແມ່ນຍ້ອນທ່າ ທີ
ການປະພຶດທີ່ຂາດຄວາມຮັກແພງເຄົາລົບກັນ ລະຫວ່າງສະ

ຫາຍດ້ວຍກັນ ແລະໃນເມື່ອມີຄວາມຄິດຄວາມເຫັນ ບໍ່ຖືກຕ້ອງຄ່ອງກັນ ຊ້ຳພັດແກ້ໄຂຕາມແບບຄັບແຄບ, ຕາມແບບນຶກຄິດຕາຍຕົວ. ດ້ວຍເຫດນັ້ນ ໃນການພົວພັນປະພຶດຕໍ່ກັນຕ້ອງມີຄວາມຈິງໃຈ, ເປີດອົກເປີດໃຈທີ່ສຸດ, ຕ້ອງທ່ອມຕົວ, ເຄົາລົບກັນ, ເຂົ້າອົກເຂົ້າໃຈຄວາມຫຍຸ້ງຍາກຂອງກັນແລະຊ່ວຍເຫຼືອກັນຢ່າງສຸດອົກສຸດໃຈ ທັງນີ້ກໍ່ເພື່ອເຮັດຫຼ້ອນຫນ້າທີ່ດ້ວຍຄວາມຮັກແພງກັນຖານສະຫາຍ, ເດັດຂາດບໍ່ປະໃຫ້ແນວຄິດຊົ່ວຂອງສັງຄົມເກົ່າ ທີ່ຝັນກັບສິນທຳກອນມູນິດເຊັ່ນແນວຄິດທ້ອງຖິ່ນ, ເຫັນແກ່ແຕ່ສ່ວນຂອງຕົນ, ລະແວງສົງໄສ, ນຶກຄິດຕາຍຕົວ, ຄັບແຄບ, ອິດສາ ສຽດ ສີກັນ, ຄິດໄລ່ຊິ່ງຊາຕະປິດຕະປີ່, ຢ້ານລື້ນຢ້ານເຫຼືອ, ແຍ່ງຊີງຖານະຕຳແຫນ່ງ, ຍາດເອົາແຕ່ຜົນງານມາໃຫ້ໂຕເອງ ຖິ້ມໂທດໃສ່ຜູ້ອື່ນ ແລະອື່ນໆ...ນັ້ນແຊກຊອນເຂົ້າມາເຮັດໃຫ້ການພົວພັນຖານສະຫາຍອັນຜ່ອງໃສຂອງພັກເຮົາຖືກມົວຫມອງໄປ, ຈາກນັ້ນມັນຈະສ້າງຕອນດິນດີໃຫ້ແກ່ລັດທິ ພັກຝ່າຍ, ແບ່ງແຍກກ່ຳເນີດເກີດຂຶ້ນຢູ່ພາຍໃນພັກ. ໃນເມື່ອສະຫາຍໃດຫນຶ່ງບໍ່ທັນເປັນເອກະພາບກັບແຜນນະໂຍບາຍຂອງພັກໃນບັນຫາໃດບັນຫາຫນຶ່ງຍ້ອນບໍ່ທັນຮັບຮູ້ບັນຫາໄດ້ເທື່ອຫຼືຍ້ອນສະຫາຍນັ້ນມີຂໍ້ຂາດຕົກບົກພ່ອງແລະມີຄວາມ ຜິດພາດ

ນັ້ນຕ້ອງໄດ້ຊີ້ແຈງອະທິບາຍແລະຕໍ່ສູ້ຢ່າງກົງໄປກົງມາໂດຍ
ບໍ່ຜ່ອນສັ້ນຜ່ອນຍາວ ໃນບັນດາບັນຫາທີ່ເປັນຫຼັກການ, ແຕ່
ແນວໃດກໍ່ຕ້ອງໄດ້ມີເຫດມີຜົນ, ທັງເຫັນແກ່ກັນ, ຕ້ອງສະ
ແດງ ໃຫ້ເຫັນນ້ຳໃຈຮັກແພງກັນຖານສະຫາຍ ເພື່ອຜົນປະ
ໂຫຍດຂອງການປະຕິວັດ ແລະຜົນປະໂຫຍດຂອງກະໂຕສະ
ຫາຍຜູ້ມີຄວາມຜິດພາດນັ້ນ, ເພື່ອຊ່ວຍເຫຼືອສະຫາຍນັ້ນໃຫ້ມີ
ຄວາມກ້າວໜ້າ ແລະ ເຮັດຫຼອນໜ້າທີ່; ໃນບາງກໍລະນີ
ທີ່ຈຳເປັນ, ເປັນຕົ້ນແມ່ນໃນເວລາມີຄວາມເຫັນແຕກຕ່າງ
ກັນໃນບັນຫາຈຳນວນໜຶ່ງທີ່ສັບສົນເຊິ່ງບໍ່ອາດຈະເຮັດ ໃຫ້
ຮັບຮູ້ໄດ້ງ່າຍໃນທັນຖວງທີນັ້ນຍັງຕ້ອງອົດທົນຊ່ວຍເຫຼືອ ກັນ
ແລະຕ້ອງຮູ້ຈັກລໍຖ້າກັນ, ສ້າງເງື່ອນໄຂໃຫ້ກັນເຂົ້າໃຈສະ
ພາບການແຈ້ງຂຶ້ນຕື່ມອີກ, ຄິດຄົ້ນຄວາມເຫັນຕ່າງໆ ຂອງ
ກັນຢ່າງຄົບຖ້ວນ ເພື່ອກ້າວໄປເຖິງເປັນເອກະສັນກັນດ້ວຍ
ຄວາມຕື່ນຕົວເອົາເອງ. ໃນກໍລະນີທີ່ຕ້ອງໄດ້ມີວິທີການແກ້
ໄຂເພື່ອຮັກສາລະບຽບວິໄນຂອງພັກຢ່າງເຂັ້ມງວດນັ້ນ ວິທີ
ແກ້ໄຂກໍ່ຕ້ອງສົມເຫດສົມຜົນ, ເຮັດໃຫ້ສະຫາຍທີ່ຖືກວິໄນ
ນັ້ນເຫັນຄວາມຮັກແພງຂອງພັກ ເພື່ອມີຄວາມຕັດສິນໃຈເຝິກ
ຝົນຫຼໍ່ຫຼອມ, ດັດແປງ, ບໍ່ຄຽດຂົ້ນຕໍ່ການຈັດຕັ້ງ, ບໍ່ໂສກ
ເສົ້າໝົດຫວັງ. ຕ້ອງຫຼີກຢ່າງເດັດຂາດວິທີແກ້ໄຂແບບ

ເອກະລາດ, ພະເດັດການອາຍດຽວ, ຫຼາບຊາ, ທັບຖົມ ປົດເຂຍຜູ້ທີ່ມີຄວາມຜິດພາດນັ້ນ, ເພາະວິທີແກ້ໄຂແນວນັ້ນ ຈະເຮັດໃຫ້ສະຫາຍທີ່ມີຄວາມຜິດພາດນັ້ນເກີດມີຄວາມບໍ່ພໍ ໃຈ ເບື່ອໜ່າຍອັນຈະເຮັດໃຫ້ຜູ້ນັ້ນກ້າວໄປສູ່ຄວາມ ຜິດ ພາດທີ່ຮ້າຍແຮງໄປກວ່ານັ້ນອີກ ກໍ່ເປັນໄດ້.

ຄວາມສາມັກຄີເປັນເອກະພາບຢູ່ພາຍໃນພັກ ຍັງ ເປັນເງື່ອນໄຂພື້ນຖານກ່ອນອື່ນໝົດເພື່ອປະຕິບັດຄວາມສາ ມັກຄີຊາດ, ຄວາມສາມັກຄີສາກົນ. ພັກເປັນກອງລະວັງ ໜ້າ, ເປັນການຈັດຕັ້ງນຳພາສູງສຸດຂອງຊົນຊັ້ນ ແລະ ຊາດ, ຖ້າບໍ່ມີຄວາມສາມັກຄີຢູ່ພາຍໃນແລ້ວ ກໍ່ບໍ່ອາດເວົ້າ ເຖິງຄວາມສາມັກຄີລະຫວ່າງບັນດາຊົນຊາດ ແລະກໍ່ບໍ່ອາດ ເວົ້າເຖິງຄວາມສາມັກຄີຢ່າງກວ້າງຂວາງຢູ່ໃນໝູ່ ມະຫາ ຊົນໄດ້. ການທີ່ພັກເຮົາສາມາດເຮັດໃຫ້ປະຊາຊົນບັນດາ ຊົນຊາດ ແລະຊັ້ນຄົນຕ່າງໆ ໃນທົ່ວປະເທດສາມັກຄີກັນໃນ ແນວໂຮມເອກະພາບແຫ່ງຊາດອັນດຽວໄດ້ນັ້ນ ນອກຈາກ ສາຍເຫດກ່ຽວກັບແນວທາງປະຕິວັດ ແລະນະໂຍບາຍແນວ ໂຮມຖືກຕ້ອງແລ້ວ ກໍ່ຍັງມີສາຍເຫດອັນໜຶ່ງທີ່ສຳຄັນທີ່ສຸດ, ນັ້ນແມ່ນພັກເຮົາໄດ້ກໍ່ສ້າງຖັນແຖວພະນັກງານ, ສະມາຊິກ ພັກເຖິງວ່າມີຕົ້ນກຳເນີດຈາກບັນດາຊົນຊາດ, ຈາກພາກ

ສ່ວນສັງຄົມທີ່ແຕກຕ່າງກັນ, ແຕ່ກໍສາມັກຄີເປັນເອກະພາບກັນທາງດ້ານມານະຈິດ ແລະການກະທຳ ນັບຕັ້ງແຕ່ເວລາການປະຕິວັດຍັງອ່ອນນ້ອຍຕະຫຼອດເຖິງເວລາຂະຫຍາຍຕົວເຕີບໃຫຍ່ຂຶ້ນ. ຍ້ອນແນວນັ້ນ, ເຖິງແມ່ນວ່າຈຳນວນ ພະນັກງານ, ສະມາຊິກຂອງພັກເຮົາບໍ່ຫຼວງຫຼາຍ, ແຕ່ກໍຍັງຄົງຮັບປະກັນຄວາມສາມັກຄີ ແລະການນຳພາທົ່ວປວງຊົນຕໍ່ສູ້ພາຍໃຕ້ລົມຫູງຂອງພັກ, ທັບມ້າງທຸກກົນອຸບາຍແບ່ງແຍກມ້າງເພຂອງສັດຕູໄດ້.

ໃນການພົວພັນສາກົນກໍເຊັ່ນດຽວກັນ, ມີ ແຕ່ສ້າງຄວາມສາມັກຄີພາຍໃນໄດ້ຢ່າງໜັກແໜ້ນເທົ່ານັ້ນ ຈິ່ງຈະສາມາດປະຕິບັດ ຄວາມສາມັກຄີສາກົນ ອັນຈິງຈັງໄດ້, ເພາະວ່າ <u>ການພົວພັນສາກົນທີ່ແທ້ຈິງນັ້ນ ເວລາໃດກໍຕ້ອງຕັ້ງຢູ່ບົນພື້ນຖານ ແຫ່ງຄວາມເປັນເອກະລາດ, ເປັນເຈົ້າຕົນເອງ</u> ຢ່າງຖືກຕ້ອງ ຂອງແຕ່ລະພັກ, ຂອງແຕ່ລະປະເທດ. ພັກໜຶ່ງໆ ທີ່ມີຄວາມສາມັກຄີເປັນເອກະພາບ ຢູ່ພາຍໃນຢ່າງແໜ້ນແຟ້ນ ແລະ ມີກອນກຳລັງສາມັກຄີ ຊົນຊາດໃນທົ່ວປະເທດຢ່າງໜັກແໜ້ນ ນັ້ນຈຶ່ງຈະຮັບປະ ກັນການເຮັດໃຫ້ແນວທາງພາຍໃນ,ພາຍນອກທີ່ເປັນ ເອກະລາດ,ເປັນເຈົ້າຕົນເອງຂອງຕົນໄດ້ຮັບການປົກປັກຮັກ ສາ

ແລະເຄົາລົບຢູ່ສະເໜີແລະຈາກນັ້ນຈຶ່ງຈະສາມາດສ້າງການພົວພັນສາມັກຄີສາກົນອັນຖືກຕ້ອງ, ຈົບງາມໄດ້. ໃນດ້ານອື່ນ, ຢາກສາມັກຄີໄດ້ ກໍ່ຕ້ອງມີວິທີແກ້ໄຂສາຍພົວພັນດ້ວຍກັນຢ່າງຖືກຕ້ອງ ໂດຍສະເພາະແມ່ນໃນເວລາທີ່ມີຄວາມເຫັນແຕກຕ່າງກັນ ແລະ ເມື່ອໃດຮູ້ຈັກແກ້ໄຂ ການພົວພັນພາຍໃນ ໄດ້ເປັນຢ່າງດີ, ເມື່ອນັ້ນຈຶ່ງຈະສາມາດ ແກ້ໄຂການພົວພັນສາກົນໄດ້ຢ່າງຖືກຕ້ອງ, ມີເຫດມີຜົນ,ທັງເຫັນແກ່ກັນ. ກົງກັນຂ້າມ, ຖ້າຄວາມສາມັກຄີພາຍໃນ ບໍ່ເປັນໄປຢ່າງຈິງໃຈແລ້ວ ຄວາມສາມັກຄີສາກົນ ກໍ່ບໍ່ອາດເປັນໄປຢ່າງຈົບງາມໄດ້. ອັນນີ້ມັນກໍ່ແມ່ນການພົວພັນສັດຈະວິພາກລະຫວ່າງສອງບັນຫາຄື ບັນຫາຊາດ ກັບບັນຫາສາກົນ ເຊິ່ງປະຫວັດສາດ ຂອງຂະບວນການກອມມູນິດສາກົນກໍ່ໄດ້ຢັ້ງຢືນມາແລ້ວ.

ດ້ວຍແນວທາງຈັດຕັ້ງ ແລະວິທີຈັດຕັ້ງອັນຖືກ ຕ້ອງແລະປະດິດສ້າງ, ພວກເຮົາໄດ້ສ້າງພັກມາກ-ເລນິນທີ່ແທ້ຈິງພັກໜຶ່ງຂຶ້ນຢ່າງສຳເລັດຜົນ ໂດຍສອດຄ່ອງກັບເງື່ອນໄຂສັງຄົມຂອງປະເທດເຮົາ. ແຕ່ ຢາກເສີມຂະຫຍາຍບົດບາດຂອງພັກທີ່ເປັນປັດໄຈຕັດສິນທຸກໄຊຊະນະ ຕ້ອງຮັກສາແລະ ເພີ່ມທະວີການນຳພາຂອງພັກໃນທຸກໆ ຂົງເຂດຂອງ

ການຕໍ່ສູ້ ແລະ ໃນທຸກກໍລະນີຂອງສະພາບການຢູ່ສະເໝີ. ການຕໍ່ສູ້ປະຕິວັດ ເປັນການຕໍ່ສູ້ຮອບດ້ານ ແລະ ຜັນແປຂະຫຍາຍຕົວຢ່າງບໍ່ຂາດສາຍ, ຜ່ານແຕ່ລະສະໄໝ ຊຶ່ງພັດມີແບບວິທີຕໍ່ສູ້ທີ່ແຕກຕ່າງກັນ ເຊິ່ງຕ້ອງດຳເນີນໄປໃນເງື່ອນໄຂຕ່າງກັນ. ດ້ວຍເຫດນັ້ນ, ບໍ່ວ່າຍາມໃດພັກຕ້ອງຍຶດໝັ້ນ ແລະເສີມຂະຫຍາຍບົດບາດນຳພາຮອບດ້ານຂອງຕົນໃນທຸກຂົງເຂດຂອງການຕໍ່ສູ້ເຊັ່ນ ການຕໍ່ສູ້ທາງດ້ານການເມືອງ, ການຕໍ່ສູ້ ທາງດ້ານການທະຫານ, ການຕໍ່ສູ້ທາງດ້ານເສດຖະກິດ, ວັດທະນະທຳ, ການຕ່າງປະເທດ..., ໃນສະໄໝສົງຄາມ ກໍ່ຄືໃນສະໄໝ ສັນຕິພາບ, ໃນຍາມຫຍຸ້ງຍາກກໍ່ຄືໃນຍາມສະດວກ. ພັກນຳພາດ້ວຍຫຼາຍວິທີ, ແຕກອນອື່ນໝົດ ແມ່ນດ້ວຍແນວທາງ, ແຜນນະໂຍບາຍ, ນະໂຍບາຍ ອັນຖືກຕ້ອງ ຂອງຕົນ ນັບແຕ່ແນວທາງການເມືອງ, ແນວທາງການທະຫານ, ຍຸດໂທບາຍ ແລະ ຮູບການຕໍ່ສູ້ ໃນແຕ່ລະໄລຍະ ໄປເຖິງບັນດາ ນະໂຍບາຍລະອຽດໃນທຸກຂົງເຂດເຄື່ອນໄຫວຂອງສັງຄົມ; ພັກຍັງນຳພາດ້ວຍວຽກງານປຸກລະດົມ ການເມືອງແນວຄິດ ຢ່າງກວ້າງເລິກໃນໝູ່ມະຫາຊົນທຸກຊັ້ນຄົນທີ່ແຕກຕ່າງກັນ, ບຳລຸງນ້ຳໃຈຮັກຊາດ ຄວາມທະນົງໃຈຕໍ່ຊາດ, ຄວາມຮັກແພງ

ຫວງແຫນລະບອບໃຫມ່, ມີຄວາມສາມັກຄີກັບປະຊາຊົນບັນດາປະເທດອ້າຍນ້ອງ ແລະປະຊາຊົນທີ່ກ້າວຫນ້າໃນໂລກ, ແລະທຸ່ມເທກຳລັງວັງຊາທັງຫມົດຂອງຕົນເພື່ອຕີເອົາຊະນະສັດຕູ ແລະສ້າງສາປະເທດຊາດ; ພ້ອມກັນນັ້ນ ພັກຍັງນຳພາດວຍສິນທຳ, ຄຸນສົມບັດ, ແບບແຜນ ແລະການກະທຳທີ່ຕັ້ງຫນ້າເປັນແບບຢ່າງຂອງຖັນແຖວພະນັກງານ, ສະມາຊິກພັກໃນການສູ້ຮົບ, ໃນການເຮັດຫນ້າທີ່ ແລະ ໃນການປະຕິບັດແນວທາງ ນະໂຍບາຍຂອງພັກ. ໃນເມື່ອກຳອຳນາດການປົກຄອງແລ້ວ ການນຳພາຂອງພັກຍັງຕອງໄດ້ສະແດງອອກຢູ່ໃນການເສີມຂະຫຍາຍບົດບາດ ແລະຄວາມສັກສິດຂອງກົງຈັກອຳນາດການປົກຄອງໃນການຄຸ້ມຄອງລັດ , ຄຸ້ມຄອງເສດຖະກິດ, ຄຸ້ມຄອງທຸກດ້ານ ຂອງຊີວິດສັງຄົມ; ພ້ອມກັນນັ້ນ ກໍ່ເສີມຂະຫຍາຍບົດບາດເປັນເຈົ້າຂອງປະຊາຊົນໃນການເຂົ້າຮ່ວມຄຸ້ມຄອງລັດ ແລະຄຸມຄອງສັງຄົມ.

ເພາະສະນັ້ນ, ເພື່ອຮັກສາໃຫຫມັ້ນຄົງ ແລະເພີ່ມທະວີການນຳພາ ຂອງພັກ ກ່ອນອື່ນຫມົດ ແມ່ນຕ້ອງຈັດຕັ້ງການຄົ້ນຄວ້າ <u>ເຊື່ອມຊຶມແນວທາງ, ແຜນນະໂຍບາຍຂອງພັກຢ່າງກວ້າງຂວາງ ແລະ ເລິກເຊິ່ງ</u> ໃນຖັນແຖວສະມາຊິກພັກ ແລະ ພະນັກງານ, ໃນຫມູ່ ມະຫາຊົນຜູ້ອອກແຮງ

ງານ ສ່ວນຫຼວງຫຼາຍ ແລະ ໃນຊັ້ນຄົນຕ່າງໆ, ສ້າງຄວາມເປັນເອກະພາບ ອັນໜຶ່ງ ອັນດຽວກັນຢ່າງສົມບູນ, ສ້າງເປັນກຳລັງແຮງອັນໃຫຍ່ຫຼວງ ທາງດ້ານການເມືອງ ເພື່ອເຮັດໃຫ້ບັນດາແນວທາງນະໂຍບາຍຂອງພັກປະກົດເປັນຈິງ. ພ້ອມກັນນັ້ນ ກໍ່ຕ້ອງລົງເລິກຄົ້ນຄວ້າໃນພຶດຕິກຳເພື່ອຖອດຖອນບົດຮຽນ, ເພີ່ມເຕີມ, ຂະຫຍາຍ ແລະ ປັບປຸງແນວທາງນະໂຍບາຍຂອງພັກ ໃນທຸກດ້ານໃຫ້ຄົບຖ້ວນ ເປັນຕົ້ນແມ່ນໃນບັນດາຂົງເຂດຕໍ່ສູ້ໃໝ່ ໃນປັດຈຸບັນເຊັ່ນ ຂົງເຂດຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ, ເຮັດໃຫ້ແນວທາງນະໂຍບາຍຂອງພັກສອດຄ່ອງກັບກົດເກນປະຕິວັດ ກໍ່ຄືກົດເກນຂະຫຍາຍຕົວພາວະວິໄສຂອງສັງຄົມຢູ່ສະໄໝ. <u>ຕ້ອງສ້າງແລະປັບປຸງລະບົບການຈັດຕັ້ງຂອງພັກ ແຕ່ຂັ້ນສູນກາງລົງເຖິງຂັ້ນຮາກຖານ,</u> ໃນທຸກຂົງເຂດການເມືອງ, ການທະຫານ, ເສດຖະກິດ, ວັດທະນະທຳ, ປະຕິບັດຫຼັກ ການນຳພາຮອບດ້ານ, ລວມສູນ, ເປັນເອກະພາບ ຂອງພັກ. ການນຳພາ ຂອງພັກເປັນປັດໄຈຕັດສິນໄຊຊະນະ, ແຕ່ມັນຈະໄດ້ຮັບການປະຕິບັດ ໃຫ້ປະກົດເປັນຈິງໄດ້ ກໍ່ຕໍ່ເມື່ອມັນຜ່ານລະບົບການຈັດຕັ້ງ ຂອງຕົນໃນທຸກຂັ້ນ, ທຸກຂະແໜງການ ແລະ ໃນທຸກກຳລັງປະຕິວັດ,ບ່ອນໃດມີຂະບວນການ

ມະຫາຊົນຢູ່ ບ່ອນນັ້ນກໍ່ຕ້ອງມີການຈັດຕັ້ງຂອງພັກເປັນຜູ້ນຳພາ; ມີແຕ່ເຮັດຄືແນວນັ້ນພັກຈຶ່ງຈະຮັບປະກັນ ໃຫ້ທຸກແນວທາງ, ແຜນນະໂຍບາຍ, ນະໂຍບາຍຂອງຕົນໄດ້ຮັບການປະຕິບັດ ຢ່າງຖືກຕ້ອງ ແລະ ທຸກຕ້ອງໄດ້, ແລະກໍ່ມີແຕ່ເຮັດຄືແນວນັ້ນ ຈຶ່ງຈະສາມາດລະດົມ ແລະປະສານສົມທົບທຸກຄວາມພະຍາຍາມຂອງທຸກງກຳລັງ, ທຸກຂະແໜງການໃນອົງເຂດຕ່າງກັນ ແລະທຸກທ້ອງຖິ່ນໃນທົ່ວປະເທດເຂົ້າໃສ່ການປະຕິບັດແນວທາງແຜນນະໂຍບາຍຂອງພັກ ໃຫ້ປະກົດເປັນຈິງໄດ້.

ນອກຈາກນັ້ນ, ບັນຫາຂໍກະແຈເພື່ອຮັກສາ ແລະເພີ່ມທະວີການນຳພາຂອງພັກ ແມ່ນຕ້ອງເອົາໃຈໃສ່ຈັດວຽກງານປັບປຸງ ແລະກໍ່ສ້າງພັກຢ່າງເປັນປະຈຳ, ຮັບປະກັນການເຮັດໃຫ້ໂຄງຮ່າງການຈັດຕັ້ງທັງໝົດຂອງ ຕົນແຕ່ຂັ້ນອົງການນຳສູງສຸດລົງເຖິງການຈັດຕັ້ງຂັ້ນຮາກຖານ ໄດ້ຮັບການປັບປຸງບູລະນະຢູ່ສະເໝີ. ຢາກເຮັດໄດ້ຄືແນວນັ້ນຕ້ອງສຶກສາອົບຮົມເຊີດຊູລັກສະນະຊົນຊັ້ນ ແລະລັກສະນະນຳໜ້າຂອງສະມາຊິກພັກໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ, ສ້າງຖັນແຖວພະນັກງານທີ່ມີຫຼັກໝັ້ນແນວຄິດ ອັນໜັກແໜ້ນ ແລະມີຄວາມສາມາດນຳພາ, ຈັດຕັ້ງປະຕິບັດທຸກແນວທາງ

ນະໂຍບາຍຂອງພັກ, ຍົກສູງຄຸນນະພາບໃນທຸກດ້ານຂອງໜ່ວຍພັກ ແລະອົງຄະນະພັກພື້ນຖານຢ່າງບໍ່ລົດລະ, ອອກແຮງປັບປຸງບູລະນະຄະນະພັກທຸກຂັ້ນ, ຮັກສາແໜ້ນ ຫຼັກການ ແລະລະບອບການນຳພາເປັນຄະນະ, ຍົກສູງຈິດໃຈຕິຊົມຕົນເອງ ແລະຕິຊົມກັນ ເພື່ອເພີ່ມທະວີຄວາມສາມັກຄີເປັນເອກະພາບໃນພັກ, ເຮັດໃຫ້ພັກນັບມື້ນັບແໜ້ນແກ່ນເຂັ້ມແຂງ, ເຮັດໃຫ້ພະນັກງານສະມາຊິກພັກນັບມື້ນັບກ້າວໜ້າ.

× ×

×

ບັນດາບົດຮຽນຕົ້ນຕໍດັ່ງກ່າວມາເທິງນັ້ນ ແມ່ນຖອດມາຈາກພຶດຕິກຳແຫ່ງການຕໍ່ສູ້ອັນກ້າແກ່ນ ອົງອາດຂອງປະຊາຊົນບັນດາຊົນຊາດໃນປະເທດເຮົາໃນ ໓໐ ກວ່າປີ ທີ່ຜ່ານມາ ພາຍໃຕ້ການນຳພາຂອງພັກ. ບົດຮຽນເຫຼົ່ານັ້ນແມ່ນບົດຮຽນກ່ຽວກັບຍຸດທະສາດ, ຍຸດໂທບາຍ, ວິທີປະຕິວັດຂອງລັດທິມາກ-ເລນິນ ທີ່ໄດ້ຮັບການໝູນໃຊ້ເຂົ້າໃນເງື່ອນໄຂຕົວຈິງຂອງການປະຕິວັດປະເທດເຮົາ ເຊິ່ງເປັນປະເທດເມືອງຂຶ້ນ ແລະເຄິ່ງສັກດີນາ, ເປັນປະເທດກະສິກຳຫຼ້າຫຼັງ, ດອຍພັດທະນາ, ພົນລະເມືອງໜ້ອຍ, ມີຫຼາຍຊົນຊາດ, ການພົນແຍກຊົນຊັ້ນຍັງບໍ່ທັນເລິກເຊິ່ງ, ສະຕິ

ປະເທດຊາດເປັນເອກະພາບອັນໜຶ່ງອັນດຽວຍັງບໍ່ທັນສູງ.
ໂດຍຈົງຮັກພັກດີຕໍ່ບັນດາ ຫຼັກມູນ ຂອງ ລັດທິມາກ-ເລນິນ
ແລະໂດຍເລີ່ມຈາກຈຸດພິເສດຂອງປະເທດຊາດ, ຈາກສະ
ພາບແວດລ້ອມແຫ່ງການຕໍ່ສູ້ຂອງການປະຕິວັດປະເທດເຮົາ,
ໃນສິ່ງແວດລ້ອມຂອງການປະຕິວັດຂອງບັນດາປະເທດ ໃນ
ອິນດູຈີນ ແລະການປະຕິວັດໂລກ, ພັກເຮົາໄດ້ສົມທົບການ
ຄົ້ນຄ້ວາ, ຊອກເຫັນດ້ວຍຕົນເອງ ກັບການຮໍ່າຮຽນບົດ
ຮຽນແຫ່ງການຂົນຂວາຍແລະຕໍ່ສູ້ປະຕິວັດຂອງບັນດາ ພັກ
ອ້າຍນ້ອງຢ່າງມີການເລືອກເຟັ້ນເພື່ອແກ້ໄຂບັນຫາຕ່າງໆ
ກ່ຽວກັບຍຸດທະສາດ, ຍຸດໂທບາຍ, ວິທີປະຕິວັດຂອງປະ
ເທດເຮົາ ແລະກໍ່ໄດ້ຮັບຜົນສໍາເລັດອັນຈົບງາມ. ໂດຍຍົກ
ສູງຄັນທຸງຍຸດທະສາດຂອງການປະຕິວັດຊາດ- ປະຊາທິປະ
ໄຕ ດ້ວຍບັນດາເນື້ອໃນອັນຖືກຕ້ອງ ແທດເໝາະກັບສະ
ພາບການສັງຄົມຂອງປະເທດເຮົາ, ພັກເຮົາໄດ້ສ້າງກອນ
ກໍາລັງພັນທະພາບກໍາມະກອນ-ຊາວນາ ອັນແໜ້ນແກ່ນ
ເປັນກອງກໍາລັງຫຼວງອັນໃຫຍ່ໂຕຂອງການປະຕິວັດ, ແລະ
ບົນພື້ນຖານດັ່ງກ່າວນັ້ນ ໄດ້ເຮັດໃຫ້ທຸກໆ ຊົນຊາດ, ຊົນ
ເຜົ່າ, ປະຊາຊົນທຸກຊັ້ນຄົນໃນທົ່ວປະເທດສາມັກຄີກັນໃນ
ແນວໂຮມເອກະພາບແຫ່ງຊາດອັນກວ້າງຂວາງ ພາຍໃຕ້

ການນຳພາຂອງພັກ. ໂດຍກຳແໜ້ນທັດສະນະກຳລັງຮຸນແຮງປະຕິວັດ ແລະແນວຄິດຍຸດທະສາດບຸກ, ພັກເຮົາໄດ້ອອກແຮງສ້າງກຳລັງປະກອບອາວຸດປະຊາຊົນ ແລະກຳລັງການເມືອງຂອງມະຫາຊົນໄດ້ຢ່າງເຂັ້ມແຂງ, ໝູນໃຊ້ວິທີປະຕິວັດຢ່າງຖືກຕ້ອງ ໂດຍສົມທົບການຕໍ່ສູ້ດ້ວຍອາວຸດກັບການຕໍ່ສູ້ດ້ວຍການເມືອງ, ສົມທົບສົງຄາມປະຊາຊົນ ກັບການລຸກຮືຂຶ້ນຂອງມະຫາຊົນ, ສົມທົບການຕໍ່ສູ້ດ້ວຍກຳລັງຮຸນແຮງກັບການຕໍ່ສູ້ເຂົ້າຮ່ວມປະສົມກັບຝ່າຍກົງກັນຂ້າມ ເພື່ອຍາດເອົາໄຊຊະນະເທື່ອລະກ້າວ, ໂຄ່ນລົ້ມສັດຕູເປັນເທື່ອລະພາກສ່ວນ ກ້າວຂຶ້ນໂຄ່ນລົ້ມສັດຕູທັງໝົດ, ຍາດເອົາໄຊຊະນະອັນສົມບູນ. ໂດຍເຊື່ອມຊຶມຈິດໃຈສາກົນ ກຳມາຊີບອັນແທ້ຈິງ, ບົນພື້ນຖານແຫ່ງຄວາມສາມັກຄີຮ່ວມສຳພັນສູ້ຮົບກັບການປະຕິວັດຂອງ ປະຊາຊົນ ສອງປະເທດຫວຽດນາມ ແລະ ກຳປູເຈຍອ້າຍນ້ອງ ແລະຍາດແຍ່ງທຸກການຊ່ວຍເຫຼືອຂອງສາກົນ,ພັກເຮົາໄດ້ສົມທົບຜົນປະໂຫຍດຂອງຊາດກັບຜົນປະໂຫຍດຂອງການປະຕິວັດໂລກ, ສົມທົບ ກຳລັງແຮງຂອງຊາດກັບກຳລັງແຮງ ຂອງຍຸກສະໄໝຢ່າງຖືກຕ້ອງ ເພື່ອສ້າງເປັນກຳລັງແຮງສັງລວມອັນໃຫຍ່ຫຼວງ, ຕີເອົາຊະນະສັດຕູຜູ້ມາຮຸກຮານທຸກໂຕ.

ດ້ວຍແນວທາງຍຸດທະສາດ, ຍຸດໂທບາຍ, ແລະວິທີປະຕິວັດດັ່ງກ່າວມາເທິງນັ້ນ ພັກເຮົາໄດ້ເຮັດໃຫ້ການປະຕິວັດຊາດ- ປະຊາທິປະໄຕປະຊາຊົນຢູ່ໃນປະເທດເຮົາສຳເລັດຜົນຢ່າງສົມບູນ, ໄຂສັງກາດໃໝ່ໃຫ້ແກ່ຊາດເຮົາ, ສັງກາດແຫ່ງສັນຕິພາບ, ເອກະລາດ, ປະຊາທິປະໄຕ, ກ້າວຂຶ້ນສັງຄົມນິຍົມ. ຈາກພຶດຕິກຳແຫ່ງໄຊຊະນະອັນຍິ່ງໃຫຍ່ນັ້ນ ແລະຜ່ານບົດຮຽນແຫ່ງການຕໍ່ສູ້ອັນຍືດເຍື້ອຍາວນານຂອງຕົນ, ປະຊາຊົນບັນດາຊົນຊາດໃນທົ່ວປະເທດເຮົາໄດ້ຮັບຮູ້ຢ່າງຈະແຈ້ງວ່າ ຜູ້ນຳທີ່ແທ້ຈິງຂອງຊາດເຮົາ ແລະຜູ້ຈັດຕັ້ງທຸກໄຊຊະນະຂອງການປະຕິວັດ ປະເທດເຮົາແມ່ນພັກປະຊາຊົນປະຕິວັດລາວ, ພັກທີ່ມີກຽດສະຫງ່າຂອງພວກເຮົາ, ໂດຍມີຄວາມທະນົງໃຈຢ່າງລົ້ນເຫຼືອ ແລະເຊື່ອໝັ້ນຢ່າງຕາຍໃຈຕໍ່ພັກເຮົາ, ປະຊາຊົນເຮົາໄດ້ສາມັກຄີເປັນຈິດໜຶ່ງໃຈດຽວກັນຢູ່ອ້ອມຂ້າງພັກ ແລະຕັດສິນໃຈຕໍ່ສູ້ຈົນສຸດຊົ່ວຊີວິດ ພາຍໃຕ້ລົມຫຼວງນຳພາອັນສະຫງ່າງາມຂອງພັກ. ກຳລັງແຮງຂອງຊາດໜຶ່ງທີ່ກ້າແກ່ນ, ເດັດຊາດບໍ່ອ່ອນຍອມ, ເຄີຍໄດ້ຕີເອົາຊະນະພວກຈັກກະພັດ ຜູ້ມາຮຸກຮານທີ່ແສນຮ້າຍກາດມາແລ້ວ, ທັງມີການນຳພາຂອງພັກມາກ-ເລນິນທີ່ແທ້ຈິງນັ້ນ ໃນຊູມນີ້ ແນວໃດ ກໍ່ຈະສາ

ມາດເອົາຊະນະຄວາມທຸກຍາກ, ຄວາມຫຼ້າຫຼັງ ເພື່ອສ້າງປະເທດຊາດໃຫ້ວັດທະນາຖາວອນ, ສ້າງຊີວິດອັນສົມບູນພູນສຸກໄດ້ຢ່າງແນ່ນອນ.

ການປະຕິວັດປົດປ່ອຍຊາດໃນປະເທດເຮົາ ໄດ້ຮັບໄຊຊະນະຢ່າງສົມບູນແລ້ວ, ແຕ່ບັນດາບົດຮຽນດັ່ງກ່າວມາເທິງນັ້ນ ກໍ່ຍັງຮັກສາຄວາມໝາຍແຫ່ງພຶດຕິກຳ ແລະຄວາມມີຊີວິດຊີວາຂອງມັນໄວ້ດັ່ງເດີມ. ໂດຍສືບທອດບັນດາບົດຮຽນທີ່ໄດ້ນຳຜົນສຳເລັດມາໃຫ້ພັກເຮົາໃນພາລະກິດປົດປ່ອຍຊາດນັ້ນ ແນວໃດພວກເຮົາກໍ່ຈະສາມາດແກ້ໄຂບັນຫາໃໝ່ທີ່ການຕໍ່ສູ້ປະຕິວັດໄດ້ຕັ້ງຂຶ້ນຢ່າງສຳເລັດຜົນ, ເພື່ອສຳເລັດພາລະກິດປົກປັກຮັກສາ ແລະກໍ່ສ້າງປະເທດຊາດໄດ້ຢ່າງສະຫງ່າງາມ, ຮັບປະກັນຄວາມເປັນເອກະລາດ ແລະຄວາມວັດທະນາຖາວອນຂອງປິຕຸພູມທີ່ແສນຮັກ ຂອງພວກເຮົາ.

** ** **

** **

**

ພາກ ທີ່ ສາມ

ກໍ່ສ້າງປະເທດລາວ ສັນຕິພາບ, ເອກະລາດ, ເອກະພາບ ແລະ ສັງຄົມນິຍົມທີ່ຮັ່ງມີເຂັ້ມແຂງ.

ໃນໄລຍະ ໑໐ ປີ ນັບແຕ່ນັ້ນໄດ້ຮັບການປົດປ່ອຍມານີ້, ພາຍໃຕ້ລະບອບສາທາລະນະລັດ ປະຊາທິປະໄຕປະຊາຊົນ ໂດຍແມ່ນພັກເຮົາເປັນຜູ້ນຳພາ ແລະດ້ວຍລັກສະນະອັນດີເລີດຂອງລະບອບໃຫມ່, ພຽງແຕ່ເວລາອັນສັ້ນໆ ເທົ່ານັ້ນ ໂສມຫນ້າຂອງປະເທດຊາດເຮົາ ໄດ້ມີການປ່ຽນແປງຢ່າງໃຫຍ່ຫຼວງຫຼາຍປະການ. ພວກເຮົາໄດ້ທັບມ້າງກົນອຸບາຍອັນມືດມົນແລະໂຫດຫ້ຽມຂອງສັດຕູທຸກໂຕໃຫປະລາໄຊໄປ, ປົກປັກຮັກສາແນວທາງເອກະລາດ, ເປັນເຈົ້າຕົນເອງອັນຖືກຕ້ອງຂອງພັກເຮົາ, ປົກປັກຮັກສາເອກະລາດ, ອະທິປະໄຕຂອງຊາດໄວ້ໄດ້ຢ່າງຫນັກແຫນ້ນ ແລະພວມຢືນຫມັ້ນໃນປ້ອມດ່ານຫນ້າສັງຄົມນິຍົມຢູ່ພາກພື້ນອາຊີອາຄະເນທີ່ສຳຄັນນີ້. ພວກເຮົາໄດ້ມີບົດຮຽນຈຳນວນຫນຶ່ງໃນພຶດຕິກຳປະ

ຕິວັດສັງຄົມນິຍົມ, ໄດ້ກຳນົດແນວທາງໜ້າທີ່ພາຍໃນແລະຕ່າງປະເທດໃຫ້ເປັນອັນລະອຽດຕື່ມອີກ, ໄດ້ລົງມືດັດສ້າງແລະກໍ່ສ້າງເສດຖະກິດແຫ່ງຊາດ, ຂະຫຍາຍການສຶກສາວັດທະນະທຳ, ເອົາໃຈໃສ່ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ ແລະເຣັດວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບເປັນຢ່າງດີ. ພາລະກິດກໍ່ສ້າງ ແລະປົກປັກຮັກສາປະເທດຊາດອັນແສນຮັກ ແລະຫວງແຫນຂອງພວກເຮົາ ນັບມື້ ນັບມີຄວາມກ້າວໜ້າໃໝ່ ແລະພວມກ້າວຂຶ້ນ ດ້ວຍລະດັບໃໝ່ ແລະ ເຖິງວ່າ ຍັງມີຄວາມຫຍຸ້ງຍາກສັບສົນຢູ່ຫຼາຍປະການກໍ່ຈິງ, ແຕ່ເສັ້ນທາງກ້າວຂຶ້ນສັງຄົມນິຍົມຂອງພວກເຮົາໄດ້ເປີດອອກຢ່າງກວ້າງຂວາງແລ້ວ. ສັງກາດໃໝ່ທີ່ຮຸ່ງເຮືອງເຫຼືອງເຫຼື້ອມທີ່ສຸດ-ສັງກາດແຫ່ງການກໍ່ສ້າງປະເທດລາວສັນຕິພາບ, ເອກະລາດ, ເອກະພາບ ແລະສັງຄົມນິຍົມທີ່ຮັ່ງມີເຂັ້ມແຂງ ໄດ້ເລີ່ມຕົ້ນແລ້ວ.

7. ກ້າວຂຶ້ນສັງຄົມນິຍົມ ແມ່ນເສັ້ນທາງທີ່ຕ້ອງເປັນໄປຂອງການປະຕິວັດປະເທດເຮົາ.

ພາຍໃຕ້ແສງສະຫວ່າງຂອງລັດທິມາກ - ເລນິນ, ໂດຍໃຈ້ແຍກຢ່າງຮອບດ້ານສະພາບການຕົວຈິງທາງສັງຄົມ ແລະທ່າຂະຫຍາຍຂອງການປະຕິວັດປະເທດເຮົາ, ກອງປະຊຸມໃຫຍ່ເທື່ອທີ່ 4 ຂອງພັກເຮົາໄດ້ວາງໜ້າທີ່ພື້ນຖານຄື "ກຽມເງື່ອນໄຂທຸກຢ່າງທີ່ຈຳເປັນ ເພື່ອກ້າວຂຶ້ນສັງຄົມນິຍົມໂດຍກົງ ໂດຍບໍ່ຜ່ານເສັ້ນທາງຂະຫຍາຍຕົວແບບທຶນນິຍົມ..."[1]. ບົນພື້ນຖານນັ້ນ, ກອງປະຊຸມສູນກາງຫຼາຍຄັ້ງທີ່ເປີດຂຶ້ນພາຍຫຼັງກອງປະຊຸມໃຫຍ່ ຂອງພັກ ໄດ້ຄົ້ນຄວ້າ ແລະ ເພີ່ມເຕີມແນວທາງທົ່ວໄປ ກໍຄືໜ້າທີ່ລະອຽດ ຂອງການປະຕິວັດປະເທດເຮົາໃນໄລຍະໃໝ່ໃຫ້ສົມບູນຂຶ້ນເທື່ອລະກ້າວ. ແນວທາງຂອງກອງປະຊຸມໃຫຍ່ຄັ້ງທີ 4 ແລະ ບັນດາມະຕິຂອງສູນກາງພັກເຮົາຫຼັງກອງປະຊຸມໃຫຍ່ໄດ້ສີ່ງແສງຢ່າງຖືກຕ້ອງ ຄວາມຮຽກຮ້ອງຕ້ອງການ ພາວະວິໄສ ຂອງການປະຕິວັດປະເທດເຮົາ, ຕອບສະໜອງຄວາມມຸ່ງມາດປາຖະໜາອັນເລິກເຊິ່ງຂອງປະຊາຊົນບັນດາຊົນຊາດ

---

1. ໂອງການການເມືອງຂອງກອງປະຊຸມໃຫຍ່ຄັ້ງທີສອງຂອງພັກປະຊາຊົນປະຕິວັດລາວ, ປີ 1972.

ເຣົາ ແລະສອດຄ່ອງທີ່ສຸດກັບຈຸດພິເສດ ແລະເນື້ອໃນຂອງຍຸກສະໄຫມໃຫມ່

ພັດຕັກກຳຂອງການປະຕິວັດໂລກໃນໄລຍະກວ່າເຄິ່ງສັດຕະວັດ ເປັນຕົ້ນນັບແຕ່ສະໄຫມຫຼັງສົງຄາມໂລກຄັ້ງທີ່ ໒ ມານີ້ ໄດ້ຢັ້ງຢືນການພັງທະລາຍທີ່ຫຼີກລ່ຽງບໍ່ໄດ້ຂອງລະບົບຈັກກະພັດນິຍົມ ແລະລະບົບເມືອງຂຶ້ນ, ສະໄຫມແຫ່ງກະແສສູງຂອງການປະຕິວັດສັງຄົມນິຍົມຢູ່ໃນໂລກ. ລັດທິສັງຄົມນິຍົມໄດ້ອອກຈາກກອບເຂດຂອງປະເທດຫນຶ່ງ ກາຍມາເປັນລະບົບແຫ່ງໂລກອັນເຂັ້ມແຂງ; ດ້ວຍໄຊຊະນະອັນມະຫາສານຂອງບັນດາປະເທດສັງຄົມນິຍົມໃນ ທຸກຂົງເຂດ, ເດັ່ນຊັດກວ່າຫມູ່ແມ່ນຄວາມເຂັ້ມແຂງແຮງກາໃນທຸກ ດ້ານຂອງສະຫະພາບໂຊວຽດ, ຄວາມຕັ້ງຫນ້າພະຍາຍາມຢ່າງໃຫຍ່ຫຼວງຂອງຫວຽດນາມ, ສາທາລະນະລັດປະຊາທິປະໄຕເຢຍລະມັນ, ກູບາ... ໃນປ້ອມດ່ານຫນ້າສັງຄົມນິຍົມຢູ່ທະວີບອາຊີ, ຢູໂລບ ແລະອາເມລິກາລາຕິນນັ້ນ ລະບົບສັງຄົມນິຍົມໄດ້ເສີມຂະຫຍາຍ ແລະ ພວມເສີມຂະຫຍາຍຢ່າງບໍ່ຢຸດຢັ້ງຊຸມປະໂຫຍດເປັນ " ປັດໃຈຕັດສິນການຂະຫຍາຍຕົວຂອງສັງຄົມມະນຸດ ", ເປັນແວ່ນແຍງອັນໃສແຈ້ງ ແລະເປັນຄວາມມຸ່ງຫວັງອັນແຮງກ້າຂອງມະນຸດຜູ້ກ້າວຫນ້າ

ທັງມວນ. ຈັກກະພັດນິຍົມ ແລະອິດທິກຳລັງປະຕິການສາ ກົນເຖິງວ່າພວມມ້າງເພທຳລາຍ, ແບ່ງແຍກ ແລະໂຈມຕີ ລະບົບສັງຄົມນິຍົມຢ່າງປ່ວງບ້າກໍ່ຕາມ, ແຕ່ບໍ່ມີອຸປະສັກໃດ ໃດ ຫຼືອິດທິກຳລັງມືດມົນໃດໆ ຈະສາມາດຕ່າວປີ້ນກົງລໍ້ປະ ຫວັດສາດ ແລະ ສະກັດກັ້ນການຂະຫຍາຍຕົວຂອງກະແສ ຟອງປະຕິວັດສັງຄົມນິຍົມໄດ້. ກົງກັນຂ້າມ, ລະບົບສັງຄົມ ນິຍົມກໍ່ຍັງຄົງໄດ້ຮັບການປັບປຸງ ແລະຂະຫຍາຍຕົວຢ່າງບໍ່ ຢຸດຢັ້ງ, ໄຊຊະນະຂອງການປະຕິວັດປະເທດອັງໂກລາ, ໂມຊຳບິກ,ເອຕີໂອປີ,ເຢແມນໃຕ້,ອັບການິສະຖານ ... ໃນໄລຍະທີ່ຜ່ານມານີ້ ໄດ້ຊີ້ໃຫ້ເຫັນຢ່າງຈະແຈ້ງແລ້ວ.

ພິເສດໃນມໍ່ໆນີ້, ພຽງແຕ່ໃນໄລຍະອັນສັ້ນໆ ເທົ່ານັ້ນ ປະຊາຊົນປະຕິວັດກຳປູເຈຍ ພາຍໃຕ້ການນຳພາຂອງ ແນວໂຮມສາມັກຄີກູ້ຊາດ ກຳປູເຈຍກໍ່ໄດ້ຮັບໄຊຊະນະອັນ ມະຫັດສະຈັນ, ທັບມ້າງຢ່າງສິ້ນເຊີງ ອິດທິກຳລັງອັນມືດ ມົນຂອງກຸ່ມປະຕິການຊຸນເສິກ ປົນປົດ-ອຽງສາລີ,ປົດປ່ອຍ ປະເທດຊາດຢ່າງສົມບູນ, ກູ້ເອົາປະເທດຊາດຂອງ ຕົນ ອອກຈາກໄພອັນຕະລາຍແຫ່ງການດັບສູນເຊື້ອຊາດ ແລະ ພາການປະຕິວັດກ້າວຂຶ້ນຕາມເສັ້ນທາງສັງຄົມນິຍົມ. ເຫດ ການປະຫວັດສາດອັນຍິ່ງໃຫຍ່ດັ່ງກ່າວນັ້ນໄດ້ຢັ້ງຢືນອີກເທື່ອ

ໜຶ່ງ ທ່າອ່ຽງຂະຫຍາຍຕົວທີ່ຕ້ອງເປັນໄປຂອງຍຸກສະໄໝ ໂດຍບໍ່ມີອິດທິກຳລັງປະຕິການໃດໆ ຈະມາສະກັດກັ້ນໄວ້ໄດ້.

ໄປຄຽງຄູ່ ແລະສະໜິດຕິດແໜ້ນກັບກະແສຟອງ ປະຕິວັດສັງຄົມນິຍົມ, ຂະບວນການປົດປ່ອຍຊາດໃນເກືອບ ທຸກປະເທດຢູ່ທະວີບອາຊີ, ອາຟະລິກກາ ແລະອາເມລິກາ ລາຕິນໄດ້ລຸກຂຶ້ນຢ່າງແຂງແຮງດ້ວຍຂະໜາດ ອັນກວ້າງ ຂວາງເລິກເຊິ່ງ ອັນໄດ້ທັບມ້າງລະບົບຜູກຂາດເມືອງຂຶ້ນ ໃຫ້ພັງທະລາຍເປັນສ່ວນໃຫຍ່ ແລະພວມສືບຕໍ່ຕໍ່ສູ້ຢ່າງເດັດ ດ່ຽວ ແນໃສ່ລົບລ້າງຢ່າງເຖິງຖອງລັດທິລ່າເມືອງຂຶ້ນເກົ່າ ແລະໃໝ່ ແລະບັນດາອິດທິກຳລັງປະຕິການ ທີ່ເປັນລູກມື ຂອງພວກຈັກກະພັດ, ເພື່ອເອກະລາດແຫ່ງຊາດ ແລະ ກ້າວຂຶ້ນກໍ່ສ້າງ ແລະດັດສ້າງສັງຄົມດ້ວຍຫຼາຍຮູບຫຼາຍແບບ ຕາມທິດຂະຫຍາຍຕົວທີ່ບໍ່ແມ່ນທຶນນິຍົມ.

ໂດຍໄດ້ຮັບການປຸກລະດົມຢ່າງໃຫຍ່ຫຼວງ ຂອງສັງ ຄົມນິຍົມ ແລະ ຕໍ່ໜ້າວິກິດການຊຸດໂຊມອັນຮ້າຍແຮງບໍ່ມີ ທາງອອກຂອງທຶນນິຍົມນັ້ນ, ຂະບວນການຕໍ່ສູ້ຢ່າງ ແຂງ ແຮງທີ່ບໍ່ເຄີຍມີມາຈັກເທື່ອຂອງມະຫາຊົນກຳມະກອນ ແລະ ປະຊາຊົນຜູ້ອອກແຮງງານນັບເປັນລ້ານໆ ຄົນໃນບັນດາປະ ເທດຈັກກະພັດນິຍົມ ພວມສຸມປາຍຫອກເຂົ້າໃສ່ກຸ່ມ ຄອບ

ຄອງປະຕິການ ແລະພວກນາຍທຶນຜູກຂາດລັດ ແລະນະໂຍບາຍຜູກທາດ, ກໍ່ສົງຄາມຂອງພວກເຂົາ ດ້ວຍຄຳຂວັນຕໍ່ສູ້ເພື່ອສັນຕິພາບ, ປະຊາທິປະໄຕ ແລະ ກ້າວໜ້າທາງສັງຄົມ; ກຳລັງເຫຼົ່ານັ້ນເປັນກຳລັງອັນໃຫຍ່ໂຕເຂັ້ມແຂງພວມບຸກໂຈມຕີໂດຍກົງເຂົ້າໃສ່ຈັກກະພັດນິຍົມຢູ່ກະໂຕເຮືອນຮັງຂອງພວກເຂົາ, ສ້າງເງື່ອນໄຂດຳເນີນການປະຕິວັດ ສັງຄົມນິຍົມໃຫ້ສຳເລັດຜົນເປັນກ້າວໆ.

ເປັນອັນຈະແຈ້ງວ່າ ມັນແຕກຕ່າງຢ່າງຂາດຕົວກັບທັດສະນະອັນຜິດພາດຂອງລັດທິສວຍໂອກາດປະເພດຕ່າງໆ ແລະອິດທິກຳລັງປະຕິການສາກົນທີ່ຕັ້ງແກ່ງບິດເບືອນ ລັດທິມາກ-ເລນິນ, ປະຕິເສດການຄົງຕົວ ແລະບິດບາດປະຫວັດສາດຂອງລະບົບສັງຄົມນິຍົມ. ກະແສຟອງປະຕິວັດອັນຍິ່ງໃຫຍ່ທັງ ສີ ທີ່ໄດ້ເວົ້າມາເທິງນັ້ນ, ພ້ອມກັບຂະບວນສັນຕິພາບ ແລະກ້າວໜ້າອັນກວ້າງໃຫຍ່ຂອງໂລກ ໄດ້ບຸກໂຈມຕີ ແລະພວມບຸກໂຈມຕີເຂົ້າໃສ່ຈັກກະພັດນິຍົມ ແລະບັນດາອິດທິກຳລັງປະຕິການຢ່າງແຂງແຮງລຽນຕິດຈາກທຸກທິດ ດ້ວຍຫຼາຍຮູບຫຼາຍສີທີ່ອຸດົມຮັ່ງມີ, ຕີພວກເຂົາໃຫ້ຖອຍໄປເທື່ອລະກ້າວ, ໂຄ່ນລົ້ມພວກເຂົາເທື່ອລະພາກສ່ວນ, ເຮັດໃຫ້ພວກເຂົານັບມື້ນັບຖືກຊຸດໂຊມ ແລະ ໂດດດ່ຽວ,

ເຮັດໃຫ້ການຊັ່ງຊາກຳລັງລະຫວ່າງກຳລັງປະຕິວັດ ກັບກຳລັງຝືນປະຕິວັດຢູ່ໃນໂລກມີການປ່ຽນແປງນັບມື້ນັບເປັນຜົນດີໃຫ້ແກ່ລັດທິສັງຄົມນິຍົມ, ດູດດຶງເອົາມວນມະນຸດນັບເປັນພັນລ້ານຄົນໃຫ້ນັບມື້ນັບເດີນເຂົ້າສູ່ວົງໂຄຈອນສັງຄົມນິຍົມ, ຊຸກຍູ້ມວນມະນຸດຜູ້ກ້າວໜ້າໃຫ້ກ້າວຂຶ້ນສຳເລັດ ບາດກ້າວຂ້າມຜ່ານຈາກທຶນນິຍົມຂຶ້ນສູ່ສັງຄົມນິຍົມ ໃນຂອບເຂດທົ່ວໂລກ. ນັ້ນແມ່ນຈຸດພິເສດ ແລະເນື້ອໃນຕົ້ນຕໍຂອງຍຸກສະໄໝພວກເຮົາ.

ດັ່ງທີ່ເລນິນໄດ້ຊີ້ບອກ: "ເມື່ອສຳເລັດການປະຕິວັດປະຊາທິປະໄຕແລ້ວ ພວກເຮົາຈະເລັ່ງຖືກຕາມກຳລັງຂອງພວກເຮົາເອງ, ຕາມກຳລັງຂອງຊົນຊັ້ນກຳມາຊີບທີ່ຕື່ນຕົວ ແລະມີການຈັດຕັ້ງ ເພື່ອກ້າວຂຶ້ນຕາມເສັ້ນທາງປະຕິວັດສັງຄົມນິຍົມໂລດ. ພວກເຮົາມີເຈດຈຳນົງເຮັດການປະຕິວັດຢ່າງບໍ່ຢຸດຢັ້ງ. ພວກເຮົາບໍ່ຢຸດຢູ່ພໍເຄິ່ງກາງເປັນອັນຂາດ. . ."[1] ໃນສິ່ງແວດລ້ອມປະຫວັດສາດ ຂອງຍຸກສະໄໝປັດຈຸບັນ, ຢູ່ໃນປະເທດທີ່ລະດັບເສດຖະກິດ-ສັງຄົມຂະຫຍາຍຕົວບໍ່ທັນສູງ, ແຕ່ກຳມະກອນ-ຊາວນາ ຫາກມີຄວາມຕື່ນຕົວດຳລົງບົດບາດຕັດສິນໃນກຳລັງປົດປ່ອຍຊາດ,

1. ເລນິນ, ລົບຊຸດ, ພາສາຫວຽດນາມ, ສຳນັກພິມຈຳໜ່າຍ ''ຊືເທີດ'', ຮ່າໂນ້ຍ, ພິມເທື່ອທີ 4, ເຫຼັ້ມ 31. ໜ້າ 186-187.

ມີພັກມາກ-ເລນິນທີ່ແທ້ຈິງ ກຳສິດນຳພາການປະຕິວັດແລ້ວ ໄຊຊະນະແຫ່ງການປະຕິວັດຊາດ-ປະຊາທິປະໄຕຈຶ່ງບໍ່ພຽງ ແຕ່ເປັນໄຊຊະນະຂອງປະຊາຊົນ ຕໍ່ລັດທິຈັກກະພັດ ແລະ ລະບອບສັກດີນາເທົ່ານັ້ນ, ຫາກຍັງເປັນໄຊຊະນະ ການ ເມືອງຂອງຊົນຊັ້ນກຳມະກອນ ຕໍ່ຊົນຊັ້ນນາຍທຶນ ຢູ່ໃນປະ ເທດ, ໄຊຊະນະຂອງລັດແບບໃຫມ່ອີກດ້ວຍ. ອຳນາດ ການປົກຄອງປະຕິວັດ ຂອງກຳມະກອນ-ຊາວນາເຊິ່ງແມ່ນ ຊົນຊັ້ນກຳມະກອນ ເປັນຜູ້ນຳພານັ້ນ ບໍ່ອາດຈະເມົາມົວ , ເພິງພໍໃຈຢຸດຢູ່ທີ່ໄຊຊະນະທີ່ຍາດເອົາເອກະລາດ, ປະຊາ ທິປະໄຕມາໄດ້, ຫາກແມ່ນຕ້ອງຫັນເຂົ້າສູ່ຫນ້າທີ່ປະຫວັດ ສາດ ຂອງຜະເດັດການກຳມາຊີບທັນທີ, ດຳເນີນການ ປະຕິວັດສັງຄົມນິຍົມ ແລະກໍ່ສ້າງສັງຄົມນິຍົມ ຕາມກົດເກນ ຂອງມັນແນໃສ່ ແກ້ໄຂບັນຫາ " ໃຜເອົາຊະນະໃຜ" ລະຫວ່າງສອງເສັ້ນທາງ ສັງຄົມນິຍົມ ກັບທຶນນິຍົມ ຢ່າງ ເຖິງຖອງ, ນຳເອົາສັງຄົມແລະຊາດກ້າວຂຶ້ນຕາມທິດ ຂະ ຫຍາຍຕົວພາວະວິໄສຂອງຍຸກສະໄຫມ.

ສະພາບແວດລ້ອມປະຫວັດສາດ ແລະວິວັດທະນາ ການຂອງການປະຕິວັດປະເທດເຮົາໃນຊູມນກບນອກເຫນືອ ໄປຈາກກົດເກນດັ່ງກ່າວນັ້ນ. ນັບແຕ່ໄດ້ຮັບພາລະບົດບາດ

ເປັນຜູ້ນຳພາການປະຕິວັດມານີ້ ພັກເຮົາໄດ້ເຊື່ອມຊຶມແນວຄິດອັນຍິ່ງໃຫຍ່ຂອງລັດທິມາກ-ເລນິນ ແລະເຫັນແຈ້ງ ທ່າຂະຫຍາຍຕົວທີ່ຕ້ອງເປັນໄປຂອງຍຸກສະໄຫມ, ກຳແຫນນຄວາມມຸ່ງມາດປາຖະຫນາອັນເລິກເຊິ່ງຂອງມະຫາຊົນແລ້ວໄດ້ຢືນຢັນແນວທາງຍຸດທະສາດຂອງການປະຕິວັດເຮົາແມ່ນ: "ດຳເນີນການປະຕິວັດຊາດ-ປະຊາທິປະໄຕໃຫ້ສຳເລັດຜົນໃນທົ່ວປະເທດແລະກ້າວຂຶ້ນເຮັດການປະຕິວັດສັງຄົມນິຍົມ, ກໍ່ສ້າງສັງຄົມນິຍົມ ແລະກອມມູນິດນິຍົມຢູ່ໃນປະເທດລາວຢ່າງມີໄຊ"[1]. ໂດຍກຳແຫນ້ນແນວທາງປະຕິວັດດັ່ງກ່າວນັ້ນ, ເຮົາຈູດຫມາຍ ຍາດແຍ່ງ ເອກະລາດ-ປະຊາທິປະໄຕຕິດພັນກັບ ຈຸດຫມາຍກ້າວຂຶ້ນ ສັງຄົມນິຍົມ, ສົມທົບຢ່າງຊຳນິຊຳນານ ຈິດໃຈຮັກຊາດອັນແທ້ຈິງ ກັບຈິດໃຈສາກົນກຳມາຊີບອັນສູງສົ່ງ, ພັກເຮົາແລະປະຊາຊົນເຮົາສາມາດເພີ່ມທະວີທ່າ ແລະກຳລັງປະຕິວັດໃນທຸກດ້ານ ຂອງຕົນຂຶ້ນໄດ້ຢ່າງບໍ່ຢຸດຢັ້ງ ແລະໄດ້ສຳເລັດຫນ້າທີ່ປະຕິວັດຊາດ-ປະຊາທິປະໄຕຢ່າງສະຫງ່າງາມ ແລະຖັດຈາກນັ້ນກໍ່ລົງມືຫັນທິເຂົ້າໃນພາລະກິດ ອັນສະຫງ່າລາສີເຊິ່ງແມ່ນ ພາລະກິດ

1. ໂຄງການການເມືອງຂອງກອງປະຊຸມໃຫຍ່ຄັ້ງທີສອງຂອງພັກປະຊາຊົນປະຕິວັດລາວ, ປີ 1972.

ກໍ່ສ້າງປະເທດລາວໃຫ້ມີສັນຕິພາບ, ເອກະລາດ, ເອກະພາບ ແລະສັງຄົມນິຍົມທີ່ຮັ່ງມີເຂັ້ມແຂງ.

ປະຈຸບັນນີ້, ປະເທດເຮົາໄດ້ມີເອກະລາດ, ເອກະພາບຢ່າງສົມບູນ, ປະຊາຊົນຜູ້ອອກແຮງງານ ບັນດາຊົນຊາດໄດ້ເປັນເຈົ້າຂອງປະເທດຊາດ. ແຕ່ປະເທດ ຊາດເຮົາຫາກໍ່ຫຼຸດພົ້ນ ຈາກການທຳລາຍຢ່າງໜັກໜ່ວງ ຂອງສົງຄາມຮຸກຮານຂອງຈັກກະພັດນິຍົມຕະຫຼອດໃນ ໓໐ ປີ, ລັດທິລ່າເມືອງຂຶ້ນ ແລະສັກດີນາຍັງປະຜົນຮ້າຍໄວ້ຢ່າງຄະນານັບບໍ່ໄດ້; ກຳລັງແຫ່ງການຜະລິດ ແລະ ການພົວພັນແຫ່ງການຜະລິດຂອງປະເທດເຮົາໃນດ້ານພື້ນຖານຍັງບໍ່ທັນມີການປ່ຽນແປງພໍປານໃດເທື່ອ, ແບບວິທີການຜະລິດທຶນນິຍົມໃນເຂດທົ່ງພຽງ, ຕົວເມືອງທີ່ໄດ້ຮັບການປົດປ່ອຍຕາມຫຼັງກໍ່ຄືແບບວິທີການຜະລິດຂອງສັກດີນາ ແລະກ່ອນສັກດີນາໃນເຂດຊົນນະບົດອັນກວ້າງໃຫຍ່ໄພສານນັ້ນ ໃນດ້ານພື້ນຖານແລ້ວກໍ່ຍັງຄົງຕົວຢູ່ຄືເກົ່າ; ແບບວິທີການຜະລິດສັງຄົມນິຍົມໄດ້ປະກົດຕົວຂຶ້ນແລ້ວ ແຕ່ຫາກຍັງອ່ອນນ້ອຍທີ່ສຸດ, ບໍ່ທັນມີຄວາມສາມາດພຽງພໍໃນການຄວບຄຸມຊີ້ນຳເສດຖະກິດແຫ່ງຊາດ; ແນວຄິດນິໄສເດີມຂອງການຜະລິດນ້ອຍ ກໍ່ຍັງເປັນອັນທົ່ວໄປຢູ່, ຮ່ອງຮອຍເສດເຫຼືອ ແລະຜົນສະທ້ອນ

ຫຼາຍສິ່ງຫຼາຍແນວຂອງລະບອບສັກດີນາ,ລ່າເມືອງຂຶ້ນກໍ່ຍັງບໍ່ທັນລົບລ້າງຢ່າງສົມເຊີງໄດ້ເທື່ອ; ຊີວິດການເປັນຢູ່ຂອງປະຊາຊົນບັນດາຊົນຊາດຍັງພົບຄວາມຫຍຸ້ງຍາກຫຼາຍ ປະການ,ແລະອັນທີ່ຕ້ອງເອົາໃຈໃສ່ແມ່ນບັນດາປັດໄຈທຶນນິຍົມຍັງເກີດຂຶ້ນແລະຂະຫຍາຍຕົວຕາມມັນເອງເປັນປະຈຳ ແຕ່ລະມື້ແຕ່ລະຍາມ. ສະພາບການນັ້ນ ພວມວາງລະດັບ ຄາດຫມາຍໃຫມ່ແລະຫນ້າທີ່ໃຫມ່ອັນຫນັກຫນ່ວງ ແລະຮີບດ່ວນທີ່ສຸດໃຫ້ພັກແລະປະຊາຊົນເຮົາຄື: ດັດສ້າງການພົວພັນແຫ່ງການຜະລິດແບບເກົ່າ, ກໍ່ສ້າງການພົວພັນແຫ່ງການຜະລິດແບບໃຫມ່,ຈັດຕັ້ງການຜະລິດຄືນໃຫມ່,ແບ່ງງານຄືນໃຫມ່, ກໍ່ສ້າງພື້ນຖານວັດຖຸແລະເຕັກນິກອັນຈຳເປັນ, ຍົກ ລະດັບຄວາມຮູ້ທາງດ້ານວັດທະນະທຳຂອງປະຊາຊົນເຮົາໃຫ້ ສູງຂຶ້ນຢ່າງບໍ່ຢຸດຢັ້ງ ເພື່ອນຳເອົາປະເທດເຮົາກ້າວຂຶ້ນສັງຄົມນິຍົມຢ່າງວ່ອງໄວ ແລະຫນັກແຫນ້ນ. ອັນນີ້ແມ່ນທິດທາງທີ່ສອດຄ່ອງກັບກົດເກນຂະຫຍາຍຕົວຂອງຍຸກສະໄຫມ, ເປັນເສັ້ນທາງສັ້ນກວ່າຫມູ່,ໄວກວ່າຫມູ່ເພື່ອແກ້ໄຂທຸກຜົນຮ້າຍຂອງລັດທິລ່າເມືອງຂຶ້ນແລະສັກດີນາ,ນຳເອົາປະເທດເຮົາໃຫ້ຫຼຸດພົ້ນອອກຈາກສະພາບທຸກຍາກ,ຫຼ້າຫຼັງ, ສ້າງໃຫ້ ມີການຫັນປ່ຽນຢ່າງເລິກເຊິ່ງເຕິງຖອງໃນທຸກດ້ານ: ການ

ເມືອງ, ເສດຖະກິດ, ວັດທະນະທຳ, ປ້ອງກັນຊາດແລະ ຊີວິດການເປັນຢູ່, ຮັບປະກັນໃຫ້ພັກ ແລະປະຊາຊົນເຮົາມີ ຄວາມອາດສາມາດພຽງພໍເພື່ອສຳເລັດໜ້າທີ່ຕໍ່ຊາດ ແລະ ສາກົນໃນໄລຍະໃໝ່ເປັນຢ່າງດີ.

ຢືນຢູ່ໃນປ້ອມດ່ານໜ້າຂອງສັງຄົມນິຍົມໃນອາຊີອາ ຄະເນ ເຊິ່ງເປັນບ່ອນທີ່ຈັກກະພັດນິຍົມ ແລະ ບັນດາອິດທິ ກຳລັງປະຕິການສາກົນພວມດີ້ດ້ານຊອກຫຼີກວິທີເກາະຫ້ອຍຢູ່ ນັ້ນ ພວກເຮົາຕ້ອງຍົກສູງສະຕິລະວັງຕົວຢູ່ສະເໝີ, ເພີ່ມ ທະວີການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ກຽມ ພ້ອມສູ້ຮົບ ແລະສູ້ຮົບດີ ເພື່ອປົກປັກຮັກສາເອກະລາດ,ອະ ທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງພວກເຮົາໄວ້ໃຫ້ ໝັ້ນຄົງ ແລະປະກອບສ່ວນເຮັດໃຫ້ສະພາບການໃນພາກ ພື້ນມີສະຖຽນລະພາບ. ເຖິງຢ່າງນັ້ນກໍ່ຕາມ, ໜ້າທີ່ດັດ ສ້າງ ແລະກໍ່ສ້າງສັງຄົມນິຍົມຍັງຮັກສາບົດບາດ ເປັນໃຈ ກາງຕັດສິນຂອງມັນຕໍ່ການປະຕິວັດຂອງປະເທດເຮົາໃນໄລ ຍະປັດຈຸບັນ ແລະກໍ່ມີແຕ່ຊຸກຍູ້ການດັດສ້າງ ແລະກໍ່ສ້າງສັງ ຄົມນິຍົມໃຫ້ກ້າວຂຶ້ນຢ່າງວ່ອງໄວ, ເພີ່ມທະວີເທົ່າພະລັງ ທາງດ້ານການເມືອງ, ເສດຖະກິດເທົ່ານັ້ນ ຈຶ່ງຈະມີພື້ນ ຖານໃຫ້ການປັບປຸງ ແລະກໍ່ສ້າງການປ້ອງກັນຊາດ, ປ້ອງ

ກັບຄວາມສະຫງົບຂອງພວກເຮົາ.

ການຕໍ່ສູ້ລະຫວ່າງສອງເສັ້ນທາງ ສັງຄົມນິຍົມແລະທຶນນິຍົມ ທີ່ແນໃສ່ຍາດເອົາໄຊຊະນະມາໃຫ້ສັງຄົມນິຍົມໃນປະເທດເຮົານັ້ນ ເຖິງວ່າຍັງຈະຕ້ອງຜ່ານຜ່າຄວາມຫຍຸ້ງຍາກລຳບາກ, ດຸເດືອດຫຼາຍປະການກໍ່ຕາມ, ແຕ່ພວກເຮົາເຊື່ອໝັ້ນຢ່າງຕາຍໃຈວ່າພາຍໃຕ້ການນຳພາຂອງພັກ, ມີລັດປະຊາທິປະໄຕປະຊາຊົນ ເຊິ່ງພວມປະຕິບັດໜ້າທີ່ ປະຫວັດສາດຂອງພະເດັດການກຳມາຊີບ, ມີກອງກຳລັງພົນທະພາບກຳມະກອນ-ຊາວນາອັນແໜ້ນໜາ, ມີແນວໂຮມເອກະພາບແຫ່ງຊາດ ອັນກວ້າງຂວາງ ທັງໄດ້ຮັບການສະໜັບສະໜູນແລະຊ່ວຍເຫຼືອອັນໃຫຍ່ຫຼວງຂອງລະບົບສັງຄົມນິຍົມ ແລະຂະບວນການປະຕິວັດໂລກ, ເປັນຕົ້ນແມ່ນຄວາມສາມັກຄີຮ່ວມສຳພັນສູ້ຮົບອັນໜັ້ນໜຽວລະຫວ່າງການ ປະຕິວັດເຮົາກັບການປະຕິວັດຫວຽດນາມ, ພາລະກິດດັດສ້າງແລະກໍ່ສ້າງສັງຄົມນິຍົມ ຂອງປະເທດເຮົາ ແນວໃດກໍ່ຕ້ອງສຳເລັດຜົນ, ປະເທດເຮົາແນວໃດກໍ່ຕ້ອງກາຍເປັນສວນອຸທະຍານສັງຄົມນິຍົມທີ່ສວຍສົດງົດງາມ ແລະເກີດດອກອອກຜົນ, ຊາດເຮົາຈະມັບມັ້ນມີຖານະບົດບາດອັນສົມກຽດໃນທຸກດ້ານ ຢູ່ໃນຄອບຄົວໃຫຍ່ສັງຄົມນິຍົມແລະໃນເວທີສາກົນ.

ຮຸ່ນພວກເຮົາ ມີຄວາມຮັບຜິດຊອບອັນໃຫຍ່ຫຼວງ ແລະກຽດອັນສະຫງ່າງາມ ໃນການເປີດສາກການຕໍ່ສູ້ເພື່ອ ແກ້ໄຂບັນຫາ "ໃຜເອົາຊະນະໃຜ" ລະຫວ່າງ ສັງຄົມນິຍົມ ກັບທຶນນິຍົມ, ສ້າງພື້ນຖານໃຫ້ສັງກາດໃໝ່ ສັງກາດແຫ່ງເອກະລາດ, ເອກະພາບ ແລະ ສັງຄົມນິຍົມຂອງປະເທດເຮົາ. ໂດຍກຳແໜ້ນ ໒ ຄັນທຸງ ເອກະລາດແຫ່ງຊາດ ແລະສັງຄົມນິຍົມ, ຍົກສູງແນວຄິດຮັກຊາດສັງຄົມນິຍົມ, ພວກເຮົາຕັດສິນໃຈສູ້ຊົນຢ່າງບໍ່ຮູ້ອິດຮູ້ເມື່ອຍ ເພື່ອເຮັດຫຼ້ອນໜ້າທີ່ ແລະປະພຶດຕົວໃຫ້ສົມກັບກຽດຕິສັກ ອັນສູງສົ່ງຂອງຕົນ.

II. ເນື້ອໃນພື້ນຖານຂອງແນວທາງ, ໜ້າທີ່ ປະຕິວັດສັງຄົມນິຍົມຢູ່ໃນປະເທດເຮົາ.

ດັ່ງທີ່ໄດ້ກ່າວມາແລ້ວນັ້ນ, ການກ້າວຂຶ້ນສັງຄົມນິຍົມ ແມ່ນເສັ້ນທາງທີ່ສັ້ນກວ່າໝູ່ ແລະ ໄວກວ່າໝູ່ເພື່ອນຳເອົາປະເທດເຮົາຫຼຸດພົ້ນອອກຈາກສະພາບທຸກຍາກຫຼ້າຫຼັງ, ກ້າວຂຶ້ນກໍ່ສ້າງປະເທດເຮົາ ໃຫ້ເປັນປະເທດຮັ່ງມີເຂັ້ມແຂງ, ເຮັດໃຫ້ຄວາມມຸ່ງມາດປາຖະໜາທີ່ມີມາແຕ່ໃດ ໆ ຂອງປະຊາຊົນບັນດາຊົນຊາດເຮົາປະກົດເປັນຈິງ. ແຕ່ສັງຄົມນິຍົມບໍ່ແມ່ນຈະມາສູ່ພວກເຮົາຄືດັ່ງປະກົດການທຳມະຊາດ ແລະ ກໍ່ບໍ່ແມ່ນຜົນແຫ່ງການເຄື່ອນໄຫວຕາມມີຕາມເກີດໄດ້, ຫາກແມ່ນພາລະກິດຂອງມະຫາຊົນນັບເປັນລ້ານ ໆ ຄົນທີ່ຕ້ອງບາກບັ່ນສູ້ຊົນຢ່າງບໍ່ຢຸດຢັ້ງພາຍໃຕ້ການນຳພາ ແລະຄຸ້ມຄອງເປັນເອກະພາບຂອງພັກແລະລັດທີ່ມີແນວທາງອັນຖືກຕ້ອງ, ມີວິທີການອັນຕັ້ງໜ້າ ແລະມີບາດກ້າວເດີນອັນເໝາະສົມ. ເພື່ອດຳເນີນການປະຕິວັດສັງຄົມນິຍົມ ແລະກໍ່ສ້າງສັງຄົມນິຍົມໃຫ້ສຳເລັດຜົນ, ພັກເຮົາໄດ້ວາງແນວທາງແລະ ໜ້າທີ່ ລວມຂອງໄລຍະຂ້າມຜ່ານກ້າວຂຶ້ນສັງຄົມນິຍົມຢູ່ໃນປະເທດ ເຮົາຄື: " ກຳແໜ້ນແລະ ເພີ່ມທະວີຜະເດັດການກຳມາຊີບ, ປະຕິບັດ ແລະ ເສີມຂະຫຍາຍສິດເປັນເຈົ້າລວມໝູ່ ຂອງ

ປະຊາຊົນຜູ້ອອກແຮງງານ, ດຳເນີນການປະຕິວັດທັງ ສາມ ປະການໄປພ້ອມໆ ກັນ: ການປະຕິວັດການພົວພັນແຫ່ງການຜະລິດ, ການປະຕິວັດວິທະຍາສາດ-ເຕັກນິກ, ການປະຕິວັດແນວຄິດ-ວັດທະນະທຳ, ໃນນັ້ນເອົາການປະຕິວັດວິທະຍາສາດ-ເຕັກນິກເປັນຂໍກະແຈຕົ້ນຕໍ ແລະເອົາ ການປະຕິວັດແນວຄິດ-ວັດທະນະທຳໄປກ່ອນກ້າວໜຶ່ງ "[1]

ບັນຫາຜະເດັດການກຳມາຊີບ ແມ່ນບັນຫາພື້ນ ຖານ ແລະກໍ່ແມ່ນເນື້ອໃນຕົ້ນຕໍ ຂອງທຸກການປະຕິວັດກຳມາຊີບ. ມາກໄດ້ເວົ້າຢ່າງຈະແຈ້ງວ່າ: " ລະຫວ່າງສັງຄົມທຶນນິຍົມກັບສັງຄົມກອມມູນິດນິຍົມແມ່ນສະໄໝດັດປ່ຽນປະຕິວັດ ຈາກສັງຄົມໜຶ່ງໄປຫາສັງຄົມໜຶ່ງ. ແທດເໝາະກັບສະໄໝນັ້ນ ແມ່ນສະໄໝຂ້າມຜ່ານການເມືອງສະໄໝໜຶ່ງ, ໃນນັ້ນ ລັດບໍ່ອາດຈະເປັນສິ່ງໃດອື່ນທີ່ຕ່າງກັບຜະເດັດການປະຕິວັດ ຂອງຊົນຊັ້ນກຳມາຊີບ "[2] ພາຍຫຼັງຍາດເອົາອຳນາດການປົກຄອງມາໄດ້ແລ້ວຊົນຊັ້ນກຳມາຊີບຈຳຕ້ອງ ໄດ້ສ້າງຕັ້ງຜະເດັດການກຳມາຊີບຂຶ້ນທັນທີ ເພື່ອເປັນບ່ອນອີງ ອັນພື້ນຖານ

---

1 ມະຕິຂອງກອງປະຊຸມສູນກາງພັກປະຊາຊົນປະຕິວັດລາວຄັ້ງທີ 4, ປີ 1977.

2. ກາກມາກ ອັງແກນ, ນິພົນເລືອກເຟັ້ນ, ພາສາລັດເຊຍ, ເຫຼັ້ມ 19, ໜ້າ 27.

ຂອງຕົນ ສໍາລັບທັບມ້າງການຕ້ານຢັ້ນຂອງບັນດາຈີນຈຸ້ນຂູດ
ຣີດ, ຄອບຄອງທີ່ຖືກໂຄ່ນລົ້ມແລ້ວນັ້ນໃຫ້ໝຸ່ນທະລາຍໄປ, ທັບ
ມ້າງເລລ່ຽມອຸບາຍຂອງພວກເຂົາທີ່ຢາກຟື້ນຟູລະບອບເກົ່າ
ຄົນ, ພ້ອມກັນນັ້ນກໍ່ສຶກສາອົບຮົມດັດສ້າງ ຊາວຜະລິດນ້ອຍ
ນັບເປັນລ້ານໆຄົນ, ນໍາເອົາເຂົາເຈົ້າເຂົ້າໃນເສັ້ນທາງທໍາ
ມາຫາກິນແບບລວມໝູ່ສັງຄົມນິຍົມ; ອັນສໍາຄັນໄປກວ່ານັ້ນ
ແມ່ນຈັດຕັ້ງ, ກໍ່ສ້າງແລະຄຸ້ມຄອງສັງຄົມໃຫມ່, ເສດຖະກິດ
ໃຫມ່ແນ່ໃສ່"... ເຮັດໃຫ້ແບບການຈັດຕັ້ງສັງຄົມໃນດ້ານ
ແຮງງານທີ່ສູງກວ່າ ທຽບກັບລັດທິນາຍທຶນປະກົດເປັນຈິງ,
ຮັບປະກັນໄຊຊະນະອັນສົມບູນແລະແນ່ນອນຂອງລັດທິກອມມູ
ນິດ (ເລນິນ). ເພາະສະນັ້ນ, ການກໍາແໜ້ນ ແລະເພີ່ມ
ທະວີ ຜະເດັດການກໍາມາຊີບຈຶ່ງເປັນຄວາມຮຽກຮ້ອງຕ້ອງ
ການພາວະວິໄສອັນຈໍາເປັນຢ່າງເດັດຂາດຂອງການ ປະຕິ
ວັດ ໃນບາດກ້າວຂ້າມຜ່ານຂຶ້ນສູ່ສັງຄົມນິຍົມ, ເປັນຈຸດຕົ້ນຕໍ
ອັນໜຶ່ງທີ່ຈໍາແນກລະຫວ່າງຫຼັກໝັ້ນປະຕິວັດສຸດກົກສຸດປາຍ
ຂອງຈີນຈຸ້ນກໍາມາຊີບກັບຫຼັກໝັ້ນປະຕິຮູບຂອງລັດທິສວຍໂອ
ກາດປະເພດຕ່າງໆ.

ຢູ່ໃນປະເທດເຮົາ, ພາຍຫຼັງຍາດເອົາເອກະລາດ
ແຫ່ງຊາດມາໄດ້ແລ້ວ, ສະພາບແຫ່ງການຕໍ່ສູ້ ຕ້ານກົນ ອຸ

ບາຍໂງຫົວຂຶ້ນຂອງກຳລັງປະຕິການທີ່ຍັງເສດເຫຼືອຢູ່ໃນປະ
ເທດ ແລະການຕໍ່ສູ້ຕ້ານທຸກກົນອຸບາຍ, ການກະທຳ ອັນມືດ
ມົນຂອງຈັກກະພັດນິຍົມ ແລະອິດທິກຳລັງປະຕິການສາກົນກໍ່
ຍັງພັນແປໄປຢ່າງສັບສົນທີ່ສຸດ; ອີກດ້ານໜຶ່ງກະໂຕການ
ຜະລິດຂອງສັງຄົມເຮົາກໍ່ຍັງຫຼ້າຫຼັງເຕັມທີ, ບັນດາປະຖົມ
ປັດໄຈດ້ານວັດຖຸທີ່ຈຳເປັນໃຫ້ແກ່ການກໍ່ສ້າງ ສັງຄົມນິຍົມ
ເກືອບວ່າບໍ່ທັນມີຫຍັງໝົດ. ຢາກມີສັງຄົມນິຍົມ, ພວກ
ເຮົາຍັງຕ້ອງສູ້ຊົນຢ່າງລຳບາກຍາວນານ, ທັງຕ້ອງ ທັບ
ມ້າງທຸກກົນອຸບາຍທຳລາຍມ້າງເພຂອງສັດຕູພາຍໃນ ແລະ
ນອກປະເທດຢ່າງເດັດດ່ຽວ, ທັງອອກແຮງກໍ່ສ້າງກຳລັງ
ແຫ່ງການຜະລິດໃໝ່ ແລະ ການພົວພັນແຫ່ງການຜະລິດ
ໃໝ່ໄປແຕ່ຫົວທີ, ບົນພື້ນຖານນັ້ນແລ້ວ ກໍ່ສ້າງໂຄງປະ
ກອບເສດຖະກິດໃໝ່ ກໍ່ຄືໂຄງບົນໃໝ່ ແລະຄົນໃໝ່ເປັນ
ເທື່ອລະກ້າວ. ໃນສະພາບການນັ້ນ, ຖ້າວ່າຜະເດັດການ
ກຳມາຊີບເຊິ່ງມີລະບົບການຈັດຕັ້ງອຳນາດການປົກຄອງ ທີ່
ເຂັ້ມແຂງຂອງລັດແບບໃໝ່ ແລະມີການຮ່ວມສຳພັນພິເສດ
ລະຫວ່າງກຳມະກອນ-ຊາວນາ ກັບຊັ້ນຄົນຜູ້ອອກແຮງງານ
ອື່ນໆ ທີ່ຍາດເອົາສິດເປັນເຈົ້າລວມໝູ່ມາໄດ້ ໂດຍແມ່ນ
ຊົນຊັ້ນກຳມະກອນນຳພານັ້ນຫາກບໍ່ໄດ້ຮັບການ ສ້າງຕັ້ງຂຶ້ນ

ໃນທັນທີແລ້ວກໍ່ບໍ່ອາດຈະປະຕິບັດໜ້າທີ່ປະຫວັດສາດທີ່ກ່າວ ມານັ້ນໄດ້ຢ່າງເດັດຂາດ.

ກຳແໜ້ນ ແລະ ເພີ່ມທະວີຜະເດັດການກຳມາຊີບ ໃນເງື່ອນໄຂຂອງປະເທດເຮົາປັດຈຸບັນດັ່ງມະຕິ ໔ ຂອງ ສູນກາງພັກໄດ້ຍົກຂຶ້ນນັ້ນ ແມ່ນກຳແໜ້ນແນວທາງປະຕິວັດ ສັງຄົມນິຍົມຂອງພັກ, ເຊື່ອມຊຶມຢ່າງເລິກເຊິ່ງເຂົ້າໃນທຸກ ຂົງເຂດການເຄື່ອນໄຫວຂອງລັດ ແລະ ຂອງປະຊາຊົນ, ອອກແຮງກໍ່ສ້າງປັບປຸງ ແລະເພີ່ມທະວີລະບົບຜະເດັດການ ກຳມາຊີບໃຫ້ມີກຳລັງແຮງ ແລະຄວາມສາມາດພຽງພໍເພື່ອ ສຳເລັດທຸກໜ້າທີ່ຂອງພັກ ແລະ ລັດໃນໄລຍະໃໝ່, ປົກ ປັກຮັກສາປະເທດຊາດ, ປົກປັກຮັກສາລະບອບໃໝ່ ໄວ້ ຢ່າງໝັ້ນຄົງ, ຊຸກຍູ້ການດຳເນີນການປະຕິວັດທັງ ໓ ປະ ການໄປພ້ອມໆ ກັນແນ່ໃສ່ດັດສ້າງການຜະລິດນ້ອຍກະແຈກ ກະຈາຍໃຫ້ເປັນ ການຜະລິດໃຫຍ່ສັງຄົມນິຍົມ, ກໍ່ສ້າງພື້ນ ຖານວັດຖຸເຕັກນິກ ແລະວັດທະນະທຳອັນຈຳເປັນໃຫ້ແກ່ສັງ ຄົມນິຍົມ, ປະຕິບັດແນວທາງ, ແຜນນະໂຍບາຍ ຕ່າງປະ ເທດທີ່ເປັນເອກະລາດ, ເປັນເຈົ້າຕົນເອງຂອງພັກເຮົາ ຢ່າງຖືກຕ້ອງ, ເພີ່ມທະວີຄວາມສາມັກຄີສາກົນ.

ເພື່ອເພີ່ມທະວີກຳລັງແຮງຂອງຜະເດັດການກຳມາ

ຊີບນັ້ນ, ຈາກບົດຮຽນປະຫວັດສາດທີ່ຜ່ານມາ ພັກເຮົາຍິ່ງຮັບຮູ້ຢ່າງຈະແຈ້ງວ່າ: ການປະຕິບັດ ແລະການເສີມຂະຫຍາຍສິດເປັນເຈົ້າລວມໝູ່ຂອງປະຊາຊົນຜູ້ອອກແຮງງານ ເປັນບັນຫາພື້ນຖານອັນໜຶ່ງ ໃນແນວທາງປະຕິວັດສັງຄົມນິຍົມຂອງພັກເຮົາ. ເພາະວ່າລັດທິສັງຄົມນິຍົມ ແມ່ນພາລະກິດສ້າງສັນຂອງມະຫາຊົນນັ້ນເອງ, "... ມີແຕ່ເມື່ອໃດຊົນຊັ້ນກຳມາຊີບ ແລະຊາວນາຜູ້ທຸກຈົນເອງເຫັນວ່າ ຕົນມີແນວຄິດຕື່ນຕົວ, ມີຈິດໃຈຕິດແໜ້ນກັບອຸດົມຄະຕິຂອງຕົນ, ມີນ້ຳໃຈເສຍສະຫຼະ ແລະໜຽວແໜ້ນຢ່າງພຽງພໍແລ້ວເມື່ອນັ້ນໄຊຊະນະຂອງລັດທິສັງຄົມນິຍົມຈິ່ງຈະຮັບປະກັນ "[1].

ໃນໄລຍະປະຕິວັດຊາດ-ປະຊາທິປະໄຕເມື່ອກ່ອນນີ້, ດ້ວຍທັດສະນະທີ່ວ່າ "ການປະຕິວັດແມ່ນພາລະກິດຂອງມະຫາຊົນ", ພັກເຮົາໄດ້ຢືນຢັນວ່າ: ຕ້ອງຮ່ຳຮຽນນຳມະຫາຊົນ, ເຊື່ອໝັ້ນມະຫາຊົນ, ອີງໃສ່ກຳລັງແຮງຂອງມະຫາຊົນເພື່ອດຳເນີນທຸກວຽກງານປະຕິວັດ. ຍ່ອມໄດ້ຮູ້ຈັກສາມັກຄີ, ຈັດຕັ້ງ ແລະນຳພາມະຫາຊົນເປັນຢ່າງດີ ນັ້ນແຫຼະພັກເຮົາຈິ່ງສາມາດຜ່ານຜ່າອຸປະສັກ ແລະຂໍ້ຫຍຸ້ງຍາກນາໆປະການໄດ້, ປົດປ່ອຍປະເທດຊາດ, ຍາດເອົາເອກະລາດ,

---

[1] ເລນິນ, ລົບຊູດ, ພາສາລັດເຊຍ, ເຫຼັ້ມ 2, ໜ້າ 400.

ເສິລພາບມາໃຫ້ປະເທດຊາດ ແລະ ປະຊາຊົນບັນດາຊົນຊາດຢ່າງສົມບູນ, ສ້າງພາລະກິດອັນໜ້າອັດສະຈັນຂຶ້ນ.

ປະຈຸບັນນີ້, ການປະຕິວັດຂອງປະເທດເຮົາໄດ້ຫັນໄປສູ່ໄລຍະປະຕິວັດສັງຄົມນິຍົມເຊິ່ງແມ່ນ ການປະຕິວັດ ທີ່ເລິກເຊິ່ງ ແລະ ເຖິງຖອງກວ່າໝູ່ ໃນປະຫວັດສາດຂອງຊາດເຮົາອັນແນ່ໃສ່ຈຸດປະສົງດັດສ້າງສັງຄົມເກົ່າ, ກໍ່ສ້າງສັງຄົມໃໝ່, ພາການຜະລິດນ້ອຍກ້າວຂຶ້ນ ສູ່ການຜະລິດໃຫຍ່ສັງຄົມນິຍົມ, ນຳເອົາປະຊາຊົນຜູ້ອອກແຮງງານຂຶ້ນສູ່ຖານະເປັນເຈົ້າຂອງຂອງສັງຄົມຢ່າງແທ້ຈິງ. ພາລະກິດອັນຍິ່ງໃຫຍ່ນັ້ນ ບໍ່ອາດ ຈະປະຕິບັດຢ່າງສຸດກົກ ສຸດປ່າຍໄດ້ ຕາບໃດປະຊາຊົນບັນດາຊົນຊາດເຊິ່ງກອນອື່ນໝົດແມ່ນກຳມະກອນ ແລະ ຊາວນາ ບໍ່ທັນຮັບພາລະບົດບາດເປັນເຈົ້າຂອງຕົນຢ່າງເຕັມຕົວແທ້, ບໍ່ທັນເດັດດ່ຽວຕໍ່ສູ້ ເພື່ອລົບລ້າງທຸກຮອງຮອຍກົດຂີ່ຂູດຮີດຂອງສັງຄົມເກົ່າ, ຕາບໃດປະຊາຊົນບັນດາຊົນຊາດບໍ່ທັນປະແນວຄິດ ແລະ ວິທີດຳລົງຊີວິດແບບພໍໃຜພໍລາວເຊິ່ງເປັນນິໄສແຕ່ເດີມມາແລ້ວນັ້ນ ດ້ວຍຄວາມສະໝັກໃຈ, ແລ້ວຈັດຕັ້ງກັນເຂົ້າສູ່ເສັ້ນທາງທຳມາຫາກິນແບບລວມໝູ່, ອຸທິດທຸກສະຕິປັນຍາ ແລະເຫື່ອແຮງຂອງຕົນໃຫ້ແກ່ພາລະກິດດັດສ້າງ ແລະກໍ່ສ້າງປະເທດຊາດ

ພາຍໃຕ້ການນຳພາຂອງພັກ ແລະການຄຸ້ມຄອງຂອງລັດ.

ການປະຕິບັດ ແລະ ເສີມຂະຫຍາຍ ສິດເປັນເຈົ້າລວມໝູ່ຂອງປະຊາຊົນຜູ້ອອກແຮງງານໃນປະເທດເຮົາດັ່ງມະຕິຂອງສູນກາງພັກໄດ້ຊີ້ອອກຢ່າງຈະແຈ້ງ ໃນເບື້ອງຕົ້ນນັ້ນແມ່ນຕ້ອງກໍ່ສ້າງລະບອບເປັນເຈົ້າລວມໝູ່ສັງຄົມນິຍົມ, ໃນນັ້ນຜູ້ເປັນເຈົ້າຕ້ອງແມ່ນປະຊາຊົນຜູ້ອອກແຮງງານ ໝົດການຈັດຕັ້ງ ເຊິ່ງຫຼັກແຫຼ່ງຂອງມັນແມ່ນພັນທະພາບ ກຳມະກອນ-ຊາວນາພາຍໃຕ້ການນຳພາຂອງພັກເຮົາ. ສິດເປັນເຈົ້າລວມໝູ່ ຂອງປະຊາຊົນຜູ້ອອກແຮງງານ ຕ້ອງໄດ້ສະແດງອອກໃນທຸກດ້ານ ຢ່າງຕົ້ມສ່ວນ, ເປັນເຈົ້າທັງໃນດ້ານການເມືອງ ທັງໃນດ້ານເສດຖະກິດ, ວັດທະນະທຳ ແລະສັງຄົມ; ເປັນເຈົ້າໃນຂອບເຂດທົ່ວປະເທດ, ໃນແຕ່ລະທ້ອງຖິ່ນ, ແຕ່ລະກົມກອງ; ເປັນເຈົ້າສັງຄົມ, ທຳມະຊາດ ແລະເປັນເຈົ້າຕົນເອງ. ສິດເປັນເຈົ້າລວມໝູ່ຂອງປະຊາຊົນຜູ້ອອກແຮງງານຕ້ອງໄດ້ວາງເປັນຂໍ້ກຳນົດ,ເປັນກົດໝາຍຂອງລະບອບເຮົາ; ຕ້ອງໄດ້ເອົາໃຈໃສ່ກໍ່ສ້າງແຕ່ຂັ້ນຫົວທີເປັນຕົ້ນໄປ ແລະຕ້ອງປະຕິບັດເປັນກ້າວໆ ແຕ່ຕ່ຳໄປຫາສູງ, ໄປຄຽງຄູ່ກັບຂະບວນວິວັດ ແຫ່ງການດັດສ້າງ ແລະກໍ່ສ້າງສັງຄົມນິຍົມ, ກັບຂະບວນວິວັດແຫ່ງການ

ກໍ່ສ້າງບັນດາການພົວພັນໃໝ່, ການກໍ່ສ້າງຄົນໃໝ່ ສັງຄົມນິຍົມ ແລະຕ້ອງໄດ້ສ້າງຂຶ້ນບົນພື້ນຖານ ປະສານສົມທົບຢ່າງຖືກຕ້ອງລະຫວ່າງຜົນປະໂຫຍດສ່ວນລວມ ກັບສິດເສລີພາບອັນແທ້ຈິງຂອງສ່ວນບຸກຄົນ.

ຄວາມໝາຍ ແລະເນື້ອໃນຂອງການດຳເນີນການປະຕິວັດທັງ ໓ ປະການໄປພ້ອມ ໆ ກັນ.

ຄືດັ່ງພວກເຮົາໄດ້ຮູ້ແລ້ວ, ການປະຕິວັດການພົວພັນແຫ່ງການຜະລິດ, ການປະຕິວັດ ວິທະຍາສາດ-ເຕັກນິກ ແລະການປະຕິວັດແນວຄິດ-ວັດທະນະທຳເປັນ ໓ພາກສ່ວນກາຍອິນຊີຂອງການປະຕິວັດສັງຄົມນິຍົມ, ແລະ ບໍ່ວ່າປະເທດໃດ ເມື່ອກ້າວຂຶ້ນ ສັງຄົມນິຍົມ ຈຳຕ້ອງໄດ້ດຳເນີນ. ການປະຕິວັດທັງ ໓ ປະການນັ້ນມີການພົວພັນກັນ ຢ່າງສະໜິດແໜ້ນ, ມີຜົນສະທ້ອນ ແລະຊຸກຍູ້ເຊິ່ງກັນແລະກັນໃຫ້ຂະຫຍາຍຕົວ. ສັງຄົມໃໝ່ແລະຄົນໃໝ່, ການພົວພັນແຫ່ງການຜະລິດໃໝ່ ແລະກຳລັງແຫ່ງການຜະລິດໃໝ່ລ້ວນແຕ່ບໍ່ແມ່ນຜະລິດຜົນຕ່າງຫາກຂອງການປະຕິວັດໃດ, ມັນຫາກແມ່ນຜະລິດຜົນລວມຂອງການປະຕິວັດທັງ ໓ ນັ້ນ. ເຖິງຢ່າງນັ້ນກໍດີ, ໃນສາຍພົວພັນສັດຈະວິພາກຂອງມັນ, ການປະຕິວັດແຕ່ລະຢ່າງກໍ່ລ້ວນແຕ່ມີພາລະບົດບາດລະອຽດຂອງ

ໃຜມັນຕ່າງຫາກ, ແລະອີງໃສ່ສະພາບການຂອງແຕ່ລະປະເທດຕ່າງກັນ ເພື່ອວາງເປັນລະດັບຄາດໝາຍ ແລະເນື້ອໃນໃຫ້ສອດຄ່ອງ ແນໃສ່ແກ້ໄຂທຸກບັນຫາຕົວຈິງໃນວິວັດທະນາການ ຂອງການປະຕິວັດສັງຄົມນິຍົມ ໃນແຕ່ລະປະເທດໃຫ້ຖືກຕ້ອງ.

ຈຸດພິເສດຂອງການປະຕິວັດ ປະເທດເຮົາ ແມ່ນກ້າວຂຶ້ນສັງຄົມນິຍົມຈາກການຜະລິດນ້ອຍເຕັມໄປດ້ວຍ ລັກສະນະເສດຖະກິດທຳມະຊາດ. ພວກເຮົາໄດ້ປະເຊີນແລະພວມປະເຊີນໜ້າກັບຄວາມຫຍຸ້ງຍາກຕົວຈິງຫຼາຍປະການ: ເສດຖະກິດຂອງປະເທດເຮົາຖືກລະບອບສັກດີນາ ແລະລ່າເມືອງຂຶ້ນກົດໜ່ວງມາແຕ່ດົນນານແລ້ວ, ປະຈຸບັນນີ້ ສ່ວນຫຼວງຫຼາຍກໍຍັງເປັນເສດຖະກິດກະສິກຳ ຂະໜາດນ້ອຍ. ກະແຈກກະຈາຍ, ເອກະເທດ, ຢູ່ຫຼາຍແຫ່ງກໍຍັງໃຊ້ຮູບການເພາະປູກແບບຫຼ້າຫຼັງເກົ່າແກ່ທີ່ມີມາແຕ່ສະໄໝດຶກດຳບັນ; ການແບ່ງງານຍັງອັດແຈບເປັນແຕ່ລະໝູ່ບ້ານ, ກະທັ້ງເຖິງເປັນແຕ່ລະຄອບຄົວ; ກ່ຽວກັບການຈັດຕັ້ງ ຈໍລະຈອນແຈກຢາຍກໍເກືອບເວົ້າໄດ້ວ່າ ຫາກໍມີແຕ່ຢູ່ໃນເຂດທົ່ງພຽງ ແລະຕົວເມືອງເທົ່ານັ້ນ, ແລະກໍຍັງຢູ່ໃນພາວະງ່າຍ-ດາຍ. ປະຊາຊົນບັນດາຊົນຊາດສ່ວນຫຼາຍແມ່ນຊາວໄຮ່ນາ,

ຍັງດຳລົງຊີວິດຢູ່ຕາມແບບເພິ່ງຕົນເອງກຸ້ມຕົນເອງ ໃນສະພາບທີ່ຍາກຈົນ, ເຈັບໄຂ້ໄດ້ປ່ວຍ, ບໍ່ໄດ້ຮ່ຳຮຽນ. ຊັບພະຍາກອນ ແລະຊັບສິນຂອງປະເທດຊາດ ຖືກພວກລ່າເມືອງຂຶ້ນຝະລັ່ງ ແລະພວກສັກດີນາກອບໂກຍໄປສ້າງຮັ່ງສູມມີໃຫ້ພວກເຂົາ, ຕໍ່ນັ້ນມາ ກໍ່ແມ່ນຖືກສົງຄາມຮຸກຮານ ເປັນເວລາ ໓໐ ປີຂອງພວກຈັກກະພັດເປັນຕົ້ນແມ່ນຂອງຈັກກະພັດອາເມລິກາ ມ້າງເພທຳລາຍການຜະລິດແລະຊີວິດການເປັນຢູ່ຂອງປະຊາຊົນຢູ່ໃນດິນແດນສ່ວນໃຫຍ່ ຂອງປະເທດຊາດເຮົາຢ່າງໜັກໜ່ວງທີ່ສຸດ. ຢູ່ໃນບາງຕົວເມືອງເສດຖະກິດທຶນນິຍົມໄດ້ເລີ່ມຂະຫຍາຍຕົວ, ຈຸດໜັກແມ່ນ ວິສາຫະກິດການຄ້າທີ່ຂຶ້ນກັບນາຍທຶນ ຕ່າງປະເທດ ອ້ອຍຕ້ອຍ. ຈັກກະພັດອາເມລິກາໄດ້ຖອກເທເງິນໂດລາ ແລະ ເຄື່ອງຂອງທີ່ອີ່ງເຫຼືອເຂົ້າມາ ເພື່ອລ້ຽງເກືອ ພວກນາຍທຶນຈ້ຳໜ່າຍ, ອາດຍາສິດຂຸນເສິກ, ສັກດີນາປະຕິການຈຳນວນໜຶ່ງທີ່ເປັນລູກແຫຼ້ງຕົນມີໃຫ້ຮັບໃຊ້ສົງຄາມຮຸກຮານແລະລະບອບລາເມືອງຂຶ້ນແບບໃໝ່ຂອງພວກເຂົາ; ມີຄົນຈຳນວນໜຶ່ງບໍ່ໜ້ອຍຖືກເບື່ອເມົາທາງແນວຄິດ, ເມົານຳການດຳລົງຊີວິດແບບເກາະກິນ, ຟູມເຟືອຍ, ເສື່ອມຊາມ. ນັບແຕ່ປະເທດເຮົາໄດ້ຮັບການປົດປ່ອຍເປັນຕົ້ນມາ, ພວກເຮົາໄດ້

ລົບລ້າງການຊ່ວຍເຫຼືອແບບຜູກຂາດ ແລະການເຄື່ອນໄຫວເສດຖະກິດແບບຈຳໜ່າຍທຸກຢ່າງ, ແຕ່ຜົນຮ້າຍທີ່ພວກຈັກກະພັດ ແລະສັກດີນາປະໄວ້ໃນຫຼາຍດ້ານນັ້ນ ພວກເຮົາຍັງຈະຕ້ອງໃຊ້ເວລາຫຼາຍປີຕື່ມອີກ ຈຶ່ງຈະແກ້ໄຂໃຫ້ຕົກໄປໄດ້.

ການກໍ່ສ້າງສັງຄົມນິຍົມຢູ່ໃນປະເທດເຮົາ ຈາກສະພາບຕົວຈິງຂອງເສດຖະກິດ ແລະ ສັງຄົມດັ່ງກ່າວນັ້ນ ຈຶ່ງເປັນທຳມະດາວ່າ ພວກເຮົາຕ້ອງໄດ້ສູ້ຊົນ ຢ່າງທົນທານໜຽວແໜ້ນ, ຜ່ານຜ່າອຸປະສັກ ແລະຂໍ້ຫຍຸ້ງຍາກນາໆປະການ, ນັ້ນແມ່ນສິ່ງທີ່ບໍ່ອາດຈະຫຼີກລ້ຽງໄດ້. ແຕ່ພວກເຮົາມີກຳລັງແຮງຂອງລະບອບໃໝ່, ມີຂໍ້ສະດວກພື້ນຖານຫຼາຍປະການເພື່ອກ້າວຂຶ້ນສັງຄົມນິຍົມຢ່າງວ່ອງໄວ ແລະ ໜັກແໜ້ນໄດ້. ປະເທດເຮົາມີດິນປູກຝັງ, ຊັບພະຍາກອນປ່າໄມ້ ແລະມີພະລັງໄຟຟ້ານ້ຳຕົກ ຢ່າງມາກມາຍຫຼວງຫຼາຍ, ມີໂລຫະທາດແຮຈານຫຼາຍຢ່າງທີ່ສຳຄັນ, ແຕ່ຄວາມ ສາມາດຖານຊັບພະຍາກອນອັນອຸດົມຮັ່ງມີນັ້ນ ຫາກໍ່ນຳອອກມາໃຊ້ແຕ່ໜ້ອຍດຽວເທົ່ານັ້ນ, ມາດຽວນີ້ພວກເຮົາຈຶ່ງມີເງື່ອນໄຂເປີດກວ້າງການຂຸດຄົ້ນດ້ວຍຂະໜາດອັນນັບມື້ ນັບໃຫຍ່ຕາມໂຄງປະກອບແລະບາດກ້າວເດີນອັນເໝາະສົມ. ພົນລະເມືອງຂອງປະເທດເຮົາບໍ່ຫຼາຍ, ແຕ່ປະຊາຊົນເຮົາມີມູນ

ເຊື່ອສາມັກຄີຊ່ວຍເຫຼືອກັນ, ມີຄວາມດຸໝັ່ນພາກພຽນແລະ ປະດິດສ້າງໃນການອອກແຮງງານ, ພວກເຮົາສາມາດລະດົມກຳລັງແຮງງານໄດ້ຫຼາຍກວ່າເກົ່າດ້ວຍວິທີຈັດຕັ້ງ ແຮງງານຄືນໃໝ່ ແລະປະກອບພາຫະນະກົນຈັກ ອັນຈຳເປັນຈຳນວນໜຶ່ງເຂົ້າຕື່ມ. ປະເທດເຮົາຍັງເປັນພາຄີໃນລະບົບສັງຄົມນິຍົມໂລກ, ພວກເຮົາມີເງື່ອນໄຂຂະຫຍາຍການພົວພັນຊ່ວຍເຫຼືອເຊິ່ງກັນ ແລະກັນ ແລະ ຮ່ວມມືເສດຖະກິດກັບບັນດາປະເທດສັງຄົມນິຍົມອ້າຍນ້ອງແລະປະເທດອື່ນໆ, ນຳໃຊ້ຜົນສຳເລັດໃໝ່ທາງດ້ານວິທະຍາສາດ, ເຕັກນິກຂອງໂລກ, ເພື່ອກໍ່ສ້າງເສດຖະກິດ ສັງຄົມນິຍົມ ທີ່ເປັນເອກະລາດ, ເປັນເຈົ້າຕົນເອງຂອງປະເທດເຮົາ. ປັດໄຈທີ່ມີຄວາມໝາຍຕັດສິນກວ່າໝູ່ ເພື່ອກໍ່ສ້າງສັງຄົມນິຍົມຢູ່ໃນປະເທດເຮົາ ໃຫ້ສຳເລັດຜົນ ແມ່ນການນຳພາອັນຖືກຕ້ອງ ແລະປະດິດສ້າງຂອງພັກເຮົາ ຕິດແໜ້ນກັບບົດບາດ ແຫ່ງການຈັດຕັ້ງຄຸ້ມຄອງຂອງລັດ ແລະລະບອບເປັນເຈົ້າ ລວມໝູ່ ສັງຄົມນິຍົມຂອງປະຊາຊົນຜູ້ອອກແຮງງານ ເຊິ່ງພວກເຮົາພວມອອກແຮງກໍ່ສ້າງຂຶ້ນ.

ອີງໃສ່ກົດເກນທົ່ວໄປຂອງການປະຕິວັດສັງຄົມນິຍົມ ແລະເລີ່ມຈາກສະພາບການ, ຈຸດພິເສດຂອງປະເທດເຮົາ,

ພັກເຮົາມີແຜນນະໂຍບາຍດຳເນີນການປະຕິວັດທັງ 3 ປະການໄປພ້ອມໆ ກັນ, ເອົາການປະຕິວັດການພົວພັນແຫ່ງການຜະລິດໄຂຊ່ອງທາງ, ເອົາການປະຕິວັດວິທະຍາສາດ-ເຕັກນິກເປັນຂໍກະແຈຕົ້ນຕໍແລະນຳເອົາການປະຕິວັດວັດທະນະທຳ-ແນວຄິດໄປກ່ອນກ້າວໜຶ່ງ. ອັນນັ້ນແມ່ນຂະບວນວິວັດແຫ່ງການຫັນປ່ຽນຢ່າງເລິກເຊິ່ງ ແລະເຖິງຖອງ ຂອງການປະຕິວັດເຮົາ, ເປັນການສົມທົບທັງການດັດສ້າງແລະລົບລ້າງອັນເກົ່າ, ທັງກໍ່ສ້າງອັນໃໝ່, ຖືເອົາການ ກໍ່ສ້າງອັນໃໝ່ເປັນຕົ້ນຕໍ, ແຕ່ໃນຂັ້ນຕົ້ນ ຕ້ອງດຳເນີນ ການດັດສ້າງເພື່ອກໍ່ສ້າງ ແລະຖືເອົາການກໍ່ສ້າງເພື່ອດັດສ້າງ, ຫຼັງຈາກນັ້ນແມ່ນຖືເອົາການກໍ່ສ້າງເປັນຕົ້ນຕໍ, ທັງນັ້ນແມ່ນໃສ່ກໍ່ສ້າງລະບອບໃໝ່, ເສດຖະກິດໃໝ່, ວັດທະນະທຳໃໝ່ ແລະຄົນໃໝ່ສັງຄົມນິຍົມ.

ກ່ຽວກັບການປະຕິວັດການພົວພັນແຫ່ງການຜະລິດ, ພັກເຮົາຖືວ່າ ຢູ່ໃນປະເທດເຮົາການຕໍ່ສູ້ລົບລ້າງພາກສ່ວນເສດຖະກິດທຶນນິຍົມ, ລົບລ້າງລະບອບຄົນຂູດຮີດຄົນ ແລະພາກສ່ວນເສດຖະກິດທີ່ຕິດແໜ້ນກັບລະບອບນັ້ນເປັນທຳມະດາວ່າ ຈຳຕ້ອງໄດ້ວາງອອກ ແລະຕ້ອງໄດ້ຮັບການແກ້ໄຂຢ່າງເຖິງຖອງ; ພວກເຮົາຕ້ອງລົບລ້າງລະບອບກຳມະສິດ

ແລະຂູດຣີດຂອງພວກນາຍທຶນຈຳໜ່າຍ ແລະສັກດີນາປະຕິການໃຫ້ໝົດກ້ຽງ; ຕ້ອງມີແຜນການເລີ່ງລັດການດັດສ້າງການອຸດສາຫະກຳດຂຸດສາຫະກຳ, ການຄ້າທຶນນິຍົມໂດຍສັນຕິ, ຫັນພວກນາຍທຶນໃຫ້ກາຍເປັນຜູ້ອອກແຮງງານ, ລົບລ້າງຈົນຊັ້ນນາຍທຶນຢ່າງສິ້ນເຊີງ. ແຕ່ໃນເງື່ອນໄຂເສດຖະກິດຂອງປະເທດເຮົາປັດຈຸບັນ, ສ່ວນທີ່ສຳຄັນໄປກວ່ານັ້ນແມ່ນຕ້ອງດຳເນີນການດັດສ້າງ ເສດຖະກິດການຜະລິດນ້ອຍກະແຈກກະຈາຍ, ເອກະເທດ, ກໍ່ສ້າງເປັນເສດຖະກິດລວມໝູ່ສັງຄົມນິຍົມ ດ້ວຍວິທີຊຸກຍູ້ ການຫັນເປັນ ສະຫະກອນ. ພວກເຮົາຕ້ອງຕັ້ງໜ້າຊ່ວຍເຫຼືອຊາວໄຮ່ນາ ໃນການສ້າງຕັ້ງສະຫະກອນກະເສດ, ສະຫະກອນກະເສດປ່າໄມ້, ນຳເອົາເອົາເຈົ້າເຂົ້າສູ່ເສັ້ນທາງທຳມາຫາກິນແບບລວມໝູ່; ແນະນຳເອົາເຈົ້າຈັດຕັ້ງການຜະລິດຄືນໃໝ່, ແບ່ງງານໃນດ້ານກະສິກຳ-ປ່າໄມ້ຄືນໃໝ່, ຕັ້ງໜ້ານຳໃຊ້ເຕັກນິກເພາະປູກໃໝ່ ແນໃສ່ຊຸກຍູ້ການຜະລິດ ໃຫ້ຂະຫຍາຍຕົວ, ຍົກລະດັບຊີວິດການເປັນຢູ່ດ້ານວັດຖຸ, ວັດທະນະທຳຂອງຊາວນາໃຫ້ສູງຂຶ້ນ, ຮັບປະກັນການເພີ່ມທະວີພັນທະພາບກຳມະກອນ-ຊາວນາ, ນຳເອົາຊົນນະບົດກ້າວຂຶ້ນ ສັງຄົມນິຍົມ. ພ້ອມກັນນັ້ນກໍ່ແນະນຳຊ່ວຍເຫຼືອຊາວຫັດຖະກຳ, ຊາວ

ຄ້າຂາຍນ້ອຍ, ເຈົ້າຊັບນ້ອຍໃນການສ້າງສະຫະກອນຫັດຖະກຳ, ຊຸດສາຫະກຳນ້ອຍ, ນຳເອົາເຂົາເຈົ້າເຂົ້າສູ່ເສັ້ນທາງທຳມາຫາກິນແບບລວມໝູ່ສັງຄົມນິຍົມ, ລົບລ້າງພັນຖານຮູບການວິສາຫະກິດທຶນນິຍົມຢ່າງເຖິງຖອງ. ດ້ານໜຶ່ງອີກເຊິ່ງແມ່ນດ້ານທີ່ສຳຄັນທີ່ສຸດແມ່ນລັດປະຊາທິປະໄຕປະຊາຊົນຕ້ອງເພີ່ມທະວີບົດບາດຄຸ້ມຄອງເສດຖະກິດ ແລະຂະຫຍາຍກຳລັງເສດຖະກິດລັດວິສາຫະກິດ, ໃນສະເພາະໜ້ານີ້ ແມ່ນເອົາໃຈໃສ່ຈົດຈໍ່ການຂະຫຍາຍການຄ້າລັດວິສາຫະກິດໄປຄຽງຄູ່ກັບການຂະຫຍາຍຂະແໜງການຜະລິດລັດວິສາຫະກິດອື່ນໆ, ເຮັດໃຫ້ເສດຖະກິດລັດວິສາຫະກິດສາມາດດຳລົງບົດບາດເປັນເຈົ້າ ນຳທາງ ໃນເສດຖະກິດແຫ່ງຊາດໄດ້ໂດຍໄວ.

ໃນຂັ້ນຕົ້ນແຫ່ງການກ້າວຂຶ້ນສັງຄົມນິຍົມ, ການປະຕິວັດ ການພົວພັນແຫ່ງການຜະລິດ ແມ່ນແກ້ໄຂບັນຫາປ່ຽນແປງລະບອບກຳມະສິດໃຫ້ສຳເລັດເສັດສິ້ນລົງ, ໝາຍຄວາມວ່າລົບລ້າງເສດຖະກິດທຶນນິຍົມ ແລະ ເສດຖະກິດເອກະເທດ, ສ້າງຕັ້ງລະບອບກຳມະສິດສັງຄົມນິຍົມພາຍໃຕ້ສອງຮູບການຕົ້ນຕໍຄື: ກຳມະສິດລວມໝູ່ ແລະກຳມະສິດທົ່ວປວງຊົນ, ຮັບປະກັນເຮັດໃຫ້ການພົວພັນແຫ່ງການ

ຜະລິດສັງຄົມນິຍົມ ກວມທ່າດີຢ່າງຂາດຂັ້ນ ໃນເສດຖະກິດແຫ່ງຊາດ; ຊຸກຍູ້ການຜະລິດຢ່າງແຂງແຮງ, ປະຕິບັດສິດເປັນເຈົ້າລວມໝູ່ຂອງປະຊາຊົນຜູ້ອອກແຮງງານ, ໄຂຊ່ອງທາງນຳເອົາການຜະລິດນ້ອຍກະແຈກກະຈາຍ, ເອກະເທດກ້າວຂຶ້ນສູ່ການຜະລິດໃຫຍ່ສັງຄົມນິຍົມ ແລະລົບລ້າງ ເສັ້ນທາງຂະຫຍາຍຕົວຂອງທຶນນິຍົມຢ່າງເຖິງກົກເຖິງຮາກ.

ການປະຕິວັດການພົວພັນແຫ່ງການຜະລິດ ມີຄວາມໝາຍໄຂທາງ ແລະສຳຄັນທີ່ສຸດ, ແຕ່ກະໂຕມັນເອງ ບໍ່ມີຄວາມສາມາດພຽງພໍເພື່ອສ້າງການຜະລິດໃຫຍ່ສັງຄົມນິຍົມຂຶ້ນໄດ້ ແລະກໍ່ບໍ່ສາມາດປັບປຸງການພົວພັນແຫ່ງການຜະລິດໃໝ່ທີ່ກໍ່ສ້າງຂຶ້ນນັ້ນໃຫ້ໜັກແໜ້ນໄດ້ດ້ວຍກະໂຕມັນເອງ. ໃນເງື່ອນໄຂສະພາບເສດຖະກິດ-ສັງຄົມຂອງປະເທດເຮົາ, ບັນຫາດັດສ້າງ ການພົວພັນແຫ່ງການຜະລິດ ບໍ່ແມ່ນວ່າບໍ່ມີຄວາມຫຍຸ້ງຍາກ, ແຕ່ອັນຫຍຸ້ງຍາກໄປກວ່ານັ້ນແມ່ນບັນຫາຂະຫຍາຍກຳລັງ ແຮງການຜະລິດໃໝ່ ແລະຍົກສະມັດຖະພາບຂອງງານ; ເພາະສະນັ້ນ, ຕະຫຼອດໃນຂະບວນວິວັດແຫ່ງການດຳເນີນການປະຕິວັດທັງ ໓ ປະການ ໄປພ້ອມໆກັນພັກເຮົາມີແຜນນະໂຍບາຍເອົາການປະຕິວັດ ວິທະຍາສາດ-ເຕັກນິກ ເປັນຂໍກະແຈຕົ້ນຕໍ. ພວກເຮົາຕ້ອງມີວິທີ

ການອັນຕັ້ງໜ້າເພື່ອດັດແປງເຕັກນິກ, ຍົກລະດັບເຕັກນິກ ໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ ແລະນຳເອົາວິທະຍາສາດເຕັກນິກ ໃໝ່ເຂົ້າໃນການຜະລິດເປັນຕົ້ນແມ່ນໃນຂອບເຂດກະສິກຳ, ປ່າໄມ້ຢ່າງວ່ອງໄວ. ພວກເຮົາຕ້ອງຮູ້ສົມທົບບົດຮຽນຕ່າງໆ ຂອງປະຊາຊົນທີ່ມີມາແລ້ວ ກັບການນຳໃຊ້ບົດຮຽນ ອັນກ້າວໜ້າຂອງໂລກ, ປະຕິບັດແຕ່ຕ່ຳໄປຫາສູງ, ຈາກວິທີການເຕັກນິກທຳມະດາເຊັ່ນ ເຮັດຊົນລະປະທານ, ເລືອກແນວປູກດີ, ໃສ່ຝຸ່ນ, ດັດແປງວິທີປູກຝັງ, ລ້ຽງສັດແລະການປູງແຕ່ງ... ກ້າວຂຶ້ນສູ່ວິທີການເຕັກນິກທັນສະໄໝຂຶ້ນ ໆ ເທື່ອລະກ້າວ. ອີກດ້ານໜຶ່ງແມ່ນຕ້ອງຮູ້ນຳໃຊ້ທຸກຄວາມສາມາດຂອງການຜະລິດຫັດຖະກຳ ແລະອຸດສາຫະກຳນ້ອຍທີ່ມີຢູ່ແລ້ວຢ່າງສຸດຂີດ, ຄ່ອຍໆຍົກມັນຂຶ້ນເປັນເຄິ່ງກົນຈັກ ແລະກົນຈັກ, ກໍ່ສ້າງພື້ນຖານວັດຖຸເຕັກນິກໃໝ່ທີ່ຈຳເປັນຈຳນວນໜຶ່ງຢູ່ພາຍໃນປະເທດຢ່າງທັນການ, ພ້ອມກັນນັ້ນກໍ່ອີງໃສ່ການຊ່ວຍເຫຼືອຂອງບັນດາປະເທດອ້າຍນ້ອງ ແລະການແລກປ່ຽນສາກົນເພື່ອດຳເນີນການຜະລິດ ແລະ ປະກອບພາຫະນະເຄື່ອງມືທຳມະດາ, ເຄື່ອງມືດັດແປງ ໃຫ້ພຽງພໍ ແລະ ປະກອບເຄື່ອງຈັກໃຫ້ແກ່ບັນດາພື້ນຖານການຜະລິດລັດວິສາຫະກິດ ແລະລວມໝູ່ເປັນເທື່ອລະກ້າວ, ທັງ

ນັ້ນແມ່ນໃສ່ຮັບໃຊ້ຢ່າງທັນການຄວາມຮຽກຮ້ອງຕ້ອງການໃນການຊຸກຍູ້ການຜະລິດໃຫ້ແຂງແຮງ, ເພີ່ມສະມັດຖະພາບຂອງງານສັງຄົມໃຫ້ໄວຂຶ້ນ, ຫັນແຮງງານ ຫັດຖະກຳເປັນແຮງງານກົນຈັກ, ສ້າງພື້ນຖານວັດຖຸເຕັກນິກຂອງສັງຄົມນິຍົມໃຫ້ນັບມື້ນັບສົມບູນ, ຈາກນັ້ນຈຶ່ງຈະສາມາດສ້າງເປັນການຜະລິດໃຫຍ່ສັງຄົມນິຍົມຢູ່ໃນປະເທດເຮົາໄດ້. ດ້ວຍຄວາມໝາຍດັ່ງກ່າວນັ້ນກໍ່ເປັນອັນຈະແຈ້ງວ່າການປະຕິວັດວິທະຍາສາດ-ເຕັກນິກແມ່ນປາຍແຫຼມບຸກ ທີ່ສຳຄັນກວ່າໝູ່ເພື່ອລົບລ້າງຄວາມທຸກຍາກຫຼ້າຫຼັງ, ຍາດເອົາໄຊຊະນະສົມບູນມາໃຫ້ສັງຄົມນິຍົມຢູ່ປະເທດເຮົາ.

ໄປພ້ອມໆກັບການປະຕິວັດການພົວພັນແຫ່ງການຜະລິດ ແລະ ການປະຕິວັດວິທະຍາສາດ - ເຕັກນິກ ນັ້ນ, ການດຳເນີນການປະຕິວັດ ແນວຄິດ-ວັດທະນະທຳເປັນກົດເກນທີ່ຕ້ອງເປັນໄປຂອງການປະຕິວັດສັງຄົມນິຍົມ, ທັງນັ້ນແມ່ນໃສ່ປ່ຽນແປງຊີວິດດ້ານແນວຄິດຈິດໃຈແລະວັດທະນະທຳຂອງສັງຄົມ, ຂອງມະຫາຊົນສ່ວນຫຼວງຫຼາຍຢ່າງສົມເຊີງ, ກໍ່ສ້າງຄົນໃໝ່ທີ່ມີຄຸນສົມບັດປະຕິວັດອັນດີງາມ, ມີລະດັບວັດທະນະທຳ, ວິທະຍາສາດເຕັກນິກກ້າວໜ້າ, ມີຄວາມສາມາດຈັດຕັ້ງ-ຄຸ້ມຄອງ, ເປັນເຈົ້າສັງຄົມ; ເຝິກຝົນຫຼໍ່ຫຼອມ

ທຸກຄົນໃນຮຸ່ນຄົນຕ່າງກັນໃຫ້ເປັນຮຸ່ນກຳມະກອນ,ກະສິກອນ ລວມໝູ່ ແລະປັນຍາຊົນສັງຄົມນິຍົມເພື່ອເພີ່ມເຕີມໃຫ້ກອງກຳລັງດຳເນີນການປະຕິວັດສັງຄົມນິຍົມຢ່າງບໍ່ຢຸດຢັ້ງ,ຕອບສະໜອງຄວາມຮຽກຮ້ອງຕ້ອງການອັນນັບມື້ນັບສູງຂອງພາລະກິດກໍ່ສ້າງສັງຄົມນິຍົມ.

ໃນສະພາບຂອງປະເທດເຮົາ, ຍ້ອນນະໂຍບາຍເບື່ອເມົາເຮັດໃຫ້ໂງ່ຈ້າຂອງພວກລ່າເມືອງຂຶ້ນ ແລະສັກດິນາເປັນເວລາດົນນານ, ປະຊາຊົນບັນດາຊົນຊາດ ເຮົາເປັນຈຳນວນຫຼາຍຈຶ່ງບໍ່ຮູ້ຂ ານຮູ້ຂຽນ, ສັງຄົມຍັງຕິດ ຫ້ອຍຮ່ອງຮອຍຂອງການຜະລິດນ້ອຍທີ່ຫຼ້າຫຼັງທີ່ສຸດ, ຍັງມີຮີດຄອງປະເພນີ ແລະ ຄວາມເຊື່ອຖືອັນງົມງວາຍກໍ່ຄື ຜົນສະທ້ອນທີ່ເປັນພິດຮ້າຍຂອງວັດທະນະທຳທີ່ຕົກທອດ ມາແຕ່ລະບອບເກົ່າ, ຮຸ່ນຊາວໜຸ່ມ ທີ່ມີລະດັບວັດທະນະທຳ ສາມັນແມ່ນມີໜ້ອຍທີ່ສຸດ, ຖັນແຖວພະນັກງານແລະກຳມະກອນເຕັກນິກທີ່ມີຢູ່ດຽວນີ້ກໍ່ມີລະດັບຕ່ຳໃນທຸກດ້ານ,ໄປບໍ່ທັນກັບຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ໃໝ່ ຂອງການປະຕິວັດ. ສິ່ງເຫຼົ່ານັ້ນຊີ້ໃຫ້ເຫັນວ່າ ການປະຕິວັດແນວຄິດ-ວັດທະນະທຳແມ່ນມີຄວາມໝາຍສຳຄັນ ແລະຮີບດ່ວນທີ່ສຸດສຳລັບ ພວກເຮົາ! ເພາະສະນັ້ນ, ພວກເຮົາ<u>ຕ້ອງນຳເອົາການ ປະຕິ</u>

ວັດແນວຄິດ - ວັດທະນະທຳ ໄປກ່ອນກ້າວໜຶ່ງ, ຍາດແຍ່ງເວລາແລະນຳໃຊ້ທຸກຄວາມສາມາດສຸມກຳລັງເຂົ້າໃສ່ການສຶກສາອົບຮົມການເມືອງແນວຄິດເປັນຢ່າງດີ, ຊຸກຍູ້ພາລະກິດວັດທະນະທຳ, ສຶກສາ, ສາທາລະນະສຸກ, ກໍ່ສ້າງຊີວິດໃໝ່ໃນໝູ່ປະຊາຊົນບັນດາຊົນຊາດຢ່າງແຂງແຮງ, ຖືເປັນສຳຄັນພິເສດການບຳລຸງວັດທະນະທຳໃຫ້ພະນັກງານ, ກອງທະຫານ ແລະຮັບປະກັນການຮ່ຳຮຽນ, ເຝິກຝົນໃຫ້ຊາວໜຸ່ມ, ອະນຸຊົນ; ພ້ອມກັນນັ້ນກໍ່ເພີ່ມທະວີວຽກງານໜັງສືພິມ, ກະຈາຍສຽງ, ການພິມຈຳໜ່າຍ, ຮູບເງົາ, ສິລະປະວັນນະຄະດີ... ໂດຍຖືກຕ້ອງຕາມແນວທາງຂອງພັກ, ທັງນັ້ນກໍ່ເພື່ອຕອບສະໜອງຢ່າງທັນການຄວາມຮຽກຮ້ອງຕ້ອງການ ອັນໃຫຍ່ຫຼວງຂອງພາລະກິດດັດສ້າງ ແລະກໍ່ສ້າງສັງຄົມນິຍົມໃນປະເທດເຮົາ.

ວັດທະນະທຳໃໝ່ຂອງພວກເຮົາທີ່ມີເນື້ອໃນສັງຄົມນິຍົມ ແລະລັກສະນະຊາດນັ້ນຕ້ອງເຊື່ອມຊຶມຢ່າງເລິກເຊິ່ງລັກສະນະພັກ, ລັກສະນະປະຊາຊົນ ແລະທັດສະນະຕົວຈິງສັງຄົມນິຍົມ. ວັດທະນະທຳນັ້ນຕ້ອງທັນໄປຮັບໃຊ້ການດັດສ້າງ ແລະກໍ່ສ້າງເສດຖະກິດຢ່າງແຂງແຮງ, ຮັບໃຊ້ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການກໍ່ສ້າງຊີວິດ

ໃຫມ່ທີ່ສົດໃສ ແລະເຕັມໄປດ້ວຍແນວຄິດວັດທະນະທຳຂອງສັງຄົມໃຫມ່, ຕ້ອງສ່ອງແສງ ແລະສັນລະເສີນຢ່າງທັນການແບບຢ່າງອັນດີກ່ຽວກັບສິນທຳຂອງຄົນໃຫມ່ ທີ່ສະແດງອອກໃນການສູ້ຮົບ ແລະໃນການຜະລິດ; ພ້ອມກັນນັ້ນຕ້ອງຕໍ່ສູ້ ແລະປັດກວາດຮ່ອງຮອຍແນວຄິດແລະວັດທະນະທຳປະຕິການຂອງລະບອບສັກດີນາ, ລ່າເມືອງຂຶ້ນກໍ່ຄືຈິດຕະສາດ, ຮີດຄອງປະເພນີອັນຫຼ້າຫຼັງພົ້ນສະໄຫມຂອງສັງຄົມເກົ່າ ໃຫ້ຫມົດກ້ຽງໄປ. ການກໍ່ສ້າງວັດທະນະທຳໃຫມ່ ທີ່ນັບມື້ນັບຂະຫຍາຍຕົວ ແລະການສຶກສາອົບຮົມຫຼໍ່ຫຼອມຄົນໃຫມ່ທີ່ນັບມື້ນັບກ້າວຫນ້ານັ້ນ ເປັນການຫັນປ່ຽນທີ່ສຳຄັນທີ່ສຸດ, ເປັນພາຫະນະຕໍ່ສູ້ທີ່ສັກສິດທີ່ສຸດ ເພື່ອຮັບໃຊ້ ຢ່າງໄດ້ການໄດ້ງານ ແລະຊຸກຍູ້ການປະຕິວັດການພົວພັນແຫ່ງການຜະລິດ ແລະການປະຕິວັດວິທະຍາສາດ-ເຕັກນິກ ຢ່າງແຂງແຮງ, ນຳເອົາພາລະກິດປະຕິວັດສັງຄົມນິຍົມໃນປະເທດເຮົາໄປສູ່ໄຊຊະນະສົມບູນ.

III .- ບາງບັນຫາຕົ້ນຕໍ ກ່ຽວກັບແນວທາງເສດຖະກິດໃນບາດກາວເດີນທຳອິດຂອງພາລະກິດກໍ່ສ້າງສັງຄົມນິຍົມ ຢູ່ປະເທດເຮົາ.

ເສດຖະກິດການຜະລິດໃຫຍ່ສັງຄົມນິຍົມ ແມ່ນອີງໃສ່ການພົວພັນແຫ່ງການຜະລິດສັງຄົມນິຍົມ ແລະ ຖືເອົາອຸດສາຫະກຳໃຫຍ່ເປັນພື້ນ, ແມ່ນເສດຖະກິດ ຂະໜາດໃຫຍ່, ມີເຕັກນິກທັນສະໄໝ, ລະດັບການແບ່ງງານ ໃນສັງຄົມສູງ, ແຮງງານໄດ້ຮັບການຈັດຕັ້ງດີ ແລະ ມີສະມັດຖະພາບສູງ, ຮັບປະກັນເຮັດໃຫ້ການຜະລິດຂະຫຍາຍ ຕົວຢ່າງບໍ່ຢຸດຢັ້ງ, ຜະລິດວັດຖຸສິ່ງຂອງອອກໃຫ້ສັງຄົມນັບມື້ນັບຫຼາຍ; ບົນພື້ນຖານນັ້ນ ເພື່ອຕອບສະໜອງຄວາມ ຮຽກຮອງຕອງການອັນນັບມື້ນັບສູງໃນຊີວິດການເປັນຢູ່ ຂອງປະຊາຊົນ ແລະ ຄວາມຮຽກຮອງຕອງການອື່ນ ໆ ຂອງເສດຖະກິດແຫ່ງຊາດ. ຢາກນຳເອົາການຜະລິດນ້ອຍກ້າວຂຶ້ນສູ່ການຜະລິດໃຫຍ່, ຕ້ອງດຳເນີນການຫັນເປັນ ອຸດສາຫະກຳສັງຄົມນິຍົມ, ອັນນັ້ນ ເປັນກົດເກນພາວະວິໄສ ແຫ່ງການຂ້າມຜ່ານຂຶ້ນສູ່ສັງຄົມນິຍົມ ສຳລັບ ບັນດາປະເທດທີ່ມີເສດ

ຖະກິດບໍ່ທັນຂະຫຍາຍຕົວ ຫຼືຂະຫຍາຍຕົວບໍ່ທັນສູງ.

ປະເທດເຮົາກ້າວຂຶ້ນສັງຄົມນິຍົມ ໃນເງື່ອນໄຂ ທີ່ເສດຖະກິດແຫ່ງຊາດຍັງແມ່ນເສດຖະກິດການຜະລິດນ້ອຍ, ແຮງງານສັງຄົມສ່ວນຫຼາຍ ຍັງແມ່ນແຮງງານກະສິກຳ ທີ່ມີເຕັກນິກເພາະປູກອັນຫຼ້າສະໄໝ, ສະມັດຖະພາບ ຂອງງານຕ່ຳທີ່ສຸດ, ການຈໍລະຈອນແຈກຢາຍ ລະຫວ່າງເຂດຕ່າງ ໆ ແລະ ທ້ອງຖິ່ນຕ່າງ ໆ ຍັງຖືກຈຳກັດທີ່ສຸດ. ແຕ່ໃນດ້ານອື່ນ ພວກເຮົາພັດມີທ່າແຮງ ໃນດ້ານທີ່ດິນກວ້າງຂວາງສຳລັບການກະສິກຳ, ມີຊັບພະຍາກອນປ່າໄມ້, ບໍ່ແຮ່ທີ່ມີຄ່າ ແລະ ແຫຼ່ງພະລັງໄຟຟ້ານ້ຳຕົກ ອັນມາກມາຍຫຼວງຫຼາຍ, ທັງມີການຮ່ວມມື ແລະ ຊ່ວຍເຫຼືອ ເຊິ່ງກັນ ແລະ ກັນທາງດ້ານເສດຖະກິດ ແລະ ເຕັກນິກກັບປະເທດຕ່າງ ໆ ໃນໂລກ, ກ່ອນອື່ນໝົດ ແມ່ນກັບບັນດາປະເທດສັງຄົມນິຍົມອ້າຍນ້ອງ.

ເພື່ອແກ້ໄຂໜ້າທີ່ເສດຖະກິດອັນເປັນພື້ນຖານ ໃນຍ້າດກ້າວເດີນທຳອິດຄື ການສະສົມທຶນຮອນໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ແກ້ໄຂຊີວິດການເປັນຢູ່ ຂອງປະຊາຊົນນັ້ນ ພວກເຮົາຕ້ອງຫັນເອົາການກະສິກຳ, ປ່າໄມ້ທີ່ຍັງກະແຈກກະຈາຍ, ເອກະເທດມາເປັນກະສິກຳ-ປ່າໄມ້

ລວມໝູ່ ແລະ ຮອບດ້ານ; ສຸມທຸກຄວາມສາມາດເພື່ອຊີ້ນຳ ແລະ ຊ່ວຍເຫຼືອທ້ອງຖິ່ນຕ່າງໆ ໃນການຊຸກຍູ້ ການກໍ່ສ້າງ ແລະ ຂະຫຍາຍເສດຖະກິດ ຢູ່ຂັ້ນຮາກຖານ ຢ່າງແຂງແຮງ ແລະ ບົນພື້ນຖານນັ້ນ ຈັດຕັ້ງການຜະລິດ ຄືນໃໝ່, ດຳເນີນການແບ່ງງານຄືນໃໝ່ ແລະ ກ້າວຂຶ້ນກໍ່ສ້າງໂຄງປະກອບເສດຖະກິດອັນສົມເຫດສົມຜົນ ໃນແຕ່ລະທ້ອງຖິ່ນ ແລະ ໃນທົ່ວປະເທດ ແນໃສ່ຊຸກຍູ້ການຜະລິດຂຶ້ນຢ່າງແຂງແຮງ ແລະເພີ່ມສະມັດຖະພາບຂອງງານຂຶ້ນຢ່າງວ່ອງໄວ, ນຳເອົາການຜະລິດນ້ອຍຂອງປະເທດເຮົາກ້າວຂຶ້ນເປັນການຜະລິດໃຫຍ່ສັງຄົມນິຍົມເທື່ອລະກ້າວ.

ເພາະສະນັ້ນ, ມະຕິຄັ້ງທີ່ ໔ ແລະທີ່ ໕ ຂອງສູນກາງພັກ ຈຶ່ງໄດ້ກຳນົດເນື້ອໃນຕົ້ນຕໍກ່ຽວກັບແນວທາງແລະໜ້າທີ່ກໍ່ສ້າງ ແລະ ຂະຫຍາຍເສດຖະກິດ ໃນໄລຍະຂ້າມຜ່ານກ້າວຂຶ້ນສັງຄົມນິຍົມຂອງປະເທດເຮົາ ຄື: ເອົາການຂະຫຍາຍການກະສິກຳ ແລະປ່າໄມ້ເປັນພື້ນຖານເພື່ອ ຂະຫຍາຍອຸດສາຫະກຳ, ສົມທົບການຂະຫຍາຍກະສິກຳແລະປ່າໄມ້ກັບອຸດສາຫະກຳຢ່າງສົມສ່ວນໃນແຕ່ລະບາດກ້າວ, ຖືເປັນສຳຄັນການຂະຫຍາຍບາງຂະແໜງການອຸດສາຫະກຳໜັກອັນຈຳເປັນທີ່ມີຜົນປະໂຫຍດຮັບປະກັນໃຫ້ແກ່ການຊຸກຍູ້

ການຂະຫຍາຍກະສິກຳ, ປ່າໄມ້ ແລະອຸດສາຫະກຳເບົາ; ສຸມທຸກຄວາມສາມາດເຂົ້າໃນການກໍ່ສ້າງ ແລະ ຂະຫຍາຍເສດຖະກິດທ້ອງຖິ່ນ ຕາມແຜນການເອກະພາບຂອງລັດ, ສ້າງເງື່ອນໄຂ ເພື່ອກ້າວຂຶ້ນກໍ່ສ້າງໂຄງປະກອບອັນສົມບູນຂອງເສດຖະກິດແຫ່ງຊາດໃນຂັ້ນຕໍ່ໄປ; ສົມທົບຢ່າງແໜ້ນແຟ້ນການກໍ່ສ້າງເສດຖະກິດກັບການເພີ່ມທະວີ ແລະປັບປຸງການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ; ລະດົມທຸກຄວາມສາມາດຢູ່ພາຍໃນປະເທດເປັນຕົ້ນຕໍ, ພ້ອມກັນນັ້ນກໍ່ຕັ້ງໜ້າຍາດແຍ່ງ ແລະ ນຳໃຊ້ການຊ່ວຍເຫຼືອ ແລະ ການຮ່ວມມືທາງດ້ານເສດຖະກິດ-ເຕັກນິກ ຂອງຕ່າງປະເທດໃຫ້ດີ ເພື່ອກໍ່ສ້າງເສດຖະກິດສັງຄົມນິຍົມທີ່ເປັນເອກະລາດ, ເປັນເຈົ້າຕົນເອງຂອງພວກເຮົາ, ທັງນັ້ນ ແນ່ໃສ່ຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະທຳ ຂອງປະຊາຊົນບັນດາຊົນຊາດໃຫ້ສູງຂຶ້ນ ເທື່ອລະກ້າວ ແລະ ເພີ່ມການສະສົມທຶນຮອນອັນຈຳເປັນ ເພື່ອຊຸກຍູ້ຈັງຫວະຫັນເປັນອຸດສາຫະກຳສັງຄົມນິຍົມຢ່າງວ່ອງໄວ.

ແນວທາງກໍ່ສ້າງ ແລະ ຂະຫຍາຍເສດຖະກິດຂອງສູນກາງພັກ ທີ່ໄດ້ເວົ້າມາແລ້ວນັ້ນ ເປັນທິດທາງພື້ນຖານ ແລະ ເປັນບາດກ້າວເດີນອັນເໝາະສົມ, ມັນສ່ອງເຍືອງ

ທຸກການເຄື່ອນໄຫວ ໃນຍາດກ້າວເດີນທຳອິດແຫ່ງການຂັ້ນສູ່ສັງຄົມນິຍົມ ຂອງພວກເຮົາ. ເພື່ອກໍ່ສ້າງໂຄງປະກອບເສດຖະກິດອັນເຫມາະສົມ, ດຳເນີນການແບ່ງງານ ຄືນໃຫມ່ ໃນຂະບວນວິວັດແຫ່ງການ ປະຕິບັດແນວທາງນັ້ນ, ພວກເຮົາຕ້ອງກຳແຫນ້ນ ແລະແກ້ໄຂການພົວພັນລະຫວ່າງກະສິກຳ, ປ່າໄມ້ກັບອຸດສາຫະກຳ, ລະຫວ່າງເສດຖະກິດທ້ອງຖິ່ນ ກັບເສດຖະກິດສູນກາງ, ລະຫວ່າງການຜະລິດກັບການຈໍລະຈອນແຈກຢາຍ, ລະຫວ່າງການສະສົມ ກັບການໃຊ້ສອຍຢ່າງຖືກຕ້ອງຢູ່ສະເຫມີ.

<u>ບັນຫາກໍ່ສ້າງໂຄງປະກອບອຸດສາຫະກຳ, ກະສິກຳ ແລະ ປ່າໄມ້ໃຫມ່ :</u> ໃນການຜະລິດ ຂອງປະເທດເຮົາເມື່ອກ່ອນນີ້, ການກະສິກຳ, ປ່າໄມ້ ແລະ ອຸດສາຫະກຳຖືກແຍກອອກຈາກກັນ; ພື້ນຖານອຸດສາຫະກຳທີ່ມີຢູ່ຫນ້ອຍດຽວ ກໍ່ຊ້ຳພັດຮັບໃຊ້ສົງຄາມ ແລະການບໍລິການເຊິ່ງແມ່ນພວກລ່າເມືອງຂຶ້ນ ແລະ ພວກຕີນມືຂອງເຂົາ ເປັນຜູ້ກຳໂດຍກົງ; ທຶນຮອນ, ວັດຖຸດິບແມ່ນຂຶ້ນກັບຕ່າງປະເທດອ້ອຍຕ້ອຍ; ສິນຄ້າອຸດສາຫະກຳສ່ວນຫຼາຍ ແມ່ນຊື້ມາແຕ່ປະເທດນອກທັງນັ້ນ; ຄວາມອາດສາມາດບົ່ມຊ້ອນ ທາງດ້ານກະສິກຳ-ປ່າໄມ້ ຂອງປະເທດເຮົາແມ່ນມີມາກຫຼາຍ,

ແຕ່ຍ້ອນຂາດການຈັດຕັ້ງ ເປັນຕົ້ນແມ່ນຂາດການ ກະທົບຂອງອຸດສາຫະກຳ, ມັນຈຶ່ງຈົມຢູ່ໃນຄວາມຫຼ້າຊ້າຂະຫຍາຍຕົວບໍ່ໄດ້; ໂຄງປະກອບອຸດສາຫະກຳ, ກະສິກຳ ແລະປ່າໄມ້ຍັງບໍ່ທັນປະກົດຕົວຂຶ້ນ ອັນໄດ້ເຮັດໃຫ້ການຜະລິດ ຂະຫຍາຍຕົວບໍ່ໄດ້ເຊັ່ນດຽວກັນ.

ເພາະສະນັ້ນ, ຢາກຊຸກຍູ້ການຜະລິດໃຫ້ຂະຫຍາຍຕົວ ແລະ ເພີ່ມສະມັດຖະພາບຂອງງານສັງຄົມຂຶ້ນໄວນັ້ນ, ຕ້ອງສົມທົບການກະສິກຳ, ປ່າໄມ້ ແລະອຸດສາຫະກຳຢ່າງແໜ້ນແຟ້ນໃຫ້ເປັນໂຄງປະກອບເອກະພາບ ແລະສົມສ່ວນຕາມທິດທາງ : ເອົາການກະສິກຳ, ປ່າໄມ້ເປັນພື້ນຖານເພື່ອຂະຫຍາຍອຸດສາຫະກຳ, ເອົາອຸດສາຫະກຳ ເພື່ອຮັບໃຊ້ ແລະ ຊຸກຍູ້ກະສິກຳ ແລະປ່າໄມ້ໃຫ້ຂະຫຍາຍຕົວຢ່າງແຂງແຮງ.

ກະສິກຳແລະປ່າໄມ້ ເປັນທ່າແຮງ ໃນເສດຖະກິດຂອງປະເທດເຮົາ ເຊິ່ງເມື່ອກ່ອນນີ້ ໄດ້ຖືກກົດໜ່ວງໄວ້. ເພື່ອກໍ່ສ້າງປະເທດຊາດໃນເງື່ອນໄຂ ສະພາບແວດລ້ອມເສດຖະກິດຂອງປະເທດເຮົາໃນປັດຈຸບັນ, ພວກເຮົາ ຈຳເປັນຕ້ອງກ້າວຂຶ້ນຈາກການກະສິກຳ ແລະປ່າໄມ້. ໃນໄລຍະຫົວທີນີ້, ໜ້າທີ່ຂອງກະສິກຳ ແລະ ປ່າໄມ້ແມ່ນໜັກ

ໜ່ວງທີ່ສຸດ, ຕ້ອງໄດ້ບຸກບືນຂຶ້ນຢ່າງແຂງແຮງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງປະຊາຊົນໃນການກິນຢູ່, ສະໜອງວັດຖຸດິບໃຫ້ແກ່ອຸດສາຫະກຳເບົາ, ຮັບໃຊ້ໜ້າທີ່ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະຮັບປະກັນໃຫ້ມີແຫຼ່ງສິນຄ້າຂາອອກເພື່ອແລກປ່ຽນ ເຄື່ອງຈັກເຄື່ອງລານມາຮັບໃຊ້ການປະຕິວັດວິທະຍາສາດ-ເຕັກນິກ. ລະດັບຄາດໝາຍອັນຮີບດ່ວນ ໃນ ສອງສາມ ປີຕໍ່ໜ້ານີ້ແມ່ນຕ້ອງແກ້ໄຂບັນຫາສະບຽງເອົາເອງໃຫ້ໄດ້ ໂດຍບໍ່ຕ້ອງເອົາມາແຕ່ຕ່າງປະເທດອີກ.

ກະສິກຳ ແລະປ່າໄມ້ຂອງປະເທດເຮົາ ມີທ່າແຮງຂອງການກະສິກຳ ແລະ ປ່າໄມ້ເຂດຮ້ອນ, ເນື້ອທີ່ດິນປູກຝັງຍັງຫຼາຍ, ມີທົ່ງຫຍ້າອັນກວ້າງໃຫຍ່ ແລະ ມີປ່າໄມ້ທີ່ມີຄ່າຢູ່ຫຼາຍແຫ່ງ. ດັ່ງນັ້ນ ທິດທາງຂະຫຍາຍການກະສິກຳ-ປ່າໄມ້ແມ່ນຕ້ອງຮອບດ້ານ, ປະກອບດ້ວຍຂະແໜງການ ແລະ ວິຊາການຕ່າງໆ,ນັບທັງການຜະລິດສະບຽງ, ຕົ້ນໄມ້ອຸດສາຫະກຳ, ລ້ຽງສັດ, ການຂຸດຄົ້ນ ແລະບຳລຸງຮັກສາປ່າໄມ້ ແລະຂະແໜງສຳຮອງອື່ນ ໆ, ໃນນັ້ນເອົາການຜະລິດສະບຽງເປັນຈຸດໜັກ. ເພື່ອຊຸກຍູ້ກະສິກຳແລະປ່າໄມ້ໃຫ້ຂະຫຍາຍຕົວຢ່າງແຂງແຮງໃຫ້ເປັນພື້ນຖານ ແກ່

24/7 ບ້ານສຳຄັນ

ການຂະຫຍາຍຂຸດສາຫະກຳໄດ້ນັ້ນ, ໃນສະເພາະໜ້ານີ້, ພວກເຮົາຕ້ອງອອກແຮງກໍ່ສ້າງ ແລະ ປັບປຸງສະຫະກອນກະເສດ ແລະສະຫະກອນກະເສດປ່າໄມ້ຢ່າງວ່ອງໄວແລະໜັກແໜ້ນ, ພ້ອມກັນນັ້ນ ກໍ່ຕ້ອງກໍ່ສ້າງ ນິຄົມກະເສດແລະນິຄົມປ່າໄມ້ ຂອງລັດຈຳນວນໜຶ່ງ. ຕ້ອງອີງໃສ່ສະພາບດິນດອນ, ຊັບພະຍາກອນ, ບົດຮຽນ ແລະ ມູນເຊື້ອແຫ່ງການຜະລິດຂອງປະຊາຊົນໃນແຕ່ລະບໍລິເວນ ເພື່ອດຳເນີນການຈັດຕັ້ງການຜະລິດຄືນໃໝ່, ຈັດແບ່ງ ແລະນຳໃຊ້ຊັບພະຍາກອນ, ແຮງງານຂອງແຕ່ລະຕາແສງ,ແຕ່ລະເມືອງ, ແຕ່ລະແຂວງໃຫ້ເໝາະສົມຕາມແຜນ ກຳນົດການຜະລິດທີ່ເປັນເອກະພາບ. ໄປຄຽງຄູ່ກັນນັ້ນ ກໍ່ຕ້ອງມີວິທີການອັນຕັ້ງໜ້າ ເພື່ອເພີ່ມທະວີພື້ນຖານວັດຖຸ-ເຕັກນິກອັນຈຳເປັນ ແລະ ຮີບດ່ວນ ຄື : ລະບົບຊົນລະປະທານ, ຕາ ນ່າງຄົມມາຄົມຢູ່ຊົນນະບົດ,ສະຖານີຄົມມາຄົມຂົນສົ່ງ, ສະຖານີສ້ອມແປງ; ຕ້ອງແກ້ໄຂແຮງລາກແກ, ສະໜອງເຄື່ອງມືທຳມະດາ ແລະ ເຄື່ອງມືດັດແປງ ໃຫ້ແກ່ຜູ້ອອກແຮງງານ, ປະກອບກົນຈັກ ແລະ ເຄື່ອງກົນຈັກ ໃຫ້ບາງຂະແໜງການຜະລິດ ແລະ ບາງເຂດຜະລິດທີ່ ເປັນຈຸດໜັກ; ຕ້ອງຖືເປັນສຳຄັນການບຳລຸງສ້າງພະນັກງານ ຄຸ້ມ

ຄອງເສດຖະກິດ, ພະນັກງານ ແລະກຳມະກອນ ເຕັກນິກ ໃຫ້ແກ່ພື້ນຖານຜະລິດຕ່າງ ໆ.

ໃນຂະບວນວິວັດແຫ່ງການດຳເນີນການຫັນເປັນອຸດສາຫະກຳໃນປະເທດເຮົານັ້ນ, ໄປຄຽງຄູ່ກັບການ ຊຸກຍູ້ ແລະ ຂະຫຍາຍກະສິກຳ, ປ່າໄມ້ ກໍເປັນທຳມະດາຢູ່ວ່າ ຕ້ອງຖືເປັນສຳຄັນການຂະຫຍາຍອຸດສາຫະກຳຢ່າງເປັນພື້ນຖານ ແລະ ຮອບດ້ານ. ແຕ່ໃນຂັ້ນຫົວທີ ເນື່ອງຈາກ ພວກເຮົາບໍ່ທັນສາມາດແກ້ໄຂບັນຫາເຄື່ອງປະກອບ, ວັດຖຸດິບ ເປັນຕົ້ນແມ່ນ ກຳລັງແຮງງານກໍ່ຄືລະດັບເຕັກນິກໄດ້ ຢ່າງໄວວາເທື່ອ, ໃນດ້ານອື່ນຊ້ຳພັດຕ້ອງສຸມການລົງທຶນ ເພື່ອຊຸກຍູ້ ແລະ ຂະຫຍາຍກະສິກຳ, ປ່າໄມ້ ແນໃສ່ແກ້ໄຂຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ຂອງການຜະລິດ ແລະ ຊີວິດການເປັນຢູ່ກໍ່ຄືສ້າງພື້ນຖານໃຫ້ແກ່ອຸດສາຫະກຳ, ດັ່ງນັ້ນ ຈຶ່ງບໍ່ອາດຈະພັນຂະຫຍາຍການກໍ່ສ້າງອຸດສາຫະກຳ ຢ່າງເປັນພື້ນຖານ ແລະ ຮອບດ້ານໄປແຕ່ຫົວທີໄດ້ໂລດ. ໃນຫຼາຍປີ ສະເພາະໜ້ານີ້, ອຸດສາຫະກຳຕ້ອງ ບືນຂື້ນ ຢ່າງແຂງແຮງ ຕາມທິດທາງຮັບໃຊ້ ແລະຊຸກຍູ້ກະສິກຳ-ປ່າໄມ້ ເປັນຕົ້ນຕໍ, ຈາກນັ້ນແມ່ນກໍ່ສ້າງໂຄງປະກອບອຸດສາຫະກຳ, ກະສິກຳ ແລະ ປ່າໄມ້ໃຫມ່ຢູ່ໃນແຕ່ລະແຂວງ,

ແຕ່ລະເມືອງໃຫ້ມັບມັ້ນສົມສ່ວນ ແລະ ສົມບູນ. ຢາກເຮັດໄດ້ແນວນັ້ນ, ຕ້ອງເອົາໃຈໃສ່ສັບຊ້ອນ, ຈັດວາງ, ນຳໃຊ້ຄວາມສາມາດຂອງອຸດສາຫະກຳສູນກາງ ແລະ ທ້ອງຖິ່ນທີ່ມີຢູ່ດຽວນີ້ໃຫ້ມີປະສິດທິຜົນ; ເອົາໃຈໃສ່ສົ່ງເສີມ ແລະຂະຫຍາຍຫັດຖະກຳ, ອຸດສາຫະກຳນ້ອຍຂອງທ້ອງຖິ່ນຕ່າງໆ, ພິເສດແມ່ນຕ້ອງສຸມກຳລັງຊ່ວຍເຫຼືອທ້ອງຖິ່ນຕ່າງ ໆ ໃນການກໍ່ສ້າງພື້ນຖານອຸດສາຫະກຳອັນຈຳເປັນ ຈຳນວນຫນຶ່ງເພື່ອຮັບໃຊ້ກະສິກຳ, ປ່າໄມ້ຢ່າງທັນການ ຄື : ອູ່ສ້ອມແປງພາຫະນະຂົນສົ່ງ, ອູ່ສ້ອມແປງເຄື່ອງຈັກລາກແກ, ຈັກກໍ່ສ້າງ ໂດຍສົມທົບກັບການຜະລິດເຄື່ອງອາໄຫຼ່, ເຄື່ອງມືທຳມະດາ ແລະເຄື່ອງມືດັດແປງ, ຜະລິດຈັກຟາດເຂົ້າ, ຈັກສີເຂົ້າ, ຜະລິດອຸປະກອນກໍ່ສ້າງຕ່າງ ໆ, ຜະລິດບານປະຕູນ້ຳເພື່ອຮັບໃຊ້ຊົນລະປະທານ, ປຸງແຕ່ງເຄື່ອງປ່າຂອງນາ ແລະ ຜະລິດເຄື່ອງໃຊ້ຂອງສອຍ ອັນຈຳເປັນອື່ນໆ... ໃນເວລາດຽວກັນນັ້ນ ຕ້ອງມີແຜນການ ເລັ່ງລັດ ການສຳຫຼວດ, ສືບຄົ້ນ, ຂັ້ນແຜນ ແລະ ກຽມໃນທຸກດ້ານ ເພື່ອກ້າວໄປເຖິງສ້າງກິດຈະການອຸດສາຫະກຳສຳຄັນຂອງສູນກາງຂັ້ນຈຳນວນຫນຶ່ງເຊັ່ນ : ຂະແຫນງ ຂຸດຄົ້ນບໍ່ແຮ່, ທາດເຄມີ, ຫຼອມໂລຫະ, ໄຟຟ້ານ້ຳຕົກ ແລະ ກໍ່ສ້າງ

ສາຍທາງຄົມມາຄົມຍຸດທະສາດທີ່ຈຳເປັນ.

<u>ບັນຫາໂຄງປະກອບເສດຖະກິດທ້ອງຖິ່ນ ແລະເສດຖະກິດສູນກາງ ໃນສະເພາະໜ້າ :</u> ເສດຖະກິດທ້ອງຖິ່ນ ແລະເສດຖະກິດສູນກາງ ແມ່ນສອງພາກສ່ວນທີ່ເປັນອົງປະກອບຂອງເສດຖະກິດແຫ່ງຊາດ. ຢາກກໍ່ສ້າງສັງຄົມນິຍົມໃຫ້ສຳເລັດຜົນ, ພວກເຮົາຕ້ອງກ້າວຂຶ້ນ ກໍ່ສ້າງໂຄງປະກອບອຸດສາຫະກຳ, ກະສິກຳ ແລະ ປ່າໄມ້ອັນ ຄົບຖ້ວນ ແລະ ສົມສ່ວນ ໂດຍຜ່ານການກໍ່ສ້າງເສດຖະກິດ ທ້ອງຖິ່ນ ແລະ ເສດຖະກິດສູນກາງ ແລະ ສົມທົບແໜ້ນລະຫວ່າງ ເສດຖະກິດທ້ອງຖິ່ນ ກັບເສດຖະກິດສູນກາງ ຕາມແຜນກຳນົດທີ່ເປັນເອກະພາບ ໃນທົ່ວປະເທດ ພາຍໃຕ້ການນຳພາ ແລະ ຄຸ້ມຄອງຂອງພັກ ແລະລັດ.

ແຕ່ ໃນເງື່ອນໄຂ ທີ່ປະເທດເຮົາກ້າວຂຶ້ນສູ່ການຜະລິດໃຫຍ່ສັງຄົມນິຍົມ ຈາກການຜະລິດນ້ອຍ, ກະແຈກກະຈາຍ, ຂະຫຍາຍຕົວຊ້າ ດ້ວຍທິດທາງເອົາກະສິກຳ ແລະປ່າໄມ້ເປັນພື້ນຖານ ເພື່ອຂະຫຍາຍອຸດສາຫະກຳນັ້ນ, ພວກເຮົາຈຳຕ້ອງເລີ່ມຈາກທ້ອງຖິ່ນ, ຕ້ອງສຸມກຳລັງແຮງເຂົ້າໃສ່ການຂະຫຍາຍເສດຖະກິດທ້ອງຖິ່ນ ເພື່ອມີພື້ນຖານອັນໜັກແໜ້ນໃຫ້ການກໍ່ສ້າງເສດຖະກິດສູນກາງ. ອັນນັ້ນ

ແມ່ນເສັ້ນທາງທີ່ໄວກວ່າໝູ່ ແລະ ສອດຄ່ອງກວ່າໝູ່ກັບ ສະພາບແວດລ້ອມຂອງປະເທດເຮົາໃນປັດຈຸບັນ, ນັ້ນແມ່ນ ຂະບວນວິວັດແຫ່ງການຈັດຕັ້ງການຜະລິດຄືນໃໝ່, ແບ່ງ ງານສັງຄົມຄືນໃໝ່, ຂະບວນວິວັດແຫ່ງການຫັນເປັນລວມ ສູນ, ຫັນເປັນວິຊາສະເພາະ ແລະ ຫັນເປັນສະຫະກອນ ການຜະລິດອັນນັບມື້ນັບກວ້າງຂວາງ ຢູ່ໃນແຕ່ລະທ້ອງຖິ່ນ ແລ້ວໄປເຖິງທົ່ວປະເທດ... ແລະ ກໍ່ເປັນຄວາມຮຽກ ຮ້ອງຕ້ອງການພາວະວິໄສທີ່ມີລັກສະນະກົດເກນ ຂອງການ ຜະລິດນ້ອຍກ້າວຂຶ້ນການຜະລິດໃຫຍ່ສັງຄົມນິຍົມ, ຫາກບໍ່ ແມ່ນການແບ່ງຂັ້ນຄຸ້ມຄອງແຕ່ຢ່າງດຽວເທົ່ານັ້ນ.

ຢູ່ໃນປະເທດເຮົາ, ແຕ່ລະແຂວງ ລ້ວນແຕ່ມີບົດ ບາດ ແລະ ທີ່ຕັ້ງຍຸດທະສາດສຳຄັນໃນທຸກດ້ານ, ແຂວງ ໃດກໍ່ມີທ່າແຮງທາງດ້ານເສດຖະກິດ ແລະ ມີໜ້າທີ່ດ້ານ ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບຂອງຕົນ. ສະ ເລ່ຍແລ້ວ ແຕ່ລະແຂວງມີພົນລະເມືອງປະມານ ໔ - ໙ ແສນຄົນ, ມີເນື້ອທີ່ລະຫວ່າງ ໑-໔ ລ້ານເຮັກຕາ ທີ່ອຳ ນວຍໃຫ້ແກ່ການປູກຝັງ ແລະ ລ້ຽງສັດ. ແຂວງໃດກໍ່ມີປ່າ ໄມ້ຊຸດົມຮັ່ງມີ, ມີແຫຼ່ງໄຟຟ້ານ້ຳຕົກ ແລະມີບໍ່ແຮ່ ອັນລ້ຳ ຄ່າຫຼາຍຢ່າງ, ນອກນັ້ນແຂວງໃດກໍ່ມີຊາຍແດນຕິດກັບປະ

ເທດນອກ. ສະນັ້ນ ເປັນອັນຈະແຈ້ງວ່າ ດ້ວຍຄວາມອາດສາມາດບົ່ມຊ້ອນ ແລະເງື່ອນໄຂສະດວກດີແນວນັ້ນ ແຂວງໃດກໍ່ມີຄວາມສາມາດກໍ່ສ້າງໂຄງປະກອບຊຸດສາທະກຳ, ກະສິກຳ ແລະປ່າໄມ້ຢ່າງຄົບຖ້ວນໄດ້, ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນຊີວິດການເປັນຢູ່ທາງດ້ານວັດຖຸແລະວັດທະນະທຳຂອງປະຊາຊົນ, ຮັບປະກັນ ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງບ້ານເມືອງໄດ້, ປະກອບສ່ວນປົກປັກຮັກສາ ແລະ ກໍ່ສ້າງປະເທດຊາດໃຫ້ຮັ່ງມີເຂັ້ມແຂງ. ແຕ່ ຢູ່ໃນລະບອບເກົ່າເມື່ອກ່ອນນີ້ ເສດຖະກິດທ້ອງຖິ່ນຖືກກົດໜ່ວງ ຢ່າງຮ້າຍແຮງ, ການ ຂະຫຍາຍຕົວກໍ່ບໍ່ມີການດຸນດ່ຽງຈັກດີ; ພວກລາວເມືອງຂຶ້ນແລະຊົນຊັ້ນປົກຄອງໄດ້ຂຸດຄົ້ນເອົາແຕ່ສິ່ງທີ່ເປັນ ປະໂຫຍດສະເພາະຂອງເຂົາເຊັ່ນ: ບໍ່ແຮ່ ແລະ ປ່າໄມ້ຊະນິດດີໆ ທີ່ຢູ່ອ້ອມແອ້ມໂຕເມືອງ ແລະ ຕາມເສັ້ນທາງຄົມນາຄົມທີ່ສະດວກເທົ່ານັ້ນ. ສ່ວນໃນຊົນນະບົດອັນກວ້າງໃຫຍ່ໄພສານນັ້ນ ກໍ່ຍັງແມ່ນເສດຖະກິດກຸ້ມຕົນເອງເພິ່ງຕົນເອງພໍໃຜ ພໍລາວຢູ່ຄືເກົ່າ, ຍິ່ງໄປກວ່ານັ້ນ ຢູ່ໃນຫຼາຍແຫ່ງ ເສດຖະກິດດັ່ງກ່າວຍັງຖືກອັດແຈບຢູ່ເປັນແຕ່ລະຄອບຄົວ, ແຕ່ລະໝູ່ບ້ານ. ໃນຂະນະທີ່ເປົ້າໝາຍ ແຮງງານມີຫຼວງຫຼາຍ,

ກຳລັງແຮງງານມີໜ້ອຍຢູ່ແລ້ວຊ້ຳພັດນຳໃຊ້ບໍ່ໝົດ (ເຫຼືອບໍ່ພໍ), ຢູ່ໃນຫຼາຍແຫ່ງ ແຮງງານໜຶ່ງໆ ໃຊ້ແຕ່ປະມານ ໑໐໐ ມື້ຕໍ່ປີ, ອັນນັ້ນ ແມ່ນພົນຮ້າຍ ຂອງເສດຖະກິດສະໄໝກ່ອນ ເຊິ່ງຕົກທອດມາຮອດປັດຈຸບັນ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນທຸກຍາກຂາດເຂີນຢ່າງຮ້າຍແຮງ ແລະບໍ່ຈັກວາເທົ່າໃດຟ້າເທົ່າໃດປີມານີ້ແລ້ວ, ການຜະລິດກໍ່ຢ້ຳເຫຼົ້າຢູ່ບ່ອນເກົ່າ ກ້າວຂຶ້ນບໍ່ໄດ້ຈັກເທື່ອ.

ເພາະສະນັ້ນໃນການກໍ່ສ້າງທ້ອງຖິ່ນຢ່າງຮອບດ້ານ ແລະຄົບຖ້ວນ ທາງດ້ານການເມືອງ, ການ ທະຫານ, ເສດຖະກິດ, ວັດທະນະທຳ ໂດຍທົ່ວໄປນັ້ນ ການສຸມໃສ່ກໍ່ສ້າງ, ຂະຫຍາຍເສດຖະກິດທ້ອງຖິ່ນ, ເສີມຂະຫຍາຍທ່າແຮງເສດຖະກິດຂອງທ້ອງຖິ່ນ ແລະ ກ້າວຂຶ້ນໄປຈາກທ້ອງຖິ່ນແມ່ນຄວາມຮຽກຮ້ອງຕ້ອງການ ອັນຮີບດ່ວນຂອງພວກເຮົາໃນປັດຈຸບັນ ແລະ ທັງເປັນບາດກ້າວເດີນທຳອິດໃນຂະບວນວິວັດແຫ່ງການກ້າວຂຶ້ນສັງຄົມນິຍົມ ຢູ່ປະເທດເຮົາອັນແມ່ນໃສ່ແກ້ໄຂບັນຫາດັດສ້າງການພົວພັນແຫ່ງການຜະລິດເກົ່າ ແລະ ກໍ່ສ້າງການພົວພັນແຫ່ງການຜະລິດໃໝ່ໃນປະເທດເຮົາຢ່າງແທ້ຈິງ, ຈັດຕັ້ງການຜະລິດຄືນໃໝ່, ແບ່ງງານຢູ່ໃນກະສິກຳປ່າໄມ້ຄືນໃໝ່, ສ້າງເສດຖະກິດຕາມ

ທຳມະຊາດ, ເພິ່ງຕົນເອງ ກຸ້ມຕົນເອງພໍໃຜພໍລາວທີ່ຍັງເຫຼືອຄ້າງຢູ່ຢ່າງຣ້າຍແຮງໃນປັດຈຸບັນໃຫ້ແຕກທະລາຍໄປ, ກໍ່ສ້າງໂຄງປະກອບເສດຖະກິດໃໝ່ເທື່ອລະກ້າວ, ເຮັດໃຫ້ກະສິກຳ, ປ່າໄມ້ຕິດພັນກັບອຸດສາຫະກຳ ຢູ່ໃນແຕ່ລະເມືອງ, ແຕ່ລະແຂວງນັ້ນເອງ, ທັງນັ້ນກໍ່ເພື່ອຂຸດຄົ້ນແລະລະດົມທຸກຄວາມອາດສາມາດບົ່ມຊ້ອນດ້ານເສດຖະກິດຂອງທ້ອງຖິ່ນ, ຊຸກຍູ້ການຜະລິດໃຫ້ຂະຫຍາຍຕົວ ແລະ ເພີ່ມສະມັດຖະພາບຂອງງານສັງຄົມອື່ນ; ບົນພື້ນຖານນັ້ນ ຈຶ່ງເພີ່ມທະວີພັນທະພາບກຳມະກອນ - ຊາວນາ, ເພີ່ມທະວີຄວາມສາມັກຄີຊົນຊາດ, ປັບປຸງ ແລະກໍ່ສ້າງ ອຳນາດການປົກຄອງທ້ອງຖິ່ນ, ເພີ່ມທະວີການປ້ອງກັນຊາດ,ປ້ອງກັນຄວາມສະຫງົບ, ເສີມຂະຫຍາຍກຳລັງແຮງ ສັງລວມຂອງລະບອບໃໝ່ ໃນແຕ່ລະທ້ອງຖິ່ນ, ສ້າງເງື່ອນໄຂສະດວກ ເພື່ອກ້າວຂຶ້ນກໍ່ສ້າງເສດຖະກິດສູນກາງ ຢ່າງໜັກແໜ້ນ, ປະກອບສ່ວນເຂົ້າໃນການປົກປັກຣັກສາ ແລະ ກໍ່ສ້າງປະເທດຊາດຢ່າງມີຜົນສັກສິດ.

ເຖິງຢ່າງນັ້ນກໍດີ, ການສຸມໃສ່ກໍ່ສ້າງ ແລະ ຂະຫຍາຍເສດຖະກິດທ້ອງຖິ່ນນັ້ນ ບໍ່ໝາຍຄວາມວ່າ ຈະຖືເບົາເສດຖະກິດສູນກາງ ແລະ ມອບຂາດໃຫ້ທ້ອງຖິ່ນທັງ

ຫມົດ, ສ່ວນອົງການນຳ, ອຳນາດການປົກຄອງ ແລະອົງການເສດຖະກິດສູນກາງຊ້ຳພັດຢູ່ເສີຍ ບໍ່ມີ ຄວາມຮັບຜິດຊອບຫຍັງ, ຫາກຕ້ອງອີງໃສ່ຄວາມສາມາດຂອງເສດຖະກິດສູນກາງທີ່ມີຢູ່ແລ້ວກໍຄືອີງໃສ່ເຄື່ອງຈັກເຄື່ອງລານ, ວັດອຸປະກອນ ແລະ ພາຫະນະທີ່ໄດ້ມາ ຈາກການຊ່ວຍເຫຼືອ ຫຼື ແລກປ່ຽນນຳຕ່າງປະເທດນັ້ນ ແລ້ວຄຸ້ມຄອງ ແລະ ນຳໃຊ້ມັນໃຫ້ດີອີ່ຫຼີ ເພື່ອຮັບໃຊ້ຢ່າງໄດ້ການໄດ້ງານໃຫ້ການກໍ່ສ້າງ ແລະຂະຫຍາຍເສດຖະກິດທ້ອງຖິ່ນ. ທຸກຂະແຫນງການຂອງສູນກາງ ລ້ວນແຕ່ ຕ້ອງຫັນທຸກການເຄື່ອນໄຫວຂອງຕົນລົງຮາກຖານຢ່າງແຂງແຮງ, ຖືການ ສຸມກຳລັງເຂົ້າໃສ່ການກໍ່ສ້າງ ແລະ ຂະຫຍາຍເສດຖະກິດທ້ອງຖິ່ນເປັນຫນ້າທີ່ອັນດັບຫນຶ່ງຂອງຕົນເພື່ອປະຕິບັດແຜນການຂອງລັດ ແລະ ຜ່ານຈາກນັ້ນ ເພື່ອກໍ່ສ້າງ ແລະ ປັບປຸງລະບົບການຈັດຕັ້ງ ໃນຂະແຫນງການຂອງຕົນ, ພ້ອມກັນນັ້ນ ກໍຕ້ອງກະກຽມໃນທຸກດ້ານ ເພື່ອກ້າວຂຶ້ນກໍ່ສ້າງເສດຖະກິດສູນກາງ, ດຳເນີນການກໍ່ສ້າງ ແລະ ຂະຫຍາຍອຸດສາຫະກຳໃນຂະຫນາດໃຫຍ່.

ເພື່ອກໍ່ສ້າງ ແລະ ຂະຫຍາຍເສດຖະກິດທ້ອງຖິ່ນ, ໃນບາດກ້າວສະເພາະຫນ້ານີ້ ຕ້ອງສຸມກຳລັງເຂົ້າໃສ່ການ

ຂະຫຍາຍກະສິກຳ, ປ່າໄມ້, ຫັດຖະກຳ ແລະອຸດສາຫະກຳນ້ອຍ, ຂະຫຍາຍຄົມມະນາຄົມຂົນສົ່ງຂອງທ້ອງຖິ່ນ, ຈັດຕັ້ງການຈຳລະຈອນແຈກຢາຍສິນຄ້າລະຫວ່າງຕາແສງ ຕໍ່ຕາແສງ, ເມືອງຕໍ່ເມືອງ ຢູ່ພາຍໃນແຕ່ລະແຂວງ ແລະລະຫວ່າງແຂວງຕໍ່ແຂວງນຳກັນ: ສ້າງພື້ນຖານ ໃຫ້ໂຄງປະກອບການຜະລິດ ແລະ ຕະຫຼາດໃນທົ່ວປະເທດ ປະກົດຕົວຂຶ້ນ. ແຂວງຕ່າງໆ ມີໜ້າທີ່ຮັບຜິດຊອບ ປະຕິບັດການຫັນປ່ຽນດັ່ງກ່າວນັ້ນຢູ່ໃນທ້ອງຖິ່ນຂອງຕົນໂດຍກົງ. ບັນດາກະຊວງຕ້ອງເພີ່ມທະວີບົດບາດຊີ້ນຳ ແລະ ຄຸ້ມຄອງວຽກງານວິຊາສະເພາະຕາມຂະແໜງການຂອງຕົນ, ສົມທົບ ກັບການແບ່ງຂັ້ນຄຸ້ມຄອງຢູ່ໃນແຂວງຕ່າງໆໃຫ້ເໝາະສົມ, ຕັ້ງໜ້າແກ້ໄຂຂອດຈຳເປັນຈຳນວນໜຶ່ງທີ່ມີລັກສະນະລວມທົ່ວປະເທດ ຄື: ກໍ່ສ້າງຂົວທາງ ແລະກຳລັງຂົນສົ່ງຢູ່ໃນສາຍທາງຕົ້ນຕໍ, ສະໜອງສິນຄ້າ ແລະ ວັດຖຸປະກອນຕ່າງໆ, ເພີ່ມທະວີການກໍ່ສ້າງພະນັກງານ ແລະ ກຳມະກອນ ... ທັງນັ້ນ ກໍ່ເພື່ອຮັບໃຊ້ເປັນຢ່າງດີການຊຸກຍູ້ເສດຖະກິດທ້ອງຖິ່ນໃຫ້ກ້າວຂຶ້ນຢ່າງແຂງແຮງ. ໄປພ້ອມກັບການກໍ່ສ້າງຂັ້ນແຂວງໃຫ້ເປັນຫົວໜ່ວຍຍຸດທະສາດນັ້ນ ຕ້ອງອອກແຮງປັບປຸງ ແລະກໍ່ສ້າງຂັ້ນເມືອງ ໃຫ້ກ້າວຂຶ້ນເປັນຂັ້ນເສດຖະກິດ

ແລະແຜນການ (ຫາກບໍ່ແມ່ນເປັນຂັ້ນບໍລິຫານຢູ່ລະຫວ່າງກາງຄືແຕ່ກ່ອນ), ເຮັດໃຫ້ເມືອງກາຍເປັນບໍລິເວນສຳຄັນໃນການດຳເນີນການປະຕິວັດທັງ ສີ່ ປະການໄປພ້ອມໆກັນ, ເຮັດໃຫ້ຂັ້ນເມືອງ ເປັນຂັ້ນເທິງ ໂດຍກົງຂອງຕາແສງ ແລະ ຂອງສະຫະກອນຢ່າງແທ້ຈິງ, ມີຄວາມສາມາດ ແລະ ເງື່ອນໄຂພຽງພໍ ເພື່ອຊີ້ນຳຊຸກຍູ້ການເຄື່ອນໄຫວທຸກດ້ານຂອງຮາກຖານ.

<u>ບັນຫາກຳແໜ້ນ ແລະດຳເນີນການຈໍລະຈອນແຈກຢາຍເປັນຢ່າງດີ</u> :

ພຶດຕິກຳແຫ່ງການກໍ່ສ້າງ ເສດຖະກິດຢູ່ໃນປະເທດເຮົາໃນໄລຍະທີ່ຜ່ານມາກໍ່ຄືຢູ່ໃນບັນດາປະເທດສັງຄົມນິຍົມອ້າຍນ້ອງ ລ້ວນແຕ່ໄດ້ພິສູດໃຫ້ເຫັນຢ່າງຈະແຈ້ງວ່າ ເພື່ອຊຸກຍູ້ການຜະລິດຢ່າງແຂງແຮງ, ເພີ່ມສະມັດຖະພາບຂອງງານຢ່າງວ່ອງໄວ ແລະ ນຳເອົາການຜະລິດນ້ອຍກ້າວຂຶ້ນການຜະລິດໃຫຍ່ສັງຄົມນິຍົມນັ້ນ, ນອກຈາກການຈັດຕັ້ງການຜະລິດຄືນໃໝ່, ການແບ່ງງານຄືນໃໝ່ ແລະການກໍ່ສ້າງໂຄງປະກອບເສດຖະກິດອັນເໝາະສົມແລ້ວ ຍັງຕ້ອງຮູ້ຈັກຄຸ້ມຄອງເສດຖະກິດໃຫ້ດີ, ໝາຍຄວາມວ່າຕ້ອງຮູ້ຈັກຫັນເປັນແຜນການເສດຖະກິດ, ຮູ້ຈັກນຳໃຊ້ບັນດາການພົວພັນ

ຕະຫຼາດ ກໍຄືຕ້ອງຮັບນຳໃຊ້ໄມ້ວັດສິນເຊື່ອ, ລາຄາ, ເງິນ ເດືອນ ແລະ ດອກເບ້ຍຢ່າງເຫມາະສົມ, ທັງນັ້ນ ເພື່ອ ແນໃສ່ປະຕິບັດເປັນຢ່າງດີການດຸນດ່ຽງ ລະຫວ່າງການຜະ ລິດກັບການຈໍລະຈອນແຈກຢາຍ, ລະຫວ່າງການຜະລິດກັບ ການໃຊ້ສອຍ, ລະຫວ່າງການສະສົມ ກັບການໃຊ້ສອຍ, ໃນນັ້ນ ການກຳແຫນນ ແລະດຳເນີນການຈໍລະຈອນ ແຈກ ຢາຍໃຫ້ດີ ມີທີ່ຕັ້ງສຳຄັນເປັນພິເສດ ຕໍ່ຂະບວນວິວັດແຫ່ງ ການຜະລິດຄືນໃຫມ່ຂອງສັງຄົມ.

ການຈໍລະຈອນແຈກຢາຍແມ່ນຂອດລະຫວ່າງກາງທີ່ ເຊື່ອມຕໍ່ການຜະລິດກັບການຜະລິດ, ການຜະລິດກັບການໃຊ້ ສອຍ, ເຊື່ອມຕໍ່ບັນດາຂະແຫນງການເສດຖະກິດກັບບັນດາ ເຂດເສດຖະກິດຢູ່ພາຍໃນປະເທດ, ເຊື່ອມຕໍ່ເສດຖະກິດ ທີ່ເປັນເອກະລາດ ແລະ ເປັນເຈົ້າຕົນເອງ ຂອງປະເທດ ເຮົາກັບເສດຖະກິດຂອງປະເທດອື່ນໆ. ມີແຕ່ດຳເນີນການ ຈໍລະຈອນແຈກຢາຍ, ຫມູນໃຊ້ວິທີການທາງດ້ານລາຄາ, ດັດ ແປງການຄ້າຂາຍ, ຫຼຸດຜ່ອນຄ່າໃຊ້ຈ່າຍ ດ້ານການຈໍລະ ຈອນໄດ້ດີ ອັນແນໃສ່ຊຸກຍູ້ການຈໍລະຈອນແລກປ່ຽນເສດຖະ ກິດ, ຮັບໃຊ້ຄວາມຮຽກຮ້ອງຕ້ອງການ ຂອງການຜະລິດ ແລະ ຊີວິດການເປັນຢູ່ຢ່າງທັນການ ແລ້ວຈຶ່ງຈະຊຸກຍູ້ການ

ຜະລິດໃຫ້ຂະຫຍາຍຕົວ, ຊຸກຍູ້ການແບ່ງງານໃໝ່ ແລະຂະບວນວິວັດແຫ່ງການເປີດກວ້າງການຜະລິດຄືນໃໝ່ໄດ້, ປະກອບສ່ວນເພີ່ມການສະສົມໃຫ້ແກ່ສັງຄົມ ແລະ ຮັບໃຊ້ຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຍິ່ງຂຶ້ນ.

ປະຈຸບັນນີ້, ການຜະລິດ ກັບການໃຊ້ສອຍຢູ່ໃນປະເທດເຮົາຂາດດຸ່ນດ່ຽງຢ່າງຮ້າຍແຮງ ແລະ ພວມເຮັດໃຫ້ເກີດຄວາມຫຍຸ້ງຍາກຫຼາຍປະການໃນຊີວິດການເປັນຢູ່ຂອງພະນັກງານ, ລັດຖະກອນ, ກອງທະຫານ ແລະປະຊາຊົນບັນດາຊົນຊາດເຮົາຢ່າງຈະແຈ້ງ. ການຂາດດຸ່ນດ່ຽງລະຫວ່າງການຜະລິດກັບການໃຊ້ສອຍ ກໍ່ຄືຄວາມຫຍຸ້ງຍາກໃນການຜະລິດ ແລະ ຊີວິດການເປັນຢູ່ນັ້ນ ເປັນສິ່ງຫຼີກເວັ້ນໄດ້ຍາກໃນເງື່ອນໄຂຂອງປະເທດໜຶ່ງທີ່ມີເສດຖະກິດດ້ອຍພັດທະນາຊ້ຳພັດຖືກສົງຄາມທຳລາຍຢ່າງຍາວນານ, ພ້ອມກັນນັ້ນ ມັນກໍ່ເປັນນຳການຄຸ້ມຄອງເສດຖະກິດ, ການເງິນຂອງລັດເຮົາຍັງຫຼົມເຫຼວຢູ່ ແລະ ຍັງມີທັງການ ໂລບມາກໂລພາ ແລະ ຟຸ່ມເຟືອຍວັດຖຸຊັບສິນ ແລະ ແຮງງານຢ່າງຫຼວງຫຼາຍ, ແຕ່ດ້ານໜຶ່ງກໍ່ຕ້ອງແມ່ນຍ້ອນການຈັດຕັ້ງຈໍລະຈອນແຈກຢາຍຂອງພວກເຮົາເຮັດບໍ່ທັນດີນັ້ນເອງ.

ໃນສະພາບການດັ່ງກ່າວນັ້ນ ການບຸກໜ້າ ສູ້ຊົນ

ເພື່ອແກ້ໄຂສາຍພົວພັນລະຫວ່າງການສະສົມທຶນຮອນໃນຂັ້ນຕົ້ນໃຫ້ຖືກຕ້ອງ - ແນໃສ່ຮັບໃຊ້ໃຫ້ການຂະຫຍາຍເສດຖະກິດກັບການໃຊ້ສອຍສະເພາະໜ້າ ເພື່ອປົວແປງ ຊີວິດການເປັນຢູ່ຂອງປະຊາຊົນສ່ວນໃດສ່ວນໜຶ່ງນັ້ນແມ່ນການຕໍ່ສູ້ ທີ່ຫຍຸ້ງຍາກລ້ຳບາກທີ່ສຸດ, ມັນຮຽກຮ້ອງໃຫ້ພວກເຮົາໃຊ້ທຸກວິທີການຊຸກຍູ້ຂະບວນການຜະລິດຂຶ້ນຢ່າງແຂງແຮງ, "ຢອມກິນ ຢອມໃຊ້", ປະຕິບັດການປະຫຍັດໃຫ້ດີ, ຫຼຸດຜ່ອນການໃຊ້ສອຍອັນບໍ່ຈຳເປັນນັ້ນລົງ, ເດັດດ່ຽວຕ້ານ ການລັກໂລບຟູມເຟືອຍ, ເຮັດດີແນວນັ້ນໄດ້ ຈຶ່ງຈະສາມາດປະຕິບັດການດຸ່ນດ່ຽງໃໝ່ລະຫວ່າງການຜະລິດ ກັບການ ໃຊ້ສອຍ, ເຮັດໃຫ້ການເງິນ, ເງິນຕາ, ຕະຫຼາດ ລາຄາ ແລະ ຊີວິດການເປັນຢູ່ມີຄວາມສະຫງົບ ເປັນແຕ່ລະກ້າວ, ຈຶ່ງຈະສາມາດທ່ອມທຶນຮອນໄວ້ສະສົມ ແລະ ປົວແປງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ນຳເອົາຊີວິດອັນມັບມັ້ມັບສວຍສົດງົດງາມມາໃຫ້ປະຊາຊົນບັນດາຊົນຊາດ.

ເຖິງຢ່າງນັ້ນກໍ່ດີ, ການຂະຫຍາຍ ການຜະລິດ , ການປະຕິບັດການປະຫຍັດກໍ່ຍັງບໍ່ທັນສາມາດແກ້ໄຂການດຸ່ນດ່ຽງລະຫວ່າງການຜະລິດກັບການໃຊ້ສອຍໄດ້ຢ່າງສົມບູນ, ຫາກຍັງມີບັນຫາໜຶ່ງທີ່ມີຄວາມໝາຍສຳຄັນທີ່ສຸດ ນັ້ນແມ່ນ

ການແກ້ໄຂໃຫ້ດີ ຂອດຈໍລະຈອນແຈກຢາຍ, ດ້ວຍວ່າການຜະລິດກັບການໃຊ້ສອຍໃນສະພາບເສດຖະກິດຂອງປະເທດເຮົາປັດຈຸບັນກໍ່ຂຶ້ນກັບການຈໍລະຈອນແຈກຢາຍ ເປັນສ່ວນໃຫຍ່ທີ່ສຸດ. ແມ່ນວ່າການຜະລິດກັບການໃຊ້ສອຍມີການດຸນດ່ຽງແລ້ວ ແຕ່ການຈໍລະຈອນແຈກຢາຍຫາກເຮັດບໍ່ດີ ມັນກໍ່ຈະເກີດມີປະກົດການຂາດດຸນດ່ຽງລະຫວ່າງການຜະລິດກັບການໃຊ້ສອຍຄືກັນ. ກົງກັນຂ້າມ ຖ້າວ່າການຜະລິດແລະການໃຊ້ສອຍຂາດການດຸນດ່ຽງ, ແຕ່ການຈໍລະຈອນ ແຈກຢາຍຫາກເຮັດໄດ້ດີ ມັນກໍ່ຈະມີຜົນສະທ້ອນອັນດີເຖິງ ການຜະລິດ ແລະ ການໃຊ້ສອຍ.

ບັນດາຮູບການຂອງການຈໍລະຈອນແຈກຢາຍເຊັ່ນ: ແຈກຢາຍໂດຍຜ່ານການເງິນ, ເງິນເດືອນ, ລາຄາ, ສິນເຊື່ອ ... ຢູ່ໃນປະເທດເຮົາໃນປັດຈຸບັນແມ່ນໄດ້ ປະຕິບັດຜ່ານການຄ້າເປັນສ່ວນຫຼາຍ. ເມື່ອເວົ້າເຖິງທີ່ຕັ້ງສຳຄັນຂອງການຄ້າ ໃນບາດກ້າວເດີນທຳອິດ ຂອງໄລຍະ ຂ້າມຜ່ານ, ເລນິນໄດ້ຊີ້ອອກວ່າ "... ປະຈຸບັນນີ້ ຂົງເຂດການເຄື່ອນໄຫວດັ່ງກ່າວເທິງນັ້ນ ... ການຄ້າ ແມ່ນ "ຕ່ອງໂສ້" ຂອງສາຍໂສ້ແຫ່ງການພັນແປ ປະຫວັດສາດໃນບັນດາຮູບການຂ້າມຜ່ານແຫ່ງການກໍ່ສ້າງ ສັງຄົມນິຍົມ

ຂອງພວກເຮົາ ..., ແມ່ນຕ່ອງໂສ້ທີ່ພວກເຮົາ, ອຳນາດການປົກຄອງຂອງລັດກຳມາຊີບ ແລະ ພັກກອມມູນິດ ຕ້ອງໃຊ້ກຳລັງແຮງຂອງຕົນທັງໝົດ ເພື່ອກຳເອົາ ....".[1]

ເນື່ອງຈາກວ່າ ການຄ້າໃນໄລຍະນີ້ ມີບົດບາດສຳຄັນ ດີ ແນວນັ້ນ, ເລນິນຈຶ່ງໄດ້ຮຽກຮ້ອງ: "ສະມາຊິກພັກ ໂບນເຊວິກທຸກຄົນຕ້ອງຮ່ຳຮຽນ " ການຄ້າຂາຍສີວິໄລ":

ຍ້ອນແນວນັ້ນແຫຼະ ໄປພ້ອມກັບການຊຸກຍູ້ການຜະລິດໃຫ້ກ້າວຂຶ້ນຢ່າງແຂງແຮງ ພວກເຮົາຕ້ອງ ຖືເອົາການຄ້າເປັນສິ່ງສຳຄັນທີ່ສຸດ, ໃນນັ້ນ ນັບທັງການຄ້າ ພາຍໃນແລະການຄ້າຕ່າງປະເທດ. ຕ້ອງມີແຜນການເລັ່ງລັດການດັດສ້າງ ການວິສາຫະກິດ ການຄ້າຂອງເອກະ ຊົນຕາມທິດຮັບໃຊ້ການຜະລິດແລະຊີວິດການເປັນຢູ່ໃຫ້ດີ, ອັນສຳຄັນທີ່ສຸດແມ່ນຕ້ອງອອກແຮງຂະຫຍາຍກຳລັງການຄ້າລັດວິສາຫະກິດແລະບັນດາຮູບການຊື້ຂາຍລວມໝູ່ຂອງຊາວນາ, ກໍ່ສ້າງຕະຫຼາດທີ່ມີການຈັດຕັ້ງຢູ່ໃນໂຕເມືອງ ແລະ ຊົນນະບົດຂຶ້ນ, ຈັດຕັ້ງ ແລະຂະຫຍາຍການເຄື່ອນໄຫວຈໍລະຈອນແຈກຢາຍດ້ານຕ່າງ ໆ ຄືນໃໝ່ ໂດຍແມ່ນລັດ ເປັນຜູ້ຊີ້

1. ເລນິນ, ນິພົນເລືອກເຟັ້ນ, ສຳນັກພິມຈຳໜ່າຍ "ຊີເຕີວ", ຊ່າໄປ້ງ" 1970, ພິມເທື່ອທີ 2, ເຫຼັ້ມ 2, ໜ້າ 583.

ນຳຢ່າງເປັນເອກະພາບ.

ເພື່ອຮັບປະກັນການຜະລິດ ແລະ ການຈຳລະຈອນ ແຈກຢາຍ, ຕ້ອງຖືເປັນສຳຄັນພິເສດ ການຂະຫຍາຍ ການ ຄົມນາຄົມ ຂົນສົ່ງ "<u>ເອົາການຄົມນາຄົມ ໄປກ່ອນ</u>"[1], ນຳໃຊ້ທຸກຄວາມສາມາດດ້ານພາຫະນະຂອງລັດແລະປະຊາ ຊົນຢ່າງສູດຂີດ, ສົມທົບການໃຊ້ພາຫະນະພື້ນເມືອງຫຼາ ສະ ໄຫມ, ກັບພາຫະນະທັນສະໄຫມ, ສົມທົບ ທັງພາຍໃນປະ ເທດ ກັບຕ່າງປະເທດ ໂດຍມີການຈັດຕັ້ງແລະນຳໃຊ້ຢ່າງ ເຫມາະສົມ ເພື່ອຮັບໃຊ້ ຄວາມຮຽກຮ້ອງຕ້ອງການ ດ້ານ ການຂົນສົ່ງສິນຄ້າ, ວັດຖຸປະກອນສຳລັບການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນໂດຍສະເພາະແມ່ນບໍລິເວນ ຊົນຊາດແຖບພູດອຍ, ກໍ່ຄືຮັບໃຊ້ການປ້ອງກັນຊາດ, ປ້ອງ ກັນຄວາມສະຫງົບຢ່າງທັນການ.

ດ້ວຍເຫດນັ້ນ, ເວລານີ້ ຍິ່ງກວ່າເວລາໃດຫມົດ ພັກ ແລະລັດຜະເດັດການກຳມາຊີບຕ້ອງກຳການຄ້າ ແລະ ການ ຄົມນາຄົມຂົນສົ່ງໃຫ້ແຫນ້ນ ເພື່ອເຮັດໃຫ້ ເສດຖະ ກິດແຫ່ງຊາດມີການຫັນປ່ຽນ, ຮັບໃຊ້ໃຫ້ການຈັດຕັ້ງການຜະ

---

1. ມະຕິຂອງກອງປະຊຸມສູນກາງພັກປະຊາຊົນປະຕິວັດລາວ, ຄັ້ງທີ 3, ປີ 1975.

ລິດຄືນໃຫມ່, ການແບ່ງງານສັງຄົມຄືນໃຫມ່ຢ່າງມີພົນສັກສິດແລະກ້າວໄປເຖິງການກໍ່ສ້າງໂຄງປະກອບເສດຖະ ກິດໃຫມ່, ກໍ່ສ້າງການດູນດ່ຽງໃຫມ່ລະຫວ່າງການຜະລິດກັບການໃຊ້ສອຍ ແນໃສ່ເຮັດໃຫ້ການເງິນ, ເງິນຕາ, ຕະຫຼາດ, ລາຄາ ແລະ ຊີວິດການເປັນຢູ່ ມີຄວາມສະຫງົບເທື່ອລະກ້າວ, ສ້າງເງື່ອນໄຂອຳນວຍໃຫ້ແກ່ການ ກໍ່ສ້າງແລະຂະຫຍາຍເສດຖະກິດ, ໃຫ້ແກ່ການດັດສ້າງ ແລະ ກໍ່ສ້າງສັງຄົມນິຍົມຢ່າງສຳເລັດຜົນ. ພະນັກງານຂັ້ນນຳແລະສະມາຊິກພັກເອົາທັງຫມົດຕ້ອງຈື່ຈຳຄຳສອນຂອງ ເລນິນ, ອອກແຮງຮ່ຳຮຽນ "ຄ້າຂາຍສີວິໄລ" ເພື່ອນຳພາ ແລະເຮັດວຽກງານການຄ້າຢູ່ສູນກາງກໍ່ຄືຢູ່ທ້ອງຖິ່ນໃຫ້ດີ, ທັງນັ້ນແນໃສ່ຮັບໃຊ້ການຜະລິດ, ຮັບໃຊ້ຊີວິດການເປັນຢູ່ຂອງປະຊາຊົນ, ຮັບໃຊ້ການດັດສ້າງແລະກໍ່ສ້າງສັງຄົມນິຍົມ, ປັບປຸງພັນທະພາບກຳມະກອນ-ຊາວນາ ແລະຄວາມສາມັກ ຄີຈົນຊາດໃຫ້ແຫນ້ນແຟ້ນຍິ່ງຂຶ້ນ.

VII. ເສີມຂະຫຍາຍກຳລັງແຮງສັງລວມຂອງລະບອບໃຫມ່ເພື່ອຍາດເອົາໄຊຊະນະໃນການປະຕິວັດສັງຄົມນິຍົມ.

ການຂ້າມຜ່ານຂຶ້ນສູ່ສັງຄົມນິຍົມ ໂດຍບໍ່ຜ່ານເສັ້ນທາງຂະຫຍາຍຕົວແບບທຶນນິຍົມ ແມ່ນເສັ້ນທາງສັ້ນກວ່າໝູ່ທີ່ພັກເຮົາໄດ້ເລືອກເອົາ ເພື່ອພາປະຊາຊົນບັນດາຊົນຊາດເຮົາກ້າວຂຶ້ນສູ່ຊີວິດທີ່ມີຄວາມສະເໝີພາບ, ຢູ່ດີກິນດີ, ມີສັນຕິສຸກ ແລະສີວິໄລ. ແຕ່ ເພື່ອປະຕິບັດຈຸດໝາຍນັ້ນໄດ້ພວກເຮົາຍັງຕ້ອງຜ່ານຜ່າຄວາມຫຍຸ້ງຍາກລຳບາກຫຼາຍປະການ, ດ້ວຍວ່າເສັ້ນທາງນີ້ແມ່ນເສັ້ນທາງອັນໃຫມ່ຂຽມໃນປະຫວັດສາດ, ພວກເຮົາຍັງບໍ່ທັນມີບົດຮຽນພໍປານໃດແລະເກືອບວ່າພວກເຮົາກ້າວຂຶ້ນດ້ວຍ ໒ ມືເປົ່າ. ເປັນອັນຈະແຈ້ງວ່າ ໜ້າທີ່ປະຕິວັດໃນປັດຈຸບັນແມ່ນໃຫຍ່ຫຼວງ ແລະໜັກໜ່ວງທີ່ສຸດ, ພວກເຮົາຕ້ອງເພີ່ມທະວີຄວາມສາມັກຄີປວງຊົນ, ສາມັກຄີບັນດາຊົນຊາດເຮົາໃນລະດັບສູງ, ພ້ອມກັນນັ້ນກໍ່ເອົາໃຈໃສ່ຍາດແຍ່ງການຊ່ວຍເຫຼືອ ແລະ ການຮ່ວມມືຂອງສາກົນ ບົນພື້ນຖານປະຕິບັດແນວທາງຕ່າງປະເທດທີ່ເປັນເອກະລາດ, ເປັນເຈົ້າຕົນເອງ ແລະຖືກຕ້ອງ

ຂອງພັກເຮົາ, ທັງນັ້ນ ເພື່ອສ້າງເປັນກຳລັງແຮງສັງລວມຂອງລະບອບໃໝ່, ເອົາຊະນະຄວາມທຸກຍາກຫຼ້າຫຼັງ, ປະຕິບັດຄວາມສະເໝີພາບຢ່າງສົມບູນ ລະຫວ່າງ ບັນດາຊົນຊາດ, ກໍ່ສ້າງປະເທດເຮົາໃຫ້ເປັນປະເທດສັງຄົມນິຍົມທີ່ຮັ່ງມີເຂັ້ມແຂງ ແລະປະກອບສ່ວນຢ່າງສົມກຽດເຂົ້າໃນພາລະກິດຕໍ່ສູ້ລວມຂອງການປະຕິວັດໂລກ.

ເພື່ອເສີມຂະຫຍາຍກຳລັງແຮງ ສັງລວມ ຂອງລະບອບໃໝ່, ບັນຫາພື້ນຖານກ່ອນໝູ່ ແມ່ນຕ້ອງເພີ່ມທະວີຄວາມສາມັກຄີບັນດາຊົນຊາດ, ເຜົ່າຊົນ, ບັນດາຊົນຊັ້ນປະຕິວັດ, ມະຫາຊົນຊັ້ນຄົນຕ່າງໆ ໃຫ້ແໜ້ນແຟ້ນຍິ່ງຂຶ້ນ, ກໍ່ສ້າງກອງກຳລັງສາມັກຄີປວງຊົນບົນພື້ນຖານອັນໃໝ່ດ້ວຍຄຸນນະພາບສູງກວ່າເກົ່າ ເພື່ອເປັນພື້ນ ໃຫ້ແກ່ການຂະຫຍາຍກຳລັງປະຕິວັດໃນທຸກດ້ານ ແລະ ປະຕິບັດທຸກແນວທາງ, ແຜນນະໂຍບາຍຂອງພັກ ແລະລັດເຮົາໃນໄລຍະໃໝ່ຢ່າງມີໄຊ.

ຄວາມສາມັກຄີເປັນກຸ່ມໜຶ່ງກ້ອນດຽວ ອັນ ໜາແໜ້ນຂອງປວງຊົນ ແລະບັນດາຊົນຊາດເປັນບັນຫາໜຶ່ງທີ່ມີຄວາມໝາຍຕັດສິນຕໍ່ການຍືນຍົງຄົງຕົວຂອງຊາດ ແລະຂອງການປະຕິວັດໃນປະເທດເຮົາຕະຫຼອດມາ, ແຕ່ ພົ້ນ

ຖານ ແລະເນື້ອໃນຂອງຄວາມສາມັກຄີນັ້ນ ບໍ່ແມ່ນວ່າຍາມໃດກໍ່ຮັກສາໄວ້ໃນພາວະເດີມ, ຫາກແມ່ນຕ້ອງເຮັດໃຫ້ມັນຂະຫຍາຍຕົວດ້ວຍຄຸນນະພາບອັນສູງຂຶ້ນເລື້ອຍໆ, ໄປຄຽງຄູ່ກັບຂະບວນວິວັດແຫ່ງການຂະຫຍາຍຕົວຂອງການປະຕິວັດ. ມັນຮຽກຮ້ອງພັກເຮົາຕ້ອງວາງແຜນນະໂຍບາຍ, ນະໂຍບາຍອັນຖືກຕ້ອງ, ເຫມາະສົມອອກຢ່າງທັນການ ເພື່ອຈະສາມາດສາມັກຄີເຕົ້າໂຮມທຸກກຳລັງໄດ້ສະເຫມີ, ເສີມຂະຫຍາຍທຸກຄວາມອາດສາມາດຂອງຫມົດທັງຊາດ ໃນລະດັບສູງ, ຮັບປະກັນການສຳເລັດຫນ້າທີ່ຂອງການປະຕິວັດ ໃນແຕ່ລະໄລຍະຢ່າງມີໄຊ.

ໃນໄລຍະຕໍ່ສູ້ກູ້ຊາດ, ດ້ວຍຈຸດຫມາຍຕົ້ນຕໍຄື ໂຄ່ນລົ້ມຈັກກະພັດ ແລະສັກດີນາ, ຍາດເອົາເອກະລາດມາໃຫ້ປະເທດຊາດ, ຍາດເອົາຄວາມສະເຫມີພາບ ແລະເສລີພາບມາໃຫ້ປະຊາຊົນບັນດາຊົນຊາດ, ພັກເຮົາໄດ້ຍົກສູງຄັນທຸງເອກະລາດ, ປະຊາທິປະໄຕ, ສາມັກຄີກັບທຸກຊົນຊັ້ນ, ທຸກຊັ້ນຄົນ, ທຸກກຳລັງ ກະທັ້ງເຖິງບຸກຄົນຜູ້ຊົງຄຸນວຸດທິ, ເຈົ້າກົກ ເຈົ້າເຫຼົ່າ ... ໃນແນວໂຮມ ເອກະພາບແຫ່ງຊາດຢ່າງກວ້າງຂວາງ ໂດຍບໍ່ຈຳແນກຊົນຊັ້ນວັນນະ, ທ່າອຽງການເມືອງທະແນມແຕ່ມີນ້ຳໃຈຮັກຊາດ,ຮັກ

ປະຊາຊົນບັນດາຊົນຊາດ, ເດັດດ່ຽວຕ້ານຈັກກະພັດແລະພວກລູກມື. ພື້ນຖານຂອງກ້ອນກຳລັງສາມັກຄີຕ້ານຈັກກະພັດ ແລະສັກດີນາແມ່ນກ້ອນກຳລັງພັນທະພາບກຳມະກອນ-ຊາວນາ ໂດຍແມ່ນຊົນຊັ້ນກຳມະກອນນຳພາ. ແນວທາງນະໂຍບາຍມະຫາສາມັກຄີອັນຖືກຕ້ອງນັ້ນ ໄດ້ສ້າງເປັນກຳລັງແຮງອັນຍິ່ງໃຫຍ່ມະຫາສານຂອງຊາດ, ພາການປະຕິວັດຊາດ-ປະຊາທິປະໄຕ ຂອງປະເທດເຮົາໄປສູ່ໄຊຊະນະສົມບູນ.

ມາເຖິງປັດຈຸບັນ, ການປະຕິວັດໃນປະເທດເຮົາໄດ້ຫັນໄປສູ່ໄລຍະໃຫມ່ ເຊິ່ງຫນ້າທີ່ແມ່ນປົກປັກຮັກສາແລະກໍ່ສ້າງປະເທດຊາດ ສັງຄົມນິຍົມໃຫ້ສຳເລັດຜົນ, ແລະຈຸດຫມາຍພື້ນຖານແມ່ນລົບລ້າງຄວາມທຸກຍາກຫຼ້າຫຼັງ, ກໍ່ຄືທຸກຄວາມອາຄາດບາດຫມາງ, ຄວາມໂຕນກັນ ແລະຄວາມບໍ່ສະເຫມີພາບລະຫວ່າງບັນດາຊົນຊາດ ຢ່າງເຖິງກົກ ເຖິງຮາກ, ກໍ່ສ້າງລະບອບໃຫມ່ອັນຈົບງາມ, ລະບອບທີ່ບໍ່ມີການປໍລະປັກລະຫວ່າງຊົນຊັ້ນ ແລະຊົນຊາດ ແລະລະບອບທີ່ບໍ່ມີຄົນກົດຂີ່ຂູດຮີດຄົນອີກ. ບັນຫາເພີ່ມທະວີຄວາມສາມັກຄີປວງຊົນ, ເສີມຂະຫຍາຍກຳລັງແຮງທັງຫມົດ ຂອງຊາດ ຍັງຮັກສາຄວາມຫມາຍຍຸດທະສາດອັນສຳຄັນທີ່ສຸດ ຂອງມັນ.

ໄວ້ດັ່ງເດີມ, ແຕ່ພື້ນຖານຂອງຄວາມສາມັກຄີນັ້ນໄດ້ມີການ ປ່ຽນແປງຕ່າງເກົ່າ, ດ້ວຍລະດັບຄາດໝາຍ ດ້ານຄຸນນະ ພາບສູງກວ່າ ແລະເນື້ອໃນຮອບດ້ານ, ເລິກເຊິ່ງ, ເຖິງ ຖອງກວ່າ.

ຄວາມສາມັກຄີປວງຊົນ, ສາມັກຄີບັນດາຊົນຊາດ ໃນການປະຕິວັດສັງຄົມນິຍົມໃນປະເທດເຮົາປັດຈຸບັນນີ້ແມ່ນ ການຮ່ວມສຳພັນ, ການຮ່ວມມືຢ່າງແໜ້ນແຟ້ນລະຫວ່າງ ຊາວຜູ້ອອກແຮງງານດ້ວຍຕີນມື ກັບຊາວຜູ້ອອກແຮງງານ ດ້ວຍມັນສະໝອງຂອງທຸກໆ ຊົນຊາດ, ຊົນເຜົ່າ ແລະຜູ້ທີ່ ສັງກັດໃນຊົນຊັ້ນ ແລະ ຊັ້ນຄົນອື່ນ ນັບທັງພວກຊັ້ນເທິງ ທີ່ ໄດ້ຍອມຮັບການດັດສ້າງຫຼໍ່ຫຼອມຕົນເອງ ເພື່ອໃຫ້ກາຍເປັນ ຊາວຜູ້ອອກແຮງງານທີ່ກ້າວໜ້າ. ຫຼັກແຫຼ່ງຂອງຄວາມສາ ມັກຄີນັ້ນ ແມ່ນກ້ອນກຳລັງພັນທະພາບອັນໜັກແໜ້ນ ລະ ຫວ່າງຊົນຊັ້ນກຳມະກອນກັບຊົນຊັ້ນກະສິກອນລວມໝູ່; ຈຸດ ໝາຍຕໍ່ສູ້ຂອງມັນແມ່ນລົບລ້າງທຸກລະບອບຂູດຮີດ, ເກາະ ກິນຂອງຊົນຊັ້ນນາຍທຶນ ແລະກຳຈັດປັດເປົ່າທຸກໜໍ່ແໜງທີ່ ຂະຫຍາຍຕົວຕາມມັນເອງຂອງລະບອບທຶນນິຍົມ, ທັບມ້າງ ການຕ້ານຢັນ ແລະທຸກການເຄື່ອນໄຫວ ອຸບາຍຟື້ນຊີບຂອງ ບັນດາອິດທິກຳລັງປະຕິການລູກມືຂອງຈັກກະພັດ ແລະສັກດິ

ມາທີ່ຍັງເສດເຫຼືອຢູ່ໃຫ້ໝຸ່ນທະລາຍໄປ, ປົກປັກຮັກສາຄວາມເປັນເອກະລາດຂອງຊາດ ແລະກໍ່ສ້າງສັງຄົມນິຍົມໃນປະເທດເຮົາໃຫ້ສຳເລັດຜົນ.

ຄວາມສາມັກຄີປວງຊົນ, ສາມັກຄີບັນດາຊົນຊາດໃນການປະຕິວັດສັງຄົມນິຍົມ ແມ່ນຕິດພັນກັບແບບວິທີແຫ່ງການຜະລິດສັງຄົມນິຍົມ ແລະໄດ້ຮັບການສ້າງຂຶ້ນ ບົນພື້ນຖານເສດຖະກິດທີ່ເປັນເອກະພາບ, ວັດທະນະທຳ ທີ່ເປັນເອກະພາບ, ຈາກນັ້ນກໍ່ໄດ້ກໍ່ໃຫ້ເກີດມີຈິດຕະສາດ, ຄວາມຮັກແພງສະໜິດສະໜົມແລະຄວາມມຸ່ງມາດປາຖະໜາທີ່ເປັນເອກະພາບ ເຊິ່ງທ້ອນໂຮມອັນດີອັນງາມທຸກຢ່າງຂອງຊົນຊາດ, ເຜົ່າຊົນປະເທດເຮົາ. ນັ້ນແມ່ນຄວາມເປັນອັນໜຶ່ງອັນດຽວຢ່າງສົມບູນ ກ່ຽວກັບຈຸດໝາຍ, ອຸດົມຄະຕິຕໍ່ສູ້, ແມ່ນການສົມທົບຢ່າງຊຳນິຊຳນານ ກ່ຽວກັບ ຜົນປະໂຫຍດຂອງຊາດກັບຜົນປະໂຫຍດຂອງຊົນຊັ້ນ, ແມ່ນ ຄວາມສະເໝີພາບອັນສົມບູນກ່ຽວກັບພາລະໜ້າທີ່ແລະສິດປະໂຫຍດຂອງຊາວຜູ້ອອກແຮງງານທີ່ເປັນເຈົ້າຂອງ ປະເທດຊາດ, ໃນນັ້ນ ຄວາມສະເໝີພາບທາງດ້ານເສດຖະກິດແມ່ນພື້ນຖານເພື່ອສ້າງຄວາມສະເໝີພາບອັນສົມບູນທາງດ້ານການເມືອງ, ວັດທະນະທຳ ແລະສັງຄົມ.

ເພາະສະນັ້ນ, ເພື່ອປັບປຸງ ແລະເພີ່ມທະວີກ້ອນ ກຳລັງສາມັກຄີປວງຊົນ, ສາມັກຄີບັນດາຊົນຊາດໃນການປະຕິວັດສັງຄົມນິຍົມ, ພວກເຮົາຕ້ອງຮູ້ຈັກກຳແໜ້ນ ແລະເສີມຂະຫຍາຍບັນດາພື້ນຖານ ແລະເນື້ອໃນໃໝ່ທີ່ກ້າວມານັ້ນໃນລະດັບສູງ, ສ້າງການຫັນປ່ຽນໃໝ່ແນ່ໃສ່ເພີ່ມທະວີຄູນ ກຳລັງແຮງຂອງໝົດທັງຊາດ, ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ປະຕິວັດໃນໄລຍະໃໝ່ໄດ້.

<u>ການເພີ່ມທະວີຄວາມສາມັກຄີປະຊາຊົນ ບັນດາຊົນຊາດ, ເຜົ່າຊົນ</u> ເປັນບັນຫາຍຸດທະສາດສຳຄັນທີ່ມີຄວາມໝາຍຕໍ່ຄວາມຍືນຍົງຄົງຕົວຂອງການປະຕິວັດປະເທດເຮົາຄືດັ່ງໄດ້ເວົ້າມານັ້ນ. ຍ້ອນແນວນັ້ນພວກເຮົາຕ້ອງເອົາໃຈໃສ່ຈົດຈໍ່ເຮັດວຽກງານຊົນຊາດໃຫ້ໄດ້ດີກວ່າເກົ່າ, ຈັດເອົາວຽກງານຊົນຊາດເຂົ້າເປັນວຽກງານໜຶ່ງໃນວຽກງານອັນດັບໜຶ່ງ, ວຽກງານທຸກດ້ານຂອງທຸກຂະແໜງການລ້ວນແຕ່ຕ້ອງປະກອບດ້ວຍເນື້ອໃນ ຂອງວຽກງານ ຊົນຊາດຢູ່ນຳ. ຢາກເຮັດໄດ້ແນວນັ້ນ ພວກເຮົາຕ້ອງຖືເປັນສຳຄັນຢູ່ສະເໝີ ແລະ ມີວິທີແທດຕົວຈິງກ່ຽວກັບການຍົກລະດັບການເມືອງ, ແນວຄິດ, ຂະຫຍາຍວັດທະນະທຳ-ສຶກສາ, ສາທາລະນະສຸກ, ຊຸກຍູ້ການຜະລິດ, ແກ້ໄຂຊີວິດການເປັນ

ຢູ່ທຸກດ້ານຂອງປະຊາຊົນບັນດາຊົນຊາດໂດຍສະເພາະແມ່ນເຂດຊົນຊາດທີ່ຢູ່ຫ່າງໄກສອກຫຼີກ ເຊິ່ງຊີວິດການເປັນຢູ່ຍັງມີຄວາມຫຍຸ້ງຍາກຂາດເຂີນຢູ່; ຕ້ອງຄຳນຶງຢ່າງເໝາະສົມເຖິງບັນຫາຈິດຕະສາດ, ຄວາມມຸ່ງມາດປາຖະໜາ, ຮີດຄອງປະເພນີ, ຄວາມເຊື່ອຖືຂອງແຕລະຊົນຊາດ, ເຜົ່າຊົນ ແນໃສ່ສາມັກຄີເຕົ້າໂຮມມະຫາຊົນຢ່າງກວ້າງຂວາງ, ຊ່ວຍເຫຼືອຊຸກຍູ້ເຂົາເຈົ້າກ້າວຂຶ້ນກໍ່ສ້າງສັງຄົມນິຍົມ ເທື່ອລະກ້າວ. ຕ້ອງເອົາໃຈໃສ່ຢ່າງເໝາະສົມການຂົນຂວາຍບັນດາເຈົ້າກົກເຈົ້າເຫຼົ່າ, ຜູ້ເຖົ້າ ຜູ້ແກ່ໃນໝູ່ຊົນຊາດ, ພວກເຮົາຕ້ອງຈັດຈໍ່ເປັນພິເສດການບຳລຸງ ກໍ່ສ້າງພະນັກງານຊົນຊາດ. ທັງໝົດເຫຼົ່ານັ້ນແມ່ນແນໃສ່ເສີມຂະຫຍາຍມູນເຊື້ອສາມັກຄີຕໍ່ສູ້ຂອງແຕລະຊົນຊາດ, ເຜົ່າຊົນ ແລະທ່າແຮງທາງດ້ານເສດຖະກິດຂອງແຕ່ລະເຂດ, ເຮັດໃຫ້ບັນດາຊົນຊາດ ເຜົ່າຊົນມີຄວາມກ້າວໜ້າ ສະໝ່ຳ ສະເໝີກັນ, ຮັບປະກັນໃຫ້ເຂດພູດອຍ ຂອງປະເທດຊາດມີການຂະຫຍາຍຕົວຢ່າງວ່ອງໄວກ້າວຂຶ້ນສັງຄົມນິຍົມ ພ້ອມໆກັບເຂດທົ່ງພຽງ.

ການເພີ່ມທະວີຄວາມສາມັກຄີລະຫວ່າງບັນດາຊົນຊັ້ນປະຕິວັດ, ລະຫວ່າງມະຫາຊົນ ຊັ້ນຄົນຕ່າງໆໃຫ້ແໜ້ນແຟ້ນ

ຍິ່ງຂື້ນກວ່າເກົ່າ, ສ້າງການຫັນປ່ຽນປະຕິວັດຢ່າງເລິກເຊິ່ງ
ເຖິງຖອງຢູ່ໃນປະເທດ ນັ້ນເປັນຄວາມຮຽກຮ້ອງຕ້ອງການ
ອັນເປັນພື້ນຖານ ແລະຮີບດ່ວນທີ່ສຸດຂອງການປະຕິວັດໃນ
ໄລຍະປັດຈຸບັນ. ຂອດທີ່ມີຄວາມໝາຍຕັດສິນກວ່າໝູ່ແມ່ນ
ຕ້ອງອອກແຮງສຶກສາອົບຮົມ, ປຸກລຸກມະຫາຊົນ, ໄປຄຽງ
ຄູ່ກັບການເອົາໃຈໃສ່ຈັດຈໍ່ປ່ຽນແປງຊີວິດການເປັນຢູ່ດ້ານວັດ
ຖຸ ແລະຈິດໃຈ, ບົນພື້ນຖານນັ້ນແລ້ວຈັດຕັ້ງມະຫາຊົນເຂົ້າ
ເປັນຖັນແຖວອັນແໜ້ນໜາກວ່າເກົ່າໃນແນວໂຮມ ເອກະ
ພາບແຫ່ງຊາດແລະໃນອົງການຈັດຕັ້ງປະຕິວັດຕ່າງໆເຊັ່ນ:
ກຳມະບານ, ຊາວໜຸ່ມ, ແມ່ຍິງ... ຜ່ານການປະຕິວັດ
໓ ປະການ ແລະບັນດາຂະບວນການຜະລິດ, ການສູ້ຮົບ,
ພວກເຮົາຕ້ອງເພີ່ມທະວີການສຶກສາອົບຮົມ, ຈັດຕັ້ງ ແລະ
ຂະຫຍາຍຖັນແຖວກຳມະກອນ, ເສີມຂະຫຍາຍບົດບາດຫຼັກ
ແຫຼ່ງນຳພາຂອງຊົນຊັ້ນກຳມະກອນ, ເຮັດໃຫ້ຊົນຊັ້ນ ກຳ
ມະກອນ ເປັນເຈົ້າຢ່າງແທ້ຈິງ ໃນການຄຸ້ມຄອງ ແລະ
ການກໍ່ສ້າງພື້ນຖານລັດວິສາຫະກິດ, ເປັນບ່ອນອີງໃຫ້ການ
ຕໍ່ສູ້ປະຕິບັດການດັດສ້າງພາກສ່ວນເສດຖະກິດ ວິສາຫະກິດ
ທຶນນິຍົມ. ຕ້ອງເຕົ້າໂຮມອ້າຍເອື້ອຍນ້ອງກຳມະກອນພະ
ນັກງານ, ລັດຖະກອນໃນສຳນັກງານອົງການເຂົ້າໃນການ

ຈັດຕັ້ງກຳມະບານຢ່າງກວ້າງຂວາງ, ສຶກສາອົບຮົມ ແນວທາງນະໂຍບາຍຂອງພັກ, ສຶກສາອົບຮົມສະຕິຊົນຊັ້ນ ແລະ ເສີມຂະຫຍາຍບົດບາດເປັນເຈົ້າຂອງກຳມະກອນ, ເຮັດໃຫ້ກຳມະບານ ກາຍເປັນໂຮງຮຽນ ລັດທິສັງຄົມນິຍົມຢ່າງແທ້ຈິງ. ພັກເຮົາ ແລະຊົນຊັ້ນກຳມະກອນຕ້ອງຕັ້ງໜ້າສຶກສາອົບຮົມຊາວໄຮ່ນາໃຫ້ສາມັກຄີກັນເດີນເຂົ້າສູ່ ເສັ້ນທາງລວມໝູ່ສັງຄົມນິຍົມ, ຊ່ວຍເຫຼືອເຂົາເຈົ້າ ໃນການຍົກລະດັບວັດທະນະທຳໃຫ້ສູງຂຶ້ນ, ນຳເອົາວິທະຍາສາດເຕັກນິກເຂົ້າໃນການຜະລິດ, ກໍ່ສ້າງພື້ນຖານວັດຖຸ ແລະ ເຕັກນິກໃນດ້ານກະສິກຳເປັນເທື່ອລະກ້າວ; ຈາກນັ້ນ ແມ່ນປັບປຸງກອນກ່ຳລັງພັນທະພາບ ກຳມະກອນ-ຊາວນາ ໃນທຸກດ້ານການເມືອງ,ເສດຖະກິດ, ວັດທະນະທຳໃຫ້ແໜ້ນໜາຍິ່ງຂຶ້ນ ເພື່ອເປັນພື້ນໃຫ້ແກ່ຄວາມສາມັກຄີທົ່ວປວງຊົນ, ປະຕິບັດສິດເປັນເຈົ້າລວມໝູ່ຂອງປະຊາຊົນຜູ້ອອກແຮງງານໃນທົ່ວປະເທດ. ພ້ອມກັນນັ້ນ ກໍ່ສຶກສາອົບຮົມຊາວຜູ້ອອກແຮງງານອື່ນໆ ຢູ່ໃນຕົວເມືອງ ແລະຊົນນະບົດ, ນຳເອົາເຂົາເຈົ້າເຂົ້າສູ່ເສັ້ນທາງອອກແຮງງານຜະລິດລວມໝູ່ ແລະ ເສີມຂະຫຍາຍບົດບາດຂອງເຂົາເຈົ້າ ຢ່າງແທ້ຈິງ ໃນລະບອບເປັນເຈົ້າລວມໝູ່ສັງຄົມນິຍົມ.

ໃນການປະຕິວັດສັງຄົມນິຍົມ, <u>ບົດບາດຂອງປັນຍາຊົນແມ່ນສຳຄັນທີ່ສຸດ.</u> ເລນິນໄດ້ເວົ້າວາ: "ຄັນບໍ່ມີປັນຍາຊົນປະຕິວັດ ແລະຄວາມຮູ້ວິທະຍາສາດ ກໍ່ບໍ່ມີລັດທິສັງຄົມນິຍົມ". ຍ້ອນແນວນັ້ນ, ພັກຕ້ອງເອົາໃຈໃສ່ຈົດຈໍ່ໃຫ້ການສຶກສາອົບຮົມ, ບຳລຸງ, ສົ່ງເສີມຂະຫຍາຍສະຕິປັນຍາ ແລະນຳໃຊ້ຄວາມສາມາດ ແລະຄວາມຊຳນິຊຳນານ ຂອງເຂົາເຈົ້າຢ່າງເໝາະສົມ. ເພື່ອກໍ່ສ້າງຖັນແຖວປັນຍາຊົນສັງຄົມນິຍົມທີ່ທັງມີຄຸນສົມບັດສິນທຳດີ, ທັງມີຄວາມຮູ້ດ້ານວິຊາສະເພາະເກັ່ງໃຫ້ໄດ້ຢ່າງວ່ອງໄວພວກເຮົາຕ້ອງຖືເປັນສຳຄັນທີ່ສຸດການບຳລຸງ, ຂະຫຍາຍແລະສາມັກຄີຖັນແຖວປັນຍາຊົນ ທີ່ມີຕົ້ນກຳເນີດຈາກກຳມະກອນ, ຊາວນາແລະຄອບຄົວປະຕິວັດ; ພ້ອມກັນນັ້ນ ກໍ່ເອົາໃຈໃສ່ຈົດຈໍ່ໃຫ້ການສຶກສາອົບຮົມ, ແນະນຳ ແລະຊ່ວຍເຫຼືອຮຸ່ນປັນຍາຊົນທີ່ມີຕົ້ນກຳເນີດຈາກຊັ້ນຄົນອື່ນໆ.

ສຳລັບຜູ້ຊົງຄຸນວຸດທິສັງກັດໃນບັນດາຊົນຊາດ, ສາສະໜາທີ່ມີນ້ຳໃຈຮັກຊາດ, ກາວໜ້າ ແລະນາຍທຶນແຫ່ງຊາດທີ່ເຫັນດີເຫັນພ້ອມນຳການດັດສ້າງ ແລະກໍ່ສ້າງສັງຄົມນິຍົມນັ້ນ ພວກເຮົາແມ່ນຍິນດີສາມັກຄີ,ຊ່ວຍເຫຼືອເຂົາເຈົ້າຢ່າງສຸດຂີດ, ເສີມຂະຫຍາຍການອຸທິດ ອັນຕັ້ງໜ້າຂອງ

ເຂົາເຈົ້າໃຫ້ແກ່ລະບອບໃໝ່. ຜູ້ທີ່ເປັນນາຍ ທະຫານ, ນາຍຕຳຫຼວດ, ຂ້າລາຊະການ ໃນກົງຈັກ ປົກຄອງເກົ່າ ເຊິ່ງມາໃນດຽວນີ້ໄດ້ຍິນຍອມຮ່ຳຮຽນ ເຝິກຝົນດັດສ້າງຕົນເອງ ແລະມີຈິດໃຈຢາກອຸທິດກຳລັງວັງຊາ ແລະຄວາມສາມາດຂອງຕົນໃຫ້ແກ່ປະເທດຊາດນັ້ນ ພວກເຮົາກໍ່ລ້ວນແຕ່ໃຫ້ການຊ່ວຍເຫຼືອເຂົາເຈົ້າຢ່າງສຸດອົກ, ສ້າງເງື່ອນໄຂອຳນວຍໃຫ້ເຂົາເຈົ້າໄດ້ເຮັດໜ້າທີ່ ແລະ ຊົມໃຊ້ສິດປະໂຫຍດຂອງພົນລະເມືອງດີ.

ເພື່ອເສີມຂະຫຍາຍກຳລັງແຮງ ສ້າງລວມ ຂອງລະບອບໃໝ່ນັ້ນ ໄປຄຽງຄູ່ກັບການສຶກສາອົບຮົມປູກລູກມະຫາຊົນ, ເພີ່ມທະວີຄວາມສາມັກຄີປວງຊົນ, ສາມັກຄີບັນດາຊົນຊາດພວກເຮົາຕ້ອງອອກແຮງປັບປຸງ ແລະກໍ່ສ້າງກົງຈັກລັດ ໃນທຸກດ້ານ ແຕ່ສູນກາງລົງເຖິງທ້ອງຖິ່ນ ແລະຮາກຖານ, ເຮັດໃຫ້ກົງຈັກຂອງລັດເຮົາເປັນເຄື່ອງມື ອັນແຫຼມຄົມຢ່າງແທ້ຈິງເພື່ອປະຕິບັດແນວທາງແຜນນະໂຍບາຍຂອງພັກ, ຈັດຕັ້ງຊີ້ນຳ ແລະຄຸ້ມຄອງພາລະກິດປົກປັກຮັກສາ, ດັດສ້າງ ແລະກໍ່ສ້າງປະເທດຊາດໂດຍກົງ ກໍ່ຄືຮັບປະກັນການປະຕິບັດສິດເປັນເຈົ້າລວມໝູ່ຂອງປະຊາຊົນບັນດາຊົນຊາດ ພາຍໃຕ້ການນຳພາຂອງພັກ.

ລະດັບຄາດໝາຍຂອງການປັບປຸງກໍ່ສ້າງກົງຈັກລັດໃນຫຼາຍປີຕໍ່ໜ້ານີ້ ແມ່ນຕ້ອງອອກແຮງສັບຊ້ອນ ແລະບູລະນະການຈັດຕັ້ງໃຫ້ແໜ້ນໜາ ໄປຄຽງຄູ່ກັບການຍົກສູງປະສິດທິຜົນໃນການຄຸ້ມຄອງສັງຄົມ, ຄຸ້ມຄອງເສດຖະກິດ, ວັດທະນະທຳ, ການເພີ່ມທະວີຄວາມສາມາດໃນການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ເຮັດໃຫ້ພາກສ່ວນຕ່າງໆ ທີ່ສຳຄັນໃນກົງຈັກຂອງລັດມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມສາມາດທາງດ້ານວິຊາສະເພາະ ເພື່ອຮັບປະກັນໃຫ້ບັນດາແຜນນະໂຍບາຍຂອງພັກ ແລະລັດໄດ້ຮັບການປະຕິບັດຢ່າງຖືກຕ້ອງ ກໍ່ຄືຮັບປະກັນໃຫ້ສິດເປັນເຈົ້າລວມໝູ່ຂອງປະຊາຊົນໄດ້ຮັບການປະຕິບັດ ຢ່າງເຂັ້ມງວດ.

ເພື່ອຍົກສູງຄວາມສັກສິດຂອງກົງຈັກລັດ, ປະຕິບັດພາລະບົດບາດ ເປັນພາຫະນະຜະເດັດການກຳມາຊີບຂອງມັນໄດ້ນັ້ນ ກ່ອນອື່ນໝົດຕ້ອງສຶກສາອົບຮົມຍົກລະດັບຄວາມຕື່ນຕົວການເມືອງ, ນ້ຳໃຈຮັກຊາດ, ຮັກສັງຄົມນິຍົມຂອງພະນັກງານ, ລັດຖະກອນ ແລະນັກຮົບທຸກຄົນໃຫ້ສູງຂຶ້ນ; ເຮັດໃຫ້ເຂົາເຈົ້າຮັບຮູ້ແຈ້ງຄວາມຮັບຜິດຊອບ ແລະພາລະໜ້າທີ່ອັນສັກກະລະບູຊາຂອງຕົນຕໍ່ປະເທດຊາດ, ຕໍ່ປະຊາ

ຊົນ, ບົນພື້ນຖານນັ້ນ ປະຕິບັດ ແລະເສີມຂະຫຍາຍຈິດໃຈເປັນເຈົ້າລວມໝູ່ສ້າງຄົນນິຍົມຂອງເຂົາເຈົ້າ, ເດັດດ່ຽວຕໍ່ສູ້ຕ້ານພະຍາດຂຸນເສິກໃຊ້ແຕ່ຄຳສັ່ງ, ອວດອ້າງລ່ວງອຳນາດ, ຂູ່ເຂັນມະຫາຊົນ, ພະຍາດອາດຍາສິດຫ່າງເຫີນຈາກຕົວຈິງ, ວົນນຳແຕ່ໂຕະຕັ່ງເຈ້ຍສໍ, ຖືເບົາການ ຈັດຕັ້ງຄຸ້ມຄອງ... ທີ່ຍັງມີລັກສະນະແຜ່ພາຍຢູ່ໃນ ອົງການຕ່າງໆຂອງລັດໃນປັດຈຸບັນ. ກົງຈັກລັດສູນກາງຕ້ອງກໍ່ສ້າງໃຫ້ກະທັດຮັດເບົາບາງ ແຕ່ມີຄຸນນະພາບສູງ, ຮັບປະກັນການປະຕິບັດວຽກງານຕົ້ນຕໍ ໃນປັດຈຸບັນຄື ວຽກງານ ຄົ້ນຄ້ວາ, ວຽກງານແຜນການ, ວຽກງານກວດກາ, ວຽກງານຕ່າງປະເທດ ແລະວຽກງານ ບຳລຸງສ້າງ ພະນັກງານ...ເປັນຢ່າງດີ. ກົງຈັກອຳນາດການປົກຄອງແຂວງ, ເມືອງ ຕ້ອງມີຄວາມສາມາດພຽງພໍໃນການຊີ້ນຳການປະຕິບັດບັນດາໜ້າທີ່ຕົ້ນຕໍໃນທ້ອງຖິ່ນຄື: ຄຸ້ມຄອງການຜະລິດ, ການຈໍລະຈອນແຈກຢາຍ, ສຶກສາ, ສາທາລະນະສຸກ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ... ອຳນາດການປົກຄອງຂັ້ນຮາກຖານເປັນຂັ້ນທີ່ຕິດພັນກັບມະຫາຊົນ, ຮັບຜິດຊອບໂດຍກົງຕໍ່ຊີວິດການເປັນຢູ່ໃນທຸກດ້ານຂອງປະຊາຊົນ, ເປັນບ່ອນສູ້ຮົບປະເຊີນໜ້າກັບສັດຕູ, ສະນັ້ນ, ຕ້ອງໄດ້ຮັບ

ການກໍ່ສ້າງ, ປັບປຸງໃຫ້ເຂັ້ມແຂງ, ເປັນບ່ອນກວດສອບຕົວຈິງທຸກແຜນນະໂຍບາຍ, ນະໂຍບາຍຂອງພັກແລະລັດ, ທັງເປັນບ່ອນໃຫ້ກຳເນີດ, ຫຼໍ່ຫຼອມເຝິກຝົນພະນັກງານຂອງລະບອບເຮົາ. ນອກຈາກນັ້ນ, ພວກເຮົາຕ້ອງ ອອກແຮງສູ້ຊົນຢ່າງເອົາຈິງເອົາຈັງເພື່ອກໍ່ສ້າງລະບອບເຮັດວຽກ ຢ່າງວິທະຍາສາດ, ມີແບບແຜນເຮັດວຽກຢ່າງລະອຽດ, ມີແຜນການ, ຕິດແທດຕົວຈິງ ເພື່ອຍົກຄຸນນະພາບຂອງການເຄື່ອນໄຫວໃນທຸກດ້ານຂອງກົງຈັກລັດໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ. ໃນຫຼາຍປີສະເພາະໜ້ານີ້, ເພື່ອຮັບໃຊ້ຢ່າງທັນການຄວາມຮຽກຮ້ອງຕ້ອງການແຫ່ງການຂະຫຍາຍເສດຖະກິດທ້ອງຖິ່ນ ແລະເພີ່ມທະວີຄວາມສາມາດໃນການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ທັບມ້າງທຸກການແຊກຊຶມທຳລາຍຂອງສັດຕູນັ້ນ ຕ້ອງເດັດດ່ຽວຫັນທຸກຄວາມສາມາດ ແລະ ກຳລັງຂອງກົງຈັກລັດຂັ້ນສູນກາງ ແລະຂັ້ນແຂວງລົງຮາກຖານຊ່ວຍເຫຼືອແນະນຳທ້ອງຖິ່ນໂດຍກົງ ເພື່ອໃຫ້ເຂົາເຈົ້າເຮັດສຳເລັດໜ້າທີ່ໃຈກາງ ແລະພື້ນຖານ ຂອງການດັດສ້າງ ແລະກໍ່ສ້າງສັງຄົມນິຍົມໃນແຕ່ລະໄລຍະຢ່າງມີໄຊແລະຜ່ານຈາກນັ້ນແລ້ວຖອດຖອນບົດຮຽນ ເພື່ອປັບປຸງການຈັດຕັ້ງໃຫ້ຄົບຖ້ວນແລະດັດແປງລະບອບເຮັດວຽກໃຫ້ແທດເໝາະກັບ

ລັກສະນະໜ້າທີ່ຂອງແຕ່ລະຂັ້ນເປັນເທື່ອລະກ້າວ.

<u>ໃນການພົວພັນສາກົນ,</u> ບໍ່ວ່າໃນເມື່ອກ່ອນກໍ່ດີໃນປັດຈຸບັນ, ໂດຍຈົງຮັກພັກດີຕໍ່ລັດທິມາກ-ເລນິນ ແລະລັດທິສາກົນກຳມາຊີບ, ຈົງຮັກພັກດີຕໍ່ແນວທາງຕ່າງປະເທດ ທີ່ເປັນເອກະລາດ, ເປັນເຈົ້າຕົນເອງ ແລະຖືກຕ້ອງຂອງພັກເຮົາ, ພວກເຮົາໄດ້ພະຍາຍາມເຮັດສຸດຄວາມສາມາດຂອງຕົນຕະຫຼອດມາ ເພື່ອປະກອບສ່ວນເຂົ້າ ໃນການເພີ່ມທະວີຄວາມສາມັກຄີໃນຂະບວນການປະຕິວັດ ສັງຄົມນິຍົມ, ໃນຂະບວນການປົດປ່ອຍຊາດ ແລະຂະບວນຕໍ່ສູ້ເພື່ອ ສັນຕິພາບ, ປະຊາທິປະໄຕແລະກ້າວໜ້າທາງສັງຄົມຢູ່ໃນໂລກ, ຖືອັນນັ້ນເປັນໜ້າທີ່ປະຕິວັດທີ່ສຳຄັນທີ່ສຸດ ແລະເປັນປັດໃຈອັນໜຶ່ງທີ່ຕັດສິນໄຊຊະນະຂອງການປະຕິວັດໃນປະເທດເຮົາ. ຕາມຈິດໃຈດັ່ງກ່າວນັ້ນ ພັກເຮົາໄດ້ສຶກສາອົບຮົມຄວາມຮັກແພງອັນຜ່ອງໃສແລະຈົບງາມຂອງລັດທິສາກົນກຳມາຊີບໃຫ້ປະຊາຊົນເຮົາ ຢ່າງເປັນປະຈຳ, ຕ້ານ ບັນດາທັດສະນະປະຕິການ ພົ້ນສະໄໝຂອງລັດທິຊາດ ນາຍທຶນ, ທ້ບມາງບັນດາເລລຽມແບ່ງແຍກອັນໂຫດຫ້ຽມຂອງພວກຈັກກະພັດແລະພວກປະຕິການສາກົນ.

ມາດຮອດນີ້ ການປະຕິວັດຂອງພວກເຮົາໄດ້ຫັນເຂົ້າ

ສູ່ໄລຍະໃຫມ່ແລ້ວ ເຊິ່ງຫນ້າທີ່ປະຫວັດສາດ ອັນຍິ່ງໃຫຍ່ຂອງພວກເຮົາແມ່ນກໍ່ສ້າງປະເທດເຮົາຈາກປະເທດທີ່ ທຸກຍາກຫຼ້າຫຼັງໃຫ້ກາຍເປັນປະເທດສັງຄົມນິຍົມ ທີ່ຮັ່ງມີ ເຂັ້ມແຂງ ມັນຮຽກຮ້ອງໃຫ້ປະຊາຊົນບັນດາຊົນຊາດເຮົາ ຍິ່ງຕ້ອງບຸກບືນຂຶ້ນຢ່າງສຸດຂີດ, ເສີມຂະຫຍາຍຈິດໃຈ ເອກະລາດ, ເປັນເຈົ້າຕົນເອງ ແລະມູນເຊື້ອສາມັກຄີສາກົນອັນດີງາມຂອງຕົນ, ຖືເອົາການບາກບັ່ນບຸກບືນຂອງຕົນ ເປັນຕົ້ນຕໍ ເພື່ອກ້າວຂຶ້ນເປັນເຈົ້າຊາຕາກຳຂອງຕົນເອງ, ພ້ອມກັນນັ້ນ ກໍ່ຕ້ອງຍາດແຍ່ງການຊ່ວຍເຫຼືອຮ່ວມມືສາກົນໃນທຸກດ້ານ: ເສດຖະກິດ, ວັດທະນະທຳ, ວິທະຍາສາດ-ເຕັກນິກ... ຢ່າງສຸດຂີດ, ແຕ່ກ່ອນອື່ນຫມົດ ຕ້ອງຍາດແຍ່ງການຊ່ວຍເຫຼືອ ແລະການຮ່ວມມືກັບບັນດາປະເທດສັງຄົມນິຍົມອ້າຍນ້ອງ ເພື່ອເພີ່ມທະວີ ຄວາມສາມາດ ກຸ້ມຕົນເອງຂອງປະຊາຊົນເຮົາໃນພາລະກິດປົກປັກຮັກສາ ຄວາມເປັນເອກະລາດ, ອະທິປະໄຕຂອງຕົນ ແລະກໍ່ສ້າງສັງຄົມນິຍົມໃຫ້ສຳເລັດຜົນ.

ໃນດ້ານຫນຶ່ງອີກ ພວກເຮົາພວມດຳເນີນຫນ້າທີ່ປະຫວັດສາດຂອງຊາດໃນສະພາບການສາກົນຍັງຜັນແປໄປໃນທິດທີ່ມີຄວາມສະດວກເປັນພື້ນຖານ, ແຕ່ ຈັກກະພັດນິຍົມ

ແລະອິດທິກຳລັງປະຕິການສາກົນ "ຕາຍບໍ່ຫຼາບຂາບບໍ່ຈື່", ດ້ວຍຄວາມກະຫາຍໂລພາໃນການຮຸກຮານ ແລະ ແຜ່ອຳນາດຢ່າງຫຼັບຫູ ຫຼັບຕາ ແລະບໍ່ມີຂອບເຂດ, ພວກເຂົາໄດ້ເພີ່ມທະວີ ແລະພວມເພີ່ມທະວີການສົມຮູ້ຮ່ວມຄິດກັນ, ສ້າງຕັ້ງການສຳພັນປະຕິການພິປອບຫຼາຍຮູບຫຼາຍແບບຂຶ້ນ, ຫມັ້ນໆເຂົ້າທຸກຫົນທຸກແຫ່ງຢ່າງຂຶງຂັງມັງມໍ ໂດຍບໍ່ລະເວັ້ນເລ່ລ່ຽມອັນມືດມົນ, ຊົ່ວຊ້າ ແລະໂຫດຫ້ຽມໃດໆ ເພື່ອແບ່ງແຍກ, ທຳລາຍ, ຕາວຕີຂະບວນການປົດປ່ອຍຊາດແລະການປະຕິວັດສັງຄົມນິຍົມ, ກໍ່ຄວາມວຸ້ນວາຍ, ເຄັ່ງຕຶງ ແລະເປັນໄພຕໍ່ການພົວພັນລະຫວ່າງຊາດ, ອັນເປັນການຂົ່ມຂູ່ໂດຍກົງຕໍ່ສະຖຽນລະພາບໃນພາກພື້ນອາຊີອາຄະເນ, ຂົ່ມຂູ່ໂດຍກົງຕໍ່ອະທິປະໄຕ, ເອກະລາດແລະຄວາມສະຫງົບປອດໄພຂອງຊາດເຮົາ. ເພາະສະນັ້ນ ຍິ່ງກວ່າເວລາໃດຫມົດພວກເຮົາຕ້ອງຍົກສູງສະຕິລະວັງຕົວ, ຈຳແນກອັນແທ້ອັນປອມ, ເຫັນແຈ້ງມິດ ແລະ ສັດຕູ, ເຊື່ອມຊຶມຢ່າງເລິກເຊິ່ງ ແລະສົມທົບຢ່າງຊຳນິຊຳນານ ລັດທິຮັກຊາດອັນແທ້ຈິງ ກັບລັດທິສາກົນກຳມາຊີບ, ເດັດດ່ຽວປົກປັກຮັກສາຄວາມເປັນເອກະລາດຂອງຊາດ ແລະພາລະກິດສ້າງສາໃນສັນຕິຂອງປະຊາຊົນເຮົາ, ບາກບັ່ນສູ້ຊົນປະ

ຕູ້ບັດໜ້າທີ່ສາກົນອັນສະຫງ່າງາມຂອງພວກເຮົາ ຢ່າງຄົບຖ້ວນ.

ພັກເຮົາພະຍາຍາມເຮັດສຸດຄວາມສາມາດຂອງຕົນຢ່າງສະເໝີຕົ້ນສະເໝີປາຍ ເພື່ອປະກອບສ່ວນ ເຂົ້າໃນການເພີ່ມທະວີ ແລະປັບປຸງຄວາມສາມັກຄີເປັນເອກະພາບຢູ່ໃນລະບົບສັງຄົມນິຍົມ ແລະລະຫວ່າງບັນດາພັກອ້າຍນ້ອງບົນພື້ນຖານລັດທິມາກ-ເລນິນ ແລະລັດທິສາກົນກຳມາຊີບ ແລະປົກປັກຮັກສາ ການຄົງຕົວ ແລະການຂະຫຍາຍຕົວຂອງລະບົບສັງຄົມນິຍົມເຊິ່ງກຳເນີດຈາກມະຫາປະຕິວັດສັງຄົມນິຍົມເດືອນ ຕຸລາ ລັດເຊຍນັ້ນ ເປັນປັດໄຈຕັດສິນ ທາງຂະຫຍາຍຕົວຂອງຍຸກສະໄໝປັດຈຸບັນ; ພວກເຮົາກ່າວ ປະນາມຢ່າງສຸດຂີດ ແລະເດັດດ່ຽວຕ້ານທຸກອຸບາຍ ແລະການກະທຳຂອງລັດທິສວຍໂອກາດທຸກຮູບທຸກສີທີ່ເປັນ ການແບ່ງແຍກ, ທຳລາຍລະບົບສັງຄົມນິຍົມ ແລະບິດເບືອນ, ທໍລະຍົດລັດທິມາກ-ເລນິນ ທີ່ເປັນຄັມພີຊະນະເລີດຂອງຊົນຊັ້ນກຳມາຊີບ ແລະບັນດາປະຊາຊາດທີ່ຖືກກົດຂີ່ໃນທົ່ວໂລກ. ພວກເຮົາແພງຖະໜອມເປັນທີ່ສຸດ ແລະອອກແຮງທະນຸບຳລຸງສາຍພົວພັນສາມັກຄີກັບສະຫະພາບໂຊວຽດ ແລະບັນດາປະເທດສັງຄົມນິຍົມອ້າຍນ້ອງອື່ນ ໆ ຢ່າງເປັນປະຈຳ,

ເປັນຕົ້ນແມ່ນສາຍພົວພັນແບບພິເສດ ແລະຄວາມສາມັກຄີສູ້ຮົບອັນຍິ່ງໃຫຍ່ລະຫວ່າງ ລາວ - ຫວຽດນາມ, ຖືອັນນັ້ນເປັນກົດເກນທີ່ຕ້ອງເປັນໄປອັນໜຶ່ງ ເພື່ອຍາດເອົາໄຊຊະນະ. ບົນຈິດໃຈດັ່ງກ່າວນັ້ນ ພວກເຮົາຈະບໍ່ລົດລະໃນການເພີ່ມທະວີຄວາມສາມັກຄີ, ຊ່ວຍເຫຼືອແລະຮ່ວມມືຢ່າງຮອບດ້ານ ລະຫວ່າງປະເທດເຮົາກັບສາທາລະນະລັດ ສັງຄົມນິຍົມຫວຽດນາມ ແລະ ບັນດາປະເທດສັງຄົມນິຍົມອ້າຍນ້ອງອື່ນ ໆ ໃນພາລະກິດກໍ່ສ້າງແລະປົກປັກຮັກສາໝາກຜົນປະຕິວັດສັງຄົມນິຍົມຂອງປະເທດໃຜລາວ, ທັບມ້າງທຸກ ກົນອຸບາຍຊຸກຮານທຳລາຍຂອງຈັກກະພັດນິຍົມ ແລະອິດທິກຳລັງປະຕິການສຄກົນ.

ພວກເຮົາຍາມໃດກໍ່ແພງຖະໜອມ ແລະ ທະນຸບຳລຸງຄວາມສາມັກຄີ, ມິດຕະພາບອັນແທ້ຈິງລະຫວ່າງປະຊາຊົນເຮົາກັບປະຊາຊົນຈີນ. ແຕ່ພວກເຮົາເດັດດ່ຽວຄັດຄ້ານສົງຄາມຮຸກຮານທີ່ຝ່າຍຈີນດຳເນີນຕໍ່ສາທາລະນະລັດສັງຄົມນິຍົມຫວຽດນາມ, ອັນໄດ້ກໍ່ສະພາບທີ່ເປັນອັນຕະລາຍທີ່ສຸດຂຶ້ນ, ຂົ່ມຂູ່ຢ່າງຮ້າຍແຮງຕໍ່ເອກະລາດ, ອະທິປະໄຕຂອງບັນດາປະເທດໃນອິນດູຈີນ, ຂົ່ມຂູ່ສັນຕິພາບ ແລະສະຖຽນລະພາບໃນພາກພື້ນອາຊີອາຄະເນແລະໃນໂລກ, ພ້ອມກັນ

ນັ້ນກໍ່ເປັນການຝືນກັບຄວາມມຸ່ງມາດປາຖະຫນາແລະຜົນປະໂຫຍດອັນຊອບທຳ ຂອງປະຊາຊົນຈີນ. ປະຊາຊົນລາວສະຫນັບສະຫນູນຢ່າງສົມບູນການຕໍ່ສູ້ອັນເປັນທຳຂອງປະຊາຊົນຫວຽດນາມໃນການປົກປັກຮັກສາເອກະລາດ, ອະທິປະໄຕແລະຜືນແຜ່ນດິນອັນຄົບຖ້ວນຂອງຕົນ, ຫວງຢ່າງເດັດດຽວໃຫ້ຝ່າຍຈີນຢຸດຕິສົງຄາມຮຸກຮານຫວຽດນາມໂດຍທັນທີແລະຖອນກອງທະຫານຂອງເຂົາອອກຈາກດິນແດນ ຫວຽດນາມໃຫ້ຫມົດຢ່າງບໍ່ມີເງື່ອນໄຂ.

ພວກເຮົາເອົາໃຈໃສ່ຂະຫຍາຍການພົວພັນ ມິດຕະພາບ ແລະ ການຮ່ວມມືກັບບັນດາປະເທດໃນພາກພື້ນອາຊີອາຄະເນ ບົນຫຼັກການເຄົາລົບເອກະລາດ, ອະທິປະໄຕແລະຜືນແຜ່ນດິນອັນຄົບຖ້ວນຂອງກັນ, ພ້ອມກັນຄົງຢູ່ໂດຍສັນຕິ; ບໍ່ອະນຸຍາດໃຫ້ຕ່າງປະເທດໃດໃຊ້ດິນແດນຂອງຕົນເພື່ອຮຸກຮານແຊກແຊງປະເທດອື່ນຢູ່ພາກພື້ນນີ້ ໂດຍທາງກົງ ຫຼືທາງອ້ອມ, ແກ້ໄຂທຸກບັນຫາພິດຂ້ອງຕ້ອງຖຽງກັນຢູ່ໃນພາກພື້ນດ້ວຍການເຈລະຈາບົນຈິດໃຈສະເຫມີ ພາບ, ເຂົ້າໃຈ ແລະເຄົາລົບເຊິ່ງກັນ ແລະກັນ; ຂະຫຍາຍການຮ່ວມມືທາງດ້ານເສດຖະກິດ ແລະ ແລກປ່ຽນວັດທະນະທຳນຳກັນ ບົນພື້ນຖານສະເຫມີພາບ, ຕ່າງຝ່າຍຕ່າງມີຜົນ

ເພື່ອຈຸດປະສົງກໍ່ສ້າງປະເທດຊາດຕາມວິທີສະເພາະ ຂອງໃຜລາວ; ເດັດດ່ຽວຕ້ານທຸກກົນອຸບາຍທຳລາຍ, ແບ່ງແຍກ ແລະຮຸກຮານຂອງຈັກກະພັດນິຍົມ ແລະ ອິດທິກຳລັງປະຕິການສາກົນ ແນໃສ່ຮັບປະກັນສັນຕິພາບ, ເອກະລາດ, ເປັນກາງ, ສະຖຽນລະພາບ ແລະ ວັດທະນາຖາວອນຢູ່ໃນພາກພື້ນນີ້.

ພວກເຮົາເດັດດ່ຽວສະໜັບສະໜູນຂະບວນການຕໍ່ສູ້ປົດປ່ອຍຂອງປະຊາຊົນບັນດາປະເທດໃນອາຊີ, ອາຟະລິກກາແລະອາເມລິກາລາຕິນຕ້ານລັດທິລ່າເມືອງຂຶ້ນເກົ່າແລະໃໝ່, ລັດທິຈຳແນກເຊື້ອຊາດ, ພວກເຮົາ ສະໜັບສະໜູນບັນດາປະເທດຊາດນິຍົມໃນການຕໍ່ສູ້ ເພື່ອປົກປັກຮັກສາ ແລະປັບປຸງເອກະລາດແຫ່ງຊາດ; ເພີ່ມທະວີການພົວພັນຮ່ວມມືກັບບັນດາປະເທດບໍ່ຮ່ວມກຸ່ມ, ເດັດດ່ຽວຕ້ານທຸກການໜີບຕົງ, ແບ່ງແຍກ ແລະ ຮຸກຮານ ຂອງຈັກກະພັດນິຍົມ ແລະພວກປະຕິການສາກົນ, ຕໍ່ສູ້ເພື່ອສ້າງຕັ້ງລະບຽບເສດຖະກິດສາກົນໃໝ່, ຮັບປະກັນເອກະລາດ, ອະທິປະໄຕ, ສະເໝີພາບ ແລະຕ່າງຝ່າຍຕ່າງມີຜົນໃນການແລກປ່ຽນເສດຖະກິດ ແລະວັດທະນະທຳລະຫວ່າງປະເທດຕ່າງຕ່າງ. ພວກເຮົາຊົມເຊີຍຢ່າງສຸດອົກສຸດໃຈທ່າທີອັນເດັດ

ດ່ຽວ ແລະ ການສະໜັບສະໜູນຊ່ວຍເຫຼືອອັນຈິງໃຈ,ທັນ
ການຂອງສະຫະພາບໂຊວຽດ, ກູບາ ແລະບັນດາປະເທດ
ສັງຄົມນິຍົມອື່ນ ໆ ຕໍ່ບັນດາປະເທດໃນທະວີບອາຟະລິກາ
ຕ້ານທຸກກົນອຸບາຍແຊກແຊງແລະທຳລາຍຂອງຈັກກະພັດ ນິ
ຍົມ ແລະບັນດາອິດທິກຳລັງປະຕິການສາກົນຢ່າງມີປະສິດທິ
ຜົນເພື່ອປົກປັກຮັກສາເອກະລາດແຫ່ງຊາດ ແລະກໍ່ສ້າງປະ
ເທດຊາດ ຕາມຄວາມຮຽກຮ້ອງຕ້ອງການ ຂອງ ປະເທດ
ເຫຼົ່ານັ້ນ.

ພວກເຮົາສະແດງຄວາມຮັກແພງອັນເລິກເຊິ່ງກວ່າ
ໝູ່ແລະການສະໜັບສະໜູນອັນແຂງແຮງກວ່າໝູ່ຕໍ່ພາລະ
ກິດຕໍ່ສູ້ຂອງຊົນຊັ້ນກຳມະກອນ ແລະປະຊາຊົນ ຜູ້ອອກແຮງ
ງານໃນບັນດາປະເທດທຶນນິຍົມ ເພື່ອສັນຕິພາບ, ເອກະ
ລາດແຫ່ງຊາດ ແລະຄວາມກ້າວໜ້າທາງສັງຄົມ.

ພວກເຮົາຍິນດີສ້າງການພົວພັນກັບປະເທດຕ່າງ ໆ
ໃນໂລກບົນພື້ນຖານເຄົາລົບເອກະລາດ, ອະທິປະໄຕ,ສະ
ເໝີພາບ, ຕ່າງຝ່າຍຕ່າງມີຜົນ.

ພວກເຮົາສະແດງຄວາມຂອບໃຈອັນຈິງໃຈ ຕໍ່ການ
ຊ່ວຍເຫຼືອ ແລະ ຮ່ວມມືດ້ານເສດຖະກິດ–ເຕັກນິກຂອງບັນ
ດາປະເທດສັງຄົມນິຍົມອ້າຍນ້ອງ, ບັນດາປະເທດເພື່ອນ

ມິດ, ບັນດາອົງການຈັດຕັ້ງສາກົນ, ຂະບວນການ ສັນຕິພາບ ແລະກ້າວໜ້າໃນໂລກ ໃນພາລະກິດປົກປັກຮັກສາປະເທດຊາດ ແລະກໍ່ສ້າງສັງຄົມນິຍົມຂອງປະເທດເຮົາ.

ພາຍໃຕ້ການນຳ ອັນສະຫຼາດສ່ອງໃສ ແລະ ກ້າແກ່ນຂອງພັກເຮົາທີ່ໝັ້ນແນວທາງເອກະລາດ, ເປັນເຈົ້າຕົນເອງ ແລະຖືກຕ້ອງ ແລະດ້ວຍກຳລັງແຮງສາມັກຄີຂອງປະຊາຊົນບັນດາຊົນຊາດ ແລະກຳລັງແຮງຂອງລະບົບພະເດັດການກຳມາຊີບທີ່ພວມໄດ້ຮັບການປັບປຸງແລະເສີມຂະຫຍາຍບົນພື້ນຖານໃໝ່ຢ່າງບໍ່ຢຸດຢັ້ງ, ພ້ອມກັນນັ້ນ ກໍ່ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອອັນໃຫຍ່ຫຼວງ ແລະ ມີການພົວພັນຮ່ວມມືອັນກວ້າງຂວາງ ກັບບັນດາປະເທດ ສັງຄົມນິຍົມອ້າຍນ້ອງ ແລະບັນດາປະເທດເພື່ອນມິດໃນໂລກນັ້ນ ພວກເຮົາເຊື່ອໝັ້ນຢ່າງໜັກແໜ້ນວ່າ ເຖິງຈະພົບຄວາມຫຍຸ້ງຍາກສັບສົນປານໃດກໍ່ຕາມ, ພາລະກິດປະຕິວັດສັງຄົມນິຍົມຂອງປະຊາຊົນເຮົາຕ້ອງໄດ້ຮັບໄຊຊະນະຢ່າງແນ່ນອນ.

VI .- ກໍ່ສ້າງພັກໃຫ້ເຂັ້ມແຂງໃນທຸກດ້ານເພື່ອສຳເລັດຫນ້າທີ່ປະຫວັດສາດໃຫມ່.

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໄດ້ສະຖາປະນາຂຶ້ນ, ການປະຕິວັດເຮົາໄດ້ຫັນປ່ຽນໄປສູ່ໄລຍະໃຫມ່, ພັກເຮົາໄດ້ກາຍເປັນພັກກຳອຳນາດ, ໄດ້ນຳພາ ແລະພວມນຳພາປະຊາຊົນບັນດາຊົນຊາດ ແລະລັດຜະເດັດການກຳມາຊີບດຳເນີນຫນ້າທີ່ປະຫວັດສາດອັນຍິ່ງໃຫຍ່ທີ່ສຸດຄື ປົກປັກຮັກສາເອກະລາດ, ເອກະພາບ ຂອງປະເທດຊາດໄວ້ ໃຫ້ຫມັ້ນຄົງ ແລະກໍ່ສ້າງສັງຄົມນິຍົມຢູ່ໃນປະເທດເຮົາໃຫ້ສຳເລັດຜົນ.

ໃນໄລຍະໃຫມ່, ໃນຖານະທີ່ເປັນພັກກຳອຳນາດ, ຮັບຜິດຊອບຕໍ່ຊາຕາກຳທັງຫມົດຂອງຊາດ ແລະຂອງຊົນຊັ້ນໂດຍກົງ ແລະ ສົມບູນນັ້ນ ຫນ້າທີ່ນຳພາຂອງພັກຍິ່ງຫນັກຫນ່ວງ ແລະສັບສົນກວ່າເກົ່າ. ປະຈຸບັນນີ້, ການປະຕິວັດໃນປະເທດເຮົາພວມຢືນຕໍ່ຫນ້າຄວາມສະດວກ ອັນເປັນພື້ນຖານ ຫຼາຍປະການທັງຢູ່ພາຍໃນ ແລະ ນອກ ປະເທດ. ພວກເຮົາມີມູນເຊື້ອສາມັກຄີຕໍ່ສູ້ອັນກ້າແກ່ນ, ເດັດຂາດບໍ່ອ່ອນຍອມຂອງຫມົດທັງຊາດ, ມີບົດຮຽນອັນປະເສີດ ຫຼາຍ

ຢ່າງ ຈາກການຕໍ່ສູ້ກູ້ຊາດເປັນເວລາ ໓໐ ປີ ແລະ ຈາກ
ການກໍ່ສ້າງປະເທດຊາດໃນສັນຕິ ໃນ ໓ ປີ ທີ່ຜ່ານມານີ້.
ສະພາບການທົ່ວໄປຂອງໂລກພວມພັດທະນາກ້າວໜ້າໄປບໍ່
ຢຸດຢັ້ງ ເຊິ່ງໃນດ້ານພື້ນຖານແມ່ນອຳນວຍຄວາມສະດວກ
ໃຫ້ແກ່ການປະຕິວັດ. ເຖິງຢ່າງໃດກໍ່ດີ, ໃນຈຸດພິເສດ ທີ່
ປະເທດເຮົາເປັນປະເທດນ້ອຍ, ພົນລະເມືອງ ໜ້ອຍ,
ເສດຖະກິດກະສິກຳຂະໜາດນ້ອຍ ຫຼ້າຫຼັງທີ່ສຸດ, ຊົນຊັ້ນ
ກຳມະກອນຍັງອ່ອນນ້ອຍ, ສະນັ້ນບັນຫາດັດສ້າງການພົວ
ພັນແຫ່ງການຜະລິດເກົ່າ, ກໍ່ສ້າງການພົວພັນແຫ່ງການຜະ
ລິດໃໝ່, ຈັດຕັ້ງການຜະລິດຄືນໃໝ່, ແບ່ງງານຄືນໃໝ່
ເພື່ອນຳເອົາການຜະລິດນ້ອຍ, ກະແຈກກະຈາຍ, ເອກະ
ເທດໃນປະເທດເຮົາຂຶ້ນສູ່ການຜະລິດໃຫຍ່ ສັງຄົມນິຍົມນັ້ນ
ຈຶ່ງເປັນບັນຫາອັນເລິກເຊິ່ງ, ກວ້າງໃຫຍ່ ແລະ ມີລັກສະ
ນະສັບສົນທີ່ສຸດ; ໃນດ້ານອື່ນ, ສະພາບແວດລ້ອມຂອງ
ໂລກພວມຜັນແປໄປຢ່າງສັບສົນ ເປັນຕົ້ນແມ່ນການ ສົມຮູ້
ຮ່ວມຄິດໃໝ່ລະຫວ່າງຈັກກະພັດນິຍົມ ກັບອິດທິກຳລັງປະຕິ
ການສາກົນ, ປະເທດເຮົາຊ້ຳພັດຢູ່ໃນທີ່ຕັ້ງປ່ອມດ້ານໜ້າ
ຂອງສັງຄົມນິຍົມຢູ່ພາກພື້ນອາຊີອາຄະເນທີ່ສຳຄັນນີ້. ສະ
ພາບການ ເຫຼົ່ານັ້ນຮຽກຮ້ອງໃຫ້ພັກເຮົາຕ້ອງມີແນວທາງ,

ແຜນນະໂຍບາຍປະຕິວັດອັນຖືກຕ້ອງໂດຍມີບ່ອນອີງວິທະຍາສາດອັນຄົບຖ້ວນ, ສອດຄ່ອງກັບ ຫຼັກມູນທົ່ວໄປຂອງລັດທິມາກ-ເລນິນ ແລະ ຈຸດພິເສດຂອງສະພາບການຕົວຈິງໃນປະເທດເຮົາ. ບໍ່ພຽງແຕ່ເທົ່ານັ້ນ ບັນຫາສໍາຄັນທີ່ສຸດ ທີ່ມີຄວາມໝາຍຕັດສິນອີກບັນຫາໜຶ່ງແມ່ນ ຕ້ອງອອກແຮງກໍ່ສ້າງ, ປັບປຸງພັກໃຫ້ເຂັ້ມແຂງ ໃນທຸກດ້ານ ການເມືອງ, ແນວຄິດ ແລະ ການຈັດຕັ້ງ, ເພີ່ມທະວີການນໍາພາຮອບດ້ານຂອງພັກຢ່າງບໍ່ຢຸດຢັ້ງໃນທຸກຂົງເຂດການເມືອງ,ເສດຖະກິດ, ການທະຫານ, ວັດທະນະທໍາ ແລະວິທະຍາສາດ-ເຕັກນິກ ... ຍົກການນໍາພາຂອງພັກຂຶ້ນສູ່ ລະດັບໃໝ່ທັງນັ້ນກໍ່ເພື່ອໃຫ້ມີຄວາມສາມາດພຽງພໍ ໃນການສໍາເລັດພາລະໜ້າທີ່ປະຫວັດສາດອັນສະຫງ່າງາມຂອງພັກ ໃນໄລຍະໃໝ່.

ໃນຫຼາຍ ປີທີ່ຜ່ານມາ ໂດຍສະເພາະ ນັບຕັ້ງແຕ່ກອງປະຊຸມໃຫຍ່ຄັ້ງທີ່ ໔ ຂອງພັກ (ປີ ໑໙໗໔) ມານີ້, ວຽກງານກໍ່ສ້າງພັກໄດ້ຮັບຜົນສໍາເລັດ ອັນໃຫຍ່ ຫຼາຍປະການ. ຈຸດດີເດັ່ນກວ່າໝູ່ໃນການກໍ່ສ້າງພັກ ທາງ ດ້ານການເມືອງແມ່ນພັກເຮົາໄດ້ແກ້ໄຂ ບັນຫາແນວທາງຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາ ແລະແນວທາງສາກົນໄດ

ຢ່າງຖືກຕ້ອງ ແລະ ປະດິດສ້າງ ອັນໄດ້ຮັບປະກັນໃຫ້ການປະຕິວັດຊາດ-ປະຊາທິປະໄຕສຳເລັດຜົນຢ່າງມີໄຊ. ພາຍຫຼັງ ປະເທດຊາດ ໄດ້ຮັບການປົດປ່ອຍຢ່າງສົມບູນແລ້ວ, ພວກເຮົາໄດ້ປະສົບຄວາມຫຍຸ້ງຍາກ ແລະສັບສົນ ຫຼາຍປະການ ເນື່ອງຈາກຈຸດພິເສດ ທີ່ປະເທດເຮົາຢູ່ໃນທີ່ຕັ້ງປ້ອມດ່ານໜ້າຂອງສັງຄົມນິຍົມ ແລະເນື່ອງຈາກກະໂຕເສດຖະກິດ-ວັດທະນະທຳຍັງ ຫຼ້າຫຼັງຢູ່. ໃນສະພາບການ ດັ່ງກ່າວນັ້ນ, ໂດຍໝູນໃຊ້ບັນດາ ຫຼັກມູນທົ່ວໄປ ຂອງລັດທິມາກ-ເລນິນເຂົ້າໃສ່ສະພາບການຕົວຈິງຂອງປະເທດເຮົາ ແລະຄົ້ນຄວ້າບົດຮຽນຂອງບັນດາພັກອ້າຍນ້ອງ, ພັກເຮົາກໍ່ສາມາດກຳນົດໄດ້ຕັ້ງແຕ່ຫົວທີໂລດບັນດາເນື້ອໃນຕົ້ນຕໍກ່ຽວກັບແນວທາງ, ໜ້າທີ່ປະຕິວັດໃນໄລຍະໃໝ່ ແລະ ແຜນນະໂຍບາຍ,ແບບວິທີສຳຄັນໃນພາລະກິດດັດສ້າງ, ກໍ່ສ້າງແລະຂະຫຍາຍເສດຖະກິດ-ວັດທະນະທຳ,ປັບປຸງການປ້ອງກັນຊາດ, .ປ້ອງກັນຄວາມສະຫງົບ ແລະເພີ່ມທະວີການພົວພັນຕ່າງປະເທດ ອັນໄດ້ນຳເອົາຄຳຕອບພື້ນຖານມາໃຫ້ແກ່ທຸກບັນຫາທີ່ຕັ້ງຂຶ້ນບົນເສັ້ນທາງປະຕິວັດສັງຄົມນິຍົມ ໃນທົ່ວປະເທດ; ຈາກນັ້ນມັນໄດ້ສ້າງຄວາມເປັນເອກະພາບຢ່າງສົມບູນທາງດ້ານການເມືອງ, ແນວຄິດ ແລະ ທາງດ້ານ

ການກະທຳໃນທົ່ວພັກ, ທົ່ວກອງທັບແລະທົ່ວປວງຊົນເຮົາ, ເສີມຂະຫຍາຍກຳລັງແຮງສັງລວມຂອງໝົດທັງຊາດ ແລະ ຍາດແຍ່ງໄດ້ຄວາມເປັນໃຈສະໜັບສະໜູນຈາກບັນດາປະເທດສັງຄົມນິຍົມອ້າຍນ້ອງ ແລະເພື່ອນມິດຢູ່ໃນໂລກ. ອັນນັ້ນ ມັນມີຄວາມໝາຍຕັດສິນຊີ້ຂາດ ຕໍ່ພາລະກິດທັງໝົດແຫ່ງການປົກປັກຮັກສາ ແລະກໍ່ສ້າງປະເທດຊາດຂອງພວກເຮົາໃນຊຸມນີ້, ພ້ອມກັນນັ້ນມັນກໍເປັນພື້ນຖານຕັດສິນໃຫ້ແກ່ໜ້າທີ່ກໍ່ສ້າງພັກທາງດ້ານແນວຄິດ ແລະ ການຈັດຕັ້ງ,ຮັບປະກັນໃຫ້ແນວທາງ, ແຜນນະໂຍບາຍຂອງພັກໄດ້ຮັບການປະຕິບັດຢ່າງມີໄຊ ໃນໄລຍະທີ່ຜ່ານມາ.

ເຖິງຢ່າງໃດກໍດີ, ຄຽງຂ້າງກັບຜົນງານທີ່ໄດ້ເວົ້າມານັ້ນ ກໍຍັງເຫັນວ່າ ວຽກງານກໍ່ສ້າງພັກຍັງມີຈຸດອ່ອນແລະຈຸດບົກພ່ອງຢູ່ ຫຼາຍອັນ. ຈຸດອ່ອນ ແລະຈຸດບົກພ່ອງທີ່ສຳຄັນກວ່າໝູ່ແມ່ນໃນດ້ານຄວາມຮັບຮູ້ກໍດີໃນພາກປະຕິບັດຕົວຈິງຍັງບໍ່ທັນເຊື່ອມຊຶມຢ່າງເຕັມເມັດ ເຕັມໜ່ວຍ ກ່ຽວກັບລະດັບຄາດໝາຍຂອງໜ້າທີ່ ແລະທິດນຳກໍ່ສ້າງພັກໃນເງື່ອນໄຂທີ່ພັກນຳພາລັດພະເດັດການກຳມາຊີບ ດຳເນີນການປະຕິວັດສັງຄົມນິຍົມ ຢູ່ໃນປະເທດເຮົາ; ທາງດ້ານວຽກງານແນວຄິດແມ່ນຍັງບໍ່ທັນສາມາດເຮັດໃຫ້ທົ່ວພັກ,ທົ່ວ

ກອງທັບ ແລະ ທົ່ວປວງຊົນມີການຫັນປ່ຽນຢ່າງແຂງແຮງ ແລະເລິກເຊິ່ງເທື່ອ, ການຕໍ່ສູ້ເພື່ອກັ້ນກາງ ແລະ ຕ້ານດ້ານຫຍໍ້ທໍ້, ຫຼ້າຫຼັງ ແລະ ບັນດາທັດສະນະແນວຄິດຜິດພາດຍັງບໍ່ທັນໄດ້ເຮັດຢ່າງສຸດຂີດ; ການສຶກສາອົບຮົມ, ບຳລຸງ, ຍົກລະດັບຄວາມສາມາດໃນທຸກດ້ານຂອງພະນັກງານ, ສະມາຊິກພັກໃຫ້ສູງຂຶ້ນຕາມຄວາມຮຽກຮ້ອງຕ້ອງການຂອງຫນ້າທີ່ໃຫມ່ກໍ່ຍັງເຮັດຊັກຊ້າ. ວຽກງານຈັດຕັ້ງເວົ້າທົ່ວໄປກໍ່ຍັງບໍ່ທັນຮັບປະກັນຢ່າງຫນັກແຫນ້ນ ໃຫ້ການສຳເລັດຫນ້າທີ່ການເມືອງຂອງພັກໃນໄລຍະໃຫມ່; ບັນຫາທີ່ຄວນເອົາໃຈໃສ່ກ່ອນຫມູ່ແມ່ນ ຄວາມສາມາດນຳພາຮອບດ້ານກໍ່ຄືຄວາມສາມາດໃນການຈັດຕັ້ງປະຕິບັດຫນ້າທີ່ ຂອງຖັນແຖວພະນັກງານ ມີ ຫຼາຍດ້ານຍັງໄປບໍ່ທັນກັບຫນ້າທີ່ທີ່ໄດ້ມອບຫມາຍໃຫ້; ການຈັດຕັ້ງຮາກຖານຂອງພັກຢູ່ໃນ ຫຼາຍບ່ອນກໍ່ຍັງອ່ອນ, ກົງຈັກຊ່ວຍວຽກຂອງຄະນະພັກທຸກຂັ້ນຍັງບໍ່ທັນໄດ້ຮັບການບູລະນະຢ່າງແທ້ຈິງ. ຈຸດອ່ອນ ແລະ ບົກພ່ອງເຫຼົ່ານັ້ນໄດ້ເປັນຜົນສະທ້ອນບໍ່ດີເຖິງກຳລັງສູ້ຮົບຂອງພັກ, ຈຳກັດບົດບາດ ແລະ ຄຸນປະໂຫຍດແຫ່ງການນຳພາຂອງພັກສ່ວນໃດສ່ວນຫນຶ່ງ.

ເພື່ອເສີມຂະຫຍາຍຈຸດດີ, ແກ້ໄຂ ຈຸດອ່ອນ ແລະ

ຈຸດບົກພ່ອງ, ຍົກບົດບາດນຳພາ ແລະກຳລັງສູ້ຮົບຂອງພັກ ໃຫ້ສູງຂຶ້ນ ໜ້າທີ່ກໍ່ສ້າງພັກໃນປັດຈຸບັນແມ່ນ : " ເພີ່ມທະວີວຽກງານກໍ່ສ້າງພັກ, ເຮັດໃຫ້ພັກກຳແໜ້ນ ແລະ ໜູນໃຊ້ລັດທິມາກ-ເລນິນ ເຂົ້າໃສ່ສະພາບແວດລ້ອມຂອງປະເທດເຮົາຢ່າງປະດິດສ້າງ ເພື່ອວາງແນວທາງ, ນະໂຍບາຍອອກຢ່າງຖືກຕ້ອງ ແລະຈັດຕັ້ງປະຕິບັດແນວທາງ, ນະໂຍບາຍນັ້ນຢ່າງມີໄຊ, ເຮັດໃຫ້ພັກເຮົາເຂັ້ມແຂງທາງດ້ານການເມືອງ, ແນວຄິດ ແລະ ການຈັດຕັ້ງ, ແນໃສ່ເພີ່ມທະວີ ແລະ ເສີມຂະຫຍາຍລັກສະນະຊົນຊັ້ນ, ລັກສະນະນຳໜ້າ ແລະຄວາມສາມາດນຳພາຮອບດ້ານຂອງພັກ, ເຮັດໃຫ້ພັກກາຍເປັນແກນສານນຳພາລະບົບ ພະເດັດການກຳມາຊີບຢ່າງແທ້ຈິງ ແລະມີຄວາມສາມາດພຽງພໍໃນການນຳພາເພື່ອສຳເລັດການປະຕິວັດໃນໄລຍະໃໝ່ "[1]

ຈາກບົດຮຽນຕົວຈິງແຫ່ງການກໍ່ສ້າງພັກໃນ ຫຼາຍປີທີ່ຜ່ານມາ, ພວກເຮົາຕ້ອງກຳແໜ້ນ ແລະປະຕິບັດບາງທິດນຳໃຫຍ່ໃນການຊຸ້ນກ້ຳວຽກງານກໍ່ສ້າງພັກ ເຊິ່ງໄດ້ກຳນົດໄວ້ໃນມະຕິຄັ້ງທີ ໔ ຂອງສູນກາງພັກ (ເດືອນ ກຸມພາ

1. ມະຕິຂອງກອງປະຊຸມສູນກາງພັກປະຊາຊົນປະຕິວັດລາວຄັ້ງທີ 4, ປີ 1977.

ປີ ໑໙໗໗) ແລະ ມະຕິຂອງກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ ໔ (ເດືອນ ມັງກອນ ປີ ໑໙໗໘) ໃຫ້ໄດ້ດີ ດັ່ງນີ້:

ໜຶ່ງ: ຕ້ອງກໍ່ສ້າງພັກໃຫ້ເຂັ້ມແຂງ ທັງໃນ ສາມ ດ້ານ : ການເມືອງ, ແນວຄິດ ແລະການຈັດຕັ້ງ; ຕ້ອງປະສານສົມທົບຢ່າງແໜ້ນແຟ້ນລະຫວ່າງວຽກງານແນວຄິດກັບວຽກງານຈັດຕັ້ງ, ແລະດຳເນີນການກໍ່ສ້າງພັກໃຫ້ເຂັ້ມແຂງບົນພື້ນຖານແນວທາງ, ໜ້າທີ່ການເມືອງ ແນໃສ່ສຳເລັດໜ້າທີ່ການເມືອງຂອງພັກ.

ສອງ : ການດຳເນີນວຽກງານກໍ່ສ້າງພັກຕ້ອງຕິດແໜ້ນກັບຂະບວນການປະຕິວັດຂອງມະຫາຊົນ, ຜ່ານການປຸກລຸກມະຫາຊົນ, ຊຸກຍູ້ການປະຕິບັດບັນດາໜ້າທີ່ໃຈກາງສະເພາະໜ້າຂອງພັກແລະລັດ; ຈັດຕັ້ງມະຫາຊົນປະກອບຄວາມເຫັນກ່ຽວກັບການເຄື່ອນໄຫວຂອງພັກ, ປະກອບສ່ວນກວດກາວຽກງານແລະຄຸນສົມບັດຂອງພະນັກງານ, ສະມາຊິກພັກ.

ສາມ: ຕ້ອງກຳແໜ້ນແບບວິທີກໍ່ສ້າງພັກໃນເງື່ອນໄຂທີ່ຜະເດັດການກຳມາຊີບໂດຍເອົາການກໍ່ສ້າງ, ຍົກສູງກຳລັງສູ້ຮົບຂອງພັກຕິດແໜ້ນກັບການບູລະນະ ການຈັດຕັ້ງ, ຍົກສູງຄວາມສາມາດຂອງລັດ ແລະກໍ່ສ້າງປັບປຸງບັນ

ດາອົງການຈັດຕັ້ງມະຫາຊົນ ແນໃສ່ເສີມຂະຫຍາຍກຳລັງ
ແຮງສັງລວມຂອງລະບົບພະເດັດການກຳມາຊີບ, ຮັບປະ
ກັນໃຫ້ສຳເລັດທຸກໜ້າທີ່ຢ່າງມີໄຊ.

<u>ສີ່:</u> ຕ້ອງສົມທົບຢ່າງແໜ້ນແຟ້ນລະຫວ່າງການຍົກ
ສູງຄຸນນະພາບຂອງສະມາຊິກພັກກັບການຍົກສູງຄຸນນະພາບ
ຂອງການຈັດຕັ້ງຮາກຖານຂອງພັກ, ລະຫວ່າງການຍົກສູງ
ຄຸນນະພາບຂອງຖັນແຖວພະນັກງານກັບການປັບປຸງບູລະນະ
ການຈັດຕັ້ງ ແລະກົງຈັກຂອງທຸກຂັ້ນ, ທຸກຂະແໜງການ.

<u>ຫ້າ:</u> ໃນວຽກງານຂະຫຍາຍພັກ ຕ້ອງຖືຄຸນນະ
ພາບເປັນສຳຄັນຢູ່ສະເໝີ, ການຂະຫຍາຍພັກຕ້ອງ ໄປ
ຄຽງຄູ່ກັບການປັບປຸງພັກ; ເດັດດ່ຽວເອົາສະມາຊິກພັກທີ່ມີ
ບັນຫາການເມືອງ, ເສື່ອມຄຸນປ່ຽນທາດ ຫຼື ຫຼາຫຼົງໂພດ
ອອກຈາກພັກຢ່າງທັນການ.

ພັກເຮົາມີແນວທາງຖືກຕ້ອງ, ບົນພື້ນຖານນັ້ນໄດ້ຕົກ
ລົງທິດທາງວຽກງານກໍ່ສ້າງພັກຢ່າງຖືກຕ້ອງ, ນັ້ນແມ່ນຈຸດ
ແຂງອັນເປັນພື້ນຖານຂອງພວກເຮົາ. ແຕ່ບັນຫາສຳຄັນໃນ
ປັດຈຸບັນແມ່ນຕ້ອງເຮັດໃຫ້ແນວທາງນັ້ນປະກົດ ເປັນຈິງ,
ເປັນໄຊຊະນະຕົວຈິງໃນການຍົກສູງບົດບາດນຳພາ ແລະ
ກຳລັງສູ້ຮົບຂອງພັກ. ຢາກເຮັດໄດ້ແນວນັ້ນ, ພັກຕ້ອງແກ້

ໄຂ ຫຼາຍໆບັນຫາກ່ຽວກັບການຈັດຕັ້ງ ແລະ ວິທີການດັ່ງທີ່ກອງປະຊຸມຈັດຕັ້ງທົ່ວປະເທດໄດ້ຍົກຂຶ້ນ, ໃນນັ້ນ ມີບາງບັນຫາພື້ນຖານພົ້ນເດັ່ນຂຶ້ນດັ່ງນີ້:

ບັນຫາພື້ນຖານກວ່າໝູ່ແມ່ນພັກຕ້ອງເພີ່ມທະວີການສຶກສາອົບຮົມລັດທິມາກ-ເລນິນ ແລະບຳລຸງ ຫຼັກໝັ້ນແນວຄິດກຳມາຊີບໃຫ້ພະນັກງານແລະສະມາຊິກພັກທຸກຄົນ, ຍົກລະດັບຄວາມຕື່ນຕົວຊົນຊັ້ນ,ຄວາມຕື່ນຕົວກ່ຽວກັບຈຸດໝາຍແລະອຸດົມຄະຕິຂອງພັກ ໃຫ້ສູງຂຶ້ນ. ພັກເຮົາແມ່ນພັກການເມືອງຂອງຊົນຊັ້ນກຳມະກອນ, ຖືລັດທິມາກ-ເລນິນເປັນພື້ນຖານແນວຄິດແລະເປັນເຂັມທິດຊີ້ນຳທຸກການເຄື່ອນໄຫວຂອງຕົນ; ແນວທາງປະຕິວັດຂອງພັກແມ່ນການໝູນໃຊ້ບັນດາ ຫຼັກມູນຂອງລັດທິມາກ-ເລນິນເຂົ້າໃສ່ສະພາບຕົວ ຈິງຂອງປະເທດເຮົາຢ່າງປະດິດສ້າງ, ເອົາເອກະລາດແຫ່ງຊາດຕິດພັນກັບສັງຄົມນິຍົມ, ສົມທົບຢ່າງຊຳນິຊຳນານລັດທິຮັກຊາດ ກັບລັດທິສາກົນກຳມາຊີບ. ພັກເຮົາກຳເນີດຂຶ້ນໃນປະເທດເມືອງຂຶ້ນ ແລະ ເຄິ່ງສັກດີນາ ທີ່ມີເສດຖະກິດກະສິກຳຂະໜາດນ້ອຍ, ຫຼ້າຫຼັງທີ່ສຸດ ເຕັມໄປດ້ວຍຮີດຄອງ, ຄວາມຊິນເຄີຍ, ແບບແຜນຄົ້ນຄິດຂອງເສດຖະກິດແລະສັງຄົມນັ້ນ; ພະນັກງານ, ສະມາຊິກພັກເຮົາ ສ່ວນ

ຫຼວງຫຼາຍ ແມ່ນເລີ່ມແຕ່ຄວາມຕື່ນຕົວຮັກຊາດ ໄປສູ່ລັດທິມາກ-ເລນິນ, ເມື່ອເປັນແນວນັ້ນ ຈິ່ງບໍ່ອາດ ຫຼີກເວັ້ນໄດ້ຈາກຜົນສະທ້ອນຂອງບັນດາແນວຄິດໄຮ້ກຳມາຊີບ ເຊິ່ງສະແດງອອກຢ່າງຈະແຈ້ງໃນແນວຄິດ ຄອນແຄນ ບໍ່ໝັ້ນທ່ຽງຂອງນາຍທຶນນ້ອຍ, ແນວຄິດ ຫຼາຫຼັງຂອງຊາວນາ ແລະແນວຄິດແບ່ງຊັ້ນວັນນະ, ເຈົ້າໂຄດຂອງລະບອບ ສັກດີນາແລະກ່ອນສັກດີນາ; ສິ່ງເຫຼົ່ານັ້ນອຳນວຍໃຫ້ການແຊກຊຶມແລະການຂະຫຍາຍຕົວຂອງແນວຄິດ, ທັດສະນະຜິດພາດແລະປະຕິການຂອງລັດທິສວຍໂອກາດອຽງຂວາ, ລັດ ທິ

nationalisme étroit, chauvinisme

ຊາດຄັບແຄບ, ເຫັນແກ່ແຕ່ຊາດຕົນ.

ອີກດ້ານໜຶ່ງ, ໃນເງື່ອນໄຂທີ່ພັກເຮົາກຳອຳນາດໃນຖານະເປັນຜູ້ນຳພາທົ່ວສັງຄົມ, ມີອຳນາດການປົກຄອງແລະກອງທະຫານຢູ່ໃນມື, ຖ້າຫາກບໍ່ໄດ້ຮັບການສຶກສາອົບຮົມເຝິກຝົນຫຼໍ່ຫຼອມ ຢ່າງເຂັ້ມງວດຈາກພັກ, ບໍ່ມີການກວດກາຢ່າງເຄັ່ງຄັດຂອງໝູ່ຄະນະ ແລະການຕິຊົມຊ່ວຍເຫຼືອຂອງ

causes subjectives

ມະຫາຊົນແລ້ວ, ຈາກຜົນກະທົບຂອງຫຼາຍສາຍເຫດພາວະວິ

et objectives

ໄສແລະອັດຕະວິໄສ ພະນັກງານແລະສະມາຊິກພັກຈຳນວນ

bureaucratisme

ໜຶ່ງນັບທັງພະນັກງານຊັ້ນສູງກໍ່ຈະເກີດມີພະຍາດ ອາດຍາສິດ, ຂຸນເສິກ, ອວດອ້າງລວງອຳນາດໄປເຖິງບ່ອນເສື່ອມຊຸມ

ປ່ຽນທາດ, ຈາກນັ້ນກໍ່ເຮັດໃຫ້ພັກຫ່າງເຫີນມະຫາຊົນ ແລະ ເຮັດໃຫ້ພະເດັດການກຳມາຊີບອ່ອນເພຍຊຸດໂຊມລົງ. ອັນນັ້ນແມ່ນໄພພິບັດໃຫຍ່ກວ່າໝູ່ສຳລັ່ບພັກທີ່ກຳອຳນາດ.

ດັ່ງທີ່ເລນິນໄດ້ເວົ້າ: "...... ພາຍໃຕ້ການພະເດັດການກຳມາຊີບ, ຈະຕ້ອງສຶກສາອົບຮົມຊາວນາ, ເຈົ້າຊັບນ້ອຍເປັນລ້ານໆຄົນ, ລັດຖະກອນ, ພາລະກອນ, ປັນຍາຊົນ, ນາຍທຶນນ້ອຍເປັນໝື່ນໆຄົນຄືນໃໝ່, ເຮັດໃຫ້ເຂົາເຈົ້າເຫຼົ່ານັ້ນນັບຖືແລະປະຕິບັດຕາມກຳມາຊີບ, ຍອມຮັບສິດນຳພາຂອງກຳມາຊີບ, ຈະຕ້ອງເອົາຊະນະຄວາມຊິນເຄີຍແລະຮີດຄອງທຶນນິຍົມອັນດັ້ງເດີມຂອງເຂົາ ...", ກໍ່ຄືຕ້ອງ "... ຜ່ານການຕໍ່ສູ້ອັນຍາວນານ, ບົນພື້ນຖານພະເດັດການກຳມາຊີບແລ້ວດຳເນີນການສຶກສາອົບຮົມ ກະທັ້ງຊາວກຳມາຊີບຄືນໃໝ່ອີກ, ດ້ວຍວ່າຊາວກຳມາຊີບກໍ່ບໍ່ອາດຊູດເກືອງເຜົາລ້າງນິດໄສຕາຍຕົວ ຂອງ ເຈົ້າຊັບນ້ອຍຢ່າງປຶບປັບທັນທີ..."[1]

ບົດຮຽນຕົວຈິງໃນຫຼາຍສິບປີ ແຫ່ງການນຳພາການປະຕິວັດ ແລະກໍ່ສ້າງຢູ່ພາຍໃນຂອງພັກເຮົາ, ເປັນຕົ້ນໃນ ໓ ປີ ທີ່ພັກເຮົາໄດ້ກຳອຳນາດ ແລະດຳເນີນການປະຕິວັດ

---

1. ເລນິນ, ຄົບຊຸດ, ພາສາລັດເຊຍ, ເຫຼັ້ມ 25, ໜ້າ 247, 248.

ສັງຄົມນິຍົມ ກໍຄືບໍດຣຽມປະຫວັດສາດທີ່ເຈັບແສບຂອງຂະບວນການກອມມູນິດສາກົນໄດ້ຊີ້ໃຫ້ເຫັນ ຢ່າງຈະແຈ້ງແລ້ວວ່າ ຖ້າພັກຫາກຖືເບົາ ຫຼືປ່ອຍປະການສຶກສາອົບຮົມລັດທິມາກ-ເລນິນ, ຖືເບົາການບຳລຸງ ຫຼໍ່ຫຼອມຫຼັກໝັ້ນແນວຄິດຂອງຊົນຊັ້ນກຳມະກອນ, ປະໃຫ້ແນວຄິດນາຍທຶນນ້ອຍ, ຊາວນາ ແລະ ແນວຄິດໄຮ້ກຳມາຊີບອື່ນ ໆ ມາຢຶດຢຽບແນວຄິດກຳມາຊີບ, ຍິ່ງໄປກວ່ານັ້ນ ຍັງນຳເອົາແນວຄິດນາຍທຶນນ້ອຍ, ຊາວນາມາປ່ຽນແທນ ໃຫ້ແນວຄິດກຳມະກອນແລ້ວ ບໍ່ໄວກໍ່ຊ້າມັນກໍ່ບໍ່ອາດຈະ ຫຼີກເວັ້ນຈາກຄວາມຜິດພາດ, ຄວາມປະລາໄຊໄດ້, ບໍ່ພຽງແຕ່ຈະກໍ່ສ້າງສັງຄົມນິຍົມຂຶ້ນບໍ່ໄດ້ເທົ່ານັ້ນ, ຫາກຍັງຈະພາໄປເຖິງໄພອັນຕະລາຍແຫ່ງການເສື່ອມຊູນປ່ຽນທາດ, ປະນີປະນອມກັບຈັກກະພັດນິຍົມ, ທໍລະຍົດຕໍ່ພາລະກິດອັນເປັນທຳຂອງປະຊາຊົນ, ທໍລະຍົດຕໍ່ລັດທິມາກ-ເລນິນ ແລະ ລັດທິສາກົນກຳມາຊີບອີກດ້ວຍ.

ເພາະສະນັ້ນ ການສຶກສາອົບຮົມ, ເຝິກຝົນ ຫຼໍ່ຫຼອມ ແລະຍົກສູງ ຫຼັກໝັ້ນ, ແນວຄິດຂອງຊົນຊັ້ນກຳມະກອນຢ່າງບໍ່ຢຸດຢັ້ງ, ຕໍ່ສູ້ ແລະ ກຳຈັດແກ່ໄຂບັນດາທັດສະນະແນວຄິດໄຮ້ກຳມາຊີບມັນແມ່ນກົດເກນທີ່ຕ້ອງເປັນໄປໃນ

ວຽກງານກໍ່ສ້າງພັກຂອງພັກເຮົາ. ການປະຕິວັດຍິ່ງກ້າວຂຶ້ນເທົ່າໃດ, ໜ້າທີ່ ຍິ່ງໜັກໜ່ວງ ສັບສົນເທົ່ານັ້ນ, ມັນຮຽກຮ້ອງໃຫ້ພັກເຮົາຕ້ອງມີແນວທາງເອກະລາດ, ເປັນເຈົ້າຕົນເອງ ແລະ ຖືກຕ້ອງ, ຕ້ອງມີການນຳພາອັນສະຫຼາດ ສ່ອງໃສ ແລະແທດເໝາະ, ພະນັກງານ, ສະມາຊິກພັກຍິ່ງຕ້ອງມີຄວາມໝັ້ນທ່ຽງທາງດ້ານທັດສະນະ ແນວຄິດ, ເປັນແບບຢ່າງໃນການກະທຳ ທັງນັ້ນກໍ່ເພື່ອມີຄວາມສາມາດນຳພາ, ຊຸກຈູງມະຫາຊົນສຳເລັດພາລະກິດປະຕິວັດສັງຄົມນິຍົມຢ່າງມີໄຊ ເຊິ່ງແມ່ນການປະຕິວັດ ທີ່ເລິກເຊິ່ງກວ່າໝູ່, ເຖິງຖອງ ກວ່າໝູ່ ຢູ່ໃນປະເທດເຮົາ. ຢາກເຮັດໄດ້ແນວນັ້ນ, ພັກເຮົາບໍ່ມີວິທີໃດອື່ນ ນອກຈາກຕ້ອງກຳແໜ້ນ ແລະເພີ່ມທະວີການສຶກສາອົບຮົມລັດທິມາກ-ເລນິນໃຫ້ພະນັກງານ ແລະສະມາຊິກພັກທັງໝົດຢ່າງສູງຂັ້ນສູດຂີດ ແລະແທດຕົວຈິງຢູ່ສະເໝີ. ຕ້ອງຮູ້ສົມທົບຢ່າງແໜ້ນແຟ້ນການສຶກສາອົບຮົມທິດສະດີ, ແນວທາງ, ນະໂຍບາຍຂອງພັກ ກັບການບຳລຸງ ເຝິກຝົນໃນພາກຕົວຈິງແຫ່ງການສູ້ຣົບ, ເຮັດວຽກງານ ແລະ ຜະລິດຜົນ, ພ້ອມກັນນັ້ນ ຕ້ອງດຳເນີນຢ່າງເປັນປົກກະຕິການຕິຊົມຕົນເອງ ແລະຕິຊົມກັນຢ່າງເຂັ້ມງວດ, ມີເຫດມີຜົນ ທັງເຫັນແກ່ກັນ

ຢູ່ພາຍໃນພັກກໍ່ຄືຢູ່ໃນກົງຈັກຂອງລັດ ແລະ ໃນບັນດາອົງ
ການຈັດຕັ້ງມະຫາຊົນ ແນໃສ່ສ້າງຄວາມເປັນເອກະສັນອັນ
ນັບມື້ນັບສູງຢູ່ພາຍໃນພັກ, ຮັບປະກັນໃຫ້ພະນັກງານ, ສະ
ມາຊິກພັກທຸກຄົນນັບມື້ນັບມີຄວາມກ້າວໜ້າຢ່າງໜັກແໜ້ນ
ທາງດ້ານ ຫຼັກໝັ້ນ, ແນວຄິດຂອງຊົນຊັ້ນກຳມະກອນ;
ຍົກສູງຄຸນສົມບັດສິນທຳປະຕິວັດ, ເພີ່ມທະວີຄວາມ ຮັບຮູ້
ແລະ ແກ້ໄຂບັນດາໜ້າທີ່ລະອຽດຂອງຕົນຕາມແນວທາງ,
ນະໂຍບາຍຂອງພັກເປັນຢ່າງດີ ແລະບົນພື້ນຖານນັ້ນ ເດັດ
ດ່ຽວຕໍ່ສູ້ " ... ຕານແນວຄິດນາຍທຶນນ້ອຍ,ແນວຄິດຫຼ້າ
ຫຼັງຂອງຊາວນາ ແລະຜົນສະທ້ອນຂອງແນວຄິດສັກດີນາ ,
ນາຍທຶນ ແລະຈັກກະພັດ ເຊິ່ງປະກົດການຕົ້ນຕໍ ແມ່ນແນວ
ຄິດປະຕິວັດ ເຄິ່ງ ໆ ກາງ ໆ, ລັ່ງເລ, ມັກຄວາມສະ
ຫງົບສຸກສ່ວນຕົວ, ຢ້ານທຸກຢ້ານຍາກ, ແນວຄິດເອື່ອຍອີງ,
ບໍ່ເຊື່ອກຳລັງຂອງຕົນເອງ ແລະຂອງມະຫາຊົນ, ທ້ອງຖິ່ນ
ນິຍົມ,ພາກສ່ວນນິຍົມ ແລະອິດສະຫຼະເສລີເອກະຊົນ,ແນວ
ຄິດຊົນຊາດໃຫຍ່,ແນວຄິດຊົນຊາດຄັບແຄບ,ແນວຄິດຖານະ
ຕຳແໜ່ງ, ເຈົ້ານາຍຂຸນເສິກ ... "[1] ພ້ອມກັນນັ້ນ
ກໍ່ຕ້ອງມີສະຕິລະວັງຕົວ ໃນການກັ້ນກາງແລະຕໍ່ສູ້ຢ່າງເດັດ

---

1. ໂອງການການເມືອງຂອງກອງປະຊຸມໃຫຍ່ຄັ້ງທີສອງຂອງພັກປະຊາຊົນປະຕິວັດລາວ, ປີ 1972.

ດ່ຽວ ຕ້ານທຸກພົນສະທ້ອນຈາກແນວຄິດທັດສະນະທີ່ຜິດພາດ, ປະຕິການຂອງລັດທິສວຍໂອກາດພາຍໃຕ້ທຸກຮູບທຸກສີ, ແກ້ໄຂປະກົດການໄຝ່ຝັນ,ມົວເມົາ, ລົ່ງ ໆ ເລ ໆ, ອຽງຂວາຕໍ່ຈັກກະພັດນິຍົມ ແລະອິດທິກໍາລັງປະຕິການສາກົນ , ຕັ້ງໜ້າຕໍ່ສູ້ ເພື່ອປົກປັກຮັກສາແນວທາງເອກະລາດ,ເປັນເຈົ້າຕົນເອງ ແລະຖືກຕ້ອງຂອງພັກເຮົາ, ປົກປັກຮັກສາຄວາມຜອງໃສຂອງລັດທິມາກ-ເລນິນ ແລະລັດທິສາກົນກໍາມາຊີບ.

ບັນຫາຂໍກະແຈຕົ້ນຕໍທີ່ມີຄວາມໝາຍຕັດສິນໃນການຈັດຕັ້ງປະຕິບັດທຸກແນວທາງ, ນະໂຍບາຍຂອງພັກຢ່າງ ມີໄຊນັ້ນ ແມ່ນພັກຕ້ອງອອກແຮງບໍາລຸງ ແລະ ກໍ່ສ້າງ ຖັນແຖວພະນັກງານທີ່ເຂັ້ມແຂງໜັກແໜ້ນໃນທຸກດ້ານ.

ກ້າວເຂົ້າສູ່ໄລຍະໃໝ່ຂອງການປະຕິວັດ,ພັກເຮົາໄດ້ມີຖັນແຖວພະນັກງານເປັນຈໍານວນ ຫຼາຍພໍສົມຄວນ ຢູ່ແລ້ວ ເຊິ່ງໄດ້ຮັບການສ້າງຂຶ້ນ ແລະ ທົດສອບ ຫຼໍ່ຫຼອມທ່າມກາງການປະຕິວັດຊາດປະຊາທິປະໄຕ. ອັນນັ້ນແມ່ນທຶນຮອນອັນປະເສີດຂອງພັກເຮົາ. ແຕ່ມາໃນຊຸມນີ້, ຕໍ່ໜ້າຄວາມຮຽກຮ້ອງຕ້ອງການອັນໃຫຍ່ ຫຼວງ, ຮອບດ້ານແລະຮີບດວນຂອງໜ້າທີ່ປົກປັກຮັກສາ ແລະກໍ່ສ້າງປະເທດ

ຊາດນັ້ນ ມັນຮຽກຮ້ອງໃຫ້ພັກເຮົາຕ້ອງມີຖັນແຖວ ພະນັກ
ງານທີ່ມີຄຸນນະພາບສູງ, ມີຈຳນວນພຽງພໍ ເປັນຕົວແທນ
ໃຫ້ແກ່ແນວທາງການເມືອງຂອງພັກໃນໄລຍະໃໝ່ ແລະ
ສາມາດຮັບປະກັນໃຫ້ການປັບປຸງບູລະນະກົງຈັກ ຂອງ ພັກ
ແລະລັດ, ນຳພາປະຕິບັດບັນດາໜ້າທີ່ວຽກງານໃຫຍ່ໃນ
ສະເພາະໜ້າ, ບໍ່ພຽງແຕ່ເທົ່ານັ້ນຍັງຕ້ອງກຽມກຳລັງ ພະ
ນັກງານໃຫ້ແກ່ບາດກ້າວຂະຫຍາຍຕົວຂອງການປະຕິວັດໃນ
ຂັ້ນຕໍ່ໄປອີກໂດຍສະເພາະແມ່ນຖັນແຖວພະນັກງານສືບທອດ
ໃນທຸກຂັ້ນ, ທຸກຂະແໜງການ.

ເບິ່ງທົ່ວໄປແລ້ວ ຖັນແຖວພະນັກງານຂອງ ພວກ
ເຮົາ ເຊິ່ງໄດ້ກຳເນີດ ແລະຂະຫຍາຍຕົວໃນຂະບວນການ
ຕໍ່ສູ້ປະຕິວັດຂອງມະຫາຊົນ, ໄດ້ຮັບການເຝິກຝົນ ຫຼໍ່ຫຼອມ
ແລະທົດສອບທ່າມກາງການຕໍ່ສູ້ກູ້ຊາດອັນລຳບາກຍາວນານ
ກໍ່ຄືໃນພາລະກິດປົກປັກຮັກສາ ແລະກໍ່ສ້າງລະບອບໃໝ່ໃນ
໑໐ ປີມານີ້ ຍາມໃດກໍ່ສະແດງຄວາມຈົງຮັກພັກດີຕໍ່ການປະຕິ
ວັດ, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີຄຸນສົມບັດສົມທຳ
ປະຕິວັດອັນດີງາມ; ມີ ຫຼາຍສະຫາຍ ໄດ້ມີຄວາມກ້າວ
ໜ້າໄວ ກ່ຽວກັບລະດັບຄວາມສາມາດໃນ ຫຼາຍ ດ້ານ,
ເຮັດ ລ້ອນໜ້າທີ່ ທີ່ໄດ້ຮັບມອບໝາຍ.

ແຕ່ ຕໍ່ໜ້າຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ໃໝ່, ຖັນແຖວພະນັກງານເຮົາບໍ່ພຽງແຕ່ຕ້ອງມີ ຫຼັກໝັ້ນແນວຄິດ ອັນໜັກແໜ້ນ, ມີຄວາມຕື່ນຕົວຢ່າງເລິກເຊິ່ງກ່ຽວກັບສັງຄົມນິຍົມເທົ່ານັ້ນ, ຫາກຍັງຕ້ອງມີລະດັບຄວາມຮູ້ທາງດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ, ເຕັກນິກ, ມີຄວາມສາມາດໃນການຈັດຕັ້ງ, ຄຸ້ມຄອງສັງຄົມໃໝ່, ຄຸ້ມຄອງເສດຖະກິດໃໝ່, ຮັບປະກັນການດຳເນີນການປະຕິວັດທັງ ໒ ປະການໄປພ້ອມ ໆ ກັນໃນເງື່ອນໄຂຕົວຈິງຂອງປະເທດເຮົາ ເພື່ອພາປະເທດຊາດກ້າວຂຶ້ນສັງຄົມນິຍົມຢ່າງວ່ອງໄວແລະໜັກແໜ້ນ. ເປັນອັນຈະແຈ້ງວ່າໃນດ້ານນີ້ ພວກເຮົາຍັງຕອບສະໜອງບໍ່ທັນໄດ້ ແລະ ອັນນັ້ນກໍ່ແມ່ນສາຍເຫດຕົ້ນຕໍອັນໜຶ່ງທີ່ພາໃຫ້ມີຄວາມຜິດພາດ, ບົກພ່ອງ, ນຳຄວາມເສຽຫາຍໃຫ້ແກ່ປະຊາຊົນ ແລະການປະຕິວັດໃນໄລຍະທີ່ຜ່ານມາ. ເພາະສະນັ້ນ, ບັນຫາຮີບດ່ວນອັນໜຶ່ງໃນວຽກງານກໍ່ສ້າງຖັນແຖວພະນັກງານໃນປັດຈຸບັນແມ່ນ ໄປຄຽງຄູ່ກັບການເພີ່ມທະວີການສຶກສາອົບ ຮົມລັດທິມາກ-ເລນິນ, ຕ້ອງອອກແຮງບຳລຸງຍົກລະດັບວັດທະນະທຳ, ວິທະຍາສາດ-ເຕັກນິກ ແລະ ລະດັບຈັດຕັ້ງຄຸ້ມຄອງຂອງພະນັກງານໃຫ້ສູງຂຶ້ນ, ເຮັດໃຫ້ພະນັກງານແຕ່

ຫ້າມຈຳໜ່າຍ

ລະຄົນບໍ່ວ່າຈະຢູ່ໃນຖານະໃດ ຫຼື ວຽກງານໃດ ລ້ວນແຕ່ຕ້ອງກຳແໜ້ນພາລະບົດບາດ, ໜ້າທີ່ ແລະເຂົ້າໃຈວິຊາສະເພາະຂອງຕົນ, ສາມາດສຳເລັດທຸກໜ້າທີ່ດ້ວຍຄຸນນະພາບດີ.

ເວົ້າເຖິງໂຄງຮ່າງການຈັດຕັ້ງ ເນື່ອງຈາກຄວາມຮຽກຮ້ອງຕ້ອງການອັນໃຫຍ່ຫຼວງ ຂອງພາລະກິດ ກໍ່ສ້າງເສດຖະກິດ, ຂະຫຍາຍວັດທະນະທຳ, ປັບປຸງການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ເປີດກວ້າງການພົວພັນຕ່າງປະເທດ... ນັ້ນ, ມັນຮຽກຮ້ອງໃຫ້ພັກ ແລະລັດເຮົາຕ້ອງມີຖັນແຖວພະນັກງານຄົບທຸກປະເພດ ແລະທຸກຂະແໜງການ, ທຸກດ້ານທີ່ຈຳເປັນ ໂດຍສະເພາະແມນພະນັກງານ ຫຼັກແຫຼ່ງ, ພະນັກງານເຮັດວຽກງານຄົ້ນ ຄວ້າທິດສະດີແລະຜູ້ຊ່ຽວຊານຄົ້ນຄວ້າບັນຫາເສດຖະກິດ,ວັດທະນະທຳ, ວິທະຍາສາດ-ເຕັກນິກ,ພະນັກງານຄຸ້ມ ຄອງເສດຖະກິດ, ພະນັກງານເຕັກນິກແລະກຳມະກອນຜູ້ຊຳ ນິຊຳນານ... ປະຈຸບັນນີ້, ໃນດ້ານໂຄງປະກອບຂອງ ຖັນແຖວພະນັກງານ ກໍ່ຍັງມີ ຫຼາຍບ່ອນທີ່ບໍ່ທັນສົມເຫດສົມຜົນ: ໃນຫຼາຍ ອົງການຂອງພັກ ແລະລັດຢູ່ສູນກາງກໍ່ຄືຢູ່ທ້ອງຖິ່ນຈຳນວນພະນັກງານ, ພາລະກອນໃນການຈັດຕັ້ງແມ່ນມີຢູ່ບໍ່

ໜ້ອຍ, ແຕ່ຈຳນວນຄົນທີ່ເຮັດວຽກຢ່າງຈິງຈັງແທ້ນັ້ນຊ້ຳພັດບໍ່ມີພໍທໍ່ໃດ; ພະນັກງານເຮັດວຽກງານຄົ້ນຄວ້າ, ພະນັກງານຄຸ້ມຄອງເສດຖະກິດ, ວິທະຍາສາດ-ເຕັກນິກຍັງມີໜ້ອຍໂພດ, ພະນັກງານຫຼັກແຫຼ່ງ ແລະພະນັກງານຮັບຜິດຊອບຂະແໜງການຂອງອົງການ ແລະ ກົມກອງຕ່າງໆບໍ່ພຽງແຕ່ບໍ່ພໍ, ແຕ່ການສັບຊ້ອນຈັດວາງພັດບໍ່ທັນເປັນປົກກະຕິເທື່ອ. ໃນ ຫຼາຍບ່ອນ, ຂະບວນການປະຕິວັດ ຂອງມະຫາຊົນແມ່ນແຂງແຮງສົມຄວນ, ສະມາຊິກພັກ ແລະນັກຣົບໄດ້ຜ່ານການທົດສອບເຝິກຝົນມາ ຫຼາຍພໍຄວນ, ແຕ່ທ້ອງຖິ່ນ ແລະກົມກອງກໍ່ຍັງຂາດພະນັກງານຢູ່. ບັນຫາສຳຄັນອີກອັນໜຶ່ງ ແມ່ນນັບແຕ່ປະເທດຊາດໄດ້ຮັບການ ປົດປ່ອຍມານີ້, ຂອບເຂດນຳພາຂອງພັກນັບມື້ນັບກວ້າງອອກ, ນອກຈາກຈຳນວນພະນັກງານເກົ່າທີ່ໄດ້ຜ່ານການສູ້ຮົບແລະເຮັດວຽກງານໃນເຂດປົດປ່ອຍ ແລະໃນເຂດແນວ ຫຼັງສັດຕູແລ້ວ ຖັນແຖວພະນັກງານ ແລະພາລະກອນຂອງພັກແລະລັດກໍ່ໄດ້ເພີ່ມຂຶ້ນເປັນຈຳນວນ ຫຼາຍ . ອັນນີ້ ແມ່ນການຂະຫຍາຍຕົວທີ່ຕ້ອງເປັນໄປ ເຊິ່ງສະແດງໃຫ້ເຫັນ ເຖິງການເຕີບໃຫຍ່ຂອງການປະຕິວັດ. ແຕ່ເນື່ອງຈາກ ການເຊື່ອມຊຶມ ແລະ ໝູນໃຊ້ແນວທາງ, ນະໂຍບາຍພະນັກ

ງານຂອງພັກ ບໍ່ທັນເຕັມເມັດເຕັມໜ່ວຍ, ຄະນະພັກແລະອົງການຈຳນວນໜຶ່ງບໍ່ໄດ້ເອົາໃຈໃສ່ຢ່າງເໝາະສົມເຖິງການບຳລຸງ, ເສີມຂະຫຍາຍບົດບາດຂອງພະນັກງານເກົ່າ ແລະ ບໍ່ໄດ້ຕັ້ງໜ້າກໍ່ສ້າງສຶກສາອົບຮົມ ຊ່ວຍເຫຼືອ ພະນັກງານ ແລະພາລະກອນໃໝ່. ເພາະສະນັ້ນ ຈຶ່ງບໍ່ສາມາດເສີມຂະຫຍາຍຈຸດແຂງທີ່ມີຢູ່ແລ້ວຂອງຖັນແຖວ ພະນັກງານໄດ້ໝົດ ແລະ ຈຶ່ງສ້າງຄວາມສາມັກຄີ ພົວພັນ ຊ່ວຍເຫຼືອເຊິ່ງກັນ ແລະກັນ ລະຫວ່າງພະນັກງານເກົ່າ ກັບພະນັກງານໃໝ່ບໍ່ໄດ້ດີ. ໃນການບຳລຸງສ້າງ, ນຳໃຊ້ ແລະເລື່ອນຊັ້ນພະນັກງານບາງບ່ອນໄດ້ມີທ່າອຽງເອົາໃຈໃສ່ແຕ່ຜູ້ທີ່ວ່ອງໄວ, ມີລະດັບຂີດຂຽນ, ປາກເວົ້າລຽນໄຫຼ ໂດຍບໍ່ໄດ້ພິຈາລະນາຢ່າງຮອບຄອບຖີ່ຖ້ວນ ເຖິງຫຼັກໝັ້ນທັດສະນະປະຕິວັດຂອງເຂົາເຈົ້າ, ຖືເບົາການບຳລຸງສ້າງພະນັກງານເກົ່າທີ່ໄດ້ຜ່ານການເຝິກຝົນທົດສອບມາແລ້ວ ແລະຜູ້ທີ່ມີລະດັບວັດທະນະທຳຕ່ຳ, ມີຕົ້ນກຳເນີດຈາກກຳມະກອນ, ຊາວນາ ແລະຊົນຊາດສ່ວນໜ້ອຍ, ຊ້ຳບໍ່ໜຳ ບາງ ບ່ອນຍັງນຳໃຊ້ພະນັກງານ, ພາລະກອນໂດຍບໍ່ຮູ້ຊີວະປະຫວັດຂອງເຂົາເຈົ້າຢ່າງຈະແຈ້ງ. ປະກົດການເຫຼົ່ານັ້ນ ໄດ້ສະແດງເຖິງແນວຄິດຄັບແຄບ, ປ່ອຍປະ ລະເຫຼີງ, ຂາດ

ຄວາມຮັບຜິດຊອບ ໃນການປະຕິບັດແນວທາງ ພະນັກງານ
ຂອງພັກ ອັນພາໃຫ້ເກີດ ມີຫຼາຍກໍລະນີ ທີ່ເປັນໜ້າເສັຽ
ດາຍ, ເຮັດໃຫ້ພາຍໃນເສັຽຄວາມສາມັກຄີ, ກໍ່ຜົນສະ
ທ້ອນບໍ່ດີໃຫ້ແກ່ວຽກງານ ແລະ ການນຳພາຂອງພັກ.

ໃນເມື່ອການປະຕິວັດຂະຫຍາຍຕົວຢ່າງກະໂດດຂັ້ນ,
ຄວາມຮຽກຮ້ອງ ຕ້ອງການຂອງໜ້າທີ່ ປະຕິວັດ ໃນປັດຈຸ
ບັນຍິ່ງໜັກໜ່ວງ ແລະ ສັບສົນໃນຂະນະທີ່ລະດັບຂອງພະ
ນັກງານເຮົາຍັງມີອັນຈຳກັດ ໃນຫຼາຍດ້ານຢູ່, ດັ່ງນັ້ນຈິ່ງ
ເປັນອັນຫຼີກເວັ້ນໄດ້ຍາກ ຈຸດອ່ອນ ແລະ ບົກພ່ອງດັ່ງທີ່ໄດ້
ກ່າວມານັ້ນ. ແຕ່ໃນດ້ານອື່ນ ກໍ່ຍ້ອນການສຶກສາອົບຮົມ,
ບຳລຸງ, ກໍ່ສ້າງແລະຄຸ້ມຄອງ ຖັນແຖວ ພະນັກງານ ຂອງ
ພວກເຮົາຍັງມີຈຸດອ່ອນ ໃນຫຼາຍດ້ານ, ຕອບສະໜອງ
ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ໃໝ່ ບໍ່ທັນໄດ້ເທື່ອ.
ເພາະສະນັ້ນ, ບັນຫາທີ່ຕັ້ງຂຶ້ນ ໃນເວລານີ້ແມ່ນອົງການ
ນຳຂອງພັກ ແລະ ລັດແຕ່ຂັ້ນສູນກາງລົງເຖິງຂັ້ນຮາກຖານ
ຕ້ອງກຳແນວທາງນະໂຍບາຍພະນັກງານຂອງພັກໃຫ້ແໜ້ນ
ກວ່າເກົ່າ, ກຳລະດັບຄາດໝາຍໜ້າທີ່ປະຕິວັດໃນໄລຍະ
ໃໝ່ໃຫ້ແໜ້ນກວ່າເກົ່າ, ສຸມທຸກຄວາມສາມາດເທົ່າທີ່ຈະ
ເຮັດໄດ້ຂອງພັກ ແລະລັດເຂົ້າໃນການແກ້ໄຂບັນຫາພະນັກ

ງານໃຫ້ໄດ້ເປັນຢ່າງດີ.

ໃນສະເພາະໜ້ານີ້, ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ໃຈກາງຂອງພັກໃຫ້ໄດ້ຢ່າງທັນການ ແລະເພື່ອສ້າງເງື່ອນໄຂໃຫ້ພະນັກງານສະສົມບົດຮຽນ ແລະເສີມຂະຫຍາຍຄຸນປະໂຫຍດອັນຕັ້ງໜ້າຂອງຕົນໃນວຽກງານທີ່ໄດ້ຮັບການມອບໝາຍໄດ້ຢ່າງຍາວນານນັ້ນ ພັກຕ້ອງມີແຜນການປັບປຸງ, ສັບຊ້ອນ, ຈັດວາງຄົນແຖວພະນັກງານໃຫ້ສົມເຫດສົມຜົນລະຫວ່າງເຂດປົດປ່ອຍ ເກົ່າກັບເຂດປົດປ່ອຍໃໝ່, ລະຫວ່າງຂົງເຂດເຄື່ອນໄຫວການທະຫານ, ການເມືອງ ແລະເສດຖະກິດ-ວັດທະນະທຳ , ລະຫວ່າງຂອບເຂດບໍລິຫານ ກັບຂອບເຂດການຜະລິດແລະວິສາຫະກິດ, ລະຫວ່າງຂັ້ນເມືອງ, ຂັ້ນແຂວງກັບຂັ້ນສູນກາງ ໄປຄຽງຄູ່ກັບການຕັ້ງໜ້າສຶກສາອົບຮົມ ບຳລຸງດ້ານການເມືອງ, ວິຊາສະເພາະ, ວັດທະນະທຳ, ເຕັກນິກ, ປັບປຸງບູລະນະການຈັດຕັ້ງ ແລະ ດັດແປງລະບອບວິທີເຮັດວຽກໃຫ້ດີຂຶ້ນເທື່ອລະກ້າວ ເພື່ອຍົກລະດັບ ແລະປະສິດທິຜົນໃນວຽກງານຂອງພະນັກງານໃຫ້ສູງຂຶ້ນຢ່າງແທ້ຈິງ.

ພັກ ແລະລັດເຮົາຕ້ອງມີແຜນກຳນົດຍາວນານກຽວກັບພະນັກງານ, ຮີບຮ້ອນບຳລຸງເສີມຂະຫຍາຍ ບົດບາດ

ຂອງຈຳນວນພະນັກງານເກົ່າ ທີ່ໄດ້ຜ່ານການທົດສອບ ມາແລ້ວດ້ວຍວິທີການອັນຕັ້ງໜ້າ ແລະທົນທານ; ພ້ອມກັນນັ້ນກໍເອົາໃຈໃສ່ສຶກສາອົບຮົມ, ບຳລຸງສ້າງພະນັກງານ ແລະພາລະກອນໃໝ່, ກ້າເລື່ອນຂັ້ນ ຜູ້ທີ່ມີຄຸນສົມບັດ ແລະຄວາມສາມາດດີ, ຕັ້ງໜ້າຊອກເຫັນສະມາຊິກພັກ, ນັກຮົບແລະມະຫາຊົນຜູ້ດີເດັ່ນທີ່ໄດ້ຜ່ານການເຝິກຝົນ ໃນຂະບວນການປະຕິວັດ ແລະ ໃນວຽກງານຕົວຈິງ ເພື່ອບຳລຸງສ້າງໃຫ້ເປັນພະນັກງານ; ສົມທົບຢ່າງແໜ້ນແຟ້ນການບຳລຸງຢູ່ກັບທີ່ໂດຍຜ່ານ ການສະຫຼຸບຖອດຖອນບົດຮຽນ, ທັງເຮັດທັງຮຽນ, ຮຽນໃນວຽກງານຕົວຈິງ ກັບການເປີດຊຸດຮຽນໄລຍະສັ້ນ, ເປີດໂຮງຮຽນຢູ່ພາຍໃນປະເທດ ແລະສົ່ງໄປຮຽນໃນບັນດາປະເທດອາຍນອງ ທັງນັ້ນກໍເພື່ອແນໃສ່ສູ້ຊົນຍົກສູງທັງຄຸນນະພາບ ທັງຈຳນວນຂອງຖັນແຖວພະນັກງານໃຫ້ໄດ້ພາຍໃນໄລຍະອັນແນ່ນອນ, ຮັບປະກັນໃຫ້ທຸກຂັ້ນທຸກຂະແໜງການລ້ວນແຕ່ມີພະນັກງານທົ່ວຈັກຫຼັກແຫຼ່ງ ທີ່ໜັກແໜ້ນ, ມີຮຸ່ນພະນັກງານສືບທອດ, ນຳເອົາວຽກງານຄຸ້ມຄອງພະນັກງານເຂົ້າສູ່ຄວາມເປັນລະບຽບແບບແຜນ, ບົນພື້ນຖານນັ້ນ ກໍສືບຕໍ່ກໍ່ສ້າງ ແລະປັບປຸງຖັນແຖວພະນັກງານຂອງພັກໃຫ້ນັບມື້ນັບສົມສ່ວນ, ຄົບຊຸດ ແລະ ແໜ້ນໜາ,

ຕອບສະໜອງຄວາມຮຽກຮ້ອງຕ້ອງການ ອັນນັບມື້ ນັບສູງຂອງພາລະກິດປະຕິວັດສັງຄົມນິຍົມໃຫ້ໄດ້ເປັນຢ່າງດີ.

ບັນຫາໜຶ່ງທີ່ມີຄວາມສຳຄັນເປັນພິເສດອີກໃນວຽກງານກໍ່ສ້າງພັກໃນປັດຈຸບັນ ແມ່ນຕ້ອງເພີ່ມທະວີການກໍ່ສ້າງບັນດາການຈັດຕັ້ງຮາກຖານຂອງພັກ ແລະ ບຸລະນະກົງຈັກນຳພາຂອງພັກທຸກຂັ້ນໃຫ້ເຂັ້ມແຂງອີ່ຫຼີ. ໜ່ວຍພັກ ແລະຄະນະພັກຮາກຖານເປັນຫົວໜ່ວຍສູ້ຮົບຂັ້ນພື້ນຖານຂອງພັກ, ເປັນບ່ອນຈັດຕັ້ງປະຕິບັດທຸກແນວທາງ, ນະໂຍບາຍ ຂອງພັກ, ເປັນຂົວຕໍ່ລະຫວ່າງພັກກັບມະຫາຊົນ, ທັງເປັນບ່ອນເຝິກຝົນຫຼໍ່ຫຼອມສະມາຊິກພັກ, ເປັນບ່ອນບຳລຸງສ້າງພະນັກງານໃຫ້ພັກ. ໜ່ວຍພັກ ແລະຄະນະພັກຮາກຖານເຂັ້ມແຂງຫຼືບໍ່, ທຸກວຽກງານຂອງໜ່ວຍພັກ ແລະຄະນະພັກຮາກຖານດີ ຫຼືບໍ່ ມັນລ້ວນແຕ່ກະທົບໂດຍກົງ ເຖິງຊີວິດການເປັນຢູ່ດ້ານວັດຖຸ ແລະຈິດໃຈກໍ່ຄືຊີວິດການເມືອງຂອງປະຊາຊົນ, ເຖິງພາລະກິດລວມຂອງການປະຕິວັດແລະຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ພັກ.

ເພາະສະນັ້ນ, ໃນວຽກງານກໍ່ສ້າງພັກ ພວກເຮົາຕ້ອງສຸມກຳລັງເຂົ້າໃສ່ການປັບປຸງ, ເພີ່ມທະວີບົດບາດນຳພາ ແລະ ກຳລັງສູ້ຮົບຂອງໜ່ວຍພັກ ແລະຄະນະພັກຮາກ

ຖານໃນທຸກດ້ານ. ປະຈຸບັນນີ້, ການຈັດຕັ້ງຮາກຖານຂອງພັກໄດ້ຮັບການສ້າງຂຶ້ນ ແລະເຄື່ອນໄຫວ ເຂົ້າແກບ ເຂົ້າເກຍກັບບັນດາໜ່ວຍງານຂັ້ນຮາກຖານຂອງລັດ ແລະຂອງເສດຖະກິດແຫ່ງຊາດ, ໜ້າທີ່ຕົ້ນຕໍຂອງໜ່ວຍພັກ ແລະຄະນະພັກຮາກຖານແມ່ນຕັດສິນທຸກແຜນນະໂຍບາຍ ແລະວິທີການທີ່ສຳຄັນຂອງທ້ອງຖິ່ນ, ກົມກອງ ແນໃສ່ປະຕິບັດທຸກແນວທາງ, ນະໂຍບາຍຂອງພັກແລະລັດກໍ່ຄືທຸກໜ້າທີ່ວຽກງານທີ່ຂັ້ນເທິງໄດ້ວາງອອກຢ່າງມີໄຊ. ການເຄື່ອນໄຫວທັງໝົດຂອງການຈັດຕັ້ງຮາກຖານຂອງພັກຕ້ອງແນໃສ່ຊຸກຍູ້ຂະບວນການມະຫາຊົນ ໃນການດຳເນີນການປະຕິວັດ ສິປະການ ແລະ ເພີ່ມທະວີປັບປຸງການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຮັບປະກັນໃຫ້ທຸກໜ້າທີ່ວຽກງານຂອງທ້ອງຖິ່ນ, ກົມກອງສຳເລັດຜົນ ແລະຜ່ານຈາກນັ້ນ ກໍ່ສ້າງການຈັດຕັ້ງຂອງພັກໃຫ້ເຂັ້ມແຂງ. ໜ່ວຍພັກ ແລະຄະນະພັກຮາກຖານຕ້ອງຖືວຽກງານການເມືອງ, ແນວຄິດ ແລະການຈັດຕັ້ງເປັນສຳຄັນ ແນໃສ່ປູກລະດົມສະມາຊິກພັກແລະມະຫາຊົນທັງໝົດໃຫ້ຕັ້ງໜ້າເຂົ້າຮ່ວມໃນການວາງ ແລະປະຕິບັດທຸກແຜນນະໂຍບາຍ, ແຜນການຂອງທ້ອງຖິ່ນ,ກົມກອງຂອງຕົນຢ່າງມີໄຊ. ໜ່ວຍພັກ ແລະຄະນະພັກຮາກ

ຖານຕ້ອງກວດກາ ແລະ ຊີ້ນຳທຸກການເຄື່ອນໄຫວຂອງພະນັກງານ, ສະມາຊິກພັກຢ່າງແໜ້ນໜາແລະ ທັນການ, ຮັບປະກັນການປະຕິບັດທຸກແນວທາງ, ແຜນນະໂຍບາຍຂອງພັກ ແລະກົດໝາຍຂອງລັດຢ່າງຖືກຕ້ອງ.

ເພື່ອເພີ່ມທະວີບົດບາດນຳພາ ແລະ ກຳລັງສູ້ຮົບຂອງການຈັດຕັ້ງຮາກຖານຂອງພັກ, ບັນຫາອັນກະແຈຕົ້ນຕໍໃນປັດຈຸບັນແມ່ນຕ້ອງອອກແຮງຍົກລະດັບການເມືອງ, ທິດສະດີ, ວັດທະນະທຳ ແລະຄວາມສາມາດເຮັດວຽກງານຂອງພະນັກງານ ແລະສະມາຊິກພັກໂດຍສະເພາະແມ່ນຄະນະພັກ ແລະ ພະນັກງານຫຼັກແຫຼ່ງໃຫ້ສູງຂຶ້ນ, ພ້ອມກັນນັ້ນກໍ່ຕ້ອງເອົາໃຈໃສ່ດັດແປງວິທີເຄື່ອນໄຫວຂອງໜ່ວຍພັກ ແລະ ຄະນະພັກຮາກຖານໃຫ້ສອດຄ່ອງກັບຄວາມຮຽກຮອງຕ້ອງການຂອງໜ້າທີ່ໃໝ່, ຮັບປະກັນນຳໃຊ້ ແລະ ເສີມຂະຫຍາຍກຳລັງແຮງທັງໝົດ ແລະ ຄວາມສາມາດເຄື່ອນໄຫວຂອງອົງການປົກຄອງ, ວິຊາສະເພາະກໍ່ຄື ບັນດາອົງການຈັດຕັ້ງມະຫາຊົນເຂົ້າໃນການຈັດຕັ້ງປະຕິບັດ ບັນດາໜ້າທີ່ລະອຽດໃຫ້ຖືກຕ້ອງກັບແນວທາງ, ນະໂຍບາຍ ຂອງພັກ.

ຕ້ອງຮັກສາລະບອບດຳເນີນຊີວິດ ຂອງໜ່ວຍພັກ

ແລະ ຄະນະພັກຮາກຖານຢ່າງເປັນປົກກະຕິ, ເອົາໃຈໃສ່ກົດແປງເນື້ອໃນດຳເນີນຊີວິດໃຫ້ແທດຕົວຈິງ, ກະທັດຮັດ, ມີຮູບປະໂຫຍດສຶກສາອົບຮົມຊຸ້ມຈຳຢ່າງທັນເວລາ. ກອງປະຊຸມໜ່ວຍພັກ ແລະ ຄະນະພັກຮາກຖານຕ້ອງມີການ ກຽມເນື້ອໃນຢ່າງຄັກແນ່ ໂດຍສຸມໃສ່ບັນຫາຕົ້ນຕໍ ກ່ຽວກັບແນວທາງ, ນະໂຍບາຍຂອງພັກ, ກ່ຽວກັບໜ້າທີ່ຂອງທ້ອງຖິ່ນ, ກົມກອງໜ່ວຍຜະລິດ ແລະແຜນການຈັດຕັ້ງປະຕິບັດໜ້າທີ່ເຫຼົ່ານັ້ນ; ກອງປະຊຸມນັ້ນ ຕ້ອງມີມະຕິຢ່າງຈະແຈ້ງກ່ຽວກັບໜ້າທີ່ວຽກງານແລະຕ້ອງມີການແບ່ງງານ, ແບ່ງໜ້າທີ່ລະອຽດໃຫ້ພະນັກງານ, ສະມາຊິກພັກແຕ່ລະຄົນ. ພະຍາຍາມສູ້ຊົນເຮັດໃຫ້ບັນດາການຈັດຕັ້ງຂອງພັກ, ກອງປະຊຸມຂອງພັກກໍ່ຄືການດຳເນີນຊີວິດປະຈຳວັນມີບັນຍາກາດສາມັກຄີ, ເຊື່ອໝັ້ນ, ເບີກບານເຕັມໄປດ້ວຍກຳລັງສູ້ຮົບ, ເສີມຂະຫຍາຍປະຊາທິປະໄຕລວມໝູ່ ແລະສະຕິຮັບຜິດຊອບສູງຂອງພະນັກງານ, ສະມາຊິກພັກແຕ່ລະຄົນ.

ຕ້ອງຜ່ານຂະບວນການມະຫາຊົນເພື່ອຊອກເຫັນຜູ້ທີ່ມີລະດັບຄວາມຕື່ນຕົວ, ມີຄວາມອົງອາດກ້າຫານໃນການສູ້ຮົບ, ມີຄວາມຫ້າວຫັນໃນການອອກແຮງງານ ແລະມີການພົວພັນກັບມະຫາຊົນຢ່າງແໜ້ນແຟ້ນ ແລ້ວສຶກສາອົບຮົມ,

ບຳລຸງ ແລະຮັບເອົາເຂົ້າພັກ, ກ່ອນອື່ນໝົດຕ້ອງເອົາໃຈໃສ່ຜູ້ທີ່ດີເດັ່ນກວ່າໝູ່ໃນຊົນຊັ້ນກຳມະກອນ, ໃນໝູ່ປະຊາຊົນຊາວໄຮ່ນາຜູ້ອອກແຮງງານບັນດາຊົນຊາດ, ໃນກຳລັງປະກອບອາວຸດ ແລະປັນຍາຊົນຜູ້ດີເດັ່ນທີ່ໄດ້ຜ່ານການເຝິກຝົນທົດສອບໃນການຕໍ່ສູ້ປະຕິວັດມາແລ້ວ. ຫຼີກເວັ້ນທ່າອຽງຄັບແຄບ, ນິກຄິດຕາຍຕົວ, ຄວາມຮັກແພງຖານສ່ວນຕົວ , ຄອບຄົວ, ຕ້ອງມີຄວາມສອດສ່ອງກັ້ນກາງບໍ່ໃຫ້ ຜູ້ສວຍໂອກາດເຂົ້າໃນພັກເພື່ອກໍ່ພັກແຍກພວກ, ຍາດຖານະ, ຍາດອຳນາດ, ເປັນຕົ້ນແມ່ນ ເອງມີສະຕິລະວັງຕົວ ກຳຈັດປັດເປົ່າບໍ່ໃຫ້ພວກປະຕິການ, ນັກສືບສອດແນມເລັດລອດເຂົ້າໃນພັກເພື່ອກໍ່ການແບ່ງແຍກ, ທຳລາຍການປະຕິວັດ. ໃນດ້ານອື່ນ, ຕ້ອງເດັດດ່ຽວເອົາສະມາຊິກພັກຜູ້ທີ່ມີ ບັນຫາການເມືອງ, ເສື່ອມຊຸນປ່ຽນທາດ ຫຼືຫຼາຫຼັ້ງໂພດ ເຊິ່ງໄດ້ຮັບການສຶກສາອົບຮົມ, ຊ່ວຍເຫຼືອຢ່າງຕັ້ງໜ້າ ແລ້ວແຕ່ຫາກບໍ່ກ້າວໜ້າ, ບໍ່ມີອິດທິພົນ ແລະຊຸນປະໂຫຍດ ນຳພາຕໍ່ມະຫາຊົນອີກນັ້ນ ອອກຈາກພັກຢ່າງທັນການ. ໄປຄຽງຄູ່ກັບການກໍ່ສ້າງການຈັດຕັ້ງຮາກຖານຂອງພັກ, ຕ້ອງຖືເປັນສຳຄັນການບູລະນະກົງຈັກ ນຳພາຂອງພັກ ເຊິ່ງ ປະກອບດ້ວຍຄະນະພັກ ແລະ ອົງການຊ່ວຍວຽກໃຫ້ທຸກຂັ້ນ, ເປັນ

ຕົ້ນແມ່ນຂັ້ນແຂວງ, ກຳແພງນະຄອນ ແລະຂັ້ນເມືອງເພື່ອໃຫ້ມີຄວາມສາມາດພຽງພໍໃນການນຳພາການກໍ່ສ້າງ, ຂະຫຍາຍເສດຖະກິດ-ວັດທະນະທຳ, ປັບປຸງ ແລະເພີ່ມທະວີການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະຊີ້ນຳ, ແນະນຳບັນດາການຈັດຕັ້ງຮາກຖານຂອງພັກໃນການ ປະຕິບັດໜ້າທີ່ວຽກງານຂອງທ້ອງຖິ່ນຢ່າງມີໄຊ.

ເພື່ອເສີມຂະຫຍາຍບົດບາດນຳພາ ແລະ ບົດບາດເປັນໃຈກາງສາມັກຄີຂອງຄະນະພັກຕໍ່ທ້ອງຖິ່ນ, ກົມກອງນັ້ນ ບັນຫາຂໍກະແຈຕົ້ນຕໍໃນປັດຈຸບັນແມ່ນຕ້ອງພະຍາຍາມສູ້ຊົນຍົກລະດັບຄວາມສາມາດນຳພາຮອບດ້ານຂອງຄະນະພັກໃຫ້ສູງຂຶ້ນ, ເຮັດໃຫ້ຄະນະພັກແຕ່ລະຂັ້ນເປັນໝູ່ຄະນະທີ່ມີບົດຮຽນໃນການນຳພາການເມືອງ, ການກໍ່ສ້າງພັກ ແລະຂົນຂວາຍມະຫາຊົນຢ່າງແທ້ຈິງ, ມີລະດັບຄວາມຮູ້ໃນດ້ານທິດສະດີ ແລະຄວາມຮູ້ຕ່າງ ໆ ທີ່ຈຳເປັນໃນດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ-ເຕັກນິກ, ແລະ ມີຄວາມສາມາດຈັດຕັ້ງ, ຊີ້ນຳ, ປະຕິບັດໜ້າທີ່, ວຽກງານທີ່ຂັ້ນເທິງ ແລະຂັ້ນຂອງຕົນວາງອອກໄດ້ເປັນຢ່າງດີ. ຕ້ອງເອົາໃຈໃສ່ເສີມຂະຫຍາຍຄວາມສາມາດ, ຫົວຄິດປະດິດສ້າງ ແລະ ສະຕິປັນຍາລວມໝູ່ຂອງຄະນະພັກກໍ່ຄືຂອງ

ອົງຄະນະພັກທັງໝົດ, ສ້າງທຸກເງື່ອນໄຂອັນຈຳເປັນໃຫ້ກຳມະການຂອງຄະນະພັກແຕ່ລະຄົນສາມາດເຂົ້າຮ່ວມປຶກສາຫາລື ແລະຕົກລົງທຸກແຜນນະໂຍບາຍ, ແຜນການໄດ້ຢ່າງເຕັມເມັດເຕັມໜ່ວຍ; ພ້ອມກັນນັ້ນ ກໍ່ເຊີດຊູຄວາມຮັບຜິດຊອບສ່ວນບຸກຄົນຂອງຜູ້ນຳພາ, ຂອງກຳມະການຄະນະພັກທຸກຂັ້ນ ເຊິ່ງເປັນຫົວໜ້າຮັບຜິດຊອບໃນຂະແໜງ ການຕ່າງ ໆ, ປະຕິບັດຫຼັກການນຳພາເປັນຄະນະ, ບຸກຄົນຮັບຜິດຊອບໃນຄະນະພັກ ທຸກຂັ້ນ ຢ່າງເຖິງຖອງ ກຳຈັດແກ້ໄຂທຸກປະກົດການຜະເດັດການອາຍດຣອ, ລວງອຳນາດ, ປູຊາບຸກຄົນ, ປະໝາດໝູ່ຄະນະ, ພ້ອມກັນນັ້ນກໍ່ຕ້ານທຸກປະກົດການເອື່ອຍອີງໃສ່ແຕ່ໝູ່ຄະນະ, ບໍ່ກ້າຮັບຜິດຮັບຊອບ, ບໍ່ກ້າຕັດສິນ ວຽກງານຕ່າງ ໆ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.

ຄະນະພັກທຸກຂັ້ນ ຕ້ອງອອກແຮງແກ້ໄຂ ຈຸດອ່ອນແລະຈຸດບົກພ່ອງໃນດ້ານການນຳພາ ແລະການຈັດຕັ້ງເຊິ່ງເປັນຂໍ້ອ່ອນກວ່າໝູ່ຂອງພວກເຮົາໃນປັດຈຸບັນ. ບັນຫາສຳຄັນກວ່າໝູ່ ແມ່ນຕ້ອງຣີບຮ້ອນຕັ້ງໜ້າປັບປຸງ ບູລະນະບັນດາອົງການຊ່ວຍວຽກຂອງຄະນະພັກເຊັ່ນ ອົງການຄົ້ນຄ້ວາສັງລວມ, ອົງການຈັດຕັ້ງ, ໂຄສະນາອົບຮົມ, ອົງ

ການຂົນຂວາຍປະຊາຊົນ, ແນວໂຮມ, ອົງການ ເສດຖະກິດ, ການທະຫານ ... ຮັບປະກັນໃຫ້ອົງການເຫຼົ່ານັ້ນມີຄົບຈຳນວນທີ່ຈຳເປັນ ຕາມການຈັດຕັ້ງກະທັດຮັດເບົາບາງ, ເປັນຕົ້ນ ຕ້ອງເອົາໃຈໃສ່ ບຳລຸງ ຍົກສູງລະດັບທິດສະດີວັດທະນະທຳ ແລະຄວາມສາມາດດານວິຊາສະເພາະເພື່ອມີຄວາມສາມາດພຽງພໍເປັນເສນາທິການຊ່ວຍຄະນະພັກໃນການນຳພາວຽກງານຕ່າງ ໆ. ໃນດ້ານອື່ນ, ຄະນະພັກທຸກຂັ້ນຕ້ອງເອົາໃຈໃສ່ດັດແປງແບບວິທີນຳພາ ແລະ ດັດແປງແບບແຜນເຮັດວຽກໃຫ້ສອດຄ່ອງກັບຄວາມຮຽກ ຮ້ອງຕ້ອງການຂອງໜ້າທີ່ໃໝ່, ເປັນຕົ້ນຕ້ອງກຳແໜ້ນ ແລະແກ້ໄຂສາຍພົວພັນລະຫວ່າງພັກນຳພາ, ລັດຄຸ້ມຄອງ ແລະປະຊາຊົນເປັນເຈົ້າຢ່າງຖືກຕ້ອງຢູ່ສະເໝີ, ເສີມຂະຫຍາຍສິດອຳນາດຂອງບັນດາອົງການປົກຄອງ ແລະ ບົດບາດຂອງບັນດາອົງການຈັດຕັ້ງມະຫາຊົນຢ່າງສູດຂີດ ໃນການຈັດຕັ້ງປະຕິບັດທຸກໜ້າທີ່ວຽກງານລະອຽດ; ພ້ອມກັນນັ້ນກໍ່ຕ້ອງໃກ້ຊິດຕິດແທດ, ກົງເກືອກລືເລືອກັບຂະບວນການມະຫາຊົນຢ່າງແທ້ຈິງ; ເພີ່ມທະວີວຽກງານສຳຫຼວດ ຄົ້ນຄວ້າ, ສ້າງຈຸດທົດລອງ, ກວດກາວຽກງານ, ສະຫຼຸບບົດຮຽນ, ທັງນັ້ນ ເພື່ອຊ່ວຍເຫຼືອ ແລະແນະນຳທ້ອງຖິ່ນ

ແລະກົມກອງ ແລະໜ່ວຍພະລິດຮາກຖານຢ່າງທັນການ , ຊຸກຍູ້ວຽກງານທຸກດ້ານ, ປະຕິບັດແນວທາງ, ນະໂຍບາຍຂອງພັກຢ່າງຖືກຕ້ອງ; ກັ້ນກາງບັນດາປະກົດການຜິດພາດທີ່ເປັນການລະເມີດຫຼັກການ.

ລວມຄວາມວ່າ ເພື່ອເພີ່ມທະວີການນຳພາຂອງພັກ ແລະ ກໍ່ສ້າງພັກໃຫ້ເຂັ້ມແຂງໃນທຸກດ້ານໃນເງື່ອນໄຂທີ່ພັກກຳອຳນາດນັ້ນ ບົນພື້ນຖານຄວາມສາມັກຄີເປັນເອກະພາບຢ່າງສູງໃນດ້ານແນວທາງ, ແຜນນະໂຍບາຍ ຂອງພັກ, ພວກເຮົາຕ້ອງບາກບັ່ນສູ້ຊົນຍົກຄຸນນະພາບການນຳພາຂອງພັກໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ, ເອົາການເພີ່ມທະວີການນຳພາຂອງພັກຕິດແທ້ນກັບການເສີມຂະຫຍາຍສິດເປັນເຈົ້າລວມໝູ່ຂອງປະຊາຊົນຜູ້ອອກແຮງງານ ແລະຍົກຄວາມສາມາດໃນການຈັດຕັ້ງຄຸ້ມຄອງກົງຈັກຂອງລັດໃຫ້ສູງຂຶ້ນ. ຢາກເຮັດໄດ້ແນວນັ້ນ, ຕ້ອງເອົາໃຈໃສ່ ກໍ່ສ້າງພັກ ໃຫ້ເຂັ້ມແຂງຮອບດ້ານທາງດ້ານການເມືອງ, ແນວຄິດ ແລະດ້ານການຈັດຕັ້ງ; ຕ້ອງແກ້ໄຂຫຼາຍບັນຫາ ກ່ຽວກັບແນວທາງ, ແຜນນະໂຍບາຍລະອຽດ, ກ່ຽວກັບການປັບປຸງ ບູລະນະການຈັດຕັ້ງກົງຈັກ, ກ່ຽວກັບທິດນຳ, ວິທີຊີ້ນຳວຽກງານໃນສະພາບການໃໝ່ ...ໃນນັ້ນ ການຍົກລະດັບຕື່ນຕົວ

ກ່ຽວກັບລັດທິມາກ-ເລນິນ, ຫຼັກຫມັ້ນແນວຄິດ ກຳມາຊີບຂອງພະນັກງານ ແລະ ສະມາຊິກພັກໃຫ້ສູງຂຶ້ນ, ການບຳລຸງສ້າງ ແລະເປີດກວ້າງຖັນແຖວພະນັກງານຢ່າງຕັ້ງຫນ້າຮີບຮ້ອນ, ການເພີ່ມທະວີການກໍ່ສ້າງບັນດາການ ຈັດຕັ້ງຮາກຖານຂອງພັກ ແລະ ການປັບປຸງບູລະນະກົງຈັກນຳພາຂອງພັກໃນທຸກຂັ້ນໃຫ້ໄປທັນກັບຄວາມຮຽກຮ້ອງຕ້ອງ ການຂອງຫນ້າທີ່ໃຫມ່ ... ນັ້ນ ເປັນຂອດສຳຄັນທີ່ສຸດ ເຊິ່ງພັກເຮົາຕ້ອງສຸມໃສ່ແກ້ໄຂໃຫ້ໄດ້ດີ ເພື່ອ ຈະນຳເອົາວຽກງານທັງຫມົດໃນການນຳພາການປະຕິວັດ ແລະ ໃນການກໍ່ສ້າງພາຍໃນພັກຂຶ້ນສູ່ບາດກ້າວໃຫມ່, ຮັບປະກັນໃຫ້ຫນ້າທີ່ປະຫວັດສາດອັນສະຫງ່າງາມທີ່ຊາດແລະ ຊົນຊັ້ນໄດ້ມອບຫມາຍໃຫ້ນັ້ນສຳເລັດຜົນເປັນຢ່າງດີ .

× ×

×

ເມື່ອຫວນຄືນເບິ່ງໄລຍະທາງປະຫວັດສາດໃນ ໕໐ ປີແຫ່ງການຕໍ່ສູ້ປົດປ່ອຍຊາດ, ພວກເຮົາຮູ້ສຶກທະນົງໃຈຕໍ່ພັກເຮົາ ແລະ ປະຊາຊົນເຮົາຢ່າງລົ້ນເຫຼືອ ແລະ ພວກ

ເຮົາຍິ່ງເພີ່ມທະວີຄວາມເຊື່ອໝັ້ນໃນອະນາຄົດ ອັນຮຸ່ງເຮືອງເຫຼືອງເຫຼື້ອມຂອງປະເທດຊາດເຮົາ.

ກ້າວເຂົ້າສູ່ໄລຍະປະຕິວັດສັງຄົມນິຍົມໃນ ໑໐ ປີ ມານີ້, ພວກເຮົາຍິ່ງຮູ້ສຶກຊຸ່ມຊື່ນຕໍ່ການຫັນປ່ຽນຢ່າງເລິກເຊິ່ງ ແລະຮອບດ້ານທີ່ພວມພັນແປໄປຢູ່ທົ່ວທຸກຫົນແຫ່ງ ບົນພື້ນແຜ່ນດິນຂອງພວກເຮົາ. ໃນພາລະກິດດັດສ້າງ ແລະ ກໍ່ສ້າງສັງຄົມນິຍົມຂອງພວກເຮົານີ້ ສິດເປັນເຈົ້າລວມ ໝູ່ຂອງປະຊາຊົນຜູ້ອອກແຮງງານພວມໄດ້ຮັບການປະ ຕິ ບັດ ແລະ ເສີມຂະຫຍາຍຢ່າງແຂງແຮງ ອັນໄດ້ສ້າງເປັນຖ່ວງທ່າຟົດຟື້ນປະຕິວັດທີ່ບໍ່ເຄີຍມີມາກ່ອນ. ຂະບວນການຕ່າງໆຂອງມະຫາຊົນໃນການສ້າງສະຫະກອນ, ແຂ່ງຂັນກັນອອກແຮງງານຜະລິດຜົນ, ຮ່ຳຮຽນວັດທະນະທຳ, ສ້າງຊີວິດໃໝ່, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງບ້ານເມືອງ ... ກໍ່ໄດ້ຮັບໄຊຊະນະໃໝ່ອັນໃຫຍ່ຫຼວງ; ອຳນາດການປົກຄອງ ແລະບັນດາອົງການຈັດຕັ້ງມະຫາຊົນໄດ້ຮັບການປັບປຸງໃຫ້ນັບມື້ນັບເຂັ້ມແຂງ, ກ້ອນກຳລັງສາມັກຄີປະຊາຊົນບັນດາຊົນຊາດຂອງປະເທດເຮົາໄດ້ຮັບການເພີ່ມທະວີຂຶ້ນຢ່າງບໍ່ຢຸດຢັ້ງ, ກຳລັງປະຕິວັດໃນທຸກດ້ານໄດ້ເຕີບໃຫຍ່ເຂັ້ມແຂງ ກວ່າເວລາໃດ

ຫມົດ ແລະ ໄດ້ທັບມ້າງທຸກກົນອຸບາຍ ແລະການກະທຳອັນ ໂຫດຫ້ຽມຂອງພວກຈັກກະພັດ ແລະ ພວກປະຕິການໃຫ້ມຸ່ນ ທະລາຍໄປ, ປົກປັກຮັກສາປະເທດຊາດ,ປົກປັກ ຮັກສາ ລະບອບໃຫມ່ ແລະພາລະກິດກໍ່ສ້າງສັງຄົມນິຍົມຂອງປະຊາ ຊົນເຮົາໄວ້ຢ່າງຫມັ້ນຄົງ. ອິດທິພົນຂອງສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ໄດ້ສູງເດັ່ນຂື້ນໃນເວທີສາ ກົນ ແລະ ປະຊາຊົນເຮົາພວມໄດ້ຮັບການຊ່ວຍເຫຼືອ ອັນ ໃຫຍ່ຫຼວງຈາກສາກົນ ໂດຍສະເພາະແມ່ນການຊ່ວຍເຫຼືອ ຂອງສາທາລະນະລັດສັງຄົມນິຍົມຫວຽດນາມ, ສະຫະພາບ ສາທາລະນະລັດສັງຄົມນິຍົມໂຊວຽດ ແລະ ບັນດາປະເທດ ສັງຄົມນິຍົມອ້າຍນ້ອງອື່ນ ໆ ໃຫ້ແກ່ພາລະກິດປົກປັກຮັກສາ ແລະກໍ່ສ້າງປະເທດຊາດຂອງພວກເຮົາ. ເສັ້ນທາງກ້າວ ຂື້ນສັງຄົມນິຍົມຂອງປະເທດເຮົາໄດ້ເປີດກວ້າງອອກແລ້ວ, ແມ່ນວ່າ ພວກຈັກກະພັດ ແລະອິດທິກຳລັງປະຕິການສາກົນ ຈະໃຊ້ກົນອຸບາຍລາຍລຽນຮ້ອຍແປດພັນປະການ ຫວັງມ້າງ ເພທຳລາຍພາລະກິດປະຕິວັດຂອງປະຊາຊົນເຮົາປານໃດກໍ່ ຕາມ ແລະ ເຖິງວ່າພວກເຮົາຍັງປະສົບຄວາມຫຍຸ້ງຍາກ ແລະມີຂໍ້ຂາດຕົກບົກພ່ອງກໍ່ຕາມ, ແຕ່ບໍ່ມີອຸປະສັກໃດໆ ຈະ ສາມາດ ກີດຂວາງບາດກ້າວເດີນຂອງພວກເຮົາໄດ້ເປັນ

ອັນຂາດ.

ເພື່ອສຳເລັດໜ້າທີ່ປະຫວັດສາດຂອງຊາດເຮົາໃນໄລຍະໃໝ່, ປວງປະຊາຊົນເຮົາຕ້ອງບຸກໜ້າບົນຕົວໃນການຜະລິດພົນ ແລະຮ່ຳຮຽນ, ຕົນການຜະລິດນ້ອຍຂຶ້ນສູ່ການຜະລິດໃຫຍ່ສັງຄົມນິຍົມເທື່ອລະກ້າວ. ພະນັກງານແລະສະມາຊິກພັກທຸກຄົນ ຕ້ອງອອກແຮງບຳລຸງຄຸນສົມບັດປະຕິວັດ ແລະຄວາມສາມາດເຮັດວຽກງານຂອງຕົນໃຫ້ສູງຍິ່ງຂຶ້ນ, ສູ້ຊົນປະຕິບັດແນວທາງ, ແຜນນະໂຍບາຍຂອງພັກເຮົາຢ່າງມີໄຊ, ປົກປັກຮັກສາປະເທດຊາດທີ່ແສນຮັກແລະຫວງແຫນຂອງພວກເຮົາໄວ້ຢ່າງໝັ້ນຄົງ, ກໍ່ສາງສັງຄົມນິຍົມຢູ່ໃນປະເທດເຮົາໃຫ້ສຳເລັດຜົນ, ປະກອບສ່ວນຢ່າງສົມກຽດຂອງຕົນເຂົ້າໃນຂະບວນການປະຕິວັດ ແລະສັນຕິພາບໃນອາຊີອາຄະເນ ແລະໃນໂລກ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ຫມັ້ນຍືນ!

ພັກປະຊາຊົນປະຕິວັດລາວ ຫມັ້ນຍືນ !
ລັດທິມາກ-ເລນິນທີ່ຊະນະເລີດ ຫມັ້ນຍືນ !
ພາລະກິດປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງ
ສັງຄົມນິຍົມ ຂອງປະຊາຊົນບັນດາຊົນຊາດ ເຮົາ
ເດັດຂາດມີໄຊ !

-=×O×O×=-

24 / VII
ຫ້າມຈຳໜ່າຍ

ສາລະບານ

<u>ພາກທີ່ ໜຶ່ງ</u>: ໜ້າ

\- ຕໍ່ສູ້ຍາວນານມີໄຊຍິ່ງໃຫຍ່. ໕-໕໘.

<u>ພາກທີ່ ສອງ</u>:

\- ບາງບົດຮຽນຕົ້ນຕໍແຫ່ງການຕໍ່ສູ້ມີໄຊຂອງການປະຕິວັດ ປະເທດເຮົາ. ໕໙-໔໗໗.

I. ຍົກສູງລັດທິຮັກຊາດ-ປະຊາທິປະໄຕ, ແກ້ໄຂເນື້ອໃນ ແລະ ສາຍພົວພັນລະຫວ່າງສອງໜ້າທີ່ ປະຕິວັດຊາດ ແລະ ປະຊາທິປະໄຕ ຢ່າງຖືກຕ້ອງ. ໗໐-໙໕.

II. ກໍ່ສ້າງກອບກຳລັງພັນທະພາບກຳມະກອນ-ຊາວນາ ອັນໜັ້ນແໜ້ນແກ່ນ ພາຍໃຕ້ການນຳພາຂອງພັກ. ໙໗-໑໑໑.

III. ສ້າງແນວໂຮມເອກະພາບ ແຫ່ງຊາດ ບົນພື້ນຖານພັນທະພາບ ກຳມະກອນ-ຊາວນາພາຍໃຕ້ການນຳພາຂອງພັກ. ໑໑໔-໑໕໕.

IV. ກຳແໜ້ນທັດສະນະກຳລັງຮຸນແຮງ ປະຕິວັດ, ສົມທົບສອງກຳລັງ ແລະ ສອງຮູບການຕໍ່ສູ້: ອາວຸດ ກັບການເມືອງຢ່າງແໜ້ນແຟ້ນ ເພື່ອຕີເອົາຊະນະສັດຕູ. ໑໕໘-໑໖໑.

V. ໝູນໃຊ້ " ຍຸດໂທບາຍປະນີປະນອມ " ທີ່ມີຫຼັກການກັບຝ່າຍກົງກັນຂ້າມ. ໑໖໔-໑໙໗.

VI. ສ້າງກາລະໂອກາດ, ກຳແໜ້ນ ກາລະໂອກາດ, ເສີມຂະຫຍາຍກຳລັງແຮງສັງລວມ ຂອງການປະຕິວັດ, ທັບມ້າງກົງຈັກປົກຄອງ ປະຕິການ ຢ່າງເຖິງຖອງ, ຍາດເອົາໄຊຊະນະສົມບູນ. ໑໙໙-໔໔໐.

VII. ສົມທົບນ້ຳໃຈຮັກຊາດອັນດູດດື່ມ ກັບນ້ຳໃຈສາກົນກຳມາຊີບອັນແທ້ຈິງຢ່າງຖືກຕ້ອງ ຊຳນິຊຳນານ. ໒໒໑-໒໔໐.

VIII. ເພີ່ມທະວີການນຳພາຂອງພັກໃນທຸກຂົງເຂດການຕໍ່ສູ້. ໒໔໑-໒໗໗.

<u>ພາກທີ່ ສາມ</u>:

- ກໍ່ສ້າງປະເທດລາວ ສັນຕິພາບ, ເອກະລາດ, ເອກະພາບ ແລະ ສັງຄົມນິຍົມທີ່ຮັ່ງມີເຂັ້ມແຂງ. ໒໗໘-໔໐໑.

I. ກ້າວຂຶ້ນສັງຄົມນິຍົມ ແມ່ນເສັ້ນທາງທີ່ຕ້ອງເປັນໄປຂອງການປະຕິວັດ ປະເທດເຮົາ. ໒໘໐-໒໙໒.

II. ເນື້ອໃນພື້ນຖານຂອງແນວທາງ,ໜ້າທີ່ປະຕິວັດສັງຄົມນິຍົມ ຢູ່ໃນປະເທດເຮົາ. ໒໙໓-໓໑໔.

III. ບາງບັນຫາຕົ້ນຕໍກ່ຽວກັບແນວທາງເສດຖະກິດໃນບາດກ້າວເດີນທຳອິດ ຂອງພາລະກິດກໍ່ສ້າງສັງຄົມນິຍົມຢູ່ປະເທດເຮົາ. ໓໑໕-໓໓໙.

IV. ເສີມຂະຫຍາຍກຳລັງແຮງສັງລວມ ຂອງລະບອບໃໝ່ເພື່ອຍາດເອົາໄຊຊະນະ ໃນການປະຕິວັດສັງຄົມນິຍົມ. ໓໔໐-໓໖໓.

V. ກໍ່ສ້າງພັກໃຫ້ເຂັ້ມແຂງ ໃນທຸກດ້ານ ເພື່ອສຳເລັດໜ້າທີ່ ປະຫວັດສາດໃໝ່. ໓໖໔-໔໐໑.

ພິມທີ່ໂຮງພິມແຫ່ງຊາດ
ຄັ້ງທີໜຶ່ງ ຈຳນວນ 20.000 ຫົວ
ວັນທີ 22-3-79